ປື້ມພຣະໄຕຣປິດົກພາສາລາວ

ແປແລະລຽບລຽງຈາກປື້ມຂອງ ມຫາຈຸຣາລົງກອນຣາຊວິທຍາລັຍ

ສະກົດຕາມສຽງ ໂດຍ ສົມສັກ ວົງວານິດ

ເຫລັ້ມທີ ໔

ມະຫາວັກ

ໄພທີກຖາ

Tripitaka in modern Lao language Book 4

Translated and created by Somsak Chuck Vongvanith

from the Tripitaka book, MahaJuralonkorn Rajvithayalay University

San Marcos, California, USA - May 2020

ພຣະໄຕຣປິດົກພາສາລາວ ເຫລັ້ມທີ ໔

ແປແລະຮຽບຮຽງຈາກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ໂດຍ ສົມສັກ ວົງວານິດ

Tripitaka Book 4, Book of Buddhism translated from Thai to Lao by

Chuck Somsak Vongvanith

❀❀❀❀❀❀❀❀❀❀❀❀❀❀❀

ປື້ມພຣະໄຕຣປິດົກເຫລັ້ມທີ ໐໔ ວິນັຍປິດົກທີ ໐໔ ມຫາວັຄ ພາຄ ໑

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑. ໂພທິກະຖາ

ພຣະວິນັຍປິດົກ

ມຫາວັຄ ພາຄ ໑

□ □ □ □

ຂໍນອບນ້ອມພຣະຜູ້ມີພຣະພາກອະຣະຫັນຕະສັມມາສັມພຸດທະເຈົ້າພຣະອົງຄ໌ນັ້ນ

໑. ມຫາຂັນທກະ

໑. ໂພທິກຖາ໑

ວ່າດ້ວຍເຫຕຸກາຣນ໌ແຣກຕຣັສຮູ້ ນະ ຄວງຕົ້ນໂພທິພຣຶກສ໌

ເຣື້ອງຊົງມີຄວາມຕັ້ງໃຈປຕິຈຈສມຸປບາທ

[໑] ສມັຍນັ້ນ ພຣະຜູ້ມີພຣະພາກພຸດທະເຈົ້າ ເມື່ອແຣກຕຣັສຮູ້ ປະທັບຢູ່ນະຄວງຕົ້ນໂພທິພຣຶກສ໌໒ ໃກ້ຝັ່ງແມ່ນ້ຳເນຣັຍຊຣາ ເຂຕຕາແສງອຸຣຸເວລາ ຄັ້ງນັ້ນພຣະຜູ້ມີພຣະພາກໄດ້ປະທັບນັ່ງໂດຍບັລລັງກ໌ດຽວ໓ ສເວີຍວິມຸຕຕິສຸຂຢູ່ ນະຄວງຕົ້ນໂພທິພຣຶກສ໌ເປັນເວລາ ໗ ວັນ ເທື່ອນັ້ນພຣະຜູ້ມີພຣະພາກຊົງມີຄວາມຕັ້ງໃຈປຕິຈຈສມຸປບາທ໔ ໂດຍອນຸໂລມແລະປຕິໂລມຕລອດປຖົມຍາມແຫ່ງຣາຕຣີວ່າ

ໝາຍເຫດ :

໑ ຂຸ. ອຸ. ໒໕/໑-໔/໙໓-໙໕

໒ ວິຫຣຕິ . . . ໂພທິຣຸກຂມູເລ ປ ມາພິສມ໌ພຸທໂທ ເມື່ອແຣກຕຣັສຮູ້ ປະທັບຢູ່ ນະ ຄວງຕົ້ນໂພທິພຣຶກສ໌ ດີກາອະທິບາຍວ່າ "ອພິສມ໌ພຸທໂທ ຫຸຕວາ ສພພປ ນໍ ໂພທິຣຸກຂມູເລ ວິຫຣຕິ ຕຣັສຮູ້ແລ້ວ ປະທັບນັ່ງ ນະ ຄວງຕົ້ນໂພທິພຣຶກສ໌ ກ່ອນທີ່ອື່ນທັງຫມົດ" (ວິມຕິ. ຕີກາ ໒/໑/໑໐໗)

໓ ນັ່ງໂດຍບັລລັງກ໌ດຽວ ຫມາຍເຖິງນັ່ງຂັດສມາທິໂດຍບໍ່ລຸກຂຶ້ນເລີຍຕລອດ ໗ ວັນ (ວິ. ອ. ໓/໑/໓)

໔ ມີຄວາມຕັ້ງໃຈປຕິຈຈສມຸປບາທ ແປວ່າ ພິຈາຣນາໂດຍຖ້ວນຖີ່ ໃສ່ໃຈໂດຍຖ້ວນຖີ່ ພິຈາຣນາໂດຍເລີກຊຶ້ງຊຶ່ງປຕິຈຈສມຸປບາທ ຄືທັມທີ່ອາສັຍກັນແລະກັນແລ້ວຍັງທັມທີ່ເກີດຮ່ວມກັນໃຫ້ເກີດຂຶ້ນ (ວິ. ອ. ໓/໑/໓)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑. ໂພທິກຖາ

ປຕິຈຈສມຸປບາທ ໂດຍອນຸໂລມ

ເພາະອວິຊຊາເປັນປັຈຈັຍ ສັງຂາຣຈຶ່ງມີ

ເພາະສັງຂາຣເປັນປັຈຈັຍ ວິນຍານຈຶ່ງມີ

ເພາະວິນຍານເປັນປັຈຈັຍ ນາມຣູບຈຶ່ງມີ

ເພາະນາມຣູບເປັນປັຈຈັຍ ສຸອາຍຕນະຈຶ່ງມີ

ເພາະສຸອາຍຕນະເປັນປັຈຈັຍ ຜັສສະຈຶ່ງມີ

ເພາະຜັສສະເປັນປັຈຈັຍ ເວທນາຈຶ່ງມີ

ເພາະເວທນາເປັນປັຈຈັຍ ຕັນຫາຈຶ່ງມີ

ເພາະຕັນຫາເປັນປັຈຈັຍ ອຸປາທານຈຶ່ງມີ

ເພາະອຸປາທານເປັນປັຈຈັຍ ພົພຈຶ່ງມີ

ເພາະພົພເປັນປັຈຈັຍ ຊາຕິຈຶ່ງມີ

ເພາະຊາຕິເປັນປັຈຈັຍ ຊຣາ ມໍຣະນະ ໂສກະ ປຣິເທວະ ທຸກຂະ ໂທມນັສ ອຸປາຍາສຈຶ່ງມີ

ກອງທຸກຂ໌ທັງມວລນີ້ມີການເກີດຂຶ້ນດ້ວຍອາການຢ່າງນີ້

ປຕິຈຈສມຸປບາທ ໂດຍປຕິໂລມ

ອີກຢ່າງນຶ່ງ ເພາະອວິຊຊາດັບໄປບໍ່ເຫລືອດ້ວຍວິຣາຄະ໑ ສັງຂາຣຈຶ່ງດັບ

ເພາະສັງຂາຣດັບ ວິນຍານຈຶ່ງດັບ

ເພາະວິນຍານດັບ ນາມຣູບຈຶ່ງດັບ

ເພາະນາມຣູບດັບ ສຸອາຍຕນະຈຶ່ງດັບ

ເພາະສຸອາຍຕນະດັບ ຜັສສະຈຶ່ງດັບ

ເພາະຜັສສະດັບ ເວທນາຈຶ່ງດັບ

ໝາຍເຫດ :

໑ ວິຣາຄະ ໃນທີ່ນີ້ຫມາຍເຖິງມັຄ (ວິ. ອ. ໓/໑/໔)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑. ໂພທິກຖາ

ເພາະເວທນາດັບ ຕັນຫາຈຶ່ງດັບ

ເພາະຕັນຫາດັບ ອຸປາທານຈຶ່ງດັບ

ເພາະອຸປາທານດັບ ພົພຈຶ່ງດັບ

ເພາະພົພດັບ ຊາຕິຈຶ່ງດັບ

ເພາະຊາຕິດັບ ຊຣາ ມໍຣະນະ ໂສກະ ປຣິເທວະ ທຸກຂະ ໂທມນັສ ອຸປາຍາສ ຈຶ່ງດັບ

ກອງທຸກຂ໌ທັງມວລນີ້ ມີການດັບດ້ວຍອາການຢ່າງນີ້

ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊາບເນື້ອຄວາມນີ້ແລ້ວ ຈຶ່ງຊົງເປັ່ງອຸທານນີ້ໃນເວລານັ້ນວ່າ

ພຸທທອຸທານຄາຖາທີ ໑໑

ເມື່ອໃດແລ ທັມທັງຫລາຍປາກົດແກ່ພຣາມນ໌ ຜູ້ມີຄວາມພຽນ ເພ່ງຢູ່ ເມື່ອນັ້ນ ຄວາມສົງສັຍທັງປວງ ຂອງພຣາມນ໌ນັ້ນຍ່ອມສິ້ນໄປ ເພາະມາຮູ້ທັມພ້ອມທັງເຫຕຸ໔

[໔] ລຳດັບນັ້ນ ພຣະຜູ້ມີພຣະພາກຊົງມີຄວາມຕັ້ງໃຈປຕິຈຈສມຸປບາທ ໂດຍອນຸໂລມແລະປຕິໂລມ ຕລອດມັຊຍິມຍາມແຫ່ງຣາຕຣີ ວ່າ

ປຕິຈຈສມຸປບາທໂດຍ ອນຸໂລມ

ເພາະອວິຊຊາເປັນປັຈຈັຍ ສັງຂາຣຈຶ່ງມີ

ເພາະສັງຂາຣເປັນປັຈຈັຍ ວິນຍານຈຶ່ງມີ

ໝາຍເຫດ :

໑ ພຸທທອຸທານທີ ໑ ເກີດຂຶ້ນດ້ວຍອຳນາຈການທີ່ຊົງພິຈາຣນາປັຈຈຍາການຫລືປຕິຈຈສມຸປບາທ (ອົ. ອ. ໖/໖/໓)

໔ ທັມທັງຫລາຍ ໃນທີ່ນີ້ຫມາຍເຖິງໂພທິປັກຂິຍທັມທີ່ໃຫ້ສຳເຣັຈການຕຣັສຮູ້ປັຈຈຍາການ (ຫລືປຕິຈຈສມຸປບາທ)ໂດຍອນຸໂລມ(ແລະປຕິໂລມ) (ອົ. ອ. ໖/໑/໕)

ພຣາມນ໌ ໃນທີ່ນີ້ຫມາຍເຖິງພຣະຂີນາສພຜູ້ລອຍບາປທັມເສັຽໄດ້ (ອົ. ອ. ໖/໑/໕)

ທັມ ໃນທີ່ນີ້ຫມາຍເຖິງທັມຄືກອງທຸກຂ໌ທັງສິ້ນມີສັງຂາຣເປັນຕົ້ນ ພ້ອມທັງເຫຕຸຄືອວິຊຊາເປັນຕົ້ນ (ອົ. ອ. ໖/໑/໕)

ເພາະວິນຍານເປັນປັຈຈັຍ ນາມຣູບຈຶ່ງມີ

ເພາະນາມຣູບເປັນປັຈຈັຍ ສຸຬາຍຕນະຈຶ່ງມີ

ເພາະສຼາຍຕນະເປັນປັຈຈັຍ ຜັສສະຈຶ່ງມີ
ເພາະຜັສສະເປັນປັຈຈັຍ ເວທນາຈຶ່ງມີ
ເພາະເວທນາເປັນປັຈຈັຍ ຕັນຫາຈຶ່ງມີ
ເພາະຕັນຫາເປັນປັຈຈັຍ ອຸປາທານຈຶ່ງມີ
ເພາະອຸປາທານເປັນປັຈຈັຍ ພົພຈຶ່ງມີ
ເພາະພົພເປັນປັຈຈັຍ ຊາຕິຈຶ່ງມີ
ເພາະຊາຕິເປັນປັຈຈັຍ ຊຣາ ມໍຣະນະ ໂສກະ ປຣິເທວະ ທຸກຂະ ໂທມນັສ ອຸປາຍາສຈຶ່ງມີ

ກອງທຸກຂ໌ທັງມວລນີ້ມີການເກີດຂຶ້ນດ້ວຍອາການຢ່າງນີ້

ປຕິຈຈສມຸປບາທ ໂດຍປຕິໂລມ

ອີກຢ່າງນຶ່ງ ເພາະອວິຊຊາດັບໄປບໍ່ເຫລືອດ້ວຍວິຣາຄະ ສັງຂາຣຈຶ່ງດັບ
ເພາະສັງຂາຣດັບ ວິນຍານຈຶ່ງດັບ
ເພາະວິນຍານດັບ ນາມຣູບຈຶ່ງດັບ
ເພາະນາມຣູບດັບ ສຼາຍຕນະຈຶ່ງດັບ
ເພາະສຼາຍຕນະດັບ ຜັສສະຈຶ່ງດັບ
ເພາະຜັສສະດັບ ເວທນາຈຶ່ງດັບ
ເພາະເວທນາດັບ ຕັນຫາຈຶ່ງດັບ
ເພາະຕັນຫາດັບ ອຸປາທານຈຶ່ງດັບ
ເພາະອຸປາທານດັບ ພົພຈຶ່ງດັບ
ເພາະພົພດັບ ຊາຕິຈຶ່ງດັບ
ເພາະຊາຕິດັບ ຊຣາ ມໍຣະນະ ໂສກະ ປຣິເທວະ ທຸກຂະ
ໂທມນັສ ອຸປາຍາສຈຶ່ງດັບ

ກອງທຸກຂ໌ທັງມວລນີ້ມີການດັບດ້ວຍອາການຢ່າງນີ້

ລຳດັບນັ້ນ ຄັນພຣະຜູ້ມີພຣະພາກຊົງຊາບເນື້ອຄວາມນັ້ນແລ້ວ ຈຶ່ງຊົງເປັ່ງອຸທານນີ້ໃນເວລານັ້ນວ່າ

ພຸທທອຸທານຄາຖາທີ ໔໑

ເມື່ອໃດແລ ທັມທັງຫລາຍປາກົດແກ່ພຣາມນ໌ ຜູ້ມີຄວາມພຽນ ເພ່ງຢູ່ ເມື່ອນັ້ນ ຄວາມສົງສັຍທັງປວງ ຂອງພຣາມນ໌ນັ້ນຍ່ອມສິ້ນໄປ ເພາະໄດ້ຮູ້ຄວາມສິ້ນໄປແຫ່ງປັຈຈັຍທັງຫລາຍ

[໓] ລຳດັບນັ້ນ ພຣະຜູ້ມີພຣະພາກຊົງພິຈາຣນາປຕິຈຈສມຸປບາທໂດຍອນຸໂລມແລະປຕິໂລມຕລອດ ປັຈສິມຍາມແຫ່ງຣາຕຣີ ວ່າ

ປຕິຈຈສມຸປບາທ ໂດຍອນຸໂລມ

ເພາະອວິຊຊາເປັນປັຈຈັຍ ສັງຂາຣຈຶ່ງມີ
ເພາະສັງຂາຣເປັນປັຈຈັຍ ວິນຍານຈຶ່ງມີ
ເພາະວິນຍານເປັນປັຈຈັຍ ນາມຮູບຈຶ່ງມີ
ເພາະນາມຮູບເປັນປັຈຈັຍ ສຫາຍຕນະຈຶ່ງມີ
ເພາະສຫາຍຕນະເປັນປັຈຈັຍ ຜັສສະຈຶ່ງມີ
ເພາະຜັສສະເປັນປັຈຈັຍ ເວທນາຈຶ່ງມີ
ເພາະເວທນາເປັນປັຈຈັຍ ຕັນຫາຈຶ່ງມີ
ເພາະຕັນຫາເປັນປັຈຈັຍ ອຸປາທານຈຶ່ງມີ
ເພາະອຸປາທານເປັນປັຈຈັຍ ພົພຈຶ່ງມີ
ເພາະພົພເປັນປັຈຈັຍ ຊາຕິຈຶ່ງມີ
ເພາະຊາຕິເປັນປັຈຈັຍ ຊຣາ ມໍຣະນະ ໂສກະ ປຣິເທວະ ທຸກຂະ ໂທມນັສ ອຸປາຍາສຈຶ່ງມີ

ກອງທຸກຂ໌ທັງມວລນີ້ມີການເກີດຂຶ້ນດ້ວຍອາການຢ່າງນີ້

ໝາຍເຫດ :

໑ ພຸທທອຸທານທີ ໔ ເກີດຂຶ້ນດ້ວຍອຳນາຈການທີ່ຊົງພິຈາຣນານິພພານ (ວິ. ອ. ໓/໓/໕)

ປຕິຈຈສມຸປບາທໂດຍປຕິໂລມ

ອີກຢ່າງນຶ່ງ ເພາະອວິຊຊາດັບໄປບໍ່ເຫລືອດ້ວຍວິຣາຄະ ສັງຂາຣຈຶ່ງດັບ
ເພາະສັງຂາຣດັບ ວິນຍານຈຶ່ງດັບ

ເພາະວິນຍານດັບ ນາມຮູບຈຶ່ງດັບ
ເພາະນາມຮູບດັບ ສັລາຍຕນະຈຶ່ງດັບ
ເພາະສັລາຍຕນະດັບ ຜັສສະຈຶ່ງດັບ
ເພາະຜັສສະດັບ ເວທນາຈຶ່ງດັບ
ເພາະເວທນາດັບ ຕັນຫາຈຶ່ງດັບ
ເພາະຕັນຫາດັບ ອຸປາທານຈຶ່ງດັບ
ເພາະອຸປາທານດັບ ພົພຈຶ່ງດັບ
ເພາະພົພດັບ ຊາຕິຈຶ່ງດັບ
ເພາະຊາຕິດັບ ຊຣາ ມໍຣະນະ ໂສກະ ປຣິເທວະ ທຸກຂະ ໂທມນັສ ອຸປາຍາສຈຶ່ງດັບ
ກອງທຸກຂ໌ທັງມວລນີ້ມີການດັບດ້ວຍອາການຢ່າງນີ້

ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊາບເນື້ອຄວາມນັ້ນແລ້ວ ຈຶ່ງຊົງເປັ່ງອຸທານນີ້ໃນເວລານັ້ນວ່າ

ພຸທທອຸທານຄາຖາທີ ໓໑
ເມື່ອໃດແລ ທັມທັງຫລາຍປາກົດແກ່ພຣາມນ໌ຜູ້ມີຄວາມພຽນ ເພ່ງຢູ່ ເມື່ອນັ້ນ ພຣາມນ໌ນັ້ນຍ່ອມກຳຈັດມາຣແລະເສນາ໔ເສັຽໄດ້ ດຸຈພຣະອາທິຕຍ໌ອຸທັຍຂຶ້ນສາດສ່ອງທ້ອງຟ້າໃຫ້ສວ່າງໄສວສະນັ້ນ

ໂພທິກຖາ ຈົບ

ໝາຍເຫດ :
໑ ພຸທທອຸທານທີ ໓ ນີ້ ເກີດຂຶ້ນດ້ວຍອຳນາຈການທີ່ຊົງພິຈາຣນາມັຄ (ວິ. ອ. ໓/໓/໖)
໔ ມາຣແລະເສນາມາຣ ໃນທີ່ນີ້ຫມາຍເຖິງການທັງຫລາຍ (ວິ. ອ. ໓/໓/໖)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔. ອຊປາລກຖາ

໔. ອຊປາລກຖາ
ວ່າດ້ວຍເຫຕຸການນ໌ຂນະປະທັບຢູ່ ນະ ຄວງຕົ້ນອຊປາລນິໂຄຣທ

ເຣື້ອງຊົງສະແດງຫຼັກເປັນເຫດໃຫ້ເປັນພຣາມມ໌

[໔] ຄັນລ່ວງໄປ ໆ ວັນ ພຣະຜູ້ມີພຣະພາກຊົງອອກຈາກສະມາທິນັ້ນ ແລ້ວສະເດັດຈາກຄວງຕົ້ນໂພທິພຣຶກສ໌ ໄປຍັງຄວງຕົ້ນອຊປາລນິໂຄຣທ໌໑ ຄັນເຖິງແລ້ວ ຈຶ່ງປະທັບນັ່ງໂດຍບັລລັງກ໌ດຽວສະເວີຍວິມຸຕຕິສຸຂຢູ່ ນະ ຄວງຕົ້ນອຊປາລນິໂຄຣທ໌ເປັນເວລາ ໆ ວັນ ຄັ້ງນັ້ນ ພຣາມມ໌ຫຸຫຸກຊາຕິ໒ຜູ້ນຶ່ງໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວ ໄດ້ສົນທະນາປາສັຍກັບພຣະຜູ້ມີພຣະພາກ ພໍເປັນທີ່ບັນເທີງໃຈ ພໍເປັນທີ່ຣະນຶກເຖິງກັນແລະກັນແລ້ວໄດ້ຢືນ ນະທີ່ສົມຄວຣ ພຣາມມ໌ນັ້ນຜູ້ຢືນ ນະທີ່ສົມຄວຣແລ້ວແລ ໄດ້ຂາບທູລພຣະຜູ້ມີພຣະພາກ ດັ່ງນີ້ວ່າ "ພຣະໂຄດົມຜູ້ຈະເຣີນ ບຸຄຄົລຊື່ວ່າເປັນພຣາມມ໌ ດ້ວຍເຫດພຽງໃດໜໍ ກໍແລະຫຼັກເຫລົ່າໃດທີ່ທຳບຸຄຄົລໃຫ້ເປັນພຣາມມ໌"

ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊາບເນື້ອຄວາມນັ້ນແລ້ວ ຈຶ່ງຊົງເປັ່ງອຸທານນີ້ໃນເວລານັ້ນວ່າ ພຣາມມ໌ໃດ ລອຍບາປຫຼັກເສັ້ຽ ບໍ່ຕວາດຜູ້ອື່ນວ່າ ຫຶ ຫຶ ບໍ່ມີກິເລສດຸຈນ້ຳຝາດ ສຳຣວມຕົນ໓ຮຽນຈົບພຣະເວທ໔ຢູ່ຈົບພຣົມຈັນຍ໌໕ ພຣາມມ໌ນັ້ນ ບໍ່ມີກິເລສ ເຄື່ອງຟູຂຶ້ນໃນອາຣົມນ໌ໃດໆໃນໂລກ ຄວຣກ່າວວາທະວ່າ ເຮົາເປັນພຣາມມ໌ໂດຍຫຼັກ

ອຊປາລກຖາ ຈົບ

ໝາຍເຫດ :

໑ ນິໂຄຣທ໌ ແປວ່າ ຕົ້ນໄຊ ຕົງກັບພາສາອັງກຣິສວ່າ "Banyan" ຫລື "Indian Fig-tree" ໄມ້ຈຳພວກໄທຣຫລືກຣ່າງຂອງອິນເດັຍ ພວກຄົນລ້ຽງແພະມັກມານັ່ງທີ່ຣົ່ມເງົາຂອງຕົ້ນນິໂຄຣທ໌ນີ້ ເພາະສະນັ້ນ ຈຶ່ງຊື່ວ່າ ອຊປາລນິໂຄຣທ໌ (ວິ. ອ. ໓/໔/໗; PALI-ENGLISH DICTIONARY, P. 355, Edited by T. W. RHYS DAVIDS and WILLIAM STEDE)

໒ ຫຸຫຸກຊາຕິ ຄື ຊອບຕວາດຜູ້ອື່ນວ່າ ຫຶ ຫຶ ພຣາມມ໌ນີ້ມີທິຕຖິວ່າ "ສິ່ງທີ່ເຫັນແລ້ວເປັນມຸງຄຸລ" ຊອບທຽວຕວາດວ່າ ຫຶ ຫຶ ເພາະຄວາມຖືຕົວແລະເພາະຄວາມໂກດ (ດູ ຂຸ. ອຸ. ໒໕/໔/໙໖)

໓ ສຳຣວມຕົນ ຫມາຍເຖິງມີຈິຕມຸ່ງຫມັ້ນຢູ່ໃນພາວນາຫລືສຳຣວມດ້ວຍສີລສັງວຣ (ວິ. ອ. ໓/໔/໙)

໔ ຮຽນຈບພຣະເວທ ຫມາຍເຖິງບັນລຸມັຄຍານະ ໔ (ໂສດາປັຕຕິມັຄ,ສະກທາຄາມິມັຄ,ອນາຄາມິມັຄ,ອຣຫັຕຕມັຄ) ຫລືຮຽນຈົບເວທ ໓ (ຣືຄເວທ,ຍຊຸຣເວທ,ສາມເວທ) (ວິ. ອ. ໓/໔/໙)

໕ ຢູ່ຈບພຣົມຈັນຍ໌ ຫມາຍເຖິງຈບມັຄພຣົມຈັນຍ໌ (ວິ. ອ. ໓/໔/໙)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ๓. ມຸຈລິນທກຖາ

๓. ມຸຈລິນທກຖາ

ວ່າດ້ວຍເຫຕຸການນ໌ຂນະປະທັບຢູ່ ນະ ຄວງຕົ້ນມຸຈລິນທ໌

ເຣື້ອງຊົງເປັ່ງອຸທານປາຣົພຄວາມສຸຂ

[໕] ຄັນລ່ວງໄປ ໆ ວັນ ພຣະຜູ້ມີພຣະພາກຊົງອອກຈາກສມາທິນັ້ນ ແລ້ວສເດັຈຈາກຄວງຕົ້ນອຊປາລນິໂຄຣທ ໄປຍັງຄວງຕົ້ນມຸຈລິນທ໌໑ ຄັນເຖິງແລ້ວ ຈຶ່ງປະທັບນັ່ງໂດຍບັລລັງກ໌ດຽວສເວີຍວິມຸຕຕິສຸຂຢູ່ ນະຄວງຕົ້ນມຸຈລິນທ໌ເປັນເວລາ ໆ ວັນ ຄັ້ງນັ້ນ ໄດ້ບັງເກີດເມຂໃຫຍ່ຂຶ້ນໃນສມັຍບໍ່ແມ່ນຣະດູການ ເປັນຝົນເຈືອລົມຫນາວຕົກຮ່ຳຕລອດ ໆ ວັນ ລຳດັບນັ້ນ ພຍານາຄມຸຈລິນທ໌ໄດ້ອອກຈາກທີ່ຢູ່ຂອງຕົນໄປໂອບຮອບພຣະກາຍຂອງພຣະຜູ້ມີພຣະພາກດ້ວຍຂົດອ້ອມ ໆ ຮອບ ແຜ່ພັງພານໃຫຍ່ປົກຄຸມເຫນືອພຣະສຽນດ້ວຍຫວັງວ່າ "ຄວາມຫນາວ ຢ່າໄດ້ບຽດບຽນພຣະຜູ້ມີພຣະພາກ ຄວາມຮ້ອນ ຢ່າໄດ້ບຽດບຽນພຣະຜູ້ມີພຣະພາກ ສັມຜັສຈາກເຫລືອບ ຍຸງ ລົມ ແດດ ສັຕວ໌ເລືອຄານຢ່າໄດ້ບຽດບຽນພຣະຜູ້ມີພຣະພາກ" ຄັນ ໆ ວັນຜ່ານໄປ ພຍານາຄມຸຈລິນທ໌ຮູ້ວ່າ ຝົນຫາຍປອດເມຂແລ້ວ ຈຶ່ງຄາຍຂົດອ້ອມອອກຈາກພຣະກາຍຂອງພຣະຜູ້ມີພຣະພາກ ຈຳແລງຮ່າງຂອງຕົນເປັນມານົພ ຢືນປະນົມມືຖວາຍອະພິວາທຢູ່ເບື້ອງພຣະພັກຕຣ໌ ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊາບເນື້ອຄວາມນັ້ນແລ້ວ ຈຶ່ງຊົງເປັ່ງອຸທານນີ້ໃນເວລານັ້ນວ່າ

ພຸທທອຸທານຄາຖາ

ຄວາມສງັດ໔ເປັນສຸຂຂອງບຸຄຄົລຜູ້ສັນໂດດ ຜູ້ມີທັມປາກົດແລ້ວ ຜູ້ເຫັນຢູ່

ໝາຍເຫດ :

໑ ມຸຈລິນທ໌ ຄື ຕົ້ນຈິກນາ ຕຣົງກັບພາສາອັງກຣິສວ່າ "The Tree Barringtonai Acutangula" ຕົ້ນມຸຈລິນທ໌ນີ້ເປັນເຈົ້າແຫ່ງຕົ້ນມຸຈລະ (PALI-ENGLISH DICTIONARY, P. 535, COL. 1, Edited by T. W. RHYS DAVIDS and WILLIAM STEDE)

໔ ຄວາມສງັດ ໃນທີ່ນີ້ຫມາຍເຖິງທັມເປັນທີ່ສງົບຣະງັບສັງຂາຣທັງປວງ ຄື ນິພພານນັ້ນເອງ (ວິ. ອ. ๓/໕/໑໐)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທະກະ] ໔. ຣາຊາຍຕນກຖາ

ຄວາມບໍ່ບຽດບຽນ ຄືຄວາມສຳຣວມໃນສັດທັງຫລາຍ ເປັນສຸຂໃນໂລກ
ຄວາມປາສຈາກ ຣາຄະຄືຄວາມລ່ວງກາມທັງຫລາຍ ໄດ້ເປັນສຸຂໃນໂລກ
ຄວາມກຳຈັດອັສມິມານະ(ຄວາມຖືຕົວວ່າເປັນນັ້ນເປັນນີ້)ເສັຽໄດ້ ເປັນສຸຂຢ່າງຍິ່ງ໑

ມຸຈລິນທກຖາ ຈົບ

໔. ຣາຊາຍຕນກຖາ

ວ່າດ້ວຍເຫຕຸການນ໌ຂນະປະທັບຢູ່ ນະ ຄວງຕົ້ນຣາຊາຍຕນະ

ເຣື່ອງຊົງພບກັບຕປຸສສະແລະພັລລິກະ

[໔] ຄັ້ນລ່ວງໄປ ໗ ວັນ ພຣະຜູ້ມີພຣະພາກຊົງອອກຈາກສມາທິນັ້ນ ແລ້ວສເດັຈຈາກຄວງຕົ້ນມຸຈລິນທ໌ໄປຍັງຄວງຕົ້ນຣາຊາຍຕນະ໔ ຄັ້ນເຖິງແລ້ວຈຶ່ງປະທັບນັ່ງໂດຍບັລລັງກ໌ດຽວສເວີຍວິມຸຕຕິສຸຂຢູ່ ນະ ຄວງຕົ້ນຣາຊາຍຕນະເປັນເວລາ ໗ ວັນ ຄັ້ງນັ້ນ ພໍ່ຄ້າ ໒ ຄົນຊື່ຕປຸສສະແລະພັລລິກະ ຍ່າງທາງໄກຈາກອຸກກລຊົນບົທມາເຖິງທີ່ນັ້ນ ຂນະນັ້ນ ເທວດາຜູ້ເປັນຍາຕຮ່ວມສາຍໂລຫິຕຂອງຕປຸສສະແລະພັລລິກະພໍ່ຄ້າທັງສອງ ໄດ້ກ່າວວ່າ "ທ່ານຜູ້ນິຣທຸກຂ໌ ພຣະຜູ້ມີພຣະພາກພຣະອົງຄ໌ນີ້ ເມື່ອແຣກຕຣັສຮູ້ ປະທັບຢູ່ ນະ ຄວງຕົ້ນຣາຊາຍຕນະ ທ່ານທັງສອງຈົ່ງໄປຕ້ອນຮັບພຣະອົງຄ໌ດ້ວຍເຂົ້າຕູຜົງແລະເຂົ້າຕູກ້ອນປຸງດ້ວຍນ້ຳເຜິ້ງເຖີດ ການບູຊາຂອງທ່ານທັງສອງຈັກເປັນໄປເພື່ອປໂຍດສຸຂສິ້ນກາລນານ" ຕໍ່ມາ ຕປຸສສະແລະພັລລິກະ ໄດ້ຖືເຂົ້າຕູຜົງແລະເຂົ້າຕູກ້ອນປຸງດ້ວຍນ້ຳເຜິ້ງເຂົ້າໄປເຝົ້າພຣະຜູ້ມີພຣະພາກ ຖວາຍອະພິວາທແລ້ວຢືນຢູ່ ນະທີ່ສົມຄວຣ ຂາບທູລວ່າ "ພຣະອົງຄ໌

ໝາຍເຫດ :

໑ ຂຸ. ອຸ. ໒໕/໑໑/໑໐໕

໔ ຣາຊາຍຕນະ ແປລກັນວ່າ ຕົ້ນເກດ ຊື່ອພາສາອັງກຣິສວ່າ "Buchania Latifolia" ແລະທີ່ບາຍເພີ້ມເຕີມວ່າ ປັນຕົ້ນໄມ້ຫລວງ ເປັນທີ່ສິງສຖິຕຂອງເທພແຫ່ງນາງໄມ້ທັງຫລາຍ (PALI-ENGLISH DICTIONARY, P. 569, COL. 2, Edited by T. W. RHYS DAVIDS and WILLIAM STEDE)

ຜູ້ຈະເຣີນ ຂໍພຣະອົງຄ໌ໂປຣດຊົງຮັບເຂົ້າຕູຜົງແລະເຂົ້າຕູກ້ອນປຸງດ້ວຍນໍ້າເຜີ້ງ ຊຶ່ງຈະເປັນໄປເພື່ອປໂຍດສຸຂສີ້ນກາລດົນແກ່ຂ້າພຣະອົງຄ໌ທັງສອງເຖີດ” ຂນະນັ້ນ ພຣະຜູ້ມີພຣະພາກໄດ້ຊົງດໍາຣິວ່າ “ພຣະຕຖາຄົຕທັງຫລາຍບໍ່ຊົງຮັບພັຕຕາຫາຣດ້ວຍພຣະຫັຕຖ໌ເລີຍ ເຮົາຈະຄວນຮັບເຂົ້າຕູຜົງແລະເຂົ້າຕູກ້ອນປຸງດ້ວຍນໍ້າເຜີ້ງຢ່າງໃດໜໍ” ທັນໃດນັ້ນ ທ້າວມຫາຣາຊທັງ ໔ ຊາບຄວາມດໍາຣິໃນພຣະ ທັຍຂອງພຣະຜູ້ມີພຣະພາກດ້ວຍໃຈຂອງຕົນໆຈຶ່ງນໍາບາຕຣສີລາ ໔ ໃບມາຈາກ ໔ ທິສ ເຂົ້າໄປຖວາຍແລ້ວທູລວ່າ “ຂໍພຣະອົງຄ໌ໂປຣດຊົງຮັບເຂົ້າຕູຜົງແລະເຂົ້າຕູກ້ອນປຸງນໍ້າເຜີ້ງ ດ້ວຍບາຕຣນີ້ເຖີດ ພຣະພຸດທະເຈົ້າຂ້າ” ພຣະຜູ້ມີພຣະພາກຊົງຮັບເຂົ້າຕູຜົງແລະເຂົ້າຕູກ້ອນປຸງດ້ວຍນໍ້າເຜີ້ງດ້ວຍບາຕຣສີລາໃຫມ່ອ່ຽມແລ້ວສເວີຍ ຕໍ່ມາ ຕປຸສສະແລະພັລລິກະໄດ້ຂາບທູລວ່າ “ພຣະອົງຄ໌ຜູ້ຈະເຣີນ ຂ້າພຣະອົງຄ໌ທັງສອງນີ້ ຂໍເຖິງພຣະຜູ້ມີພຣະພາກພ້ອມທັງພຣະທັມເປັນສະຣະນະ ຂໍພຣະອົງຄ໌ໂປຣດ ຊົງຈໍາຂ້າພຣະອົງຄ໌ທັງສອງວ່າ ເປັນອຸບາສົກຜູ້ເຖິງສະຣະນະຕັ້ງແຕ່ວັນນີ້ເປັນຕົ້ນໄປ ຈົນຕລອດຊີວິຕ” ຕປຸສສະແລະພັລລິກະນັ້ນ ໄດ້ເປັນເທວວາຈິກອຸບາສົກ(ຜູ້ກ່າວວາຈາເຖິງຣັຕນະ ໒ ວ່າເປັນສະຣະນະ)ເປັນພວກແຣກໃນໂລກແລ

ຣາຊາຍຕນກຖາ ຈົບ໑

ໝາຍເຫດ :

໑ ສຣຸປສະຖານທີ່ສໍາຄັນທີ່ພຣະຜູ້ມີພຣະພາກ ສເດັຈປະທັບຫລັງຈາກຕຣັສຮູ້ແລ້ວຕາມນັຍແຫ່ງອັນຖະກຖາ ດັ່ງນີ້

ສັປດາຫ໌ທີ ໑ ປະທັບຢູ່ ນະ ຄວງຕົ້ນໂພທິ໌

ສັປດາຫ໌ທີ ໒ ປະທັບຢູ່ທາງທິສຕາເວັນອອກເສີຍງເຫນືອຂອງຕົ້ນໂພທິ໌ ຮຽກວ່າ ອນິມິສສເຈດີຍ໌

ສັປດາຫ໌ທີ ໓ ສເດັຈຈົງກົມ ໄປມາຣະຫວ່າງຕົ້ນໂພທິ໌ກັບອນິມິສສເຈດີຍ໌ ຮຽກບໍຣິເວນນັ້ນວ່າ ຣຕນຈົງກົມ ເຈດີຍ໌

ສັປດາຫ໌ທີ ໔ ປະທັບຢູ່ທາງທິສຕາເວັນຕົກເສີຍງເຫນືອຂອງຕົ້ນໂພທິ໌ ຮຽກບໍຣິເວນນັ້ນວ່າ ຣຕນຂຣເຈດີຍ໌

ສັປດາຫ໌ທີ ໕ ປະທັບຢູ່ ນະ ຕົ້ນອຊປາລນິໂຄຣທ ຢູ່ຫ່າງໄກອອກໄປ ຕັ້ງຢູ່ທາງທິສຕາເວັນອອກຂອງຕົ້ນໂພທິ໌

ສັປດາຫ໌ທີ ໖ ປະທັບຢູ່ ນະ ຕົ້ນມຸຈລິນທ໌ ຢູ່ຫ່າງໄກອອກໄປ ຕັ້ງຢູ່ທາງທິສຕາເວັນອອກເສີຍງໃຕ້

ຂອງຕົ້ນໂພທິ໌

ສູ້ປດາຫ໌ທີ່ ໗ ປະທັບຢູ່ ນະ ຕົ້ນຣາຊາຍຕນະ ຢູ່ຫ່າງໄກອອກໄປ ຕັ້ງຢູ່ທາງທິສໃຕ້ຂອງຕົ້ນໂພທິ໌
(ວິ. ອ. ໓/໔-໖/໗-໑໔, ຂຸ. ພຸທິຫຼ. ອ. ໔໑໙-໔໒໐)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທຫຼກະ] ໕. ພຣົມຍາຈນກຖາ

໕. ພຣົມຍາຈນກຖາ

ວ່າດ້ວຍພຣົມອາຣາທຫຼນາໃຫ້ຊົງສະແດງທັມ

ເຣື້ອງຊົງພິຈາຣນາຄວາມລຶກຊຶ້ງແຫ່ງປຕິຈສະມຸປບາທ

[໗] ຄັນລ່ວງ ໗ ວັນ ພຣະຜູ້ມີພຣະພາກຊົງອອກຈາກສະມາທິ ແລ້ວສເດັຈຈາກຄວງຕົ້ນຣາຊາຍຕນະໄປຍັງຕົ້ນອຊປາລນິໂຄຣທຫຼ ຊາບວ່າ ພຣະອົງຄ໌ປະທັບຢູ່ ນະ ຄວງຕົ້ນອຊປາລນິໂຄຣທຫຼນັ້ນ ຂນະເມື່ອຊົງຫລີກຫລີບຢູ່ໃນທີ່ສງັດ ຊົງເກີດຄວາມດຳຣິຂຶ້ນໃນພຣະທັຍວ່າ໑ "ທັມທີ່ເຮົາໄດ້ບັນລຸແລ້ວນີ້ ລຶກຊຶ້ງເຫັນໄດ້ຍາກ ຮູ້ຕາມໄດ້ຍາກ ສງົບ ປານີຕ ບໍ່ເປັນວິສັຍແຫ່ງຕຣກ ລະອຽດ ບັນທິຕຈຶ່ງຈະຮູ້ໄດ້ ສ່ວນລັບໝູ່ປຣະຊາຜູ້ຣື່ນຣົມຍ໌ດ້ວຍອາລັຍ ຍິນດີໃນອາລັຍ ເພີດເພີນໃນອາລັຍ໔ ຖານະອັນນີ້ຍ່ອມເປັນສິ່ງທີ່ເຫັນໄດ້ຍາກ ກ່າວຄືຫລັກອິທັປປັຈຈຍຕາ ຫລັກປຕິຈຈສະມຸປບາທ ເຖິງແມ່ນຖານະອັນນີ້ກໍເປັນສິ່ງທີ່ເຫັນໄດ້ຍາກນັກ ກ່າວຄືຄວາມສງົບແຫ່ງສັງຂາຣທັງປວງ ຄວາມສລັດອຸປທິທັງປວງ ຄວາມສິ້ນຕັນຫາ ວິຣາຄະ ນິໂຣທຫຼ ນິພພານ ກໍຖ້າເຮົາຈະຄວນສະແດງທັມ ແລະຜູ້ອື່ນຈະບໍ່ເຂົ້າໃຈຊຶ້ງຕໍ່ເຮົາ ຂໍ້ນັ້ນກໍຈະຄວນເປັນຄວາມອິດເມື່ອຍເປົ່າແກ່ເຮົາ ຈະຄວນເປັນຄວາມລຳບາກເປົ່າແກ່ເຮົາ" ອີກຢ່າງນຶ່ງລະອນັຈສະຣິຍຄາຖາເຫລົ່ານີ້ ທີ່ບໍ່ເຄີຍຊົງສະດັບມາກ່ອນ ໄດ້ປາກົດ ແຈ່ມແຈ້ງແກ່ພຣະຜູ້ມີພຣະພາກວ່າ

ອນັຈສະຣິຍຄາຖາ

ບັດນີ້ ເຮົາຍັງບໍ່ຄວຣປະກາດທັມທີ່ເຮົາໄດ້ບັນລຸດ້ວຍຄວາມລຳບາກ ເພາະທັມນີ້ ບໍ່ແມ່ນສິ່ງທີ່ຜູ້ຖືກຣາຄະແລະໂທສະຄອບງຳ ຈະຮູ້ໄດ້ງ່າຍ ແຕ່ເປັນສິ່ງພາທວນກະແສລ ລະອຽດ ລຶກຊຶ້ງ ຮູ້ເຫັນໄດ້ຍາກປານີຕ ຜູ້ກຳຫນັດດ້ວຍຣາຄະ ຖືກກອງໂມຫະຫຸ້ມຫໍ່ໄວ້ ຈັກຮູ້ເຫັນບໍ່ໄດ້

ໝາຍເຫດ :

໑ ມ. ມູ. ໑໒/໓໒໑/໔໔໔, ມ. ມ. ໑໓/໓໓໗/໓໑໙

໔ ອາລັຍ ຄືກາມຄຸນ ໕ ທີ່ສັດຕ໌ພົວພັນ ຍິນດີ ເພີດເພີນ (ວິ. ອ. ໑/໗/໑໑) ເປັນຊື່ຮຽກກິເລສ ໔ ຢ່າງຄື ກາມຄຸນ ໕ ແລະຕັນຫາວິຈຣິຕ ໑໐໘ (ສາຣັຕຖ. ຕີກາ ໑/໗/໑໗໔) ດູ ອພິ. ວິ. (ແປ)໑໕/ ໔໗໑-໔໗໒/໒໔໔-໒໑໔

໑ ພາຫອນກະແສ ໃນທີ່ນີ້ໝາຍເຖິງພາເຂົ້າເຖິງນິພພານ (ວິ. ອ. ໑/໗/໑໔)

ພຣະວິນັຍປີດົກ ມຫາວັຄ [໑. ມຫາຂັນທະກະ] ໕. ພຣົມຍາຈນກຖາ

ເມື່ອພຣະອົງຄ໌ຊົງພິຈາຣນາດັ່ງນີ້ ພຣະທັຍກໍນ້ອມໄປເພື່ອການຂວນຂວາຍນ້ອຍ ບໍ່ໄດ້ນ້ອມໄປເພື່ອສະແດງທັມ

[໗] ຄັ້ງນັ້ນ ທ້າວສຫັມບດີພຣົມຊາບຄວາມດໍາຣິໃນພຣະທັຍຂອງພຣະຜູ້ມີພຣະພາກດ້ວຍໃຈຂອງ ຕົນ ໄດ້ມີຄວາມດໍາຣິວ່າ "ທ່ານຜູ້ຈະເຣີນເອີຍ ໂລກຈະຈິບຫາຍໜໍ ໂລກຈະພິນາສໜໍ ເພາະພຣະຕຖາຄົຕອະຣະຫັນຕະສັມມາສັມພຸດທະເຈົ້າຊົງນ້ອມພຣະທັຍໄປເພື່ອການຂວນຂວາຍນ້ອຍ ບໍ່ໄດ້ນ້ອມພຣະທັຍໄປເພື່ອຊົງສະແດງທັມ" ຈຶ່ງຫາຍໄປຈາກພຣົມໂລກມາປາກົດ ນະ ເບື້ອງພຣະພັກຕຣ໌ພຣະຜູ້ມີພຣະພາກ ປຽບປະນຶ່ງບຸຣຸສມີກໍາລັງຢຽດແຂນອອກ ຫລືຄູ້ແຂນເຂົ້າສະນັ້ນ ແລ້ວຫົ່ມອຸຕຕຣາ ສົງຄ໌ ບ່ຽງບ່າຂ້າງນຶ່ງ ຄຸກເຂົ່າເບື້ອງຂວາລົງເທິງແຜ່ນດິນ ປະນົມມືໄປທາງທີ່ພຣະຜູ້ມີພຣະພາກປະທັບ ພ້ອມທັງທູລວ່າ "ພຣະອົງຄ໌ຜູ້ຈະເຣີນ ຂໍພຣະຜູ້ມີພຣະພາກໄດ້ໂປຣດສະແດງທັມ ຂໍພຣະສຸຄຕເຈົ້າໄດ້ໂປຣດສະແດງທັມ ເພາະສັຕວ໌ທັງຫລາຍຜູ້ມີທຸລີໃນຕາຫນ້ອຍມີຢູ່໑ ສັຕວ໌ເຫລົ່ານັ້ນຍ່ອມເສື່ອມເພາະບໍ່ໄດ້ສດັບທັມ ເພາະຈັກມີຜູ້ຮູ້ທັມ໔" ທ້າວສຫັມບດີພຣົມໄດ້ທູລອາຣາທນາດັ່ງນີ້ ແລ້ວໄດ້ທູລເປັນປຣະພັນທຄາຖາຕໍ່ໄປວ່າ

ພຣົມນິຄົມຄາຖາ

ໃນການກ່ອນ ທັມທີ່ບໍ່ບໍຣິສຸດທ໌ອັນຄົນທີ່ມີມົລທິນ໑ຄິດຄົ້ນໄວ້ ປາກົດໃນແຄວ້ນມຄທ

ພຣະອົງຄ໌ ໂປຣດຊົງເປີດປະຕູອມຕທັມນັ້ນເຖີດ ຂໍເຫລົ່າສັຕວ໌ ຈົ່ງຟັງທັມທີ່ພຣະສັມພຸດທະເຈົ້າຜູ້ປາສຈາກມົລທິນໄດ້ຕຣັສຮູ້ແລ້ວຕາມລໍາດັບ

ໝາຍເຫດ :

໑ ໝາຍເຖິງມີຫຼູລີຄືຣາຄະ ໂທສະ ໂມຫະ ປິດບັງດວງຕາປັນຍາເບົາບາງ (ວິ. ອ. ໆໆ-ໆ/໑໔-໑໕)
໔ ເຫຕຸການນີ້ເປັນທີ່ມາແຫ່ງພິທີອາຣາທນາພຣະສົງຂໍສະແດງທັມ(ດູ ຂຸ. ພຸທຫຼ. ໓໓/໑/໔໓໕)
໓ ດິນທີ່ມີນິລຫິນ ໃນທີ່ນີ້ໝາຍເຖິງຄຣູທັງ ໕ (ວິ. ອ. ໓/ໆ/໑໔)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໕. ພຣົມຍາຈນກຖາ

ຂ້າແຕ່ພຣະອົງຄ໌ຜູ້ມີປັນຍາດີ ມີສມັນຕຈັກສຸ ບຸຣຸສຜູ້ຢືນຢູ່ເທິງຍອດເຂົາສີລາລ້ວນ ຄວນເຫັນໝູ່ ຊົນໄດ້ໂດຍຮອບ ແນວໃດ ພຣະອົງຄ໌ຜູ້ໝົດຄວາມໂສກແລ້ວ ກໍແນວນັ້ນ ໂປຣດສເດັຈຂຶ້ນສູ່ປຣາສາທຄືທັມແລ້ວຈັກໄດ້ເຫັນໝູ່ຊົນ ຜູ້ຕົກຢູ່ໃນຄວາມໂສກແລະຖືກຊາຕິຊຣາ ຄອບງໍາໄດ້ຊັດແຈ້ງ
ຂ້າແຕ່ພຣະອົງຄ໌ຜູ້ມີຄວາມພຽນ ຜູ້ຊະນະສົງຄາມ ຜູ້ນໍາໝູ່ ຜູ້ບໍ່ມີໜີ້ ຂໍພຣະອົງຄ໌ໂປຣດລຸກຂຶ້ນ ສເດັຈຈາຣິກໄປໃນໂລກ
ຂ້າແຕ່ພຣະຜູ້ມີພຣະພາກ ຂໍພຣະອົງຄ໌ໂປຣດຈົ່ງຊົງສະແດງທັມ ເພາະຈັກມີຜູ້ຮູ້ທັມ

[ເມື່ອທ້າວສຫັມບດີພຣົມໄດ້ຂາບທູລຢ່າງນີ້ແລ້ວ ພຣະຜູ້ມີພຣະພາກຈຶ່ງຕຣັສກັບທ້າວສຫັມບດີພຣົມວ່າ ພຣົມ ແມ່ນເຮົາເອງກໍມີຄວາມດໍາຣິວ່າ ທັມທີ່ເຮົາໄດ້ບັນລຸແລ້ວນີ້. . . ຈະຄວນເປັນຄວາມລໍາ ບາກເປົ່າແກ່ເຮົາ ພຣົມ ອີກຢ່າງນຶ່ງລະ ອນັຈສຣິຍຄາຖາເຫລົ່ານີ້ທີ່ບໍ່ເຄີຍສດັບມາກ່ອນໄດ້ປາກົດ ແຈ່ມແຈ້ງແກ່ເຮົາວ່າ ບັດນີ້ ເຮົາຍັງບໍ່ຄວຣປະກາດທັມທີ່ເຮົາໄດ້ບັນລຸ ດ້ວຍຄວາມລໍາບາກ. . . ແຕ່ເປັນສິ່ງພາທວນກະແສ . . .
ພຣົມ ເມື່ອເຮົາພິຈາຣນາແຈ້ງຊັດດັ່ງນີ້ ຈິຕຍ່ອມນ້ອມໄປເພື່ອການຂົນຂວາຍໜ້ອຍ ຫາໜ້ອມໄປເພື່ອສະແດງທັມເລີຍ
ແມ່ນຄັ້ງທີ ໔ ທ້າວສຫັມບດີພຣົມກໍທູລວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍພຣະຜູ້ມີພຣະພາກໄດ້ໂປຣດສະແດງທັມ . . . ເພາະຈັກມີຜູ້ຮູ້ທັມ"
ແມ່ນຄັ້ງທີ ໔ ພຣະຜູ້ມີພຣະພາກກໍຕຣັສວ່າ "ພຣົມ ແມ່ນເຮົາເອງກໍມີຄວາມຄິດວ່າ. . . ຫານ້ອມໄປເພື່ອສະແດງທັມເລີຍ"
ແມ່ນຄັ້ງທີ ໓ ທ້າວສຫັມບດີພຣົມກໍທູລວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍພຣະຜູ້ມີພຣະພາຄໄດ້ໂປຣດສະແດງທັມ . . . ເພາະຈັກມີຜູ້ຮູ້ທັມ"]

ເລື້ອງຊົງພິຈາຣະນາເວໄນຍສັດຕ໌ປຽບດ້ວຍດອກບົວ໑

[໙] ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງຮັບຄຳທູລອາຣາທະນາຂອງພຣົມ ແລະເພາະອາສັຍພຣະກຣຸນາໃນໝູ່ສັດຕ໌ ຊົງກວດເບິ່ງໂລກດ້ວຍພຸທທະຈັກສຸ໒ ເມື່ອຊົງກວດເບິ່ງໂລກດ້ວຍພຸທທະຈັກສຸ ໄດ້ເຫັນສັດຕ໌ທັງຫລາຍຜູ້ມີທຸລີໃນຕາໜ້ອຍ ມີທຸລີໃນຕາມາກ໓ ມີອິນທຣີຍ໌ແກ່ກ້າ ມີອິນທຣີຍ໌ອ່ອນ ມີອາການດີ ມີອາການຊົ່ວຊາມ ສອນໃຫ້ຮູ້ໄດ້ງ່າຍ ສອນໃຫ້ຮູ້ໄດ້ຍາກ ບາງພວກມັກເຫັນປຣໂລກແລະໂທສວ່າໜ້າຢ້ານກົວ ບາງພວກມັກບໍ່ເຫັນປຣໂລກແລະໂທສວ່າໜ້າຢ້ານກົວ ມີອຸປມາເໝືອນໃນກໍອຸບົລ ໃນກໍປະທຸມ ຫລືໃນກໍບຸນທຣິກ ດອກອຸບົລ ດອກປະທຸມ ດອກບຸນທຣິກ ບາງດອກທີ່ເກີດໃນນ້ຳ ຈະເຣີນໃນນ້ຳ ຍັງບໍ່ພົ້ນນ້ຳ ຈົມຢູ່ໃນນ້ຳ ດອກອຸບົລ ດອກປະທຸມ ດອກບຸນ ທຣິກ ບາງດອກທີ່ເກີດໃນນ້ຳ ຈະເຣີນໃນນ້ຳຢູ່ສເມີນ້ຳ ດອກອຸບົລ ດອກປະທຸມ ດອກບຸນທຣິກ ບາງດອກທີ່ເກີດໃນນ້ຳ ຈະເຣີນໃນນ້ຳ ຂຶ້ນພົ້ນນ້ຳ ບໍ່ແຕະນ້ຳ ແນວໃດ ພຣະຜູ້ມີພຣະພາກຊົງກວດເບິ່ງໂລກດ້ວຍພຸທທະຈັກສຸ ໄດ້ເຫັນສັດຕ໌ທັງຫລາຍ ຜູ້ມີທຸລີໃນຕາໜ້ອຍ ມີທຸລີໃນຕາມາກ ມີອິນທຣີຍ໌ແກ່ກລ້າ ມີອິນທຣີຍ໌ອ່ອນ ມີອາການດີ ມີອາການຊົ່ວຊາມ ສອນໃຫ້ຮູ້ໄດ້ງ່າຍ ສອນໃຫ້ຮູ້ໄດ້ຍາກ ບາງພວກມັກເຫັນປຣໂລກແລະໂທສວ່າເປັນສິ່ງໜ້າຢ້ານກົວ ບາງພວກມັກບໍ່ເຫັນປຣໂລກແລະໂທສວ່າເປັນສິ່ງໜ້າຢ້ານກົວ ແນວນັ້ນ໔

ໝາຍເຫດ :

໑ ທີ. ມ. ໑໐/໘໙/໓໓, ມ. ມູ. ໑໒/໒໗໓/໒໔໔, ອພິ. ກ. ໓໗/໗໕໘/໔໙໐, ດູຫຽບ ອງ. ຈຕຸກກ. ໒໑/໑໓໓/໑໕໓

໒ ພຸທທະຈັກສຸ ໝາຍເຖິງ (໑) ອິນທຣິຍປໂຣປຣິຍັຕຕິຍານະ ຄື ປຣີຊາຫຍັ່ງຮູ້ຄວາມຍິ່ງແລະຄວາມຢ່ອນແຫ່ງອິນທຣີຍ໌ຂອງສັດຕ໌ທັງຫລາຍ ຄື ຮູ້ວ່າ ສັດຕ໌ນັ້ນໆມີສັດທາ ວິຣິຍະ ສຕິ ສມາທິ ປັນຍາ ແຄ່ໃດ ພຽງໃດ ມີກິເລສມາກ ກິເລສນ້ອຍ ມີຄວາມພ້ອມ ທີ່ຈະຕຣັສຮູ້ຫລືບໍ່ (໒) ອາສຍານຸສຍຍານະ ຄື ປຣີຊາຫຍັ່ງຮູ້ອັທຍາສັຍຄວາມມຸ່ງໝາຍ ສພາພຈິຕທີ່ນອນຢູ່ (ຂຸ. ປ. ໓໑/໑໑໑/໑໒໔,໑໑໓/໑໒໘)

໓ ຕາ ໃນທີ່ນີ້ໝາຍເຖິງປັນຍາຈັກສຸ (ວິ. ອ. ໓/໙/໑໕, ດູ ຂຸ. ປ. ໓໑/໑໑໑-໑໑໕/໑໒໔-໑໒໗)

໔ ນອກຈາກບົວຈົມຢູ່ໃນນ້ຳ ບົວຢູ່ສເມີນ້ຳ ບົວພົ້ນນ້ຳ ໓ ເຫລົ່ານີ້ ອັນຖະກຖາໄດ້ກ່າວເຖິງບົວເຫລົ່າທີ ໔ ຄື ບົວທີ່ມີໂຣຄຍັງບໍ່ພົ້ນນ້ຳເປັນພັກສາຂອງປາແລະເຕົ່າ ຊຶ່ງບໍ່ໄດ້ຍົກຂຶ້ນສູ່ບາລີ ແລ້ວແບ່ງບຸຄຄົລເປັນ ໔ ເຫລົ່າ (ຕາມທີ່ປາກົດໃນ ອງ. ຈຕຸກກ. (ແປ) ໒໑/໑໓໓/໒໐໒, ອພິ. ປຸ. (ແປ)

໓໘/໑໐/໑໔໔,໑໔໗-໑໕໑/໑໗໘-໑໗໗) ຄື (໑) ອຸຄຂູຕິຕັຍຢູ (໔) ວິປຈິຕັຍຢູ (໓) ເນີຍຍະ (໔) ປທປຣມະ ແລ້ວປຽບອຸຄຂູຕິຕັຍຢູ ເປັນເຫມືອນບົວພົ້ນນ້ຳ ທີ່ພອຕ້ອງແສງອາທິຕຍ໌ແລ້ວກໍບານໃນ ວັນນີ້ ປຽບວິປຈິຕັຍຢູ ເປັນເຫມືອນບົວຢູ່ສເມີນ້ຳທີ່ຈະບານໃນວັນຮຸ່ງຂຶ້ນ ປຽບເນີຍຍະ ເປັນ ເຫມືອນບົວຈົມຢູ່ໃນນ້ຳທີ່ຈະຂຶ້ນມາບານໃນວັນທີ ໓ ສ່ວນປທປຣມະ ປຽບເຫມືອນບົວທີ່ມີໂຣຄ ຍັງບໍ່ພົ້ນນ້ຳ ບໍ່ມີໂອກາສຂຶ້ນມາບານ ເປັນພັກສາຂອງປາແລະເຕົ່າ ພຣະຜູ້ມີພຣະພາກຊົງ ກວດເບິ່ງ ຫມື່ນໂລກທາຕຸອັນເປັນເຫມືອນກໍອຸບົລເປັນຕົ້ນ ໄດ້ຊົງເຫັນໂດຍອາການທັງປວງວ່າ ຫມູ່ປຣະຊາຜູ້ມີທູລີໃນຕາຫນ້ອຍມີປະມານເທົ່ານີ້ ຫມູ່ປຣະຊາຜູ້ມີທູລີໃນຕາມາກມີປະມານເທົ່ານີ້ ແລະ ໃນຫມູ່ປຣະຊາທັງ ໔ ນັ້ນ ອຸຄຂູຕິຕັຍຢູບຸຄຄົລມີປະມານເທົ່ານີ້ (ທີ. ມ. ອ. ໒໒/໒໔-໒໕, ສາຣຕຖ. ຕີກາ ໓/໘/໑໘໔-໑໘໓)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໒. ປັຢຈວັຄຄີຍກຖາ

ຄັນຊົງເຫັນແລ້ວ ໄດ້ຕຣັສຄາຖາຕອບທ້າວສຫັມບດີພຣົມວ່າ ສັຕວ໌ທັງຫລາຍເຫລົ່າໃດຈະຟັງ ຈົ່ງ ປ່ອຍສັດທາມາເຖີດ ເຮົາໄດ້ເປີດປະຕູອມຕທັມແກ່ສັຕວ໌ທັງຫລາຍເຫລົ່ານັ້ນແລ້ວທ່ານພຣົມ ເພາະເຮົາ ສຳຄັນວ່າຈະລຳບາກ ຈຶ່ງບໍ່ໄດ້ສະແດງທັມທີ່ປານີຕຄ່ອງແຄ້ວ ໃນຫມູ່ມະນຸສຍ໌ ຂນະນັ້ນ ທ້າວ ສຫັມບດີພຣົມໄດ້ຊາບວ່າ "ພຣະພຸທທອົງຄ໌ໄດ້ຊົງປະທານໂອກາສ ເພື່ອຈະສະແດງທັມແລ້ວ" ຈຶ່ງ ຖວາຍອະພິວາທພຣະຜູ້ມີພຣະພາກກະທຳປຣະທັກສິນ(ວຽນໄປທາງຂວາ)ແລ້ວ
ອັນຕຣທານໄປ ນະທີ່ນັ້ນແລ

ພຣົມຍາຈນກຖາ ຈົບ

໒. ປັຢຈວັຄຄີຍກຖາ
ວ່າດ້ວຍພິກສຸປັຢຈວັຄຄີຍ໌

ເຣື້ອງອາຣາຣດາບົສກາລາມໂຄຕຣ
[໑໐] ຄັ້ງນັ້ນ ພຣະຜູ້ມີພຣະພາກໄດ້ຊົງດຳຣິວ່າ "ເຮົາຈະຄວນສະແດງທັມແກ່ໃຜກ່ອນຫນໍ ໃຜຈັກຮູ້ທັມ ນີ້ໄດ້ທັນທີ" ແລ້ວຊົງດຳຣິຕໍ່ໄປວ່າ "ອາຣາຣດາບົສ ກາລາມໂຄຕຣນີ້ ເປັນບັນທິຕ ສລາດ ຫລັກແຫລມ ມີປັນຍາ ມີທູລີໃນຕາຫນ້ອຍມານານ ຖ້າຢ່າງນັ້ນ ເຮົາຈະຄວນສະແດງທັມແກ່ອາຣາຣ ດາບົສ ກາລາມໂຄຕຣກ່ອນ ທ່ານຈັກຮູ້ທັມນີ້ໄດ້ ທັນທີ"

ລໍາດັບນັ້ນ ເທວດາຜູ້ບໍ່ປາກົດກາຍມາທູລພຣະຜູ້ມີພຣະພາກວ່າ "ພຣະອົງຄ໌ຜູ້ຈະເຣີນ ອາລາຣດາບົສ ກາລາມໂຄຕຣ ໄດ້ທໍາກາລະ ໆ ອັນແລ້ວ" ແມ່ນພຣະຜູ້ມີພຣະພາກກໍໄດ້ເກີດຍານຂຶ້ນວ່າ "ອາລາຣດາບົສ ກາລາມໂຄຕຣ ໄດ້ທໍາກາລະ ໆ ອັນແລ້ວ" ຈຶ່ງຊົງດໍາຣິວ່າ "ອາລາຣດາບົສ ກາລາມໂຄຕຣ ເປັນຜູ້ມີຄວາມເສື່ອມນານໜໍ່໑ ເພາະຖ້າທ່ານໄດ້ຟັງທັມນີ້ ກໍຈະຄວນຮູ້ໄດ້ທັນທີ"

ໝາຍເຫດ :

໑ ມີຄວາມເສື່ອມນານຫນໍ ຫມາຍເຖິງມີຄວາມເສື່ອມມາກ ເພາະເສື່ອມຈາກມັຄແລະຜລທີ່ຈະຄວນບັນລຸ ເພາະເກີດໃນອັກຂນະ ຄື ອາລາຣດາບົສຕາຍໄປເກີດໃນອາກິຍຈັຍຍາຍຕນພົພ ສ່ວນອຸທທກດາບົສຕາຍໄປເກີດໃນເນວສັນຍານາສັນຍາຍຕນພາພ (ວິ. ອ. ៣/໑໐/໑໓)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໓. ປັຍຈວັຄຄີຍກຖາ

ເຣື້ອງອຸທທກດາບົສຣາມບຸຕຣ

ຕໍ່ມາ ພຣະຜູ້ມີພຣະພາກໄດ້ຊົງດໍາຣິວ່າ "ເຮົາຈະຄວນສະແດງທັມແກ່ໃຜກ່ອນໜໍໃຜຈັກຮູ້ທົ່ວເຖິງ ທັມນີ້ໄດ້ທັນທີ" ຈຶ່ງຊົງດໍາຣິຕໍ່ໄປວ່າ "ອຸທທກດາບົສ ຣາມບຸຕຣນີ້ເປັນບັນທິຕ ສລາດ ສຽບແຫລມ ມີປັນຍາ ມີທຸລີໃນຕາຫນ້ອຍມານານ ຖ້າຢ່າງນັ້ນ ເຮົາຈະຄວນສະແດງທັມແກ່ອຸທທກດາບົສ ຣາມບຸຕຣກ່ອນ ທ່ານຈັກຮູ້ທັມນີ້ໄດ້ທັນທີ"

ລໍາດັບນັ້ນ ເທວດາຜູ້ບໍ່ປາກົດກາຍມາທູລພຣະຜູ້ມີພຣະພາກວ່າ "ພຣະອົງຄ໌ຜູ້ຈະເຣີນອຸທທກດາບົສ ຣາມບຸຕຣ ໄດ້ທໍາກາລະມື້ວານນີ້" ແມ່ນພຣະຜູ້ມີພຣະພາກກໍໄດ້ເກີດຍານຂຶ້ນວ່າ "ອຸທທກດາບົສ ຣາມບຸຕຣ ໄດ້ທໍາກາລະມື້ວານນີ້" ຈຶ່ງຊົງດໍາຣິວ່າ "ອຸທທກດາບົສ ຣາມບຸຕຣ ເປັນຜູ້ມີຄວາມເສື່ອມນານໜໍ ເພາະຖ້າທ່ານໄດ້ຟັງທັມນີ້ ກໍຈະຄວນຮູ້ໄດ້ທັນທີ"

ຕໍ່ມາ ພຣະຜູ້ມີພຣະພາກໄດ້ຊົງດໍາຣິດັ່ງນີ້ວ່າ "ເຮົາຈະຄວນສະແດງທັມແກ່ໃຜກ່ອນໜໍ ໃຜຈັກຮູ້ທັມນີ້ໄດ້ທັນທີ" ຈຶ່ງຊົງດໍາຣິວ່າ "ພິກສຸປັຍຈວັຄຄີຍ໌ ມີອຸປກາຣະແກ່ເຮົາມາກ ທີ່ໄດ້ເຝົ້າປົນນິບັຕິເຮົາຜູ້ມຸ່ງຫນ້າບໍາເພັນພຽນມາ ຖ້າຢ່າງນັ້ນ ເຮົາຈະຄວນສະແດງທັມແກ່ພິກສຸປັຍຈວັຄຄີຍ໌ກ່ອນ" ແລ້ວຊົງດໍາຣິຕໍ່ໄປວ່າ "ບັດນີ້ ພິກສຸປັຍຈວັຄຄີຍ໌ຢູ່ທີ່ໃດໜໍ" ກໍໄດ້ຊົງເຫັນພິກສຸປັຍຈວັຄຄີຍ໌ຢູ່ທີ່ປ່າອິສິປຕນມຣິຄທາຍວັນ ເຂຕກຸງພາຣານສີ ດ້ວຍທິພຍຈັກສຸ ອັນບໍຣິສຸດທິ໌ລ່ວງຈັກສຸມະນຸສຍ໌ ຄັນພຣະຜູ້ມີພຣະພາກປະທັບຢູ່ ນະ ຕາແສງອຸຣຸເວລາຕາມພຣະອັທຍາສັຍແລ້ວ ໄດ້ສເດັຈຈາຣິກໄປທາງກຸງພາຣານສີ

ເຣື້ອງອຸປກາຊີວກ

[໑໑] ອາຊີວກຊື່ອອຸປກະໄດ້ພົບພຣະຜູ້ມີພຣະພາກສເດັຈດຳເນີນທາງໄກ ນະ ຣະຫວ່າງແມ່ນ້ຳຄຍາ ກັບຕົ້ນໂພທິພຣຶກສ໌ ໄດ້ທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ອາວຸໂສ ອິນທຣີຍ໌ຂອງທ່ານຜ່ອງໃສຍິ່ງນັກ ຜິວພັນຂອງທ່ານບໍຣິສຸດຫຼົ່ຜຸດຜ່ອງ ທ່ານບວຊອຸທິສໃຜ ໃຜເປັນສາສດາຂອງທ່ານ ຫລືທ່ານຊອບ ໃຈທັມຂອງໃຜ" ເມື່ອອຸປກາຊີວກທູລຖາມດັ່ງນີ້ແລ້ວ ພຣະຜູ້ມີພຣະພາກໄດ້ຕຣັສຄາຖາຕອບອຸປກາຊີ ວກວ່າ "ເຣົາເປັນຜູ້ຄອບງຳທັມທັງປວງ໑ ຮູ້ທັມທັງປວງ໒ ບໍ່ໄດ້ແປດເປື້ອນໃນທັມທັງປວງ໓ ລະທັມທັງປວງໄດ້ສິ້ນເຊີງ໔ ຫລຸດພົ້ນເພາະສິ້ນຕັນຫາ ຕຣັສຮູ້ຍິ່ງເອງ ແລ້ວຈະຄວນກ່າວອ້າງໃຜລະ ເຣົາບໍ່ມີອາຈາຣຍ໌໕ ເຣົາບໍ່ມີຜູ້ສເມີເໝືອນ ເຣົາບໍ່ມີຜູ້ທັດທຽມ ໃນໂລກກັບທັງເທວໂລກ ເພາະເຣົາ ເປັນອຣຫັນຕ໌ ເປັນສາສດາຜູ້ຍອດຢ້ຽມ ເປັນຜູ້ຕຣັສຮູ້ຊອບເອງພຽງຜູ້ດຽວ ເປັນຜູ້ເຢືອກເຢັນ ດັບ ກິເລສໄດ້ແລ້ວໃນໂລກ ເຣົາຈະໄປເມືອງຫລວງແຫ່ງຊາວກາສີ ປະກາດທັມຈັກຣ ຕີກອງອມຕທັມໄປໃນໂລກອັນມີຄວາມມືດມິດ"໖ ອຸປກາຊີວກທູລວ່າ "ອາວຸໂສ ທ່ານສົມຄວຣເປັນ ພຣະອນັນຕຊິນະຕາມທີ່ທ່ານປະກາດ" ພຣະຜູ້ມີພຣະພາກຕຣັສວ່າ "ຊິນເຫລົ່າໃດໄດ້ເຖິງຄວາມສິ້ນອາ ສວະແລ້ວ ຊິນເຫລົ່ານັ້ນຍ່ອມເປັນພຣະຊິນະເຊັ່ນເຣົາ ອຸປກະ ເຣົາຊນະຄວາມຊົ່ວໄດ້ແລ້ວ ເພາະສະນັ້ນ ເຣົາຈຶ່ງຊື່ວ່າພຣະຊິນະ" ເມື່ອພຣະຜູ້ມີພຣະພາກໄດ້ຕຣັສດັ່ງນີ້ແລ້ວ ອຸປກາຊີວກຈຶ່ງທູລວ່າ "ອາວຸໂສ ຄວຣຈະເປັນຢ່າງນັ້ນ" ໂຄ້ງສີສະແລ້ວຍ່າງສວນທາງຫລີກໄປ

ໝາຍເຫດ :

໑ ທັມທັງປວງ ໃນທີ່ນີ້ໝາຍເຖິງທັມອັນເປັນໄປໃນພູມິ ໓ (ວິ. ອ. ໓/໑໑/໑໖)
໒ ທັມທັງປວງ ໃນທີ່ນີ້ໝາຍເຖິງທັມອັນເປັນໄປໃນພູມິ ໔ (ວິ. ອ. ໓/໑໑/໑໖)
໓ ທັມທັງປວງ ໃນທີ່ນີ້ໝາຍເຖິງທັມອັນເປັນໄປໃນພູມິ ໓ (ວິ. ອ. ໓/໑໑/໑໖)
໔ ທັມທັງປວງ ໃນທີ່ນີ້ໝາຍເຖິງທັມອັນເປັນໄປໃນພູມິ ໓ (ວິ. ອ. ໓/໑໑/໑໖)
໕ ເຣົາບໍ່ມີອາຈາຣຍ໌ ໃນທີ່ນີ້ໝາຍເຖິງບໍ່ມີອາຈາຣຍ໌ໃນຣະດັບໂລກຸຕຕຣທັມ (ວິ. ອ. ໓/໑໑/໑໗)
໖ ມ. ມູ. ໑໒/໒໘໕/໒໔໖, ມ. ມ. ໑໓/໓໔໑/໓໒໓ ອພິ. ກ. ໓໗/໔໐໕/໔໔໕

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໖. ປັຍຈວັຄຄີຍກຖາ

ເຣື້ອງຊີງສະແດງທັມແກ່ພິກສຸປັຍຈວັຄຄີຍ໌

[໑໔] ຄັ້ງນັ້ນ ພຣະຜູ້ມີພຣະພາກສເດັຈຈາຣິກໄປໂດຍລຳດັບ ເຖິງປ່າອິສິປຕນມຄິຄທາຍວັນ ເຂຕກຸງພາຣານສີ ແລ້ວໄດ້ສເດັຈໄປທາງທີ່ພິກສຸປັຢຈວັຄຄີຍ໌ຢູ່ ພິກສຸປັຢຈວັຄຄີຍ໌ໄດ້ເຫັນພຣະຜູ້ມີພຣະພາກສເດັຈມາແຕ່ໄກ ໄດ້ນັດຫມາຍກັນແລະກັນວ່າ "ທ່ານທັງຫລາຍ ພຣະສມະນະໂຄດົມນີ້ເປັນຜູ້ມັກມາກຄາຍຄວາມພຽນ ວຽນມາເພື່ອຄວາມເປັນຄົນມັກມາກ ກຳລັງສເດັຈມາ ພວກເຮົາບໍ່ຄວນຂາບໄຫວ້ບໍ່ຄວນລຸກຮັບ ບໍ່ຄວນຮັບບາຕຣແລະຈີວອນຂອງພຣະອົງຄ໌ ແຕ່ຈະຈັດອາສນະໄວ້ ຖ້າພຣະອົງຄ໌ປຣາຖນາກໍຈັກປະທັບນັ່ງ" ຄັນສເດັຈມາເຖິງ ພິກສຸປັຢຈວັຄຄີຍ໌ກໍບໍ່ອາຈຕັ້ງຢູ່ໃນກຕິກາຂອງຕົນໄດ້ຕ່າງຕ້ອນຮັບພຣະຜູ້ມີພຣະພາກ ຮູບນຶ່ງຮັບບາຕຣແລະຈີວອນ ຮູບນຶ່ງປູອາສນະ ຮູບນຶ່ງຈັດຫານ້ຳລ້າງພຣະບາທ ຮູບນຶ່ງຈັດຕັ້ງຕັ່ງຮອງພຣະບາທ ຮູບນຶ່ງນຳກະເບື້ອງເຊັດພຣະບາທເຂົ້າໄປວາງ ພຣະຜູ້ມີພຣະພາກໄດ້ປະທັບນັ່ງເທິງອາສນະທີ່ພິກສຸປັຢຈວັຄຄີຍ໌ຈັດຖວາຍ ແລ້ວຊົງລ້າງພຣະບາທ ແຕ່ພິກສຸປັຢຈວັຄຄີຍ໌ກັບຮ້ອງຮຽກພຣະຜູ້ມີພຣະພາກໂດຍອອກພຣະນາມ ແລະໃຊ້ຄຳວ່າ "ອາວຸໂສ"໑ ເມື່ອພິກສຸປັຢຈວັຄຄີຍ໌ ກ່າວຢ່າງນັ້ນແລ້ວ ພຣະຜູ້ມີພຣະພາກ ໄດ້ຕຣັສຫ້າມພິກສຸປັຢຈວັຄຄີຍ໌ວ່າ "ພິກສຸທັງຫລາຍ ພວກທ່ານຢ່າຮ້ອງຮຽກຕຖາຄົຕໂດຍອອກຊື່ແລະໃຊ້ຄຳວ່າອາວຸໂສ ພິກສຸທັງຫລາຍ ຕຖາຄົຕເປັນອຣຫັນຕ໌ຕຣັສຮູ້ເອງໂດຍຊອບ ພວກທ່ານຈົ່ງງ່ຽງໂສຕສດັບເຮົາໄດ້ບັນລຸອມຕທັມແລ້ວຈະສັ່ງສອນ ຈະສະແດງທັມ ພວກທ່ານເມື່ອປະຕິບັດຕາມທີ່ເຮົາສັ່ງສອນ ບໍ່ດົນນັກກໍຈັກເຮັດໃຫ້ແຈ້ງຊຶ່ງປໂຍດອັນຍອດຢ້ຽມ ອັນເປັນທີ່ສຸດແຫ່ງພຣົມຈັນຍ໌ ທີ່ເຫລົ່າກຸລບຸຕຣຜູ້ອອກຈາກເຮືອນບວຊເປັນບັພຊິຕ ໂດຍຊອບຕ້ອງການດ້ວຍປັນຍາອັນຍິ່ງເອງ ເຂົ້າເຖິງຢູ່ໃນປັຈຈຸບັນນີ້ ແນ່ແທ້"

ໝາຍເຫດ :

໑ ໃນຄັ້ງພຸທທກາລ ຄຳວ່າ "ອາວຸໂສ" ເປັນຄຳທີ່ຄົນທົ່ວໄປໃຊ້ກ່າວນຳທັກທາຍຮ້ອງຮຽກກັນ ບໍ່ສະແດງຄວາມເຄົາຣົພເປັນພິເສສ ກ່ອນຈະສເດັຈດັບຂັນທປຣິນິພພານ ພຣະຜູ້ມີພຣະພາກພຸດທະເຈົ້າຮັບສັ່ງຫ້າມພຣະຜູ້ນ້ອຍຮຽກພຣະຜູ້ໃຫຍ່ໂດຍໃຊ້ຄຳວ່າ "ອາວຸໂສ" ແລະຫ້າມເວົ້າກັບຜູ້ໃຫຍ່ໂດຍອອກຊື່ທ່ານນັ້ນທ່ານນີ້ ແຕ່ຄວຣຮຽກພຣະຜູ້ໃຫຍ່ໂດຍໃຊ້ຄຳວ່າ "ພັນເຕ" ຫລື "ອາຍັສມາ" ສ່ວນພຣະຜູ້ໃຫຍ່ຄວຣຮຽກພຣະຜູ້ນ້ອຍວ່າ "ອາວຸໂສ" ຫລືໂດຍກາຣຣະບຸຊື່ນັ້ນຊື່ນີ້ (ເບິ່ງ. ທີ. ມ. ໑໐/໒໑໖/໑໖໔)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໖. ປັຢຈວັຄຄີຍກຖາ

ເມື່ອພຣະຜູ້ມີພຣະພາກຕຣັສຢ່າງນີ້ແລ້ວ ພິກສຸປັຍຈວັຄຄີຍ໌ໄດ້ຂາບທູລພຣະຜູ້ມີພຣະພາກ ດັ່ງນີ້ວ່າ "ອາວຸໂສໂຄດົມ ແມ່ນດ້ວຍຈຣິຍານັ້ນ ແມ່ນດ້ວຍປຕິປທານັ້ນ ແມ່ນດ້ວຍທຸກກຣກີຣິຍານັ້ນ ພຣະອົງຄ໌ກໍຍັງບໍ່ໄດ້ບັນລຸອຸຕຕຣິມນຸສສທັມ ອັນເປັນຍານທັສສນະທີ່ປະເສີດ ອັນສາມາດ ບັດນີ້ພຣະອົງຄ໌ເປັນຜູ້ມັກມາກຄາຍຄວາມພຽນ ວຽນມາເພື່ອຄວາມເປັນຄົນມັກມາກ ຈັ່ງໃດຈັກບັນລຸອຸຕຕຣິມນຸສສທັມ ອັນເປັນຍານທັສສນະທີ່ປະເສີດ ອັນສາມາດໄດ້ລະ" ເມື່ອພິກສຸປັຍຈວັຄຄີຍ໌ຂາບທູລຢ່າງນັ້ນແລ້ວ ພຣະຜູ້ມີພຣະພາກໄດ້ຕຣັສກັບພິກສຸປັຍຈວັຄຄີຍ໌ດັ່ງນີ້ວ່າ "ພິກສຸທັງຫລາຍ ຕຖາຄົຕບໍ່ເປັນຄົນມັກມາກ ບໍ່ໄດ້ຄາຍຄວາມພຽນ ບໍ່ໄດ້ວຽນມາເພື່ອຄວາມເປັນຄົນມັກມາກ ພິກສຸທັງຫລາຍ ຕຖາຄົຕເປັນອຣຫັນຕ໌ຕຣັສຮູ້ເອງໂດຍຊອບ ພວກທ່ານຈົ່ງງ່ຽງໂສຕສດັບ ເຮົາໄດ້ບັນລຸອມຕທັມແລ້ວ ຈະສັ່ງສອນ ຈະສະແດງທັມ ພວກທ່ານເມື່ອປະຕິບັດຕາມທີ່ເຮົາສັ່ງສອນ ບໍ່ດົນນັກກໍຈັກເຮັດໃຫ້ແຈ້ງຊຶ່ງປໂຍດອັນຍອດຢ້ຽມ ອັນເປັນທີ່ສຸດແຫ່ງພຣົມຈັນຍ໌ ທີ່ເຫລົ່າກຸລບຸຕຣຜູ້ອອກຈາກເຮືອນບວຊເປັນບັພຊິຕໂດຍຊອບ ຕ້ອງກາຣດ້ວຍປັນຍາອັນຍິ່ງເອງເຂົ້າເຖິງຢູ່ໃນປັຈຈຸບັນນີ້ແນ່ແທ້"

ແມ່ນຄັ້ງທີ ໒ ພິກສຸປັຍຈວັຄຄີຍ໌ກໍໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ ຯລຯ

ແມ່ນຄັ້ງທີ ໒ ພຣະຜູ້ມີພຣະພາກໄດ້ຕຣັສກັບພຣະປັຍຈວັຄຄີຍ໌ດັ່ງນີ້ວ່າ ຯລຯ

ແມ່ນຄັ້ງທີ ໓ ພິກສຸປັຍຈວັຄຄີຍ໌ກໍໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ອາວຸໂສໂຄດົມ ແມ່ນດ້ວຍຈຣິຍານັ້ນ ແມ່ນດ້ວຍປຕິປທານັ້ນ ແມ່ນດ້ວຍທຸກກຣກີຣິຍານັ້ນ ພຣະອົງຄ໌ກໍຍັງບໍ່ໄດ້ບັນລຸອຸຕຕຣິມນຸສສທັມ ອັນເປັນຍານທັສສນະທີ່ປະເສີດ ອັນສາມາດ ບັດນີ້ພຣະອົງຄ໌ເປັນຜູ້ມັກມາກ ຄາຍຄວາມພຽນວຽນມາເພື່ອຄວາມເປັນຄົນມັກມາກ ຈັ່ງໃດຈັກບັນລຸອຸຕຕຣິມນຸສສທັມ ອັນເປັນຍານທັສສນະທີ່ປະເສີດ ອັນສາມາດໄດ້ລະ" ເມື່ອພິກສຸປັຍຈວັຄຄີຍ໌ໄດ້ຂາບທູລຢ່າງນັ້ນແລ້ວ ພຣະຜູ້ມີພຣະພາກໄດ້ຕຣັສກັບພິກສຸປັຍຈວັຄຄີຍ໌ດັ່ງນີ້ວ່າ "ພິກສຸທັງຫລາຍ ພວກທ່ານຍັງຈຳໄດ້ຫລືບໍ່ວ່າ ຖ້ອຍຄຳເຊັ່ນນີ້ເຮົາໄດ້ເຄີຍກ່າວໃນກາລກ່ອນແຕ່ນີ້" ພິກສຸປັຍຈວັຄຄີຍ໌ຂາບທູລວ່າ "ຖ້ອຍຄຳເຊັ່ນນີ້ບໍ່ເຄີຍໄດ້ຟັງມາກ່ອນ ພຣະພຸດທະເຈົ້າຂ້າ"

ພຣະຜູ້ມີພຣະພາກຕຣັສວ່າ "ພິກສຸທັງຫລາຍ ຕຖາຄົຕເປັນອຣຫັນຕ໌ຕຣັສຮູ້ເອງໂດຍຊອບ ພວກທ່ານຈົ່ງງ່ຽງໂສຕສດັບ ເຮົາໄດ້ບັນລຸອມຕທັມແລ້ວ ຈະສັ່ງສອນ ຈະສະແດງທັມພວກທ່ານເມື່ອປະຕິບັດຕາມທີ່ເຮົາສັ່ງສອນ ບໍ່ດົນນັກກໍຈັກເຮັດໃຫ້ແຈ້ງຊຶ່ງປໂຍດອັນຍອດຢ້ຽມ ອັນເປັນທີ່ສຸດແຫ່ງພຣົມຈັນຍ໌ ທີ່ເຫລົ່າກຸລບຸຕຣຜູ້ອອກຈາກເຮືອນບວຊເປັນບັພຊິຕໂດຍຊອບ ຕ້ອງກາຣດ້ວຍປັນຍາອັນຍິ່ງເອງເຂົ້າເຖິງຢູ່ໃນປັຈຈຸບັນນີ້ແນ່ແທ້" ພຣະຜູ້ມີພຣະພາກຊົງສາມາດໃຫ້ພິກສຸປັຍຈວັຄຄີຍ໌ຍິນຍອມ

ໄດ້ແລ້ວ ລຳດັບນັ້ນ ພິກຂຸປັຍຈວັຄຄີຍ໌ໄດ້ຍອມເຊື່ອຟັງພຣະຜູ້ມີພຣະພາກ ຈຶ່ງໂສຕສະດັບ ຕັ້ງຈິດເພື່ອຮູ້ຍິ່ງ

ຫຼັມມຈັກກັປປວັຕຕນສູຕຣ໑

[໑໓] ຄັ້ງນັ້ນແລ ພຣະຜູ້ມີພຣະພາກ ໄດ້ຮັບສັ່ງກັບພິກຂຸປັຍຈວັຄຄີຍ໌ວ່າ "ພິກຂຸທັງຫລາຍ ທີ່ສຸດ ໒ ຢ່າງນີ້ ບັພຊິຕບໍ່ຄວນເສພ ກ່າວຄື

໑. ກາມສຸຂັລລິການຸໂຍຄໃນກາມທັງຫລາຍ (ກາຣຫມົກມຸ່ນຢູ່ດ້ວຍກາມສຸຂໃນກາມທັງຫລາຍ) ເປັນຫຼັມອັນຊາມ ເປັນຂອງຊາວບ້ານ ເປັນຂອງປຸຖຸຊົນ ບໍ່ແມ່ນຂອງພຣະອຣິຍະ ບໍ່ປະກອບດ້ວຍປໂຍດ

໒. ອັຕຕກິລມຖານຸໂຍຄ(ກາຣປະກອບຄວາມລຳບາກເດືອດຮ້ອນແກ່ຕົນ) ເປັນທຸກຂ໌ ບໍ່ແມ່ນຂອງພຣະອຣິຍະ ບໍ່ປະກອບດ້ວຍປໂຍດ

ພິກຂຸທັງຫລາຍ ມັຊຍິມາປຕິປທາບໍ່ອຽງເຂົ້າໃກ້ທີ່ສຸດ ໒ ຢ່າງນັ້ນ ຕຖາຄົຕໄດ້ຕຣັສຮູ້ອັນເປັນປຕິປທາກໍ່ໃຫ້ເກີດຈັກຂຸ໒ ກໍ່ໃຫ້ເກີດຍານະ ເປັນໄປເພື່ອຄວາມສງົບ ເພື່ອຄວາມຮູ້ຍິ່ງ ເພື່ອຄວາມຕຣັສຮູ້ ເພື່ອພຣະນິພພານ

ພິກຂຸທັງຫລາຍ ກໍມັຊຍິມາປຕິປທາທີ່ຕຖາຄົຕໄດ້ຕຣັສຮູ້ແລ້ວ ອັນເປັນປຕິປທາກໍ່ໃຫ້ເກີດຈັກຂຸ ກໍ່ໃຫ້ເກີດຍານະ ເປັນໄປເພື່ອຄວາມສງົບ ເພື່ອຄວາມຮູ້ຍິ່ງ ເພື່ອຄວາມຕຣັສຮູ້ ເພື່ອພຣະນິພພານນັ້ນເປັນຈັ່ງໃດ

ໝາຍເຫດ :

໑ ສໍ. ມ. ໑໙/໑໐໗໑/໓໒໗/, ຂຸ. ປ. ໓໑/໓໐/໓໕໗

໒ ຈັກຂຸ ໃນທີ່ນີ້ຫມາຍເຖິງປັນຍາຈັກຂຸ (ອິ. ອ. ໓/໑໓/໑໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໒. ປັຍຈວັຄຄີຍກຖາ

ມັຊຍິມາປຕິປທານັ້ນ ໄດ້ແກ່ ອຣິຍມັຄມີອົງຄ໌ ໘ ນີ້ແຫລະ ຄື໑

໑. ສັມມາທິຕຖິ (ເຫັນຊອບ) ໒. ສັມມາສັງກັປປະ (ດຳຣິຊອບ) ໓. ສັມມາວາຈາ (ເຈຣຈາຊອບ) ໔.

ສັມມາກັມມັນຕະ (ກະທຳຊອບ) ໕. ສັມມາອາຊີວະ (ລ້ຽງຊີພຊອບ) ໖. ສັມມາວາຍາມະ (ພຍາຍາມຊອບ) ໗. ສັມມາສະຕິ (ຣະນຶກຊອບ) ໘. ສັມມາສະມາທິ (ຕັ້ງຈິຕໝັ້ນຊອບ)

ພິກສຸທັງຫລາຍ ນີ້ຄືມັຊຊິມາປະຕິປະທານັ້ນ ທີ່ຕະຖາຄົຕໄດ້ຕຣັສຮູ້ແລ້ວ ອັນເປັນປະຕິປະທາກໍ່ໃຫ້ເກີດຈັກສຸກໍ່ໃຫ້ເກີດຍານະ ເປັນໄປເພື່ອຄວາມສງົບ ເພື່ອຄວາມຮູ້ຍິ່ງ ເພື່ອຄວາມຕຣັສຮູ້ ເພື່ອພຣະນິພພານ

[໑໔] ພິກສຸທັງຫລາຍ ຂໍ້ນີ້ເປັນທຸກຂອຣິຍສັຈ ຄື ແມ່ນຄວາມເກີດກໍເປັນທຸກຂ໌ ແມ່ນຄວາມແກ່ກໍເປັນທຸກຂ໌ ແມ່ນຄວາມເຈັບກໍເປັນທຸກຂ໌ ແມ່ນຄວາມຕາຍກໍເປັນທຸກຂ໌ ຄວາມປະສົບກັບສິ່ງອັນບໍ່ເປັນທີ່ຮັກກໍເປັນທຸກຂ໌ ຄວາມພິກພາກຈາກສິ່ງອັນເປັນທີ່ຮັກກໍເປັນທຸກຂ໌ ຄວາມບໍ່ໄດ້ສິ່ງທີ່ປຣາຖນາກໍເປັນທຸກຂ໌ ໂດຍຍໍ່ນຫຍໍ້ ອຸປາທານຂັນທ໌ ໕ ກໍເປັນທຸກຂ໌

ພິກສຸທັງຫລາຍ ຂໍ້ນີ້ເປັນທຸກຂສະມຸທຍອຣິຍສັຈ ຄື ຕັນຫາອັນເຮັດໃຫ້ເກີດອີກ ປະກອບດ້ວຍຄວາມເພີດເພີນແລະຄວາມກຳຫນັດ ມີປົກຕິໃຫ້ເພີດເພີນໃນອາຣົມນັ້ນໆຄື ກາມຕັນຫາ ພວຕັນຫາ ວິພວຕັນຫາ

ໝາຍເຫດ :

໑ ອົງຄ໌ມັຄແຕ່ລະຂໍ້ມີນັຍພິສດານ ດັ່ງນີ້

໑. ສັມມາທິຕຖິ ຫມາຍເຖິງເຫັນອຣິຍສັຈ ໔ ເຫັນໄຕຣລັກສນ໌ ຫລືເຫັນປະຕິຈຈສະມຸປບາທ

໒. ສັມມາສັງກັປປະ ຫມາຍເຖິງຄວາມນຶກຄິດໃນທາງສລະປອດຈາກກາມ ຄວາມນຶກຄິດປອດຈາກພຍາບາທ ແລະຄວາມນຶກຄິດປອດຈາກການບຽດບຽນ

໓. ສັມມາວາຈາ ຫມາຍເຖິງເວົ້າຄຳສັຕຍ໌ ເວົ້າບໍ່ສໍ່ສຽດ ເວົ້າຄຳອ່ອນຫວານ ເວົ້າສິ່ງມີສາຣະ

໔. ສັມມາກັມມັນຕະ ຫມາຍເຖິງບໍ່ບຽດບຽນຊີວິຕສັຕວ໌ທັງຫລາຍ ບໍ່ລັກຊັພຍ໌ ບໍ່ປະພຶດຜິດໃນກາມ

໕. ສັມມາອາຊີວະ ຫມາຍເຖິງເວັ້ນມິຈສາຊີພ ປະກອບສັມມາອາຊີພ

໖. ສັມມາວາຍາມະ ຫມາຍເຖິງພຽນຣະວັງຄວາມຊົ່ວບໍ່ໃຫ້ເກີດຂຶ້ນ ພຽນກຳຈັດຄວາມຊົ່ວທີ່ເກີດຂຶ້ນແລ້ວ ພຽນທຳຄວາມດີໃຫ້ເກີດ ພຽນຮັກສາຄວາມດີໄວ້

໗. ສັມມາສະຕິ ຫມາຍເຖິງພິຈາຣະນາເຫັນກາຍໃນກາຍ ເວທນາໃນເວທນາ ຈິຕໃນຈິຕ ແລະທັມໃນທັມ

໘. ສັມມາສະມາທິ ຫມາຍເຖິງຝານ ໔

(ທີ. ມ. ໑໐/໓໔໒/໔໑໔,໔໐໔/໔໖໖, ມ. ອຸ. ໑໔/໓໔໕/໔໒໗,໓໗໕/໓໑໒, ອພິ. ວິ. (ແປ)໓໕/໔໐໕/໑໗໑,໔໘໖/໓໗໑,໔໘໘-໔໒໔/໓໗໓-໓໗໕,໔໒໘-໔໒໒/໓໗໗-໓໗໘,໕໐໔/໓໘໐)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທະກະ] ໖. ປັຢຈວັຄຄີຍກຖາ

ພິກສຸທັງຫລາຍ ຂໍ້ນີ້ເປັນທຸກຂນິໂຣທອຣິຍສັຈ ຄື ຄວາມດັບຕັນຫາບໍ່ເຫລືອດ້ວຍວິຣາຄະ ຄວາມສລະ ຄວາມສລະຖິ້ມ ຄວາມພົ້ນ ຄວາມບໍ່ອາລັຍໃນຕັນຫາ ພິກສຸທັງຫລາຍ ຂໍ້ນີ້ເປັນທຸກຂນິໂຣທຄາມິນີປຕິປທາອຣິຍສັຈ ຄື ອຣິຍມັຄມີອົງຄ໌ ໘ ນີ້ແຫລະ ຄື

໑. ສັມມາທິຕຖິ ໒. ສັມມາສັງກັປປະ

໓. ສັມມາວາຈາ ໔. ສັມມາກັມມັນຕະ

໕. ສັມມາອາຊີວະ ໖. ສັມມາວາຍາມະ

໗. ສັມມາສຕິ ໘. ສັມມາສມາທິ

[໑໕] ພິກສຸທັງຫລາຍ ຈັກສຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສດັບມາກ່ອນວ່ານີ້ທຸກຂອຣິຍສັຈ

ພິກສຸທັງຫລາຍ ຈັກສຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສດັບມາກ່ອນວ່າທຸກຂອຣິຍສັຈນີ້ ຄວຣກໍາຫນົດຮູ້

ພິກສຸທັງຫລາຍ ຈັກສຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສດັບມາກ່ອນວ່າທຸກຂອຣິຍສັຈນີ້ ເຮົາໄດ້ກໍາຫນົດຮູ້ແລ້ວ

ພິກສຸທັງຫລາຍ ຈັກສຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສດັບມາກ່ອນວ່ານີ້ທຸກຂສມຸທຍອຣິຍສັຈ

ພິກສຸທັງຫລາຍ ຈັກສຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສດັບມາກ່ອນວ່າ ທຸກຂສມຸທຍອຣິຍສັຈນີ້ ຄວຣລະເສັຽ

ພິກສຸທັງຫລາຍ ຈັກສຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສດັບມາກ່ອນວ່າ ທຸກຂສມຸທຍອຣິຍສັຈນີ້ ເຮົາ

ລະໄດ້ແລ້ວ

ພິກຂຸທັງຫລາຍ ຈັກຂຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສະດັບມາກ່ອນວ່າ ນີ້ທຸກຂນິໂຣທອະຣິຍສັຈ

ພິກຂຸທັງຫລາຍ ຈັກຂຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສະດັບມາກ່ອນວ່າ ທຸກຂນິໂຣທອະຣິຍສັຈນີ້ ຄວຣເຮັດໃຫ້ແຈ້ງ

ພິກຂຸທັງຫລາຍ ຈັກຂຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສະດັບມາກ່ອນວ່າ ທຸກຂນິໂຣທອະຣິຍສັຈນີ້ ເຮົາໄດ້ເຮັດໃຫ້ແຈ້ງແລ້ວ

ພິກຂຸທັງຫລາຍ ຈັກຂຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສະດັບມາກ່ອນວ່າ ນີ້ທຸກຂນິໂຣທຄາມິນີປະຕິປະທາອະຣິຍສັຈ

ພິກຂຸທັງຫລາຍ ຈັກຂຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສະດັບມາກ່ອນວ່າ ທຸກຂນິໂຣທຄາມິນີປະຕິປະທາອະຣິຍສັຈນີ້ ຄວຣໃຫ້ຈະເຣີນ

ພິກຂຸທັງຫລາຍ ຈັກຂຸເກີດຂຶ້ນແລ້ວ ຍານເກີດຂຶ້ນແລ້ວ ປັນຍາເກີດຂຶ້ນແລ້ວ ວິຊຊາເກີດຂຶ້ນແລ້ວ ແສງສວ່າງເກີດຂຶ້ນແລ້ວໃນທັມທັງຫລາຍທີ່ເຮົາບໍ່ເຄີຍສະດັບມາກ່ອນວ່າ ທຸກຂນິໂຣທຄາມິນີປະຕິປະທາອະຣິຍສັຈນີ້ ເຮົາໄດ້ໃຫ້ຈະເຣີນແລ້ວ

[໑໕] ພິກຂຸທັງຫລາຍ ຍານທັສສນະ໑ຕາມເປັນຈິງຂອງເຮົາໃນອະຣິຍສັຈ ໔ ເຫລົ່ານີ້ ມີ ຮອບ ໑໔ ອາການ໔ຢ່າງນີ້ ຍັງບໍ່ຫມົດຈົດດີ ຕາບໃດ ເຮົາກໍຍັງບໍ່ຢືນຢັນວ່າ ເປັນຜູ້ຕຣັສຮູ້ສັມມາສັມໂພ ທິຍານອັນຍອດຢ້ຽມໃນໂລກ ກັບທັງເທວໂລກ ມາຣໂລກ ພຣົມໂລກ ໃນຫມູ່ສັຕວ໌ພ້ອມທັງສະມະນະພຣາມນ໌ ເທວດາແລະມະນຸສຍ໌ຕຣາບນັ້ນ

ໝາຍເຫດ :

໑ ຍານທັສສນະ ຫມາຍເຖິງສັຈຈຍານະ ກິຈຈຍານະ ກຕຍານະ (ສໍ. ມ. ອ. ມ/໑໐໗໑/໓໗໐, ສາຣຕ໌ຖ. ຕີກາ ມ/໑໕/໔໑໙)

໔ ໓ ຮອບ ໑໔ ອາການ ຫມາຍເຖິງສັຈຈຍານະ ກິຈຈຍານະ ກຕຍານະ ເກີດຂຶ້ນວຽນໄປໃນອຣິຍສັຈ ໔ ຂໍ້ ຂໍ້ລະ ໓ ຮອບ(໔ x ໓ = ໑໒) ຮວມເປັນ ໑໒ ຮອບ ດັ່ງນີ້ ກ. (໑) ນີ້ທຸກຂ໌ (໒) ທຸກຂ໌ນີ້ຄວຣກໍາຫນົດຮູ້ (໓) ທຸກຂ໌ນີ້ ກໍາຫນົດຮູ້ແລ້ວ ຂ. (໑) ນີ້ສມຸທັຍ (໒) ສມຸທັຍນີ້ຄວຣລະ (໓) ສມຸທັຍນີ້ລະແລ້ວ ຄ. (໑) ນີ້ນິໂຣທ (໒) ນິໂຣທນີ້ຄວຣເຮັດໃຫ້ແຈ້ງ (໓) ນິໂຣທນີ້ເຮັດໃຫ້ແຈ້ງແລ້ວ ງ. (໑) ນີ້ມັຄ (໒) ມັຄນີ້ຄວຣເຮັດໃຫ້ຈະເຣີນ (໓) ມັຄນີ້ເຮັດໃຫ້ຈະເຣີນແລ້ວ (ສໍ. ມ. ອ. ໓/໑໐໗໑/໓໗໐, ສາຣຕຖ. ຕີກາ ໓/໑໘/໔໑໙)

ພຣະວິນັຍປີດົກ ມຫາວັຄ [໑. ມຫາຂັນທກະ] ຝ. ປັຢຈວັຄຄີຍກຖາ

ພິກສຸທັງຫລາຍ ເມື່ອໃດ ຄວາມຮູ້ເຫັນຕາມເປັນຈິງຂອງເຮົາໃນອຣິຍສັຈ ໔ ເຫລົ່ານີ້ ໓ ຮອບ ໑໒ ອາການຢ່າງນີ້ ຫມົດຈົດດີແລ້ວ ເມື່ອນັ້ນ ເຮົາຈຶ່ງຢືນຢັນໄດ້ວ່າ ເປັນຜູ້ຕຣັສຮູ້ສັມມາສັມໂພທິຍານອັນຍອດຢ້ຽມໃນໂລກ ກັບທັງເທວໂລກ ມາຣໂລກ ພຣົມໂລກ ໃນຫມູ່ສັຕວ໌ພ້ອມທັງສະມະນະພຣາມນ໌ ເທວດາແລະມະນຸສຍ໌ ຍານທັສສນະເກີດຂຶ້ນແກ່ເຮົາວ່າ "ຄວາມຫລຸດພົ້ນຂອງເຮົາບໍ່ກໍາເຣີບ ຊາຕິນີ້ເປັນຊາຕິສຸດທ້າຍ ບັດນີ້ ພົພໃຫມ່ບໍ່ມີອີກ"
ເມື່ອພຣະຜູ້ມີພຣະພາກຕຣັສເວຍຍາກຣນ໌ນີ້ຢູ່ ທັມຈັກສຸອັນປາສຈາກທຸລີປຣາສຈາກມົລທິນໄດ້ເກີດແກ່ທ່ານພຣະໂກນທັຢຢະວ່າ "ສິ່ງໃດສິ່ງນຶ່ງ ມີຄວາມເກີດຂຶ້ນເປັນທັມດາ ສິ່ງນັ້ນທັງປວງ ມີຄວາມດັບໄປເປັນທັມດາ"

[໑໗] ຄັນພຣະຜູ້ມີພຣະພາກຊົງປະກາດພຣະທັມຈັກຣໃຫ້ເປັນໄປແລ້ວ ຫວຍເທພຊັ້ນພູມມະກະຈາຍຂ່າວວ່າ "ນັ້ນພຣະທັມຈັກຣອັນຍອດຢ້ຽມ ພຣະຜູ້ມີພຣະພາກຊົງໃຫ້ເປັນໄປແລ້ວ ນະ ປ່າອິສິປຕນມຣິຄທາຍວັນ ເຂຕກຸງພາຣານສີ ອັນສະມະນະ ພຣາມນ໌ ເທວດາ ມາຣ ພຣົມ ຫລືໃຜໆໃນໂລກ ໃຫ້ຫມຸນກັບບໍ່ໄດ້"໓ ຫວຍເທພຊັ້ນຈາຕຸມຫາຣາຊ ສດັບສຽງຂອງຫວຍເທພຊັ້ນພູມມະແລ້ວ ໄດ້ກະຈາຍຂ່າວຕໍ່ໄປ ຯລຯ ຫວຍເທພຊັ້ນດາວດຶງສ໌ ສດັບສຽງຂອງຫວຍເທພຊັ້ນຈາຕຸມຫາຣາຊແລ້ວ ໄດ້ກະຈາຍຂ່າວຕໍ່ໄປ ຯລຯ
ຫວຍເທພຊັ້ນຍາມາ. . .
ຫວຍເທພຊັ້ນດຸສິຕ. . .
ຫວຍເທພຊັ້ນນິມມານຣດີ. . .
ຫວຍເທພຊັ້ນປຣນິມມິຕວສວັຕດີ . . .

ໝາຍເຫດ :

໑ ເວຍຍາກອນ໌ ໃນທີ່ນີ້ໝາຍເຖິງພຣະສູຕຣທີ່ບໍ່ມີຄາຖາ ປະກອບດ້ວຍຄຳຖາມຄຳຕອບ (ສາຣັດຖ. ດີກາ ໓/໑໕/໔໐) ເປັນອົງຄ໌ອັນນຶ່ງໃນນວັງຄສັຕຖຸສາສນ໌ (ວິ. ອ. ໑/໔໕)

໔ ທັມມຈັກສຸ ແປວ່າ ດວງຕາເຫັນທັມ ຄື ໂສດາປັຕຕິມັຄຍານະ (ວິ. ອ. ໓/໕໕/໔໗)

໓ ໃຜໆໃນໂລກປຕິເສທບໍ່ໄດ້ ເພາະພຣະຜູ້ມີພຣະພາກຜູ້ເປັນເຈົ້າຂອງທັມຕຣັສຮູ້ມາໂດຍຊອບ ແລະເພາະທັມຈັກຣ ເປັນທັມຍອດຢ້ຽມ (ເນຕິຕິ. ອ. ໙/ ໕໓, ເນຕິຕິ. ວິ. ໙/໙໓)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໕. ປັຍຈວັຄຄີຍກຖາ

ຫວຍເທພທີ່ນັບເນື່ອງໃນຫມູ່ພຣົມ ສດັບສຽງຂອງເຫລົ່າເທວດາຊັ້ນປຣນິມມິຕວສວັຕດີແລ້ວກໍກະຈາຍຂ່າວວ່າ "ນັ້ນພຣະທັມຈັກຣອັນຍອດຢ້ຽມ ພຣະຜູ້ມີພຣະພາກຊົງປະກາດແລ້ວ ນະ ປ່າອິສິປຕນມຄິຄທາຍວັນ ເຂຕກຸງພາຣານສີ ອັນສະມະນະ ພຣາມນ໌ ເທວດາ ມາຣ ພຣົມ ຫລືໃຜໆໃນໂລກ ໃຫ້ຫມຸນກັບບໍ່ໄດ້" ພຽງບຶດດຽວເທົ່ານັ້ນ ສຽງປ່າວປະກາດໄດ້ກະຈາຍຂຶ້ນໄປເຖິງພຣົມໂລກ ດ້ວຍປະການດັ່ງນີ້ ທັງຫມື່ນໂລກທາຕຸນີ້ ກໍສັ່ນສະເທືອນເລື່ອນລັ່ນ ທັງແສງສວ່າງອັນເຈີດຈ້າ ຫາປະມານບໍ່ໄດ້ ກໍປາກົດໃນໂລກ ລ່ວງເທວານຸພາພຂອງເທວດາທັງຫລາຍ

ລຳດັບນັ້ນ ພຣະຜູ້ມີພຣະພາກຊົງເປັ່ງພຣະອຸທານນີ້ວ່າ "ຜູ້ຈະເຣີນທັງຫລາຍ ໂກນທັຍຍະ ໄດ້ຮູ້ແລ້ວຫນໍ ຜູ້ຈະເຣີນທັງຫລາຍ ໂກນທັຍຍະໄດ້ຮູ້ແລ້ວຫນໍ" ດັ່ງນັ້ນ ຄຳວ່າ "ອັຍຍາໂກນທັຍຍະ" ນີ້ ຈຶ່ງໄດ້ເປັນຊື່ຂອງທ່ານພຣະໂກນທັຍຍະນັ້ນແລ

ພິກສຸປັຍຈວັຄຄີຍ໌ທູລຂໍການບັນພະຊາອຸປສົມບົທ

[໑໗] ຄັ້ງນັ້ນ ທ່ານພຣະອັຍຍາໂກນທັຍຍະໄດ້ເຫັນທັມແລ້ວ ບັນລຸທັມແລ້ວ ຮູ້ແຈ້ງທັມແລ້ວຢັ່ງລົງສູ່ທັມແລ້ວ ຂ້າມຄວາມສົງສັຍແລ້ວ ປາສຈາກຄວາມແຄງໃຈ ເຖິງຄວາມເປັນຜູ້ເກັ່ງກ້າ ບໍ່ຕ້ອງເຊື່ອຜູ້ອື່ນ໑ ໃນຄຳສອນຂອງພຣະສາສດາ ໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້າພຣະອົງຄ໌ຄວນໄດ້ການບັນພະຊາ ຄວນໄດ້ການອຸປສົມບົທ ໃນສຳນັກຂອງພຣະຜູ້ມີພຣະພາກ" ພຣະຜູ້ມີພຣະພາກໄດ້ຕຣັສວ່າ "ທ່ານຈົ່ງມາເປັນພິກສຸເຖີດ"໔ ແລ້ວຕຣັສຕໍ່ໄປວ່າ "ທັມອັນເຮົາກ່າວດີແລ້ວ ທ່ານຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດທຸກຂ໌ ໂດຍຊອບເຖີດ" ພຣະອາຈານັ້ນໄດ້ເປັນການອຸປສົມບົທຂອງທ່ານພຣະອັຍຍາໂກນທັຍຍະນັ້ນ

ໝາຍເຫດ :

໑ ບໍ່ຕ້ອງເຊື່ອຜູ້ອື່ນ ຫມາຍເຖິງບໍ່ຕ້ອງອາສັຍຜູ້ອື່ນຄອຍແນະນຳພ່ຳສອນໃນຄຳສອນຂອງພຣະສາສດາ ບໍ່ໄດ້ຫມາຍເຖິງວ່າ ບໍ່ຕ້ອງເຊື່ອໃຜເລີຍ (ອປຣປັປຈັຈໄຍ-ບໍ່ມີໃຜອື່ນອີກເປັນປັຈຈັຍ) (ສາຣຕຖ. ຕີກາ ໓/໑໗/໔໔໕)

໔ ຈົ່ງມາເປັນພິກສຸເຖີດ ຫມາຍເຖິງຄຳປະກາດອນຸມັຕິການບັນພະຊາອຸປສົມບົທແກ່ຜູ້ຂໍບວຊຄືເທົ່າກັບປະກາດວ່າ ຈົ່ງມາຮັບການບັນພະຊາອຸປສົມບົທຕາມທີ່ຂໍ (ສາຣຕຖ. ຕີກາ ໓/໑໗/໔໔໔)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໕. ປັຍຈວັຄຄີຍກຖາ

[໑໙] ຕໍ່ມາ ພຣະຜູ້ມີພຣະພາກຊົງໂອວາທ ສັ່ງສອນພິກສຸທັງຫລາຍທີ່ເຫລືອດ້ວຍທັມມີກຖາ ເມື່ອພຣະຜູ້ມີພຣະພາກຊົງໂອວາທ ສັ່ງສອນດ້ວຍທັມມີກຖາ ທັມຈັກສຸອັນປາສຈາກທຸລີປາສຈາກມົລທິນໄດ້ເກີດຂຶ້ນແກ່ທ່ານພຣະວັປປະແລະທ່ານພຣະພັທທິຍະວ່າ "ສິ່ງໃດສິ່ງນຶ່ງ ມີຄວາມເກີດຂຶ້ນເປັນທັມດາສິ່ງນັ້ນທັງປວງ ມີຄວາມດັບໄປເປັນທັມດາ" ທ່ານທັງ ໔ ນັ້ນໄດ້ເຫັນທັມແລ້ວ ບັນລຸທັມແລ້ວ ຮູ້ແຈ້ງທັມແລ້ວ ຢັ່ງລົງສູ່ທັມແລ້ວ ຂ້າມຄວາມສົງສັຍແລ້ວ ປາສຈາກຄວາມແຄງໃຈ ເຖິງຄວາມເປັນຜູ້ເກັ່ງກ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້າພຣະອົງຄ໌ທັງ ໔ ຄວນໄດ້ການບັນພະຊາ ຄວນໄດ້ການອຸປສົມບົທ ໃນສຳນັກຂອງພຣະຜູ້ມີພຣະພາກ" ພຣະຜູ້ມີພຣະພາກຕຣັສວ່າ "ທ່ານທັງ ໔ ຈົ່ງມາເປັນພິກສຸເຖີດ" ແລ້ວຕຣັສຕໍ່ໄປອີກວ່າ "ທັມອັນເຮົາກ່າວດີແລ້ວ ທ່ານທັງ ໔ ຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດແຫ່ງທຸກຂ໌ໂດຍຊອບເຖີດ" ພຣະວາຈານັ້ນແລ ໄດ້ເປັນການອຸປສົມບົທຂອງທ່ານທັງ ໔ ນັ້ນ

ຕໍ່ມາ ພຣະຜູ້ມີພຣະພາກໄດ້ສເວີຍພຣະກຣະຍາຫານທີ່ທ່ານທັງສາມນຳມາຖວາຍແລ້ວກໍຊົງໂອວາທສັ່ງສອນພິກສຸທັງຫລາຍທີ່ເຫລືອດ້ວຍທັມມີກຖາ ພິກສຸ ໓ ຮູບທຽວບິນທບາຕແລ້ວນຳສິ່ງໃດມາ ທັງ ໕ ຮູບ ກໍຍັງອັຕພາພໃຫ້ເປັນໄປດ້ວຍສິ່ງນັ້ນ ເມື່ອພຣະຜູ້ມີພຣະພາກຊົງໂອວາທ ສັ່ງສອນດ້ວຍທັມມີກຖາ ທັມຈັກສຸອັນປາສຈາກທຸລີປາສຈາກມົລທິນ ໄດ້ເກີດແກ່ທ່ານພຣະມຫານາມະແລະທ່ານພຣະອັສສຊິວ່າ "ສິ່ງໃດສິ່ງນຶ່ງ ມີຄວາມເກີດຂຶ້ນເປັນທັມດາ ສິ່ງນັ້ນທັງປວງ ມີຄວາມດັບໄປເປັນທັມດາ" ທ່ານທັງ ໔ ນັ້ນໄດ້ເຫັນທັມແລ້ວ ບັນລຸທັມແລ້ວ ຮູ້ແຈ້ງທັມແລ້ວ ຢັ່ງລົງສູ່ທັມແລ້ວ ຂ້າມຄວາມສົງສັຍແລ້ວ ປາສຈາກຄວາມແຄງໃຈ ເຖິງຄວາມເປັນຜູ້ເກັ່ງກ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້າພຣະ ອົງຄ໌ ທັງ ໔

ຄວນໄດ້ການບັນພະຊາ ຄວນໄດ້ການອຸປສົມບົທໃນສຳນັກຂອງພຣະອົງຄ໌" ພຣະຜູ້ມີພຣະພາກຕຣັສວ່າ "ທ່ານທັງ ໔ ຈົ່ງມາເປັນພິກສຸເຖີດ" ແລ້ວຕຣັສຕໍ່ໄປວ່າ "ທັມອັນເຮົາກ່າວດີແລ້ວ ທ່ານທັງ ໔ ຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດທຸກຂ໌ ໂດຍຊອບເຖີດ" ພຣະອາຈານັ້ນ ໄດ້ເປັນການອຸປສົມບົທຂອງທ່ານທັງ ໔ ນັ້ນ

ອນັຕຕລັກຂນສູຕຣ໑

[໑໐] ຄັ້ງນັ້ນ ພຣະຜູ້ມີພຣະພາກໄດ້ຕຣັສກັບພິກສຸປັຈຈວັຄຄີຍ໌ວ່າ "ພິກສຸທັງຫລາຍ ຮູບເປັນອນັຕຕາ ພິກສຸທັງຫລາຍ ຖ້າຮູບນີ້ຈັກເປັນອັຕຕາແລ້ວນັ້ນ ຮູບນີ້ບໍ່ຄວນເປັນໄປເພື່ອອາພາທ ແລະບຸຄຄົລຄວນໄດ້ໃນຮູບວ່າ "ຮູບຂອງເຮົາຈົ່ງເປັນຢ່າງນີ້ ຮູບຂອງເຮົາຢ່າໄດ້ເປັນຢ່າງນັ້ນ" ພິກສຸທັງຫລາຍ ກໍເພາະຮູບເປັນອນັຕຕາ ສະນັ້ນ ຮູບຈຶ່ງເປັນໄປເພື່ອອາພາທແລະບຸຄຄົລຍ່ອມບໍ່ໄດ້ໃນຮູບວ່າ "ຮູບຂອງເຮົາຈົ່ງເປັນຢ່າງນີ້ ຮູບຂອງເຮົາຢ່າໄດ້ເປັນ ຢ່າງນັ້ນ"

ພິກສຸທັງຫລາຍ ເວທນາເປັນອນັຕຕາ ພິກສຸທັງຫລາຍ ຖ້າເວທນານີ້ຈັກເປັນອັຕຕາແລ້ວ ເຫດໃດເວທນານີ້ບໍ່ຄວນເປັນໄປເພື່ອອາພາທ ແລະບຸຄຄົລຄວນໄດ້ໃນເວທນາວ່າ "ເວທນາຂອງເຮົາຈົ່ງເປັນຢ່າງນີ້ ເວທນາຂອງເຮົາຢ່າໄດ້ເປັນຢ່າງນັ້ນ" ພິກສຸທັງຫລາຍ ກໍເພາະເວທນາເປັນອນັຕຕາ ສະນັ້ນ ເວທນາຈຶ່ງເປັນໄປເພື່ອອາພາທ ແລະບຸຄຄົລຍ່ອມບໍ່ໄດ້ໃນເວທນາວ່າ "ເວທນາຂອງເຮົາຈົ່ງເປັນຢ່າງນີ້ ເວທນາຂອງເຮົາຢ່າໄດ້ເປັນຢ່າງນັ້ນ"

ພິກສຸທັງຫລາຍ ສັນຍາເປັນອນັຕຕາ ພິກສຸທັງຫລາຍ ຖ້າສັນຍານີ້ຈັກເປັນອັຕຕາແລ້ວ ເຫດໃດສັນຍານີ້ບໍ່ຄວນເປັນໄປເພື່ອອາພາທ ແລະບຸຄຄົລຄວນໄດ້ໃນສັນຍາວ່າ "ສັນຍາຂອງເຮົາຈົ່ງເປັນຢ່າງນີ້ ສັນຍາຂອງເຮົາຢ່າໄດ້ເປັນຢ່າງນັ້ນ" ພິກສຸທັງຫລາຍ ກໍເພາະສັນຍາເປັນອນັຕຕາ ສະນັ້ນ ສັນຍາຈຶ່ງເປັນໄປເພື່ອອາພາທ ແລະບຸຄຄົລຍ່ອມບໍ່ໄດ້ໃນສັນຍາວ່າ "ສັນຍາຂອງເຮົາຈົ່ງເປັນຢ່າງນີ້ ສັນຍາຂອງເຮົາຢ່າໄດ້ເປັນຢ່າງນັ້ນ"

ພິກສຸທັງຫລາຍ ສັງຂານທັງຫລາຍເປັນອນັຕຕາ ພິກສຸທັງຫລາຍ ຖ້າສັງຂານເຫລົ່ານີ້ຈັກເປັນອັຕຕາແລ້ວ ເຫດໃດສັງຂານເຫລົ່ານີ້ບໍ່ຄວນເປັນໄປເພື່ອອາພາທ ແລະບຸຄຄົລຄວນໄດ້ໃນສັງຂານ

ໝາຍເຫດ :

໑ ສໍ. ຂ. ໑໗/໕໙/໕໕

ທັງຫລາຍວ່າ "ສັງຂານທັງຫລາຍຂອງເຮົາຈົ່ງເປັນຢ່າງນີ້ ສັງຂານທັງຫລາຍຂອງເຮົາຢ່າໄດ້ເປັນຢ່າງນັ້ນ" ພິກສຸທັງຫລາຍ ກໍເພາະສັງຂານທັງຫລາຍເປັນອນັຕຕາ ສະນັ້ນ ສັງຂານທັງຫລາຍຈຶ່ງເປັນໄປເພື່ອອາພາທ ແລະບຸຄຄົລຍ່ອມບໍ່ໄດ້ໃນສັງຂານທັງຫລາຍວ່າ "ສັງຂານທັງຫລາຍຂອງເຮົາຈົ່ງເປັນຢ່າງນີ້ ສັງຂານທັງຫລາຍຂອງເຮົາຢ່າໄດ້ເປັນຢ່າງນັ້ນ"

ພິກສຸທັງຫລາຍວິນຍານເປັນອນັຕຕາ ພິກສຸທັງຫລາຍ ຖ້າວິນຍານນີ້ຈັກເປັນອັຕຕາແລ້ວ ເຫດໃດວິນຍານນີ້ບໍ່ຄວນເປັນໄປເພື່ອອາພາທ ແລະບຸຄຄົລຄວນໄດ້ໃນວິນຍານວ່າ "ວິນຍານຂອງເຮົາຈົ່ງເປັນຢ່າງນີ້ ວິນຍານຂອງເຮົາຢ່າໄດ້ເປັນຢ່າງນັ້ນ" ພິກສຸທັງຫລາຍ ກໍເພາະວິນຍານເປັນອນັຕຕາ ສະນັ້ນ ວິນຍານຈຶ່ງເປັນໄປເພື່ອອາພາທ ແລະບຸຄຄົລຍ່ອມບໍ່ໄດ້ໃນວິນຍານວ່າ "ວິນຍານຂອງເຮົາຈົ່ງເປັນຢ່າງນີ້ ວິນຍານຂອງເຮົາຢ່າໄດ້ເປັນຢ່າງນັ້ນ"

[໔໑] ພຣະຜູ້ມີພຣະພາກາຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານເຂົ້າໃຈຂໍ້ນັ້ນຢ່າງໃດ ຮູບທ່ຽງຫລືບໍ່ທ່ຽງ"໑ ພິກສຸປັນຈວັຄຄີຍ໌ທູລວ່າ "ບໍ່ທ່ຽງ ພຣະພຸດທະເຈົ້າຂ້າ" "ກໍສິ່ງໃດບໍ່ທ່ຽງ ສິ່ງນັ້ນເປັນທຸກຂ໌ຫລືເປັນສຸຂ"

"ເປັນທຸກຂ໌ ພຣະພຸດທະເຈົ້າຂ້າ"

"ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປຜັນເປັນທັມດາ ຄວນຫລືທີ່ຈະເຫັນສິ່ງນັ້ນວ່າ ນັ້ນຂອງເຮົາ ເຮົາເປັນນັ້ນ ນັ້ນເປັນອັຕຕາຂອງເຮົາ"

"ຂໍ້ນັ້ນບໍ່ຄວນເລີຍ ພຣະພຸດທະເຈົ້າຂ້າ"

"ເວທນາທ່ຽງຫລືບໍ່ທ່ຽງ"

"ບໍ່ທ່ຽງ ພຣະພຸດທະເຈົ້າຂ້າ"

"ກໍສິ່ງໃດບໍ່ທ່ຽງ ສິ່ງນັ້ນເປັນທຸກຂ໌ຫລືເປັນສຸຂ"

"ເປັນທຸກຂ໌ ພຣະພຸດທະເຈົ້າຂ້າ"

"ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປຜັນເປັນທັມດາ ຄວນຫລືທີ່ຈະເຫັນສິ່ງນັ້ນວ່າ ນັ້ນຂອງເຮົາ ເຮົາເປັນນັ້ນ ນັ້ນເປັນອັຕຕາຂອງເຮົາ"

ໝາຍເຫດ :

໑ ດູທ່ຽບ ສາມັນລັກສນະ ໓ ປະການ ໃນ ສໍ. ສຂາ. (ແປ) ໑໗/໑-໑໔/໑-໙

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ຝ. ປັຍຈວັຄຄີຍກຖາ

“ຂໍນັ້ນບໍ່ຄວຣເລີຍ ພຣະພຸດທະເຈົ້າຂ້າ”
“ສັນຍາທ່ຽງຫລືບໍ່ທ່ຽງ”
“ບໍ່ທ່ຽງ ພຣະພຸດທະເຈົ້າຂ້າ”
“ກໍສິ່ງໃດບໍ່ທ່ຽງ ສິ່ງນັ້ນເປັນທຸກຂ໌ຫລືເປັນສຸຂ”
“ເປັນທຸກຂ໌ ພຣະພຸດທະເຈົ້າຂ້າ”
“ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປຜັນເປັນທັມດາ ຄວຣຫລືທີ່ຈະເຫັນສິ່ງນັ້ນວ່າ ນັ້ນຂອງເຮົາ ເຮົາເປັນນັ້ນ ນັ້ນເປັນອັຕຕາຂອງເຮົາ”
“ຂໍນັ້ນບໍ່ຄວຣເລີຍ ພຣະພຸດທະເຈົ້າຂ້າ”
“ສັງຂານທັງຫລາຍທ່ຽງຫລືບໍ່ທ່ຽງ”
“ບໍ່ທ່ຽງ ພຣະພຸດທະເຈົ້າຂ້າ”
“ກໍສິ່ງໃດບໍ່ທ່ຽງ ສິ່ງນັ້ນເປັນທຸກຂ໌ຫລືເປັນສຸຂ”
“ເປັນທຸກຂ໌ ພຣະພຸດທະເຈົ້າຂ້າ”
“ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປຣຜັນເປັນທັມດາ ຄວຣຫລືທີ່ຈະເຫັນສິ່ງນັ້ນວ່າ ນັ້ນຂອງເຮົາ ເຮົາເປັນນັ້ນ ນັ້ນເປັນອັຕຕາຂອງເຮົາ”
“ຂໍນັ້ນບໍ່ຄວຣເລີຍ ພຣະພຸດທະເຈົ້າຂ້າ”
“ວິນຍານທ່ຽງຫລືບໍ່ທ່ຽງ”
“ບໍ່ທ່ຽງ ພຣະພຸດທະເຈົ້າຂ້າ”
“ກໍສິ່ງໃດບໍ່ທ່ຽງ ສິ່ງນັ້ນເປັນທຸກຂ໌ຫລືເປັນສຸຂ”
“ເປັນທຸກຂ໌ ພຣະພຸດທະເຈົ້າຂ້າ”
“ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປຣຜັນເປັນທັມດາ ຄວຣຫລືທີ່ຈະເຫັນສິ່ງນັ້ນວ່າ ນັ້ນຂອງເຮົາ ເຮົາເປັນນັ້ນ ນັ້ນເປັນອັຕຕາຂອງເຮົາ”
“ຂໍນັ້ນບໍ່ຄວຣເລີຍ ພຣະພຸດທະເຈົ້າຂ້າ”

[໘໔] ພຣະຜູ້ມີພຣະພາກຕຣັສວ່າ "ພິກສຸທັງຫລາຍ ເພາະສະນັ້ນ ຮູບຢ່າງໃດຢ່າງນຶ່ງທີ່ເປັນອດີຕ ອນາຄົຕ ແລະປັຈຈຸບັນ ພາຍໃນຫລືພາຍນອກ ຫຍາບຫລືລະອຽດ ຊົ່ວຫລືປານີຕ ໄກຫລືໃກ້ ທັງຫມົດນັ້ນ ທ່ານທັງຫລາຍຄວນເຫັນດ້ວຍປັນຍາອັນຊອບ ຕາມເປັນຈິງຢ່າງນີ້ວ່າ ນັ້ນບໍ່ແມ່ນຂອງເຮົາ ເຮົາບໍ່ເປັນນັ້ນ ນັ້ນບໍ່ແມ່ນອັຕຕາຂອງເຮົາ ເວທນາຢ່າງໃດຢ່າງນຶ່ງທີ່ເປັນອດີຕ ອນາຄົຕ ແລະປັຈຈຸບັນ ພາຍໃນຫລືພາຍນອກ ຫຍາບຫລືລະອຽດ ເລວຊາມຫລືປານີຕ ໄກຫລືໃກ້ ທັງຫມົດນັ້ນ ທ່ານທັງຫລາຍຄວນເຫັນດ້ວຍປັນຍາອັນຊອບຕາມເປັນຈິງຢ່າງນີ້ວ່າ ນັ້ນບໍ່ແມ່ນຂອງເຮົາ ເຮົາບໍ່ເປັນນັ້ນ ນັ້ນບໍ່ແມ່ນອັຕຕາຂອງເຮົາ ສັນຍາຢ່າງໃດຢ່າງນຶ່ງທີ່ເປັນອດີຕ ອນາຄົຕ ແລະປັຈຈຸບັນ ພາຍໃນຫລືພາຍນອກ ຫຍາບຫລືລະອຽດ ເລວຫລືປານີຕ ໄກຫລືໃກ້ ທັງຫມົດນັ້ນ ທ່ານທັງຫລາຍ ຄວນເຫັນດ້ວຍປັນຍາອັນຊອບຕາມເປັນຈິງຢ່າງນີ້ວ່າ ນັ້ນບໍ່ແມ່ນຂອງເຮົາ ເຮົາບໍ່ເປັນນັ້ນ ນັ້ນບໍ່ແມ່ນອັຕຕາຂອງເຮົາ ສັງຂາຣທັງຫລາຍຢ່າງໃດຢ່າງນຶ່ງທີ່ເປັນອດີຕ ອນາຄົຕ ແລະປັຈຈຸບັນ ພາຍໃນຫລືພາຍນອກ ຫຍາບຫລືລະອຽດ ເລວຊາມຫລືປານີຕ ໄກຫລືໃກ້ ທັງຫມົດນັ້ນ ທ່ານທັງຫລາຍຄວນເຫັນດ້ວຍປັນຍາອັນຊອບຕາມເປັນຈິງຢ່າງນີ້ວ່າ ນັ້ນບໍ່ແມ່ນຂອງເຮົາ ເຮົາບໍ່ເປັນນັ້ນ ນັ້ນບໍ່ແມ່ນອັຕຕາຂອງເຮົາ ວິນຍານຢ່າງໃດຢ່າງນຶ່ງທີ່ເປັນອດີຕ ອນາຄົຕ ແລະປັຈຈຸບັນ ພາຍໃນຫລືພາຍນອກ ຫຍາບຫລືລະອຽດ ເລວຊາມຫລືປານີຕ ໄກຫລືໃກ້ ທັງຫມົດນັ້ນ ທ່ານທັງຫລາຍຄວນເຫັນດ້ວຍປັນຍາອັນຊອບຕາມເປັນຈິງຢ່າງນີ້ວ່າ ນັ້ນບໍ່ແມ່ນຂອງເຮົາ ເຮົາບໍ່ເປັນນັ້ນ ນັ້ນບໍ່ແມ່ນອັຕຕາຂອງເຮົາ

[໘໕] ພິກສຸທັງຫລາຍ ອຣິຍສາວົກຜູ້ໄດ້ສະດັບ ເຫັນຢູ່ຢ່າງນີ້ ຍ່ອມເບື່ອຫນ່າຍແມ່ນໃນຮູບ ຍ່ອມເບື່ອຫນ່າຍແມ່ນໃນເວທນາ ຍ່ອມເບື່ອຫນ່າຍແມ່ນໃນສັນຍາ ຍ່ອມເບື່ອຫນ່າຍແມ່ນໃນສັງຂາຣທັງຫລາຍ ຍ່ອມເບື່ອຫນ່າຍແມ່ນໃນວິນຍານະ ເມື່ອເບື່ອຫນ່າຍ ຍ່ອມຄາຍກຳຫນັດ ເພາະຄາຍກຳຫນັດ ຈິຕຍ່ອມຫລຸດພົ້ນ ເມື່ອຈິຕຫລຸດພົ້ນແລ້ວ ຍ່ອມມີຍານວ່າ ຫລຸດພົ້ນແລ້ວ ອຣິຍສາວົກຍ່ອມຮູ້ແຈ້ງວ່າ ຊາຕິສິ້ນແລ້ວ ພຣົມຈັນຍ໌ໄດ້ຢູ່ຈົບແລ້ວ ກິຈທີ່ຄວຣເຮັດໄດ້ທຳເສັດແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທະກະ] ໗. ປັພພັຊຊາກຖາ

[໘໖] ພຣະຜູ້ມີພຣະພາກໄດ້ຕຣັສອນັຕຕລັກຂນສູຕຣນີ້ແລ້ວ ພິກສຸປັຍຈວັຄຄີຍ໌ກໍມີໃຈຍິນດີຊື່ນຊົມພາສິຕຂອງພຣະຜູ້ມີພຣະພາກ ເມື່ອພຣະພຸທທອົງຄ໌ຕຣັສເວຍຍາກຣນ໌ນີ້ຢູ່ ຈິຕຂອງພິກສຸປັຍຈວັຄ ຄີຍ໌ກໍຫລຸດພົ້ນຈາກອາສວະທັງຫລາຍເພາະບໍ່ຖືຫມັ້ນ

ຄັ້ງນັ້ນ ມີພຣະອຣຫັນຕ໌ໃນໂລກ ໖ ຮູບ

ປັຍຈວັຄຄີຍກຖາ ຈົບ

ພານວາຣທີ ໑ ຈົບ

໗. ປັພພັຊຊາກຖາ

ວ່າດ້ວຍການບັນພະຊາ

ເຣື້ອງຍສກຸລບຸຕຣ

[໔໕] ສມັຍນັ້ນ ໃນກຸງພາຣານສີ ມີກຸລບຸຕຣຊື່ ຍສະ ເປັນລູກເສດຖີເປັນຜູ້ສຸຂຸມາລຊາຕິ໑ ຍສ ກຸລບຸຕຣ ນັ້ນມີປຣາສາທ ໓ ຫລັງ ຄື ຫລັງນຶ່ງສຳລັບຣະດູຫນາວ ຫລັງນຶ່ງສຳລັບຣະດູຮ້ອນ ຫລັງ ນຶ່ງສຳລັບຣະດູຝົນ ຍສກຸລບຸຕຣໄດ້ຮັບການປົນນິບັດດ້ວຍດົນຕຣີ ບໍ່ມີບຸຣຸສເຈືອປົນ ຕລອດ ໔ ເດືອນ ຢູ່ເທິງປຣາສາທຣະດູຝົນ ບໍ່ລົງມາຍັງປຣາສາທຊັ້ນລຸ່ມ ຄືນມື້ນຶ່ງ ເມື່ອຍສກຸລບຸຕຣໄດ້ຮັບການປົນນິບັດ ອີ່ມເອີບພຽບພ້ອມດ້ວຍກາມຄຸນ ໕ ໄດ້ຫລັບໄປກ່ອນ ຝ່າຍບໍຣິວາຣຊົນໄດ້ຫລັບພາຍຫລັງ ຕະກຽງ ນ້ຳມັນຖືກຈຸດສວ່າງທັງຄືນ ຄືນນັ້ນຍສກຸລບຸຕຣຕື່ນຂຶ້ນກ່ອນ ເຫັນບໍຣິວາຣຊົນຂອງຕົນກຳລັງຫລັບ ບາງນາງມີພິນຢູ່ໃກ້ຂີ້ແຮ້ ບາງນາງມີຕະໂພນຢູ່ຂ້າງຄໍ ບາງນາງມີໂປງນາງຢູ່ທີ່ເອິກ ບາງ ນາງຜົມຊະຊາຍ ບາງນາງນ້ຳລາຍໄຫລ ບາງນາງລະເມີເຫຼີໄຫລໄປຕ່າງໆ ປາກົດດຸຈປ່າຊ້າຜີດິບ ເພາະ ໄດ້ເຫັນໂທສຈຶ່ງປາກົດແກ່ຍສກຸລບຸຕຣ ຈິຕຕັ້ງຢູ່ໃນຄວາມເບື່ອຫນ່າຍ ຍສກຸລບຸຕຣຈຶ່ງເປັ່ງອຸທານຂຶ້ນ ໃນຂນະນັ້ນວ່າ "ທ່ານຜູ້ຈະເຣີນ ທີ່ນີ້ວຸ່ນວາຍໜໍ ທ່ານຜູ້ຈະເຣີນ ທີ່ນີ້ຂັດຂ້ອງໜໍ"

ໝາຍເຫດ :

໑ ສຸຂຸມາລຊາຕິ ຫມາຍເຖິງຜູ້ບໍ່ມີທຸກຂ໌ (ອງ໌. ຕິກ. (ແປ) ໔໐/໓໙/໑໙໗, ອງ໌. ຕິກ. ອ. ໒/໓໙/ ໑໔໐)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໗. ປັພພັຊຊາກຖາ

ຄັ້ງນັ້ນ ຍສກຸລບຸຕຣຈຶ່ງໃສ່ເກີບທອງຄຳຍ່າງຕົງໄປຍັງປະຕູນິເວສນ໌ ພວກອມະນຸສຍ໌ເປີດປະຕູໃຫ້ດ້ວຍ ຄິດວ່າ "ໃຜໆຢ່າໄດ້ທຳອັນຕຣາຍຕໍ່ການອອກຈາກເຮືອນບວຊເປັນບັພຊິຕຂອງຍສກຸລບຸຕຣ"

ລຳດັບນັ້ນ ຍສກຸລບຸຕຣໄດ້ຍ່າງຕໍ່ໄປຍັງປະຕູເມືອງ ພວກອມະນຸສຍ໌ກໍເປີດປະຕູໃຫ້ດ້ວຍຄິດວ່າ "ໃຜໆ ຢ່າໄດ້ທຳອັນຕຣາຍຕໍ່ການອອກຈາກເຮືອນບວຊເປັນບັພຊິຕຂອງຍສກຸລບຸຕຣ" ຫລັງຈາກນັ້ນ ຍສກຸລບຸຕຣຈຶ່ງຍ່າງຕໍ່ໄປຍັງປ່າອິສີປຕນມຄືຄທາຍວັນ

[໒໖] ຄັນຣາຕຣີຍໍ່າຮຸ່ງ ພຣະຜູ້ມີພຣະພາກສເດັຈລຸກຂຶ້ນຈົງກົມຢູ່ ນະທີ່ແຈ້ງໄດ້ທອດພຣະເນຕຣເຫັນຍສກຸລບຸຕຣຍ່າງມາແຕ່ໄກ ຄັນເຫັນແລ້ວ ຈຶ່ງສເດັຈລົງຈາກທີ່ຈົງກົມ ປະທັບນັ່ງເທິງອາສນະທີ່ເຂົາຈັດໄວ້ ຂນະນັ້ນ ຍສກຸລບຸຕຣໄດ້ເປັ່ງອຸທານຂຶ້ນ ນະທີ່ບໍ່ໄກພຣະຜູ້ມີພຣະພາກວ່າ "ທ່ານຜູ້ຈະເຣີນ ທີ່ນີ້ວຸ່ນວາຍໜໍ ທ່ານຜູ້ຈະເຣີນ ທີ່ນີ້ຂັດຂ້ອງໜໍ"
ພຣະຜູ້ມີພຣະພາກໄດ້ຕຣັສກັບຍສກຸລບຸຕຣນັ້ນດັ່ງນີ້ວ່າ "ຍສະ ທີ່ນີ້໑ ບໍ່ວຸ່ນວາຍ ທີ່ນີ້ ບໍ່ຂັດຂ້ອງ ມາເຖີດ ຍສະ ຈົ່ງນັ່ງລົງ ເຮົາຈັກສະແດງທັມແກ່ທ່ານ"
ລຳດັບນັ້ນ ຍສກຸລບຸຕຣເບີກບານເບີກບານໃຈວ່າ "ໄດ້ຍິນວ່າ ທີ່ນີ້ບໍ່ວຸ່ນວາຍ ທີ່ນີ້ບໍ່ຂັດຂ້ອງ" ຈຶ່ງຖອດເກີບຄຳເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອະພິວາທພຣະຜູ້ມີພຣະພາກແລ້ວນັ່ງ ນະທີ່ສົມຄວຣ ພຣະຜູ້ມີພຣະພາກໄດ້ຕຣັສອນຸປຸພພິກຖາ ຄື

ອະນຸປຸພພິກຖາ ໕ ປະການ

ຊົງປະກາດ

໑. ທານກຖາ (ເຣື່ອງທານ)

໒. ສີລກຖາ (ເຣື່ອງສີລ)

໓. ສັຄຄກຖາ (ເຣື່ອງສວັນຄ໌)

໔. ກາມາທີນວກຖາ (ເຣື່ອງໂທສ ຄວາມຕໍ່າຊາມ ຄວາມເສົ້າຫມອງແຫ່ງກາມ)໒

໕. ເນກຂັມມານິສັງສກຖາ (ເຣື່ອງອານິສົງສ໌ແຫ່ງການອອກຈາກກາມ) ແກ່ຍສກຸລບຸຕຣຜູ້ນັ່ງຢູ່ ນະທີ່ສົມຄວຣ

ໝາຍເຫດ :

໑ ທີ່ນີ້ ພຣະຜູ້ມີພຣະພາກຕຣັສຫມາຍເຖິງພຣະນິພພານ (ວິມຕິ. ຕີກາ ໒/໒໖/໑໒໐)

໒ ແປມາຈາກຄຳວ່າ ກາມານໍ ອາທີນວໍ ໂອກາຣໍ ສໍກິເລສໍ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໗. ປັພພັຊຊາກຖາ

ເມື່ອຊົງຊາບວ່າ ຍສກຸລບຸຕຣມີຈິຕຄວຣ ອ່ອນ ປາສຈາກນິວອຣນ໌ ເບີກບານ ຜ່ອງໃສ ຈຶ່ງຊົງປະກາດ ສາມຸກກັງສິກຫັມເທສນາ໑ຂອງພຣະພຸດທະເຈົ້າທັງຫລາຍ ຄື
ທຸກຂ໌ ສມຸທັຍ ນິໂຣທ ມັຄ ທັມຈັກສຸອັນປາສຈາກທູລີ ປາສຈາກມົລທິນ ໄດ້ເກີດແກ່ຍສກຸລບຸຕຣ ນະ ອາສນະນັ້ນແລວ່າ "ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນທັມດາ ສິ່ງນັ້ນທັງປວງມີຄວາມດັບໄປ ເປັນທັມດາ" ປຽບເໝືອນຜ້າຂາວສະອາດປາສຈາກມົລທິນ ຄວຣຮັບນ້ຳຍ້ອມໄດ້ເປັນຢ່າງດີ

ບິດາຕາມຫາຍສກຸລບຸຕຣ

[໒໗] ຄັນຮຸ່ງເຊົ້າ ມາຣດາຂຶ້ນໄປເທິງປຣາສາທບໍ່ພົບຍສກຸລບຸຕຣ ຈຶ່ງເຂົ້າໄປຫາເສດຖີຄຫບໍດີເຖິງ ທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບເສດຖີຄຫບໍດີ ດັ່ງນີ້ວ່າ "ທ່ານຄຫບໍດີຂະນ້ອຍ ຍສະບຸຕຣຂອງທ່ານ ຫາຍໄປໃສ" ຝ່າຍເສດຖີຄຫບໍດີສົ່ງທູຕຂີ່ມ້າໄປຕາມຫາທັງ ໔ ທິສແລ້ວ ສ່ວນຕົນເອງໄປຍັງປ່າ ອິສິປຕນມຄິຄທາຍວັນ ໄດ້ພົບເກີບຄຳອາງຢູ່ ຈຶ່ງຕາມໄປຍັງທີ່ນັ້ນ ພຣະຜູ້ມີພຣະພາກທອດ ພຣະ ເນຕຣເຫັນເສດຖີຄຫບໍດີຍ່າງມາແຕ່ໄກ ຄັນທອດພຣະເນຕຣເຫັນແລ້ວຊົງມີພຣະດຳຣິ ວ່າ "ຖ້າ ຢ່າງ ໃດ ເຮົາຄວນບັນດາລອິທທາພິສັງຂາຣ(ການບັນດາລທາງອິທທິ໌) ໃຫ້ເສດຖີຄຫບໍດີ ຜູ້ນັ່ງທີ່ນີ້ບໍ່ເຫັນຍ ສກຸລບຸຕຣນັ່ງຢູ່ທີ່ນັ້ນ" ຈຶ່ງຊົງບັນດາລອິທທາພິສັງຂາຣເຊັ່ນນັ້ນ ລຳດັບນັ້ນ ເສດຖີ ຄຫບໍດີເຂົ້າໄປ ເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ພຣະອົງຄ໌ຜູ້ ຈະເຣີນ ພຣະຜູ້ມີພຣະພາກຊົງພົບຍສກຸລບຸຕຣແດ່ບໍ ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກຕຣັສວ່າ "ຄຫບໍດີ ເຊີນທ່ານນັ່ງລົງກ່ອນເຖີດ ບາງທີທ່ານນັ່ງທີ່ນີ້ແລ້ວ ຈະຄວນພົບຍສກຸລບຸຕຣນັ່ງຢູ່ທີ່ນີ້ກໍໄດ້" ເສດຖີຄຫບໍດີເບີກບານໃຈວ່າ "ໄດ້ຍິນວ່າ ເຮົານັ່ງທີ່ນີ້ຈັກພົບຍສກຸລບຸຕຣຜູ້ນັ່ງຢູ່ທີ່ນີ້" ຈຶ່ງຖວາຍ ອະພິວາທພຣະຜູ້ມີພຣະພາກແລ້ວນັ່ງ ນະທີ່ສົມຄວຣ

ໝາຍເຫດ :

໑ ສາມຸກກັງສິກທັມເທສນາ ຫມາຍເຖິງພຣະທັມເທສນາທີ່ພຣະພຸດທະເຈົ້າທັງຫລາຍ ຊົງຕຣັສຮູ້ດ້ວຍ ພຣະອົງຄ໌ເອງ ຊົງເຫັນດ້ວຍສຍັມພູຍານະ ບໍ່ທົ່ວໄປແກ່ຜູ້ອື່ນ ຄືບໍ່ໄດ້ຮັບຄຳແນະນຳຈາກຜູ້ອື່ນ ຊົງ ຕຣັສຮູ້ລຳພັງພຣະອົງຄ໌ເອງກ່ອນໃຜໃນໂລກ (ວິ. ອ. ໓/໔໙໓/໑໗໑, ສາຣຕ຺ຖ. ຕີກາ ໓/໔໖/໔໓໗, ທີ. ສີ. ຕີກາ ອພິນວ. ໔/໔໙໗/໓໕໐)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໗. ປັພພັຊຊາກຖາ

ພຣະຜູ້ມີພຣະພາກໄດ້ຕຣັສອນຸປຸພພິກຖາ ຄື ຊົງປະກາດ
໑. ທານກຖາ ໒. ສີລກຖາ ໓. ສັຄຄກຖາ ໔. ກາມາທີນວກຖາ ໕. ເນກຂັມມານິສັງສກຖາ ແກ່ເສດຖີຄຫບໍດີຜູ້ນັ່ງ ນະທີ່ສົມຄວຣແລ້ວ ເມື່ອຊົງຊາບວ່າ ເສດຖີຄຫບໍດີມີຈິດຄວຣ ອ່ອນ ປາສຈາກນິວຣນ໌ ເບີກບານ ຜ່ອງໃສ ຈຶ່ງຊົງປະກາດສາມຸກກັງສິກທັມເທສນາຂອງພຣະພຸດທະເຈົ້າທັງຫລາຍ ຄື ທຸກຂ໌ ສມຸທັຍ ນິໂຣທ ມັຄ ທັມຈັກສຸອັນປາສຈາກທຸລີປາສຈາກມົລທິນ ໄດ້ເກີດແກ່ເສດຖີຜູ້ຄຫບໍດີ ນະອາສນະນັ້ນແລ ວ່າ "ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນທັມດາ ສິ່ງນັ້ນທັງປວງມີຄວາມດັບໄປເປັນທັມດາ" ປຽບເໝືອນຜ້າຂາວສະອາດປາສຈາກມົລທິນ ຄວຣຮັບນ້ຳຍ້ອມໄດ້ເປັນຢ່າງດີ ເສດຖີຄຫບໍດີໄດ້ເຫັນທັມແລ້ວ ບັນລຸທັມແລ້ວ ຮູ້ແຈ້ງທັມແລ້ວ ຢັ່ງລົງສູ່ທັມແລ້ວ ຂ້າມຄວາມສົງສັຍແລ້ວ ປາສຈາກຄວາມແຄງໃຈ ເຖິງຄວາມເປັນຜູ້ເກັ່ງກ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ພຣະອົງຄ໌ຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ຊັດແຈ້ງມ່ອນຍິ່ງນັກ ພຣະອົງຄ໌ຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ຊັດແຈ້ງມ່ອນຍິ່ງນັກ ພຣະອົງຄ໌ຊົງປະກາດທັມແຈ່ມແຈ້ງໂດຍປະການຕ່າງໆ ປຽບເໝືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຜູ້ຫລົງທາງ ຫລືຕາມປະທີປໃນທີ່ມືດ ດ້ວຍຕັ້ງໃຈວ່າ ຄົນມີຕາດີ ຈັກ ເຫັນຮູບ ພຣະອົງຄ໌ຜູ້ຈະເຣີນ ຂ້າພຣະອົງຄ໌ນີ້ຂໍເຖິງພຣະຜູ້ມີພຣະພາກ ພ້ອມທັງພຣະທັມ ແລະພຣະສົງຂ໌ເປັນສະຣະນະ ຂໍພຣະຜູ້ມີພຣະພາກຈົ່ງຊົງຈຳຂ້າພຣະອົງຄ໌ວ່າເປັນອຸບາສົກ ຜູ້ເຖິງສະຣະນະຕັ້ງແຕ່ວັນນີ້ເປັນຕົ້ນໄປຈົນຕລອດຊີວິຕ" ເສດຖີຄຫບໍດີນີ້ແລ ໄດ້ເປັນເຕວາຈິກອຸບາສົກ(ຜູ້ກ່າວເຖິງຣັຕນະທັງ ໓ ວ່າເປັນສະຣະນະ) ເປັນຄົນທຳອິດ ໃນໂລກ

ຍສກຸລບຸຕຣສຳເຣັຈພຣະອຣຫັຕຕຜົລ

[໒໗] ຂນະທີ່ພຣະຜູ້ມີພຣະພາກຊົງສະແດງທັມໂປຣດບິດາຂອງຍສກຸລບຸຕຣຢູ່ ຈິຕຂອງຍສກຸລບຸຕຣຜູ້ພິຈາຣນາພູມິທັມຕາມທີ່ໄດ້ເຫັນຕາມທີ່ໄດ້ຮູ້ ກໍຫລຸດພົ້ນຈາກອາສວະທັງຫລາຍ ເພາະບໍ່ຖືໝັ້ນ ລຳດັບນັ້ນ ພຣະຜູ້ມີພຣະພາກຊົງດຳຣິດັ່ງນີ້ວ່າ "ເມື່ອເຮົາສະແດງທັມແກ່ບິດາຂອງຍສກຸລບຸຕຣຢູ່ ຈິຕຂອງຍສກຸລບຸຕຣ ຜູ້ພິຈາຣນາພູມິທັມຕາມທີ່ໄດ້ເຫັນຕາມທີ່ໄດ້ຮູ້ ກໍຫລຸດພົ້ນຈາກອາສວະທັງຫລາຍ ເພາະບໍ່ຖືໝັ້ນ ຍສກຸລບຸຕຣບໍ່ຄວຣຈະກັບໄປເປັນຄຣືຫັສຖ໌ບໍຣິໂພຄກາມ ເໝືອນເປັນຄຣືຫັສຖ໌ຄັ້ງກ່ອນ ຖ້າຢ່າງນັ້ນ ເຮົາຄວນຄາຍອິທທາພິສັງຂາຣ" ຊົງຄາຍອິທທາພິສັງຂາຣແລ້ວ ເສດຖີຄຫບໍດີໄດ້ເຫັນຍສກຸລບຸຕຣນັ່ງຢູ່ ຄັນເຫັນແລ້ວຈຶ່ງກ່າວກັບຍສກຸລບຸຕຣວ່າ "ທ້າວຍສະ ມາຣດາຂອງເຈົ້າໂສກເສົ້າຄ່ຳຄວນເຖິງ ເຈົ້າຈົ່ງໃຫ້ຊີວິຕແກ່ມາຣດາເຖີດ" ຍສກຸລບຸຕຣໄດ້ເງີຍໜ້າເບິ່ງພຣະຜູ້ມີພຣະພາກ

ພຣະຜູ້ມີພຣະພາກໄດ້ຕຣັສກັບເສດຖີຄຫບໍດີດັ່ງນີ້ວ່າ "ຄຫບໍດີ ທ່ານຈະເຂົ້າໃຈຂໍ້ນັ້ນຢ່າງໃດ ຍສກຸລບຸຕຣໄດ້ເຫັນໄດ້ຮູ້ທັມດ້ວຍຍານອັນເປັນເສຂະ໑ ດ້ວຍທັສສນະອັນເປັນເສຂະເຫມືອນທ່ານ ເມື່ອທ່ານພິຈາຣນາພູມິທັມຕາມທີ່ໄດ້ເຫັນຕາມທີ່ໄດ້ຮູ້ຢູ່ ຈິຕກໍຫລຸດພົ້ນຈາກອາສວະທັງຫລາຍ ເພາະບໍ່ຖືຫມັ້ນ ຄຫບໍດີຍສກຸລບຸຕຣຄວຣຫລືທີ່ຈະກັບໄປເປັນຄຣືຫັສຖ໌ບໍຣິໂພຄກາມເຫມືອນເປັນຄຣືຫັສຖ໌ຄັ້ງກ່ອນ" ເສດຖີຄຫບໍດີຂາບທູລວ່າ "ຂໍ້ນັ້ນບໍ່ຄວຣເລີຍ ພຣະພຸດທະເຈົ້າຂ້າ"

ພຣະຜູ້ມີພຣະພາກຕຣັສຮັບຮອງວ່າ "ຄຫບໍດີ ຍສກຸລບຸຕຣໄດ້ເຫັນໄດ້ຮູ້ທັມດ້ວຍຍານອັນເປັນເສຂະ ດ້ວຍທັສສນະອັນເປັນເສຂະເຫມືອນທ່ານ ເມື່ອເຂົາພິຈາຣນາພູມິທັມຕາມທີ່ໄດ້ເຫັນຕາມທີ່ໄດ້ຮູ້ຢູ່ ຈິຕກໍຫລຸດພົ້ນຈາກອາສວະທັງຫລາຍ ເພາະບໍ່ຖືຫມັ້ນ ຄຫບໍດີຍສກຸລບຸຕຣບໍ່ຄວຣຈະກັບໄປເປັນຄຣືຫັສຖ໌ບໍຣິໂພຄກາມ ເຫມືອນເປັນຄຣືຫັສຖ໌ຄັ້ງກ່ອນ" ເສດຖີຄຫບໍດີຂາບທູລວ່າ "ພຣະອົງຄ໌ຜູ້ຈະເຣີນ ການທີ່ຈິຕຂອງຍສກຸລບຸຕຣຫລຸດພົ້ນຈາກອາສວະທັງຫລາຍເພາະບໍ່ຖືຫມັ້ນ ເປັນລາພຂອງຍສກຸລບຸຕຣ ຍສກຸລບຸຕຣໄດ້ດີແລ້ວ ພຣະອົງຄ໌ຜູ້ຈະເຣີນ ຂໍພຣະຜູ້ມີພຣະພາກມີຍສກຸລບຸຕຣເປັນປັຈສາສະມະນະ ໄປຣດຊົງຮັບພັຕຕາຫາຣຂອງຂ້າພຣະອົງຄ໌ເພື່ອຈະເຣີນກຸສົລໃນວັນນີ້ເຖີດ"

ໝາຍເຫດ :

໑ ຍານອັນເປັນເສຂະ ຫມາຍເຖິງຍານຂອງບຸຄຄົລຣະດັບພຣະໂສດາບັນ ພຣະສກທາຄາມີ ພຣະອນາຄາມີ (ດູ ວົງ. ທຸກ. (ແປ) ໒໐/໖໕/ກຸລ ວົງ. ທຸກ. ອ. ໒/໖໕/໖໔)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໗. ປັພພັຊຊາກຖາ

ພຣະຜູ້ມີພຣະພາກຊົງຮັບນິມົນຕ໌ໂດຍດຸສນີພາພ ເສດຖີຄຫບໍດີຊາບການທີ່ພຣະຜູ້ມີພຣະພາກຊົງຮັບນິມົນຕ໌ແລ້ວ ຈຶ່ງລຸກຈາກອາສນະຖວາຍອະພິວາທກະທຳປະທັກສິນ(ວຽນໄປທາງຂວາ)ກັບໄປ ເມື່ອເສດຖີຄຫບໍດີກັບໄປແລ້ວບໍ່ດົນ ຍສກຸລບຸຕຣໄດ້ຂາບທູລວ່າ "ພຣະອົງຄ໌ຜູ້ຈະເຣີນ ຂ້າພຣະ ອົງຄ໌ຄວນໄດ້ການບັນພະຊາ ຄວນໄດ້ການອຸປສົມບົທໃນສຳນັກຂອງພຣະຜູ້ມີພຣະພາກ" ພຣະຜູ້ມີ ພຣະພາຄຕຣັສວ່າ "ທ່ານຈົ່ງມາເປັນພິກສຸເຖີດ" ແລ້ວຕຣັສຕໍ່ໄປວ່າ "ທັມອັນເຮົາກ່າວດີແລ້ວ ທ່ານ ຈົ່ງປະພຶດພຣົມຈັນຍ໌ເຖີດ" ພຣະອາຈານັ້ນແລ ໄດ້ເປັນການອຸປສົມບົທຂອງທ່ານຍສະນັ້ນ

ຄັ້ງນັ້ນ ມີພຣະອຣຫັນຕ໌ໃນໂລກ ໗ ຮູບ

ມາຣດາແລະພັຣຍາເກົ່າຂອງພຣະຍສະໄດ້ທັມຈັກສຸ

[໒໙] ຄັນເວລາເຊົ້າ ພຣະຜູ້ມີພຣະພາກຊົງອັນຕຣວາສົກຖືບາຕຣແລະຈີວອນ ມີທ່ານພຣະຍສະເປັນປັຈສາສະມະນະ ສເດັຈໄປຍັງນິເວສນ໌ຂອງເສຖດີຄຫບໍດີ ຄັນເຖິງແລ້ວຈຶ່ງປະທັບນັ່ງ ນະ ອາສນະທີ່ເຂົາຈັດຖວາຍ ລຳດັບນັ້ນ ມາຣດາແລະພັຣຍາເກົ່າຂອງທ່ານພຣະຍສະ ກໍພາກັນເຂົ້າເຝົ້າພຣະຜູ້ມີພຣະພາກ ເຖິງທີ່ປະທັບ ຄັນເຖິງແລ້ວ ໄດ້ຖວາຍອະພິວາທພຣະຜູ້ມີພຣະພາກແລ້ວນັ່ງ ນະທີ່ສົມຄວຣ ພຣະຜູ້ມີພຣະພາກໄດ້ຕຣັສອນຸປຸພພິກຖາ ຄື ຊົງປະກາດ

໑. ທານກຖາ ໒. ສີລກຖາ

໓. ສັຄຄກຖາ ໔. ກາມາທີນວກຖາ

໕. ເນກຂັມມານິສັງສກຖາ ແກ່ມາຣດາແລະພັຣຍາເກົ່າ

ເມື່ອຊົງຊາບວ່າທັງສອງມີຈິຕຄວຣ ອ່ອນ ປາສຈາກນິວອຣນ໌ ເບີກບານ ຜ່ອງໃສ ຈຶ່ງຊົງປະກາດສາມຸກກັງສິກທັມເທສນາຂອງພຣະພຸດທະເຈົ້າທັງຫລາຍ ຄື ທຸກຂ໌ ສມຸທັຍ ນິໂຣທ ມັຄ ທັມຈັກສຸອັນປາສຈາກທູລີ ປາສຈາກມົລທິນໄດ້ເກີດແກ່ມາຣດາແລະພັຣຍາເກົ່າ ນະອາສນະນັ້ນແລວ່າ “ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນທັມດາ ສິ່ງນັ້ນທັງປວງ ມີຄວາມດັບໄປເປັນທັມດາ” ປຽບເຫມືອນຜ້າຂາວສະອາດປາສຈາກມົລທິນ ຄວຣຮັບນ້ຳຍ້ອມໄດ້ເປັນຢ່າງດີ

ມາຣດາແລະພັຣຍາເກົ່າຂອງພຣະຍສະໄດ້ເຫັນທັມແລ້ວ ບັນລຸທັມແລ້ວ ຮູ້ແຈ້ງທັມແລ້ວ ຫຍັ່ງລົງສູ່ທັມແລ້ວ ຂ້າມຄວາມສົງສັຍແລ້ວ ປາສຈາກຄວາມແຄງໃຈ ເຖິງຄວາມເປັນຜູ້ເກັ່ງກ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ “ພຣະອົງຄ໌ຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ຊັດແຈ້ງນ່ອນຍິ່ງນັກ ພຣະອົງຄ໌ຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ຊັດແຈ້ງນ່ອນຍິ່ງນັກ ພຣະອົງຄ໌ຊົງປະກາດທັມແຈ່ມແຈ້ງ ໂດຍປະກາຣຕ່າງໆປຽບເຫມືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຜູ້ຫລົງທາງ ຫລືຕາມປະທີປໃນທີ່ມືດດ້ວຍຕັ້ງໃຈວ່າ ຄົນມີຕາດີຈັກເຫັນຮູບ ພຣະອົງຄ໌ຜູ້ຈະເຣີນຂະນ້ອຍທັງສອງນີ້ຂໍເຖິງພຣະຜູ້ມີພຣະພາກ ພ້ອມທັງພຣະທັມ ແລະພຣະສົງຂ໌ ເປັນສະຣະນະ ຂໍພຣະຜູ້ມີພຣະພາກຈົ່ງຊົງຈຳຂະນ້ອຍທັງສອງ ວ່າເປັນອຸບາສິກາຜູ້ເຖິງສະຣະນະ ຕັ້ງແຕ່ວັນນີ້ເປັນຕົ້ນໄປຈົນຕລອດຊີວິຕ”

ມາຣດາແລະພັຣຍາເກົ່າຂອງທ່ານພຣະຍສທັງສອງນີ້ ໄດ້ເປັນເຕວາຈິກອຸບາສິກາ(ຜູ້ກ່າວເຖິງຣັຕນະ ທັງ ໓ ວ່າເປັນສະຣະນະ)ເປັນຄູ່ທຳອິດໃນໂລກ ຄັນແລ້ວ ມາຣດາບິດາແລະພັຣຍາເກົ່າຂອງທ່ານພຣະຍສະໄດ້ນຳຂອງຄ້ຽວຂອງສັນອັນປານີຕປະເຄນພຣະຜູ້ມີພຣະພາກກັບທ່ານພຣະຍສະ ດ້ວຍຕົນ ເອງ ຈົນເມື່ອພຣະຜູ້ມີພຣະພາກສເວີຍເສັດແລ້ວ ຊົງຫ້າມພັຕຕາຫາຣແລ້ວລະພຣະຫັຕຖ໌ຈາກບາຕຣ ຈຶ່ງນັ່ງ ນະ

ທີ່ສີມຄວຣ ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊີ້ແຈງໃຫ້ມາຣດາບິດາແລະພັຣຍາເກົ່າຂອງທ່ານພຣະຍ ສະເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ ສົດຊື່ນເບີກບານດ້ວຍທັມມີກຖາ ແລ້ວສເດັຈລຸກຈາກອາສນະຈາກໄປ

ເຣື້ອງການບັນພະຊາຂອງສະຫາຍ ໔ ຄົນຂອງພຣະຍສະ

[໓໐] ສະຫາຍຄຣືຫັສຖ໌ຂອງທ່ານພຣະຍສະ ໔ ຄົນ ຄື ວິມລະ ສຸພາຫຸ ປຸນນຊິ ຄວັມປຕິ ເປັນບຸຕຣ ຂອງຕະກູນເສດຖີໃຫຍ່ນ້ອຍໃນກຸງພາຣານສີໄດ້ຊາບຂ່າວວ່າ "ຍສກຸລບຸຕຣໂກນຜົມແລະຫນວດນຸ່ງ ຫົ່ມຜ້າກາສາຍະອອກຈາກເຮືອນບວຊເປັນບັພຊິຕແລ້ວ" ຄັນສະຫາຍຄຣືຫັສຖ໌ໄດ້ຊາບຂ່າວແລ້ວ ຈຶ່ງ ໄດ້ມີຄວາມຄິດ ດັ່ງນີ້ວ່າ "ທັມວິນັຍແລະບັນພະຊາທີ່ຍສກຸລບຸຕຣໂກນຜົມແລະຫນວດນຸ່ງຫົ່ມຜ້າກາສາ ຍະອອກຈາກເຮືອນບວຊເປັນບັພຊິຕນັ້ນ ຄົງຈະບໍ່ຕ່ຳຊາມເປັນແນ່" ຄັນແລ້ວສະຫາຍຄຣືຫັສຖ໌ເຫລົ່າ ນັ້ນ ໄດ້ພາກັນເຂົ້າໄປຫາທ່ານພຣະຍສະເຖິງທີ່ຢູ່ ຄັນເຖິງແລ້ວ ໄດ້ໄຫວ້ທ່ານພຣະຍສະແລ້ວໄດ້ຢືນຢູ່ ນະທີ່ສົມຄວຣ ຄັ້ງນັ້ນ ທ່ານພຣະຍສະໄດ້ພາສະຫາຍຄຣືຫັສຖ໌ ໔ ຄົນໄປເຂົ້າເຝົ້າພຣະຜູ້ມີພຣະພາກ ເຖິງທີ່ປະທັບ ຄັນເຖິງແລ້ວ ໄດ້ຖວາຍອະພິວາທພຣະຜູ້ມີພຣະພາກແລ້ວນັ່ງ ນະທີ່ສົມຄວຣ ທ່ານ ພຣະຍສະຜູ້ນັ່ງ ນະທີ່ສົມຄວຣ ໄດ້ຂາບທູລພຣະຜູ້ມີພຣະພາກ ດັ່ງນີ້ວ່າ "ພຣະພຸດທະເຈົ້າຂ້າ ສະ ຫາຍຄຣືຫັສຖ໌ຂອງຂ້າພຣະອົງຄ໌ ໔ ຄົນເຫລົ່ານີ້ ຄື ວິມລະ ສຸພາຫຸ ປຸນນຊິ ຄວັມປຕິ ເປັນບຸຕຣ ຂອງຕະກູນເສດຖີໃຫຍ່ນ້ອຍໃນກຸງພາຣານສີ ຂໍພຣະອົງຄ໌ໂປຣດປະທານໂອວາທສັ່ງສອນສະຫາຍຂອງ ຂ້າພຣະອົງຄ໌ເຫລົ່ານີ້ເຖີດ"

ພຣະຜູ້ມີພຣະພາກໄດ້ຕຣັສສອນປຸພພິກຖາ ຄື ຊົງປະກາດ

໑. ທານກຖາ ໒. ສີລກຖາ

໓. ສັຄຄກຖາ ໔. ກາມາທີນວກຖາ

໕. ເນກຂັມມານິສັງສກຖາ ແກ່ສະຫາຍເຫລົ່ານັ້ນ

ເມື່ອຊົງຊາບວ່າພວກເຂົາມີຈິຕຄວຣອ່ອນ ປາສຈາກນິວອຣນ໌ ເບີກບານ ຜ່ອງໃສ ຈຶ່ງຊົງປະກາດສາມຸກ ກັງສິກທັມເທສນາຂອງພຣະພຸດທະເຈົ້າທັງຫລາຍ ຄື ທຸກຂ໌ ສມຸທັຍ ນິໂຣທ ມັຄ ທັມຈັກສຸອັນປາສ ຈາກທູລີປາສຈາກມົລທິນໄດ້ເກີດແກ່ພວກເຂົາ ນະທີ່ນັ່ງນັ້ນແລວ່າ "ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນ ເປັນທັມດາ ສິ່ງນັ້ນທັງປວງມີຄວາມດັບໄປເປັນທັມດາ" ປຽບເຫມືອນຜ້າຂາວສະອາດປາສຈາກມົລ ທິນຄວຣຮັບນ້ຳຍ້ອມໄດ້ເປັນຢ່າງດີ ພວກເຂົາໄດ້ເຫັນທັມແລ້ວ ບັນລຸທັມແລ້ວ ຮູ້ແຈ້ງທັມແລ້ວ ຢັ່ງ ລົງສູ່ທັມແລ້ວຂ້າມຄວາມສົງສັຍແລ້ວ ປາສຈາກຄວາມແຄງໃຈ ເຖິງຄວາມເປັນຜູ້ເກັ່ງກ້າ ບໍ່ຕ້ອງເຊື່ອ

ຜູ້ອື່ນໃນຄໍາຂອງພຣະສາສ໌ດາ ໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ພຣະພຸດທະເຈົ້າຂ້າ ພວກຂ້າພຣະອົງຄ໌ຄວນໄດ້ການບັນພະຊາ ຄວນໄດ້ການອຸປສົມບົທໃນສໍານັກຂອງພຣະອົງຄ໌" ພຣະຜູ້ມີພຣະພາກໄດ້ຕຣັສວ່າ "ພວກທ່ານຈົ່ງມາເປັນພິກສຸເຖີດ" ແລ້ວຕຣັສຕໍ່ໄປວ່າ "ທັມອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶດພຣົມຈັນຍ໌ເພື່ອທໍາທີ່ສຸດແຫ່ງທຸກຂ໌ໂດຍຊອບເຖີດ" ພຣະອາຈານັ້ນ ໄດ້ເປັນການອຸປສົມບົທຂອງທ່ານເຫລົ່ານັ້ນ ຫລັງຈາກນັ້ນ ພຣະຜູ້ມີພຣະພາກໄດ້ຊົງປະທານໂອວາທສັ່ງສອນພິກສຸເຫລົ່ານັ້ນ ດ້ວຍທັມມີກຖາ ເມື່ອຊົງປະທານໂອວາທສັ່ງສອນດ້ວຍທັມມີກຖາຢູ່ ຈິຕຂອງພິກສຸເຫລົ່ານັ້ນ ກໍຫລຸດພົ້ນຈາກອາສວະທັງຫລາຍເພາະບໍ່ຖືຫມັ້ນ

ຄັ້ງນັ້ນ ມີພຣະອຣຫັນຕ໌ເກີດຂຶ້ນໃນໂລກ ໑໑ ຮູບ
ເຣື່ອງການບັນພະຊາຂອງສະຫາຍ ໔ ຄົນຂອງພຣະຍສະ ຈົບ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໆ. ປັພພັຊຊາກຖາ

ເຣື່ອງການບັນພະຊາຂອງສະຫາຍ ໕໐ ຄົນຂອງພຣະຍສະ

[໓໑] ສະຫາຍຄຣືຫັສຖ໌ຂອງທ່ານພຣະຍສະຈໍານວນ ໕໐ ຄົນ ເປັນຊາວຊົນບົທ ເປັນບຸຕຣຂອງຕະກູນເສດຖີໃຫຍ່ນ້ອຍໄດ້ຊາບຂ່າວວ່າ "ຍສກຸລບຸຕຣໂກນຜົມແລະຫນວດ ນຸ່ງຫົ່ມຜ້າກາສາຍະອອກຈາກເຮືອນບວຊເປັນບັພຊິຕແລ້ວ" ຄັນສະຫາຍຄຣືຫັສຖ໌ໄດ້ຊາບຂ່າວແລ້ວຈຶ່ງໄດ້ມີຄວາມຄິດ ດັ່ງນີ້ວ່າ "ທັມວິນັຍແລະບັນພະຊາທີ່ຍສກຸລບຸຕຣໂກນຜົມແລະຫນວດ ນຸ່ງຫົ່ມຜ້າກາສາຍະອອກຈາກເຮືອນບວຊເປັນບັພຊິຕນັ້ນ ຄົງຈະບໍ່ຕໍ່າຊາມເປັນແນ່" ຄັນແລ້ວສະຫາຍຄຣືຫັສຖ໌ເຫລົ່ານັ້ນ ໄດ້ພາກັນເຂົ້າໄປຫາທ່ານພຣະຍສະເຖິງທີ່ຢູ່ ຄັນເຖິງແລ້ວ ໄດ້ໄຫວ້ທ່ານພຣະຍສະແລ້ວໄດ້ຢືນຢູ່ ນະທີ່ສົມຄວຣ ຄັ້ງນັ້ນທ່ານພຣະຍສະຈຶ່ງພາສະຫາຍຄຣືຫັສຖ໌ ໕໐ ຄົນໄປເຂົ້າເຝົ້າພຣະຜູ້ມີພຣະພາກ
ເຖິງທີ່ປະທັບ ຄັນເຖິງແລ້ວ ໄດ້ຖວາຍອະພິວາທພຣະຜູ້ມີພຣະພາກແລ້ວນັ່ງ ນະທີ່ສົມຄວຣ ທ່ານພຣະຍສະຜູ້ນັ່ງ ນະທີ່ສົມຄວຣ ໄດ້ຂາບທູລພຣະຜູ້ມີພຣະພາກ ດັ່ງນີ້ວ່າ "ພຣະພຸທທ ຂະນ້ອຍ ສະຫາຍຄຣືຫັສຖ໌ຂອງຂ້າພຣະອົງຄ໌ ໕໐ ຄົນເຫລົ່ານີ້ ເປັນຊາວຊົນບົທ ເປັນບຸຕຣຂອງຕະກູນເສດຖີໃຫຍ່ນ້ອຍ ຂໍພຣະອົງຄ໌ໂປຣດປະທານໂອວາທສັ່ງສອນສະຫາຍຂອງຂ້າພຣະອົງຄ໌ເຫລົ່ານີ້ເຖີດ"

ພຣະຜູ້ມີພຣະພາກໄດ້ຕຣັສສອນອະນຸປຸພພິກຖາ ຄື ຊົງປະກາດ

໑. ທານກຖາ ໒. ສີລກຖາ

໓. ສັຄຄກຖາ ໔. ກາມາທີນວກຖາ

໕. ເນກຂັມມານິສັງສກຖາ ແກ່ສະຫາຍເຫລົ່ານັ້ນ

ເມື່ອຊົງຊາບວ່າພວກເຂົາມີຈິດຄວຣ ອ່ອນ ປາສຈາກນິວອຣນ໌ ເບີກບານ ຜ່ອງໃສ ຈຶ່ງຊົງປະກາດສາມຸກກັງສິກທັມເທສນາຂອງພຣະພຸດທະເຈົ້າທັງຫລາຍ ຄື ທຸກຂ໌ ສມຸທັຍ ນິໂຣທ ມັຄ ທັມຈັກສຸອັນປາສຈາກທຸລີ ປາສຈາກມົລທິນໄດ້ເກີດແກ່ພວກເຂົາ ນະທີ່ນັ່ງນັ້ນແລ ວ່າ "ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນທັມດາ ສິ່ງນັ້ນທັງປວງມີຄວາມດັບໄປເປັນທັມດາ" ປຽບເຫມືອນຜ້າຂາວສະອາດປາສຈາກມົລທິນ ຄວຣຮັບນ້ຳຍ້ອມໄດ້ເປັນຢ່າງດີ ພວກເຂົາໄດ້ເຫັນທັມແລ້ວ ບັນລຸທັມແລ້ວ ຮູ້ແຈ້ງທັມແລ້ວ ຫຍັ່ງລົງສູ່ທັມແລ້ວ ຂ້າມຄວາມສົງສັຍແລ້ວ ປາສຈາກຄວາມແຄງໃຈ ເຖິງຄວາມເປັນຜູ້ເກັ່ງກ້າບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ພຣະພຸດທະເຈົ້າຂ້າ ພວກຂ້າພຣະອົງຄ໌ຄວນໄດ້ກາຣບັນພະຊາ ຄວນໄດ້ກາຣອຸປສົມບົທ ໃນສຳນັກຂອງພຣະອົງຄ໌" ພຣະຜູ້ມີພຣະພາກຕຣັສວ່າ "ພວກທ່ານຈົ່ງມາເປັນພິກສຸເຖີດ" ແລ້ວຕຣັສຕໍ່ໄປວ່າ "ທັມອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ" ພຣະອາຈານັ້ນ ໄດ້ເປັນກາຣອຸປສົມບົທຂອງທ່ານເຫລົ່ານັ້ນ

ຫລັງຈາກນັ້ນ ພຣະຜູ້ມີພຣະພາກໄດ້ຊົງປະທານໂອວາທສັ່ງສອນພິກສຸເຫລົ່ານັ້ນດ້ວຍ ທັມມີກຖາ ເມື່ອຊົງປະທານໂອວາທສັ່ງສອນດ້ວຍທັມມີກຖາຢູ່ ຈິຕຂອງພິກສຸເຫລົ່ານັ້ນ ກໍຫລຸດພົ້ນຈາກອາສວະທັງຫລາຍເພາະບໍ່ຖືຫມັ້ນ

ຄັ້ງນັ້ນ ມີພຣະອຣຫັນຕ໌ໃນໂລກ ໒໑ ຣູບ

ບັນພະຊາກຖາ ຈົບ

໗. ມາຣກຖາ

ວ່າດ້ວຍມາຣ

ເຣື້ອງສົ່ງພຣະອຣຫັນຕ໌ ໒໐ ຣູບ ໄປປະກາດສາສນາ

[໓໒] ຄັ້ງນັ້ນ ພຣະຜູ້ມີພຣະພາກໄດ້ຮັບສັ່ງກັບພິກສຸເຫລົ່ານັ້ນວ່າ "ພິກສຸທັງຫລາຍ ເຮົາພົ້ນແລ້ວຈາກບ້ວງດທັງປວງ ທັງທີ່ເປັນຂອງທິພຍ໌ ທັງທີ່ເປັນຂອງມະນຸສຍ໌ ແມ່ນພວກທ່ານກໍພົ້ນແລ້ວຈາກບ້

ວງທັງປວງ ທັງທີ່ເປັນຂອງທິພຍ໌ ທັງທີ່ເປັນຂອງມະນຸສຍ໌ ພິກສຸທັງຫລາຍ ພວກທ່ານຈົ່ງຈາຣິກໄປ ເພື່ອປໂຍດສຸຂແກ່ຊົນຈຳນວນຫລາຍ ເພື່ອອນຸເຄາະຊາວໂລກ ເພື່ອປໂຍດເກື້ອກູລແລະຄວາມສຸຂແກ່ທວຍເທພແລະມະນຸສຍ໌ ຢ່າໄປໂດຍທາງດຽວກັນສອງຮູບ ຈົ່ງສະແດງທັມມີຄວາມງາມໃນເບື້ອງຕົ້ນ ມີຄວາມງາມໃນທ່າມກາງ ແລະມີຄວາມງາມໃນທີ່ສຸດ ຈົ່ງປະກາດພຣົມຈັນຍ໌ ພ້ອມທັງອັນຖະແລະພຍັນຊນະບໍຣິສຸດທ໌ບໍຣິບູຣນ໌ຄົບຖ້ວນ ສັຕວ໌ທັງຫລາຍທີ່ມີທຸລີໃນຕາຫນ້ອຍ ມີຢູ່ ຍ່ອມເສື່ອມເພາະບໍ່ໄດ້ຟັງທັມ ຈັກມີຜູ້ຮູ້ທັມ ພິກສຸທັງຫລາຍ ແມ່ນເຮົາກໍ່ຈັກໄປຍັງຕາແສງອຸຣຸເວລາເສນານິຄົມ ເພື່ອສະແດງທັມ”

ໝາຍເຫດ :

໑ ບ້ວງ ໃນທີ່ນີ້ ຫມາຍເຖິງ ໂລພະ (ວິ. ອ. ໓/໓໔/໑໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໗. ມາຣກຖາ

ເຣື່ອງມາຣ

[໓໓] ຄັ້ງນັ້ນ ມາຣຜູ້ມີບາບໄດ້ເຂົ້າເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະຜູ້ມີພຣະພາກເປັນຄາຖາຄວາມວ່າ “ທ່ານໄດ້ຖືກບ້ວງທັງປວງ ທັງທີ່ເປັນຂອງທິພຍ໌ ທັງທີ່ເປັນຂອງມະນຸສຍ໌໑ຄ້ອງໄວ້ແລ້ວ ທ່ານໄດ້ຖືກຜູກດ້ວຍເຄື່ອງພັນທນາການມາກມາຍ ແນ່ະ ທ່ານສະມະນະ ທ່ານບໍ່ພົ້ນຈາກເຮົາໄດ້” ພຣະຜູ້ມີພຣະພາກໄດ້ຕຣັສວ່າ “ເຮົາໄດ້ພົ້ນແລ້ວຈາກບ້ວງທັງປວງ ທັງທີ່ເປັນຂອງທິພຍ໌ ທັງທີ່ເປັນຂອງມະນຸສຍ໌ ເຮົາໄດ້ພົ້ນແລ້ວຈາກເຄື່ອງພັນທນາການມາກມາຍ ແນ່ະມາຣຜູ້ກະທຳຊຶ່ງທີ່ສຸດ ເຮົາໄດ້ກຳຈັດທ່ານເສັຽແລ້ວ” ມາຣຂາບທູລວ່າ “ບ້ວງນີ້ທ່ຽວໄປໃນອາກາສ ມີໃນໃຈ ສັນຈອນໄປຢູ່ ເຮົາຈັກຄ້ອງທ່ານດ້ວຍບ້ວງນັ້ນ ລະ ສະມະນະ ທ່ານບໍ່ພົ້ນຈາກເຮົາໄດ້”໔ ພຣະຜູ້ມີພຣະພາກຕຣັສວ່າ “ເຮົາປາສຈາກຄວາມພໍໃຈໃນອາຣົມນ໌ເຫລົ່ານີ້ ຄື ຮູບ ສຽງ ກິ່ນ ຣົສ ໂຜຕຖັພພະ ຊຶ່ງເປັນທີ່ຣື່ນຣົມຍ໌ໃຈແລ້ວລະມາຣ ຜູ້ກະທຳຊຶ່ງທີ່ສຸດ ເຮົາໄດ້ກຳຈັດທ່ານເສັຽແລ້ວ”໓ ຂນະນັ້ນ ມາຣຜູ້ມີບາບຊາບວ່າ “ພຣະຜູ້ມີພຣະພາກຊົງຮູ້ຈັກເຮົາ ພຣະສຸຄຕຊົງຮູ້ຈັກເຮົາ” ມີທຸກຂ໌ເສັຽໃຈ ໄດ້ຫາຍໄປ ນະທີ່ນັ້ນ

ມາຣກຖາ ຈົບ

ໝາຍເຫດ :

໑ ບ້ວງທິພຍ໌ ບ້ວງມະນຸສ຺ຍ໌ ຄືບ້ວງກິເລສ຺ທີ່ເປັນທິພພການຄຸນ຺ແລະການຄຸນ຺ຂອງມະນຸສ຺ຍ໌ (ສ຺າຣຕ຺ຖ. ຕ຺ີກາ ໓/໓໓/໔໔໔) ໔-໓ ສໍ. ສ຺. ໑໕/໑໕໑/໑໓໕

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທ຺ກະ] ໙. ປັພພັຊຊູປສັມປທາກຖາ

໙. ປັພພັຊຊູປສັມປທາກຖາ

ວ່າດ້ວຍການບັນພະຊາແລະອຸປສ຺ົມບົທດ້ວຍໄຕຣສ຺ຣນ຺ຄົມນ໌

ເລື້ອງຊົງອນຸຍາຕພ຺ິກສ຺ຸບັນພະຊາອຸປສ຺ົມບົທໃຫ້ກຸລບຸຕຣ

[໓໔] ສ຺ມັຍນັ້ນ ພ຺ິກສ຺ຸທັງຫລາຍພາເຫລົ່າກຸລບຸຕຣຜູ້ມຸ່ງບັນພະຊາແລະມຸ່ງອຸປສ຺ົມບົທ ມາຈາກທິສ ຕ່າງໆ ຈາກຊົນບົທຕ່າງໆ ດ້ວຍຕັ້ງໃຈວ່າ "ພຣະຜູ້ມີພຣະພ຺າກຈັກຊົງໃຫ້ພວກເຂົາບັນພະຊາອຸປສ຺ົມ ບົທ" ໃນການທີ່ພ຺ິກສ຺ຸທັງຫລາຍນຳກຸລບຸຕຣມາ ທັງພ຺ິກສ຺ຸທັງຫລາຍ ທັງເຫລົ່າກຸລບຸຕຣຜູ້ມຸ່ງບັນພະ ຊາແລະມຸ່ງອຸປສ຺ົມບົທ ຍ່ອມລຳບາກ ຄັ້ງນັ້ນ ພຣະຜູ້ມີພຣະພ຺າກປະທັບຫລີກຫລີບຢູ່ໃນທີ່ສ຺ງັດ ຊົງ ເກີດຄວາມຄ່ຳຄວນຂຶ້ນໃນພຣະທັຍຢ່າງນີ້ວ່າ "ບັດນີ້ ພ຺ິກສ຺ຸທັງຫລາຍພາເຫລົ່າກຸລບຸຕຣຜູ້ມຸ່ງບັນພະຊາ ແລະມຸ່ງອຸປສ຺ົມບົທ ມາຈາກທິສນັ້ນໆຈາກຊົນບົທຕ່າງໆດ້ວຍຕັ້ງໃຈວ່າ ພຣະຜູ້ມີພຣະພ຺າກຈັກຊົງໃຫ້ ພວກເຂົາບັນພະຊາອຸປສ຺ົມບົທ ໃນການທີ່ພ຺ິກສ຺ຸທັງຫລາຍນຳກຸລບຸຕຣມານັ້ນ ທັງພວກພ຺ິກສ຺ຸທັງເຫລົ່າ ກຸລບຸຕຣຜູ້ມຸ່ງບັນພະຊາແລະມຸ່ງອຸປສ຺ົມບົທ ຍ່ອມລຳບາກ ຢ່າກະນັ້ນເລີຍ ເຮົາຄວນອນຸຍາຕພ຺ິກສ຺ຸທັງ ຫລາຍວ່າ "ພ຺ິກສ຺ຸທັງຫລາຍ ບັດນີ້ທ່ານທັງຫລາຍນັ້ນແຫລະ ຈົ່ງໃຫ້ບັນພະຊາ ຈົ່ງໃຫ້ ອຸປສ຺ົມບົທ ໃນທິສນັ້ນໆ ໃນຊົນບົທນັ້ນໆ ເຖີດ"

ຄັນເວລາແລງ ພຣະຜູ້ມີພຣະພ຺າກສ຺ເດັຈອອກຈາກທີ່ຫລີບ ຊົງສ຺ະແດງທ຺ັມມີກຖາເພາະເລື້ອງນີ້ເປັນ ຕົ້ນເຫຕຸ ຮັບສັ່ງກັບພ຺ິກສ຺ຸທັງຫລາຍວ່າ "ພ຺ິກສ຺ຸທັງຫລາຍ ເຮົາຢູ່ໃນທີ່ສ຺ງັດຫລີກຫລີບຢູ່ທີ່ນີ້ ໄດ້ເກີດ ຄວາມຄິດຄຳນຶງຂຶ້ນໃນໃຈວ່າ ບັດນີ້ ພ຺ິກສ຺ຸທັງຫລາຍພາເຫລົ່າກຸລບຸຕຣຜູ້ມຸ່ງບັນພະຊາແລະມຸ່ງອຸປສ຺ົ ມບົທມາຈາກທິສຕ່າງໆຈາກຊົນບົທຕ່າງໆດ້ວຍຕັ້ງໃຈວ່າ ພຣະຜູ້ມີພຣະພ຺າກຈັກຊົງໃຫ້ພວກເຂົາບັນພະ ຊາອຸປສ຺ົມບົທ ໃນການທີ່ພ຺ິກສ຺ຸທັງຫລາຍ ນຳກຸລບຸຕຣມານັ້ນ ທັງພ຺ິກສ຺ຸທັງຫລາຍ ທັງເຫລົ່າກຸລບຸຕຣ ຜູ້ມຸ່ງບັນພະຊາແລະມຸ່ງອຸປສ຺ົມບົທຍ່ອມລຳບາກ ຢ່າກະນັ້ນເລີຍ ເຮົາຄວຣອນຸຍາຕພ຺ິກສ຺ຸທັງຫລາຍວ່າ ພ຺ິກສ຺ຸທັງຫລາຍ ບັດນີ້ທ່ານທັງຫລາຍນັ້ນແຫລະ ຈົ່ງໃຫ້ບັນພະຊາ ຈົ່ງໃຫ້ ອຸປສ຺ົມບົທໃນທິສນັ້ນໆ

ໃນຊຸມນຸມຫນັ້ນໆເຖີດ ພິກສຸທັງຫລາຍ ຄວນໃຫ້ບັນພະຊາ ຄວນໃຫ້ ອຸປສົມບົທຢ່າງນີ້

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໗. ປັພພັຊຊູປສັມປທາກຖາ

ໃນເບື້ອງຕົ້ນ ຄວນໃຫ້ກຸລບຸຕຣຜູ້ມຸ່ງບັນພະຊາແລະມຸ່ງອຸປສົມບົທ ປົງຜົມແລະຫນວດໃຫ້ຄອງຜ້າກາສາຍະ ໃຫ້ຫົ່ມອຸຕຕຣາສົງຄ໌ບ່ງງບ່າຂ້າງນຶ່ງ ໃຫ້ຂາບຕີນພິກສຸທັງຫລາຍ ໃຫ້ນັ່ງຄຸເຂົ່າ ໃຫ້ປະນົມມືແລ້ວສັ່ງວ່າ 'ທ່ານຈົ່ງກ່າວຢ່າງນີ້' ແລ້ວໃຫ້ວ່າສຣນຄົມນ໌ດັ່ງນີ້

ໄຕຣສຣນຄົມນ໌

ວ່າດ້ວຍການເຖິງພຣະຣັຕນຕຣັຍເປັນສະຣະນະ໑
ພຸທທັງ ສຣນັງ ຄັຈສາມິ ຂ້າພະເຈົ້າຂໍເຖິງພຣະພຸດທະເຈົ້າເປັນສະຣະນະ
ທັມມັງ ສຣນັງ ຄັຈສາມິ ຂ້າພະເຈົ້າຂໍເຖິງພຣະທັມເປັນສະຣະນະ
ສັງຂັງ ສຣນັງ ຄັຈສາມິ ຂ້າພະເຈົ້າຂໍເຖິງພຣະສົງຂ໌ເປັນສະຣະນະ
ທຸຕິຍັມປິ ພຸທທັງ ສຣນັງ ຄັຈສາມິ ຂ້າພະເຈົ້າຂໍເຖິງພຣະພຸດທະເຈົ້າເປັນສະຣະນະ ແມ່ນຄັ້ງທີ ໔
ທຸຕິຍັມປິ ທັມມັງ ສຣນັງ ຄັຈສາມິ ຂ້າພະເຈົ້າຂໍເຖິງພຣະທັມເປັນສະຣະນະ ແມ່ນຄັ້ງທີ ໔
ທຸຕິຍັມປິ ສັງຂັງ ສຣນັງ ຄັຈສາມິ ຂ້າພະເຈົ້າຂໍເຖິງພຣະສົງຂ໌ເປັນສະຣະນະ ແມ່ນຄັ້ງທີ ໔
ຕຕິຍັມປິ ພຸທທັງ ສຣນັງ ຄັຈສາມິ ຂ້າພະເຈົ້າຂໍເຖິງພຣະພຸດທະເຈົ້າເປັນສະຣະນະ ແມ່ນຄັ້ງທີ ໓
ຕຕິຍັມປິ ທັມມັງ ສຣນັງ ຄັຈສາມິ ຂ້າພະເຈົ້າຂໍເຖິງພຣະທັມເປັນສະຣະນະ ແມ່ນຄັ້ງທີ ໓
ຕຕິຍັມປິ ສັງຂັງ ສຣນັງ ຄັຈສາມິ ຂ້າພະເຈົ້າຂໍເຖິງພຣະສົງຂ໌ເປັນສະຣະນະ ແມ່ນຄັ້ງທີ ໓
ພິກສຸທັງຫລາຍ ເຮົາອນຸຍາຕບັນພະຊາອຸປສົມບົທດ້ວຍໄຕຣສຣນຄົມນ໌ ເຫລົ່ານີ້"

ປັພພັຊຊູປສັມປທາກຖາ ຈົບ

ໝາຍເຫດ :

໑ ສະຣະນະ ຫມາຍເຖິງສິ່ງທີ່ທຳລາຍ ຂຈັດປັດເປົ່າ ບັນເທົາທຸກຂ໌ພັຍແລະກິເລສ ການຖືພຣະຣັຕນຕຣັຍວ່າເປັນສະຣະນະກໍເພື່ອເປັນເຄື່ອງຊ່ວຍທຳລາຍຂຈັດປັດເປົ່າທຸກຂ໌ພັຍແລະກິເລສຕ່າງໆໃນຈິຕໃຈໃຫ້ຫມົດສິ້ນ (ຂຸ. ຂຸ. ອ. ໒-໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທະກະ] ໑໐. ທຸຕິຍມາຣກຖາ

໑໐. ທຸຕິຍມາຣກຖາ

ວ່າດ້ວຍມາຣ ເຣື່ອງທີ ໔

ເຣື້ອງຊົງແນະວິທີໃຫ້ໄດ້ອນຸຕຕຣວິມຸຕຕິ

[໓໕] ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງຈຳພັນສາແລ້ວ ໄດ້ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເພາະມີຄວາມຕັ້ງໃຈໂດຍເລິກຊຶ້ງ ເພາະຕັ້ງຄວາມພຽນຊອບໂດຍເລິກຊຶ້ງ ເຣົາຈຶ່ງໄດ້ບັນລຸອນຸຕຕຣວິມຸຕຕິ ໄດ້ທຳອນຸຕຕຣວິມຸຕຕິໃຫ້ແຈ້ງ ພິກສຸທັງຫລາຍ ເພາະທຳໄວ້ໃນໃຈໂດຍເລິກຊຶ້ງ ເພາະຕັ້ງຄວາມພຽນຊອບໂດຍເລິກຊຶ້ງ ແມ່ນທ່ານທັງຫລາຍຍ່ອມບັນລຸອນຸຕຕຣວິມຸຕຕິໄດ້ ຍ່ອມທຳອນຸຕຕຣວິມຸຕຕິໃຫ້ແຈ້ງໄດ້" ລຳດັບນັ້ນ ມາຣຜູ້ມີບາປໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະຜູ້ມີພຣະພາກເປັນຄາຖາຄວາມວ່າ "ທ່ານໄດ້ຖືກຜູກດ້ວຍບ້ວງມາຣ ທັງທີ່ເປັນຂອງທິພຍ໌ ທັງທີ່ເປັນຂອງມະນຸສຍ໌ ທ່ານໄດ້ຖືກເຄື່ອງຜູກຫລາຍປະກາຣຮັດຕຶງແລ້ວ ແນ່ະສະມະນະ ທ່ານບໍ່ພົ້ນເຣົາໄດ້ດອກ" ພຣະຜູ້ມີພຣະພາກໄດ້ຕຣັສວ່າ "ເຣົາໄດ້ພົ້ນແລ້ວຈາກບ້ວງມາຣ ທັງທີ່ເປັນຂອງທິພຍ໌ ທັງທີ່ເປັນຂອງມະນຸສຍ໌ ເຣົາໄດ້ພົ້ນແລ້ວຈາກເຄື່ອງຜູກຫລາຍປະກາຣແນ່ະມາຣຜູ້ກະທຳຊຶ່ງທີ່ສຸດ ເຣົາໄດ້ກຳຈັດທ່ານເສັຽແລ້ວ" ຂະນະນັ້ນ ມາຣຜູ້ມີບາປຊາບວ່າ "ພຣະຜູ້ມີພຣະພາກຊົງຮູ້ຈັກເຣົາ ພຣະສຸຄຕຊົງຮູ້ຈັກເຣົາ" ມີທຸກຂ໌ ເສັຽໃຈ ໄດ້ຫາຍໄປ ນະທີ່ນັ້ນ

ທຸຕິຍມາຣກຖາ ຈົບ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທະກະ] ໑໐. ພັທທວັຄຄິຍວັຕຖຸ

໑໑. ພັທທວັຄຄິຍວັຕຖຸ

ວ່າດ້ວຍພິກສຸພັທທວັຄຄີຍ໌

ເຣື້ອງຊົງສະແດງທັມໂປຣດພັທທວັຄຄີຍ໌ ໓໐ ຄົນ

[໓໖] ຄັ້ງນັ້ນ ພຣະຜູ້ມີພຣະພາກປະທັບຢູ່ ນະ ກຸງພາຣານສີ ຕາມພຣະອັທຍາສັຍແລ້ວໄດ້ສເດັຈຈາຣິກໄປທາງຕາແສງອຸຣຸເວລາ ສເດັຈຫລີກຈາກທາງ ເຂົ້າໄປຍັງໄພຣສົນທ໌ແຫ່ງນຶ່ງ ຄັນສເດັຈເຖິງໄພຣສົນທ໌ແຫ່ງນັ້ນແລ້ວ ໄດ້ປະທັບນັ່ງຢູ່ ນະ ຄວງໄມ້ຕົ້ນນຶ່ງ ສມັຍນັ້ນ ສະຫາຍພັທທວັຄຄີຍ໌ປະມານ

໓໐ ຄົນພ້ອມພັຣຍາປົນນິບັດກັນໃນໄພຣສົນທ໌ແຫ່ງນັ້ນ ສະຫາຍຄົນນຶ່ງບໍ່ມີພັຣຍາ ພວກສະຫາຍຈຶ່ງ ນຳຍິງແພສຍາມາເພື່ອປໂຍດແກ່ເຂົາ ຕໍ່ມາ ຍິງແພສຍາໄດ້ລັກຂອງຫນີໄປ ຂນະພວກເຂົາ ເພີນິວແຕ່ປົນນິບັດກັນ ສະຫາຍເຫລົ່ານັ້ນເມື່ອຈະຊ່ວຍເຫລືອເຂົາ ຈຶ່ງທຽວຕາມຫາຍິງແພສຍາຈົນໄປ ເຖິງໄພຣສົນທ໌ແຫ່ງນັ້ນ ໄດ້ເຫັນພຣະຜູ້ມີພຣະພາກປະທັບນັ່ງຢູ່ ນະ ຄວງໄມ້ຕົ້ນ ນຶ່ງ ຄັນເຫັນແລ້ວ ຈຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ພຣະອົງຄ໌ຊົງເຫັນຍິງຄົນນຶ່ງແດ່ບໍ່ ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກຊົງ ຍ້ອນຖາມວ່າ "ກຸມາຣ ທັງຫລາຍ ພວກທ່ານມີຄວາມຕ້ອງການຍິງໄປເປັນຫຍັງ" ສະຫາຍພັທທວັຄຄີຍ໌ຂາບທູລວ່າ "ຂ້າແດ່ ພຣະອົງຄ໌ຜູ້ຈະເຣີນ ພວກຂ້າພຣະອົງຄ໌ເປັນສະຫາຍພັທທວັຄຄີຍ໌ມີປະມານ ໓໐ ຄົນໃນຕາແສງນີ້ ພ້ອມພັຣຍາປົນນິບັດກັນໃນໄພຣສົນທ໌ແຫ່ງນີ້ ສະຫາຍຄົນນຶ່ງບໍ່ມີພັຣຍາ ພວກຂ້າພຣະອົງຄ໌ຈຶ່ງໄດ້ນຳ ຍິງແພສຍາມາເພື່ອປໂຍດແກ່ເຂົາ ຕໍ່ມາ ຍິງແພສຍາໄດ້ລັກຂອງຫນີໄປ ຂນະພວກຂ້າພຣະອົງຄ໌ ເພີນິວປົນນິບັດກັນ ເພາະເຫຕຸນັ້ນ ພວກຂ້າພຣະອົງຄ໌ເປັນສະຫາຍກັນ ເມື່ອຈະຊ່ວຍເຫລືອເຂົາ ຈຶ່ງທຽວຕາມຫາຍິງແພສຍາຈົນມາເຖິງໄພຣສົນທ໌ແຫ່ງນີ້ ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກໄດ້ ຕຣັສວ່າ "ກຸມາຣທັງຫລາຍ ພວກທ່ານຈະສຳຄັນຄວາມຂໍ້ນັ້ນຢ່າງໃດ ການທີ່ພວກທ່ານຈະແສວງຫາ ຍິງຫລືແສວງຫາຕົນ ຢ່າງໃດຈະປະເສີດກວ່າກັນ"

"ການທີ່ພວກຂ້າພຣະອົງຄ໌ແສວງຫາຕົນນີ້ແຫລະ ປະເສີດກວ່າ ພຣະພຸດທະເຈົ້າຂ້າ"

"ກຸມາຣທັງຫລາຍ ຖ້າຢ່າງນັ້ນພວກທ່ານຈົ່ງນັ່ງລົງ ເຮົາຈັກສະແດງທັມແກ່ພວກທ່ານ"

ສະຫາຍພັທທວັຄຄີຍ໌ເຫລົ່ານັ້ນທູລຮັບວ່າ "ດີລະ ພຣະພຸດທະເຈົ້າຂ້າ" ຖວາຍອະພິວາທພຣະຜູ້ມີພຣະ ພາກແລ້ວນັ່ງ ນະທີ່ສົມຄວຣ

ພຣະຜູ້ມີພຣະພາກໄດ້ຕຣັສອນຸປຸພພີກຖາ ຄື ຊົງປະກາດ

໑. ທານກຖາ ໒. ສີລກຖາ ໓. ສັຄຄກຖາ ໔. ກາມາທີນວກຖາ ໕. ເນກຂັມມານິສັງສກຖາ ແກ່ພວກ ເຂົາ ເມື່ອຊົງຊາບວ່າພວກເຂົາມີຈິຕຄວຣ ອ່ອນ ປາສຈາກນິວອຣນ໌ ເບີກບານ ຜ່ອງໃສ ຈຶ່ງຊົງປະ ກາດສາມຸກກັງສິກທັມເທສນາຂອງພຣະພຸດທະເຈົ້າທັງຫລາຍ ຄື ທຸກຂ໌ ສມຸທັຍ ນິໂຣທ ມັຄ ທັມ ຈັກສຸອັນປາສຈາກທູລີປາສຈາກມົລທິນ ໄດ້ເກີດແກ່ພວກເຂົາ ນະ ທີ່ນັ່ງນັ້ນວ່າ "ສິ່ງໃດສິ່ງນຶ່ງມີຄວາມ ເກີດຂຶ້ນເປັນທັມດາ ສິ່ງນັ້ນທັງປວງມີຄວາມດັບໄປເປັນທັມດາ" ປຽບເຫມືອນຜ້າຂາວສະອາດຄວຣ ຮັບນ້ຳຍ້ອມໄດ້ເປັນຢ່າງດີ ພວກເຂົາໄດ້ເຫັນທັມແລ້ວ໑ ບັນລຸທັມແລ້ວ ຮູ້ແຈ້ງທັມແລ້ວ ຫຍັ່ງລົງ ສູ່ທັມແລ້ວ ຂ້າມຄວາມສົງ ສັຍແລ້ວ ປາສຈາກຄວາມແຄງໃຈ ເຖິງຄວາມເປັນຜູ້ເກັ່ງກ້າ ບໍ່ຕ້ອງເຊື່ອ

ຜູ້ອື່ນໃນຄໍາສອນຂອງພຣະສາສດາ ໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ພຣະພຸດທະເຈົ້າຂ້າ ພວກຂ້າພຣະອົງຄ໌ຄວນໄດ້ການບັນພະຊາ ຄວນໄດ້ການອຸປສົມບົທ ໃນສໍານັກຂອງພຣະຜູ້ມີພຣະພາກ" ພຣະຜູ້ມີພຣະພາກຕຣັສວ່າ "ພວກທ່ານຈົ່ງມາເປັນພິກສຸເຖີດ" ແລ້ວຕຣັສຕໍ່ໄປວ່າ "ທັມອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶດພຣົມຈັນຍ໌ເພື່ອທໍາທີ່ສຸດທຸກຂ໌ໂດຍຊອບເຖີດ" ພຣະອາຈານັ້ນ ໄດ້ເປັນການອຸປສົມບົທຂອງທ່ານເຫລົ່ານັ້ນ

ພັທທວັຄຄິຍວັຕຖຸ ຈົບ

ພານວາຣທີ ໔ ຈົບ

ໝາຍເຫດ :

໑ ເຫັນທັມ ຫມາຍເຖິງໄດ້ທັມຈັກສຸ ຄື ບາງພວກໄດ້ບັນລຸໂສດາປັຕຕິມັຄ ບາງພວກໄດ້ບັນລຸສກທາຄາມິມັຄບາງພວກໄດ້ບັນລຸອນາຄາມິມັຄ ມັຄທັງ ໓ ນີ້ ຮຽກວ່າ ທັມຈັກສຸ (ວິ. ອ. ໓/໓໓/໔໕)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໔. ອຸຣຸເວລປາດິຫາຣິຍກຖາ

໑໔. ອຸຣຸເວລປາຕິຫາຣິຍກຖາ

ວ່າດ້ວຍປາຕິຫາຣິຍ໌ທີ່ຕາແສງອຸຣຸເວລາ

ເຣື້ອງຊດິລ ໓ ພີ່ນ້ອງ

[໓໗] ຄັ້ງນັ້ນ ພຣະຜູ້ມີພຣະພາກສເດັຈຈາຣິກໄປໂດຍລໍາດັບ ລຸເຖິງຕາແສງອຸຣຸເວລາ ສມັຍນັ້ນ ຊດິລ ໓ ຄົນ ຄື ອຸຣຸເວລກັສສປະ ນທີກັສສປະ ຄຍາກັສສປະ ອາສັຍຢູ່ທີ່ຕາແສງອຸຣຸເວລາໃນຊດິລ ໓ ຄົນນັ້ນ ຊດິລອຸຣຸເວລກັສສປະເປັນຜູ້ນໍາ ເປັນຜູ້ຝຶກ ເປັນເລີສ ເປັນຫົວຫນ້າ ເປັນປະທານຂອງຊດິລ ໕໐໐ ຄົນ ຊດິລນທີກັສສປະເປັນຜູ້ນໍາ ເປັນຜູ້ຝຶກ ເປັນເລີສ ເປັນຫົວຫນ້າ ເປັນປະທານຂອງຊດິລ ໓໐໐ ຄົນຊດິລຄຍາກັສສປະເປັນຜູ້ນໍາ ເປັນຜູ້ຝຶກ ເປັນເລີສ ເປັນຫົວຫນ້າ ເປັນປະທານຂອງຊດິລ ໔໐໐ ຄົນ

ຕໍ່ມາ ພຣະຜູ້ມີພຣະພາກໄດ້ສເດັຈໄປຍັງອາສົມຂອງຊດິລອຸຣຸເວລກັສສປະ ຄັນເຖິງແລ້ວໄດ້ຕຣັສກັບຊດິລອຸຣຸເວລກັສສປະດັ່ງນີ້ວ່າ "ກັສສປະ ຖ້າທ່ານບໍ່ຫນັກໃຈ ເຮົາຈະຂໍພັກໃນໂຮງໄຟຄືນນຶ່ງ" ຊດິລອຸຣຸເວລກັສສປະຂາບທູລວ່າ "ທ່ານມຫາສະມະນະ ຂ້າພະເຈົ້າບໍ່ຫນັກໃຈເລີຍ ຫາກແຕ່ວ່າໃນໂຮງ

ໄຟນັ້ນ ມີພຍານາຄທີ່ໂຫດຮ້າຍ ມີຣິທທິ໌ ເປັນອສຣພິສ ມີພິສຮ້າຍ ມັນຈະໄດ້ທຳຮ້າຍທ່ານ" ພຣະ ຜູ້ມີພຣະພາຄໄດ້ຕຣັສກັບຊດິລອຸຣຸເວລກັສສປະ ແມ່ນຄັ້ງທີ ໔ ວ່າ "ກັສສປະ ຖ້າທ່ານບໍ່ຫນັກໃຈ ຄືນນີ້ເຮົາຈະຂໍພັກໃນໂຮງໄຟ" ຊດິລອຸຣຸເວລກັສສປະກໍຂາບທູລວ່າ "ທ່ານມຫາສະມະນະ ຂ້າພະເຈົ້າບໍ່ຫນັກໃຈເລີຍ ຫາກແຕ່ວ່າ ໃນໂຮງໄຟນັ້ນ ມີພຍານາຄທີ່ໂຫດຮ້າຍ ມີຣິທທິ໌ ເປັນອສຣພິສ ມີພິສຮ້າຍ ມັນຈະໄດ້ທຳຮ້າຍທ່ານ" ພຣະຜູ້ມີພຣະພາກໄດ້ຕຣັສກັບຊດິລອຸຣຸເວລກັສສປະ ແມ່ນຄັ້ງທີ ໕ ວ່າ "ກັສສປະ ຖ້າທ່ານ ບໍ່ຫນັກໃຈ ຄືນນີ້ ເຮົາຈະຂໍພັກໃນໂຮງໄຟ" ຊດິລອຸຣຸເວລກັສສປະກໍຂາບທູລວ່າ "ຂ້າແຕ່ມຫາສະມະນະ ຂ້າພະເຈົ້າບໍ່ຫນັກໃຈເລີຍ ຫາກແຕ່ວ່າໃນໂຮງໄຟນັ້ນ ມີພຍານາຄທີ່ໂຫດຮ້າຍ ມີຣິທທິ໌ ເປັນອສຣພິສ ມີພິສຮ້າຍ ມັນຈະໄດ້ທຳຮ້າຍທ່ານ" ພຣະຜູ້ມີພຣະພາກໄດ້ຕຣັສຕໍ່ໄປວ່າ "ພຍານາຄບໍ່ທຳຮ້າຍເຮົາ ທ່ານກັສສປະທ່ານ ໂປຣດອນຸຍາຕໂຮງໄຟເຖີດ" ຊດິລອຸຣຸເວລ ກັສສປະ ກໍຂາບທູລວ່າ "ຂ້າແຕ່ມຫາສະມະນະ ນິມົນຕ໌ທ່ານຢູ່ຕາມສະບາຍເຖີດ"

ລຳດັບນັ້ນ ພຣະຜູ້ມີພຣະພາກໄດ້ສເດັຈເຂົ້າໄປສູ່ໂຮງໄຟ ຊົງປູເຄື່ອງລາດຫຍ້າ ປະທັບນັ່ງຄູ້ບັລລັງກ໌ ຕັ້ງພຣະກາຍຕຣົງ ດຳຣົງສຕິໄວ້ສະເພາະຫນ້າ

ປາຕິຫາຣິຍ໌ທີ ໑

ເຣື່ອງໂຮງບູຊາໄຟ

[໓໘] ຄັ້ງນັ້ນ ພຍານາຄນັ້ນໄດ້ເຫັນພຣະຜູ້ມີພຣະພາກສເດັຈເຂົ້າໄປ ກໍໂກດຂຶ້ງບໍ່ພໍໃຈ ບັງຫວນຄວັນ ທັນໃດນັ້ນ ພຣະຜູ້ມີພຣະພາກຊົງພຣະດຳຣິວ່າ "ຖ້າຢ່າງນັ້ນ ເຮົາຄວນຄອບງຳເດຊຂອງພຍານາຄນີ້ດ້ວຍເດຊຂອງເຮົາ ບໍ່ໃຫ້ຣະຄາຍຜິວ ຫນັງ ຊີ້ນ ເອັນ ກະດູກ ແລະເຍື່ອກະດູກ" ລຳດັບນັ້ນ ພຣະຜູ້ມີພຣະພາກຊົງສຳແດງອິທທາພິສັງຂາຣເຊັ່ນນັ້ນບັງຫວນຄວັນ ພຍານາຄທົນກາຣລົບຫລູ່ບໍ່ໄດ້ ຈຶ່ງພົ່ນໄຟໃສ່ທັນທີ ຝ່າຍພຣະຜູ້ມີພຣະພາກກໍຊົງເຂົ້າເຕໂຊກສິນະ ແລ້ວພົ່ນໄຟສູ້ຄືນ ເມື່ອທັງສອງຝ່າຍບັນດາລໃຫ້ເກີດໄຟຂຶ້ນ ເຮືອນໄຟໄດ້ລຸກໂພງຮຸ່ງແຮງດຸຈດັ່ງທະເລຄວນ ລຳດັບນັ້ນ ຊດິລເຫລົ່ານັ້ນພາກັນລ້ອມເຮືອນໄຟ ກ່າວກັນວ່າ "ທ່ານຜູ້ຈະເຣີນທັງຫລາຍ ມຫາສະມະນະຮູບງາມຄົງຈະຖືກພຍານາຄທຳຮ້າຍເປັນແນ່" ຄັນຣາຕຣີນັ້ນຜ່ານໄປ ພຣະຜູ້ມີພຣະພາກກໍຊົງຄອບງຳເດຊຂອງພຍານາຄນັ້ນດ້ວຍເດຊຂອງພຣະອົງຄ໌ ບໍ່ໃຫ້ຣະຄາຍຜິວ ຫນັງ ຊີ້ນ ເອັນ ກະດູກ ແລະເຍື່ອກະດູກ ແລ້ວຊົງຈັບພຍານາຄຂົດລົງໃນບາຕຣສະແດງແກ່ຊດິລອຸຣຸເວລກັສສປະວ່າ "ທ່ານກັສສປະ ນີ້ພຍານາຄຂອງທ່ານເຮົາຄອບງຳເດຊຂອງມັນດ້ວຍເດຊຂອງເຮົາໄດ້ແລ້ວ" ຂນະນັ້ນ ຊດິລອຸຣຸເວລກັສສປະຄິດວ່າ

“ມຫາສະມະນະມີຣິທທິ໌ມາກ ມີອານຸພາພມາກຈິງເຖິງກັບຄອບງໍາເດຊະຂອງພຍານາຄທີ່ໂຫດຮ້າຍ
ມີຣິທທິ໌ ເປັນອສໍຣພິສ ມີພິສຮ້າຍໄດ້ດ້ວຍເດຊະຂອງພຣະອົງຄ໌ ແຕ່ບໍ່ເປັນພຣະອຣຫັນຕ໌ເໝືອນເຮົາ
ແນ່ນອນ”

ຄາຖາສຣຸປ

[໓໙] ນະທີ່ແມ່ນ້ຳເນຣັນຊຣາ ພຣະຜູ້ມີພຣະພາກໄດ້ຕຣັສກັບຊດິລອຸຣຸເວລກັສສປະວ່າ “ກັສສປະ ຖ້າ
ທ່ານບໍ່ໜັກໃຈ ຄືນນີ້ເຮົາຈະຂໍພັກໃນໂຮງໄຟ” ຊດິລອຸຣຸເວລກັສສປະຂາບທູລວ່າ “ຂ້າແຕ່
ມຫາສະມະນະ ຂ້າພະເຈົ້າບໍ່ໜັກໃຈເລີຍ ຂ້າພະເຈົ້າຫວັງຄວາມຜາສຸກ ຈຶ່ງຫ້າມທ່ານວ່າ ທີ່ໂຮງໄຟນີ້
ມີພຍານາຄ ເປັນສັຕວ໌ໂຫດຮ້າຍ ມີຣິທທິ໌ ເປັນອສໍຣພິສ ມີພິສຮ້າຍ ມັນຢ່າໄດ້ທຳຮ້າຍທ່ານ”
ພຣະຜູ້ມີພຣະພາກຕຣັສວ່າ “ມັນຄົງບໍ່ທຳຮ້າຍເຮົາ ກັສສປະ ທ່ານໂປຣດອນຸຍາຕໂຮງໄຟເຖີດ”
ພຣະຜູ້ມີພຣະພາກຊົງຊາບວ່າຊດິລອຸຣຸເວລກັສສປະໄດ້ອນຸຍາຕໃຫ້ແລ້ວ ບໍ່ຊົງຄັດຄ້ານ ຊົງປາສຈາກ
ຄວາມຢ້ານ ສເດັຈເຂົ້າໄປ ພຍານາຄເຫັນພຣະຜູ້ມີພຣະພາກຜູ້ແສວງຫາຄຸນສເດັຈເຂົ້າໄປ
ກໍບໍ່ພໍໃຈ ຈຶ່ງບັງຫວນຄວັນຝ່າຍພຣະຜູ້ມີພຣະພາກຊົງເປັນມນຸສສນາຄະ ມີພຣະທັຍຊື່ນບານ
ມີພຣະທັຍບໍ່ຂັດເຄືອງ ກໍຊົງບັງຫວນຄວັນໃນໂຮງໄຟນັ້ນ ສ່ວນພຍານາຄທນການລົບຫລູ່ບໍ່ໄຫວ
ຈຶ່ງພົ່ນໄຟຮາວກັບໄຟໄໝ້ປ່າສູ້ຝ່າຍພຣະຜູ້ມີພຣະພາກ ຊົງເປັນມນຸສສນາຄະຊົງສລາດໃນເຕໂຊກສິນ
ຊົງພົ່ນໄຟສູ້ຄືນ ເມື່ອທັງສອງຝ່າຍພົ່ນໄຟຂຶ້ນ ເຮືອນໄຟກໍລຸກໂພງຮຸ່ງແຮງດຸຈທະເລຄວນ ພວກ
ຊດິລກ່າວກັນວ່າ “ແນ່ະຜູ້ຈະເຣີນ ມຫາສະມະນະຮູບງາມຄົງຈະຖືກພຍານາຄທຳຮ້າຍເປັນແນ່”
ຄັນຣາຕຣີນັ້ນຜ່ານໄປ ແປວໄຟຂອງພຍານາຄຖືກທຳລາຍ ສ່ວນແປວໄຟຫລາກສີຂອງພຣະຜູ້ມີພຣະ
ພາກຜູ້ຊົງຣິທທິ໌ຍັງຢູ່ ພຣະຣັສມີຫລາກສີ ຄື ສີຂຽວ ສີແດງ ສີແສດ ສີເຫລືອງ ສີແກ້ວຜລຶກ ປາກົດ
ທີ່ພຣະກາຍຂອງພຣະອັງຄີຣສ ພຣະຜູ້ມີພຣະພາກ ຊົງຈັບພຍານາຄຂົດລົງໃນບາຕຣແລ້ວ
ຊົງສະແດງແກ່ຊດິລອຸຣຸເວລກັສສປະວ່າ “ທ່ານກັສສປະ ນີ້ພຍານາຄຂອງທ່ານ ເຮົາຄອບງຳເດຊະຂອງ
ມັນດ້ວຍເດຊະຂອງເຮົາໄດ້ແລ້ວ” ຂນະນັ້ນ ຊດິລອຸຣຸເວລກັສສປະເຫລື້ອມໃສໃນອິທທິປາຕິ ຫາຣິຍ໌ ນີ້
ຂອງພຣະຜູ້ມີພຣະພາກຍິ່ງນັກແລ້ວໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ “ຂ້າແຕ່ມຫາສະມະນະ
ໂປຣດປະທັບຢູ່ທີ່ນີ້ແຫລະ ຂ້າພະເຈົ້າຈັກບຳຣຸງພຣະອົງຄ໌ດ້ວຍພັຕຕາຫາຣປະຈຳ”

ປາຕິຫາຣິຍ໌ທີ ໑ ຈົບ

ປາຕິຫາຣິຍ໌ທີ ໔

ເຣື້ອງທ້າວມຫາຣາຊທັງ ໔

[໔໐] ຄັ້ງນັ້ນ ພຣະຜູ້ມີພຣະພາກປະທັບຢູ່ ນະ ໄພຣສົນທ໌ແຫ່ງນຶ່ງ ບໍ່ໄກຈາກອາສົມຂອງຊດິລອຸຣຸເວລກັສສປະ ເມື່ອຣາຕຣີຜ່ານໄປແລ້ວ໑ ທ້າວມຫາຣາຊທັງ ໔ ເປັ່ງຣັສມີງາມຍັງໄພຣສົນທ໌ທັງສິ້ນໃຫ້ສວ່າງໄສວ ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອະພິວາທພຣະຜູ້ມີພຣະພາກແລ້ວໄດ້ຢືນເຝົ້າທັງ ໔ ທິສ ດຸຈກອງໄຟໃຫຍ່ສະນັ້ນ ຄັນຣາຕຣີນັ້ນຜ່ານໄປ ຊດິລອຸຣຸເວລກັສສປະໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ຂ້າແຕ່ມຫາສະມະນະ ໄດ້ເວລາແລ້ວພັຕຕາຫາຣເສັດແລ້ວ ທ່ານພຣະມຫາສະມະນະເມື່ອຣາຕຣີຜ່ານໄປແລ້ວ ພວກນັ້ນຄືໃຜກັນຫນໍ ເປັ່ງຣັສມີງາມຍັງໄພຣສົນທ໌ທັງສິ້ນໃຫ້ສວ່າງໄສວເຂົ້າມາເຝົ້າພຣະອົງຄ໌ ຖວາຍອະພິວາທແລ້ວໄດ້ຢືນເຝົ້າທັງ ໔ ທິສ ດຸຈກອງໄຟໃຫຍ່ສະນັ້ນ" ພຣະຜູ້ມີພຣະພາກຕຣັສວ່າ "ກັສສປະ ພວກນັ້ນ ຄື ທ້າວມຫາຣາຊທັງ ໔ ເຂົ້າມາຫາເຮົາເພື່ອຟັງທັມ" ຂນະນັ້ນ ຊດິລອຸຣຸເວລກັສສປະໄດ້ມີຄວາມຄິດດັ່ງນີ້ວ່າ "ພຣະມຫາສະມະນະມີຣິທທິ໌ມາກ ມີອານຸພາພມາກແມ່ນແທ້ເຖິງກັບທ້າວມຫາຣາຊທັງ ໔ ເຂົ້າມາເຝົ້າເພື່ອຟັງທັມ ແຕ່ບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່" ພຣະຜູ້ມີພຣະພາກສເວີຍພັຕຕາຫາຣຂອງຊດິລອຸຣຸເວລກັສສປະ ແລ້ວປະທັບຢູ່ທີ່ໄພຣສົນທ໌ແຫ່ງນັ້ນ

ປາຕິຫາຣິຍ໌ທີ ໔ ຈົບ

ປາຕິຫາຣິຍ໌ທີ ໕

ເຣື້ອງທ້າວສັກກະ

[໔໑] ຄັ້ງນັ້ນ ເມື່ອຣາຕຣີຜ່ານໄປແລ້ວ ທ້າວສັກກະຈອມເທພ ເປັ່ງຣັສມີງາມຍັງໄພຣສົນທ໌ທັງສິ້ນໃຫ້ສວ່າງໄສວ ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອະພິວາທພຣະຜູ້ມີພຣະພາກແລ້ວປະທັບຢືນ ນະທີ່ສົມຄວຣ ດຸຈກອງໄຟໃຫຍ່ທີ່ງາມແລະປານີຕກວ່າຣັສມີກ່ອນ

ໝາຍເຫດ :

໑ ເມື່ອຣາຕຣີຜ່ານໄປ ໃນທີ່ນີ້ຫມາຍເຖິງຣາຕຣີໃນຊ່ວງແຫ່ງປຖົມຍາມ(ຍາມທີ ໑)ຜ່ານໄປ ເພາະ

ເວລາທ່ຽງຄືນ ເປັນຊ່ວງທີ່ເທວດາເຂົ້າເຝົ້າພຣະພຸດທະເຈົ້າ (ຊຸ. ຊຸ. ອ. ໓໓)

ຄັນຣາຕຣີນັ້ນຜ່ານໄປ ອຸຣຸເວລກັສສະປະໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ຂ້າແຕ່ມຫາສະມະນະ ໄດ້ເວລາແລ້ວ ພັຕຕາຫານເສັດແລ້ວ ຂ້າແຕ່ພຣະມຫາສະມະນະ ຜູ້ນັ້ນ ຄືໃຜກັນຫນໍ ເມື່ອຣາຕຣີຜ່ານໄປແລ້ວເປັ່ງຣັສມີງາມຍັງໄພຣສນທ໌ທັງສິ້ນໃຫ້ສວ່າງໄສວ ເຂົ້າມາເຝົ້າພຣະອົງຄ໌ ຖວາຍອະພິວາທແລ້ວໄດ້ຢືນ ນະທີ່ສົມ ຄວຣ ດຸຈກອງໄຟໃຫຍ່ທີ່ງາມແລະປານີຕກວ່າຣັສມີກ່ອນ" ພຣະຜູ້ມີພຣະພາກຕຣັສວ່າ "ກັສສະປະ ຜູ້ນັ້ນ ຄືທ້າວສັກກະຈອມເທພ ເຂົ້າມາຫາເຮົາເພື່ອຟັງທັມ" ຂນະນັ້ນ ອຸຣຸເວລກັສສະປະໄດ້ມີຄວາມຄິດດັ່ງນີ້ວ່າ "ພຣະມຫາສະມະນະມີຣິທທິມາກ ມີອານຸພາພມາກແມ່ນແທ້ເຖິງກັບທ້າວສັກກະຈອມເທພເຂົ້າມາຫາເພື່ອຟັງທັມ ແຕ່ບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່" ພຣະຜູ້ມີພຣະພາກສເວີຍພັຕຕາຫານຂອງອຸຣຸເວລກັສສະປະ ແລ້ວປະທັບຢູ່ທີ່ໄພຣສນທ໌ແຫ່ງນັ້ນ

ປາຕິຫາຣິຍ໌ທີ ໓ ຈົບ

ປາຕິຫາຣິຍ໌ທີ ໔

ເຣື່ອງທ້າວສຫັມບດີພຣົມ

[໔໔] ຄັ້ງນັ້ນ ເມື່ອຣາຕຣີຜ່ານໄປແລ້ວ ທ້າວສຫັມບດີພຣົມ ເປັ່ງຣັສມີງາມຍັງໄພຣສນທ໌ທັງສິ້ນໃຫ້ສວ່າງໄສວ ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອະພິວາທພຣະຜູ້ມີພຣະພາກແລ້ວປະທັບຢືນ ນະທີ່ຄວຣ ດຸຈກອງໄຟໃຫຍ່ທີ່ງາມແລະປານີຕກວ່າຣັສມີກ່ອນ ຄັນຣາຕຣີນັ້ນຜ່ານໄປ ອຸຣຸເວລກັສສະປະໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ຂ້າແຕ່ມຫາສະມະນະ ໄດ້ເວລາແລ້ວ ພັຕຕາຫານເສັດແລ້ວ ຂ້າແຕ່ມຫາສະມະນະ ຜູ້ນັ້ນຄືໃຜກັນຫນໍ ເມື່ອຣາຕຣີຜ່ານໄປແລ້ວເປັ່ງຣັສມີງາມຍັງໄພຣສນທ໌ທັງສິ້ນໃຫ້ສວ່າງໄສວ ເຂົ້າມາເຝົ້າພຣະອົງຄ໌ ຖວາຍອະພິວາທແລ້ວໄດ້ຢືນ ນະທີ່ສົມຄວຣ ດຸຈກອງໄຟໃຫຍ່ທີ່ງາມແລະປານີຕກວ່າຣັສມີກ່ອນ" ພຣະຜູ້ມີພຣະພາກຕຣັສວ່າ "ກັສສະປະ ຜູ້ນັ້ນ ຄືທ້າວສຫັມບດີພຣົມ ເຂົ້າມາຫາເຮົາເພື່ອຟັງທັມ" ຂນະນັ້ນ ອຸຣຸເວລກັສສະປະໄດ້ມີຄວາມຄິດດັ່ງນີ້ວ່າ "ພຣະມຫາສະມະນະມີຣິທທິມາກ ມີອານຸພາພມາກແມ່ນແທ້ເຖິງກັບທ້າວສຫັມບດີພຣົມເຂົ້າມາຫາເພື່ອຟັງທັມ

ແຕ່ບໍ່ເປັນພຣະອຣຫັນຕ໌ເໝືອນເຮົາແນ່” ພຣະຜູ້ມີພຣະພາກສເວີຍພັດຕາຫານຂອງຊດີລອຸຣຸເວລກັສສປະ ແລ້ວປະທັບຢູ່ທີ່ໄພຣສຸນຫ໌ແຫ່ງນັ້ນ

ປາຕິຫາຣິຍ໌ທີ ໔ ຈົບ

ປາຕິຫາຣິຍ໌ທີ ໕

ເຣື່ອງຊາວອັງຄະແລະມຄທ

[໔໓] ສມັຍນັ້ນ ຊດີລອຸຣຸເວລກັສສປະໄດ້ກະກຽມການບູຊາຍັນອັນຍິ່ງໃຫຍ່ ປະຊາຊົນຊາວອັງຄະແລະຊາວມຄທທັງສິ້ນ ຕ່າງຖືຂອງຄ້ຽວຂອງບໍຣິໂພຄເປັນອັນມາກມຸ່ງໜ້າໄປຫາຊດີລອຸຣຸເວລກັສສປະຄິດວ່າ “ບັດນີ້ເຮົາໄດ້ກະກຽມການບູຊາຍັນອັນຍິ່ງໃຫຍ່ ປະຊາຊົນຊາວອັງຄະແລະມຄທທັງສິ້ນຈັກ ຖືຂອງຄ້ຽວຂອງບໍຣິໂພຄເປັນອັນມາກມຸ່ງໜ້າມາຫາ ຖ້າພຣະມຫາສະມະນະຈະເຮັດອິທທິປາຕິຫາຣິຍ໌ໃນໝູ່ມຫາຊົນແລ້ວ ລາພສັກການະຈັກຈະເຣີນຍິ່ງແກ່ພຣະມຫາສະມະນະ ລາພສັກການະຂອງເຮົາຈັກເສື່ອມ ທຳຈັ່ງໃດ ມື້ອື່ນນີ້ ພຣະມຫາສະມະນະຈຶ່ງຈະບໍ່ສເດັຈມາສັນ” ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງຊາບຄວາມຄຳຄວນໃນໃຈຂອງຊດີລອຸຣຸເວລກັສສປະດ້ວຍພຣະທັຍ ຈຶ່ງສເດັຈໄປຍັງອຸຕຕຣກຸຣຸທວີປຊົງນຳບິນທບາຕຈາກທວີປນັ້ນມາສເວີຍທີ່ຣິມສຣະອໂນດາຕ1 ປະທັບພັກກາງເວັນ ນະທີ່ນັ້ນ

ໝາຍເຫດ :

1 ສຣະອໂນດາຕ ມີຂນາດຍາວ ກວ້າງ ແລະເລິກ ໕໐ ໂຍຊນ໌ ມີອານາບໍຣິເວນໂດຍຮອບ ໑໕໐ ໂຍຊນ໌ ຕັ້ງຢູ່ໃນປ່າຫິມພານຕ໌ແວດລ້ອມດ້ວຍຍອດເຂົາທັງ ໕ ຄື ສຸທັສສນກູຕ ຈິຕຣກູຕ ກາຣກູຕ ຄັນທມາທນກູຕ ແລະເກົາສກູຕ(ມ. ມ. ອ. ໒/໓໑/໔໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໔. ອຸຣຸເວລປາດີຫາຣິຍກຖາ

ຄັນຣາຕຣີນັ້ນຜ່ານໄປ ຊດີລອຸຣຸເວລກັສສປະໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຂາບທູລວ່າ “ຂ້າແຕ່ມຫາສະມະນະ ໄດ້ເວລາແລ້ວ ພັດຕາຫານເສັດແລ້ວ ຂ້າແຕ່ມຫາສະມະນະ ເປັນຫຍັງຫນໍວານນີ້ພຣະອົງຄ໌ຈຶ່ງບໍ່ສເດັຈມາ ອີກຢ່າງນຶ່ງ ພວກຂ້າພະເຈົ້າຣະນຶກເຖິງພຣະອົງຄ໌ວ່າ ເປັນຫຍັງຫນໍພຣະມຫາສະມະນະຈຶ່ງບໍ່ສເດັຈມາ ແຕ່ສ່ວນແຫ່ງຂອງຄ້ຽວຂອງສັນ ຂ້າພະເຈົ້າໄດ້ຈັດໄວ້ເພື່ອ

ພຣະອົງຄ໌ແລ້ວ" ພຣະຜູ້ມີພຣະພາກຊົງຍ້ອນຖາມວ່າ "ກັສສປະ ທ່ານໄດ້ດຳຣິໄວ້ບໍ່ແມ່ນບໍວ່າ ບັດນີ້ເຮົາໄດ້ກະກຽມການບູຊາຍັນອັນຍິ່ງໃຫຍ່ ປະຊາຊົນຊາວອັງຄະແລະມຄທັງສິ້ນຈັກຖືຂອງຄ້ຽວຂອງສັນເປັນອັນມາກມຸ່ງຫນ້າມາຫາ ຖ້າພຣະມຫາສະມະນະຈະເຮັດອິທທິປາຕິຫາຣິຍ໌ ໃນຫມູ່ມຫາຊົນແລ້ວລາພສັກກາຣະຈັກຈະເຣີນຍິ່ງແກ່ພຣະມຫາສະມະນະ ລາພສັກກາຣະຂອງເຮົາຈັກເສື່ອມ ທຳຈັ່ງໃດ ມື້ອື່ນນີ້ ພຣະມຫາສະມະນະຈຶ່ງຈະບໍ່ສເດັຈມາສັນ ກັສສປະ ເຮົາໄດ້ຊາບດ້ວຍໃຈເຖິງຄວາມຄ່ຳຄອນໃນໃຈຂອງທ່ານ ຈຶ່ງໄປຍັງອຸຕຕຣກຸຣຸທວີປ ນຳບິນທບາຕຈາກທວີປນັ້ນມາສັນທີ່ຣິມສຣະອໂນດາຕ ພັກກາງເວັນ ນະທີ່ນັ້ນ" ຂນະນັ້ນ ຊດິລອຸຣຸເວລກັສສປະຄິດວ່າ "ພຣະມຫາສະມະນະມີຣິທທິ໌ມາກ ມີອານຸພາພມາກແມ່ນແທ້ເຖິງກັບຊົງຊາບຄວາມນຶກຄິດແມ່ນດ້ວຍໃຈໄດ້ ແຕ່ບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່" ພຣະຜູ້ມີພຣະພາກສເວີຍພັຕຕາຫາຣຂອງຊດິລອຸຣຸເວລກັສສປະ ແລ້ວປະທັບຢູ່ທີ່ໄພຣສນທ໌ແຫ່ງນັ້ນ

ປາຕິຫາຣິຍ໌ຄັ້ງທີ ໕ ຈົບ

ເຣື້ອງຜ້າບັງສຸກຸລ

[໔໔] ສມັຍນັ້ນ ຜ້າບັງສຸກຸລເກີດຂຶ້ນແກ່ພຣະຜູ້ມີພຣະພາກ ພຣະອົງຄ໌ໄດ້ຊົງພຣະດຳຣິດັ່ງນີ້ວ່າ "ເຮົາຈະຄວນຊັກຜ້າບັງສຸກຸລທີ່ໃດຫນໍ" ລຳດັບນັ້ນ ທ້າວສັກກະຈອມເທພຊົງຊາບພຣະດຳຣິໃນພຣະຫັຍຂອງພຣະຜູ້ມີພຣະພາກດ້ວຍພຣະຫັຍ ຈຶ່ງຊົງໃຊ້ຝ່າພຣະຫັຕຖ໌ຂຸດສຣະໂບກຂຣນີແລ້ວທູລວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍພຣະອົງຄ໌ໂປຣດຊົງຊັກຜ້າບັງສຸກຸລໃນສຣະນີ້ເຖີດ" ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງພຣະດຳຣິດັ່ງນີ້ວ່າ "ເຮົາຈະຄວນຄັ້ນຜ້າບັງສຸກຸລທີ່ໃດຫນໍ" ລຳດັບນັ້ນ ທ້າວສັກກະຈອມເທພຊົງຊາບພຣະດຳຣິໃນພຣະຫັຍຂອງພຣະຜູ້ມີພຣະພາກດ້ວຍພຣະຫັຍ ຈຶ່ງຊົງຍົກສີລາແຜ່ນໃຫຍ່ມາວາງໄວ້ທູລວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍພຣະອົງຄ໌ໂປຣດຊົງຄັ້ນຜ້າບັງສຸກຸລບນສີລານີ້ເຖີດ" ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງພຣະດຳຣິດັ່ງນີ້ວ່າ "ເຮົາຈະຄວນພາດຜ້າບັງສຸກຸລໄວ້ທີ່ໃດຫນໍ" ລຳດັບນັ້ນ ເທວດາຜູ້ສິງສຖິຕຢູ່ທີ່ຕົ້ນກຸ່ມຊາບພຣະດຳຣິໃນພຣະຫັຍຂອງພຣະຜູ້ມີພຣະພາກດ້ວຍໃຈ ຈຶ່ງໄດ້ນ້ອມກິ່ງກຸ່ມລົງມາ ຂາບທູລວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍພຣະອົງຄ໌ໂປຣດຊົງພາດຜ້າບັງສຸກຸລ ທີ່ກິ່ງກຸ່ມນີ້ເຖີດ" ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງພຣະດຳຣິດັ່ງນີ້ວ່າ "ເຮົາຈະຄວນຜຶ່ງຜ້າບັງສຸກຸລໄວ້ທີ່ໃດຫນໍ" ລຳດັບນັ້ນ ທ້າວສັກກະຈອມເທພຊົງຊາບພຣະດຳຣິໃນພຣະຫັຍຂອງພຣະຜູ້ມີພຣະພາກດ້ວຍພຣະຫັຍ ຈຶ່ງຊົງຍົກສີລາແຜ່ນໃຫຍ່ມາວາງໄວ້ທູລວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍພຣະອົງຄ໌ໂປຣດຊົງຜຶ່ງຜ້າບັງສຸກຸລໄວ້ເທິງສີລານີ້ເຖີດ" ຄັນຣາຕຣີນັ້ນຜ່ານໄປ ຊດິລອຸຣຸເວລກັສສປະໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະ

ພຼາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະຜູ້ມີພຣະພຼາກດັ່ງນີ້ວ່າ "ຂ້າແຕ່ພຣະມຫາສະມະນະ ໄດ້ເວລາແລ້ວພັຕຕາຫານເສັດແລ້ວ ຂ້າແຕ່ພຣະມຫາສະມະນະ ເມື່ອກ່ອນສຣະໂບກຂຣນີນີ້ບໍ່ມີທີ່ຕຣົງນີ້ເປັນຫຍັງ ທີ່ຕຣົງນີ້ຈຶ່ງມີສຣະໂບກຂຣນີຢູ່ ເມື່ອກ່ອນສີລາເຫລົ່ານີ້ບໍ່ມີວາງຢູ່ ສີລາເຫລົ່ານີ້ ໃຜຍົກມາວາງໄວ້ ເມື່ອກ່ອນກິ່ງກຸ່ມຕົ້ນນີ້ບໍ່ນ້ອມລົງ(ດຽວນີ້)ກິ່ງກຸ່ມຕົ້ນນີ້ກັບນ້ອມລົງ"

ເລື້ອງສຣະໂບກຂຣນີ

ພຣະຜູ້ມີພຣະພຼາກຕຣັສວ່າ "ກັສສປະ ຜ້າບັງສຸກຸລເກີດຂື້ນແກ່ເຮົາທີ່ນີ້ ເຮົາໄດ້ຄິດດັ່ງນີ້ວ່າຈະຄວນຊັກຜ້າບັງສຸກຸລທີ່ໃດຫນໍ ລຳດັບນັ້ນ ທ້າວສັກກະຈອມເທພຊົງຊາບຄວາມຄຳຄວນໃນໃຈຂອງເຮົາດ້ວຍພຣະທັຍ ຈຶ່ງຊົງໃຊ້ພຣະຫັຕຖ໌ຂຸດສຣະໂບກຂຣນີແລ້ວທູລວ່າ 'ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍພຣະຜູ້ມີພຣະພຼາກໂປຣດຊົງຊັກຜ້າບັງສຸກຸລໃນສຣະນີ້ເຖີດ' ສຣະໂບກຂຣນີນີ້ອັນຜູ້ທີ່ບໍ່ແມ່ນມະນຸສຍ໌ໃຊ້ມືຂຸດ

ເລື້ອງຄັ້ນຜ້າບັງສຸກຸລເທິງແຜ່ນສີລາ

ກັສສປະ ເຮົາໄດ້ດຳຣິ(ຕໍ່ໄປ)ວ່າ 'ຈະຄວນຄັ້ນຜ້າບັງສຸກຸລທີ່ໃດຫນໍ' ລຳດັບນັ້ນທ້າວສັກກະຈອມເທພຊົງຊາບຄວາມດຳຣິໃນໃຈຂອງເຮົາດ້ວຍພຣະທັຍ ຈຶ່ງຍົກສີລາແຜ່ນໃຫຍ່ມາວາງໄວ້ທູລວ່າ 'ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍພຣະອົງຄ໌ໂປຣດຊົງຄັ້ນຜ້າບັງສຸກຸລເທິງແຜ່ນສີລານີ້ເຖີດ' ສີລານີ້ອັນຜູ້ທີ່ບໍ່ແມ່ນມະນຸສຍ໌ໄດ້ຍົກມາວາງໄວ້

ເລື້ອງພາດຜ້າບັງສຸກຸລເທິງຕົ້ນກຸ່ມ

ກັສສປະ ເຮົາໄດ້ດຳຣິ(ຕໍ່ໄປ)ວ່າ 'ຈະຄວນພາດຜ້າບັງສຸກຸລໄວ້ທີ່ໃດຫນໍ' ລຳດັບນັ້ນ ເທວດາຜູ້ສິງສຖິຕຢູ່ທີ່ຕົ້ນກຸ່ມຊາບຄວາມດຳຣິໃນໃຈຂອງເຮົາດ້ວຍໃຈ ຈຶ່ງໄດ້ນ້ອມກິ່ງກຸ່ມລົງມາຂາບທູລວ່າ 'ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍພຣະຜູ້ມີພຣະພຼາກໂປຣດຊົງພາດຜ້າບັງສຸກຸລໄວ້ທີ່ກິ່ງກຸ່ມນີ້ເຖີດ' ຕົ້ນກຸ່ມນີ້ໄດ້ນ້ອມລົງດຸຈຈະຂາບທູລວ່າ 'ໂປຣດຊົງເອື້ອມພຣະຫັຕຖ໌ມາເຖີດ'

ເລື້ອງຜື່ງຜ້າບັງສຸກຸລເທິງແຜ່ນສີລາ

ກັສສປະ ເຮົາໄດ້ດຳຣິ(ຕໍ່ໄປ)ວ່າ 'ຈະຄວນຜື່ງຜ້າບັງສຸກຸລໄວ້ທີ່ໃດຫນໍ' ລຳດັບນັ້ນທ້າວສັກກະຈອມເທພຊົງຊາບຄວາມດຳຣິໃນໃຈຂອງເຮົາດ້ວຍພຣະທັຍ ຈຶ່ງຍົກສີລາແຜ່ນໃຫຍ່ມາວາງໄວ້ທູລວ່າ 'ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂໍພຣະຜູ້ມີພຣະພຼາກໂປຣດຊົງຜື່ງຜ້າບັງສຸກຸລໄວ້ເທິງແຜ່ນສີລານີ້ເຖີດ' ສີລານີ້ອັນຜູ້ທີ່ບໍ່ແມ່ນມະນຸສຍ໌ໄດ້ຍົກມາວາງໄວ້ ຂນະນັ້ນ ຊດິລອຸຣຸເວລກັສສປະຄິດວ່າ "ພຣະມຫາສະມະນະມີຣິທທີ່ມາກ ມີອານຸພຼາພມາກແມ່ນແທ້ເຖິງກັບທ້າວສັກກະຈອມເທພໄດ້ຊົງທຳການຊ່ວຍ ເຫລືອ

ແຕ່ບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່" ພຣະຜູ້ມີພຣະພາກສເວີຍພັຕຕາຫາຣຂອງຊດິລອຸຣຸເວລກັສສປະ ແລ້ວປະທັບຢູ່ທີ່ໄພຣສນທ໌ແຫ່ງນັ້ນ

ປາຕິຫາຣິຍ໌ເກັບໝາກຫວ້າ

ຄັນຣາຕຣີນັ້ນຜ່ານໄປ ຊດິລອຸຣຸເວລກັສສປະໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາກ ຄັນເຖິງແລ້ວຈຶ່ງຂາບທູລບອກພັຕຕກາລວ່າ "ຂ້າແຕ່ພຣະມຫາສະມະນະ ໄດ້ເວລາແລ້ວ ພັຕຕາຫາຣເສັດແລ້ວ" ພຣະຜູ້ມີພຣະພາກຕຣັສວ່າ "ໄປເຖີດ ກັສສປະ ເຮົາຈະຕາມໄປ" ຄັນສົ່ງຊດິລອຸຣຸເວລກັສສປະໄປ ຊົງເກັບໝາກຫວ້າຈາກຕົ້ນຫວ້າທີ່ມີຢູ່ໃນຊົມພູທວີປ ແລ້ວສເດັຈມາປະທັບນັ່ງໃນໂຮງໄຟກ່ອນຊດິລອຸຣຸເວລກັສສປະເຫັນພຣະຜູ້ມີພຣະພາກປະທັບນັ່ງໃນໂຮງໄຟ ຄັນເຫັນແລ້ວໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ຂ້າແຕ່ມຫາສະມະນະ ພຣະອົງຄ໌ສເດັຈມາທາງໃດ ຂ້າພະເຈົ້າ ກັບມາກ່ອນພຣະອົງຄ໌ ແຕ່ພຣະອົງຄ໌ສເດັຈມາປະທັບນັ່ງໃນໂຮງໄຟກ່ອນ" ພຣະຜູ້ມີພຣະພາກຕຣັສວ່າ "ກັສສປະ ເຮົາສົ່ງທ່ານໄປແລ້ວກໍເກັບໝາກຫວ້າຈາກຕົ້ນຫວ້າທີ່ມີຢູ່ໃນຊົມພູທວີປ ແລ້ວມານັ່ງໃນໂຮງໄຟນີ້ກ່ອນ ກັສສປະ ໝາກຫວ້ານີ້ແລສົມບູນດ້ວຍສີ ກິ່ນ ແລະຣົສ ຖ້າທ່ານຕ້ອງກາຣ ກໍເຊີນບໍຣິໂພຄຜົລຫວ້າເຖີດ" ຊດິລອຸຣຸເວລກັສສປະທູລວ່າ "ຢ່າເລີຍ ມຫາສະມະນະ, ພຣະອົງຄ໌ນັ້ນແຫລະຍ່ອມຄວຣກັບໝາກຫວ້າ ນັ້ນໂປຣດສເວີຍຜົລຫວ້ານັ້ນເຖີດ" ຂນະນັ້ນ ຊດິລອຸຣຸເວລກັສສປະຄິດວ່າ "ພຣະມຫາສະມະນະມີຣິທທິ໌ມາກ ມີອານຸພາພມາກແມ່ນແທ້ເຖິງກັບສົ່ງເຮົາກັບມາກ່ອນ ຊົງເກັບໝາກຫວ້າຈາກຕົ້ນຫວ້າ ທີ່ມີຢູ່ໃນຊົມພູທວີປແລ້ວສເດັຈມາປະທັບນັ່ງໃນໂຮງໄຟກ່ອນ ແຕ່ບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່" ພຣະຜູ້ມີພຣະພາກສເວີຍພັຕຕາຫາຣຂອງຊດິລອຸຣຸເວລກັສສປະ ແລ້ວປະທັບຢູ່ທີ່ໄພຣສນທ໌ແຫ່ງນັ້ນ

ປາຕິຫາຣິຍ໌ເກັບຜົລຫມາກມ່ວງ ຜົລຫມາກຂາມປ້ອມ ດອກປາຣິສັຕຣ

[៤៥] ຄັນຣາຕຣີນັ້ນຜ່ານໄປ ຊດິລອຸຣຸເວລກັສສປະໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວຈຶ່ງຂາບທູລບອກພັຕຕກາລວ່າ "ຂ້າແຕ່ມຫາສະມະນະ ໄດ້ເວລາແລ້ວ ພັຕຕາຫາຣເສັດແລ້ວ" ພຣະຜູ້ມີພຣະພາກຕຣັສວ່າ "ໄປເຖີດ ກັສສປະ ເຮົາຈະຕາມໄປ" ຄັນສົ່ງຊດິລອຸຣຸເວລກັສສປະໄປ ຊົງເກັບຜົລຫມາກມ່ວງ ຯລຯ ຜົລຫມາກຂາມປ້ອມ ຯລຯ ໝາກສະໝໍ ນະທີ່ອັນບໍ່ໄກຈາກ ຕົ້ນຫວ້າທີ່ມີຢູ່ໃນຊົມພູທວີປ ຯລຯ ສເດັຈໄປສູ່ພິພດາວດຶງສ໌ ຊົງເກັບດອກປາຣິສັຕຣແລ້ວສເດັຈ ລົງມາປະທັບນັ່ງໃນໂຮງໄຟກ່ອນ ຊດິລອຸຣຸເວລກັສສປະເຫັນພຣະຜູ້ມີພຣະພາກປະທັບນັ່ງໃນໂຮງໄຟ ຈຶ່ງທູລຖາມວ່າ "ຂ້າແຕ່ມຫາສະມະນະ ພຣະອົງຄ໌ສເດັຈມາທາງໃດ ຂ້າພະເຈົ້າກັບມາກ່ອນພຣະອົງຄ໌ ແຕ່ພຣະອົງຄ໌ສເດັຈມາປະທັບນັ່ງໃນໂຮງໄຟກ່ອນ" ພຣະຜູ້ມີພຣະພາກຕຣັສວ່າ "ກັສສປະ ເຮົາສົ່ງທ່ານໄປແລ້ວກໍ

ໄປຍັງພິພດາວດຶງສ໌ ເກັບດອກປາຣິສັຕຣ ແລ້ວລົງມານັ່ງໃນໂຮງໄຟກ່ອນ ກັສສປະ ດອກປາຣິສັຕຣນີ້ສົມບູນດ້ວຍສີແລະກິ່ນ" ຂນະນັ້ນ ຊຕິລອຸຣຸເວລກັສສປະຄິດວ່າ "ພຣະມຫາສະມະນະມີຣິທຫີ້ມາກ ມີອານຸພາພມາກແມ່ນແທ້ເຖິງກັບສັ່ງເຮົາກັບມາກ່ອນ ສເດັຈໄປຍັງພິພດາວດຶງສ໌ຊິງເກັບດອກປາຣິສັຕຣແລ້ວສເດັຈລົງມາປະທັບນັ່ງໃນໂຮງໄຟກ່ອນ ແຕ່ບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່"

ເຣື້ອງພວກຊຕິລຜ່າຟືນ

[໔໘] ສມັຍນັ້ນ ຊຕິລເຫລົ່ານັ້ນຕ້ອງການຈະດັງເຕົາໄຟ ແຕ່ບໍ່ອາຈຈະຜ່າຟືນໄດ້ ຄັ້ງນັ້ນ ຊຕິລເຫລົ່ານັ້ນໄດ້ມີຄວາມຄິດດັ່ງນີ້ວ່າ "ການທີ່ພວກເຮົາບໍ່ອາຈຈະຜ່າຟືນໄດ້ ຄົງເປັນອິທຫານຸພາພຂອງພຣະມຫາສະມະນະໂດຍບໍ່ຕ້ອງສົງສັຍເລີຍ" ລຳດັບນັ້ນ ພຣະຜູ້ມີພຣະພາກໄດ້ຕຣັສກັບຊຕິລອຸຣຸເວລກັສສປະວ່າ "ກັສສປະ ພວກຊຕິລຈົ່ງຜ່າຟືນເຖີດ" ຊຕິລອຸຣຸເວລກັສສປະທູລຮັບພຣະດຳຣັສວ່າ "ຂ້າແຕ່ມຫາສະມະນະ ພວກຊຕິລຈົ່ງຜ່າຟືນ" ຊຕິລທັງຫລາຍໄດ້ຜ່າຟືນ ໕໐໐ ທ່ອນ ໂດຍການຜ່າຄັ້ງດຽວເທົ່ານັ້ນ ຂນະນັ້ນ ຊຕິລອຸຣຸເວລກັສສປະຄິດວ່າ "ພຣະມຫາສະມະນະມີຣິທຫີ້ມາກ ມີອານຸພາພມາກແມ່ນແທ້ເຖິງກັບໃຫ້ພວກຊຕິລຜ່າຟືນໄດ້ ແຕ່ບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່"

ເຣື້ອງພວກຊຕິລກໍ່ໄຟ

[໔໗] ສມັຍນັ້ນ ຊຕິລເຫລົ່ານັ້ນຕ້ອງການຈະບູຊາໄຟ ແຕ່ບໍ່ອາຈຈະກໍ່ໄຟໃຫ້ລຸກໄດ້ ຄັ້ງນັ້ນ ຊຕິລເຫລົ່ານັ້ນໄດ້ມີຄວາມຄິດດັ່ງນີ້ວ່າ "ການທີ່ພວກເຮົາບໍ່ອາຈຈະກໍ່ໄຟໃຫ້ລຸກໄດ້ ຄົງເປັນອິທຫານຸພາພຂອງພຣະມຫາສະມະນະໂດຍບໍ່ຕ້ອງສົງສັຍເລີຍ" ລຳດັບນັ້ນ ພຣະຜູ້ມີພຣະພາກໄດ້ຕຣັສກັບຊຕິລອຸຣຸເວລກັສສປະວ່າ "ກັສສປະ ພວກຊຕິລຈົ່ງກໍ່ໄຟໃຫ້ລຸກຂຶ້ນເຖີດ" ຊຕິລອຸຣຸເວລກັສສປະທູລຮັບພຣະດຳຣັສວ່າ "ຂ້າແຕ່ມຫາສະມະນະ ພວກຊຕິລຈົ່ງກໍ່ໄຟໃຫ້ລຸກຂຶ້ນ" ໄຟທັງ ໕໐໐ ກອງ ໄດ້ລຸກຂຶ້ນພ້ອມກັນທີດຽວ ຂນະນັ້ນ ຊຕິລອຸຣຸເວລກັສສປະຄິດວ່າ "ພຣະມຫາສະມະນະມີຣິທຫີ້ມາກ ມີອານຸພາພມາກຈິງເຖິງກັບໃຫ້ໄຟລຸກຂຶ້ນໄດ້ ແຕ່ບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່"

ເຣື້ອງພວກຊຕິລດັບໄຟ

[໔໘] ສມັຍນັ້ນ ຊຕິລເຫລົ່ານັ້ນບູຊາໄຟກັນແລ້ວ ແຕ່ບໍ່ອາຈຈະດັບໄຟໄດ້ ລຳດັບນັ້ນ ຊຕິລເຫລົ່ານັ້ນໄດ້ມີຄວາມຄິດດັ່ງນີ້ວ່າ "ການທີ່ພວກເຮົາບໍ່ອາຈຈະດັບໄຟໄດ້ ຄົງເປັນອິທຫານຸພາພຂອງພຣະມຫາສະມະນະໂດຍບໍ່ຕ້ອງສົງສັຍເລີຍ" ລຳດັບນັ້ນ ພຣະຜູ້ມີພຣະພາກໄດ້ຕຣັສກັບຊຕິລອຸຣຸເວລກັສສປະວ່າ "ກັສສປະ ພວກຊຕິລຈົ່ງດັບໄຟເຖີດ" ຊຕິລອຸຣຸເວລກັສສປະທູລຮັບພຣະດຳຣັສວ່າ "ຂ້າແຕ່

ມຫາສະມະນະ ພວກຊະດິລຈິ່ງດັບໄຟ” ໄຟທັງ ໕໐໐ ກອງ ໄດ້ດັບພ້ອມກັນທີດຽວ ຂນະນັ້ນ ຊະດິລອຸຣຸເວລກັສສປະຄິດວ່າ “ພຣະມຫາສະມະນະມີຣິທທິ໌ມາກ ມີອານຸພາພມາກຈິງເຖິງກັບໃຫ້ພວກຊະດິລດັບໄຟໄດ້ ແຕ່ບໍ່ເປັນພຣະອຣຫັນຕ໌ເໝືອນເຮົາແນ່”

ເຣື້ອງພວກຊະດິລດຳນ້ຳ

[໔໙] ສະມັຍນັ້ນ ຊະດິລເຫລົ່ານັ້ນພາກັນດຳລົງແດ່ ຜຸດຂຶ້ນແດ່ ທັງດຳທັງຜຸດແດ່ໃນແມ່ນ້ຳເນຣັຍຊະຣາໃນຣາຕຣີເໝັນຕຣະດູອັນໜາວເຢັນຄາວຫິມະຕົກ ຢູ່ໃນຣະຫວ່າງປາຍເດືອນ ໓ ກັບຕົ້ນເດືອນ ໔

ເຣື້ອງພາຊນະໃສ່ໄຟ

ຄັ້ງນັ້ນ ພຣະຜູ້ມີພຣະພາກໄດ້ຊົງເນຣມິຕພາຊນະໃສ່ໄຟໄວ້ ໕໐໐ ຊຸດ ສຳລັບໃຫ້ຊະດິລເຫລົ່ານັ້ນຂຶ້ນຈາກນ້ຳຈະໄດ້ຜີງ ລຳດັບນັ້ນ ຊະດິລເຫລົ່ານັ້ນມີຄວາມຄິດດັ່ງນີ້ວ່າ “ການທີ່ພາຊນະໃສ່ໄຟເຫລົ່ານີ້ໄດ້ຖືກເນຣມິຕໄວ້ ຄົງເປັນເພາະອິທທານຸພາພຂອງພຣະມຫາສະມະນະໂດຍບໍ່ຕ້ອງສົງສັຍເລີຍ” ຂນະ ນັ້ນ ຊະດິລອຸຣຸເວລກັສສປະຄິດດັ່ງນີ້ວ່າ “ພຣະມຫາສະມະນະມີຣິທທິ໌ມາກ ມີອານຸພາພມາກແມ່ນແທ້ເຖິງກັບເນຣມິຕພາຊນະໃສ່ໄຟໄວ້ມາກມາຍເຖິງພຽງນັ້ນ ແຕ່ບໍ່ເປັນພຣະອຣຫັນຕ໌ເໝືອນເຮົາແນ່”

ເຣື້ອງຝົນຕົກນ້ຳທ້ວມ

[໕໐] ສະມັຍນັ້ນ ຝົນໃຫຍ່ນອກຣະດູກາລຕົກລົງ ເກີດຫ້ວງນ້ຳໃຫຍ່ ສະຖານທີ່ທີ່ພຣະຜູ້ມີພຣະພາກປະທັບຢູ່ກໍຖືກນ້ຳທ້ວມ ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງພຣະດຳຣິວ່າ “ຖ້າຢ່າງໃດ ເຮົາຄວນຂັບນ້ຳໃຫ້ອອກໄປໂດຍຣອບ ແລ້ວຈົງກົມບົນພື້ນດິນທີ່ມີຝຸ່ນຟົ້ງຂຶ້ນທາງກາງ” ຊົງຂັບນ້ຳໃຫ້ອອກໄປ ໂດຍຣອບ ສເດັຈຈົງກົມ ບົນພື້ນດິນທີ່ມີຝຸ່ນຟົ້ງຂຶ້ນທາງກາງ ລຳດັບນັ້ນ ຊະດິລອຸຣຸເວລກັສສປະກ່າວວ່າ “ພຣະມຫາສະມະນະຢ່າໄດ້ຖືກນ້ຳພັດໄປເລີຍ” ພ້ອມດ້ວຍຊະດິລເປັນອັນມາກ ລົງເຮືອໄປຍັງສະຖານທີ່ທີ່ພຣະຜູ້ມີພຣະພາກປະທັບຢູ່ ໄດ້ເຫັນພຣະຜູ້ມີພຣະພາກຊົງຂັບນ້ຳໃຫ້ອອກໄປໂດຍຣອບ ສເດັຈ ຈົງກົມ ບົນພື້ນທີ່ມີຝຸ່ນຟົ້ງຂຶ້ນຕຣົງກາງຈຶ່ງທູລຖາມວ່າ “ຂ້າແຕ່ພຣະມຫາສະມະນະ ພຣະອົງຄ໌ຍັງປະທັບຢູ່ທີ່ນີ້ຫລື” ພຣະຜູ້ມີພຣະພາກຕຣັສຕອບວ່າ “ຖືກລະ ກັສສປະ ເຮົາຍັງຢູ່ທີ່ນີ້” ແລ້ວສເດັຈເຫາະຂຶ້ນໄປປາກົດຢູ່ເທິງເຮືອ ຂນະນັ້ນ ຊະດິລອຸຣຸເວລກັສສປະຄິດວ່າ “ພຣະມຫາສະມະນະມີຣິທທິ໌ມາກ ມີອານຸພາພມາກແມ່ນແທ້ເຖິງກັບຊົງບັນດາລບໍ່ໃຫ້ນ້ຳໄຫລໄປໄດ້ ແຕ່ບໍ່ເປັນພຣະອຣຫັນຕ໌ເໝືອນເຮົາແນ່”

ຊະດິລ ໓ ພີ່ນ້ອງທູລຂໍການບັນພະຊາອຸປສົມບົທ

[໕໑] ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງດຳຣິດັ່ງນີ້ວ່າ “ໂມຂບຸຣຸສນີ້ຄົງຈັກມີຄວາມຄິດຢ່າງນີ້ໄປອີກນານວ່າ

ພຣະມຫາສະມະນະມີຣິທທິ່ມາກ ມີອານຸພາພມາກແມ່ນແທ້ແຕ່ບໍ່ເປັນພຣະອຣຫັນຕ໌ເໝືອນເຮົາແນ່ ຢ່າກະນັ້ນເລີຍ ເຮົາຄວນໃຫ້ຊະດີລນີ້ສລົດໃຈ” ຈຶ່ງໄດ້ຕຣັສກັບຊະດີລອຸຣຸເວລກັສສປະວ່າ “ກັສສປະ ທ່ານບໍ່ແມ່ນພຣະອຣຫັນຕ໌ແນ່ ທັງຍັງບໍ່ເຖິງອຣຫັຕຕມັຄແມ່ນປຕິປທາຂອງທ່ານອັນຈະເປັນເຫຕຸໃຫ້ເປັນພຣະອຣຫັນຕ໌ຫລືເຖິງອຣຫັຕຕມັຄກໍຍັງບໍ່ມີ” ລຳດັບນັ້ນ ຊະດີລອຸຣຸເວລກັສສປະໄດ້ໝອບ ສີສະລົງແທບພຣະບາທພຣະຜູ້ມີພຣະພາກຂາບທູລວ່າ “ພຣະພຸດທະເຈົ້າຂ້າ ຂ້າພະເຈົ້າຄວນໄດ້ການບັນພະຊາ ຄວນໄດ້ການອຸປສົມບົທໃນສຳນັກຂອງພຣະຜູ້ມີພຣະພາກ” ພຣະຜູ້ມີພຣະພາກຕຣັສວ່າ “ກັສສປະ ທ່ານເປັນຜູ້ນຳ ເປັນຜູ້ຝຶກ ເປັນເລີສ ເປັນຫົວໜ້າ ເປັນປະທານຂອງຊະດີລ ໕໐໐ ຄົນ ທ່ານ ຈົ່ງບອກລາພວກເຂົາກ່ອນ ໃຫ້ພວກເຂົາທຳຕາມທີ່ພວກເຂົາເຂົ້າໃຈ” ຕໍ່ມາ ຊະດີລອຸຣຸເວລ ກັສສປະໄດ້ເຂົ້າໄປຫາຊະດີລເຫລົ່ານັ້ນເຖິງທີ່ຢູ່ແລ້ວກ່າວວ່າ “ຜູ້ຈະເຣີນທັງຫລາຍ ເຮົາຕ້ອງການຈະປະພຶດ ພຣົມຈັນຍ໌ໃນສຳນັກພຣະມຫາສະມະນະ ທ່ານທັງຫລາຍ ຈົ່ງທຳຕາມທີ່ພວກທ່ານເຂົ້າໃຈ” ຊະດີລເຫລົ່ານັ້ນຂາບຮຽນວ່າ “ພວກຜູ້ຂ້າເຫລື້ອມໃສຍິ່ງໃນສຳນັກພຣະມຫາສະມະນະມາດົນແລ້ວ ຂະນ້ອຍ ຖ້າທ່ານຈັກປະພຶດພຣົມຈັນຍ໌ໃນສຳນັກພຣະມຫາສະມະນະ ພວກຜູ້ຂ້າທັງໝົດກໍຈັກປະພຶດພຣົມຈັນຍ໌ໃນສຳນັກພຣະມຫາສະມະນະເຊັ່ນກັນ” ຈຶ່ງເອົາຜົມ ຊະດາ ເຄື່ອງບໍຣິຂານ ແລະເຄື່ອງບູຊາໄຟລອຍນ້ຳ ເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ແລ້ວໝອບສີສະແທບພຣະບາທ ຂອງພຣະຜູ້ມີພຣະພາກ ຂາບທູລວ່າ “ພຣະພຸດທະເຈົ້າຂ້າ ພວກຂ້າພຣະອົງຄ໌ຄວນໄດ້ການບັນພະຊາ ຄວນ ໄດ້ການອຸປສົມບົທໃນສຳນັກຂອງພຣະຜູ້ມີພຣະພາກ” ພຣະຜູ້ມີພຣະພາກຕຣັສວ່າ “ພວກທ່ານຈົ່ງມາເປັນພິກສຸເຖີດ” ແລ້ວຕຣັສຕໍ່ໄປວ່າ “ທັມອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ” ພຣະອາຈານັ້ນແລ ໄດ້ເປັນການອຸປສົມບົທຂອງທ່ານເຫລົ່ານັ້ນ

[໕໔] ຊະດີລນທີກັສສປະໄດ້ເຫັນຜົມ ຊະດາ ເຄື່ອງບໍຣິຂານ ແລະເຄື່ອງບູຊາໄຟລອຍນ້ຳມາແລ້ວຄິດວ່າ “ອຸປສັຣຣຄຢ່າໄດ້ມີແກ່ອ້າຍຂອງເຮົາເລີຍ” ຈຶ່ງສົ່ງຊະດີລທັງຫລາຍໄປດ້ວຍສັ່ງວ່າ “ພວກທ່ານ ຈົ່ງໄປ ຈົ່ງຮູ້ຄວາມເປັນໄປຂອງອ້າຍຂອງເຮົາ” ແລະຕົນເອງພ້ອມຊະດີລ ໓໐໐ ຄົນ ໄດ້ເຂົ້າໄປຫາທ່ານພຣະອຸຣຸເວລກັສສປະເຖິງທີ່ຢູ່ແລ້ວຮຽນຖາມວ່າ “ຂ້າແຕ່ພີ່ກັສສປະ ພຣົມຈັນຍ໌ນີ້ປະເສີດກວ່າ ຫລື” ທ່ານພຣະອຸຣຸເວລກັສສປະຕອບວ່າ “ຖືກລະ ຜູ້ມີອາຍຸ ພຣົມຈັນຍ໌ນີ້ປະເສີດກວ່າ” ຫລັງຈາກນັ້ນ ຊະດີລເຫລົ່ານັ້ນຈຶ່ງເອົາຜົມ ຊະດາ ເຄື່ອງບໍຣິຂານ ແລະເຄື່ອງບູຊາໄຟລອຍນ້ຳ ເຂົ້າໄປເຝົ້າພຣະຜູ້ມີພຣະພາກ ໝອບສີສະແທບພຣະບາທຂອງພຣະຜູ້ມີພຣະພາກ ຂາບທູລວ່າ “ພຣະພຸດທະເຈົ້າຂ້າ ພວກຂ້າພຣະອົງຄ໌ຄວນໄດ້ການບັນພະຊາ ຄວນໄດ້ການອຸປສົມບົທໃນສຳນັກ ຂອງພຣະຜູ້ມີພຣະພາກ” ພຣະຜູ້

ມີພຣະພາກຕຣັສວ່າ "ພວກທ່ານຈົ່ງມາເປັນພິກສຸເຖີດ" ແລ້ວຕຣັສຕໍ່ໄປວ່າ "ທັມອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ" ພຣະອາຈານັ້ນແລ ໄດ້ເປັນການອຸປສົມບົທຂອງທ່ານເຫລົ່ານັ້ນ

[໕໓] ຊດິລຄຍາກັສສປະໄດ້ເຫັນຜົມ ຊດາ ເຄື່ອງບໍຣິຂານ ແລະເຄື່ອງບູຊາໄຟລອຍນ້ຳມາແລ້ວຄິດວ່າ "ອຸປສັຣຄຢ່າໄດ້ມີແກ່ອ້າຍທັງສອງຂອງເຮົາເລີຍ" ຈຶ່ງສັ່ງຊດິລທັງຫລາຍໄປດ້ວຍສັ່ງວ່າ "ພວກທ່ານຈົ່ງໄປ ຈົ່ງຮູ້ຄວາມເປັນໄປຂອງອ້າຍທັງສອງຂອງເຮົາ" ແລະຕົນເອງ ພ້ອມຊດິລ ໒໐໐ ຄົນໄດ້ເຂົ້າໄປຫາທ່ານພຣະອຸຣຸເວລກັສສປະເຖິງທີ່ຢູ່ແລ້ວຮຽນຖາມວ່າ "ຂ້າແດ່ພີ່ກັສສປະ ພຣົມຈັນຍ໌ນີ້ປະເສີດກວ່າຫລື" ທ່ານພຣະອຸຣຸເວລກັສສປະຕອບວ່າ "ຖືກລະ ຜູ້ມີອາຍຸ ພຣົມຈັນຍ໌ນີ້ປະເສີດກວ່າ" ຫລັງຈາກນັ້ນ ຊດິລເຫລົ່ານັ້ນຈຶ່ງເອົາຜົມ ຊດາ ເຄື່ອງບໍຣິຂານ ແລະເຄື່ອງບູຊາໄຟລອຍນ້ຳ ເຂົ້າໄປເຝົ້າພຣະຜູ້ມີພຣະພາກ ຊົບສີສະແທບພຣະບາທຂອງພຣະຜູ້ມີພຣະພາກ ຂາບທູລ ວ່າ "ພຣະພຸດທະເຈົ້າຂ້າ ພວກຂ້າພຣະອົງຄ໌ຄວນໄດ້ການບັນພະຊາ ຄວນໄດ້ການອຸປສົມບົທ ໃນສຳນັກຂອງພຣະຜູ້ມີພຣະພາກ" ພຣະຜູ້ມີພຣະພາກຕຣັສວ່າ "ພວກທ່ານຈົ່ງມາເປັນພິກສຸເຖີດ" ແລ້ວຕຣັສຕໍ່ໄປວ່າ "ທັມອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ" ພຣະອາຈານັ້ນໄດ້ເປັນການອຸປສົມບົທຂອງທ່ານເຫລົ່ານັ້ນ

ຊດິລເຫລົ່ານັ້ນຜ່າຟືນ ໕໐໐ ທ່ອນບໍ່ໄດ້ ກັບຜ່າໄດ້ ກໍ່ໄຟບໍ່ຕິດ ກັບກໍ່ໄຟຕິດ ດັບໄຟບໍ່ໄດ້ ກັບດັບໄດ້ ດ້ວຍການອທິສຖານຂອງພຣະຜູ້ມີພຣະພາກ ພຣະຜູ້ມີພຣະພາກຊົງເນຣມິຕພາຊນະໃສ່ໄຟໄວ້ ໕໐໐ ຊຸດ ປາຕິຫາຣິຍ໌ ໓,໕໐໐ ວິທີ ຍ່ອມມີໂດຍນັຍນີ້

ອາທິຕຕປຣິຍາຍສູຕຣ໑

[໕໔] ຄັ້ງນັ້ນ ພຣະຜູ້ມີພຣະພາກປະທັບຢູ່ ນະ ຕາແສງອຸຣຸເວລາເສນານິຄົມຕາມພຣະອັທຍາສັຍໄດ້ສເດັຈຈາຣິກໄປຍັງຕາແສງຄຍາສີສະ ພ້ອມດ້ວຍພິກສຸຫມູ່ໃຫຍ່ ຣາວ ໑,໐໐໐ ຮູບ ລ້ວນເຄີຍເປັນຊດິລທັງນັ້ນ ຊາບວ່າ ພຣະອົງຄ໌ປະທັບຢູ່ ນະຕາແສງຄຍາສີສະ ໃກ້ແມ່ນ້ຳຄຍານັ້ນ ພ້ອມດ້ວຍ ພິກສຸ ໑,໐໐໐ ຮູບ ນະທີ່ນັ້ນ ພຣະຜູ້ມີພຣະພາກຣັບສັ່ງກັບພິກສຸທັງຫລາຍວ່າ

"ພິກສຸທັງຫລາຍ ສິ່ງທັງປວງເປັນຂອງຮ້ອນ ກໍຫຍັງລະຊື່ວ່າສິ່ງທັງປວງເປັນຂອງຮ້ອນ

ພິກສຸທັງຫລາຍ ຈັກສຸເປັນຂອງຮ້ອນ

ພິກສຸທັງຫລາຍ ຮູບທັງຫລາຍເປັນຂອງຮ້ອນ

ພິກສຸທັງຫລາຍ ຈັກຂຸວິນຍານເປັນຂອງຮ້ອນ
ພິກສຸທັງຫລາຍ ຈັກຂຸສັມຜັສສເປັນຂອງຮ້ອນ
ແມ່ນຄວາມສເວີຍອາຣົມນ໌ທີ່ເປັນສຸຂຫລືທຸກຂ໌ ຫລືທີ່ບໍ່ແມ່ນສຸຂບໍ່ແມ່ນທຸກຂ໌ ທີ່ເກີດຂຶ້ນເພາະຈັກຂຸສັມຜັສສເປັນປັຈຈັຍກໍເປັນຂອງຮ້ອນ ຮ້ອນເພາະຫຍັງ ເຮົາກ່າວວ່າ ຮ້ອນເພາະໄຟຄືຣາຄະ ເພາະໄຟຄືໂທສະ ເພາະໄຟຄືໂມຫະ ຮ້ອນເພາະຄວາມເກີດ ເພາະຄວາມແກ່ ເພາະຄວາມຕາຍ ເພາະຄວາມໂສກ ເພາະຄວາມຄ່ຳຄວນ ເພາະທຸກຂ໌ເພາະໂທມນັສສ ເພາະຄວາມຄັບແຄ້ນໃຈ

ໝາຍເຫດ :

໑ ສໍ. ສຣາ. (ແປ) ໑໗/໔໗/໔໗

ໂສຕະ(ຫູ)ເປັນຂອງຮ້ອນ ສຽງທັງຫລາຍເປັນຂອງຮ້ອນ ຯລຯ
ຂານະ(ດັງ)ເປັນຂອງຮ້ອນ ກິ່ນທັງຫລາຍເປັນຂອງຮ້ອນ ຯລຯ
ຊິວຫາ(ລີ້ນ)ເປັນຂອງຮ້ອນ ຣົສທັງຫລາຍເປັນຂອງຮ້ອນ ຯລຯ
ກາຍເປັນຂອງຮ້ອນ ໂຜຕຖັພພະ(ສິ່ງທີ່ກາຍສັມຜັສຖືກຕ້ອງ)ທັງຫລາຍເປັນຂອງຮ້ອນ ຯລຯ
ມນະ(ໃຈ)ເປັນຂອງຮ້ອນ ທັມ(ອາຣົມນ໌)ທັງຫລາຍເປັນຂອງຮ້ອນ ມໂນວິນຍານ(ຄວາມຮູ້ທາງໃຈ) ເປັນຂອງຮ້ອນ ມໂນສັມຜັສສ(ກາຣຕຳທາງໃຈ)ເປັນຂອງຮ້ອນ ແມ່ນຄວາມສເວີຍອາຣົມນ໌ ທີ່ເປັນສຸຂຫລືທຸກຂ໌ ຫລືທີ່ບໍ່ແມ່ນສຸຂບໍ່ແມ່ນທຸກຂ໌ ທີ່ເກີດຂຶ້ນເພາະມໂນສັມຜັສສເປັນປັຈຈັຍ ກໍເປັນຂອງຮ້ອນ ຮ້ອນເພາະຫຍັງ ເຮົາກ່າວວ່າ ຮ້ອນເພາະໄຟຄືຣາຄະ ເພາະໄຟຄືໂທສະ ເພາະໄຟຄືໂມຫະ ຮ້ອນເພາະຄວາມເກີດ ເພາະຄວາມແກ່ເພາະຄວາມຕາຍ ເພາະຄວາມໂສກ ເພາະຄວາມຄ່ຳຄວນ ເພາະທຸກຂ໌ ເພາະໂທມນັສສ ເພາະຄວາມຄັບແຄ້ນໃຈ ພິກສຸທັງຫລາຍ ອຣິຍສາວົກຜູ້ໄດ້ສດັບ ເຫັນຢູ່ຢ່າງນີ້ ຍ່ອມເບື່ອຫນ່າຍແມ່ນໃນຈັກຂຸ ຍ່ອມເບື່ອຫນ່າຍແມ່ນໃນຮູບທັງຫລາຍ ຍ່ອມເບື່ອຫນ່າຍແມ່ນໃນຈັກຂຸວິນຍານະ ຍ່ອມເບື່ອຫນ່າຍແມ່ນໃນຈັກຂຸສັມຜັສສ ຍ່ອມເບື່ອຫນ່າຍແມ່ນໃນຄວາມສເວີຍອາຣົມນ໌ທີ່ເປັນສຸຂຫລືທຸກຂ໌ຫລືທີ່ບໍ່ແມ່ນສຸຂບໍ່ແມ່ນທຸກຂ໌ ທີ່ເກີດຂຶ້ນເພາະຈັກຂຸສັມຜັສສເປັນປັຈຈັຍ ຍ່ອມເບື່ອຫນ່າຍແມ່ນໃນໂສຕະ ຍ່ອມເບື່ອຫນ່າຍແມ່ນໃນສຽງທັງຫລາຍ ຯລຯ ຍ່ອມເບື່ອຫນ່າຍແມ່ນໃນຂານະ ຍ່ອມເບື່ອຫນ່າຍແມ່ນໃນກິ່ນທັງຫລາຍ ຯລຯ ຍ່ອມເບື່ອຫນ່າຍແມ່ນໃນຊິວຫາ ຍ່ອມເບື່ອຫນ່າຍແມ່ນໃນຣົສທັງຫລາຍ ຯລຯ ຍ່ອມເບື່ອຫນ່າຍແມ່ນໃນກາຍ ຍ່ອມເບື່ອຫນ່າຍແມ່ນໃນໂຜຕຖັພພະທັງຫລາຍ ຯລຯ ຍ່ອມເບື່ອຫນ່າຍແມ່ນໃນມນະ ຍ່ອມເບື່ອຫນ່າຍແມ່ນໃນທັມທັງຫລາຍ ຍ່ອມເບື່ອ

ໜ່າຍແມ່ນໃນມໂນວິນຍານະ ຍ່ອມເບື່ອໜ່າຍແມ່ນໃນມໂນສັມຜັສ ຍ່ອມເບື່ອໜ່າຍແມ່ນໃນຄວາມສເວີຍອາຣົມນ໌ທີ່ເປັນສຸຂຫລືທຸກຂ໌ ຫລືທີ່ບໍ່ແມ່ນສຸຂບໍ່ແມ່ນທຸກຂ໌ ທີ່ເກີດຂຶ້ນເພາະມໂນສັມຜັສເປັນປັຈຈັຍ ເມື່ອເບື່ອໜ່າຍ ຍ່ອມຄາຍກຳໜັດ ເພາະຄາຍກຳໜັດ ຈິຕຍ່ອມຫລຸດພົ້ນ ເມື່ອຈິຕຫລຸດພົ້ນແລ້ວ ຍ່ອມມີຍານວ່າ ຫລຸດພົ້ນແລ້ວ ອຣິຍສາວົກຍ່ອມຮູ້ແຈ້ງວ່າ ຊາຕິສິ້ນແລ້ວ ພຣົມຈັນຍ໌ໄດ້ຢູ່ຈົບແລ້ວ ກິຈທີ່ຄວຣເຮັດໄດ້ທຳເສັດແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີ" ກໍເມື່ອພຣະຜູ້ມີພຣະພາກຕຣັສເວີຍຍາກຣນ໌ນີ້ຢູ່ ຈິຕຂອງພິກສຸ ໑,໐໐໐ ຮູບນັ້ນ ກໍຫລຸດພົ້ນຈາກອາສວະທັງຫລາຍເພາະບໍ່ຖືໝັ້ນ

ອາທິຕຕປຣິຍາຍສູຕຣ ຈົບ

ອຸຣຸເວລປາຕິຫາຣິຍກຖາ ຈົບ

ພານວາຣທີ ໓ ຈົບ

໑໓. ພິມພິສາຣສມາຄົມກຖາ

ວ່າດ້ວຍສມາຄົມຂອງພຣະເຈົ້າພິມພິສາຣ

ເຣື້ອງສວນຕາລໜຸ່ມ

[໕໕] ຄັ້ງນັ້ນ ພຣະຜູ້ມີພຣະພາກປະທັບຢູ່ ນະ ຕາແສງຄຍາສີສະຕາມພຣະອັທຍາສັຍແລ້ວໄດ້ສເດັຈຈາຣິກໄປທາງກຸງຣາຊຄຶຫ໌ພ້ອມດ້ວຍພິກສຸໝູ່ໃຫຍ່ ໑,໐໐໐ ຮູບ ລ້ວນເຄີຍເປັນຊດິລທັງນັ້ນສເດັຈຈາຣິກໄປຕາມລຳດັບ ຈົນເຖິງກຸງຣາຊຄຶຫ໌ ຊາບວ່າພຣະຜູ້ມີພຣະພາກປະທັບຢູ່ ນະ ຕົ້ນໄຊ ຕົ້ນນຶ່ງຊື່ວ່າສຸປຣະດິສຖເຈດີຍ໌ໃນສວນຕາລໜຸ່ມ ເຂຕກຸງຣາຊຄຶຫ໌ນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖໄດ້ຊົງສດັບຂ່າວວ່າ "ທ່ານພຣະສະມະນະໂຄດົມ ເປັນສາກຍບຸຕຣສເດັຈອອກຜນວຊຈາກສາກຍຕະກູນ ສເດັຈເຖິງກຸງຣາຊຄຶຫ໌ໂດຍລຳດັບ ປະທັບຢູ່ນະ ຄວງຕົ້ນໄຊ ຕົ້ນນຶ່ງຊື່ສຸປຣະດິສຖເຈດີຍ໌ໃນສວນຕາລໜຸ່ມ ເຂຕກຸງຣາຊຄຶຫ໌ ທ່ານພຣະໂຄດົມຜູ້ຈະເຣີນນັ້ນ ມີກິຕຕິສັພທ໌ອັນງາມແຜ່ໄປຢ່າງນີ້ວ່າ ແມ່ນເພາະເຫຕຸນີ້ ພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ ເປັນພຣະອຣຫັນຕ໌ ຕຣັສຮູ້ດ້ວຍພຣະອົງຄ໌ເອງໂດຍຊອບ ພຽບພ້ອມດ້ວຍວິຊຊາແລະຈຣນະ ສເດັຈໄປດີ ຮູ້ແຈ້ງໂລກ ເປັນສາຣຖີຝຶກຜູ້ທີ່ຄວຣຝຶກໄດ້ຢ່າງຍອດຢຽມ ເປັນສາສດາຂອງເທວດາແລະມະນຸສຍ໌ທັງຫລາຍ ເປັນພຣະພຸດທະເຈົ້າ ເປັນພຣະຜູ້ມີພຣະພາກ໑

ໝາຍເຫດ :

໑ ດູພຣະວິນັຍປິດົກມະຫາວິພັງຄ໌ແປລ ເຫລັ້ມ ໑ ຂໍ້ ໑ ຫນ້າ ໑-໔ (ໝາຍເຫດ)

ພຣະວິນັຍປິດົກ ມະຫາວັຄ [໑. ມະຫາຂັນທະກະ] ໑໓. ພິມພິສາຣສະມາຄົມກະຖາ

ພຣະອົງຄ໌ຊົງຮູ້ແຈ້ງໂລກນີ້ ພ້ອມທັງເທວໂລກ ມາຣໂລກ ພຣົມໂລກ ແລະຫມູ່ສັດວ໌ ພ້ອມທັງສະມະນະພຣາມນ໌ ເທວດາແລະມະນຸສຍ໌ດ້ວຍພຣະອົງຄ໌ເອງແລ້ວ ຈຶ່ງຊົງປະກາດໃຫ້ຜູ້ອື່ນຮູ້ຕາມ ຊົງສະແດງທັມມີຄວາມງາມໃນເບື້ອງຕົ້ນ ມີຄວາມງາມໃນທ່າມກາງ ແລະມີຄວາມງາມໃນທີ່ສຸດ ຊົງປະກາດພຣົມຈັນຍ໌ພ້ອມທັງອັນຖະແລະພະຍັນຊະນະບໍຣິບູຣນ໌ບໍຣິສຸດທ໌ຄົບຖ້ວນ ກາຣໄດ້ພົບພຣະອຣະຫັນຕ໌ທັງຫລາຍເຊັ່ນນີ້ ເປັນຄວາມດີຢ່າງແທ້ຈິງ

ເຣື້ອງພຣະເຈົ້າພິມພິສາຣຈອມທັພມະຄະທະຣັຖ

ຄັ້ງນັ້ນ ພຣະເຈົ້າພິມພິສາຣຈອມທັພມະຄະທະຣັຖ ຊົງແວດລ້ອມດ້ວຍພຣາມນ໌ຄະຫະບໍດີຊາວມະຄະທະ ໑໔ ນະຫຸຕ໑ ສະເດັຈເຂົ້າໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອະພິວາທພຣະຜູ້ມີພຣະພາກແລ້ວປະທັບນັ່ງ ນະທີ່ສົມຄວຣ ຝ່າຍພຣາມນ໌ຄະຫະບໍດີຊາວມະຄະທະ ໑໔ ນະຫຸຕເຫລົ່ານັ້ນ ບາງພວກຖວາຍອະພິວາທພຣະຜູ້ມີພຣະພາກແລ້ວນັ່ງ ນະທີ່ສົມຄວຣ ບາງພວກກໍໄດ້ສົນທນາປາສັຍກັບພຣະຜູ້ມີພຣະພາກພໍເປັນທີ່ບັນເທີງໃຈ ພໍເປັນທີ່ຣະນຶກເຖິງກັນແລະກັນ ແລ້ວນັ່ງ ນະທີ່ສົມ ຄວຣ ບາງພວກກໍປະຄອງອັຍຊະລີໄປທາງທີ່ພຣະຜູ້ມີພຣະພາກປະທັບ ແລ້ວນັ່ງ ນະທີ່ສົມຄວຣ ບາງພວກກໍປະກາດນາມແລະໂຄຕຣໃນສຳນັກພຣະຜູ້ມີພຣະພາກ ແລ້ວນັ່ງ ນະທີ່ສົມຄວຣ ບາງພວກກໍນັ່ງນິ່ງ ນະທີ່ສົມຄວຣ ຂະນະນັ້ນ ພຣາມນ໌ຄະຫະບໍດີຊາວມະຄະທະ ໑໔ ນະຫຸຕເຫລົ່ານັ້ນໄດ້ມີຄວາມຄິດດັ່ງນີ້ວ່າ “ພຣະມະຫາສະມະນະປະພຶດພຣົມຈັນຍ໌ໃນສຳນັກພຣະອຸຣຸເວລກັສສະປະ ຫລືພຣະອຸຣຸເວລກັສສະປະປະພຶດພຣົມຈັນຍ໌ໃນສຳນັກພຣະມະຫາສະມະນະບໍ” ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊາບຄວາມຄໍ່າຄວນໃນໃຈຂອງພຣາມນ໌ຄະຫະບໍດີຊາວມະຄະທະ ໑໔ ນະຫຸຕເຫລົ່ານັ້ນດ້ວຍພຣະທັຍ ຈຶ່ງຕຣັສເຊື້ອເຊີນທ່ານພຣະອຸຣຸເວລກັສສະປະດ້ວຍຄາຖາວ່າ “ທ່ານຢູ່ອຸຣຸເວລາມານານ ເຄີຍເປັນອາຈາຣຍ໌ສັ່ງສອນຫມູ່ຊະດິລຜູ້ຈ່ອຍຜອມ ໔ ທ່ານເຫັນອຸບາຍຫຍັງ ຈຶ່ງໄດ້ລະໄຟເສັຽ

ໝາຍເຫດ :

໑ ນຫຸຕ ເປັນມາຕຣານັບ ໑ ນຫຸຕ ເທົ່າກັບ ໑໐,໐໐໐ ຄົນ ໑໔ ນຫຸຕ ເທົ່າກັບ ໑໔໐,໐໐໐ ຄົນ
໔ ໝາຍເຖິງເປັນຜູ້ອົບຣົມສັ່ງສອນໝູ່ດາບົສທີ່ໄດ້ນາມວ່າ "ຜູ້ຈ່ອຍຜອມ" ເນື່ອງຈາກເປັນຜູ້ທີ່ຮ່າງກາຍຈ່ອຍຜອມ ເພາະບຳເພັນຕົນເປັນດາບົສ (ວິ. ອ. ໓/໕໕/໔໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໖. ພິມພິສາຣສມາຄົມກຖາ

ກັສສປະ ເຮົາຖາມຂໍ້ຄວາມນີ້ກັບທ່ານ ຈັ່ງໃດທ່ານຈຶ່ງລະການບູຊາໄຟຂອງທ່ານເສັຽລະ" ພຣະອຸຣຸເວລກັສສປະທູລຕອບວ່າ "ຍັນທັງຫລາຍກ່າວສັຣເສີນກາມທັງຫລາຍ ຄື ຮູບ ສຽງ ຣົສແລະສະຕຣີທັງຫລາຍ ຂ້າພຣະອົງຄ໌ໄດ້ຮູ້ໃນອຸປທິວ່າ ນັ້ນເປັນມົລທິນ ເພາະສະນັ້ນ ຈຶ່ງບໍ່ໄດ້ຍິນດີໃນການເຊັ່ນສອງ ບໍ່ໄດ້ຍິນດີໃນການບູຊາ" "ກັສສປະ ໃຈຂອງທ່ານບໍ່ຍິນດີໃນຮູບ ສຽງແລະຣົສເຫລົ່ານັ້ນແລ້ວ ເມື່ອເປັນເຊັ່ນນັ້ນ ໃຈຂອງທ່ານຍິນດີໃນສິ່ງໃດລະ ໃນເທວໂລກຫລືມນຸສຍໂລກ ກັສສປະທ່ານຈົ່ງບອກສິ່ງນັ້ນແກ່ເຮົາ" "ຂ້າພຣະອົງຄ໌ໄດ້ເຫັນບົທອັນສງົບ໔ ບໍ່ມີອຸປທິ ບໍ່ມີກັງວົລ ບໍ່ຂ້ອງຢູ່ໃນການພົພ ມີອັນບໍ່ແປຜັນເປັນຢ່າງອື່ນ ບໍ່ແມ່ນທັມທີ່ຜູ້ອື່ນຈະຄວນແນະໃຫ້ໄດ້ ເພາະສະນັ້ນ ຂ້າພຣະອົງຄ໌ຈຶ່ງບໍ່ໄດ້ຍິນດີໃນການເຊັ່ນສອງ ບໍ່ໄດ້ຍິນດີໃນການບູຊາ"

[໕໖] ລຳດັບນັ້ນ ທ່ານພຣະອຸຣຸເວລກັສສປະລຸກຂຶ້ນຈາກອາສນະຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ໝອບສີສະແທບພຣະບາທພຣະຜູ້ມີພຣະພາກ ຂາບທູລວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ພຣະຜູ້ມີພຣະພາກເປັນສາສດາຂອງຂ້າພຣະອົງຄ໌ ຂ້າພຣະອົງຄ໌ເປັນສາວົກ ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ພຣະຜູ້ມີພຣະພາກເປັນສາສດາຂອງຂ້າພຣະອົງຄ໌ ຂ້າພຣະອົງຄ໌ເປັນສາວົກ" ຂນະນັ້ນ ພຣາມນ໌ຄຫບໍດີຊາວມຄທທັງ ໑໔ ນຫຸຕເຫລົ່ານັ້ນກໍຊາບວ່າ "ພຣະອຸຣຸເວລກັສສປະປະພຶດພຣົມຈັນຍ໌ໃນສຳນັກພຣະມຫາສະມະນະ" ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊາບຄວາມຄໍ່າຄວນໃນໃຈຂອງພຣາມນ໌ຄຫບໍດີຊາວມຄທ ໑໔ ນຫຸຕເຫລົ່ານັ້ນດ້ວຍພຣະທັຍ ຈຶ່ງໄດ້ຕຣັສອນຸປຸພພິກຖາ ຄື ຊົງປະກາດ

ໝາຍເຫດ :

໑ ອຸປທິ ໃນທີ່ນີ້ໝາຍເຖິງຂັນທູປທິ ຊຶ່ງເປັນທີ່ຕັ້ງແຫ່ງທຸກຂ໌ອັນມີຂັນທ໌ເປັນມູລ (ສາຣຕຖ. ດີກາ ໓/໕໕/໔໖໐)
໔ ບົທອັນສງົບ ໃນທີ່ນີ້ໝາຍເຖິງບົທຄືພຣະນິພພານທີ່ມີສພາພສງົບ ທີ່ຊື່ວ່າ ບໍ່ແປຣເປັນຢ່າງອື່ນ

ເພາະບໍ່ມີຊາຕິ ຊະຣາ ແລະມໍຣະນະ (ວິ. ອ. ໓/໕໕/໔໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໓. ພິມພິສາຣສະມາຄົມກະຖາ

໑. ທານກະຖາ ໒. ສີລກະຖາ

໓. ສັຄຄກະຖາ ໔. ກາມາທີນວກະຖາ

໕. ເນກຂັມມານິສັງສະກະຖາ

ເມື່ອພຣະພຸທທອົງຄ໌ຊົງຊາບວ່າພວກເຂົາມີຈິຕຄວຣ ອ່ອນ ປາສຈາກນິວອຣນ໌ ເບີກບານຜ່ອງໃສ ຈຶ່ງຊົງປະກາດສາມຸກກັງສິກທັມເທສນາຂອງພຣະພຸດທະເຈົ້າທັງຫລາຍ ຄື ທຸກຂ໌ ສມຸທັຍ ນິໂຣທ ມັຄ ທັມຈັກສຸອັນປາສຈາກທຸລີປາສຈາກມົລທິນໄດ້ເກີດແກ່ພຣາມນ໌ຄຫບໍດີຊາວມຄທ ໑໑ ນຫຸຕ ຊຶ່ງມີພຣະເຈົ້າພິມພິສາຣເປັນປະມຸຂ ນະທີ່ນັ່ງນັ້ນແລວ່າ "ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນທັມດາ ສິ່ງນັ້ນທັງປວງມີຄວາມດັບໄປເປັນທັມດາ" ປຽບເຫມືອນຜ້າຂາວສະອາດປາສຈາກມົລທິນຄວຣຮັບນ້ຳຍ້ອມໄດ້ເປັນຢ່າງດີ

ພຣາມນ໌ຄຫບໍດີອີກ ໑ ນຫຸຕ ໄດ້ສະແດງຕົນເປັນອຸບາສົກ

ເຣື້ອງຄວາມປຣາຖນາ ໕ ປະກາຣ

ຂອງພຣະເຈົ້າພິມພິສາຣຈອມທັພມຄທຣັຖ

[໕໗] ຂນະນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖໄດ້ເຫັນທັມແລ້ວ ບັນລຸທັມແລ້ວ ຮູ້ແຈ້ງທັມແລ້ວ ຫຍັ່ງລົງສູ່ທັມແລ້ວ ຂ້າມຄວາມສົງສັຍແລ້ວ ປາສຈາກຄວາມແຄງໃຈ ເຖິງຄວາມເປັນຜູ້ເກັ່ງກ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ທູລພຣະຜູ້ມີພຣະພາກວ່າ "ເມື່ອກ່ອນຂະນ້ອຍຍັງເປັນພຣະກຸມາຣ ໄດ້ມີຄວາມປຣາຖນາ ໕ ປະກາຣ ພຣະພຸດທະເຈົ້າຂ້າ ບັດນີ້ຄວາມປຣາຖນາ ໕ ປະກາຣເຫລົ່ານັ້ນຂອງຂະນ້ອຍສຳເຣັຈແລ້ວ ຄື

໑. ເມື່ອກ່ອນຂະນ້ອຍຍັງເປັນພຣະກຸມາຣໄດ້ມີຄວາມປຣາຖນາວ່າ ຈົ່ງໃດນໍ ພສົກນິກອນຄວນອພິເສກເຮົາໃນຣາຊສົມບັຕ ນີ້ເປັນຄວາມປຣາຖນາຂອງຂະນ້ອຍປະກາຣທີ ໑ ພຣະພຸດທະເຈົ້າຂ້າ ບັດນີ້ຄວາມປຣາຖນານັ້ນຂອງຂະນ້ອຍສຳເຣັຈແລ້ວ

໒. ຂໍພຣະອະຣະຫັນຕະສັມມາສັມພຸດທະເຈົ້າຄວນສເດັຈມາສູ່ແວ່ນແຄວ້ນຂອງຂະນ້ອຍແນວນັ້ນ ນີ້ເປັນຄວາມປຣາຖນາຂອງຂະນ້ອຍປະກາຣທີ ໒ ພຣະພຸດທະເຈົ້າຂ້າ ບັດນີ້ຄວາມປຣາຖນານັ້ນຂອງຂະນ້ອຍ

ສຳເຣັຈແລ້ວ

໓. ຂໍຂະນ້ອຍຄວນເຂົ້າໄປນັ່ງໃກ້ພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ ນີ້ເປັນຄວາມປຣາຖນາຂອງຂະນ້ອຍປະການທີ ໓ ພຣະພຸດທະເຈົ້າຂ້າ ບັດນີ້ຄວາມປຣາຖນານັ້ນຂອງຂະນ້ອຍສຳເຣັຈແລ້ວ

໔. ຂໍພຣະຜູ້ມີພຣະພາກພຣະອົງຄ໌ນັ້ນຄວນສະແດງທັມແກ່ຂະນ້ອຍ ນີ້ເປັນຄວາມປຣາຖນາຂອງຂະນ້ອຍປະການທີ ໔ ພຣະພຸດທະເຈົ້າຂ້າ ບັດນີ້ຄວາມປຣາຖນານັ້ນຂອງຂະນ້ອຍສຳເຣັຈແລ້ວ

໕. ຂໍຂະນ້ອຍຄວນຮູ້ທົ່ວເຖິງທັມຂອງພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ ນີ້ເປັນຄວາມປຣາຖນາຂອງຂະນ້ອຍປະການທີ ໕ ພຣະພຸດທະເຈົ້າຂ້າ ບັດນີ້ຄວາມປຣາຖນານັ້ນຂອງຂະນ້ອຍສຳເຣັຈແລ້ວ

ເມື່ອກ່ອນຂະນ້ອຍຍັງເປັນພຣະກຸມາຣ ໄດ້ມີຄວາມປຣາຖນາ ໕ ປະການເຫລົ່ານີ້ພຣະພຸດທະເຈົ້າຂ້າ ບັດນີ້ຄວາມປຣາຖນາ ໕ ປະການເຫລົ່ານັ້ນຂອງຂະນ້ອຍສຳເຣັຈແລ້ວ

ພຣະອົງຄ໌ຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ຊັດແຈ້ງມ່ອນຍິ່ງນັກ ພຣະອົງຄ໌ຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ຊັດແຈ້ງມ່ອນຍິ່ງນັກ ພຣະອົງຄ໌ຊົງປະກາດທັມແຈ່ມແຈ້ງໂດຍປະການຕ່າງໆ ປຽບເຫມືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຜູ້ຫລົງທາງ ຫລືຕາມປະທີປໃນທີ່ມືດ ດ້ວຍຕັ້ງໃຈວ່າ ຄົນມີຕາດີຈັກເຫັນຮູບ ພຣະອົງຄ໌ຜູ້ຈະເຣີນຂະນ້ອຍນີ້ ຂໍເຖິງພຣະຜູ້ມີພຣະພາກພ້ອມທັງພຣະທັມ ແລະພຣະສົງຄ໌ເປັນສະຣະນະ ຂໍພຣະຜູ້ມີພຣະພາກຈົ່ງຊົງຈຳຂະນ້ອຍວ່າເປັນອຸບາສົກຜູ້ເຖິງສະຣະນະ ຕັ້ງແຕ່ວັນນີ້ເປັນຕົ້ນໄປຈົນຕລອດຊີວິຕ ແລະຂໍພຣະຜູ້ມີພຣະພາກພ້ອມກັບພິກສຸສົງຄ໌ຊົງຮັບຄຳອາຣາທນາຂອງຂະນ້ອຍເພື່ອຈະເຣີນກຸສົລໃນມື້ອື່ນນີ້ເຖີດ ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກຊົງຮັບນິມົນຕ໌ໂດຍດຸສນີພາພແລ້ວ ຄັນພຣະເຈົ້າພິມພິສາຣຈອມທັພມຄທຣັຖ ຊົງຊາບວ່າພຣະຜູ້ມີພຣະພາກຊົງຮັບນິມົນຕ໌ແລ້ວ ຈຶ່ງສເດັຈລຸກຂຶ້ນຈາກທີ່ປະທັບ ຖວາຍອະພິວາທພຣະຜູ້ມີພຣະພາກ ຊົງທຳປະທັກສິນ(ວຽນໄປທາງຂວາ)ແລ້ວສເດັຈກັບ ຜ່ານຣາຕຣີນັ້ນໄປ ຮັບສັ່ງໃຫ້ກະກຽມຂອງຄ້ຽວຂອງສັນອັນປານີຕໄວ້ ແລ້ວໃຫ້ເຈົ້າພນັກງານໄປຂາບທູລພັຕຕກາລວ່າ "ໄດ້ເວລາແລ້ວ ພຣະພຸດທະເຈົ້າຂ້າ ພັຕຕາຫາຣເສັດແລ້ວ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໓. ພິມພິສາຣສມາຄົມກຖາ

[໕໗] ຄັນເວລາເຊົ້າ ພຣະຜູ້ມີພຣະພາກຊົງອັນຕຣວາສົກແລ້ວຖືບາຕຣແລະຈີວອນ ສເດັຈເຂົ້າໄປຍັງກຸງຣາຊຄຶຫ໌ພ້ອມດ້ວຍພິກສຸສົງຄ໌ຫມູ່ໃຫຍ່ຮາວ ໑,໐໐໐ ຮູບ ລ້ວນເຄີຍເປັນຊດິລທັງນັ້ນ

ຂນະນັ້ນ ທ້າວສັກກະຈອມເທພຊົງເນຣມິຕເພສເປັນມານົບ ສເດັຈພຣະດຳເນີນນຳຢູ່ເບື້ອງໜ້າພິກສຸສົງຂ໌ຊຶ່ງມີພຣະພຸດທະເຈົ້າເປັນປຣະມຸຂ ຊົງຂັບຄາຖາເຫລົ່ານີ້ໄປພ້ອມທັງວ່າ

ຄາຖາສຸດຸດີພຣະພຸດທະເຈົ້າ

ພຣະຜູ້ມີພຣະພາກຊົງມີພຣະສວີວັນ ສເມີດ້ວຍສີໄລທອງສິງຄີ ຊົງຝຶກອິນທຣີຍ໌ແລ້ວຊົງພົ້ນວິເສສແລ້ວ ໄດ້ສເດັຈເຂົ້າໄປຍັງກຸງຣາຊຄຶຫ໌ ພ້ອມດ້ວຍເຫລົ່າພິກສຸທີ່ເຄີຍເປັນຊດິລ ຜູ້ຝຶກອິນທຣີຍ໌ແລ້ວພົ້ນວິເສສແລ້ວ

ພຣະຜູ້ມີພຣະພາກຊົງມີພຣະສວີວັນສເມີດ້ວຍສີໄລທອງສິງຄີ ຊົງພົ້ນແລ້ວ ຊົງພົ້ນວິເສສແລ້ວ ໄດ້ສເດັຈເຂົ້າໄປຍັງກຸງຣາຊຄຶຫ໌ພ້ອມດ້ວຍເຫລົ່າພິກສຸທີ່ເຄີຍເປັນຊດິລຜູ້ພົ້ນແລ້ວ ພົ້ນວິເສສແລ້ວ

ພຣະຜູ້ມີພຣະພາກຊົງມີພຣະສວີວັນສເມີດ້ວຍສີໄລທອງສິງຄີ ຊົງຂ້າມແລ້ວ ຊົງພົ້ນວິເສສແລ້ວ ໄດ້ສເດັຈເຂົ້າໄປຍັງກຸງຣາຊຄຶຫ໌ພ້ອມດ້ວຍເຫລົ່າພິກສຸທີ່ເຄີຍເປັນຊດິລຜູ້ຂ້າມແລ້ວ ພົ້ນວິເສສແລ້ວ

ພຣະຜູ້ມີພຣະພາກຊົງມີພຣະສວີວັນສເມີດ້ວຍສີໄລທອງສິງຄີ ຊົງສງົບແລ້ວຊົງພົ້ນວິເສສແລ້ວ ໄດ້ສເດັຈເຂົ້າໄປຍັງກຸງຣາຊຄຶຫ໌ ພ້ອມດ້ວຍເຫລົ່າພິກສຸທີ່ເຄີຍເປັນຊດິລຜູ້ສງົບແລ້ວ ພົ້ນວິເສສແລ້ວ

ພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ ຊົງຢູ່ຈົບທັມ ໑໐ ປະການ ຊົງມີທິສພົລຍານະ ຊົງຊາບທັມ ໑໐ ປະການ ແລະຊົງປະກອບດ້ວຍທັມ ໑໐ ປະການ໑ ມີພິກສຸ ໑,໐໐໐ ຮູບເປັນບໍຣິວານ ໄດ້ສເດັຈ ເຂົ້າໄປຍັງກຸງຣາຊຄຶຫ໌

ໝາຍເຫດ :

໑ ປະກອບດ້ວຍທັມ ໑໐ ປະການ ຄື ປະກອບດ້ວຍອເສຂທັມ ໑໐ (ວິ. ອ. ໓/໕໗/໔໗) ໄດ້ແກ່ສັມມັຕຕະ ໑໐ (ສາຣຕຖ. ຕີກາ ໓/໕໗/໔໗໑) ດູ ທີ. ປາ ໑໑/໓໔໗,໓໖໐/໒໔໐,໔໗໔

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໓. ພິມພິສາຣສມາຄົມກຖາ

ຄົນທັງຫລາຍໄດ້ເຫັນທ້າວສັກກະຈອມເທພແລ້ວພາກັນກ່າວວ່າ "ມານົບພນີ້ມີຮູບງາມຫນໍ ມານົບພນີ້ໜ້າເບິ່ງຫນໍ ມານົບພນີ້ໜ້າຊົມຫນໍ ມານົບພນີ້ເປັນຜູ້ຮັບໃຊ້ຂອງໃຜຫນໍ" ເມື່ອຄົນທັງຫລາຍກ່າວ ຢ່າງນັ້ນແລ້ວ ທ້າວສັກກະຈອມເທພໄດ້ຕຣັສຕອບຄົນເຫລົ່ານັ້ນເປັນຄາຖາ ວ່າ "ພຣະຜູ້ມີພຣະພາກພຣະອົງຄ໌

ໃດ ຊຶ່ງເປັນນັກປຣາຊຍ໌ ຊຶ່ງຝຶກໃນອິນທຣີຍ໌ທັງປວງ ເປັນຜູ້ຜຸດຜ່ອງ ບໍ່ມີຜູ້ໃດປຽບ ຊຶ່ງໄກຈາກກິເລສ ສເດັຈໄປດີໃນໂລກ ຂ້າພະເຈົ້າເປັນຜູ້ຮັບໃຊ້ຂອງພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ”

ເຣື້ອງຊົງຮັບພຣະເວຣຸວັນເປັນວັດແຫ່ງທຳອິດ

[໕໙] ຄັ້ງນັ້ນ ພຣະຜູ້ມີພຣະພາກໄດ້ສເດັຈໄປຍັງພຣະຣາຊນິເວສນ໌ຂອງພຣະເຈົ້າພິມພິສາຣ ຈອມທັພມຄທຣັຖ ຄັນເຖິງແລ້ວຈຶ່ງປະທັບນັ່ງເຫິງອາສນະທີ່ເຂົາຈັດຖວາຍພ້ອມດ້ວຍພິກສຸສົງຄ໌ ຂນະ ນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖ ຊົງນຳຂອງຄ້ຽວຂອງສັນອັນປານີຕປະເຄນພິກສຸສົງຄ໌ມີພຣະພຸດທະເຈົ້າເປັນປຣະມຸຂດ້ວຍພຣະອົງຄ໌ເອງ ຈົນເມື່ອພຣະຜູ້ມີພຣະພາກສເວີຍເສັດແລ້ວ ຊົງຫ້າມພັຕຕາຫາຣແລ້ວ ລະພຣະຫັຕຖ໌ຈາກບາຕຣ ຈຶ່ງປະທັບນັ່ງ ນ ທີ່ສົມຄວຣ ທ້າວທ່ານຊົງດຳຣິວ່າ “ພຣະຜູ້ມີພຣະພາກຄວຣປະທັບທີ່ໃດຫນໍ ທີ່ແຫ່ງໃດຢູ່ບໍ່ໄກແລະບໍ່ໃກ້ຈາກຫມູ່ບ້ານນັກ ຄົມນາຄົມສະດວກ ຜູ້ປະສົງຄ໌ຄວນເຂົ້າເຝົ້າໄດ້ ກາງເວັນບໍ່ວຸ້ນວາຍ ກາງຄືນສງັດ ສຽງບໍ່ອຶກທຶກ ເວັ້ນຈາກຄົນສັນຈອນໄປມາ ເປັນທີ່ກະທຳກັມລັບຂອງຫມູ່ມະນຸສຍ໌ ຄວຣແກ່ການຫລີກຫລີບ” ຈຶ່ງມີພຣະຣາຊດຳຣິວ່າ “ອຸທຍານເວຣຸວັນຂອງເຮົານີ້ບໍ່ໄກແລະບໍ່ໃກ້ຈາກຫມູ່ບ້ານນັກ ຄົມນາຄົມສະດວກ ຜູ້ປະສົງຄ໌ຄວນເຂົ້າເຝົ້າໄດ້ ກາງເວັນບໍ່ວຸ້ນວາຍ ກາງຄືນສງັດ ສຽງບໍ່ອຶກທຶກ ເວັ້ນຈາກຄົນສັນຈອນໄປມາ ເປັນທີ່ກະທຳກັມລັບຂອງຫມູ່ມະນຸສຍ໌ ຄວຣແກ່ການຫລີກຫລີບ ຢ່າກະນັ້ນເລີຍ ເຮົາຄວນຖວາຍອຸທຍານເວຣຸວັນແດ່ພິກສຸສົງຄ໌ມີພຣະພຸດທະເຈົ້າເປັນປຣະມຸຂ” ແລ້ວຊົງຈັບພຣະສຸວຣຣນພິງຄາຣຫລັ່ງນ້ຳນ້ອມຖວາຍແດ່ພຣະຜູ້ມີພຣະພາກດ້ວຍພຣະຣາຊດຳຣັສວ່າ “ຂະນ້ອຍຂໍຖວາຍອຸທຍານເວຣຸວັນນັ້ນ ແດ່ພິກສຸສົງຄ໌ມີພຣະພຸດທະເຈົ້າເປັນປຣະມຸຂ ພຣະພຸດທະເຈົ້າຂ້າ”

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໔. ສາຣີປຸຕຕໂມຄຄັລລານປັພພັຊຊາກຖາ

ພຣະຜູ້ມີພຣະພາກຊົງຮັບອາຣາມແລ້ວ ຊົງຊີ້ແຈງໃຫ້ພຣະເຈົ້າພິມພິສາຣຈອມທັພມຄທຣັຖເຫັນແຈ້ງຊວນໃຫ້ຢາກຮັບໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບຊະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ແລ້ວສເດັຈລຸກຂຶ້ນຈາກທີ່ປະທັບສເດັຈກັບ ຕໍ່ມາພຣະພຸທທອົງຄ໌ ໄດ້ຊົງສະແດງທັມມີກຖາເພາະເຣື້ອງນັ້ນເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອນຸຍາຕອາຣາມ”

ພິມພິສາຣສມາຄົມກຖາ ຈົບ

໑໔. ສາຣີປຸຕຕໂມຄຄັລລານປັພພັຊຊາກຖາ
ວ່າດ້ວຍສາຣີບຸຕຣແລະໂມຄຄັລລານະບັນພະຊາ

[໕໐] ສມັຍນັ້ນ ສັຍຊັຍປຣິພາຊກອາສັຍຢູ່ໃນກຸງຣາຊຄຶຫ໌ພ້ອມດ້ວຍບໍຣິສັດປຣິພາຊກຫມູ່ໃຫຍ່ ຈຳນວນ ໒໕໐ ທ່ານ ຄັ້ງນັ້ນ ສາຣີບຸຕຣແລະໂມຄຄັລລານະປະພຶດພຣົມຈັນຍ໌ຢູ່ໃນສຳນັກສັຍຊັຍ ປຣິພາຊກ ໄດ້ຕັ້ງກຕິກາກັນໄວ້ວ່າ "ຜູ້ໃດບັນລຸອມຕທັມກ່ອນ ຜູ້ນັ້ນຈົ່ງບອກແກ່ອີກຝ່າຍນຶ່ງ" ຂນະນັ້ນ ເວລາເຊົ້າ ທ່ານພຣະອັສສຊິຄອງອັນຕຣວາສກຖືບາຕຣແລະຈີວອນ ເຂົ້າໄປບິນທບາຕຍັງກຸງຣາຊຄຶຫ໌ ມີກິຣິຍາທີ່ກ້າວໄປ ຖອຍກັບ ແລດູ ຫລຽວເບິ່ງ ຄູ້ເຂົ້າ ຢຽດອອກ ຫນ້າເຫລື້ອມໃສ ມີຈັກສຸ ທອດລົງ ເຖິງພ້ອມດ້ວຍອິຣິຍາບົຖ ສາຣີບຸຕຣປຣິພາຊກໄດ້ເຫັນທ່ານພຣະອັສສຊິກຳລັງ ທຽວ ບິນທບາຕຢູ່ໃນກຸງຣາຊຄຶຫ໌ ມີກິຣິຍາກ້າວໄປ ຖອຍກັບ ແລດູ ຫລຽວເບິ່ງ ຄູ້ເຂົ້າ ຢຽດອອກ ຫນ້າ ເຫລື້ອມໃສ ມີຈັກສຸທອດລົງ ເຖິງພ້ອມດ້ວຍອິຣິຍາບົຖແລ້ວຄິດວ່າ "ພິກສຸຮູບນີ້ຄົງເປັນອົງຄ໌ໃດອົງຄ໌ ນຶ່ງ ບັນດາພຣະອຣຫັນຕ໌ຫລືທ່ານຜູ້ດຳເນີນສູ່ຫົນທາງແຫ່ງຄວາມເປັນພຣະອຣຫັນຕ໌ໃນໂລກເປັນແນ່ ຖ້າຢ່າງນັ້ນ ເຮົາຄວນເຂົ້າໄປຫາພິກສຸນີ້ຖາມວ່າ ຜູ້ມີອາຍຸ ທ່ານບວຊອຸທິສໃຜ ໃຜເປັນສາສດາຂອງ ທ່ານຫລືທ່ານຊອບໃຈທັມຂອງໃຜ" ແລ້ວຄິດວ່າ "ບັດນີ້ ຍັງເປັນກາລບໍ່ສົມ ຄວຣ ທີ່ຈະຖາມພິກສຸນີ້ ເພາະທ່ານກຳລັງເຂົ້າບໍຣິເວນບ້ານທຽວບິນທບາຕຢູ່ ຖ້າຢ່າງນັ້ນ ເຮົາຄວຣຕິດຕາມພິກສຸນີ້ໄປຂ້າງຫລັງ ເພາະການຕິດຕາມໄປຂ້າງຫລັງນີ້ເປັນຫົນທາງທີ່ຜູ້ມີຄວາມຕ້ອງການຮູ້ແລ້ວ" ຕໍ່ມາ ທ່ານພຣະອັສສຊິ ໄດ້ທຽວບິນທບາຕໃນກຸງຣາຊຄຶຫ໌ ຮັບບິນທບາຕແລ້ວກັບ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໔. ສາຣີປຸຕຕໂມຄຄັລລານປັພພັຊຊາກຖາ

ລຳດັບນັ້ນ ສາຣີບຸຕຣປຣິພາຊກຈຶ່ງເຂົ້າໄປຫາທ່ານພຣະອັສສຊິ ແລ້ວໄດ້ສົນທນາປາສັຍພໍເປັນທີ່ ບັນເທີງໃຈ ພໍເປັນທີ່ຣະນຶກກັນແລ້ວ ຢືນຢູ່ ນະທີ່ສົມຄວຣ ຮຽນຖາມວ່າ "ຜູ້ມີອາຍຸ ອິນທຣີຍ໌ຂອງ ທ່ານຜ່ອງໃສ ຜິວພັນບໍຣິສຸດທ໌ຜຸດຜ່ອງ ຜູ້ມີອາຍຸ ທ່ານບວຊອຸທິສໃຜ ໃຜເປັນສາສດາຂອງທ່ານ ຫລືທ່ານຊອບໃຈທັມຂອງໃຜ" ພຣະອັສສຊິກ່າວຕອບວ່າ "ທ່ານ ມີພຣະມຫາສະມະນະຜູ້ເປັນສາກຍ ບຸຕຣ ສເດັຈອອກຜນວຊຈາກສາກຍຕະກູນ ເຮົາບວຊອຸທິສພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ ພຣະຜູ້ມີ ພຣະພາກພຣະອົງຄ໌ນັ້ນ ເປັນສາສດາຂອງເຮົາ ແລະເຮົາຊອບໃຈທັມຂອງພຣະຜູ້ມີພຣະພາກພຣະອົງຄ໌ ນັ້ນ"

"ກໍພຣະສາສດາຂອງທ່ານຕຣັສຢ່າງໃດ ສອນຢ່າງໃດ"

"ທ່ານ ເຮົາເປັນຜູ້ໃໝ່ ບວຊບໍ່ດົນ ຄວນມາສູ່ພຣະທັມວິນັຍນີ້ ບໍ່ສາມາດສະແດງທັມໂດຍພິສດາຣແກ່ທ່ານໄດ້ ແຕ່ຈັກກ່າວແຕ່ໃຈຄວາມໂດຍຫຍໍ້ແກ່ທ່ານ" ເທື່ອນັ້ນ ສາຣີບຸຕຣປຣິພາຊກຂາບຮຽນທ່ານພຣະອັສສຊິວ່າ "ເອົາເຖາະ ຜູ້ມີອາຍຸ ຈະນ້ອຍຫລືມາກກໍຕາມ ຈົ່ງກ່າວເຖີດ ຈົ່ງກ່າວແຕ່ໃຈ ຄວາມແກ່ຂ້າພະເຈົ້າ ຂ້າພະເຈົ້າຕ້ອງການແຕ່ໃຈຄວາມເທົ່ານັ້ນ ທ່ານຈະເຮັດພຍັນຊນະໃຫ້ມາກໄປເຮັດຫຍັງ"

ພຣະອັສສຊິສະແດງທັມ

ລຳດັບນັ້ນ ທ່ານພຣະອັສສຊິໄດ້ກ່າວທັມປຣິຍາຍນີ້ແກ່ສາຣີບຸຕຣປຣິພາຊກວ່າ "ທັມເຫລົ່າໃດເກີດແຕ່ເຫຕຸ ພຣະຕຖາຄົຕຕຣັສເຫຕຸແຫ່ງທັມເຫລົ່ານັ້ນ ແລະຄວາມດັບແຫ່ງທັມເຫລົ່ານັ້ນ ພຣະມຫາສະມະນະມີປົກກະຕິຕຣັສຢ່າງນີ້"໑

ໝາຍເຫດ :

໑ ທັມທີ່ເກີດແຕ່ເຫຕຸ ຄື ຂັນທ໌ ໕ ໄດ້ແກ່ທຸກຂ໌ ເຫຕຸແຫ່ງທັມ ຄື ສມຸທັຍ ຄວາມດັບແຫ່ງທັມເຫລົ່ານັ້ນ ຄື ນິໂຣທແລະມັຄມີອົງຄ໌ ໘ (ວິ. ອ. ໓/໖໐/໓໐)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໔. ສາຣີປຸຕຕໂມຄຄັລລານປັພພັຊຊາກຖາ

ສາຣີບຸຕຣປຣິພາຊກໄດ້ທັມຈັກສຸ

ເພາະໄດ້ຟັງທັມປຣິຍາຍນີ້ ທັມຈັກສຸ ອັນປາສຈາກທຸລີ ປາສຈາກມົລທິນ ໄດ້ເກີດຂຶ້ນແກ່ສາຣີບຸຕຣປຣິພາຊກວ່າ "ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນທັມດາ ສິ່ງນັ້ນທັງປວງມີຄວາມດັບໄປເປັນທັມດາ" ສາຣີບຸຕຣປຣິພາຊກກ່າວວ່າ "ຖ້າທັມນີ້ ມີພຽງເທົ່ານີ້ ທ່ານກໍໄດ້ຮູ້ແຈ້ງແທງຕລອດທາງອັນຫາຄວາມໂສກບໍ່ໄດ້ແລ້ວ ອັນເປັນທາງທີ່ພວກຂ້າພະເຈົ້າຍັງບໍ່ໄດ້ເຫັນ ລ່ວງເລີຍມາແລ້ວຫລາຍໝື່ນກັປ"

ສາຣີບຸຕຣປຣິພາຊກເປື້ອງຄຳສັນຍາ

[໕໑] ຄັ້ງນັ້ນ ສາຣີບຸຕຣປຣິພາຊກໄດ້ກັບໄປຫາໂມຄຄັລລານປຣິພາຊກເຖິງທີ່ພັກໂມຄຄັລລານປຣິພາຊກ ໄດ້ເຫັນສາຣີບຸຕຣປຣິພາຊກຍ່າງມາແຕ່ໄກ ຄັນເຫັນແລ້ວຈຶ່ງໄດ້ກ່າວກັບສາຣີບຸຕຣປຣິພາຊກ ດັ່ງນີ້ວ່າ "ທ່ານ ອິນທຣີຍ໌ຂອງທ່ານຜ່ອງໃສ ຜິວພັນບໍຣິສຸດທ໌ ຜຸດຜ່ອງ ທ່ານໄດ້ບັນລຸອມຕທັມແລ້ວຫລື" ສາຣີບຸຕຣປຣິພາຊກຕອບວ່າ "ແມ່ນແລ້ວທ່ານ ເຮົາໄດ້ບັນລຸອມຕທັມແລ້ວ" "ທ່ານ ທ່ານໄດ້ບັນລຸອມຕທັມໄດ້ຢ່າງໃດ"

"ທ່ານ ເຮົາໄດ້ເຫັນທ່ານພຣະອັສສຊິກຳລັງທ່ຽວບິນທບາຕຢູ່ໃນກຸງຣາຊຄຶຫ໌ ມີກິຣິຍາກ້າວໄປ ຖອຍກັບ ແລດູ ຫລຽວເບິ່ງ ຄູ້ເຂົ້າ ຢຽດອອກ ຫນ້າເຫລື້ອມໃສ ມີຈັກສຸທອດລົງ ເຖິງພ້ອມດ້ວຍອິຣິຍາບົຖແລ້ວຄິດວ່າ 'ພິກສຸຮູບນີ້ຄົງເປັນອົງຄ໌ໃດອົງຄ໌ນຶ່ງ ບັນດາພຣະອຣຫັນຕ໌ຫລືທ່ານຜູ້ດຳເນີນສູ່ຫົນທາງແຫ່ງຄວາມເປັນພຣະອຣຫັນຕ໌ໃນໂລກເປັນແນ່ ຖ້າຢ່າງນັ້ນ ເຮົາຄວນເຂົ້າໄປຫາພິກສຸນີ້ຖາມວ່າ ຜູ້ມີອາຍຸ ທ່ານບວຊອຸທິສໃຜ ໃຜເປັນສາສດາຂອງທ່ານ ຫລືທ່ານຊອບທັມຂອງໃຜ' ແລ້ວຄິດວ່າ 'ບັດນີ້ ຍັງເປັນກາລບໍ່ສົມຄວຣທີ່ຈະຖາມພິກສຸນີ້ ເພາະທ່ານກຳລັງເຂົ້າບໍຣິເວນບ້ານ ທ່ຽວບິນທບາຕຢູ່ ຖ້າຢ່າງນັ້ນເຮົາຄວຣຕິດຕາມພິກສຸນີ້ໄປຂ້າງຫລັງ ເພາະກາຣຕິດຕາມໄປຂ້າງຫລັງນີ້ ເປັນຫົນທາງທີ່ຜູ້ມີຄວາມຕ້ອງກາຣຮູ້ແລ້ວ' ຕໍ່ມາ ທ່ານພຣະອັສສຊິໄດ້ທ່ຽວບິນທບາຕໃນກຸງຣາຊຄຶຫ໌ ຮັບບິນທບາຕແລ້ວກັບ ລຳດັບນັ້ນ ເຮົາຈຶ່ງເຂົ້າໄປຫາທ່ານພຣະອັສສຊິ ແລ້ວໄດ້ສົນທນາປາສັຍພໍເປັນທີ່ບັນເທີງໃຈພໍເປັນທີ່ຣະນຶກກັນແລະກັນແລ້ວ ຢືນຢູ່ ນະທີ່ສົມຄວຣ ຮຽນ ຖາມວ່າ 'ຜູ້ມີອາຍຸ ອິນທຣີຍ໌ຂອງທ່ານຜ່ອງໃສ ຜິວພັນບໍຣິສຸດທ໌ຜຸດຜ່ອງ ຜູ້ມີອາຍຸ ທ່ານບວຊອຸທິສໃຜ ໃຜເປັນສາສດາຂອງທ່ານ ຫລືທ່ານຊອບໃຈທັມຂອງໃຜ' ພຣະອັສສຊິກ່າວຕອບວ່າ "ທ່ານ ມີພຣະມຫາສະມະນະຜູ້ເປັນສາກຍບຸຕຣສເດັຈອອກຜນວຊຈາກສາກຍຕະກູນ ເຮົາບວຊອຸທິສພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ ພຣະຜູ້ມີພຣະພາກພຣະອົງຄ໌ນັ້ນເປັນສາສດາຂອງເຮົາ ແລະເຮົາຊອບໃຈທັມຂອງພຣະຜູ້ມີພຣະພາກພຣະອົງຄ໌ນັ້ນ" ເຮົາຈຶ່ງຖາມວ່າ 'ກໍພຣະສາສດາຂອງທ່ານຕຣັສຢ່າງໃດ ສອນຢ່າງໃດ' ທ່ານພຣະອັສສຊິກ່າວວ່າ 'ທ່ານ ເຮົາເປັນຜູ້ໃຫມ່ ບວຊບໍ່ດົນ ຄວນມາສູ່ ພຣະທັມວິນັຍນີ້ ບໍ່ສາມາດສະແດງທັມໂດຍພິສດາຣແກ່ທ່ານໄດ້ ແຕ່ຈັກກ່າວແຕ່ໃຈຄວາມໂດຍຫຍໍ້ແກ່ທ່ານ' ເທື່ອນັ້ນ ເຮົາຈຶ່ງຂາບຮຽນທ່ານພຣະອັສສຊິວ່າ "ເອົາເຖາະ ຜູ້ມີອາຍຸຈະນ້ອຍຫລືມາກກໍຕາມ ຈົ່ງກ່າວເຖີດ ຈົ່ງກ່າວແຕ່ໃຈຄວາມແກ່ຂ້າພະເຈົ້າ ຂ້າພະເຈົ້າຕ້ອງກາຣແຕ່ໃຈຄວາມເທົ່ານັ້ນ ທ່ານຈະເຮັດພຍັນຊນະໃຫ້ມາກໄປເປັນຫຍັງ" ລຳດັບນັ້ນ ທ່ານພຣະອັສສຊິໄດ້ກ່າວທັມປຣິຍາຍນີ້ວ່າ "ທັມເຫລົ່າໃດເກີດແຕ່ເຫຕຸພຣະຕຖາຄົຕຕຣັສເຫຕຸແຫ່ງທັມເຫລົ່ານັ້ນ ແລະຄວາມດັບແຫ່ງທັມເຫລົ່ານັ້ນ ພຣະມຫາສະມະນະມີປົກຕິຕຣັສຢ່າງນີ້"

ໂມຄຄັລລານປຣິພາຊກໄດ້ທັມຈັກສຸ ເພາະໄດ້ຟັງທັມປຣິຍາຍນີ້ ທັມຈັກສຸ ອັນປາສຈາກທຸລີ ປາສຈາກມົລທິນ ໄດ້ເກີດຂຶ້ນແກ່ໂມຄຄັລລານປຣິພາຊກວ່າ "ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນທັມດາ ສິ່ງນັ້ນທັງປວງມີຄວາມດັບໄປເປັນທັມດາ" ໂມຄຄັລລານປຣິພາຊກກ່າວວ່າ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໔. ສາຣີປຸຕຕໂມຄຄັລລານປັພພັຊຊາກຖາ

"ຖ້າຫຼັກນີ້ ມີພຽງເທົ່ານີ້ ທ່ານກໍໄດ້ຮູ້ແຈ້ງແທງຕລອດທາງອັນທາຄວາມໂສກບໍ່ໄດ້ແລ້ວອັນເປັນທາງທີ່ພວກເຮົາຍັງບໍ່ໄດ້ເຫັນລ່ວງເລີຍມາແລ້ວຫລາຍຫມື່ນກັປ"

ສອງສະຫາຍໄປອໍາລາອາຈາຣຍ໌

[໕໔] ຄັ້ງນັ້ນ ໂມຄຄັລລານປຣິພາຊກໄດ້ກ່າວກັບສາຣີບຸຕຣປຣິພາຊກວ່າ "ທ່ານເຮົາໄປສໍານັກພຣະຜູ້ມີພຣະພາກກັນເຖີດ ເພາະພຣະອົງຄ໌ເປັນສາສດາຂອງເຮົາ" ສາຣີບຸຕຣປຣິພາຊກກ່າວວ່າ "ທ່ານປຣິພາຊກ ໒໕໐ ຄົນເຫລົ່ານີ້ ອາສັຍເຮົາເຫັນແກ່ເຮົາ ຈຶ່ງຢູ່ໃນສໍານັກນີ້ ເຮົາບອກລາປຣິພາຊກເຫລົ່ານັ້ນກ່ອນ ພວກເຂົາຈະເຮັດຕາມທີ່ເຂົາເຂົ້າໃຈ" ຕໍ່ມາ ສາຣີບຸຕຣແລະໂມຄຄັລລານະພາກັນເຂົ້າໄປຫາປຣິພາຊກເຫລົ່ານັ້ນເຖິງທີ່ຢູ່ ໄດ້ກ່າວດັ່ງນີ້ວ່າ "ທ່ານທັງຫລາຍ ພວກເຮົາຈະໄປສໍານັກພຣະຜູ້ມີພຣະພາກ ເພາະພຣະອົງຄ໌ເປັນສາສດາຂອງພວກເຮົາ" ພວກປຣິພາຊກກ່າວວ່າ "ຂ້າພະເຈົ້າທັງຫລາຍອາສັຍພວກທ່ານ ເຫັນແກ່ພວກທ່ານຈຶ່ງຢູ່ໃນສໍານັກນີ້ ຖ້າທ່ານທັງສອງຈັກປະພຶດພຣົມຈັນຍ໌ໃນສໍານັກພຣະມຫາສະມະນະ ຂ້າພະເຈົ້າທັງຫມົດກໍຈັກປະພຶດພຣົມຈັນຍ໌ໃນສໍານັກພຣະມຫາສະມະນະດ້ວຍ" ຕໍ່ມາ ສາຣີບຸຕຣແລະໂມຄຄັລລານະພາກັນເຂົ້າໄປຫາສັຍຊັຍປຣິພາຊກຂາບຮຽນວ່າ "ທ່ານຂະນ້ອຍ ພວກຜູ້ຂ້າຈະໄປສໍານັກພຣະຜູ້ມີພຣະພາກ ເພາະພຣະອົງຄ໌ເປັນສາສດາຂອງພວກຜູ້ຂ້າ" ສັຍຊັຍປຣິພາຊກກ່າວຫ້າມວ່າ "ຢ່າເລີຍ ທ່ານທັງຫລາຍຢ່າໄປ ເຮົາທັງຫມົດ ໓ ຄົນ ຈັກຊ່ວຍກັນບຣິຫາຣຄນະນີ້"

ແມ່ນຄັ້ງທີ ໒ ຯລຯ

ແມ່ນຄັ້ງທີ ໓ ສາຣີບຸຕຣແລະໂມຄຄັລລານະ ກໍຂາບຮຽນສັຍຊັຍປຣິພາຊກດັ່ງນີ້ວ່າ "ທ່ານຂະນ້ອຍ ພວກຜູ້ຂ້າຈະໄປສໍານັກພຣະຜູ້ມີພຣະພາກ ເພາະພຣະອົງຄ໌ເປັນສາສດາຂອງພວກຜູ້ຂ້າ" ສັຍຊັຍປຣິພາຊກກໍຍັງກ່າວຫ້າມວ່າ "ຢ່າເລີຍ ທ່ານທັງຫລາຍຢ່າໄປ ເຮົາທັງຫມົດ ໓ ຄົນ ຈັກຊ່ວຍກັນບຣິຫາຣຄນະນີ້" ຫລັງຈາກນັ້ນ ສາຣີບຸຕຣແລະໂມຄຄັລລານະໄດ້ພາປຣິພາຊກ ໒໕໐ ຄົນນັ້ນ ມຸ່ງຫນ້າໄປທາງພຣະເວຣຸວັນ ໂລຫິຕຮ້ອນກໍພົ່ງອອກຈາກປາກຂອງສັຍຊັຍປຣິພາຊກ ນະທີ່ນັ້ນເອງ

ຊົງພຍາກອນພຣະອັຄຣສາວົກ

ພຣະຜູ້ມີພຣະພາກໄດ້ທອດພຣະເນຕຣເຫັນສາຣີບຸຕຣແລະໂມຄຄັລລານະຍ່າງມາແຕ່ໄກ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ສະຫາຍທັງ ໒ ຄົນນັ້ນ ຄືໂກລິຕະແລະອຸປຕິສສະກໍາລັງມານັ້ນຈັກເປັນຄູ່ສາວົກຊັ້ນຍອດ ເປັນຄູ່ທີ່ຈະເຈີນຂອງເຮົາ" ທ່ານສາຣີບຸຕຣແລະທ່ານໂມຄຄັລລານະ ຜູ້ນ້ອມຈິຕໄປໃນຫຼັກອັນຍອດຢ້ຽມ ລຶກຊຶ້ງ ເປັນວິສັຍແຫ່ງຍານະ ເປັນທີ່ສິ້ນອຸປທິ ຍັງມາບໍ່ເຖິງພຣະ

ເວຣຸວັນ ພຣະສາສຸດາກໍຊົງພຍາກອນແລ້ວວ່າ "ສະຫາຍທັງ ໔ ຄົນນັ້ນ ຄືໂກລິຕະແລະອຸປຕິສສະກໍາລັງມາ ນັ້ນຈັກເປັນຄູ່ສາວົກຊັ້ນຍອດ ເປັນຄູ່ທີ່ຈະເຣີນຂອງເຮົາ"

ທູລຂໍການບັນພະຊາອຸປສົມບົທ

ຕໍ່ມາ ສາຣີບຸຕຣແລະໂມຄຄັລລານະໄດ້ພາກັນເຂົ້າໄປເຝົ້າພຣະຜູ້ມີພຣະພາກ ແລ້ວໝອບສີສະແທບພຣະບາທຂອງພຣະຜູ້ມີພຣະພາກ ຂາບທູລວ່າ "ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ພວກຂ້າພຣະອົງຄ໌ຄວນໄດ້ການບັນພະຊາ ຄວນໄດ້ການອຸປສົມບົທໃນສໍານັກຂອງພຣະຜູ້ມີພຣະພາກ" ພຣະຜູ້ມີພຣະພາກຕຣັສວ່າ "ພວກທ່ານຈົ່ງມາເປັນພິກສຸເຖີດ" ແລ້ວຕຣັສຕໍ່ໄປວ່າ "ທັມອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶດພຣົມຈັນຍ໌ເພື່ອທໍາທີ່ສຸດທຸກຂ໌ໂດຍຊອບເຖີດ" ພຣະອາຈານັ້ນແລ ໄດ້ເປັນການອຸປສົມບົທຂອງທ່ານເຫລົ່ານັ້ນ໑

ໝາຍເຫດ :

໑ ທ່ານໂກລິຕະຫລືພຣະໂມຄຄັລລານະຫລັງຈາກບວຊໄດ້ ໗ ວັນ ໄປພັກອາສັຍຢູ່ ນະ ບ້ານກັລລວາລະຄາມ(ກັລລ ວາລະມຸຕຕຄາມ) ບໍາເພັນສະມະນະທັມ ຟັງທັມວ່າດ້ວຍທາຕຸກັມມັຕຖານຈາກພຣະພຸດທະເຈົ້າ ບັນລຸພຣະອຣຫັຕຕຜົລ ເຖິງທີ່ສຸດແຫ່ງສາ**ວົກບາ**ຣມີຍານຕາມທີ່ຕັ້ງຄວາມປຣາຖນາໄວ້ ສ່ວນທ່ານອຸປຕິສສະ ຫລືພຣະສາຣີບຸຕຣ ຫລັງຈາກບວຊໄດ້ ໑໕ ວັນ ໄປພັກອາສັຍຢູ່ ນະ ຖໍ້າສູກຣຂາຕາ ເຂຕກຸງຣາຊຄຶຫ໌ ພ້ອມກັບພຣະພຸດທະເຈົ້າ ເມື່ອພຣະພຸທທະອົງຄ໌ຊົງສະແດງເວທນາ ປຣິຄຄຫສູຕຣແກ່ຫລານຊາຍຂອງທ່ານຊື່ທີຂະນະປຣິພາຊກ ພຣະສາຣີບຸຕຣສົ່ງຍານໄປຕາມແນວພຣະສູຕຣບັນລຸພຣະອຣຫັຕຕຜົລ ເຖິງທີ່ສຸດແຫ່ງສາວົກບາຣມີຍານຕາມທີ່ຕັ້ງຄວາມປຣາຖນາໄວ້ (ສາຣຕຖ. ຕີກາ. ໓/໕໔/໔໗໗-໔໗໘)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໔. ສາຣີປຸຕຕໂມຄຄັລລານປັພພັຊຊາກຖາ

ເຣື່ອງກຸລບຸຕຣຊາວມຄທມີຊື່ສຽງບັນພະຊາ

[໕໓] ສມັຍນັ້ນ ພວກກຸລບຸຕຣຊາວມຄທທີ່ມີຊື່ສຽງ ພາກັນປະພຶດພຣົມຈັນຍ໌ໃນສໍານັກພຣະຜູ້ມີພຣະພາກ ຄົນທັງຫລາຍຈຶ່ງພາກັນຕໍາຫນິ ປະນາມ ໂພນທະນາວ່າ "ພຣະສະມະນະໂຄດົມປະຕິບັດເພື່ອໃຫ້ຊາຍບໍ່ມີບຸຕຣ ເພື່ອໃຫ້ຍິງເປັນໝ້າຍ ແລະເພື່ອຄວາມຂາດສູນແຫ່ງຕະກູນ ບັດນີ້ ພຣະສະມະນະ

ໂຄດົມບວຊຊຸດົລ ໑,໐໐໐ ຄົນແລ້ວ ແລະບວຊປຣິພາຊກຜູ້ເປັນສິສຊ໌ຂອງສັ໊ຢຊັຍ ໔໕໐ ຄົນແລ້ວ ແລະພວກກຸລບຸຕຣຊາວມຄຫຼ ເຫລົ່ານີ້ທີ່ມີຊື່ສຽງ ກໍພາກັນປະພຶດພຣົມຈັນຍ໌ໃນສໍານັກພຣະສະມະນະ ໂຄດົມ" ອີກຢ່າງນຶ່ງ ຄົນທັງຫລາຍເຫັນພວກພິກສຸກໍພາກັນໂຈທດ້ວຍຄາຖານີ້ວ່າ "ພຣະມຫາສະມະນະ ສະເດັຈມາສູ່ພຣະຄີຣິພຊຸນຄອນ໑ຂອງຊາວມຄຫຼ ຊົງນໍາປຣິພາຊກຜູ້ເປັນສິສຊ໌ຂອງສັ໊ຢຊັຍໄປຫມົດ ແລ້ວ ບັດນີ້ຍັງຈັກຊົງນໍາໃຜໄປອີກລະ" ພິກສຸທັງຫລາຍໄດ້ຍິນຄົນພວກນັ້ນຕໍາຫນິ ປະນາມ ໂພນທະນາ ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຕຣັສວ່າ "ພິກສຸທັງຫລາຍ ສຽງນັ້ນຄົງຢູ່ບໍ່ດົນ ຈັກມີພຽງ ໗ ວັນເທົ່ານັ້ນ ພົ້ນ ໗ ວັນ ຈັກຫາຍໄປ ພິກສຸທັງ ຫລາຍ ຖ້າຢ່າງນັ້ນ ຊົນເຫລົ່າໃດໂຈທພວກທ່ານດ້ວຍຄາຖານີ້ວ່າ "ພຣະມຫາສະມະນະສະເດັຈມາສູ່ພຣະ ຄີຣິພຊຸນຄອນຂອງຊາວມຄຫຼ ຊົງນໍາປຣິພາຊກຜູ້ເປັນສິສຊ໌ຂອງສັ໊ຢຊັຍໄປຫມົດແລ້ວ ບັດນີ້ຈັກຊົງ ນໍາໃຜໄປອີກລະ" ພວກທ່ານຈົ່ງໂຈທຕອບພວກນັ້ນດ້ວຍຄາຖານີ້ວ່າ "ພຣະຕຖາຄົຕທັງຫລາຍ ຊົງມີ ຄວາມພຽນມາກ ຊົງແນະນໍາດ້ວຍພຣະສັທ ທັມ ເມື່ອຮູ້ແຈ້ງ(ຢ່າງນີ້) ຈະຕ້ອງຣິສຍາພຣະຕຖາ ຄົຕ ຜູ້ຊົງແນະນໍາໂດຍທັມໄປເປັນຫຍັງລະ"

ໝາຍເຫດ :

໑ ຫມາຍເຖິງກຸງຣາຊຄຶຫ໌ ບາງທີຮຽກວ່າ ເບຢຈຄີຣິນຄອນ ທີ່ຊື່ວ່າຄີຣິພຊຸນຄອນ ເພາະເປັນເມືອງທີ່ ລ້ອມຮອບດ້ວຍພູເຂົາ ໕ ລູກ ຄື ປັນທວະ ຄິຊຢກູຕ ເວພາຣະ ອສີຄິລິ ເວປຸລລະ (ສາຣຕຸຖ. ຕີກາ ໓/໓໓/໔໗໑)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໕. ອຸປັຊຢາຍວັຕຕກຖາ

ສະມັຍນັ້ນ ຄົນທັງຫລາຍເຫັນພວກພິກສຸກໍພາກັນໂຈທດ້ວຍຄາຖານີ້ວ່າ "ພຣະມຫາສະມະນະສະເດັຈມາສູ່ ຄີຣິພຊຸນຄອນຂອງຊາວມຄຫຼ ຊົງນໍາປຣິພາຊກຜູ້ເປັນສິສຊ໌ຂອງສັ໊ຢຊັຍໄປຫມົດແລ້ວ ບັດນີ້ຈັກຊົງ ນໍາໃຜໄປອີກລະ" ພິກສຸທັງຫລາຍກໍໂຈທຕອບຄົນພວກນັ້ນດ້ວຍຄາຖານີ້ວ່າ "ພຣະຕຖາຄົຕທັງ ຫລາຍຊົງມີຄວາມພຽນມາກ ຊົງແນະນໍາດ້ວຍພຣະສັທທັມ ເມື່ອຮູ້ແຈ້ງ(ຢ່າງນີ້) ຈະຕ້ອງຣິສຍາພຣະຕ ຖາຄົຕຜູ້ຊົງແນະນໍາໂດຍທັມໄປເປັນຫຍັງລະ" ຄົນທັງຫລາຍກ່າວກັນຢ່າງນີ້ວ່າ "ໄດ້ຍິນວ່າ ພຣະສະມະນະຜູ້ເປັນເຊື້ອສາຍສາກຍບຸຕຣທັງຫລາຍ ຍ່ອມແນະນໍາໂດຍທັມ ຍ່ອມບໍ່ແນະນໍາໂດຍອທັມ" ສຽງນັ້ນມີຢູ່ພຽງ ໗ ວັນເທົ່ານັ້ນ ພົ້ນ ໗ ວັນກໍຫາຍໄປ

ສາຣີປຸຕຕໂມຄຄັລລານປັພພັຊຊາກຖາ ຈົບ
ພານວາຣທີ ໔ ຈົບ

໑໕. ອຸປັຊຊາຍວັຕຕກຖາ໑
ວ່າດ້ວຍອຸປັຊຊາຍວັຕຣ

ເຣື້ອງພິກສຸນຸ່ງຫົ່ມບໍ່ຮຽບຮ້ອຍ
[໖໔] ສມັຍນັ້ນ ພິກສຸທັງຫລາຍຍັງບໍ່ມີພຣະອຸປັຊຊາຍ໌ ບໍ່ມີຜູ້ຄອຍຕັກເຕືອນພ່ຳສອນ ຈຶ່ງນຸ່ງຫົ່ມບໍ່ຮຽບຮ້ອຍ ມີມາຣຍາທບໍ່ສົມຄວຣ ທຽວບິນທບາຕ ເມື່ອຄົນທັງຫລາຍກຳລັງບໍຣິໂພຄ ກໍຍື່ນບາຕຣສຳລັບທຽວບິນທບາຕ໔ ເຂົ້າໄປເທິງຂອງບໍຣິໂພຄແດ່

ໝາຍເຫດ :
໑ ວິ. ຈູ. ໗/໓໗໕-໓໗໖/໑໗໔-໑໗໐
໔ ບາຕຣສຳລັບທຽວບິນທບາຕ (ອຸຕິຕິຕຸ ປຕິຕນິຕີ ປີນິຫາຍ ຈຣນກປຕິຕໍ -ວິ. ອ. ໓/໖໔-໕/໓໔), ພວກມະນຸສຍ໌ສຳຄັນບາຕຣນັ້ນວ່າເປັນເດນ (ວິ. ອ. ໓/໖໔-໕/໓໔), ດູ ສາຣຕິຖ. ຕີກາ ໓/໖໔/໔໗໑, ວິມຕິ. ຕີກາ ໔/໖໔/໑໓໐-໑໓໑

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໕. ອຸປັຊຊາຍວັຕຕກຖາ

ເທິງຂອງຄ້ຽວແດ່ ເທິງຂອງລີ້ມແດ່ ເທິງນ້ຳດື່ມ ອອກປາກຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາແດ່ ສົ່ງສຽງດັ່ງໃນໂຮງສັນແດ່ ຄົນທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດສະມະນະເຊື້ອສາຍສາກຍບຸຕຣ ທັງຫລາຍຈຶ່ງນຸ່ງຫົ່ມບໍ່ຮຽບຮ້ອຍ ມີມາຣຍາທບໍ່ສົມຄວຣ ທຽວບິນທບາຕ ເມື່ອຄົນທັງຫລາຍ ກຳລັງບໍຣິໂພຄ ກໍຍື່ນບາຕຣສຳລັບທຽວບິນທບາຕເຂົ້າໄປເທິງຂອງບໍຣິໂພຄແດ່ ເທິງຂອງຄ້ຽວແດ່ ເທິງຂອງລີ້ມແດ່ ເທິງນ້ຳດື່ມແດ່ ອອກປາກຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາສັນ ສົ່ງສຽງດັ່ງໃນໂຮງສັນແດ່ ເຫມືອນພວກພຣາມນ໌ໃນສະຖານທີ່ລ້ຽງ ພຣາມນ໌ສະນັ້ນລະ" ພິກສຸທັງຫລາຍໄດ້ຍິນຄົນເຫລົ່ານັ້ນກ່າວຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ສັນໂດດ ມີຄວາມລະອາຍ ມີຄວາມຣະມັດຣະວັງ ໃຝ່ກາຣສຶກສາ ຈຶ່ງຕຳຫນິ ປະນາມໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງນຸ່ງຫົ່ມບໍ່ຮຽບຮ້ອຍ ມີມາຣຍາທບໍ່ສົມຄວຣ ທຽວບິນທບາຕ

ເມື່ອຄົນທັງຫລາຍກຳລັງບໍຣິໂພຄ ກໍຍື່ນບາຕຣສຳລັບທຽວບິນທບາຕເຂົ້າໄປເທິງຂອງບໍຣິໂພຄແດ່ ເທິງຂອງຄ້ຽວແດ່ ເທິງຂອງລີ້ມແດ່ ເທິງນ້ຳດື່ມແດ່ ອອກປາກຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາສັນ ສົ່ງສຽງດັ່ງໃນໂຮງສັນແດ່ລະ" ແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ຊົງປະຊຸມສົງຂ໌ສອບຖາມ

ຄັ້ງນັ້ນ ພຣະຜູ້ມີພຣະພາກຮັບສັ່ງໃຫ້ປະຊຸມພິກສຸສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າພວກພິກສຸນຸ່ງຫົ່ມບໍ່ຮຽບຮ້ອຍ ມີມາຣຍາທບໍ່ສົມຄວຣ ທຽວບິນທບາຕ ເມື່ອຄົນທັງຫລາຍກຳລັງບໍຣິໂພຄ ກໍຍື່ນບາຕຣສຳລັບທຽວບິນທບາຕເຂົ້າໄປເທິງຂອງບໍຣິໂພຄແດ່ ເທິງຂອງຄ້ຽວແດ່ ເທິງຂອງລີ້ມແດ່ ເທິງນ້ຳດື່ມແດ່ ອອກປາກຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາສັນ ສົ່ງສຽງດັ່ງແມ່ນໃນໂຮງສັນແດ່ ແມ່ນແທ້ບໍ່" ພິກສຸທັງຫລາຍ ທູລຮັບວ່າ "ແມ່ນແທ້ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກພຸດທະເຈົ້າຊົງຕຳໜິວ່າ "ພິກສຸທັງຫລາຍ ກາຣກະທຳຂອງໂມຂບຸຣຸສເຫລົ່ານັ້ນ ບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເໝາະສົມ ບໍ່ແມ່ນກິຈຂອງສະມະນະ ໃຊ້ບໍ່ໄດ້ບໍ່ຄວຣທຳເລີຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຈຶ່ງໄດ້ນຸ່ງຫົ່ມບໍ່ຮຽບຮ້ອຍ ມີມາຣຍາທບໍ່ສົມຄວຣ ທຽວບິນທບາຕ ເມື່ອຄົນທັງຫລາຍກຳລັງບໍຣິໂພຄ ກໍຍື່ນບາຕຣສຳລັບທຽວບິນທບາຕເຂົ້າໄປເທິງ ຂອງບໍຣິໂພຄແດ່ ເທິງຂອງຄ້ຽວແດ່ ເທິງຂອງລີ້ມແດ່ ເທິງນ້ຳດື່ມແດ່ ອອກປາກຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາສັນ ສົ່ງສຽງດັ່ງແມ່ນໃນໂຮງສັນແດ່ລະ ພິກສຸທັງຫລາຍ ກາຣກະທຳຂອງພວກໂມຂບຸຣຸສນັ້ນ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ແມ່ນແທ້ກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສໃຫ້ບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກ ກໍຈະກາຍເປັນອື່ນໄປ"

ຊົງອນຸຍາຕອຸປັຊຢາຍ໌

ຄັນພຣະຜູ້ມີພຣະພາກຊົງຕຳໜິພິກສຸເຫລົ່ານັ້ນໂດຍປະກາຣຕ່າງໆແລ້ວ ໄດ້ຕຣັສໂທສແຫ່ງຄວາມເປັນຄົນລ້ຽງຍາກ ບຳຣຸງຍາກ ມັກມາກ ບໍ່ສັນໂດດ ຄວາມເກືອກກົ້ວຄວາມກຽດຄ້ານ ຕຣັສຄຸນແຫ່ງຄວາມເປັນຄົນລ້ຽງງ່າຍ ບຳຣຸງງ່າຍ ມັກນ້ອຍ ສັນໂດດ ຄວາມຂັດເກົາ ຄວາມກຳຈັດກິເລສ ອາກາຣທີ່ໜ້າເຫລື້ອມໃສ ກາຣບໍ່ສະສົມ ກາຣປາຣົພຄວາມພຽນ ໂດຍປະກາຣຕ່າງໆຊົງສະແດງທັມມີກຖາໃຫ້ເໝາະສົມ ໃຫ້ຄ້ອຍຕາມກັບເອື້ອງນັ້ນແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ

[໖໕] ພິກສຸທັງຫລາຍ ເຮົາອນຸຍາຕອຸປັຊຊາຍ໌ ອຸປັຊຊາຍ໌ຈັກເຂົ້າໄປຕັ້ງຈິດສນິທສນົມໃນສັທຫິ ວິຫາຣິກສັນບຸຕຣ ສັທຫິວິຫາຣິກ໑ຈັກເຂົ້າໄປຕັ້ງຈິດສນິທສນົມໃນອຸປັຊຊາຍ໌ສັນບິດາ ເມື່ອເປັນເຊັ່ນນີ້ ອຸປັຊຊາຍ໌ແລະສັທຫິວິຫາຣິກຈັກມີຄວາມເຄົາຣົພ ຢຳເກງປະພຶດກົມກຽວກັນ ຈັກເຖິງຄວາມຈະເຣີນ ງອກງາມໄພບູລຍ໌ໃນທັມວິນັຍນີ້

ວິທີຖືອຸປັຊຊາຍ໌

ພິກສຸທັງຫລາຍ ສັທຫິວິຫາຣິກຄວນຖືອຸປັຊຊາຍ໌ຢ່າງນີ້ ສັທຫິວິຫາຣິກຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນ ນັ່ງຄຸເຂົ່າ ປະນົມມືກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ທ່ານຈົ່ງເປັນອຸປັຊຊາຍ໌ຂອງຂ້າພະເຈົ້າເຖີດ

ໝາຍເຫດ :

໑ ສັທຫິວິຫາຣິກ ແປວ່າ ຜູ້ຢູ່ດ້ວຍກັນ ເປັນຄຳຮຽກຜູ້ທີ່ໄດ້ຮັບອຸປສົມບົທ ຖ້າອຸປສົມບົທຕໍ່ພຣະອຸປັຊຊາຍ໌ຮູບໃດກໍເປັນສັທຫິວິຫາຣິກຂອງພຣະອຸປັຊຊາຍ໌ຮູບນັ້ນ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໕. ອຸປັຊຊາຍວັຕຕກຖາ

ທ່ານຜູ້ຈະເຣີນ ທ່ານຈົ່ງເປັນອຸປັຊຊາຍ໌ຂອງຂ້າພະເຈົ້າເຖີດ ທ່ານຜູ້ຈະເຣີນ ທ່ານຈົ່ງເປັນອຸປັຊຊາຍ໌ຂອງຂ້າພະເຈົ້າເຖີດ" ອຸປັຊຊາຍ໌ໃຫ້ສັທຫິວິຫາຣິກຮູ້ດ້ວຍກາຍ ໃຫ້ຮູ້ດ້ວຍວາຈາ ຫລືໃຫ້ຮູ້ດ້ວຍກາຍແລະວາຈາ ວ່າ "ດີລະ" ວ່າ "ເບົາໃຈລະ" ວ່າ "ຊອບແກ່ອຸບາຍລະ" ວ່າ "ສົມຄວຣລະ" ຫລືວ່າ "ຈົ່ງປະພຶດປະຕິບັດໃຫ້ຫນ້າເຫລື້ອມໃສ" ອຸປັຊຊາຍ໌ຊື່ວ່າເປັນຜູ້ທີ່ສັທຫິວິຫາຣິກຖືແລ້ວ ອຸປັຊຊາຍ໌ບໍ່ໃຫ້ສັທຫິວິຫາຣິກຮູ້ດ້ວຍກາຍ ບໍ່ໃຫ້ຮູ້ດ້ວຍວາຈາ ຫລືບໍ່ໃຫ້ຮູ້ດ້ວຍກາຍແລະວາຈາ ອຸປັຊຊາຍ໌ຊື່ວ່າເປັນຜູ້ທີ່ສັທຫິວິຫາຣິກຍັງບໍ່ໄດ້ຖື

ອຸປັຊຊາຍວັຕຣ

[໖໖] ພິກສຸທັງຫລາຍ ສັທຫິວິຫາຣິກຄວນປະພຶດໂດຍຊອບໃນອຸປັຊຊາຍ໌ ວິທີປະພຶດໂດຍຊອບໃນອຸປັຊຊາຍ໌ນັ້ນມີດັ່ງນີ້ ສັທຫິວິຫາຣິກຄວນລຸກຂຶ້ນແຕ່ເຊົ້າຕຣູ່ ຖອດເກີບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຖວາຍໄມ້ຊຳຣະແຂ້ວ ນ້ຳລ້າງຫນ້າ ປູອາສນະ ຖ້າເຂົ້າປຽກມີ ຄວນລ້າງພາຊນະໃສ່ເຂົ້າ ຕົ້ມເຂົ້າໄປຖວາຍ ເມື່ອອຸປັຊຊາຍ໌ສັນເຂົ້າປຽກເສັດແລ້ວ ຄວນຖວາຍນ້ຳຮັບພາຊນະມາ ຖືຢ່າງຣະມັດ ຣະວັງ ບໍ່

ໃຫ້ຊູດ໑ ລ້າງແລ້ວເກັບງຳໄວ້ ເມື່ອອຸປັຊຊາຍ໌ລຸກຂຶ້ນແລ້ວ ຄວນຍກອາສນະເກັບ ຖ້າທີ່ນັ້ນຣົກ ຄວນກວາດ ຖ້າອຸປັຊຊາຍ໌ຕ້ອງການຈະເຂົ້າຫມູ່ບ້ານ ຄວນຖວາຍຜ້ານຸ່ງ ຮັບຜ້ານຸ່ງອາສັຍ ຖວາຍ ປະຄົດແອວ ຖວາຍສັງຊາຕິທີ່ພັບຊ້ອນກັນ ລ້າງບາຕຣແລ້ວຖວາຍພ້ອມທັງນ້ຳ ຖ້າອຸປັຊຊາຍ໌ຫວັງຈະ ໃຫ້ເປັນປັຈສາສະມະນະ ເຖິງນຸ່ງໃຫ້ຮຽບຮ້ອຍປົກປິດໄດ້ມົນທົລ ໓໔ ຄາດປະຄົດແອວທົ່ມ ສັງຊາຕິ ທີ່ພັບຊ້ອນກັນ ກລັດລູກດຸມ ລ້າງບາຕຣຖືໄປ ເປັນປັຈສາສະມະນະຂອງອຸປັຊຊາຍ໌ ຄວນຍ່າງ ບໍ່ໃຫ້ ຫ່າງນັກ ບໍ່ໃຫ້ຊິດນັກ ຄວນຮັບບາຕຣທີ່ມີຂອງບັນຈຸຢູ່

ໝາຍເຫດ :

໑ ບໍ່ໃຫ້ຊູດພື້ນ (ວິ. ອ. ໓/໖໖/໓໖)

໔ ມົນທົລ ໓ ຄື ຖ້າເປັນຜ້າອຸຕຕຣາສົງຄ໌ (ຜ້າຫົ່ມ) ຕ້ອງຫົ່ມປິດຫລຸມຄອແລະທຳຊາຍຈີວອນທັງ ໔ ຂ້າງໃຫ້ສເມີກັນ ຖ້າເປັນອັນຕຣວາສກ ຕ້ອງນຸ່ງປິດສາຍບື ແລະປິດເຂົ່າທັງ ໔ ຂ້າງ (ດູ ວິ. ມຫາ. (ແປ) ໔/໕໗໖-໕໗໗/໖໕໐-໖໕໑ ແລະ ວິ. ອ. ໔/໕໗໖-໕໗໗/໔໔໗-໔໔໘)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໕. ອຸປັຊຊາຍວັຕຕກຖາ

ເມື່ອອຸປັຊຊາຍ໌ກຳລັງກ່າວ ບໍ່ຄວນກ່າວສອດຂຶ້ນໃນຣະຫວ່າງ ອຸປັຊຊາຍ໌ກ່າວຖ້ອຍຄຳ ໃກ້ຕໍ່ອາບັຕິ ຄວນຫ້າມເສັຽ ເມື່ອອຸປັຊຊາຍ໌ຈະກັບ ຄວນມາກ່ອນແລ້ວປູອາສນະໄວ້ ຄວນຕຽມນ້ຳລ້າງຕີນ ຕັ່ງ ຮອງຕີນ ກະເບື້ອງເຊັດຕີນໄວ້ ຄວນລຸກຂຶ້ນຮັບບາຕຣແລະຈີວອນ ຄວນຖວາຍຜ້ານຸ່ງອາສັຍ ຮັບຜ້າ ນຸ່ງມາ ຖ້າຈີວອນຊຸ່ມເຫື່ອ ຄວນຜຶ່ງແດດຄູ່ນຶ່ງ ບໍ່ຄວນຜຶ່ງຖິ້ມໄວ້ທີ່ແດດ ຄວນພັບຈີວອນ ເມື່ອຈະພັບ ຈີວອນ ຄວນພັບຈີວອນໃຫ້ເຫລື່ອມມຸມກັນ ໔ ນິ້ວ ຕັ້ງໃຈວ່າ ທາງກາງຈະໄດ້ບໍ່ມີຮອຍພັບ ຄວນມ້ວນປະຄົດແອວໃສ່ອ້ອມຈີວອນ ຖ້າບິນທບາຕມີ ແລະອຸປັຊຊາຍ໌ຕ້ອງການຈະສັນ ຄວນ ຖວາຍ ນ້ຳແລ້ວນ້ອມບິນທບາຕເຂົ້າໄປຖວາຍ ນຳນ້ຳສັນມາຖວາຍ ເມື່ອອຸປັຊຊາຍ໌ສັນເສັດແລ້ວ ຄວນຖວາຍນ້ຳ ຮັບບາຕຣມາຖືຢ່າງຣະມັດຣະວັງ ບໍ່ໃຫ້ຊູດ ລ້າງແລ້ວເຊັດໃຫ້ສະເດັດນ້ຳຜຶ່ງແດດຄູ່ນຶ່ງ ບໍ່ຄວນຜຶ່ງຖິ້ມ ໄວ້ທີ່ແດດ ຄວນເກັບບາຕຣແລະຈີວອນ ເມື່ອຈະເກັບບາຕຣ ຄວນໃຊ້ມື ຂ້າງນຶ່ງຖືບາຕຣ ໃຊ້ມືຂ້າງ ນຶ່ງຄຳໃຕ້ຕຽງຫລືໃຕ້ຕັ່ງ ຈຶ່ງເກັບບາຕຣ ບໍ່ຄວນເກັບບາຕຣໄວ້ບົນພື້ນທີ່ບໍ່ມີສິ່ງໃດຮອງ ເມື່ອຈະເກັບ ຈີວອນ ຄວນໃຊ້ມືຂ້າງນຶ່ງຖືຈີວອນ ໃຊ້ມືຂ້າງນຶ່ງລູບຣາວຈີວອນຫລືສາຍຣະດຽງ ເອົາຊາຍໄວ້ນອກ ເອົາຂົດໄວ້ໃນ ຈຶ່ງເກັບຈີວອນ ເມື່ອອຸປັຊຊາຍ໌ລຸກຂຶ້ນແລ້ວ ຄວນ ຍົກອາສນະເກັບ

ຄວນເກັບນ້ຳລ້າງຕີນ ຕັ່ງຮອງຕີນກະເບື້ອງເຊັດຕີນ ຖ້າທີ່ນັ້ນຮົກ ຄວນກວາດ ຖ້າອຸປັຊຢາຍ໌ຕ້ອງການຈະສົງນ້ຳ ຄວນຈັດນ້ຳສົຣົງຖວາຍ ຖ້າທ່ານຕ້ອງການນ້ຳເຢັນ ຄວນຈັດນ້ຳ ເຢັນຖວາຍ ຖ້າທ່ານຕ້ອງການນ້ຳອຸ່ນ ຄວນຈັດນ້ຳອຸ່ນຖວາຍ ຖ້າອຸປັຊຢາຍ໌ຕ້ອງການຈະເຂົ້າເຮືອນໄຟ ຄວນບົດຈຸຣນະ ຄວນແຊ່ດິນ ຖືຕັ່ງສຳລັບເຮືອນໄຟຍ່າງຕາມຫລັງອຸປັຊຢາຍ໌ໄປ ຖວາຍຕັ່ງສຳລັບເຮືອນໄຟແລ້ວຮັບຈີວອນມາວາງ ນ ທີ່ສົມຄວຣ ຄວນຖວາຍຈຸຣນແລະດິນ ຖ້າສາມາດ ຄວນ ເຂົ້າເຮືອນໄຟ ເມື່ອຈະເຂົ້າເຮືອນໄຟ ຄວນເອົາດິນທາຫນ້າປົດຫນ້າແລະຫລັງ ຈຶ່ງເຂົ້າເຮືອນໄຟ ບໍ່ຄວນນັ່ງບຽດພຣະເຖຣະ ບໍ່ຄວນກີດກັນອາສນະພຣະນວກະ ຄວນທຳບຣິກັມ໑ ແກ່ອຸປັຊຢາຍ໌ໃນເຮືອນໄຟ ເມື່ອຈະອອກຈາກເຮືອນໄຟ ຄວນຖືຕັ່ງສຳລັບເຮືອນໄຟປົດຫນ້າແລະຫລັງ ຈຶ່ງອອກຈາກເຮືອນໄຟ

ຄວນທຳບຣິກັມ໔ແກ່ອຸປັຊຢາຍ໌ແມ່ນໃນນ້ຳ ຕົນສົງນ້ຳເສັດແລ້ວ ຄວນຂຶ້ນກ່ອນ ເຊັດຕົວໃຫ້ແຫ້ງແລ້ວຜັດປ່ຽນຜ້າ ຄວນເຊັດນ້ຳຈາກຕົວອຸປັຊຢາຍ໌ ຖວາຍຜ້ານຸ່ງ ສັງຂາຕີ ຖືຕັ່ງສຳລັບເຮືອນໄຟມາກ່ອນ ປູອາສນະ ຕຽມນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນໄວ້ ນຳນ້ຳສັນມາຖວາຍອຸປັຊຢາຍ໌ ຖ້າອຸປັຊຢາຍ໌ຕ້ອງການຈະໃຫ້ຮຽນ ຄວນຮຽນ ຖ້າອຸປັຊຢາຍ໌ຕ້ອງການຈະໃຫ້ສອບຖາມອັນຖະ ຄວນສອບຖາມ

ອຸປັຊຢາຍ໌ຢູ່ໃນວິຫາຣໃດ ຖ້າວິຫາຣນັ້ນສົກປົກ ຖ້າສາມາດ ຄວນຊຳຣະໃຫ້ສະອາດ ເມື່ອຈະຊຳຣະວິຫາຣໃຫ້ສະອາດ ຄວນຂົນບາຕຣແລະຈີວອນອອກກ່ອນ ວາງໄວ້ ນະທີ່ສົມຄວຣ ຄວນຂົນຜ້າ ປູນັ່ງຜ້າປູນອນ ເສື່ອ ຫມອນ ອອກມາວາງໄວ້ ນະທີ່ສົມຄວຣ ຕຽງ ຕັ່ງ ສັທຫຼືວິຫາຣົກຄວນຍົກ ຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ບໍ່ໃຫ້ຕຳບານປະຕູແລະຂອບປະຕູ ຂົນອອກໄປຕັ້ງໄວ້ ນະທີ່ສົມຄວຣ ຂຽງຮອງຕຽງ ກະໂຖນ ພນັກພິງ ຄວນຂົນອອກມາວາງໄວ້ ນະທີ່ສົມຄວຣ ພົມປູພື້ນ ຄວນສັງ ເກດ ທີ່ປູໄວ້ເດີມ ຄ່ອຍຂົນອອກມາວາງ ນະທີ່ສົມຄວຣ ຖ້າໃນວິຫາຣມີກາກເຫຍື້ອ ຄວນກວາດ ເພດານລົງມາກ່ອນ ຂອບປ່ອງຢ້ຽມແລະມຸມຫ້ອງຄວນເຊັດ ຖ້າຝາທີ່ທານ້ຳມັນຫລືພື້ນທາສີດຳຂຶ້ນຣາ ຄວນໃຊ້ຜ້າຊຸບນ້ຳບິດແລ້ວເຊັດ ຖ້າເປັນພື້ນບໍ່ໄດ້ທາ ຄວນໃຊ້ນ້ຳແປະພົມເຊັດ ຢ່າໃຫ້ວິຫາຣເປື້ອນດ້ວຍຝຸ່ນລະອອງ ຄວນເກັບກາກເຫຍື້ອໄປຖິ້ມ ນະທີ່ສົມຄວຣ ພົມປູພື້ນ ຄວນຜຶ່ງແດດ ຊຳຣະຕົບຕີ ຂົນກັບປູໄວ້ຕາມເດີມ ຂຽງຮອງຕຽງ ຄວນຜຶ່ງແດດເຊັດ ຂົນກັບວາງໄວ້ຕາມເດີມ ຕຽງ ຕັ່ງ ຄວນຜຶ່ງແດດ ຊຳຣະ ປັດ ຍົກຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ບໍ່ໃຫ້ຕຳບານປະຕູແລະຂອບປະຕູ ຂົນກັບຕັ້ງໄວ້ຕາມເດີມ ເສື່ອ ຫມອນ ຜ້າປູນັ່ງ ຜ້າປູນອນ

ໝາຍເຫດ :

໑ ທຳບຣິກັມໃນເຮືອນໄຟ ຫມາຍເຖິງການຖວາຍຂີ້ເຖົ່າ ດິນຫນຽວ ແລະນ້ຳຮ້ອນເປັນຕົ້ນ (ວິ. ສູງຄຫ. ໑໗໖/໔໕໗)

໔ ທຳບຣິກັມໃນນ້ຳ ຫມາຍເຖິງການຂັດຖູຮ່າງກາຍ (ວິ. ສູງຄຫ. ໑໗໖/໔໕໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໕. ອຸປັຊຊາຍວັຕຕກຖາ

ຄວນຜຶ່ງແດດ ອຳຣະ ຕົບ ຂົນກັບວາງປູໄວ້ຕາມເດີມ ກະໂຖນ ພນັກພິງ ຄວນຜຶ່ງແດດ ເຊັດຖູ ຂົນກັບວາງໄວ້ຕາມເດີມ ຄວນເກັບບາຕຣແລະຈີວອນ ເມື່ອຈະເກັບບາຕຣ ຄວນໃຊ້ມືຂ້າງນຶ່ງຖືບາຕຣ ໃຊ້ມືຂ້າງນຶ່ງຄຳໃຕ້ຕຽງຫລືໃຕ້ຕັ່ງ ຈຶ່ງເກັບບາຕຣ ບໍ່ຄວນເກັບບາຕຣໄວ້ບົນພື້ນທີ່ບໍ່ມີສິ່ງໃດຮອງ ເມື່ອຈະເກັບຈີວອນ ຄວນໃຊ້ມືຂ້າງນຶ່ງຖືຈີວອນ ໃຊ້ມືຂ້າງນຶ່ງລູບຣາວຈີວອນຫລືສາຍຣະດຽງ ເອົາຊາຍໄວ້ນອກ ເອົາຂົດໄວ້ໃນ ຈຶ່ງເກັບຈີວອນ ຖ້າລົມເຈືອຝຸ່ນລະອອງພັດມາທາງທິສຕາເວັນອອກ ຄວນປິດປ່ອງຢ້ຽມດ້ານຕາເວັນອອກ ຖ້າພັດມາທາງທິສຕາເວັນຕົກ ຄວນປິດປ່ອງຢ້ຽມ ດ້ານຕາເວັນຕົກ ຖ້າພັດມາທາງທິສເຫນືອ ຄວນປິດປ່ອງຢ້ຽມດ້ານເຫນືອ ຖ້າພັດມາທາງທິສໃຕ້ ຄວນ ປິດປ່ອງຢ້ຽມດ້ານໃຕ້ ຖ້າເປັນຣະດູຫນາວ ຄວນເປີດປ່ອງຢ້ຽມ ກາງເວັນ ປິດກາງຄືນ ຖ້າເປັນຣະດູຮ້ອນ ຄວນປິດປ່ອງຢ້ຽມກາງເວັນ ເປີດກາງຄືນ ຖ້າບໍຣິເວນ ຊຸ້ມ ໂຮງສັນ ໂຮງໄຟ ວັຈກຸຕິ ຮົກ ຄວນປັດກວາດ ຖ້ານ້ຳສັນນ້ຳໃຊ້ບໍ່ມີ ຄວນຈັດຕຽມໄວ້ ຖ້າຫມໍ້ອຳຣະບໍ່ມີນ້ຳ ຄວນຕັກນ້ຳ ໃສ່ຫມໍ້ອຳຣະ ຖ້າອຸປັຊຊາຍ໌ເກີດຄວາມບໍ່ຍິນດີ ສັທທິວິຫາຣິກຄວນຊ່ວຍຣະງັບ ຫລືຄວນບອກພິກສຸອື່ນໃຫ້ຊ່ວຍຣະງັບ ຫລືຄວນສະແດງທັມກຖາແກ່ອຸປັຊຊາຍ໌ ຖ້າອຸປັຊຊາຍ໌ ເກີດຄວາມຣຳຄານ ສັທທິວິຫາຣິກຄວນຊ່ວຍບັນເທົາ ຫລືຄວນບອກພິກສຸອື່ນ ໃຫ້ຊ່ວຍບັນເທົາ ຫລືຄວນສະແດງທັມກຖາແກ່ອຸປັຊຊາຍ໌ ຖ້າອຸປັຊຊາຍ໌ເກີດຄວາມເຫັນຜິດ ສັທທິວິຫາຣິກຄວນໃຫ້ສລະເສັຽ ຫລືຄວນບອກພິກສຸອື່ນໃຫ້ຊ່ວຍໃຫ້ສລະເສັຽ ຫລືຄວນສະແດງທັມກຖາແກ່ອຸປັຊຊາຍ໌ ຖ້າອຸປັຊຊາຍ໌ຕ້ອງອາບັຕິຫນັກ໑ ຄວຣແກ່ປຣິວາສ ສັທທິວິຫາຣິກຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ສົງຂ໌ຄວນໃຫ້ປຣິວາສແກ່ອຸປັຊຊາຍ໌"

ໝາຍເຫດ :

໑ ອາບັຕິຫນັກ ໃນທີ່ນີ້ຫມາຍເຖິງອາບັຕິສັງຂາທິເສສ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໕. ອຸປັຊຊາຍວັຕຕກຖາ

ຖ້າອຸປັຊຊາຍ໌ຄວຣແກ່ການຊັກເຂົ້າຫາອາບັຕິເດີມ ສັທທິວິຫາຣິກຄວນທຳການຂິນຂວາຍ ວ່າ "ດ້ວຍອຸບາຍຢ່າງໃດຫນໍ ສົງຂ໌ຄວນຊັກອຸປັຊຊາຍ໌ເຂົ້າຫາອາບັຕິເດີມ"

ຖ້າອຸປັຊຊາຍ໌ຄວຣແກ່ມານັຕ໑ ສັທທິວິຫາຣິກຄວນທຳການຂິນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ສົງຂ໌ຄວນໃຫ້ມານັຕແກ່ອຸປັຊຊາຍ໌"

ຖ້າອຸປັຊຊາຍ໌ຄວຣແກ່ອັພພານ໒ ສັທທິວິຫາຣິກຄວນທຳການຂິນຂວາຍວ່າ "ດ້ວຍອຸບາຍ ຢ່າງໃດຫນໍ ສົງຂ໌ຄວນອັພພານອຸປັຊຊາຍ໌"

ຖ້າສົງຂ໌ຕ້ອງການຈະເຮັດກັມ໓ ຄື ຕັຊຊນີຍກັມ ນິຍສັກັມ ປັພພາຊນີຍກັມ ປຕິສາຣນີຍກັມ ຫລືອຸກເຂປນີຍກັມ໔ແກ່ອຸປັຊຊາຍ໌ ສັທທິວິຫາຣິກຄວນທຳການຂິນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ສົງຂ໌ບໍ່ຄວນທຳກັມແກ່ອຸປັຊຊາຍ໌ຫລືຄວນປ່ຽນໄປເປັນໂທສເບົາ" ຫລືວ່າອຸປັຊຊາຍ໌ໄດ້ຖືກສົງຂ໌ ລົງຕັຊຊນີຍກັມ ນິຍສັກັມ ປັພພາຊນີຍກັມ ປຕິສາຣນີຍກັມ ຫລືອຸກເຂປນີຍກັມແລ້ວ ທທິວິຫາຣິກຄວນທຳການຂິນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ອຸປັຊຊາຍ໌ຄວນກັບປະພຶດຊອບ ຄວນເຊົາຈອງຫອງ ຄວນກັບຕົວໄດ້ ສົງຂ໌ຄວນຣະງັບກັມນັ້ນເສັຽ"

ໝາຍເຫດ :

໑ ມານັຕ ເປັນຊື່ວຸຕຖານວິທີ ຄືຣະເບີຍບປະຕິບັດໃນການອອກຈາກອາບັຕິສັງຂາທິເສສ ແປວ່າ ນັບຫມາຍເຖິງນັບຣາຕຣີ ຝ ຣາຕຣີ ພິກສຸຜູ້ຕ້ອງອາບັຕິສັງຂາທິເສສ ຖ້າປົກປິດໄວ້ ຕ້ອງຢູ່ປຣິວາສເທົ່າວັນທີ່ປົກປິດກ່ອນ ຈຶ່ງຈະຂໍມານັຕໄດ້ ແຕ່ຖ້າບໍ່ໄດ້ປົກປິດໄວ້ ສາມາດຂໍມານັຕໄດ້ ແລ້ວປະພຶດມານັຕ ຝ ຣາຕຣີ (ກງ໌ຂາ. ອ. ໑໗໗)

໒ ອັພພານ ເປັນຊື່ວຸຕຖານວິທີທີ່ເປັນຂັ້ນຕອນສຸດທ້າຍ ພິກສຸຜູ້ປະພຶດມານັຕຄົບ ຝ ຣາຕຣີແລ້ວ ຂໍອັພພານຈາກສົງຂ໌ ໒໐ ຮູບ ເມື່ອສົງຂ໌ສວດອັພພານແລ້ວ ຖືວ່າພິກສຸຜູ້ຕ້ອງອາບັຕິສັງຂາທິເສສນັ້ນບໍຣິສຸດທ໌ ສົມຄວຣຢູ່ຮ່ວມກັບພິກສຸສົງຂ໌ຕໍ່ໄປ (ກງ໌ຂາ. ອ. ໑໗໗-໑໗໘)

໓ ທຳກັມ ຫມາຍເຖິງລົງໂທສ

໔ ຕັຊຊນີຍກັມ ຄື ການຂູ່, ການຫ້າມປາມ (ວິ. ມ. ໕/໒໐໗-໒໐໗/໒໐໔-໒໐໕)

ນິຍສັກັມ ຄື ການຖອດຍົສ, ການປົດອອກຈາກຕຳແຫນ່ງ (ວິ. ມ. ໕/໔໑໒/໒໐໗,໔໒໓/໒໑໒)

ປັພພາຊນີຍກັມ ຄື ການໄລ່ອອກຈາກຫມູ່, ການໄລ່ອອກຈາກວັດ (ວິ. ມ. ໕/໔໑໓/໒໐໗)

ປຕິສ្ສາຣນີຍກັມ ຄື ການໃຫ້ຣະນຶກຄວາມຜິດ (ວິ. ມ. ໕/໔໑໔/໘໐໗)
ອຸກເຂປນີຍກັມ ຄື ການກັນອອກຈາກຫມູ່, ການຍົກອອກຈາກຫມູ່ (ວິ. ມ. ໕/໔໑໕/໘໐໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໕. ອຸປັຊຝາຍວັຕຕກຖາ

ຖ້າຈີວອນຂອງອຸປັຊຝາຍ໌ຈະຕ້ອງຊັກ ສັທທິວິຫາຣິກຄວນຊັກ ຫລືຄວນທຳການຂົນຂວາຍ ວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຊັກຈີວອນຂອງອຸປັຊຝາຍ໌"
ຖ້າຈີວອນຂອງອຸປັຊຝາຍ໌ຈະຕ້ອງຕັດຍິບ ສັທທິວິຫາຣິກຄວນຕັດຍິບ ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຕັດຍິບຈີວອນຂອງອຸປັຊຝາຍ໌"
ຖ້ານ້ຳຍ້ອມຂອງອຸປັຊຝາຍ໌ຈະຕ້ອງຕົ້ມ ສັທທິວິຫາຣິກຄວນຕົ້ມ ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຕົ້ມນ້ຳຍ້ອມຂອງອຸປັຊຝາຍ໌"
ຖ້າຈີວອນຂອງອຸປັຊຝາຍ໌ຈະຕ້ອງຍ້ອມ ສັທທິວິຫາຣິກຄວນຍ້ອມ ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຍ້ອມຈີວອນຂອງອຸປັຊຝາຍ໌" ເມື່ອຈະຍ້ອມຈີວອນ ຄວນຍ້ອມພິກກັບໄປກັບມາດີໆເມື່ອຫຍາດນ້ຳຍ້ອມຍັງຢືດບໍ່ຂາດສາຍ ບໍ່ຄວນຫລີກໄປ
ສັທທິວິຫາຣິກບໍ່ບອກອຸປັຊຝາຍ໌ ບໍ່ຄວນໃຫ້ບາຕຣແກ່ພິກສຸບາງຮູບ ບໍ່ຄວນຮັບບາຕຣຂອງພິກສຸບາງຮູບ ບໍ່ຄວນໃຫ້ຈີວອນແກ່ພິກສຸບາງຮູບ ບໍ່ຄວນຮັບຈີວອນຂອງພິກສຸບາງຮູບ ບໍ່ຄວນໃຫ້ບໍຣິຂານແກ່ພິກສຸບາງຮູບ ບໍ່ຄວນຮັບບໍຣິຂານຂອງພິກສຸບາງຮູບ ບໍ່ຄວນປົງຜົມໃຫ້ພິກສຸບາງຮູບ ບໍ່ຄວນໃຫ້ພິກສຸບາງຮູບປົງຜົມໃຫ້ ບໍ່ຄວນທຳບຣິກັມແກ່ພິກສຸບາງຮູບ ບໍ່ຄວນໃຫ້ພິກສຸບາງຮູບທຳບຣິກັມໃຫ້ ບໍ່ຄວນທຳການຂົນຂວາຍແກ່ພິກສຸບາງຮູບ ບໍ່ຄວນສັ່ງພິກສຸບາງຮູບໃຫ້ທຳການຂົນຂວາຍ ບໍ່ຄວນເປັນປັຈສາສະມະນະຂອງພິກສຸບາງຮູບ ບໍ່ຄວນພາພິກສຸບາງຮູບໄປເປັນປັຈສາສະມະນະ ບໍ່ຄວນນຳບິນທບາຕໄປຖວາຍພິກສຸບາງຮູບ ບໍ່ຄວນສັ່ງພິກສຸບາງຮູບໃຫ້ນຳບິນທບາຕໄປຖວາຍ ສັທທິວິຫາຣິກບໍ່ບອກລາອຸປັຊຝາຍ໌ ບໍ່ຄວນເຂົ້າຫມູ່ບ້ານ ບໍ່ຄວນໄປປ່າຊ້າ ບໍ່ຄວນອອກໄປຕ່າງຖິ່ນ໑ ຖ້າອຸປັຊຝາຍ໌ເປັນໄຂ້ ຄວນພຍາບາລຈົນຕລອດຊີວິຕ ຄວນຖ້າຈົນກວ່າອຸປັຊຝາຍ໌ນັ້ນຈະຫາຍເຊົາ

ອຸປັຊຝາຍວັຕຕກຖາ ຈົບ

ໝາຍເຫດ :

໑ ຫມາຍເຖິງໄປຢູ່ທີ່ອື່ນ (ສາຣັດຖ. ຕີກາ ໓/໗໓/໔໙໐)

ພຣະວິນັຍປີດົກ ມຫາວັຄ [໑. ມຫາຂັນທກະ] ໑໕. ສັທທິວິຫາຣິກວັຕຕກຖາ

໑໕. ສັທທິວິຫາຣິກວັຕຕກຖາ໑

ວ່າດ້ວຍສັທທິວິຫາຣິກວັຕຣ

[໕໗] ພິກສຸທັງຫລາຍ ອຸປັຊຝາຍ໌ຄວນປະພຶດຊອບໃນສັທທິວິຫາຣິກ ວິທີປະພຶດຊອບໃນສັທທິວິຫາຣິກນັ້ນມີດັ່ງນີ້

ພິກສຸທັງຫລາຍ ອຸປັຊຝາຍ໌ຄວນສົງເຄາະອນຸເຄາະຫ໌ສັທທິວິຫາຣິກ ດ້ວຍອຸທເທສປຣິປຸຈສາ ໂອວາທແລະອນຸສາສນ໌ ຖ້າອຸປັຊຝາຍ໌ມີບາຕຣ ສັທທິວິຫາຣິກບໍ່ມີບາຕຣ ອຸປັຊຝາຍ໌ຄວນຖວາຍບາຕຣແກ່ສັທທິວິຫາຣິກ ຫລືຄວນທຳການຂວນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ບາຕຣຄວນເກີດຂຶ້ນແກ່ສັທທິວິຫາຣິກ" ຖ້າອຸປັຊຝາຍ໌ມີຈີວອນ ສັທທິວິຫາຣິກບໍ່ມີຈີວອນ ອຸປັຊຝາຍ໌ຄວນຖວາຍຈີວອນແກ່ສັທທິວິຫາຣິກຫລືຄວນທຳການຂວນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ຈີວອນຄວນເກີດຂຶ້ນແກ່ສັທທິວິຫາຣິກ" ຖ້າອຸປັຊຝາຍ໌ມີບໍຣິຂາຣ ສັທທິວິຫາຣິກບໍ່ມີບໍຣິຂາຣ ອຸປັຊຝາຍ໌ຄວນຖວາຍບໍຣິຂາຣແກ່ສັທທິວິຫາຣິກ ຫລືຄວນທຳການຂວນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ບໍຣິຂາຣຄວນເກີດຂຶ້ນແກ່ສັທທິວິຫາຣິກ"

ຖ້າສັທທິວິຫາຣິກເປັນໄຂ້ ອຸປັຊຝາຍ໌ຄວນລຸກຂຶ້ນແຕ່ເຊົ້າຕຣູ່ຖວາຍໄມ້ຊຳຣະແຂ້ວ ນ້ຳລ້າງຫນ້າ ປູອາສນະ ຖ້າເຂົ້າປຽກມີ ຄວນລ້າງພາຊນະໃສ່ເຂົ້າປຽກເຂົ້າໄປຖວາຍ ເມື່ອສັທທິວິຫາຣິກສັນເຂົ້າປຽກເສັດແລ້ວ ຄວນຖວາຍນ້ຳ ຮັບພາຊນະມາຖືຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ລ້າງແລ້ວເກັບງຳໄວ້ ເມື່ອສັທທິວິຫາຣິກລຸກຂຶ້ນແລ້ວ ຄວນຍົກອາສນະເກັບ ຖ້າທີ່ນັ້ນຣົກ ຄວນກວາດ ຖ້າສັທທິວິຫາຣິກຕ້ອງການຈະເຂົ້າຫມູ່ບ້ານ ຄວນຖວາຍຜ້ານຸ່ງ ຮັບຜ້ານຸ່ງອາສັຍ ຖວາຍປະຄົດແອວ ຖວາຍສັງຂາຕີທີ່ພັບຊ້ອນກັນ ລ້າງບາຕຣແລ້ວຖວາຍພ້ອມທັງນ້ຳ ປູອາສນະໄວ້ໂດຍກຳຫນົດວ່າ "ເວລາພຽງເທົ່ານີ້ສັທທິວິຫາຣິກຈັກກັບມາ" ຄວນຕຽມນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນໄວ້ ຄວນລຸກຂຶ້ນຮັບບາຕຣແລະຈີວອນ ຄວນຖວາຍຜ້ານຸ່ງອາສັຍຮັບຜ້ານຸ່ງມາ

ຫມາຍເຫດ :

໑ ວິ. ຈູ. ໗/໓໗໗-໓໗໘/໑໗໐-໑໗໔

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໕. ສັທທິວິຫາຣິກວັຕຕກຖາ

ຖ້າຈີວອນຊຸ່ມເຫື່ອ ຄວນຜຶ່ງແດດຄູ່ນຶ່ງ ບໍ່ຄວນຜຶ່ງຖິ້ມໄວ້ທີ່ແດດ ຄວນພັບຈີວອນ ເມື່ອຈະພັບຈີວອນ ຄວນພັບຈີວອນໃຫ້ເຫລື່ອມມຸມກັນ ໔ ນິ້ວ ຕັ້ງໃຈວ່າ ທາງກາງຈະໄດ້ບໍ່ມີຮອຍພັບ ຄວນ ມ້ວນປະຄົດເອວໃສ່ຂນົດຈີວອນ ຖ້າບິນທບາຕມີ ແລະສັທທິວິຫາຣິກຕ້ອງການຈະສັນ ຄວນ ຖວາຍນ້ຳ ແລ້ວນຳບິນທບາຕເຂົ້າໄປຖວາຍ ນຳນ້ຳສັນມາຖວາຍ ເມື່ອສັທທິວິຫາຣິກສັນເສັດແລ້ວ ຄວນຖວາຍນ້ຳ ຮັບບາຕຣມາຖືຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ລ້າງແລ້ວເຊັດໃຫ້ສະເດັດນ້ຳຜຶ່ງແດດຄູ່ນຶ່ງ ບໍ່ຄວນຜຶ່ງ ຖິ້ມໄວ້ທີ່ແດດ ຄວນເກັບບາຕຣແລະຈີວອນ ເມື່ອຈະເກັບບາຕຣ ຄວນໃຊ້ມື ຂ້າງນຶ່ງຖືບາຕຣ ໃຊ້ມືຂ້າງນຶ່ງຄຳໃຕ້ຕຽງຫລືໃຕ້ຕັ່ງ ຈຶ່ງເກັບບາຕຣ ບໍ່ຄວນເກັບບາຕຣໄວ້ບົນພື້ນທີ່ບໍ່ມີສິ່ງໃດຮອງ ເມື່ອຈະເກັບຈີວອນ ຄວນໃຊ້ມືຂ້າງນຶ່ງຖືຈີວອນ ໃຊ້ມືຂ້າງນຶ່ງລູບຣາວຈີວອນຫລືສາຍຣະດຽງ ເອົາຊາຍໄວ້ນອກ ເອົາຂົດໄວ້ໃນ ຈຶ່ງເກັບຈີວອນ ເມື່ອສັທທິວິຫາຣິກລຸກຂຶ້ນແລ້ວ ຄວນຍົກອາສນະເກັບ ຄວນເກັບນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນ ຖ້າທີ່ນັ້ນຮົກ ຄວນ ກວາດ ຖ້າສັທທິວິຫາຣິກຕ້ອງການຈະສົງນ້ຳ ຄວນຈັດນ້ຳສົວົງຖວາຍ ຖ້າທ່ານຕ້ອງ ການນ້ຳເຢັນ ຄວນຈັດນ້ຳເຢັນໃຫ້ ຖ້າທ່ານຕ້ອງການນ້ຳອຸ່ນ ຄວນຈັດນ້ຳອຸ່ນຖວາຍ ຖ້າສັທທິວິຫາ ຣິກຕ້ອງການຈະເຂົ້າເຮືອນໄຟ ຄວນບົດຈຸຣນະ ຄວນແຊ່ດິນ ຖືຕັ່ງສຳລັບເຮືອນໄຟຍ່າງໄປ ຖວາຍຕັ່ງສຳລັບເຮືອນໄຟແລ້ວຮັບຈີວອນມາວາງ ນະທີ່ສົມຄວຣ ຄວນຖວາຍຈຸຣນແລະດິນ ຖ້າສາມາດ ຄວນ ເຂົ້າເຮືອນໄຟ ເມື່ອຈະເຂົ້າເຮືອນໄຟ ຄວນເອົາດິນທາຫນ້າປິດຫນ້າແລະຫລັງ ຈຶ່ງເຂົ້າເຮືອນໄຟ ບໍ່ຄວນນັ່ງບຽດພຣະເຖຣະ ບໍ່ຄວນກີດກັນອາສນະພຣະນວກະ ຄວນທຳບໍຣິກັມແກ່ສັທທິວິຫາຣິກ ໃນເຮືອນໄຟ ເມື່ອຈະອອກຈາກເຮືອນໄຟ ຄວນຖືຕັ່ງສຳລັບເຮືອນໄຟປິດຫນ້າແລະຫລັງ ຈຶ່ງອອກຈາກເຮືອນໄຟ

ຄວນທຳບໍຣິກັມແກ່ສັທທິວິຫາຣິກແມ່ນໃນນ້ຳ ຕົນສົງເສັດແລ້ວ ຄວນຂຶ້ນກ່ອນ ເຊັດຕົວໃຫ້ແຫ້ງ ແລ້ວຜັດປ່ຽນຜ້າ ຄວນເຊັດນ້ຳຈາກຕົວສັທທິວິຫາຣິກ ຖວາຍຜ້ານຸ່ງ ສັງຂາຕິ ຖືຕັ່ງສຳລັບເຮືອນໄຟມາກ່ອນ ປູອາສນະ ຕຽມນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນໄວ້ ນຳນ້ຳສັນມາຖວາຍສັທທິວິຫາຣິກ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໕. ສັທທິວິຫາຣິກວັຕຕກຖາ

ສັທຫີວິຫາຣິກຢູ່ໃນວິຫາຣໃດ ຖ້າວິຫາຣນັ້ນສົກປົກ ຖ້າສາມາດ ຄວນຊໍາຣະໃຫ້ສະອາດ ເມື່ອຈະຊໍາຣະ ວິຫາຣໃຫ້ສະອາດ ຄວນຂົນບາຕຣແລະຈີວອນອອກກ່ອນ ວາງໄວ້ ນະທີ່ສົມຄວຣ ຄວນ ຂົນຜ້າປູນັ່ງ ຜ້າປູນອນ ເສື່ອ ຫມອນ ອອກມາວາງໄວ້ ນະທີ່ສົມຄວຣ ຕຽງ ຕັ່ງ ອຸປັຊຢາຍ໌

ຄວນຍົກຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ບໍ່ໃຫ້ຕໍາບານປະຕູແລະຂອບປະຕູ ຂົນອອກໄປຕັ້ງໄວ້ ນະ ທີ່ສົມຄວຣ ຂຽງຮອງຕຽງ ກະໂຖນ ພນັກພິງ ຄວນຂົນອອກມາວາງໄວ້ ນະທີ່ສົມຄວຣ ພົມປູພື້ນ ຄວນສັງເກຕທີ່ປູໄວ້ເດີມ ຄ່ອຍຂົນອອກມາວາງໄວ້ ນະທີ່ສົມຄວຣ ຖ້າໃນວິຫາຣມີຫຍາກ ເຍື່ອ ຄວນກວາດເພດານລົງມາກ່ອນ ຂອບປ່ອງຢ້ຽມແລະມຸມຫ້ອງຄວນເຊັດ ຖ້າຝາທີ່ທານ້ຳມັນຫລືພື້ນທາສີ ດໍາຂຶ້ນຣາ ຄວນໃຊ້ຜ້າຊຸບນ້ຳບິດແລ້ວເຊັດ ຖ້າເປັນພື້ນບໍ່ໄດ້ທາ ຄວນໃຊ້ນ້ຳປະພົມເຊັດ ຢ່າໃຫ້ ວິຫາຣປົກຄຸມດ້ວຍຝຸ່ນລະອອງ ຄວນເກັບກາກເຫຍື້ອໄປຖິ້ມ ນະທີ່ສົມຄວຣ ພົມປູພື້ນ ຄວນຜຶ່ງແດດ ຊໍາຣະ ຕີບ ຂົນກັບປູໄວ້ຕາມເດີມ ຂຽງຮອງຕຽງ ຄວນຜຶ່ງແດດ ເຊັດ ຂົນກັບວາງໄວ້ຕາມເດີມ ຕຽງ ຕັ່ງ ຄວນຜຶ່ງແດດ ຊໍາຣະ ປັດ ຍົກຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ບໍ່ໃຫ້ຕໍາບານປະຕູແລະຂອບປະຕູ ຂົນ ກັບຕັ້ງໄວ້ຕາມເດີມ ເສື່ອ ຫມອນ ຜ້າປູນັ່ງ ຜ້າປູນອນ ຄວນຜຶ່ງແດດ ຊໍາຣະ ຕີບ ຂົນກັບວາງປູໄວ້ ຕາມເດີມ ກະໂຖນ ພນັກພິງ ຄວນຜຶ່ງແດດ ເຊັດຖູ ຂົນກັບວາງໄວ້ຕາມເດີມ

ຄວນເກັບບາຕຣແລະຈີວອນ ເມື່ອຈະເກັບບາຕຣ ຄວນໃຊ້ມືຂ້າງນຶ່ງຖືບາຕຣ ໃຊ້ມືຂ້າງນຶ່ງ ຄໍາໃຕ້ຕຽງຫລືໃຕ້ຕັ່ງ ຈຶ່ງເກັບບາຕຣ ບໍ່ຄວນເກັບບາຕຣໄວ້ບົນພື້ນທີ່ບໍ່ມີສິ່ງໃດຮອງ ເມື່ອຈະເກັບຈີ ວອນ ຄວນໃຊ້ມືຂ້າງນຶ່ງຖືຈີວອນ ໃຊ້ມືຂ້າງນຶ່ງລູບຮາວຈີວອນຫລືສາຍຣະດຽງ ເອົາຊາຍໄວ້ນອກ ເອົາຂົດໄວ້ໃນ ຈຶ່ງເກັບຈີວອນ ຖ້າລົມເຈືອຝຸ່ນລະອອງພັດມາທາງທິສຕາເວັນອອກ

ຄວນປິດປ່ອງຢ້ຽມດ້ານຕາເວັນອອກ ຖ້າພັດມາທາງທິສຕາເວັນຕົກ ຄວນປິດປ່ອງຢ້ຽມ ດ້ານຕາເວັນ ຕົກ ຖ້າພັດມາທາງທິສເຫນືອ ຄວນປິດປ່ອງຢ້ຽມດ້ານເຫນືອ ຖ້າພັດມາທາງທິສໃຕ້ ຄວນປິດ ປ່ອງຢ້ຽມດ້ານໃຕ້ ຖ້າເປັນຣະດູຫນາວ ຄວນເປີດປ່ອງຢ້ຽມກາງເວັນ ປິດກາງຄືນ ຖ້າເປັນຣະດູຮ້ອນ ຄວນປິດປ່ອງຢ້ຽມກາງເວັນ ເປີດກາງຄືນ ຖ້າບໍຣິເວນະ ຊຸ້ມ ໂຮງສັນ ໂຮງໄຟ ວັຈກຸຕິຣກ ຄວນປັດກວາດ ຖ້ານ້ຳສັນນ້ຳໃຊ້ບໍ່ມີ ຄວນຈັດຕຽມໄວ້ ຖ້າຫມໍ້ນ້ຳຊໍາຣະບໍ່ມີນ້ຳ ຄວນຕັກນ້ຳໃສ່ຫມໍ້ ຊໍາຣະ ຖ້າສັທຫີວິຫາຣິກເກີດຄວາມບໍ່ຍິນດີ ອຸປັຊຢາຍ໌ຄວນຊ່ວຍຣະງັບ ຫລືຄວນບອກພິກສຸອື່ນໃຫ້ ຊ່ວຍຣະງັບ ຫລືຄວນສະແດງທັມກຖາແກ່ສັທຫີວິຫາຣິກ ຖ້າສັທຫີວິຫາຣິກເກີດຄວາມຣໍາຄານ ອຸປັຊຢາຍ໌ຄວນຊ່ວຍບັນເທົາ ຫລືຄວນບອກພິກສຸອື່ນໃຫ້ຊ່ວຍບັນເທົາ ຫລືຄວນສະແດງທັມກຖາແກ່ ສັທຫີວິຫາຣິກ ຖ້າສັທຫີວິຫາຣິກເກີດຄວາມເຫັນຜິດ ອຸປັຊຢາຍ໌ຄວນໃຫ້ສລະເສັຽ ຫລືຄວນບອກ ພິກສຸອື່ນໃຫ້ຊ່ວຍໃຫ້ສລະເສັຽ ຫລືຄວນສະແດງທັມກຖາແກ່ສັທຫີວິຫາຣິກ ຖ້າສັທຫີວິຫາຣິກຕ້ອງ

ອາບັຕິຫນັກ ຄວຣແກ່ປຣິວາສ ອຸປັຊຍາຍ໌ຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ສິງຂ໌ຄວນໃຫ້ປຣິວາສແກ່ສັທຫິວິຫາຣິກ" ຖ້າສັທຫິວິຫາຣິກຄວຣແກ່ການຊັກເຂົ້າຫາອາບັຕິເດີມ ອຸປັຊຍາຍ໌ຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ສິງຂ໌ຄວນຊັກສັທຫິວິຫາຣິກເຂົ້າຫາອາບັຕິເດີມ" ຖ້າສັທຫິວິຫາຣິກຄວຣແກ່ມານັຕ ອຸປັຊຍາຍ໌ຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ສິງຂ໌ຄວນໃຫ້ມານັຕແກ່ສັທຫິວິຫາຣິກ" ຖ້າສັທຫິວິຫາຣິກຄວຣແກ່ອັພພານ ອຸປັຊ ຍາຍ໌ຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ສິງຂ໌ຄວນອັພພານສັທຫິວິຫາຣິກ" ຖ້າສິງຂ໌ຕ້ອງການຈະເຮັດກັມ ຄື ຕັຊຊນີຍກັມ ນິຍສກັມ ປັພພາຊນີຍກັມ ປຕິສາຣນີຍກັມ ຫລືອຸກເຂປນີຍກັມແກ່ສັທຫິວິຫາຣິກ ອຸປັຊຍາຍ໌ຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ສິງຂ໌ບໍ່ຄວນທຳກັມແກ່ສັທຫິວິຫາຣິກຫລືຄວນປ່ຽນໄປເປັນໂທສເບົາ" ຫລືວ່າສັທຫິວິຫາຣິກ ໄດ້ຖືກສິງຂ໌ ລົງຕັຊຊນີຍກັມ ນິຍສກັມ ປັພພາຊນີຍກັມ ປຕິສາຣນີຍກັມ ຫລືອຸກເຂປນີຍກັມແລ້ວ ອຸປັຊຍາຍ໌ຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ສັທຫິວິຫາຣິກ ຄວນກັບປະພຶດຊອບ ຄວນເຊົາຈອງຫອງຄວນກັບຕົວໄດ້ ສິງຂ໌ຄວນຣະງັບກັມນັ້ນເສັຽ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໗. ປຖມາມິຕກຖາ

ຖ້າຈີວອນຂອງສັທຫິວິຫາຣິກຈະຕ້ອງຊັກ ອຸປັຊຍາຍ໌ຄວນບອກວ່າ "ຄວນຊັກຢ່າງນີ້" ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຊັກຈີວອນຂອງສັທຫິວິຫາຣິກ" ຖ້າຈີວອນຂອງສັທຫິວິຫາຣິກຈະຕ້ອງຕັດຍິບ ອຸປັຊຍາຍ໌ຄວນບອກວ່າ "ຄວນຕັດຍິບຢ່າງນີ້" ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຕັດຍິບຈີວອນຂອງສັທຫິວິຫາຣິກ" ຖ້ານ້ຳຍ້ອມຂອງສັທຫິວິຫາຣິກຈະຕ້ອງຕົ້ມ ອຸປັຊຍາຍ໌ຄວນບອກວ່າ "ຄວນຕົ້ມຢ່າງນີ້" ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຕົ້ມນ້ຳຍ້ອມຂອງສັທຫິວິຫາຣິກ" ຖ້າຈີວອນຂອງສັທຫິວິຫາຣິກຈະຕ້ອງຍ້ອມ ອຸປັຊຍາຍ໌ຄວນບອກວ່າ "ຄວນຍ້ອມຢ່າງນີ້" ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຍ້ອມຈີວອນຂອງສັທຫິວິຫາຣິກ"ເມື່ອຈະຍ້ອມຈີວອນ ຄວນຍ້ອມພິກກັບໄປກັບມາດີໆເມື່ອຫຍາດນ້ຳຍ້ອມຍັງຢືດ ບໍ່ຂາດສາຍ ບໍ່ຄວນຫລີກໄປ ຖ້າສັທຫິວິຫາຣິກເປັນໄຂ້ ຄວນພຍາບາລຈົນຕລອດຊີວິຕ ຄວນຖ້າຈົນກວ່າສັທຫິວິຫາຣິກນັ້ນຈະຫາຍ

ສັທຫິວິຫາຣິກວັຕຕກຖາ ຈົບ

໑໗. ປນາມິຕກຖາ

ວ່າດ້ວຍການປະນາມ

[໖໘] ສະໄໝນັ້ນ ພວກສັທທິວິຫາຣິກບໍ່ປະພຶດຊອບໃນອຸປັຊຊາຍ໌ທັງຫລາຍ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກສັທທິວິຫາຣິກຈຶ່ງໄດ້ບໍ່ປະພຶດຊອບໃນພຣະອຸປັຊຊາຍ໌ທັງຫລາຍລະ" ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ຊົງສອບຖາມ

ລຳດັບນັ້ນ ພຣະຜູ້ມີພຣະພາກ ຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກສັທທິວິຫາຣິກບໍ່ປະພຶດຊອບໃນອຸປັຊຊາຍ໌ທັງຫລາຍແມ່ນແທ້ບໍ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໗. ປນາມິຕກຖາ

ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກຊົງຕຳຫນິວ່າ "ພິກສຸທັງຫລາຍ ຯລຯ ຈັ່ງໃດ ພວກສັທທິວິຫາຣິກຈຶ່ງບໍ່ປະພຶດຊອບໃນອຸປັຊຊາຍ໌ທັງຫລາຍລະ" ຄັນຊົງຕຳຫນິແລ້ວ ຊົງສະແດງທັມມີກຖາຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ສັທທິວິຫາຣິກຈະບໍ່ປະພຶດຊອບໃນອຸປັຊຊາຍ໌ບໍ່ໄດ້ ຮູບໃດບໍ່ປະພຶດຊອບ ຕ້ອງອາບັຕິທຸກກະຕະ"

ເຣື້ອງຊົງອນຸຍາຕໃຫ້ປະນາມ

ສັທທິວິຫາຣິກທັງຫລາຍກໍຍັງບໍ່ປະພຶດຊອບຢູ່ເຊັ່ນເດີມ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ປະນາມສັທທິວິຫາຣິກຜູ້ບໍ່ປະພຶດຊອບ

ວິທີປະນາມ

ພິກສຸທັງຫລາຍ ກໍອຸປັຊຊາຍ໌ຄວນປະນາມສັທທິວິຫາຣິກຢ່າງນີ້ວ່າ "ສັນປະນາມທ່ານ" ຫລື "ທ່ານຢ່າເຂົ້າມາທີ່ນີ້" "ທ່ານຈົ່ງຂົນບາຕຣແລະຈີວອນຂອງທ່ານໄປ" ຫລື "ທ່ານບໍ່ຕ້ອງອຸປັຕຖາກສັນ" ອຸປັຊຊາຍ໌ໃຫ້ສັທທິວິຫາຣິກຮູ້ດ້ວຍກາຍ ໃຫ້ຮູ້ດ້ວຍວາຈາ ຫລືໃຫ້ຮູ້ດ້ວຍກາຍແລະວາຈາ ເປັນອັນ

ໄດ້ປະນາມສັທຫຼີວິຫາຣິກແລ້ວ ອຸປັຊຍ໌າຍ໌ບໍ່ໃຫ້ສັທຫຼີວິຫາຣິກຮູ້ດ້ວຍກາຍ ບໍ່ໃຫ້ຮູ້ດ້ວຍວາຈາ ຫລືບໍ່ໃຫ້ຮູ້ດ້ວຍກາຍແລະວາຈາ ເປັນອັນຍັງບໍ່ໄດ້ປະນາມສັທຫຼີວິຫາຣິກ

ສັທຫຼີວິຫາຣິກບໍ່ຂໍຂມາ

ສມັຍນັ້ນ ສັທຫຼີວິຫາຣິກທັງຫລາຍຖືກປະນາມແລ້ວ ກໍຍັງບໍ່ຍອມຂໍຂມາອຸປັຊຍ໌າຍ໌ ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສັທຫຼີວິຫາຣິກຂໍຂມາອຸປັຊຍ໌າຍ໌" ສັທຫຼີວິຫາຣິກທັງຫລາຍ ກໍຍັງບໍ່ຍອມຂໍຂມາອຸປັຊຍ໌າຍ໌ຢູ່ເຊັ່ນເດີມ ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ສັທຫຼີວິຫາຣິກຖືກປະນາມແລ້ວ ຈະບໍ່ຂໍຂມາອຸປັຊ ຍ໌າຍ໌ບໍ່ໄດ້ ຮູບໃດບໍ່ຂໍຂມາ ຕ້ອງອາບັຕິທຸກກະຕະ"

ອຸປັຊຍ໌າຍ໌ບໍ່ຮັບກາຣຂໍຂມາ

ສມັຍນັ້ນ ອຸປັຊຍ໌າຍ໌ທັງຫລາຍຖືກສັທຫຼີວິຫາຣິກຂໍຂມາ ກໍຍັງບໍ່ຍອມໃຫ້ຂມາພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ອຸປັຊຍ໌າຍ໌ຮັບກາຣຂໍຂມາ" ອຸປັຊຍ໌າຍ໌ທັງຫລາຍກໍຍັງບໍ່ຍອມໃຫ້ຂມາຢູ່ເຊັ່ນເດີມ ພວກສັທຫຼີວິຫາຣິກພາກັນຫລີກໄປເສັຽແດ່ ສຶກເສັຽແດ່ ໄປເຂົ້າຮີດເດັຽຣະຖີຍ໌ເສັຽແດ່ ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ອຸປັຊຍ໌າຍ໌ຜູ້ທີ່ສັທຫຼີວິຫາຣິກຂໍຂມາ ຈະບໍ່ຮັບກາຣຂໍຂມາບໍ່ໄດ້ ຮູບໃດບໍ່ຮັບກາຣຂໍຂມາ ຕ້ອງອາບັຕິທຸກກະຕະ"

ຊົງປັບທຸກກະຕະເມື່ອປະນາມບໍ່ຖືກຕ້ອງ

ສມັຍນັ້ນ ອຸປັຊຍ໌າຍ໌ທັງຫລາຍປະນາມສັທຫຼີວິຫາຣິກຜູ້ປະພຶດຊອບ ບໍ່ປະນາມສັທຫຼີວິຫາຣິກຜູ້ປະພຶດມິຊອບ ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ສັທຫຼີວິຫາຣິກຜູ້ປະພຶດຊອບ ອຸປັຊຍ໌າຍ໌ບໍ່ຄວນປະນາມ ຮູບໃດປະນາມ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ສັທຫຼີວິຫາຣິກຜູ້ບໍ່ປະພຶດຊອບ ອຸປັຊຍ໌າຍ໌ຈະບໍ່ປະນາມບໍ່ໄດ້ ຮູບໃດບໍ່ປະນາມ ຕ້ອງອາບັຕິທຸກກະຕະ"

ອົງຄ໌ແຫ່ງກາຣປະນາມ

ພິກສຸທັງຫລາຍ ອຸປັຊຊາຍ໌ຄວນປະນາມສັທທີວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ຄື
໑. ບໍ່ມີຄວາມຮັກຢ່າງຍິ່ງໃນອຸປັຊຊາຍ໌
໒. ບໍ່ມີຄວາມເຫລື້ອມໃສຢ່າງຍິ່ງໃນອຸປັຊຊາຍ໌
໓. ບໍ່ມີຄວາມລະອາຍຢ່າງຍິ່ງໃນອຸປັຊຊາຍ໌
໔. ບໍ່ມີຄວາມເຄົາຣົພຢ່າງຍິ່ງໃນອຸປັຊຊາຍ໌
໕. ບໍ່ມີຄວາມຫວັງດີຢ່າງຍິ່ງໃນອຸປັຊຊາຍ໌

ພິກສຸທັງຫລາຍ ອຸປັຊຊາຍ໌ຄວນປະນາມສັທທີວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້
ພິກສຸທັງຫລາຍ ອຸປັຊຊາຍ໌ບໍ່ຄວນປະນາມສັທທີວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ຄື
໑. ມີຄວາມຮັກຢ່າງຍິ່ງໃນອຸປັຊຊາຍ໌
໒. ມີຄວາມເຫລື້ອມໃສຢ່າງຍິ່ງໃນອຸປັຊຊາຍ໌
໓. ມີຄວາມລະອາຍຢ່າງຍິ່ງໃນອຸປັຊຊາຍ໌
໔. ມີຄວາມເຄົາຣົພຢ່າງຍິ່ງໃນອຸປັຊຊາຍ໌
໕. ມີຄວາມຫວັງດີຢ່າງຍິ່ງໃນອຸປັຊຊາຍ໌

ພິກສຸທັງຫລາຍ ອຸປັຊຊາຍ໌ບໍ່ຄວນປະນາມສັທທີວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້
ພິກສຸທັງຫລາຍ ສັທທີວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ຄວຣທີ່ຈະຖືກປະນາມ ຄື
໑. ບໍ່ມີຄວາມຮັກຢ່າງຍິ່ງໃນອຸປັຊຊາຍ໌
໒. ບໍ່ມີຄວາມເຫລື້ອມໃສຢ່າງຍິ່ງໃນອຸປັຊຊາຍ໌
໓. ບໍ່ມີຄວາມລະອາຍຢ່າງຍິ່ງໃນອຸປັຊຊາຍ໌
໔. ບໍ່ມີຄວາມເຄົາຣົພຢ່າງຍິ່ງໃນອຸປັຊຊາຍ໌
໕. ບໍ່ມີຄວາມຫວັງດີຢ່າງຍິ່ງໃນອຸປັຊຊາຍ໌

ພິກສຸທັງຫລາຍ ສັທທີວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ ຄວຣທີ່ຈະຖືກປະນາມ
ພິກສຸທັງຫລາຍ ສັທທີວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ບໍ່ຄວຣທີ່ຈະຖືກປະນາມ ຄື
໑. ມີຄວາມຮັກຢ່າງຍິ່ງໃນອຸປັຊຊາຍ໌
໒. ມີຄວາມເຫລື້ອມໃສຢ່າງຍິ່ງໃນອຸປັຊຊາຍ໌

ໝາຍເຫດ :

໑ ພຼາວນາ ຄວາມຫວັງດີໃນທີ່ນີ້ໝາຍເຖິງ ເມຕຕາພຼາວນາ (ວິ. ອ. ໓/໓໖໘/໓໙໙)

໓. ມີຄວາມລະອາຍຢ່າງຍິ່ງໃນອຸປັຊຢາຍ໌
໔. ມີຄວາມເຄົາຣົພຢ່າງຍິ່ງໃນອຸປັຊຢາຍ໌
໕. ມີຄວາມຫວັງດີຢ່າງຍິ່ງໃນອຸປັຊຢາຍ໌

ພິກສຸທັງຫລາຍ ສັທທິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ ບໍ່ຄວຣທີ່ຈະຖືກປະນາມ

ພິກສຸທັງຫລາຍ ສັທທິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ເມື່ອອຸປັຊຢາຍ໌ບໍ່ປະນາມ ຍ່ອມມີໂທສ ເມື່ອປະນາມ ຍ່ອມບໍ່ມີໂທສ ຄື

໑. ບໍ່ມີຄວາມຮັກຢ່າງຍິ່ງໃນອຸປັຊຢາຍ໌
໒. ບໍ່ມີຄວາມເຫລື້ອມໃສຢ່າງຍິ່ງໃນອຸປັຊຢາຍ໌
໓. ບໍ່ມີຄວາມລະອາຍຢ່າງຍິ່ງໃນອຸປັຊຢາຍ໌
໔. ບໍ່ມີຄວາມເຄົາຣົພຢ່າງຍິ່ງໃນອຸປັຊຢາຍ໌
໕. ບໍ່ມີຄວາມຫວັງດີຢ່າງຍິ່ງໃນອຸປັຊຢາຍ໌

ພິກສຸທັງຫລາຍ ສັທທິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ ເມື່ອອຸປັຊຢາຍ໌ບໍ່ປະນາມ ຍ່ອມມີໂທສ ເມື່ອປະນາມ ຍ່ອມບໍ່ມີໂທສ

ພິກສຸທັງຫລາຍ ສັທທິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ເມື່ອອຸປັຊຢາຍ໌ປະນາມ ຍ່ອມມີໂທສ ເມື່ອບໍ່ປະນາມ ຍ່ອມບໍ່ມີໂທສ ຄື

໑. ມີຄວາມຮັກຢ່າງຍິ່ງໃນອຸປັຊຢາຍ໌
໒. ມີຄວາມເຫລື້ອມໃສຢ່າງຍິ່ງໃນອຸປັຊຢາຍ໌
໓. ມີຄວາມລະອາຍຢ່າງຍິ່ງໃນອຸປັຊຢາຍ໌
໔. ມີຄວາມເຄົາຣົພຢ່າງຍິ່ງໃນອຸປັຊຢາຍ໌
໕. ມີຄວາມຫວັງດີຢ່າງຍິ່ງໃນອຸປັຊຢາຍ໌

ພິກສຸທັງຫລາຍ ສັທທິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ ເມື່ອອຸປັຊຊາຍ໌ປະນາມ ຍ່ອມມີໂທສ ເມື່ອບໍ່ປະນາມ ຍ່ອມບໍ່ມີໂທສ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໗. ປຍາມິຕກຖາ

ມູລເຫຕຸໃຫ້ເກີດການອຸປສົມບົທດ້ວຍຍັຕຕິຈຕຸຕຖກັມ

ເຣື່ອງພຣາມນ໌ຈ່ອຍຜອມເພາະບໍ່ໄດ້ບວຊ

[໘໑] ສມັຍນັ້ນ ພຣາມນ໌ຄົນນຶ່ງ ເຂົ້າໄປຫາພິກສຸທັງຫລາຍຂໍການບັນພະຊາ ພິກສຸທັງຫລາຍບໍ່ປະສົງຄ໌ຈະໃຫ້ເຂົາບັນພະຊາເຂົາ ເມື່ອບໍ່ໄດ້ການບັນພະຊາໃນຫມູ່ພິກສຸ ຈຶ່ງຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ ພຣະຜູ້ມີພຣະພາກທອດພຣະເນຕຣເຫັນພຣາມນ໌ນັ້ນຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ ຈຶ່ງຕຣັສຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເປັນຫຍັງພຣາມນ໌ຜູ້ນັ້ນຈຶ່ງໄດ້ຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດລະ" ພິກສຸທັງຫລາຍຂາບທູລວ່າ "ພຣາມນ໌ນັ້ນໄດ້ເຂົ້າໄປຫາພິກສຸທັງຫລາຍຂໍການບັນພະຊາ ພິກສຸທັງຫລາຍບໍ່ປະສົງຄ໌ຈະໃຫ້ເຂົາບັນພະຊາ ເຂົາເມື່ອບໍ່ໄດ້ການບັນພະຊາໃນຫມູ່ພິກສຸ ຈຶ່ງຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ ພຣະພຸດທະເຈົ້າຂ້າ" ລຳດັບນັ້ນ ພຣະຜູ້ມີພຣະພາກຕຣັສກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ໃຜຣະນຶກຄວາມດີຂອງພຣາມນ໌ນັ້ນໄດ້ແດ່" ເມື່ອຕຣັສຖາມຢ່າງນີ້ແລ້ວ ທ່ານພຣະສາຣີບຸຕຣໄດ້ຂາບທູລພຣະຜູ້ມີພາຄດັ່ງນີ້ວ່າ "ຂ້າພຣະອົງຄ໌ຣະນຶກຄວາມດີຂອງພຣາມນ໌ນັ້ນໄດ້ ພຣະພຸດທະເຈົ້າຂ້າ" "ສາຣີບຸຕຣ ທ່ານຣະນຶກຄວາມດີຫຍັງຂອງພຣາມນ໌ນັ້ນໄດ້" "ພຣະອົງຄ໌ຜູ້ຈະເຣີນ ເມື່ອຂ້າພຣະອົງຄ໌ທ່ຽວບິນທບາຕໃນກຸງຣາຊຄຶຫ໌ນີ້ ພຣາມນ໌ນັ້ນໄດ້ຖວາຍພິກສາທັພພີນຶ່ງ ຂ້າພຣະອົງຄ໌ຣະນຶກຄວາມດີນີ້ຂອງພຣາມນ໌ນັ້ນໄດ້ ພຣະພຸດທະເຈົ້າຂ້າ" "ດີລະໆ ສາຣີບຸຕຣ ຈິງຢູ່ ສັຕບຸຣຸສທັງຫລາຍເປັນຜູ້ກຕັຍຍູກຕເວທີ ສາຣີບຸຕຣ ຖ້າເຊັ່ນນັ້ນ ທ່ານຈົ່ງໃຫ້ພຣາມນ໌ນັ້ນບັນພະຊາອຸປສົມບົທເຖີດ" "ຂ້າພຣະອົງຄ໌ຈະໃຫ້ພຣາມນ໌ນັ້ນບັນພະຊາອຸປສົມບົທຢ່າງໃດ ພຣະພຸດທະເຈົ້າຂ້າ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໗. ປຍາມິຕກຖາ

ອຸປສົມບົທດ້ວຍຍັຕຕິຈຕຸຕຖກັມ

ຄັ້ງນັ້ນ ພຣະຜູ້ມີພຣະພາກໄດ້ຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸແລ້ວຣັບສັ່ງພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ນັບແຕ່ວັນນີ້ເປັນຕົ້ນໄປ ເຮົາຫ້າມການອຸປສົມບົທດ້ວຍໄຕຣສຣນ ຄົມນ໌ທີ່ເຮົາໄດ້ອນຸຍາຕໄວ້ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ອຸປສົມບົທດ້ວຍ ຍັຕຕິຈຕຸຕຖກັມ

ວິທີໃຫ້ອຸປສົມບົທແລະກັມວາຈາໃຫ້ອຸປສົມບົທ

ພິກສຸທັງຫລາຍ ສົງຄ໌ຄວນໃຫ້ອຸປສົມບົທຢ່າງນີ້ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຄ໌ຊາບດ້ວຍຍັຕຕິຈຕຸຕຖກັມວາຈາວ່າ

[໗໐] "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຜູ້ນີ້ມີຊື່ນີ້ເປັນອຸປສັມປທາເປກຂະ (ຜູ້ຂໍບວຊເປັນພິກສຸ)ຂອງທ່ານຜູ້ມີຊື່ນີ້ ຖ້າສົງຄ໌ພ້ອມກັນແລ້ວ ຄວນໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຍາຍ໌ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຜູ້ນີ້ມີຊື່ນີ້ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ສົງຄ໌ໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຍາຍ໌ ທ່ານຣູບໃດເຫັນດ້ວຍກັບການໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຍາຍ໌ ທ່ານຣູບນັ້ນຄວນນິ່ງ ທ່ານຣູບໃດບໍ່ເຫັນດ້ວຍ ທ່ານຣູບນັ້ນ ຄວນທັກທ້ວງ

ແມ່ນຄັ້ງທີ ໒ ຂ້າພະເຈົ້າກໍກ່າວຄວາມນີ້ວ່າ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຜູ້ນີ້ມີຊື່ນີ້ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ສົງຄ໌ໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຍາຍ໌ ທ່ານຣູບໃດເຫັນດ້ວຍກັບການໃຫ້ຜູ້ມີຊື່ນີ້ອຸປສົມບົທມີທ່ານຜູ້ມີຊື່ນີ້ເປັນອຸປັຊຍາຍ໌ ທ່ານຣູບນັ້ນຄວນນິ່ງ ທ່ານຣູບໃດບໍ່ເຫັນດ້ວຍ ທ່ານຣູບນັ້ນ ຄວນທັກທ້ວງ

ແມ່ນຄັ້ງທີ ໓ ຂ້າພະເຈົ້າກໍກ່າວຄວາມນີ້ວ່າ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຜູ້ນີ້ມີຊື່ນີ້ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ສົງຄ໌ໃຫ້ຜູ້ມີຊື່ນີ້ອຸປສົມບົທມີທ່ານຜູ້ມີຊື່ນີ້ເປັນອຸປັຊຍາຍ໌ ທ່ານຣູບໃດເຫັນດ້ວຍກັບການໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຍາຍ໌ ທ່ານຣູບນັ້ນຄວນນິ່ງ ທ່ານຣູບໃດບໍ່ເຫັນດ້ວຍ ທ່ານຣູບນັ້ນ ຄວນທັກທ້ວງ ຜູ້ມີຊື່ນີ້ສົງຄ໌ໃຫ້ອຸປສົມບົທແລ້ວ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຍາຍ໌ ສົງຄ໌ເຫັນດ້ວຍເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້"

ເຣື້ອງພິກສຸປະພຶດບໍ່ສົມຄວຣ

[໗໑] ສມັຍນັ້ນ ພິກສຸຣູບນຶ່ງພອອຸປສົມບົທແລ້ວໄດ້ປະພຶດບໍ່ສົມຄວຣ ພິກສຸທັງຫລາຍພາກັນກ່າວຫ້າມປາມວ່າ "ອາວຸໂສ ທ່ານຢ່າໄດ້ກະທຳຢ່າງນັ້ນ ເພາະການກະທຳຢ່າງນັ້ນບໍ່ຄວຣ" ພິກສຸນັ້ນກ່າວຢ່າງ

ນີ້ວ່າ “ຜູ້ຂ້າບໍ່ໄດ້ຂໍຮ້ອງທ່ານຜູ້ມີອາຍຸທັງຫລາຍວ່າ ‘ຈົ່ງໃຫ້ຜູ້ຂ້າອຸປສົມບົທ’ ທ່ານທັງຫລາຍ ບໍ່ໄດ້ຮັບການຂໍຮ້ອງຈາກຜູ້ຂ້າ ໃຫ້ຜູ້ຂ້າອຸປສົມບົທເປັນຫຍັງ” ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ພິກສຸບໍ່ໄດ້ຮັບການຂໍຮ້ອງບໍ່ຄວນໃຫ້ກຸລບຸຕຣອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ໄດ້ຮັບການຂໍຮ້ອງໃຫ້ກຸລບຸຕຣອຸປສົມບົທໄດ້

ວິທີຂໍການອຸປສົມບົທ

ພິກສຸທັງຫລາຍ ກໍອຸປສົມປທາເປກຂະຄວນຂໍຢ່າງນີ້ ອຸປສົມປທາເປກຂະຄວນເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸທັງຫລາຍ ນັ່ງຄຸເຂົ່າ ປະນົມມື ກ່າວຄຳຂໍການອຸປສົມບົທຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ຂ້າພະເຈົ້າຂໍການອຸປສົມບົທຕໍ່ສົງຂ໌ ຂໍສົງຂ໌ໂປຣດອນຸເຄາະຍົກຂ້າພະເຈົ້າຂຶ້ນເຖີດ໑ ຂະນ້ອຍ”

ຄວນຂໍແມ່ນຄັ້ງທີ ໒ ຯລຯ

ຄວນຂໍແມ່ນຄັ້ງທີ ໓ ຯລຯ

ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິຈຕຸຕຖກັມວາຈາວ່າ

ໝາຍເຫດ :

໑ ຍົກຂ້າພະເຈົ້າຂຶ້ນເຖີດ ຫມາຍເຖິງຍົກຂຶ້ນຈາກອກຸສົລ ແລ້ວໃຫ້ຕັ້ງຢູ່ໃນກຸສົລ ໃນທີ່ນີ້ຫມາຍເຖິງຍົກຂຶ້ນຈາກຄວາມເປັນສາມເນຣ ໃຫ້ຕັ້ງຢູ່ໃນຄວາມເປັນພິກສຸ (ວິ. ອ. ໓/໗໑/໔໑)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໗. ປຍາມິຕກຖາ

ກັມວາຈາໃຫ້ອຸປສົມບົທ

[໗໔] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຜູ້ນີ້ມີຊື່ນີ້ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ຜູ້ມີຊື່ນີ້ຂໍອຸປສົມບົທຕໍ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວ ຄວນໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຢາຍ໌ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຜູ້ນີ້ມີຊື່ນີ້ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ຜູ້ມີຊື່ນີ້ຂໍອຸປສົມບົທຕໍ່ສົງຂ໌ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຢາຍ໌ ສົງຂ໌ໃຫ້ຜູ້ມີຊື່ນີ້ ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຢາຍ໌ ທ່ານຮູບໃດເຫັນດ້ວຍກັບການໃຫ້ຜູ້ມີຊື່ນີ້ ອຸປສົມ ບົທ ມີທ່ານຜູ້

ມີຊື່ນີ້ເປັນອຸປັຊຊາຍ໌ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນ ຄວນທັກທ້ວງ
ແມ່ນຄັ້ງທີ ໔ ຂ້າພະເຈົ້າກ່າວຄວາມນີ້ ຯລຯ
ແມ່ນຄັ້ງທີ ໕ ຂ້າພະເຈົ້າກ່າວຄວາມນີ້ ຯລຯ
ຜູ້ມີຊື່ນີ້ສົງຊ໌ໃຫ້ອຸປສົມບົທແລ້ວ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ສົງຊ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ
ຂ້າພະເຈົ້າຂໍຄວາມນິ່ງນັ້ນເປັນມະຕິຢ່າງນີ້

ເຣື້ອງພຣາມນ໌ບວຊເພາະເຫັນແກ່ປາກທ້ອງ

[໗໕] ສະໄໝນັ້ນ ປະຊາຊົນໃນກຸງຣາຊຄຶຫ໌ໄດ້ຈັດລຳດັບພັຕຕາຫາຣອັນປານີຕໄວ້ ພຣາມນ໌ຄົນນຶ່ງມີຄວາມຄິດວ່າ "ພຣະສະມະນະເຊື້ອສາຍສາກຍບຸຕຣເຫລົ່ານີ້ມີລັກສະນະນິສັຍດີ ປະພຶດຮຽບຮ້ອຍ ບໍຣິໂພຄອາຫາຣດີ ນອນໃນຫ້ອງມິດຊິດ ຖ້າຢ່າງນັ້ນ ເຮົາຄວນບວຊໃນພວກສະມະນະເຊື້ອສາຍສາກຍບຸຕຣ" ຕໍ່ມາ ຈຶ່ງເຂົ້າໄປຫາພິກສຸທັງຫລາຍຂໍບັນພະຊາພິກສຸທັງຫລາຍໄດ້ໃຫ້ບັນພະຊາອຸປສົມບົທ ຄັນເຂົາບວຊແລ້ວ ລຳດັບພັຕຕາຫາຣໄດ້ລົ້ມເລີກໄປ ພິກສຸທັງຫລາຍກ່າວວ່າ "ທ່ານ ມາເຖີດ ບັດນີ້ ພວກເຮົາຈັກໄປບິນທບາຕກັນ" ພິກສຸນັ້ນກ່າວຢ່າງນີ້ວ່າ "ຂະນ້ອຍບໍ່ໄດ້ບວຊເພາະເຫຕຸນີ້ວ່າ ຈັກທຽວບິນທບາຕ ຖ້າທ່ານທັງຫລາຍຖວາຍຂະນ້ອຍ ຂະນ້ອຍຈັກສັນ ຖ້າບໍ່ຖວາຍຂະນ້ອຍ ຂະນ້ອຍຈັກສຶກ ຂະນ້ອຍ" ພິກສຸທັງຫລາຍຈຶ່ງຖາມວ່າ "ອາວຸໂສ ກໍທ່ານບວຊເພາະເຫຕຸແຫ່ງປາກທ້ອງຫລື" ທ່ານຕອບວ່າ "ແມ່ນແລ້ວ ຂະນ້ອຍ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດ ພິກສຸຈຶ່ງໄດ້ບວຊໃນພຣະທັມວິນັຍອັນພຣະຜູ້ມີພຣະພາກຕຣັສໄວ້ດີຢ່າງນີ້ ເພາະເຫຕຸແຫ່ງປາກທ້ອງລະ" ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລໃຫ້ພຣະຜູ້ມີພຣະພາກຊົງ ຊາບ

ຊົງສອບຖາມ

ພຣະຜູ້ມີພຣະພາກຊົງສອບຖາມພິກສຸນັ້ນວ່າ "ພິກສຸ ຊາບວ່າທ່ານບວຊເພາະເຫຕຸແຫ່ງປາກທ້ອງ ແມ່ນແທ້ບໍ" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກພຸດທະເຈົ້າຊົງຕຳໜິວ່າ "ຯລຯ ໂມຊບຸຣຸສ ຈັ່ງໃດທ່ານຈຶ່ງໄດ້ບວຊໃນທັມວິນັຍທີ່ເຮົາກ່າວໄວ້ດີຢ່າງນີ້ ເພາະເຫຕຸແຫ່ງປາກທ້ອງລະ ໂມຊບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຊົງຕຳໜິແລ້ວ ຊົງສະແດງທັມມີກຖາຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ໃຫ້ອຸປສົມບົທບອກນິສສັຍ ໔ ຄື

ນິສສັຍ ໔

໑. ບັນພະຊາອາສັຍໂພຊນະຄືຄຳເຂົ້າທີ່ຄວນໄດ້ດ້ວຍປີແຄ່ງທ່ານຄວນທຳອຸຕສາຫະໃນໂພຊນະຄືຄຳເຂົ້າທີ່ຄວນໄດ້ດ້ວຍປີແຄ່ງນັ້ນຈົນຕລອດຊີວິຕ ອຕິເຣກລາພ ຄື ສັງຂພັຕອຸທເທສພັຕ ນິມັນຕນພັຕ ສລາກພັຕ ປັກຂິກພັຕ ອຸໂປສຖິກພັຕ ປາຕິປທິກພັຕ໑

໔. ບັນພະຊາອາສັຍຜ້າບັງສຸກຸລ ທ່ານຄວນທຳອຸຕສາຫະໃນຜ້າບັງສຸກຸລນັ້ນຈົນຕລອດຊີວິຕ ອຕິເຣກລາພ ຄື ຜ້າເປືອກໄມ້ ຜ້າຝ້າຍ ຜ້າໄໝ ຜ້າຂົນສັຕວ໌ ຜ້າປ່ານຜ້າເຈືອກັນ

ໝາຍເຫດ :

໑ ສັງຂພັຕ ຄື ພັຕຕາຫາຣຖວາຍສົງຂ໌ທັງໝົດ

ອຸທເທສພັຕ ຄື ພັຕຕາຫາຣຖວາຍພິກສຸ ໔ - ໓ ຮູບ

ນິມັນຕນພັຕ ຄື ພັຕຕາຫາຣທີ່ນິມົນຕ໌ແລ້ວຖວາຍ

ສລາກພັຕ ຄື ພັຕຕາຫາຣທີ່ນິມົນຕ໌ໃຫ້ຈັບສລາກແລ້ວຖວາຍ(ຕາມສລາກ)

ປັກຂິກພັຕ ຄື ພັຕຕາຫາຣຖວາຍປັກສ໌(໑໕ ວັນ)ລະ ໑ ຄັ້ງ

ອຸໂປສຖິກພັຕ ຄື ພັຕຕາຫາຣຖວາຍໃນວັນອຸໂບສົຖ

ປາຕິປທິກພັຕ ຄື ພັຕຕາຫາຣຖວາຍໃນວັນແຮມ ໑ ຄ່ຳ (ສາຣຕຖ. ຕີກາ ໓/໗໑-໗໓/໔໗໕)

໓. ບັນພະຊາອາສັຍເສນາສນະຄືຄວງໄມ້ ທ່ານຄວນທຳອຸຕສາຫະໃນເສນາສນະ ຄື ຄວງໄມ້ນັ້ນຈົນຕລອດຊີວິຕ ອຕິເຣກລາພ ຄື ວິຫາຣ ເຮືອນມຸງແຖບດຽວ ປຣາສາທເຮືອນໂລ້ນ ຖ້ຳ

໔. ບັນພະຊາອາສັຍຍາຄືນ້ຳມູຕຣເນົ່າ ທ່ານຄວນທຳອຸຕສາຫະໃນຍາຄືນ້ຳມູຕຣເໜົ່ານັ້ນຈົນຕລອດຊີວິຕ ອຕິເຣກລາພ ຄື ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ

ອຸປັຊຊາຍວັຕຕພານວາຣທີ ໕ ຈົບ

ປຖມາມິຕກຖາ ຈົບ

໑໗. ອາຈຣິຍວັຕຕກຖາ໑

ວ່າດ້ວຍອາຈຣິຍວັຕຣ

ເຣື້ອງການບອກນິສສັຍແກ່ນາຄກ່ອນບວຊ

[໗໔] ສມັຍນັ້ນ ນາຄພົນນຶ່ງເຂົ້າໄປຫາພິກສຸທັງຫລາຍຂອບັນພະຊາ ພິກສຸທັງຫລາຍໄດ້ບອກນິສສັຍແກ່ເຂົາກ່ອນບວຊ ເຂົາກ່າວຢ່າງນີ້ວ່າ "ທ່ານຂະນ້ອຍ ຖ້າບວຊແລ້ວ ທ່ານທັງຫລາຍຈະຄວນບອກນິສສັຍແກ່ຜູ້ຂ້າ ຜູ້ຂ້າກໍຈະຍິນດີຍິ່ງ ບັດນີ້ຜູ້ຂ້າຈັກບໍ່ບວຊ ຂະນ້ອຍ ເພາະວ່ານິສສັຍເປັນສິ່ງທີ່ນ່າຊັງໜ້າກຽດສຳລັບຜູ້ຂ້າ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງ ຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍບໍ່ຄວນບອກນິສສັຍກ່ອນບວຊ ຮູບໃດບອກ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ບອກນິສສັຍພອອຸປສົມບົທເສັດ"

ເຣື້ອງໃຫ້ອຸປສົມບົທດ້ວຍຄນະ

ສມັຍນັ້ນ ພິກສຸທັງຫລາຍໃຫ້ອຸປສົມບົທດ້ວຍຄນະມີພວກ ໔ ແດ່ ມີພວກ ໑ ແດ່ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ໝາຍເຫດ :

໑ ວິ. ຈູ. ໗/໓໗໘-໓໗໐/໑໗໔-໑໗໘

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໗. ອາຈຣິຍວັຕຕກຖາ

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນໃຫ້ອຸປສົມບົທດ້ວຍຄນະມີພວກຢ່ອນ ໑໐ ພິກສຸຮູບໃດ ໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ອຸປສົມບົທດ້ວຍຄນະມີພວກ ໑໐ ຫລືມີພວກເກີນ ໑໐ ໄດ້"

ເຣື້ອງອຸປັຊຍາຍ໌ມີພັນສາດຽວໃຫ້ກຸລບຸຕຣບວຊ

[໗໕] ສມັຍນັ້ນ ພິກສຸທັງຫລາຍມີພັນສາ ໑ ແດ່ ມີພັນສາ ໔ ແດ່ ໃຫ້ ສັທຫິວິຫາຣິກອຸປສົມບົທ ແມ່ນທ່ານພຣະອຸປເສນວັງຄັນຕບຸຕຣມີພັນສາດຽວ ກໍໃຫ້ສັທຫິວິຫາຣິກອຸປສົມບົທ ທ່ານອອກພັນສາແລ້ວ ມີພັນສາ ໔ ໄດ້ພາສັທຫິວິຫາຣິກມີພັນສາ ໑ ເຂົ້າໄປເຝົ້າພຣະຜູ້ມີພຣະພາກ ຖວາຍອະພິວາທແລ້ວນັ່ງ ນະທີ່ສົມຄວຣ ອັນກາຣທີ່ພຣະຜູ້ມີພຣະພາກພຸດທະເຈົ້າທັງຫລາຍຊົງປາສັຍກັບພຣະອາຄັນຕຸກະທັງຫລາຍນັ້ນເປັນພຸທທປະເພນີ ລຳດັບນັ້ນ ພຣະຜູ້ມີພຣະພາກໄດ້ຕຣັສຖາມທ່ານພຣະອຸປເສນວັງຄັນຕບຸຕຣວ່າ "ພິກສຸ ທ່ານຍັງສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື ທ່ານຍ່າງທາງມາໂດຍບໍ່

ລຳບາກຫລື" ທ່ານພຣະອຸປເສນວັງຄັນຕບຸຕຣຂາບທູລວ່າ "ຍັງສະບາຍດີ ພຣະພຸດທະເຈົ້າຂ້າ ຍັງພໍເປັນຢູ່ໄດ້ ພຣະພຸດທະເຈົ້າຂ້າ ຂ້າພຣະອົງຄ໌ຍ່າງທາງມາໂດຍບໍ່ລຳບາກ ພຣະພຸດທະເຈົ້າຂ້າ"

ພຸທຫປະເພນີ

ພຣະຕຖາຄົຕເຈົ້າທັງຫລາຍຊົງຊາບເຣື້ອງຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຊົງຊາບກາລອັນຄວຣ ຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຕຣັສຖາມເຣື່ອງທີ່ເປັນປໂຍດ ບໍ່ຕຣັສຖາມເຣື່ອງທີ່ບໍ່ເປັນປໂຍດ ເພາະພຣະຕຖາຄົຕເຈົ້າທັງຫລາຍ ຊົງຂຈັດເຣື່ອງທີ່ບໍ່ເປັນປໂຍດເສັ້ງດ້ວຍອຣິຍມັຄແລ້ວພຣະຜູ້ມີພຣະພາກພຸດທະເຈົ້າທັງຫລາຍ ສອບຖາມພິກສຸທັງຫລາຍດ້ວຍເຫຕຸ ໔ ປະກາຣ ຄື ຈະຊົງສະແດງ ທັມຢ່າງນຶ່ງຈະຊົງບັນຍັດສິກຂາບົທແກ່ພຣະສາວົກຢ່າງນຶ່ງ ລຳດັບນັ້ນ ພຣະຜູ້ມີພຣະພາກໄດ້ຕຣັສຖາມທ່ານພຣະອຸປເສນວັງຄັນຕບຸຕຣວ່າ "ທ່ານມີພັນສາເທົ່າໃດ ພິກສຸ" ທ່ານພຣະອຸປເສນວັງຄັນຕບຸຕຣຂາບທູລວ່າ "ຂ້າພຣະອົງຄ໌ໄດ້ ໔ ພັນສາແລ້ວ ພຣະພຸດທະເຈົ້າຂ້າ"

"ພິກສຸຮູບນີ້ ມີພັນສາເທົ່າໃດ"

"ມີພັນສາດຽວ ພຣະພຸດທະເຈົ້າຂ້າ"

"ພິກສຸຮູບນີ້ ເປັນຫຍັງກັບທ່ານ"

"ເປັນສັທຫິວິຫາຣິກຂອງຂ້າພຣະອົງຄ໌ ພຣະພຸດທະເຈົ້າຂ້າ"

ຊົງຕຳຫນິ

ພຣະຜູ້ມີພຣະພາກພຸດທະເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສ ກາຣກະທຳຂອງທ່ານນັ້ນ ບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ແມ່ນກິຈຂອງສະມະນະ ໃຊ້ບໍ່ໄດ້ ບໍ່ຄວຣທຳເລີຍ ໂມຂບຸຣຸສທ່ານຍັງເປັນຜູ້ທີ່ຜູ້ອື່ນຈະຕ້ອງຕັກເຕືອນພ່ຳສອນ ຈັ່ງໃດຈຶ່ງໄດ້ສຳຄັນຕນເພື່ອຕັກເຕືອນພ່ຳສອນຜູ້ອື່ນລະ ທ່ານວຽນມາເພື່ອຄວາມເປັນຜູ້ມັກມາກ ຊຶ່ງມີຄວາມກ່ຽວພັນກັບຫມູ່ໄອຍິ່ງນັກກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຕຳຫນິແລ້ວຊົງສະແດງທັມມີກຖາ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ພິກສຸມີພັນສາຢູ່ອນ ໑໐ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐ ໃຫ້ອຸປສົມບົທໄດ້"

ເຣື້ອງອຸປັຊຍາຍ໌ໂງ່ງ່າວ

[໗໘] ສມັຍນັ້ນ ພິກສຸທັງຫລາຍຄິດວ່າ "ເຮົາມີພັນສາຄົບ ໑໐ ເຮົາມີພັນສາຄົບ ໑໐" ແຕ່ເປັນຜູ້

ໂງ່ງ່າວ ບໍ່ສລາດ ໃຫ້ອຸປສົມບົທ ປາກົດວ່າ ອຸປັຊຢາຍ໌ເປັນ ຜູ້ໂງ່ງ່າວ ສັທຫິວິຫາຣິກເປັນບັນທິຕກໍມີ ອຸປັຊຢາຍ໌ເປັນຜູ້ບໍ່ສລາດ ສັທຫິວິຫາຣິກເປັນຜູ້ສລາດກໍມີ ອຸປັຊຢາຍ໌ມີສຸຕະນ້ອຍ ສັທຫິວິຫາຣິກເປັນ ພຫູສູຕກໍມີ ອຸປັຊຢາຍ໌ມີປັນຍາຊາມສັທຫິວິຫາຣິກມີປັນຍາດີກໍມີ ແມ່ນພິກສຸຮູບນຶ່ງເຄີຍເປັນອັຢູເດັຽຣະ ຖີຍ໌ ຖືກອຸປັຊຢາຍ໌ວ່າກ່າວໂດຍຊອບທັມ ກໍໂຕ້ຖຽງອຸປັຊຢາຍ໌ໄປເຂົ້າລັທທິເດັຽຣະຖີຍ໌ນັ້ນດັ່ງເດີມ ບັນ ດາພິກສຸທີ່ມັກນ້ອຍ ຯລຯ ພາກັນຕໍາຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງໄດ້ອ້າງ ວ່າ 'ເຮົາມີພັນສາຄົບ ໑໐ ເຮົາມີພັນສາຄົບ ໑໐' ແຕ່ເປັນຜູ້ໂງ່ງ່າວບໍ່ສລາດ ໃຫ້ອຸປສົມບົທ ປາກົດວ່າ ອຸປັຊຢາຍ໌ເປັນຜູ້ໂງ່ງ່າວ ສັທຫິວິຫາຣິກເປັນບັນທິຕກໍມີອຸປັຊຢາຍ໌ເປັນຜູ້ບໍ່ສລາດ ສັທຫິວິຫາຣິກເປັນຜູ້ ສລາດກໍມີ ອຸປັຊຢາຍ໌ມີສຸຕະນ້ອຍ ສັທຫິວິຫາຣິກ
ເປັນພຫູສູຕກໍມີ ອຸປັຊຢາຍ໌ມີປັນຍາຊາມ ສັທຫິວິຫາຣິກມີປັນຍາດີກໍມີ" ຈຶ່ງນໍາເອົາເຣື່ອງນີ້ໄປຂາບທູລ ພຣະຜູ້ມີພຣະພາກໃຫ້ຊົງຊາບ

ຊົງສອບຖາມ

ພຣະຜູ້ມີພຣະພາກຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກພິກສຸໄດ້ອ້າງວ່າ ເຮົາມີພັນສາຄົບ ໑໐ ເຮົາມີພັນສາຄົບ ໑໐ ແຕ່ເປັນຜູ້ໂງ່ງ່າວ ບໍ່ສລາດໃຫ້ອຸປສົມບົທ ປາກົດວ່າ ອຸປັຊຢາຍ໌ເປັນຜູ້ໂງ່ງ່າວ ສັທຫິວິຫາຣິກເປັນຜູ້ສລາດກໍມີ ອຸປັຊຢາຍ໌ເປັນຜູ້ບໍ່ສລາດ ສັທຫິວິຫາຣິກ ເປັນຜູ້ສລາດກໍມີ ອຸປັຊຢາຍ໌ມີສຸຕະນ້ອຍ ສັທຫິວິຫາຣິກເປັນພຫູສູຕກໍມີ ອຸປັຊຢາຍ໌ມີປັນຍາຊາມ ສັທຫິວິຫາຣິກມີປັນຍາດີກໍມີ ແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກພຸດທະເຈົ້າຊົງຕໍາຫນິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຈຶ່ງໄດ້ ອ້າງວ່າ ເຮົາມີພັນສາຄົບ ໑໐ ເຮົາມີພັນສາຄົບ ໑໐ ແຕ່ເປັນຜູ້ໂງ່ງ່າວບໍ່ສລາດ ໃຫ້ອຸປສົມ ບົທລະ ປາກົດວ່າອຸປັຊຢາຍ໌ເປັນຜູ້ໂງ່ງ່າວ ສັທຫິວິຫາຣິກເປັນບັນທິຕກໍມີ ອຸປັຊຢາຍ໌ເປັນຜູ້ບໍ່ສລາດ ສັທຫິວິຫາຣິກເປັນຜູ້ສລາດກໍມີ ອຸປັຊຢາຍ໌ມີສຸຕະນ້ອຍ ສັທຫິວິຫາຣິກເປັນພຫູສູຕກໍມີ ອຸປັຊຢາຍ໌ມີປັນ ຍາຊາມ ສັທຫິວິຫາຣິກມີປັນຍາດີກໍມີ ພິກສຸທັງຫລາຍກາຣກະທໍາຂອງພວກໂມຂບຸຣຸສນັ້ນ ບໍ່ໄດ້ເຮັດ ໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສ ຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນແລ້ວຊົງສະແດງທັມມີກຖາຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ພິກສຸຜູ້ໂງ່ງ່າວ ບໍ່ສລາດ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະ ຓະ ພິກສຸ ທັງຫລາຍ ເຮົາອນຸຍາຕ ໃຫ້ພິກສຸຜູ້ສລາດຜູ້ສາມາດມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐ ໃຫ້ ອຸປສົມບົທໄດ້"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໗. ອາຈຣິຍວັຕຕກຖາ

ເຣື້ອງອຸປັຊຢາຍ໌ຫລີກໄປ

[໗໗] ສມັຍນັ້ນ ເມື່ອອຸປັຊຢາຍ໌ຫລີກໄປແດ່ ສຶກເສັ່ງແດ່ ມໍຣະນະພາພແດ່ ໄປເຂົ້າຮີດເດັຽຣະຖີຍ໌ແດ່ ພິກສຸທັ້ງຫລາຍບໍ່ມີອາຈາຣຍ໌ ບໍ່ມີຜູ້ຄອຍຕັກເຕືອນພໍ່າສອນ ຈຶ່ງນຸ່ງຫົ່ມບໍ່ຮຽບຮ້ອຍ ມີມາຣຍາທ ບໍ່ສົມຄວຣ ທຽວບິນທບາຕ ເມື່ອຄົນທັ້ງຫລາຍກຳລັງບໍຣິໂພຄກໍຍື່ນບາຕຣສຳລັບທຽວບິນທບາຕເຂົ້າ ໄປເທິງຂອງບໍຣິໂພຄແດ່ ບິນຂອງຄ້ຽວແດ່ ບິນຂອງລິ້ມແດ່ ບິນນ້ຳດື່ມແດ່ ອອກປາກຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາສັນສົ່ງສຽງດັ່ງໃນໂຮງສັນແດ່ ຄົນທັ້ງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດສະມະນະເຊື້ອສາຍສາກຍບຸຕຣທັ້ງຫລາຍຈຶ່ງໄດ້ນຸ່ງຫົ່ມບໍ່ຮຽບຮ້ອຍ ມີມາຣຍາທ ບໍ່ສົມຄວຣ ທຽວບິນທບາຕ ເມື່ອຄົນທັ້ງຫລາຍກຳລັງບໍຣິໂພຄ ກໍຍື່ນບາຕຣສຳລັບທຽວບິນທບາຕເຂົ້າ ໄປເທິງຂອງບໍຣິໂພຄແດ່ ບິນຂອງຄ້ຽວແດ່ ບິນຂອງລິ້ມແດ່ ບິນນ້ຳດື່ມແດ່ ອອກປາກຂໍແກງແດ່ ເຂົ້າສຸກແດ່ດ້ວຍຕົນເອງມາສັນ ສົ່ງສຽງດັ່ງໃນໂຮງສັນແດ່ ເຫມືອນພວກພຣາມນ໌ໃນສະຖານ ທີ່ລ້ຽງພຣາມນ໌ສະນັ້ນລະ" ພິກສຸທັ້ງຫລາຍໄດ້ຍິນຄົນເຫລົ່ານັ້ນຕຳຫນິ ປະນາມ ໂພນທະ ນາຢູ່ ບັນດາ ພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັ້ງຫລາຍຈຶ່ງໄດ້ນຸ່ງ ຫົ່ມບໍ່ຮຽບຮ້ອຍ ມີມາຣຍາທບໍ່ສົມຄວຣ . . . ສົ່ງສຽງດັ່ງໃນໂຮງສັນແດ່ລະ" ຈຶ່ງນຳເຣື້ອງນີ້ໄປຂາບ ທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຊົງສອບຖາມພິກສຸທັ້ງຫລາຍວ່າ "ພິກສຸທັ້ງ ຫລາຍ ຊາບວ່າ ພວກພິກສຸນຸ່ງຫົ່ມບໍ່ຮຽບຮ້ອຍ ມີມາຣຍາທບໍ່ສົມຄວຣ . . . ສົ່ງສຽງດັ່ງໃນໂຮງສັນ ແດ່ ແມ່ນແທ້ບໍ" ພິກສຸທັ້ງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸດທະເຈົ້າຂ້າ"

ເຣື້ອງຖືນິສສັຍຢູ່ ໑໐ ພັນສາ

ພຣະຜູ້ມີພຣະພາກພຸດທະເຈົ້າຊົງຕຳຫນິວ່າ "ຯລຯ ພິກສຸທັ້ງຫລາຍ ຈັ່ງໃດ ໂມຂບຸຣຸສເຫລົ່ານັ້ນ ຯລຯ" ຄັນແລ້ວຊົງສະແດງທັມມີກຖາ ຮັບສັ່ງກັບພິກສຸທັ້ງຫລາຍວ່າ "ພິກສຸທັ້ງຫລາຍ ເຮົາອນຸຍາຕ ອາຈາຣຍ໌ ອາຈາຣຍ໌ຈັກເຂົ້າໄປຕັ້ງຈິຕສນິທສນົມໃນອັນເຕວາສິກສັນບຸຕຣ ອັນເຕວາສິກຈັກເຂົ້າໄປຕັ້ງ ຈິຕສນິທສນົມໃນອາຈາຣຍ໌ສັນບິດາ ເມື່ອເປັນເຊັ່ນນີ້ ອາຈາຣຍ໌ແລະອັນເຕວາສິກຈັກມີຄວາມເຄົາຣົພຢໍາ ເກງ ປະພຶດກົມກຽວກັນ ຈັກເຖິງຄວາມຈະເຣີນງອກງາມໄພບູລຍ໌ໃນພຣະທັມວິນັຍນີ້ ພິກສຸທັ້ງຫລາຍ ເຮົາອນຸຍາຕໃຫ້ອາສັຍພິກສຸມີພັນສາ ໑໐ ຢູ່ ອນຸຍາຕໃຫ້ພິກສຸມີພັນສາ ໑໐ ໃຫ້ນິສສັຍໄດ້"

ວິທີຖືນິສ໌ສັຍ

ພິກສຸທັງຫລາຍ ອັນເຕວາສິກຄວນຖືອາຈາຣຍ໌ຢ່າງນີ້ ອັນເຕວາສິກນັ້ນຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນ ນັ່ງຄຸເຂົ່າປະນົມມືກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ທ່ານຈົ່ງເປັນອາຈາຣຍ໌ຂອງຂ້າພະເຈົ້າເຖີດ ຂ້າພະເຈົ້າຈັກອາສັຍທ່ານຢູ່ ທ່ານຜູ້ຈະເຣີນ ທ່ານຈົ່ງເປັນອາຈາຣຍ໌ຂອງຂ້າພະເຈົ້າເຖີດ ຂ້າພະເຈົ້າຈັກອາສັຍທ່ານຢູ່ ທ່ານຜູ້ຈະເຣີນ ທ່ານຈົ່ງເປັນອາຈາຣຍ໌ຂອງຂ້າພະເຈົ້າ ຂ້າພະເຈົ້າຈັກອາສັຍທ່ານຢູ່" ອາຈາຣຍ໌ໃຫ້ອັນເຕວາສິກຮູ້ດ້ວຍກາຍ ໃຫ້ຮູ້ດ້ວຍວາຈາ ຫລືໃຫ້ຮູ້ດ້ວຍກາຍແລະວາຈາວ່າ "ດີລະ" ວ່າ "ເບົາໃຈລະ" ວ່າ "ຊອບແກ່ອຸບາຍລະ" ວ່າ "ສົມຄວຣລະ" ຫລືວ່າ "ຈົ່ງປະພຶດປະຕິບັດໃຫ້ຫນ້າເຫລື້ອມໃສ" ອາຈາຣຍ໌ຊື່ວ່າເປັນຜູ້ທີ່ອັນເຕວາສິກຖືແລ້ວ ອາຈາຣຍ໌ບໍ່ໃຫ້ອັນເຕວາສິກຮູ້ດ້ວຍກາຍ ບໍ່ໃຫ້ຮູ້ດ້ວຍວາຈາ ຫລືບໍ່ໃຫ້ຮູ້ດ້ວຍກາຍແລະວາຈາ ອາຈາຣຍ໌ເປັນຜູ້ທີ່ອັນເຕວາສິກຍັງບໍ່ໄດ້ຖື

ອາຈຣິຍວັຕຣ

[ໆໆ] ພິກສຸທັງຫລາຍ ອັນເຕວາສິກຄວນປະພຶດຊອບໃນອາຈາຣຍ໌ ວິທີປະພຶດຊອບໃນອາຈາຣຍ໌ນັ້ນມີດັ່ງນີ້ ອັນເຕວາສິກຄວນລຸກຂຶ້ນແຕ່ເຊົ້າຕຣູ່ ຖອດເກີບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຖວາຍໄມ້ຊຳຣະແຂ້ວ ນ້ຳລ້າງຫນ້າ ປູອາສນະ ຖ້າເຂົ້າປຽກມີ ຄວນລ້າງພາຊນະໃສ່ເຂົ້າປຽກເຂົ້າໄປ ຖວາຍ ເມື່ອອາຈາຣຍ໌ສັນເຂົ້າປຽກເສັດແລ້ວ ຄວນຖວາຍນ້ຳຮັບພາຊນະມາ ຖືຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ລ້າງແລ້ວເກັບງຳໄວ້ ເມື່ອອາຈາຣຍ໌ລຸກຂຶ້ນແລ້ວ ຄວນຍກອາສນະເກັບ ຖ້າທີ່ນັ້ນຣົກ ຄວນກວາດ ຖ້າອາຈາຣຍ໌ຕ້ອງການຈະເຂົ້າຫມູ່ບ້ານ ຄວນຖວາຍຜ້ານຸ່ງ ຮັບຜ້ານຸ່ງອາສັຍ ຖວາຍປະຄົດແອວ ຖວາຍສັງຂາຕິທີ່ພັບຊ້ອນກັນ ລ້າງບາຕຣແລ້ວຖວາຍພ້ອມທັງນ້ຳ ຖ້າອາຈາຣຍ໌ຫວັງຈະໃຫ້ເປັນປັຈສາສະມະນະ ຄວນນຸ່ງໃຫ້ຮຽບຮ້ອຍປົກປິດໄດ້ມົນທົລ ໓ ຄາດປະຄົດແອວ ຫົ່ມສັງຂາຕິທີ່ພັບຊ້ອນກັນ ໃສ່ກະດຸມ ລ້າງບາຕຣຖືໄປ ເປັນປັຈສາສະມະນະຂອງອາຈາຣຍ໌ ຄວນຍ່າງບໍ່ໃຫ້ຫ່າງ ນັກ ບໍ່ໃຫ້ຊິດນັກ ຄວນຮັບບາຕຣທີ່ມີຂອງບັນຈຸຢູ່ ເມື່ອອາຈາຣຍ໌ກຳລັງກ່າວ ບໍ່ຄວນກ່າວສອດຂຶ້ນໃນຣະຫວ່າງອາຈາຣຍ໌ກ່າວຖ້ອຍຄຳ ໃກ້ຕໍ່ອາບັຕິ ຄວນຫ້າມເສັຽ ເມື່ອອາຈາຣຍ໌ຈະກັບ ຄວນມາ ກ່ອນ ແລ້ວປູອາສນະໄວ້ ຄວນຕຽມນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນໄວ້ ຄວນລຸກຂຶ້ນ ຮັບບາຕຣແລະຈີວອນ ຄວນຖວາຍຜ້ານຸ່ງອາສັຍ ຮັບຜ້ານຸ່ງມາ ຖ້າຈີວອນຊຸ່ມເຫື່ອ ຄວນຜຶ່ງແດດບຶດນຶ່ງ ບໍ່ຄວນຜຶ່ງຖິ້ມໄວ້ທີ່ແດດ ຄວນພັບຈີວອນ ເມື່ອຈະພັບຈີວອນ ຄວນພັບຈີວອນໃຫ້ ເຫລື່ອມມຸມກັນ ໔ ນີ້ວຕັ້ງໃຈວ່າ ທາງກາງຈະໄດ້ບໍ່ມີຮອຍພັບ ຄວນມ້ວນປະຄົດແອວໃສ່ຂນົດ ຈີວອນ ຖ້າບິນທບາຕມີ ແລະອາຈາຣຍ໌ຕ້ອງການຈະສັນ ຄວນຖວາຍນ້ຳແລ້ວນ້ອມບິນທບາຕ ເຂົ້າ ໄປຖວາຍ ນຳນ້ຳສັນມາຖວາຍ

ເມື່ອອາຈານສັນເສັດແລ້ວ ຄວນຖວາຍນ້ຳ ຮັບບາດຮມາຖືຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ລ້າງແລ້ວເຊັດໃຫ້ສະເດັດນ້ຳຜຶ່ງແດດຄູ່ນຶ່ງ ບໍ່ຕວນຜຶ່ງຖິ້ມໄວ້ທີ່ແດດ ຄວນເກັບບາດຮແລະຈີວອນ ເມື່ອຈະເກັບບາດຮ ຄວນໃຊ້ມືຂ້າງນຶ່ງຈັບບາດຮ ໃຊ້ມືຂ້າງນຶ່ງຄໍາໃຕ້ຕຽງຫລືໃຕ້ຕັ່ງ ຈຶ່ງເກັບບາດຮ ບໍ່ຄວນເກັບບາດຮໄວ້ບົນພື້ນທີ່ບໍ່ມີສິ່ງໃດຮອງ ເມື່ອຈະເກັບຈີວອນ ຄວນໃຊ້ມືຂ້າງນຶ່ງຖືຈີວອນ ໃຊ້ມືຂ້າງນຶ່ງລູບຮາວຈີວອນຫລືສາຍຣະດຽງ ເອົາຊາຍໄວ້ນອກ ເອົາຂົດໄວ້ໃນ ຈຶ່ງເກັບຈີວອນ ເມື່ອອາຈານລຸກຂຶ້ນແລ້ວ ຄວນຍົກອາສນະເກັບ ຄວນເກັບນ້ຳ ລ້າງຕີນ ຕັ່ງຮອງຕີນກະເບື້ອງເຊັດຕີນ ຖ້າທີ່ນັ້ນຮົກຄວນກວາດ ຖ້າອາຈານຕ້ອງການຈະສົງນ້ຳ ຄວນຈັດນ້ຳສຮົງຖວາຍ ຖ້າທ່ານຕ້ອງການນ້ຳເຢັນຄວນຈັດນ້ຳເຢັນຖວາຍ ຖ້າທ່ານຕ້ອງການນ້ຳອຸ່ນ ຄວນຈັດນ້ຳອຸ່ນຖວາຍ ຖ້າອາຈານຕ້ອງການຈະເຂົ້າເຮືອນໄຟ ຄວນບົດຈຸຣນະ ຄວນແຊ່ດິນ ຖືຕັ່ງສໍາລັບເຮືອນໄຟຍ່າງຕາມຫລັງອາຈານໄປ ຖວາຍຕັ່ງສໍາລັບເຮືອນໄຟແລ້ວຮັບຈີວອນມາວາງ ນະທີ່ສົມຄວຣ ຈຶ່ງຖວາຍຈຸຣນແລະດິນ ຖ້າສາມາດຄວນເຂົ້າເຮືອນໄຟ ເມື່ອຈະເຂົ້າເຮືອນໄຟ ຄວນເອົາດິນທາຫນ້າປິດຫນ້າແລະຫລັງ ຈຶ່ງເຂົ້າເຮືອນໄຟບໍ່ຄວນນັ່ງບຽດພຣະເຖຣະ ບໍ່ຄວນກີດກັນອາສນະພຣະນວກະ

ຄວນທໍາບຣິກັມແກ່ອາຈານໃນເຮືອນໄຟ ເມື່ອຈະອອກຈາກເຮືອນໄຟ ຄວນຖືຕັ່ງສໍາລັບເຮືອນໄຟປິດຫນ້າແລະຫລັງ ຈຶ່ງອອກຈາກເຮືອນໄຟ ຄວນທໍາບໍຣິກັມ ແກ່ ອາຈານແມ່ນໃນນ້ຳ ຕົນສົງນ້ຳເສັດແລ້ວ ຄວນຂຶ້ນກ່ອນເຊັດຕົວໃຫ້ແຫ້ງແລ້ວຜັດປ່ຽນຜ້າ ຄວນເຊັດນ້ຳຈາກຕົວອາຈານ ຖວາຍຜ້ານຸ່ງ ສັງຂາຕິ ຖືຕັ່ງສໍາລັບເຮືອນໄຟມາກ່ອນ ປູອາສນະ ຕຽມນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນໄວ້ ນໍານ້ຳສັນ ມາຖວາຍອາຈານ ຖ້າອາຈານຕ້ອງການຈະໃຫ້ຮຽນ ຄວນຮຽນ ຖ້າອາຈານຕ້ອງການຈະໃຫ້ສອບຖາມອັນຖະ ຄວນສອບຖາມ ອາຈານຢູ່ໃນວິຫາຣໃດ ຖ້າວິຫາຣນັ້ນສົກປົກ ຖ້າສາມາດ ຄວນຊໍາຣະໃຫ້ສະອາດ ເມື່ອຈະຊໍາຣະວິຫາຣໃຫ້ສະອາດ ຄວນຂົນບາດຮ ແລະຈີວອນອອກກ່ອນ ວາງໄວ້ ນະທີ່ສົມຄວຣ ຄວນຂົນຜ້າ ປູນັ່ງ ຜ້າປູນອນ ເສື່ອ ຫມອນ ອອກມາວາງ ນະທີ່ສົມຄວຣ ຕຽງ ຕັ່ງ ອັນເຕວາສິກຄວນຍົກ ຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ບໍ່ໃຫ້ຕໍາບານປະຕູແລະຂອບປະຕູ ຂົນອອກໄປຕັ້ງໄວ້ ນະທີ່ສົມຄວຣ ຂຽງຮອງຕຽງ ກະໂຖນ ພນັກພິງ ຄວນຂົນອອກມາວາງໄວ້ນະທີ່ສົມຄວຣ ພົມປູພື້ນ ຄວນສັງ ເກຕ ທີ່ປູໄວ້ເດີມ ຄ່ອຍຂົນອອກມາວາງ ນະທີ່ສົມຄວຣ ຖ້າໃນວິຫາຣມີກາກເຫຍື້ອ ຄວນກວາດ ເພດານລົງມາກ່ອນ ຂອບປ່ອງຢ້ຽມແລະມຸມຫ້ອງຄວນເຊັດ ຖ້າຝາທີ່ເຂົາທານ້ຳມັນຫລືພື້ນທາສີດໍາຂຶ້ນຮາ ຄວຣໃຊ້ຜ້າຊຸບນ້ຳບິດແລ້ວເຊັດ ຖ້າເປັນພື້ນບໍ່ໄດ້ທາຄວນໃຊ້ນ້ຳປະພົມເຊັດ ຢ່າໃຫ້ວິຫາຣຄອງຄາດ້ວຍຝຸ່ນລະອອງ ຄວນຄັດກາກເຫຍື້ອໄປຖິ້ມ ນະທີ່ສົມຄວຣ ພົມປູພື້ນ ຄວນຜຶ່ງ ແດດ ຊໍາຣະ ຕົບ ຂົນກັບປູໄວ້ຕາມເດີມ ຂຽງຮອງຕຽງ

ຄວນເຊັດໃຫ້ແຫ້ງ ຄວນຜຶ່ງແດດ ເຊັດ ຂົນກັບວາງໄວ້ຕາມເດີມ ຕຽງ ຕັ່ງ ຄວນ ຜຶ່ງແດດ ຊຳຣະ ປັດ ຍົກຢ່າງ ຣະມັດຣະວັງ ບໍ່ໃຫ້ຂູດ ບໍ່ໃຫ້ຕຳບານປະຕູແລະຂອບປະຕູ ຂົນກັບຕັ້ງໄວ້ຕາມເດີມ ເສື່ອ ໝອນ ຜ້າປູນັ່ງ ຜ້າປູນອນ ຄວນຜຶ່ງແດດ ຊຳຣະ ຕບ ຂນກັບວາງປູໄວ້ຕາມເດີມ ກະໂຖນ ພນັກພິງ ຄວນຜຶ່ງແດດ ເຊັດຖູ ຂນກັບວາງໄວ້ຕາມເດີມ

ຄວນເກັບບາຕຣແລະຈີວອນ ເມື່ອຈະເກັບບາຕຣ ຄວນໃຊ້ມືຂ້າງນຶ່ງຖືບາຕຣ ໃຊ້ມືຂ້າງນຶ່ງ ຄຳໃຕ້ຕຽງຫລືໃຕ້ຕັ່ງ ຈຶ່ງເກັບບາຕຣ ບໍ່ຄວນເກັບບາຕຣໄວ້ບົນພື້ນທີ່ບໍ່ມີສິ່ງໃດຮອງ ເມື່ອຈະເກັບຈີວອນ ຄວນໃຊ້ມືຂ້າງນຶ່ງຖືຈີວອນ ໃຊ້ມືຂ້າງນຶ່ງລູບຣາວຈີວອນຫລືສາຍຣະດຽງ ເອົາຊາຍໄວ້ນອກເອົາຂົດອ້ອມໄວ້ໃນ ຈຶ່ງເກັບຈີວອນ ຖ້າລົມເຈືອຝຸ່ນລະອອງພັດມາທາງທິສຕາເວັນອອກ ຄວນປິດປ່ອງຢ້ຽມດ້ານຕາເວັນອອກ ຖ້າພັດມາທາງທິສຕາເວັນຕົກ ຄວນປິດປ່ອງຢ້ຽມດ້ານຕາເວັນຕົກ ຖ້າພັດມາທາງທິສເໜືອ ຄວນປິດປ່ອງຢ້ຽມດ້ານເໜືອ ຖ້າພັດມາທາງທິສໃຕ້ ຄວນປິດປ່ອງຢ້ຽມດ້ານໃຕ້ ຖ້າເປັນຣະດູໜາວ ຄວນເປີດປ່ອງຢ້ຽມກາງເວັນ ປິດກາງຄືນ ຖ້າເປັນຣະດູຮ້ອນ ຄວນ ປິດປ່ອງຢ້ຽມກາງເວັນ ເປີດກາງຄືນ ຖ້າບໍຣິເວນະ ຊຸ້ມ ໂຮງສັນ ໂຮງໄຟ ວັຈກຸຕິ ຣົກ ຄວນປັດ ກວາດ ຖ້ານ້ຳສັນນ້ຳໃຊ້ບໍ່ມີ ຄວນຈັດຕຽມໄວ້ ຖ້າໝໍ້ຊຳຣະບໍ່ມີນ້ຳ ຄວນຕັກນ້ຳໃສ່ໝໍ້ຊຳຣະ ຖ້າອາຈາຣຍ໌ເກີດຄວາມບໍ່ຍິນດີ ອັນເຕວາສິກຄວນຊ່ວຍຣະງັບ ຫລືຄວນບອກພິກສຸອື່ນໃຫ້ຊ່ວຍ ຣະງັບ ຫລືຄວນສະແດງທັມມິກຖາແກ່ອາຈາຣຍ໌ ຖ້າອາຈາຣຍ໌ເກີດຄວາມຣຳຄານ ອັນເຕວາສິກຄວນຊ່ວຍບັນເທົາ ຫລືຄວນບອກພິກສຸອື່ນໃຫ້ຊ່ວຍບັນເທົາ ຫລືຄວນສະແດງທັມມິກຖາແກ່ອາຈາຣຍ໌ ຖ້າອາຈາຣຍ໌ເກີດຄວາມເຫັນຜິດ ອັນເຕວາສິກຄວນໃຫ້ສລະເສັຽ ຫລືຄວນບອກພິກສຸອື່ນໃຫ້ຊ່ວຍໃຫ້ສລະເສັຽ ຫລືຄວນສະແດງທັມມິກຖາແກ່ອາຈາຣຍ໌ ຖ້າອາຈາຣຍ໌ຕ້ອງອາບັຕິໜັກ ຄວຣແກ່ປຣິວາສ ອັນເຕວາສິກຄວນທຳການຂົນຂວາຍ ວ່າ "ດ້ວຍອຸບາຍຢ່າງໃດໜໍ ສົງຂ໌ຄວນໃຫ້ປຣິວາສແກ່ອາຈາຣຍ໌" ຖ້າອາຈາຣຍ໌ຄວຣແກ່ການຊັກເຂົ້າຫາອາບັຕິເດີມ ອັນເຕວາສິກຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດໜໍ ສົງຂ໌ຄວນຊັກອາຈາຣຍ໌ເຂົ້າຫາອາບັຕິເດີມ" ຖ້າອາຈາຣຍ໌ຄວຣແກ່ມານັຕ ອັນເຕວາສິກຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດໜໍ ສົງຂ໌ຄວນໃຫ້ມານັຕແກ່ອາຈາຣຍ໌" ຖ້າອາຈາຣຍ໌ຄວຣແກ່ອັພພານ ອັນເຕວາສິກຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດໜໍ ສົງຂ໌ຄວນອັພພານອາຈາຣຍ໌" ຖ້າສົງຂ໌ຕ້ອງການຈະເຮັດກັມ ຄື ຕັຊຊນີຍກັມ ນິຍສກັມ ປັພພາຊນີຍກັມ ປຕິສາຣນີຍກັມ ຫລືອຸກເຂປນີຍກັມແກ່ອາຈາຣຍ໌ ອັນເຕວາສິກຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດໜໍ ສົງຂ໌ບໍ່ຄວນທຳກັມແກ່ອາຈາຣຍ໌ ຫລືຄວນປ່ຽນໄປເປັນໂທສເບົາ" ຫລືວ່າອາຈາຣຍ໌ ໄດ້ຖືກສົງຂ໌ລົງຕັຊຊນີຍກັມ ນິຍສກັມ ປັພພາຊນີຍກັມ ປຕິສາຣນີຍກັມ ຫລືອຸກ

ເຂປນີຍກັມແລ້ວ ອັນເຕວາສິກຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ອາຈາຣຍ໌ຄວນກັບປະພຶດຊອບ ຄວນເຊົາຈອງຫອງ ຄວນກັບຕົວໄດ້ ສົງຂ໌ຄວນຣະງັບກັມນັ້ນເສັຽ"
ຖ້າຈີວອນຂອງອາຈາຣຍ໌ຈະຕ້ອງຊັກ ອັນເຕວາສິກຄວນຊັກ ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຊັກຈີວອນຂອງອາຈາຣຍ໌"
ຖ້າຈີວອນຂອງອາຈາຣຍ໌ຈະຕ້ອງຕັດຍິບ ອັນເຕວາສິກຄວນຕັດຍິບ ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຕັດຍິບຈີວອນຂອງອາຈາຣຍ໌"
ຖ້ານ້ຳຍ້ອມຂອງອາຈາຣຍ໌ຈະຕ້ອງຕົ້ມ ອັນເຕວາສິກຄວນຕົ້ມ ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຕົ້ມນ້ຳຍ້ອມຂອງອາຈາຣຍ໌"
ຖ້າຈີວອນຂອງອາຈາຣຍ໌ຈະຕ້ອງຍ້ອມ ອັນເຕວາສິກຄວນຍ້ອມ ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຍ້ອມຈີວອນຂອງອາຈາຣຍ໌" ເມື່ອຈະຍ້ອມຈີວອນ ຄວນຍ້ອມພິກກັບໄປກັບມາດີໆເມື່ອຫຍາດນ້ຳຍ້ອມຍັງຢືດບໍ່ຂາດສາຍ ບໍ່ຄວນຫລີກໄປ ອັນເຕວາສິກບໍ່ບອກອາຈາຣຍ໌ ບໍ່ຄວນໃຫ້ບາຕຣແກ່ພິກສຸບາງຮູບ ບໍ່ຄວນຮັບບາຕຣຂອງພິກສຸບາງຮູບ ບໍ່ຄວນໃຫ້ຈີວອນແກ່ພິກສຸບາງຮູບ ບໍ່ຄວນຮັບຈີວອນຂອງພິກສຸບາງຮູບ ບໍ່ຄວນໃຫ້ບໍຣິຂາຣແກ່ພິກສຸບາງຮູບ ບໍ່ຄວນຮັບບໍຣິຂາຣຂອງພິກສຸບາງຮູບ ບໍ່ຄວນໂກນຜົມໃຫ້ພິກສຸບາງຮູບ ບໍ່ຄວນໃຫ້ພິກສຸບາງຮູບ ໂກນຜົມໃຫ້ ບໍ່ຄວນທຳບຣິກັມແກ່ພິກສຸບາງຮູບ ບໍ່ຄວນໃຫ້ພິກສຸ ບາງຮູບທຳບຣິກັມໃຫ້ ບໍ່ຄວນທຳການຂົນຂວາຍແກ່ພິກສຸບາງຮູບ ບໍ່ຄວນສັ່ງພິກສຸບາງຮູບໃຫ້ທຳການຂົນຂວາຍ ບໍ່ຄວນເປັນປັຈສາສະມະນະຂອງພິກສຸບາງຮູບ ບໍ່ຄວນພາພິກສຸບາງຮູບໄປເປັນປັຈສາສະມະນະ ບໍ່ຄວນນຳບິນທບາຕໄປຖວາຍພິກສຸບາງຮູບ ບໍ່ຄວນສັ່ງພິກສຸບາງຮູບໃຫ້ນຳບິນທບາຕໄປຖວາຍ ອັນເຕວາສິກບໍ່ບອກລາອາຈາຣຍ໌ ບໍ່ຄວນເຂົ້າຫມູ່ບ້ານ ບໍ່ຄວນໄປປ່າຊ້າ ບໍ່ຄວນອອກໄປຕ່າງຖິ່ນ ຖ້າອາຈາຣຍ໌ເປັນໄຂ້ ຄວນພຍາບາລຈົນຕລອດຊີວິຕ ຄວນຖ້າຈົນກວ່າອາຈາຣຍ໌ນັ້ນຈະຫາຍ

ອາຈຣິຍວັຕຕກຖາ ຈົບ

໑໙. ອັນເຕວາສິກວັຕຕກຖາ໑

ວ່າດ້ວຍອັນເຕວາສິກວັຕຣ

[໗໙] ພິກສຸທັງຫລາຍ ອາຈາຣຍ໌ຄວນປະພຶດຊອບໃນອັນເຕວາສິກ ວິທີປະພຶດຊອບໃນອັນເຕວາສິກນັ້ນ ມີດັ່ງນີ້ ພິກສຸທັງຫລາຍ ອາຈາຣຍ໌ຄວນສົງເຄາະອນຸເຄາະອັນເຕວາສິກ ດ້ວຍອຸທເທສປຣິປຸຈສາ

ໂອວາທ ແລະອນຸສາສນ໌
ຖ້າອາຈາຣຍ໌ມີບາຕຣ ອັນເຕວາສິກບໍ່ມີບາຕຣ ອາຈາຣຍ໌ຄວນຖວາຍບາຕຣແກ່ອັນເຕວາສິກ ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ບາຕຣຄວນເກີດຂຶ້ນແກ່ອັນເຕວາສິກ" ຖ້າອາຈາຣຍ໌ມີຈີວອນ ອັນເຕວາສິກບໍ່ມີຈີວອນ ອາຈາຣຍ໌ຄວນຖວາຍຈີວອນແກ່ອັນເຕວາສິກ ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ຈີວອນຄວນເກີດຂຶ້ນແກ່ອັນເຕວາສິກ" ຖ້າອາຈາຣຍ໌ມີບໍຣິຂາຣ ອັນເຕວາສິກບໍ່ມີບໍຣິຂາຣ ອາຈາຣຍ໌ຄວນຖວາຍບໍຣິຂາຣແກ່ອັນເຕວາສິກ ຫລືຄວນທຳການຂົນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ບໍຣິຂາຣຄວນເກີດຂຶ້ນແກ່ອັນເຕວາສິກ"

ໝາຍເຫດ :
໑ ວິ. ຈູ. ໗/໓໗໑-໓໗໔/໑໗໙-໑໘໓

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໑໙. ອັນເຕວາສິກວັຕຕກຖາ

ຖ້າອັນເຕວາສິກເປັນໄຂ້ ອາຈາຣຍ໌ຄວນລຸກຂຶ້ນແຕ່ເຊົ້າຕຣູ່ ຖວາຍໄມ້ຊຳຣະແຂ້ວ ນ້ຳລ້າງຫນ້າ ປູອາສນະ ຖ້າເຂົ້າປຽກມີ ຄວນລ້າງພາຊນະໃສ່ເຂົ້າປຽກເຂົ້າໄປຖວາຍ ເມື່ອອັນເຕວາສິກສັນເຂົ້າປຽກເສັດແລ້ວ ຄວນຖວາຍນ້ຳ ຮັບພາຊນະມາຖືຢ່າງຣະມັດຣະວັງ ບໍ່ໃຫ້ຊູດ ລ້າງແລ້ວເກັບງຳໄວ້ ເມື່ອອັນເຕວາ ສິກ ລຸກຂຶ້ນແລ້ວ ຄວນຍົກອາສນະເກັບ ຖ້າທີ່ນັ້ນຮົກ ຄວນກວາດ ຖ້າອັນເຕວາສິກຕ້ອງການຈະເຂົ້າຫມູ່ບ້ານ ຄວນຖວາຍຜ້ານຸ່ງ ຮັບຜ້ານຸ່ງອາສັຍ ຖວາຍປຣະຄົດ ແອວ ຖວາຍສັງຂາຕິທີ່ພັບຊ້ອນກັນ ລ້າງບາຕຣແລ້ວຖວາຍພ້ອມທັງນ້ຳ ປູອາສນະໄວ້ ໂດຍກຳຫນົດວ່າ "ເວລາພຽງເທົ່ານີ້ອັນເຕວາສິກຈັກກັບມາ" ຄວນຕຽມນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນໄວ້ ຄວນລຸກຂຶ້ນ ຮັບບາຕຣແລະຈີວອນ ຄວນຖວາຍຜ້ານຸ່ງອາສັຍ ຮັບຜ້ານຸ່ງມາ ຖ້າຈີວອນຊຸ່ມເຫື່ອ ຄວນຜຶ່ງແດດ ບຶດນຶ່ງບໍ່ຄວນຜຶ່ງຖິ້ມໄວ້ທີ່ແດດ ຄວນພັບຈີວອນ ເມື່ອຈະພັບຈີວອນ ຄວນພັບຈີ ວອນ ໃຫ້ເຫລື່ອມມຸມກັນ ໔ ນິ້ວ ຕັ້ງໃຈວ່າ ທາງກາງຈະໄດ້ບໍ່ມີຮອຍພັບ ຄວນມ້ວນປຣະຄົດ ແອວ ໃສ່ຂນົດຈີວອນ ຖ້າບິນທບາຕມີ ແລະອັນເຕວາສິກຕ້ອງການຈະສັນ ຄວນຖວາຍນ້ຳແລ້ວນຳ ບິນທບາຕເຂົ້າໄປຖວາຍ ນຳນ້ຳສັນມາຖວາຍ ເມື່ອອັນເຕວາສິກສັນເສັດແລ້ວ ຄວນຖວາຍນ້ຳຮັບ ບາຕຣມາ ຖືຢ່າງຣະມັດຣະວັງ ບໍ່ໃຫ້ຊູດ ລ້າງແລ້ວເຊັດໃຫ້ສະເດັດນ້ຳຜຶ່ງແດດຄູ່ນຶ່ງ ບໍ່ຄວນຜຶ່ງຖິ້ມໄວ້ທີ່ແດດ ຄວນເກັບບາຕຣ ແລະຈີວອນ ເມື່ອຈະເກັບບາຕຣ ຄວນໃຊ້ມືຂ້າງນຶ່ງຖືບາຕຣ ໃຊ້ມືຂ້າງນຶ່ງຄຳໃຕ້ຕຽງຫລືໃຕ້ຕັ່ງ ຈຶ່ງເກັບ

ບາຕຣ ບໍ່ຄວນເກັບບາຕຣໄວ້ບົນພື້ນທີ່ບໍ່ມີສິ່ງໃດຮອງ ເມື່ອຈະເກັບຈີວອນ ຄວນໃຊ້ມື ຂ້າງນຶ່ງຖືຈີວອນ ໃຊ້ມືຂ້າງນຶ່ງລູບຮາວຈີວອນຫລືສາຍຣະດຽງ ເອົາຊາຍໄວ້ນອກ ເອົາຂົດໄວ້ໃນຈຶ່ງເກັບຈີວອນ ເມື່ອອັນເຕວາສິກລຸກຂຶ້ນແລ້ວ ຄວນຍົກອາສນະເກັບ ຄວນເກັບນໍ້າລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນ ຖ້າທີ່ນັ້ນຮົກ ຄວນກວາດ ຖ້າອັນເຕວາສິກຕ້ອງກາຣຈະສົງນໍ້າ ຄວນຈັດນໍ້າສຣົງຖວາຍ ຖ້າທ່ານຕ້ອງກາຣນໍ້າເຢັນ ຄວນຈັດນໍ້າເຢັນຖວາຍ ຖ້າທ່ານຕ້ອງກາຣນໍ້າອຸ່ນ ຄວນຈັດນໍ້າອຸ່ນຖວາຍ ຖ້າອັນເຕວາສິກຕ້ອງກາຣຈະເຂົ້າເຮືອນໄຟ ຄວນບົດ ຈຸຣນະ ຄວນແຊ່ດິນ ຖືຕັ່ງສຳລັບເຮືອນໄຟຍ່າງໄປຖວາຍຕັ່ງສຳລັບເຮືອນໄຟ ແລ້ວຮັບຈີວອນມາວາງ ນະທີ່ສົມຄວຣ ຄວນຖວາຍຈຸຣນະແລະດິນ ຖ້າສາມາດ ຄວນເຂົ້າເຮືອນໄຟ ເມື່ອຈະເຂົ້າເຮືອນໄຟ ຄວນເອົາດິນ ທາຫນ້າປິດຫນ້າແລະຫລັງ ຈຶ່ງເຂົ້າເຮືອນໄຟ ບໍ່ຄວນນັ່ງບຽດພຣະເຖຣະ ບໍ່ຄວນກີດກັນອາສນະພຣະນວກະ

ຄວນທຳບຣິກັມແກ່ອັນເຕວາສິກໃນເຮືອນໄຟ ເມື່ອຈະອອກຈາກເຮືອນໄຟ ຄວນຖືຕັ່ງ ສຳລັບເຮືອນໄຟປິດຫນ້າແລະຫລັງ ຈຶ່ງອອກຈາກເຮືອນໄຟ ຄວນທຳ ບໍຣິກັມ ແກ່ອັນເຕວາສິກ ແມ່ນໃນນໍ້າ ຕົນສົງເສັດແລ້ວ ຄວນຂຶ້ນກ່ອນເຊັດຕົວໃຫ້ແຫ້ງ ແລ້ວຜັດປ່ຽນຜ້າ

ຄວນເຊັດນໍ້າຈາກຕົວອັນເຕວາສິກ ຖວາຍຜ້ານຸ່ງ ສັງຂາຕິ ຖືຕັ່ງສຳລັບເຮືອນໄຟມາກ່ອນ ປູອາສນະ ຕຽມນໍ້າລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນໄວ້ ນຳນໍ້າສັນມາຖວາຍອັນເຕວາສິກ

ອັນເຕວາສິກຢູ່ໃນວິຫາຣໃດ ຖ້າວິຫາຣນັ້ນສົກປົກ ຖ້າສາມາດ ຄວນຊຳຣະໃຫ້ສະອາດ ເມື່ອຈະຊຳຣະວິຫາຣໃຫ້ສະອາດ ຄວນຂນບາຕຣແລະຈີວອນອອກກ່ອນ ວາງໄວ້ ນະທີ່ສົມຄວຣ ຄວນ ຂົນຜ້າປູນັ່ງຜ້າປູນອນ ເສື່ອ ຫມອນ ອອກມາວາງໄວ້ ນະທີ່ສົມຄວຣ ຕຽງ ຕັ່ງ ອາຈາຣຍ໌ຄວນຍົກ ຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ບໍ່ໃຫ້ຕຳບານປະຕູແລະຂອບປະຕູ ຂົນອອກໄປຕັ້ງໄວ້ ນະທີ່ສົມ ຄວຣ ຂຽງຮອງຕຽງ ກະໂທນ ພນັກພິງ ຄວນຂົນອອກມາວາງໄວ້ ນະທີ່ສົມຄວຣ ພົມປູພື້ນ

ຄວນສັງເກຕທີ່ປູໄວ້ເດີມ ຄ່ອຍຂົນອອກມາວາງໄວ້ ນະທີ່ສົມຄວຣ ຖ້າໃນວິຫາຣມີກາກເຫຍື່ອ

ຄວນກວາດເພດານລົງມາກ່ອນ ຂອບປ່ອງຢ້ຽມແລະມຸມຫ້ອງ ຄວນເຊັດ ຖ້າຝາທີ່ທານໍ້າມັນຫລືພື້ນທາສີດຳຂຶ້ນຣາ ຄວນໃຊ້ຜ້າຊຸບນໍ້າບິດແລ້ວເຊັດ ຖ້າເປັນພື້ນບໍ່ໄດ້ທາ ຄວນໃຊ້ນໍ້າປະພົມເຊັດ ຢ່າໃຫ້ວິຫາຣຄອງຄາດ້ວຍຝຸ່ນລະອອງ ຄວນເກັບກາກເຫຍື່ອໄປຖິ້ມ ນະທີ່ສົມຄວຣ ພົມປູພື້ນ ຄວນຜຶ່ງແດດຊຳຣະ ຕົບ ຂົນກັບປູໄວ້ຕາມເດີມ ຂຽງຮອງຕຽງ ຄວນຜຶ່ງແດດ ເຊັດ ຂົນກັບວາງໄວ້ຕາມເດີມ ຕຽງຕັ່ງ ຄວນຜຶ່ງແດດ ຊຳຣະ ປັດ ຍົກຢ່າງຣະມັດຣະວັງ ບໍ່ໃຫ້ຂູດ ບໍ່ໃຫ້ຕຳ

ບານປະຕູແລະຂອບປ່ອງຢ້ຽມ ຂົນກັບຕັ້ງໄວ້ຕາມເດີມ ເສື່ອ ຫມອນ ຜ້າປູນັ່ງ ຜ້າປູນອນ ຄວນ ຜຶ່ງແດດ ຊຳຣະ ຕົບ ຂົນກັບວາງປູໄວ້ຕາມເດີມ ກະໂທນ ພນັກພິງ ຄວນຜຶ່ງແດດ ເຊັດຖູ ຂົນກັບວາງ

ໄວ້ຕາມເດີມ ຄວນເກັບບາຕຣແລະຈີວອນ ເມື່ອຈະເກັບບາຕຣ ຄວນໃຊ້ມືຂ້າງນຶ່ງຖືບາຕຣ ໃຊ້ມືຂ້າງນຶ່ງຄຳໃຕ້ຕຽງຫລືໃຕ້ຕັ່ງ ຈຶ່ງເກັບບາຕຣ ບໍ່ຄວນເກັບບາຕຣໄວ້ບົນພື້ນທີ່ບໍ່ມີສິ່ງໃດຮອງ ເມື່ອຈະເກັບຈີວອນ ຄວນໃຊ້ມືຂ້າງນຶ່ງຖືຈີວອນ ໃຊ້ມືຂ້າງນຶ່ງລູບຮາວຈີວອນຫລືສາຍຣະດຽງ ເອົາຊາຍໄວ້ນອກ ເອົາຂົດອ້ອມໄວ້ໃນ ຈຶ່ງເກັບຈີວອນ ຖ້າລົມເຈືອຝຸ່ນລະອອງພັດມາທາງທິສຕາເວັນອອກ ຄວນປິດປ່ອງຢ້ຽມດ້ານຕາເວັນອອກ ຖ້າພັດມາທາງທິສຕາເວັນຕົກ ຄວນປິດປ່ອງຢ້ຽມ ດ້ານຕາເວັນຕົກ ຖ້າພັດມາທາງທິສເຫນືອ ຄວນປິດປ່ອງຢ້ຽມດ້ານເຫນືອ ຖ້າພັດມາທາງທິສໃຕ້ ຄວນປິດປ່ອງຢ້ຽມດ້ານໃຕ້ ຖ້າເປັນຣະດູຫນາວ ຄວນເປີດປ່ອງຢ້ຽມກາງເວັນ ປິດກາງຄືນ ຖ້າເປັນຣະດູຮ້ອນ ຄວນປິດປ່ອງຢ້ຽມກາງເວັນ ເປີດກາງຄືນ ຖ້າບໍຣິເວນະ ຊຸ້ມ ໂຮງສັນ ໂຮງໄຟ ວັຈກຸຕີຣກ ຄວນປັດກວາດ ຖ້ານ້ຳສັນນ້ຳໃຊ້ບໍ່ມີ ຄວນຈັດຕຽມໄວ້ ຖ້າຫມໍ້ຊຳຣະບໍ່ມີນ້ຳ ຄວນຕັກນ້ຳໃສ່ ຫມໍ້ຊຳຣະ ຖ້າອັນເຕວາສິກເກີດຄວາມບໍ່ຍິນດີ ອາຈາຣຍ໌ຄວນຊ່ວຍຣະງັບ ຫລືຄວນບອກພິກສຸອື່ນໃຫ້ຊ່ວຍຣະງັບ ຫລືຄວນສະແດງທັມມກຖາແກ່ອັນເຕວາສິກ ຖ້າອັນເຕວາສິກເກີດຄວາມຣຳຄານ ອາຈາຣຍ໌ຄວນຊ່ວຍບັນເທົາ ຫລືຄວນບອກພິກສຸອື່ນໃຫ້ຊ່ວຍບັນເທົາ ຫລືຄວນສະແດງທັມມກຖາແກ່ອັນເຕວາສິກ ຖ້າອັນເຕວາສິກເກີດຄວາມເຫັນຜິດ ອາຈາຣຍ໌ຄວນໃຫ້ສລະເສັຽ ຫລືຄວນບອກພິກສຸອື່ນໃຫ້ຊ່ວຍສລະເສັຽ ຫລືຄວນສະແດງທັມມກຖາແກ່ອັນເຕວາສິກ ຖ້າອັນເຕວາສິກຕ້ອງອາບັຕິຫນັກ ຄວຣແກ່ປຣິວາສ ອາຈາຣຍ໌ຄວນທຳການຂົນຂວາຍວ່າ “ດ້ວຍອຸບາຍຢ່າງໃດຫນໍ ສົງຂ໌ຄວນໃຫ້ປຣິວາສແກ່ອັນເຕວາສິກ” ຖ້າອັນເຕວາສິກຄວຣແກ່ການຊັກເຂົ້າຫາອາບັຕິເດີມ ອາຈາຣຍ໌ຄວນທຳການຂົນຂວາຍວ່າ “ດ້ວຍອຸບາຍຢ່າງໃດຫນໍ ສົງຂ໌ຄວນຊັກອັນເຕວາສິກເຂົ້າຫາອາບັຕິເດີມ”
ຖ້າອັນເຕວາສິກຄວຣແກ່ມານັຕ ອາຈາຣຍ໌ຄວນທຳການຂົນຂວາຍວ່າ “ດ້ວຍອຸບາຍຢ່າງໃດຫນໍ ສົງຂ໌ຄວນໃຫ້ມານັຕແກ່ອັນເຕວາສິກ” ຖ້າອັນເຕວາສິກຄວຣແກ່ອັພພານ ອາຈາຣຍ໌ຄວນທຳການຂົນຂວາຍວ່າ “ດ້ວຍອຸບາຍຢ່າງໃດຫນໍ ສົງຂ໌ຄວນອັພພານອັນເຕວາສິກ” ຖ້າສົງຂ໌ຕ້ອງການຈະເຮັດກັມ ຄືຕັຊຊນີຍກັມ ນິຍສກັມ ປັພພາຊນີຍກັມປຕິສາຣນີຍກັມ ຫລືອຸກເຂປນີຍກັມແກ່ອັນເຕວາສິກ ອາຈາຣຍ໌ຄວນທຳການຂົນຂວາຍວ່າ “ດ້ວຍອຸບາຍຢ່າງໃດຫນໍ ສົງຂ໌ບໍ່ຄວນທຳກັມແກ່ອັນເຕວາສິກຫລືຄວນປ່ຽນໄປເປັນໂທສເບົາ” ຫລືວ່າອັນເຕວາສິກຖືກສົງຂ໌ລົງຕັຊຊນີຍກັມ ນິຍສກັມ ປັພພາຊນີຍກັມ ປຕິສາຣນີຍກັມ ຫລືອຸເຂປນີຍກັມແລ້ວ ອາຈາຣຍ໌ຄວນທຳການຂົນຂວາຍວ່າ “ດ້ວຍອຸບາຍຢ່າງໃດຫນໍ ອັນເຕວາສິກຄວນກັບປະພຶດຊອບ ຄວນເຊົາຈອງຫອງ ຄວນກັບຕົວໄດ້ ສົງຂ໌ຄວນຣະງັບກັມນັ້ນເສັຽ” ຖ້າຈີວອນຂອງອັນເຕວາສິກຈະຕ້ອງຊັກ ອາຈາຣຍ໌ຄວນບອກວ່າ “ຄວນຊັກຢ່າງນີ້” ຫລືຄວນທຳການຂົນຂວາຍວ່າ “ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຊັກຈີວອນຂອງ

ອັນເຕວາສິກ" ຖ້າຈີວອນຂອງອັນເຕວາສິກ ຈະຕ້ອງຕັດຍິບ ອາຈາຣຍ໌ຄວນບອກວ່າ "ຄວນຕັດຍິບຢ່າງນີ້" ຫລືຄວນທຳການຂວນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຕັດຍິບຈີວອນຂອງອັນເຕວາສິກ" ຖ້ານ້ຳຍ້ອມຂອງອັນເຕວາສິກຈະຕ້ອງຕົ້ມ ອາຈາຣຍ໌ຄວນບອກວ່າ "ຄວນຕົ້ມຢ່າງນີ້" ຫລື ຄວນທຳ ການຂວນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຕົ້ມນ້ຳຍ້ອມຂອງອັນເຕວາສິກ" ຖ້າຈີວອນຂອງອັນເຕວາສິກຈະຕ້ອງຍ້ອມ ອາຈາຣຍ໌ຄວນບອກວ່າ "ຄວນຍ້ອມຢ່າງນີ້" ຫລືຄວນທຳການຂວນຂວາຍວ່າ "ດ້ວຍອຸບາຍຢ່າງໃດຫນໍ ໃຜໆຄວນຍ້ອມຈີວອນຂອງອັນເຕວາສິກ" ເມື່ອຈະຍ້ອມຈີວອນ ຄວນຍ້ອມພິກກັບໄປກັບມາດີໆເມື່ອຫຍາດນ້ຳຍ້ອມຍັງຢູ່ດບໍ່ຂາດສາຍ ບໍ່ຄວນຫລີກໄປ ຖ້າອັນເຕວາສິກເປັນໄຂ້ ຄວນພຍາບາລຈົນຕລອດຊີວິດ ຄວນຖ້າຈົນກວ່າອັນເຕວາສິກນັ້ນຈະຫາຍ

ອັນເຕວາສິກວັຕຕກຖາ ຈົບ

ພານອາຣທີ ຝ ຈົບ

ພຣະວິນັຍປີດົກ ມຫາວັຄ [໑. ມຫາຂັນທກະ] ໒໐. ປຢ່າມນາຂມາປນາ

໒໐. ປນາມນາຂມາປນາ

ວ່າດ້ວຍການປະນາມແລະການຂໍຂມາ

ເຣື້ອງອັນເຕວາສິກບໍ່ປະພຶດຊອບ

[໗໐] ສມັຍນັ້ນ ພວກອັນເຕວາສິກບໍ່ປະພຶດຊອບໃນອາຈາຣຍ໌ທັງຫລາຍ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກພຸດທະເຈົ້າຊົງຕຳຫນິວ່າ "ຯລຯ ພິກສຸທັງຫລາຍ ອັນເຕວາສິກຈະບໍ່ປະພຶດຊອບໃນອາຈາຣຍ໌ບໍ່ໄດ້ ຮູບໃດບໍ່ປະພຶດຊອບ ຕ້ອງອາບັຕິທຸກກະຕະ"

ເຣື້ອງຊົງອນຸຍາຕໃຫ້ປະນາມ

ອັນເຕວາສິກທັງຫລາຍກໍຍັງບໍ່ປະພຶດຊອບຢູ່ເຊັ່ນເດີມ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ ໄປຂາບທູລພຣະ

ຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ປະນາມອັນເຕວາສິກຜູ້ບໍ່ປະພຶດຊອບ"

ວິທີປະນາມ

ພິກສຸທັງຫລາຍ ກໍອາຈາຣຍ໌ຄວນປະນາມອັນເຕວາສິກຢ່າງນີ້ວ່າ "ສັນປະນາມທ່ານ" ຫລື "ທ່ານຢ່າເຂົ້າມາທີ່ນີ້" "ທ່ານ ຈົ່ງຂົນບາຕຣແລະຈີວອນຂອງທ່ານໄປ" ຫລື "ທ່ານບໍ່ຕ້ອງອຸປັຕຖາກສັນ" ອາຈາຣຍ໌ໃຫ້ອັນເຕວາສິກຮູ້ດ້ວຍກາຍ ໃຫ້ຮູ້ດ້ວຍວາຈາ ຫລືໃຫ້ຮູ້ດ້ວຍກາຍແລະວາຈາເປັນອັນໄດ້ປະນາມອັນເຕວາສິກແລ້ວ ອາຈາຣຍ໌ບໍ່ໃຫ້ອັນເຕວາສິກຮູ້ດ້ວຍກາຍ ບໍ່ໃຫ້ຮູ້ດ້ວຍວາຈາ ຫລືບໍ່ໃຫ້ຮູ້ດ້ວຍກາຍແລະວາຈາ ເປັນອັນຍັງບໍ່ໄດ້ປະນາມອັນເຕວາສິກ"

ອັນເຕວາສິກບໍ່ຂໍຂມາ

ສະໄຫມນັ້ນ ອັນເຕວາສິກທັງຫລາຍຖືກປະນາມແລ້ວ ກໍຍັງບໍ່ຍອມຂໍຂມາອາຈາຣຍ໌ ພິກສຸທັງຫລາຍຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ອັນເຕວາສິກຂໍຂມາອາຈາຣຍ໌" ອັນເຕວາສິກທັງຫລາຍກໍຍັງບໍ່ຍອມຂໍຂມາອາຈາຣຍ໌ຢູ່ເຊັ່ນເດີມ ພິກສຸທັງຫລາຍຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ອັນເຕວາສິກຖືກປະນາມແລ້ວ ຈະບໍ່ຂໍຂມາອາຈາຣຍ໌ບໍ່ໄດ້ ຮູບໃດບໍ່ຂໍຂມາ ຕ້ອງອາບັຕິທຸກກະຕະ"

ອາຈາຣຍ໌ບໍ່ຮັບການຂໍຂມາ

ສະໄຫມນັ້ນ ອາຈາຣຍ໌ທັງຫລາຍຖືກອັນເຕວາສິກຂໍຂມາ ກໍຍັງບໍ່ຍອມໃຫ້ຂມາ ພິກສຸທັງຫລາຍຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ອາຈາຣຍ໌ຮັບການຂໍຂມາ" ອາຈາຣຍ໌ທັງຫລາຍກໍຍັງບໍ່ຍອມໃຫ້ຂມາຢູ່ເຊັ່ນເດີມ ພວກອັນເຕວາສິກພາກັນຫລີກໄປເສັຽແດ່ ສຶກເສັຽແດ່ ໄປເຂົ້າຮີດເດັຽຣະຖີຍ໌ເສັຽແດ່ ພິກສຸທັງຫລາຍຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ອາຈາຣຍ໌ຜູ້ທີ່ອັນເຕວາສິກຂໍຂມາຈະບໍ່ຮັບການຂໍຂມາບໍ່ໄດ້ ຮູບໃດບໍ່ຮັບການຂໍຂມາ ຕ້ອງອາບັຕິທຸກກະຕະ"

ຊົງປັບທຸກກະຕະເມື່ອປະນາມບໍ່ຖືກຕ້ອງ

ສະໄຫມນັ້ນ ອາຈາຣຍ໌ທັງຫລາຍປະນາມອັນເຕວາສິກຜູ້ປະພຶດຊອບ ບໍ່ປະນາມອັນເຕວາສິກຜູ້ປະພຶດມິຊອບ

ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ອັນເຕວາສິກຜູ້ປະພຶດຊອບ ອາຈາຣຍ໌ບໍ່ຄວນປະນາມ ຮູບໃດປະນາມ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ອັນເຕວາສິກຜູ້ບໍ່ປະພຶດຊອບ ອາຈາຣຍ໌ຈະບໍ່ປະນາມບໍ່ໄດ້ ຮູບໃດບໍ່ປະນາມ ຕ້ອງອາບັຕິທຸກກະຕະ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທະກະ] ໔໐. ປຢາມນາຂມາປນາ

ອົງຄ໌ແຫ່ງການປະນາມ

[໗໑] ພິກສຸທັງຫລາຍ ອາຈາຣຍ໌ຄວນປະນາມອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ຄື
໑. ບໍ່ມີຄວາມຮັກຢ່າງຍິ່ງໃນອາຈາຣຍ໌
໒. ບໍ່ມີຄວາມເຫລື້ອມໃສຢ່າງຍິ່ງໃນອາຈາຣຍ໌
໓. ບໍ່ມີຄວາມລະອາຍຢ່າງຍິ່ງໃນອາຈາຣຍ໌
໔. ບໍ່ມີຄວາມເຄົາຣົພຢ່າງຍິ່ງໃນອາຈາຣຍ໌
໕. ບໍ່ມີຄວາມຫວັງດີຢ່າງຍິ່ງໃນອາຈາຣຍ໌
ພິກສຸທັງຫລາຍ ອາຈາຣຍ໌ຄວນປະນາມອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້

ພິກສຸທັງຫລາຍ ອາຈາຣຍ໌ບໍ່ຄວນປະນາມອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ຄື
໑. ມີຄວາມຮັກຢ່າງຍິ່ງໃນອາຈາຣຍ໌
໒. ມີຄວາມເຫລື້ອມໃສຢ່າງຍິ່ງໃນອາຈາຣຍ໌
໓. ມີຄວາມລະອາຍຢ່າງຍິ່ງໃນອາຈາຣຍ໌
໔. ມີຄວາມເຄົາຣົພຢ່າງຍິ່ງໃນອາຈາຣຍ໌
໕. ມີຄວາມຫວັງດີຢ່າງຍິ່ງໃນອາຈາຣຍ໌
ພິກສຸທັງຫລາຍ ອາຈາຣຍ໌ບໍ່ຄວນປະນາມອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້

ພິກສຸທັງຫລາຍ ອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ຄວຣທີ່ຈະຖືກປະນາມ ຄື
໑. ບໍ່ມີຄວາມຮັກຢ່າງຍິ່ງໃນອາຈາຣຍ໌
໒. ບໍ່ມີຄວາມເຫລື້ອມໃສຢ່າງຍິ່ງໃນອາຈາຣຍ໌
໓. ບໍ່ມີຄວາມລະອາຍຢ່າງຍິ່ງໃນອາຈາຣຍ໌

໔. ບໍ່ມີຄວາມເຄົາຣົພຢ່າງຍິ່ງໃນອາຈາຣຍ໌
໕. ບໍ່ມີຄວາມຫວັງດີຢ່າງຍິ່ງໃນອາຈາຣຍ໌
ພິກສຸທັງຫລາຍ ອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ ຄວຣທີ່ຈະຖືກປະນາມ

ພິກສຸທັງຫລາຍ ອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ບໍ່ຄວຣທີ່ຈະຖືກປະນາມ ຄື
໑. ມີຄວາມຮັກຢ່າງຍິ່ງໃນອາຈາຣຍ໌
໒. ມີຄວາມເຫລື້ອມໃສຢ່າງຍິ່ງໃນອາຈາຣຍ໌
໓. ມີຄວາມລະອາຍຢ່າງຍິ່ງໃນອາຈາຣຍ໌
໔. ມີຄວາມເຄົາຣົພຢ່າງຍິ່ງໃນອາຈາຣຍ໌
໕. ມີຄວາມຫວັງດີຢ່າງຍິ່ງໃນອາຈາຣຍ໌
ພິກສຸທັງຫລາຍ ອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ ບໍ່ຄວຣທີ່ຈະຖືກປະນາມ

ພິກສຸທັງຫລາຍ ອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ເມື່ອອາຈາຣຍ໌ບໍ່ປະນາມ ຍ່ອມມີໂທສ ເມື່ອປະນາມຍ່ອມບໍ່ມີໂທສ ຄື
໑. ບໍ່ມີຄວາມຮັກຢ່າງຍິ່ງໃນອາຈາຣຍ໌
໒. ບໍ່ມີຄວາມເຫລື້ອມໃສຢ່າງຍິ່ງໃນອາຈາຣຍ໌
໓. ບໍ່ມີຄວາມລະອາຍຢ່າງຍິ່ງໃນອາຈາຣຍ໌
໔. ບໍ່ມີຄວາມເຄົາຣົພຢ່າງຍິ່ງໃນອາຈາຣຍ໌
໕. ບໍ່ມີຄວາມຫວັງດີຢ່າງຍິ່ງໃນອາຈາຣຍ໌

ພິກສຸທັງຫລາຍ ອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ ເມື່ອອາຈາຣຍ໌ບໍ່ປະນາມ ຍ່ອມມີໂທສ ເມື່ອປະນາມຍ່ອມບໍ່ມີໂທສ

ພິກສຸທັງຫລາຍ ອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ເມື່ອອາຈາຣຍ໌ປະນາມຍ່ອມມີໂທສ ເມື່ອບໍ່ປະນາມ ຍ່ອມບໍ່ມີໂທສ ຄື
໑. ມີຄວາມຮັກຢ່າງຍິ່ງໃນອາຈາຣຍ໌
໒. ມີຄວາມເຫລື້ອມໃສຢ່າງຍິ່ງໃນອາຈາຣຍ໌
໓. ມີຄວາມລະອາຍຢ່າງຍິ່ງໃນອາຈາຣຍ໌
໔. ມີຄວາມເຄົາຣົພຢ່າງຍິ່ງໃນອາຈາຣຍ໌

໕. ມີຄວາມຫວັງດີຢ່າງຍິ່ງໃນອາຈາຣຍ໌
ພິກສຸທັງຫລາຍ ອັນເຕວາສິກຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ ເມື່ອອາຈາຣຍ໌ປະນາມ ຍ່ອມມີໂທສ ເມື່ອບໍ່ປະນາມ ຍ່ອມບໍ່ມີໂທສ

ປນາມນາຂມາປນາ ຈົບ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໑. ພາລອັພຍັຕຕວັຕຖຸ

໔໑. ພາລອັພຍັຕຕວັຕຖຸ
ວ່າດ້ວຍພິກສຸໂງ່ບໍ່ສລາດ

ເຣື້ອງອາຈາຣຍ໌ໂງ່ງ່າວ
[໗໔] ສມັຍນັ້ນ ພິກສຸທັງຫລາຍຄິດວ່າ "ເຮົາມີພັນສາຄົບ ໑໐ ເຮົາມີພັນສາ ຄົບ ໑໐" ແຕ່ເປັນຜູ້ບໍ່ສລາດ ໃຫ້ນິສສັຍ ປາກົດວ່າ ອາຈາຣຍ໌ເປັນຜູ້ໂງ່ງ່າວ ອັນເຕວາສິກເປັນບັນທິຕກໍມີ ອາຈາຣຍ໌ເປັນຜູ້ບໍ່ສລາດ ອັນເຕວາສິກເປັນຜູ້ສລາດກໍມີ ອາຈາຣຍ໌ມີສຸຕະນ້ອຍ ອັນເຕວາສິກເປັນພຫູສູຕກໍມີ ອາຈາຣຍ໌ມີປັນຍາຊາມ ອັນເຕວາສິກມີປັນຍາດີກໍມີ ບັນດາພິກສຸຜູ້ມີຄວາມມັກນ້ອຍ ຯລຯ ພາກັນຕຳຫນິປະນາມ ໂພນທະນາວ່າ "ຈັ່ງໃດ ພິກສຸທັງຫລາຍຈຶ່ງໄດ້ອ້າງວ່າ 'ເຮົາມີພັນສາຄົບ ໑໐ ເຮົາມີພັນສາຄົບ ໑໐' ແຕ່ເປັນຜູ້ໂງ່ງ່າວ ບໍ່ສລາດ ໃຫ້ນິສສັຍປາກົດວ່າ ອາຈາຣຍ໌ເປັນຜູ້ໂງ່ງ່າວ ອັນເຕວາສິກເປັນບັນທິຕກໍມີ ອາຈາຣຍ໌ເປັນຜູ້ບໍ່ສລາດ ອັນເຕວາສິກເປັນຜູ້ສລາດກໍມີ ອາຈາຣຍ໌ມີສຸຕະນ້ອຍ ອັນເຕວາສິກເປັນພຫູສູຕກໍມີ ອາຈາຣຍ໌ມີປັນຍາຊາມ ອັນເຕວາສິກມີປັນຍາດີກໍມີ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ຊົງສອບຖາມ
ພຣະຜູ້ມີພຣະພາກຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າພວກພິກສຸໄດ້ອ້າງວ່າ 'ເຮົາມີພັນສາຄົບ ໑໐ ເຮົາມີພັນສາຄົບ ໑໐' ແຕ່ເປັນຜູ້ໂງ່ງ່າວ ບໍ່ສລາດ ໃຫ້ນິສສັຍ ປາກົດວ່າ ອາຈາຣຍ໌ເປັນຜູ້ໂງ່ງ່າວ . . . ອັນເຕວາສິກມີປັນຍາດີກໍມີ ແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກພຸດທະເຈົ້າຊົງຕຳຫນິວ່າ "ຯລຯ ພິກສຸທັງຫລາຍ

ພິກສຸຜູ້ໂງ່ງ່າວ ບໍ່ສຸລາດ ບໍ່ຄວນໃຫ້ນິສສັຍ ຮູບໃດໃຫ້ ຕ້ອງອາບັດທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ສຸລາດສາມາດ ມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐ ໃຫ້ນິສສັຍໄດ້"

ພາລອັພຍັຕຕວັຕຖຸ ຈົບ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໔. ນິສສຍປຕິປັສສັທທິກຖາ

໔໔. ນິສສຍປຕິປັສສັທທິກຖາ

ວ່າດ້ວຍການຣະງັບນິສສັຍ

ເຣື່ອງນິສສັຍຣະງັບຈາກອຸປັຊຍາຍ໌ແລະອາຈາຣຍ໌

[໘໓] ສມັຍນັ້ນ ເມື່ອອຸປັຊຍາຍ໌ແລະອາຈາຣຍ໌ຫລີກໄປກໍດີ ສຶກເສັຽກໍດີ ມໍຣະນະພາພກໍດີ ໄປເຂົ້າຮີດເດັຽຣະຖີຍ໌ກໍດີ ພິກສຸທັງຫລາຍບໍ່ຮູ້ວ່ານິສສັຍຣະງັບ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ນິສສັຍຣະງັບຈາກອຸປັຊຍາຍ໌ ໕ ປະການເຫລົ່ານີ້ ຄື

໑. ອຸປັຊຍາຍ໌ຫລີກໄປ ໒. ອຸປັຊຍາຍ໌ສຶກ ໓. ອຸປັຊຍາຍ໌ມໍຣະນະພາພ ໔. ອຸປັຊຍາຍ໌ໄປເຂົ້າຮີດເດັຽຣະຖີຍ໌ ໕. ອຸປັຊຍາຍ໌ສັ່ງບັງຄັບ

ພິກສຸທັງຫລາຍ ນິສສັຍຣະງັບຈາກອຸປັຊຍາຍ໌ ໕ ປະການເຫລົ່ານີ້

ພິກສຸທັງຫລາຍ ນິສສັຍຣະງັບຈາກອາຈາຣຍ໌ ໖ ປະການເຫລົ່ານີ້ ຄື

໑. ອາຈາຣຍ໌ຫລີກໄປ ໒. ອາຈາຣຍ໌ສຶກ ໓. ອາຈາຣຍ໌ມໍຣະນະພາພ ໔. ອາຈາຣຍ໌ໄປເຂົ້າຮີດເດັຽຣະຖີຍ໌ ໕. ອາຈາຣຍ໌ສັ່ງບັງຄັບ ໖. ສັທທິວິຫາຣິກ໌ໄປເຂົ້າຮ່ວມກັບອຸປັຊຍາຍ໌[໑]

ພິກສຸທັງຫລາຍ ນິສສັຍຣະງັບຈາກອາຈາຣຍ໌ ໖ ປະການເຫລົ່ານີ້

ນິສສຍປຕິປັສສັທທິກຖາ ຈົບ

ໝາຍເຫດ :

໑ ໄປເຂົ້າຮ່ວມກັບອຸປັຊຍາຍ໌ ຄືເມື່ອສັທທິວິຫາຣິກໄດ້ພົບເຫັນອຸປັຊຍາຍ໌ທຽວບິນທບາຕ ໄດ້ຍິນ

ອຸປັຊຊາຍ໌ສະແດງຫຼັກຈຳສຽງອຸປັຊຊາຍ໌ໄດ້ນິສສັຍຣະງັບຈາກອາຈາຣຍ໌ (ວິ. ອ. ໓/໗໓/໔໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໓. ອຸປສັມປາເທຕັພພປັຍຈກະ

໔໓. ອຸປສັມປາເທຕັພພປັຍຈກະ

ວ່າດ້ວຍອົງຄ໌ ໕ ບ່ອນພິກສຸຜູ້ຄວຣໃຫ້ອຸປສົມບົທ ໑໖ ຫມວດ

ເຣື່ອງພິກສຸປະກອບດ້ວຍອົງຄ໌ ໕

ກັນຫປັກສ໌ ຝ່າຍດຳ ໑

[໗໔] ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ໑ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ບໍ່ປະກອບດ້ວຍສີລຂັນທ໌ອັນເປັນອເສຂະ

໒. ບໍ່ປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ

໓. ບໍ່ປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ

໔. ບໍ່ປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ

໕. ບໍ່ປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ໒

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໑)

ສຸກກປັກສ໌ ຝ່າຍຂາວ ໑

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ປະກອບດ້ວຍສີລຂັນທ໌ອັນເປັນອເສຂະ

໒. ປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ

໓. ປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ

໔. ປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ

ໝາຍເຫດ :

໑ ບໍ່ຄວນໃຫ້ອຸປສົມບົທ ຄື ບໍ່ຄວນເປັນອຸປັຊຝາຍ໌ໃຫ້ໃຜໆອຸປສົມບົທ ບໍ່ຄວນໃຫ້ນິສສັຍ ຄື ບໍ່ຄວນເປັນອາຈາຣຍ໌ໃຫ້ນິສສັຍ (ວິ. ອ. ៣/໗໔/໔໗)

໒ ສີລຂັນທ໌ອັນເປັນອເສຂະເປັນຕົ້ນ ໝາຍເຖິງສີລ ສມາທິ ປັນຍາ ຜລ ແລະປັຈຈເວກຂນຍານະ ຂອງພຣະອຣຫັນຕ໌ (ວິ. ອ. ៣/໗໔/໔໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໒៣. ອຸປສັມປາເທຕັພພປັຍຈກະ

໕. ປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໒)

ກັນຫປັກສ໌ ໒

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ຕົນເອງບໍ່ປະກອບດ້ວຍສີລຂັນທ໌ອັນເປັນອເສຂະ ແລະບໍ່ຊັກຊວນຜູ້ອື່ນໃນສີລຂັນທ໌ອັນເປັນອເສຂະ

໒. ຕົນເອງບໍ່ປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ ແລະບໍ່ຊັກຊວນຜູ້ອື່ນໃນສມາທິຂັນທ໌ອັນເປັນອເສຂະ

៣. ຕົນເອງບໍ່ປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ ແລະບໍ່ຊັກຊວນຜູ້ອື່ນໃນປັນຍາຂັນທ໌ອັນເປັນອເສຂະ

໔. ຕົນເອງບໍ່ປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ ແລະບໍ່ຊັກຊວນຜູ້ອື່ນໃນວິມຸຕຕິຂັນທ໌ອັນເປັນອເສຂະ

໕. ຕົນເອງບໍ່ປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ ແລະບໍ່ຊັກຊວນຜູ້ອື່ນໃນວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (៣)

ສຸກກປັກສ໌ ໔

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ຕົນເອງປະກອບດ້ວຍສີລຂັນທ໌ອັນເປັນອເສຂະ ແລະຊັກຊວນຜູ້ອື່ນໃນສີລຂັນທ໌ ອັນເປັນອເສຂະ

໒. ຕົນເອງປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ ແລະຊັກຊວນຜູ້ອື່ນໃນສມາທິຂັນທ໌ອັນເປັນອເສຂະ

໓. ຕົນເອງປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ ແລະຊັກຊວນຜູ້ອື່ນໃນປັນຍາຂັນທ໌ອັນເປັນອເສຂະ

໔. ຕົນເອງປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ ແລະຊັກຊວນຜູ້ອື່ນໃນວິມຸຕຕິຂັນທ໌ອັນເປັນອເສຂະ

໕. ຕົນເອງປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ ແລະຊັກຊວນຜູ້ອື່ນໃນວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໔)

ກັນຫປັກສ໌ ໓

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ເປັນຜູ້ບໍ່ມີສັດທາ ໒. ເປັນຜູ້ບໍ່ມີຫິຣິ

໓. ເປັນຜູ້ບໍ່ມີໂອຕຕັປປະ ໔. ເປັນຜູ້ກຽດຄ້ານ

໕. ເປັນຜູ້ມີສຕິຟັ່ນເຟືອນ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໕)

ສຸກກປັກສ໌ ໓

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ເປັນຜູ້ມີສັດທາ ໒. ເປັນຜູ້ມີຫິຣິ

໓. ເປັນຜູ້ມີໂອຕັປປະ ໔. ເປັນຜູ້ປາຣົພຄວາມພຽນ
໕. ເປັນຜູ້ມີສຕິຕັ້ງຫມັ້ນ
ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (ຝ)

ກັນຫປັກສ໌ ໔

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື
໑. ເປັນຜູ້ມີສີລວິບັຕິໃນອທິສີລ ໒. ເປັນຜູ້ມີອາຈາຣວິບັຕິໃນອັຊຍາຈາຣ
໓. ເປັນຜູ້ມີທິຕຖິວິບັຕິໃນອຕິທິຕຖິ໑ ໔. ເປັນຜູ້ໄດ້ຍິນໄດ້ຟັງນ້ອຍ
໕. ເປັນຜູ້ມີປັນຍາຊາມ
ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (ກ)

ສຸກກປັກສ໌ ໔

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື
໑. ເປັນຜູ້ບໍ່ມີສີລວິບັຕິໃນອທິສີລ ໒. ເປັນຜູ້ບໍ່ມີອາຈາຣວິບັຕິໃນອັຊຍາຈາຣ
໓. ເປັນຜູ້ບໍ່ມີທິຕຖິວິບັຕິໃນອຕິທິຕຖິ ໔. ເປັນຜູ້ໄດ້ຍິນໄດ້ຟັງມາກ
໕. ເປັນຜູ້ມີປັນຍາ
ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (ກູ)

ຫມາຍເຫດ :

໑ ມີສີລວິບັຕິໃນອທິສີລ ຫມາຍເຖິງເປັນຜູ້ຕ້ອງອາບັຕິປາຣາຊິກແລະອາບັຕິສັງຂາທິເສສ ອາຈາຣວິບັຕິໃນອັຊຍາຈາຣ ຫມາຍເຖິງເປັນຜູ້ຕ້ອງອາບັຕິ ໕ ກອງທີ່ເຫລືອ (ຄືອາບັຕິຖຸລລັຈຈັຍ ອາບັຕິປາຈິຕຕີຍ໌ ອາບັຕິປາຕິເທສນີຍະ ອາບັຕິທຸກກະຕະ ແລະອາບັຕິທຸພພາສິຕ)ແລະຍັງບໍ່ໄດ້ພົ້ນຈາກອາບັຕິ ທິຕຖິວິບັຕິໃນອຕິທິຕຖິ ຫມາຍເຖິງເປັນຜູ້ລະສັມມາທິຕຖິແລ້ວຍຶດຖືອັນຕຄາຫິກທິຕຖິ (ວິ. ອ. ໓/

໗໔/໔໗໙, ສາຣັຕຖ. ຕີກາ ໓/໗໔/໔໙໔

ກັນຫາປັກສ໌ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ບໍ່ສາມາດພຍາບາລເອງ ຫລືໃຊ້ໃຫ້ຜູ້ອື່ນພຍາບາລອັນເຕວາສິກຫລືສັທຫິວິຫາຣິກຜູ້ເປັນໄຂ້

໒. ບໍ່ສາມາດຣະງັບເອງຫລືໃຊ້ໃຫ້ຜູ້ອື່ນຊ່ວຍຣະງັບຄວາມກະສັນ

໓. ບໍ່ສາມາດບັນເທົາເອງຫລືໃຊ້ໃຫ້ຜູ້ອື່ນຊ່ວຍບັນເທົາຄວາມເບື່ອຫນ່າຍ ທີ່ເກີດຂຶ້ນໂດຍທັມ

໔. ບໍ່ຮູ້ຈັກອາບັຕິ

໕. ບໍ່ຮູ້ຈັກວິທີອອກຈາກອາບັຕິ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໙)

ສຸກກປັກສ໌ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ສາມາດພຍາບາລເອງ ຫລືໃຊ້ໃຫ້ຜູ້ອື່ນພຍາບາລອັນເຕວາສິກ ຫລືສັທຫິວິຫາຣິກຜູ້ເປັນໄຂ້

໒. ສາມາດຣະງັບເອງຫລືໃຊ້ໃຫ້ຜູ້ອື່ນຊ່ວຍຣະງັບຄວາມກະສັນ

໓. ສາມາດບັນເທົາເອງຫລືໃຊ້ໃຫ້ຜູ້ອື່ນຊ່ວຍບັນເທົາຄວາມເບື່ອຫນ່າຍທີ່ເກີດຂຶ້ນໂດຍທັມ

໔. ຮູ້ຈັກອາບັຕິ

໕. ຮູ້ຈັກວິທີອອກຈາກອາບັຕິ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໑໐)

ກັນຫາປັກສ໌ ໖

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ບໍ່ສາມາດຝຶກຝົນອັນເຕວາສິກຫລືສັທຫິວິຫາຣິກໃນອພິສມາຈາຣິກາສິກຂາ໑

໒. ບໍ່ສາມາດແນະນຳໃນອາພິພຣົມຈຣິຍກາສິກຂາ໒
໓. ບໍ່ສາມາດແນະນຳໃນອພິທັມມ໓
໔. ບໍ່ສາມາດແນະນຳໃນອພິວິນັຍ໔
໕. ບໍ່ສາມາດເປື້ອງຄວາມເຫັນຜິດອັນເກີດຂຶ້ນໄດ້ໂດຍທັມ
ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໑໑)

ສຸກກປັກສ໌ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື
໑. ສາມາດຝຶກຝົນອັນເຕວາສິກຫລືສັທທິວິຫາຣິກໃນອພິສມາຈາຣິກາສິກຂາ
໒. ສາມາດແນະນຳໃນອາທິພຣົມຈຣິກາສິກຂາ
໓. ສາມາດແນະນຳໃນອພິທັມ
໔. ສາມາດແນະນຳໃນອພິວິນັຍ
໕. ສາມາດເປື້ອງຄວາມເຫັນຜິດອັນເກີດຂຶ້ນໄດ້ໂດຍທັມ
ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໑໒)

ໝາຍເຫດ :

໑ ອພິມາຈາຣິກາສິກຂາ ຄື ຫລັກການສຶກສາກ່ຽວກັບຂ້ອວັຕຣປະຕິບັດ ທີ່ສະແດງໄວ້ໃນຫມວດຂັນທກວັຕຣ (ວິ. ອ. ໓/໘໔/໔໗
໒ ອາທິພຣົມຈຣິຍກາສິກຂາ ຄື ຫລັກການສຶກສາກ່ຽວກັບບັນຍັດເປັນເບື້ອງຕົ້ນແຫ່ງພຣົມຈັນຍ໌ ຫມາຍເຖິງ
ສິກຂາບົທທີ່ມາໃນພິກຂຸປາຕິໂມກຂ໌ແລະພິກຂຸນີປາຕິໂມກຂ໌ ເປັນເສກຂບັນຍັດທີ່ສົງຂ໌ຕ້ອງຍົກຂຶ້ນສະແດງທຸກເຄິ່ງເດືອນ (ວິ. ອ. ໓/໘໔/໔໗, ສາຣຕຖ. ຕີກາ ໓/໘໔/໒໗໒)
໓ ອພິທັມ ຄື ຫລັກການທີ່ວ່າດ້ວຍການກຳຫນົດນາມຣູບ (ວິ. ອ. ໓/໘໔/໔໗)
໔ ອພິວິນັຍ ຄື ຫລັກການໃນພຣະວິນັຍປິດົກທັງສິ້ນ (ວິ. ອ. ໓/໔໘/໔໗)

ກັນຫາປັກສ໌ ໆ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ບໍ່ຮູ້ຈັກອາບັຕິ ໒. ບໍ່ຮູ້ຈັກອນາບັຕິ

໓. ບໍ່ຮູ້ຈັກອາບັຕິເບົາ ໔. ບໍ່ຮູ້ຈັກອາບັຕິຫນັກ

໕. ຈຳປາຕິໂມກຂ໌ທັງສອງໂດຍພິສດາຣບໍ່ໄດ້ດີ ຈຳແນກບໍ່ໄດ້ດີ ບໍ່ຄ່ອງແຄ້ວດີ ວິນິຈສັຍໂດຍສຸຕຕະໂດຍອນຸພຍັນຊນະບໍ່ໄດ້ດີ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໑໓)

ສຸກກປັກສ໌ ໆ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ຮູ້ຈັກອາບັຕິ ໒. ຮູ້ຈັກອນາບັຕິ

໓. ຮູ້ຈັກອາບັຕິເບົາ ໔. ຮູ້ຈັກອາບັຕິຫນັກ

໕. ຈຳປາຕິໂມກຂ໌ທັງສອງໂດຍພິສດາຣໄດ້ດີ ຈຳແນກໄດ້ດີ ຄ່ອງແຄ້ວດີ ວິນິຈສັຍໂດຍສຸຕຕະໂດຍອນຸພຍັນຊນະໄດ້ດີ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໑໔)

ກັນຫາປັກສ໌ ໆ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ບໍ່ຮູ້ຈັກອາບັຕິ ໒. ບໍ່ຮູ້ຈັກອນາບັຕິ

໓. ບໍ່ຮູ້ຈັກອາບັຕິເບົາ ໔. ບໍ່ຮູ້ຈັກອາບັຕິຫນັກ

໕. ມີພັນສາຢ່ອນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໑໕)

ສຸກກປັກຂ໌ ໗

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ຮູ້ຈັກອາບັຕິ ໒. ຮູ້ຈັກອນາບັຕິ

໓. ຮູ້ຈັກອາບັຕິເບົາ ໔. ຮູ້ຈັກອາບັຕິຫນັກ

໕. ມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໑໖)

ອຸປສັມປາເທຕັພພປັຢຈກະ ໑໖ ຫມວດ ຈົບ

໒໔. ອຸປສັມປາເທຕັພພສັກກະ

ວ່າດ້ວຍອົງຄ໌ ໖ ບ່ອນພິກສຸຜູ້ຄວຣໃຫ້ອຸປສົມບົທ ໑໔ ຫມວດ

ເຣື່ອງພິກສຸປະກອບດ້ວຍອົງຄ໌ ໖

ກັນຫປັກຂ໌ ໑

[໗໕] ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ບໍ່ປະກອບດ້ວຍສີລຂັນທ໌ອັນເປັນອເສຂະ

໒. ບໍ່ປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ

໓. ບໍ່ປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ

໔. ບໍ່ປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ

໕. ບໍ່ປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ

໖. ມີພັນສາຢ່ອນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໑)

ສຸກກປັກສ໌ ໑

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ປະກອບດ້ວຍສີລຂັນທ໌ອັນເປັນອເສຂະ

໒. ປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ

໓. ປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ

໔. ປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ

໕. ປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ

໖. ມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໒)

ກັນຫປັກສ໌ ໒

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ຕົນເອງບໍ່ປະກອບດ້ວຍສີລຂັນທ໌ອັນເປັນອເສຂະ ແລະບໍ່ຊັກຊວນຜູ້ອື່ນໃນສີລຂັນທ໌ອັນເປັນອເສຂະ

໒. ຕົນເອງບໍ່ປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ ແລະບໍ່ຊັກຊວນຜູ້ອື່ນໃນສມາທິຂັນທ໌ອັນເປັນອເສຂະ

໓. ຕົນເອງບໍ່ປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ ແລະບໍ່ຊັກຊວນຜູ້ອື່ນໃນປັນຍາຂັນທ໌ອັນເປັນອເສຂະ

໔. ຕົນເອງບໍ່ປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ ແລະບໍ່ຊັກຊວນຜູ້ອື່ນໃນວິມຸຕຕິຂັນທ໌ອັນເປັນອເສຂະ

໕. ຕົນເອງບໍ່ປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ ແລະບໍ່ຊັກຊວນຜູ້ອື່ນໃນວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ

໖. ມີພັນສາຫລຸດ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໓)

ສຸກກປັກສ໌ ໔

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ຕົນເອງປະກອບດ້ວຍສີລຂັນທ໌ອັນເປັນອເສຂະ ແລະຊັກຊວນຜູ້ອື່ນໃນສີລຂັນທ໌ອັນເປັນອເສຂະ

໒. ຕົນເອງປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ ແລະຊັກຊວນຜູ້ອື່ນໃນສມາທິຂັນທ໌ອັນເປັນອເສຂະ

໓. ຕົນເອງປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ ແລະຊັກຊວນຜູ້ອື່ນໃນປັນຍາຂັນທ໌ອັນເປັນອເສຂະ

໔. ຕົນເອງປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ ແລະຊັກຊວນຜູ້ອື່ນໃນວິມຸຕຕິຂັນທ໌ອັນເປັນອເສຂະ

໕. ຕົນເອງປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ ແລະຊັກຊວນຜູ້ອື່ນໃນວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ

໖. ມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໔)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໒໔. ອຸປສັມປາເທຕັພພສັກກະ

ກັນຫປັກສ໌ ໓

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ເປັນຜູ້ບໍ່ມີສັດທາ ໒. ເປັນຜູ້ບໍ່ມີຫິຣິ

໓. ເປັນຜູ້ບໍ່ມີໂອຕຕັປປະ ໔. ເປັນຜູ້ກຽດຄ້ານ

໕. ເປັນຜູ້ມີສຕິຟັ່ນເຟືອນ ໖. ມີພັນສາຫລຸດ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໕)

ສຸກກປັກສ໌ ໓

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນນອຸປັຕຖາກ ຄື

໑. ເປັນຜູ້ມີສັດທາ ໔. ເປັນຜູ້ມີຫິຣິ

໓. ເປັນຜູ້ມີໂອຕຕັປປະ ໔. ເປັນຜູ້ປາຣົພຄວາມພຽນ

໕. ເປັນຜູ້ມີສຕິຕັ້ງຫມັ້ນ ໖. ມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນນອຸປັຕຖາກ (໖)

ກັນຫປັກສ໌ ໔

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນນອຸປັຕຖາກ ຄື

໑. ເປັນຜູ້ມີສີລວິບັຕິໃນອທິສີລ ໔. ເປັນຜູ້ມີອາຈາຣວິບັຕິໃນອັຊຢາຈາຣ

໓. ເປັນຜູ້ມີທິຕຖິວິບັຕິໃນອຕິທິຕຖິ໑ ໔. ເປັນຜູ້ໄດ້ຍິນໄດ້ຟັງນ້ອຍ

ໝາຍເຫດ :

໑ ມີສີລວິບັຕິໃນອທິສີລ ອາຈາຣວິບັຕິໃນອັຊຢາຈາຣ ທິຕຖິວິບັຕິໃນອຕິທິຕຖິ ເບິ່ງຂໍ້ ໗໔ ຫນ້າ ໑໔໖ (ໝາຍເຫດ)

໕. ເປັນຜູ້ມີປັນຍາຊາມ ໖. ມີພັນສາຫລຸດ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນນອຸປັຕຖາກ (໗)

ສຸກກປັກສ໌ ໔

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນນອຸປັຕຖາກ ຄື

໑. ເປັນຜູ້ບໍ່ມີສີລວິບັຕິໃນອທິສີລ ໒. ເປັນຜູ້ບໍ່ມີອາຈາຣວິບັຕິໃນອັຊຊາຈາຣ
໓. ເປັນຜູ້ບໍ່ມີທິຕຖິວິບັຕິໃນອຕິທິຕຖິ ໔. ເປັນຜູ້ໄດ້ຍິນໄດ້ຟັງມາກ
໕. ເປັນຜູ້ມີປັນຍາ ໖. ມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐
ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໗)

ກັນຫາປັກສ໌ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື
໑. ບໍ່ສາມາດພຍາບາລເອງຫລືໃຊ້ໃຫ້ຜູ້ອື່ນຊ່ວຍພຍາບາລອັນເຕວາສິກຫລືສັທທິວິຫາຣິກຜູ້ເປັນໄຂ້
໒. ບໍ່ສາມາດຣະງັບເອງຫລືໃຊ້ໃຫ້ຜູ້ອື່ນຊ່ວຍຣະງັບຄວາມກະສັນ
໓. ບໍ່ສາມາດບັນເທົາເອງຫລືໃຊ້ໃຫ້ຜູ້ອື່ນຊ່ວຍບັນເທົາຄວາມເບື່ອຫນ່າຍທີ່ເກີດຂຶ້ນໂດຍທັມ
໔. ບໍ່ຮູ້ຈັກອາບັຕິ
໕. ບໍ່ຮູ້ຈັກວິທີອອກຈາກອາບັຕິ
໖. ມີພັນສາຢ່ອນ ໑໐
ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໘)

ສຸກກປັກສ໌ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື
໑. ສາມາດພຍາບາລເອງ ຫລືໃຊ້ໃຫ້ຜູ້ອື່ນຊ່ວຍພຍາບາລອັນເຕວາສິກຫລືສັທທິວິຫາຣິກຜູ້ເປັນໄຂ້
໒. ສາມາດຣະງັບເອງຫລືໃຊ້ໃຫ້ຜູ້ອື່ນຊ່ວຍຣະງັບຄວາມກະສັນ
໓. ສາມາດບັນເທົາເອງຫລືໃຊ້ໃຫ້ຜູ້ອື່ນຊ່ວຍບັນເທົາຄວາມເບື່ອຫນ່າຍທີ່ເກີດຂຶ້ນໂດຍທັມ
໔. ຮູ້ຈັກອາບັຕິ
໕. ຮູ້ຈັກວິທີອອກຈາກອາບັຕິ
໖. ມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໒ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໑໐)

ກັນຫປັກສ໌ ໒

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໒ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ບໍ່ສາມາດຝຶກຝົນອັນເຕວາສິກຫລືສັທທິວິຫາຣິກໃນອພິສມາຈາຣິກາສິກຂາ

໒. ບໍ່ສາມາດແນະນຳໃນອາທິພຣົມຈາຣິກາສິກຂາ

໓. ບໍ່ສາມາດແນະນຳໃນອພິທັມ

໔. ບໍ່ສາມາດແນະນຳໃນອພິວິນັຍ

໕. ບໍ່ສາມາດເປືອງຄວາມເຫັນຜິດອັນເກີດຂຶ້ນໄດ້ໂດຍທັມ

໒. ມີພັນສາຫລຸດຢ່ອນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໒ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໑໑)

ສຸກກປັກສ໌ ໒

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໒ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ສາມາດຝຶກຝົນອັນເຕວາສິກຫລືສັທທິວິຫາຣິກໃນອພິສມາຈາຣິກາສິກຂາ

໒. ສາມາດແນະນຳໃນອາທິພຣົມຈາຣິກາສິກຂາ

໓. ສາມາດແນະນຳໃນອພິທັມ

໔. ສາມາດແນະນຳໃນອພິວິນັຍ

໕. ສາມາດເປືອງຄວາມເຫັນຜິດອັນເກີດຂຶ້ນໄດ້ໂດຍທັມ

໒. ມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໒ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໑໒)

ກັນຫາປັກສ໌ ໗

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ແມ່ນອື່ນອີກ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ບໍ່ຮູ້ຈັກອາບັຕິ

໒. ບໍ່ຮູ້ຈັກອນາບັຕິ

໓. ບໍ່ຮູ້ຈັກອາບັຕິເບົາ

໔. ບໍ່ຮູ້ຈັກອາບັຕິໜັກ

໕. ຈຳປາຕິໂມກຂ໌ທັງສອງ໑ໂດຍພິສດາຣບໍ່ໄດ້ດີ ຈຳແນກບໍ່ໄດ້ດີ ບໍ່ຄ່ອງແຄ້ວດີ ວິນິຈສັຍໂດຍສູຕຕະໂດຍອນຸພຍັນຊນະບໍ່ໄດ້ດີ

໖. ມີພັນສາຫລຸດຢ່ອນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ບໍ່ຄວນໃຫ້ອຸປສົມບົທ ບໍ່ຄວນໃຫ້ນິສສັຍ ບໍ່ຄວນໃຊ້ສາມເນຣອຸປັຕຖາກ (໑໓)

ໝາຍເຫດ :

໑ ປາຕິໂມກຂ໌ທັງສອງ ຫມາຍເຖິງອຸພໂຕວິພັງຄ໌ ຄື ພິກຂຸປາຕິໂມກຂ໌ແລະພິກຂຸນີປາຕິໂມກຂ໌ (ວິ. ອ. ໓/໗໕/໕໐)

ສຸກກປັກສ໌ ໗

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ ຄື

໑. ຮູ້ຈັກອາບັຕິ

໒. ຮູ້ຈັກອນາບັຕິ

໓. ຮູ້ຈັກອາບັຕິເບົາ

໔. ຮູ້ຈັກອາບັຕິໜັກ

໕. ຈຳປາຕິໂມກຂ໌ທັງສອງໂດຍພິສດາຣໄດ້ດີ ຈຳແນກໄດ້ດີ ຄ່ອງແຄ້ວດີ ວິນິຈສັຍໂດຍສູຕຕະໂດຍອນຸພຍັນຊນະໄດ້ດີ

໖. ມີພັນສາຄົບ ໑໐ ຫລືມີພັນສາເກີນ ໑໐

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນໃຫ້ອຸປສົມບົທ ຄວນໃຫ້ນິສສັຍ ຄວນໃຊ້ສາມເນຣອຸປັຕຖາກ (໑໔)

ອຸປສັມປາເທຕັພພສັກກະ ໑໔ ຫມວດ ຈົບ

໔໕. ອັຍຍຕິຕຖິຍປຸພພກຖາ

ວ່າດ້ວຍພິກສຸຜູ້ເຄີຍເປັນອັຍເດັຽຣະຖີຍ໌

ຕິຕຖິຍປຣິວາສ

[໗໕] ສມັຍນັ້ນ ພິກສຸຜູ້ເຄີຍເປັນອັຍເດັຽຣະຖີຍ໌ຖືກພຣະອຸປັຊຍາຍ໌ວ່າກ່າວໂດຍຊອບທັມ ໄດ້ໂຕ້ຖຽງພຣະອຸປັຊຍາຍ໌ ໄປເຂົ້າຮີດເດັຽຣະຖີຍ໌ດັ່ງເດີມແລ້ວກັບມາຂໍອຸປສົມບົທກັບພິກສຸອີກ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ພິກສຸທີ່ເຄີຍເປັນອັຍເດັຽຣະຖີຍ໌ຖືກພຣະອຸປັຊຍາຍ໌ວ່າກ່າວໂດຍຊອບທັມ ໄດ້ໂຕ້ຖຽງພຣະອຸປັຊຍາຍ໌ ໄປເຂົ້າຮີດເດັຽຣະຖີຍ໌ດັ່ງເດີມມາແລ້ວ ສົງຄ໌ບໍ່ຄວນໃຫ້ອຸປສົມບົທ ພິກສຸທັງຫລາຍ ແມ່ນຜູ້ອື່ນທີ່ເຄີຍເປັນອັຍເດັຽຣະຖີຍ໌ ຫວັງບັນພະຊາອຸປສົມບົທໃນພຣະທັມວິນັຍນີ້ ຄວນໃຫ້ຜູ້ນັ້ນຢູ່ປຣິວາສ ໔ ເດືອນ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໕. ອັຍຍຕິຕຖິຍປຸພພກຖາ

ວິທີໃຫ້ຕິຕຖິຍປຣິວາສ

ພິກສຸທັງຫລາຍ ກໍແລສົງຄ໌ຄວນໃຫ້ຕິຕຖິຍປຣິວາສຢ່າງນີ້ ກ່ອນອື່ນຄວນໃຫ້ກຸລບຸຕຣທີ່ເຄີຍເປັນອັຍເດັຽຣະຖີຍ໌ປົງຜົມແລະຫນວດ ໃຫ້ຄອງຜ້າກາສາຍະ ໃຫ້ຫົ່ມຜ້າບ່ຽງບ່າຂ້າງນຶ່ງ ໃຫ້ຂາບຕີນພິກສຸທັງຫລາຍ ໃຫ້ນັ່ງຄຸເຂົ່າ ໃຫ້ປະນົມມືແລ້ວສັ່ງວ່າ "ທ່ານຈົ່ງກ່າວຢ່າງນີ້" ແລ້ວໃຫ້ວ່າສຣນຄົມນ໌ດັ່ງນີ້

ໄຕຣສຣນຄົມນ໌

ວ່າດ້ວຍການເຖິງພຣະຣັຕນຕຣັຍເປັນສຣະຣະນະ

ຂ້າພະເຈົ້າ ຂໍເຖິງພຣະພຸດທະເຈົ້າເປັນສຣະຣະນະ

ຂ້າພະເຈົ້າ ຂໍເຖິງພຣະທັມເປັນສຣະຣະນະ

ຂ້າພະເຈົ້າ ຂໍເຖິງພຣະສົງຄ໌ເປັນສຣະຣະນະ

ຂ້າພະເຈົ້າ ຂໍເຖິງພຣະພຸດທະເຈົ້າເປັນສະຣະນະ ແມ່ນຄັ້ງທີ ໔
ຂ້າພະເຈົ້າ ຂໍເຖິງພຣະທັມເປັນສະຣະນະ ແມ່ນຄັ້ງທີ ໔
ຂ້າພະເຈົ້າ ຂໍເຖິງພຣະສົງຂ໌ເປັນສະຣະນະ ແມ່ນຄັ້ງທີ ໔
ຂ້າພະເຈົ້າ ຂໍເຖິງພຣະພຸດທະເຈົ້າເປັນສະຣະນະ ແມ່ນຄັ້ງທີ ໕
ຂ້າພະເຈົ້າ ຂໍເຖິງພຣະທັມເປັນສະຣະນະ ແມ່ນຄັ້ງທີ ໕
ຂ້າພະເຈົ້າ ຂໍເຖິງພຣະສົງຂ໌ເປັນສະຣະນະ ແມ່ນຄັ້ງທີ ໕

ພິກສຸທັງຫລາຍ ກຸລບຸດຣທີ່ເຄີຍເປັນອັຍຍະເດັຽຣະຖີຍ໌ນັ້ນ ຄວນເຂົ້າໄປຫາສົງຂ໌ ຫົ່ມຜ້າບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸທັງຫລາຍ ນັ່ງຄຸເຂົ່າ ປະນົມມື ກ່າວຄຳຂໍຕິຕຖິຍປຣິວາສຢ່າງນີ້ວ່າ

ຄຳຂໍຕິຕຖິຍປຣິວາສແລະກັມວາຈາໃຫ້ຕິຕຖິຍປຣິວາສ

ທ່ານຜູ້ຈະເຣີນ ຂ້າພະເຈົ້າມີຊື່ນີ້ເຄີຍເປັນອັຍຍະເດັຽຣະຖີຍ໌ ຫວັງອຸປສົມບົທໃນພຣະທັມວິນັຍນີ້ ທ່ານຜູ້ຈະເຣີນ ຂ້າພະເຈົ້ານັ້ນຂໍປຣິວາສ ໔ ເດືອນຕໍ່ສົງຂ໌

ຄວນຂໍແມ່ນຄັ້ງທີ ໒ ຯລຯ

ຄວນຂໍແມ່ນຄັ້ງທີ ໓ ຯລຯ

ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຜູ້ມີຊື່ນີ້ເຄີຍເປັນອັຍຍະເດັຽຣະຖີຍ໌ ຫວັງອຸປສົມບົທໃນພຣະທັມວິນັຍນີ້ ທ່ານຂໍປຣິວາສ ໔ ເດືອນຕໍ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວ ຄວນໃຫ້ປຣິວາສ ໔ ເດືອນແກ່ຜູ້ມີຊື່ນີ້ຊຶ່ງເຄີຍເປັນອັຍຍະເດັຽຣະຖີຍ໌ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຜູ້ມີຊື່ນີ້ເຄີຍເປັນອັຍຍະເດັຽຣະຖີຍ໌ ຫວັງອຸປສົມບົທໃນພຣະທັມວິນັຍນີ້ ທ່ານຂໍປຣິວາສ ໔ ເດືອນຕໍ່ສົງຂ໌ ສົງຂ໌ໃຫ້ປຣິວາສ ໔ ເດືອນແກ່ຜູ້ມີຊື່ນີ້ຊຶ່ງເຄີຍເປັນອັຍຍະເດັຽຣະຖີຍ໌ ທ່ານຮູບໃດເຫັນດ້ວຍກັບການໃຫ້ປຣິວາສ ໔ ເດືອນແກ່ຜູ້ມີຊື່ນີ້ຊຶ່ງເຄີຍເປັນອັຍຍະເດັຽຣະຖີຍ໌ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງປຣິວາສ ໔ ເດືອນ ສົງຂ໌ໃຫ້ແລ້ວແກ່ຜູ້ມີຊື່ນີ້ຊຶ່ງເຄີຍເປັນອັຍຍະເດັຽຣະຖີຍ໌ ສົງຂ໌ເຫັນດ້ວຍເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືເອົາຄວາມນິ່ງນັ້ນເປັນມະຕິຢ່າງນີ້

[໗໗] ພິກສຸທັງຫລາຍ ກຸລບຸດຣຜູ້ເຄີຍເປັນອັຍຍະເດັຽຣະຖີຍ໌ ເປັນຜູ້ປະຕິບັດໃຫ້ສົງຂ໌ຍິນດີຢ່າງນີ້ ເປັນຜູ້ປະຕິບັດມິໃຫ້ສົງຂ໌ຍິນດີຢ່າງນີ້

ຂໍ້ປະຕິບັດທີ່ມີໃຫ້ສິ່ງຂໍຍິນດີ
ພິກສຸທັງຫລາຍ ກໍກຸລບຸຕຣຜູ້ເຄີຍເປັນອັຍູເດັຽຣະຖີຍ໌ຊື່ວ່າເປັນຜູ້ປະຕິບັດມີໃຫ້ສິ່ງຂໍຍິນດີຢ່າງໃດ
ພິກສຸທັງຫລາຍ ໃນກໍຣະນີນີ້ ກຸລບຸຕຣຜູ້ເຄີຍເປັນອັຍູເດັຽຣະຖີຍ໌ ເຂົ້າຫມູ່ບ້ານເຊົ້າເກີນໄປ ກັບສູາຍເກີນໄປ໑ ແມ່ນເຊັ່ນນີ້ກໍຊື່ວ່າເປັນຜູ້ປະຕິບັດມີໃຫ້ສິ່ງຂໍຍິນດີ
ພິກສຸທັງຫລາຍ ອີກປະກາຣນຶ່ງ ກຸລບຸຕຣຜູ້ເຄີຍເປັນອັຍູເດັຽຣະຖີຍ໌ ເປັນຜູ້ມີຍິງແພສຍາເປັນໂຄຈອນ໔ ມີແມ່ຫມ້າຍເປັນໂຄຈອນ ມີສາວເທື້ອເປັນໂຄຈອນ ມີກະເທີຍເປັນໂຄຈອນຫລືມີພິກສຸນີເປັນໂຄຈອນ ແມ່ນເຊັ່ນນີ້ກໍຊື່ວ່າເປັນຜູ້ປະຕິບັດມີໃຫ້ສິ່ງຂໍຍິນດີ

ໝາຍເຫດ :
໑ ເຂົ້າຫມູ່ບ້ານເຊົ້າເກີນໄປ ຫມາຍເຖິງເຂົ້າໄປບິນທບາຕຍັງຫມູ່ບ້ານ ໃນເວລາທີ່ພິກສຸທັງຫລາຍທຳວັຕຣ ກັບສູາຍເກີນໄປ ຫມາຍເຖິງມົວແຕ່ຄຸຍເຣື້ອງຂອງຊາວບ້ານກັບສະຕຣີ ບຸຣຸສ ເດັກຊາຍ ແລະເດັກຍິງເປັນຕົ້ນໃນຕະກູນທັງຫລາຍ ສົນໃນຕະກູນເຫລົ່ານັ້ນ ເມື່ອພິກສຸທັງຫລາຍເກັບບາຕຣແລະຈີວອນແລ້ວຮຽນບາລີແລະອັນຖະກະຖາຢູ່ ຫລືຫລີກຫລີບຢູ່ ກຸລບຸຕຣຜູ້ເຄີຍເປັນອັຍູເດັຽຣະຖີຍ໌ຜູ້ນັ້ນຈຶ່ງກັບມາບໍ່ທຳອຸປັຊຢາຍວັຕຣ ອາຈຣິຍວັຕຣ ເຂົ້າໄປທີ່ພັກແລ້ວນອນ (ວິ. ອ. ໓/໗໗/໕໑)
໔ ມີຍິງແພສຍາເປັນໂຄຈອນ ຫມາຍເຖິງໄປມາຫາສູ່ຍິງແພສຍາດ້ວຍປຣາຖນາຄວາມເປັນມິຕຣ ມີຄວາມຄຸ້ນເຄີຍກັບຍິງແພສຍາ (ວິ. ອ. ໓/໗໗/໕໑, ສາຣຕຖ. ຕີກາ ໓/໗໗/໔໘໓)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໕. ອັຍູຕິຕຖີຍປຸພພກະຖາ

ພິກສຸທັງຫລາຍ ອີກປະກາຣນຶ່ງ ກຸລບຸຕຣຜູ້ເຄີຍເປັນອັຍູເດັຽຣະຖີຍ໌ ເປັນຜູ້ບໍ່ດຸຫມັ່ນ ກຽດຄ້ານໃນກາຣງານໃຫຍ່ນ້ອຍຂອງເພື່ອນພຣົມຈາຣີທັງຫລາຍ ບໍ່ປະກອບດ້ວຍປັນຍາ ເຄື່ອງພິຈາຣນາອັນເປັນອຸບາຍໃນກາຣງານເຫລົ່ານັ້ນ ບໍ່ອາຈທຳ ບໍ່ອາຈຈັດ ແມ່ນເຊັ່ນນີ້ກໍຊື່ວ່າເປັນຜູ້ປະຕິບັດມີໃຫ້ສິ່ງຂໍຍິນດີ
ພິກສຸທັງຫລາຍ ອີກປະກາຣນຶ່ງ ກຸລບຸຕຣຜູ້ເຄີຍເປັນອັຍູເດັຽຣະຖີຍ໌ ເປັນຜູ້ບໍ່ມີສົນທະແຮງກ້າໃນອຸທເທສ ໃນປຣິປຸຈສາ໑ ໃນອທິສີລ ອທິຈິຕ ອທິປັນຍາ ແມ່ນເຊັ່ນນີ້ກໍຊື່ວ່າເປັນຜູ້ປະຕິບັດມີໃຫ້ສິ່ງຂໍຍິນດີ
ພິກສຸທັງຫລາຍ ອີກປະກາຣນຶ່ງ ກຸລບຸຕຣຜູ້ເຄີຍເປັນອັຍູເດັຽຣະຖີຍ໌ອອກຈາກລັທທິຂອງຄຣູໃດ ເມື່ອມີຜູ້ກ່າວຕິຕຽນຄຣູນັ້ນ ກ່າວຕິຕຽນຄວາມເຫັນຂອງຄຣູນັ້ນ ຄວາມຊອບໃຈຂອງຄຣູນັ້ນ ຄວາມພໍໃຈ

ຂອງຄຣູນັ້ນ ຄວາມຍຶດຖືຂອງຄຣູນັ້ນ ກໍໂກດ ບໍ່ພໍໃຈ ບໍ່ຊອບໃຈ ເມື່ອມີຜູ້ກ່າວຕິຕຽນພຣະພຸທຫຼ ພຣະທັມ ຫລືພຣະສົງຂ໌ ກັບພໍໃຈ ເບີກບານ ຊອບໃຈ ກໍຫລືອອກຈາກລັທທິຂອງຄຣູໃດ ເມື່ອມີຜູ້ກ່າວສັຣເສີນຄຣູນັ້ນ ກ່າວສັຣເສີນຄວາມເຫັນຂອງຄຣູນັ້ນ ຄວາມຊອບໃຈຂອງຄຣູນັ້ນ ຄວາມພໍໃຈຂອງຄຣູນັ້ນ ຄວາມຍຶດຖືຂອງຄຣູນັ້ນ ຍ່ອມພໍໃຈ ເບີກບານ ຊອບໃຈ ເມື່ອກ່າວ ສັຣເສີນພຣະພຸທຫຼ ພຣະທັມ ຫລືພຣະສົງຂ໌ ກັບໂກດ ບໍ່ພໍໃຈ ບໍ່ຊອບໃຈ ຂໍ້ນີ້ເປັນເຄື່ອງສອບສວນໃນຂໍ້ປະຕິບັດທີ່ບໍ່ຊວນໃຫ້ສົງຂ໌ຍິນດີຂອງກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌
ພິກສຸທັງຫລາຍ ກໍກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ ຊື່ວ່າເປັນຜູ້ປະຕິບັດມິໃຫ້ສົງຂ໌ຍິນດີຢ່າງນີ້ ກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ຜູ້ປະຕິບັດມິໃຫ້ສົງຂ໌ຍິນດີຢ່າງນີ້ມາແລ້ວ ບໍ່ຄວນໃຫ້ອຸປສົມບົທ

ຂໍ້ປະຕິບັດທີ່ໃຫ້ສົງຂ໌ຍິນດີ

ພິກສຸທັງຫລາຍ ກໍກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ຊື່ວ່າເປັນຜູ້ປະຕິບັດໃຫ້ສົງຂ໌ຍິນດີຢ່າງໃດ ພິກສຸທັງຫລາຍ ໃນກໍຣະນີນີ້ ກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ນີ້ ເຂົ້າຫມູ່ບ້ານບໍ່ເຊົ້ານັກ ກັບບໍ່ສາຍນັກ ແມ່ນເຊັ່ນນີ້ກໍຊື່ວ່າເປັນຜູ້ປະຕິບັດໃຫ້ສົງຂ໌ຍິນດີ

ໝາຍເຫດ :

໑ ອຸທເທສ ຫມາຍເຖິງການຮຽນບາລີ
ປຣິປຸຈສາ ຫມາຍເຖິງອັນຖະກຖາ (ວິ. ອ. ໓/໗໗/໕໓)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໕. ອັຍຍຕິຕຖິຍປຸພພກຖາ

ພິກສຸທັງຫລາຍ ອີກປະການນຶ່ງ ກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ ບໍ່ເປັນຜູ້ມີຍິງແພສຍາເປັນໂຄຈອນ ບໍ່ມີແມ່ຫມ້າຍເປັນໂຄຈອນ ບໍ່ມີສາວເທື້ອເປັນໂຄຈອນ ບໍ່ມີກະເທີຍເປັນໂຄຈອນ ຫລືບໍ່ມີພິກສຸນີເປັນໂຄຈອນ ແມ່ນເຊັ່ນນີ້ກໍຊື່ວ່າເປັນຜູ້ປະຕິບັດໃຫ້ສົງຂ໌ຍິນດີ
ພິກສຸທັງຫລາຍ ອີກປະການນຶ່ງ ກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ ເປັນຜູ້ດຸຫມັ່ນ ບໍ່ກຽດຄ້ານໃນກາຣງານໃຫຍ່ນ້ອຍຂອງເພື່ອນພຣົມຈາຣີທັງຫລາຍ ປະກອບດ້ວຍປັນຍາ ເຄື່ອງພິຈາຣນາອັນເປັນອຸບາຍໃນກາຣງານເຫລົ່ານັ້ນ ອາຈທຳ ອາຈຈັດ ແມ່ນເຊັ່ນນີ້ກໍຊື່ວ່າເປັນຜູ້ປະຕິບັດໃຫ້ສົງຂ໌ຍິນດີ
ພິກສຸທັງຫລາຍ ອີກປະການນຶ່ງ ກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ ເປັນຜູ້ມີສັນທະແຮງກ້າໃນອຸທ

ເຫຕຸ ໃນປຣິປຸຈສາ ໃນອທິສີລ ອທິຈິຕ ອທິປັນຍາ ແມ່ນເຊັ່ນນີ້ກໍຊື່ວ່າເປັນຜູ້ປະຕິບັດໃຫ້ສົງຂ໌ຍິນດີ
ພິກສຸທັງຫລາຍ ອີກປະກາຣນຶ່ງ ກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ອອກຈາກລັທທິຂອງຄຣູໃດ ເມື່ອ
ມີຜູ້ກ່າວຕິຕຽນຄຣູນັ້ນ ກ່າວຕິຕຽນຄວາມເຫັນຂອງຄຣູນັ້ນ ຄວາມຊອບໃຈຂອງຄຣູນັ້ນ ຄວາມພໍໃຈ
ຂອງຄຣູນັ້ນ ຄວາມຍຶດຖືຂອງຄຣູນັ້ນ ຍ່ອມພໍໃຈ ເບີກບານ ຊອບໃຈ ເມື່ອເຂົາກ່າວຕິຕຽນພຣະພຸທທ
ພຣະທັມ ຫລືພຣະສົງຂ໌ ກັບໂກດ ບໍ່ພໍໃຈ ບໍ່ຊອບໃຈ ກໍຫລືອອກຈາກລັທທິຂອງຄຣູໃດ ເມື່ອ
ເຂົາກ່າວສັຣເສີນຄຣູນັ້ນ ກ່າວສັຣເສີນຄວາມເຫັນຂອງຄຣູນັ້ນ ຄວາມຊອບໃຈຂອງຄຣູນັ້ນ ຄວາມພໍ
ໃຈຂອງຄຣູນັ້ນ ຄວາມຍຶດຖືຂອງຄຣູນັ້ນ ຍ່ອມໂກດ ບໍ່ພໍໃຈ ບໍ່ຊອບໃຈ ເມື່ອເຂົາກ່າວສັຣເສີນພຣະ
ພຸທທ ພຣະທັມ ຫລືພຣະສົງຂ໌ ຍ່ອມພໍໃຈ ເບີກບານ ຊອບໃຈ ຂໍ້ນີ້ເປັນ ເຄື່ອງສອບສວນໃນຂໍ້ປະຕິ
ບັດທີ່ຊອບໃຫ້ສົງຂ໌ຍິນດີຂອງກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌
ພິກສຸທັງຫລາຍ ກໍກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ຊື່ວ່າເປັນຜູ້ປະຕິບັດໃຫ້ສົງຂ໌ຍິນດີຢ່າງນີ້
ກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ຜູ້ປະຕິບັດໃຫ້ສົງຂ໌ຍິນດີຢ່າງນີ້ ມາແລ້ວ ຄວນໃຫ້ອຸປສົມບົທ

ເຣື່ອງອັນຍເດັຽຣະຖີຍ໌ເປືອຍບໍ່ໂກນຜົມ

ພິກສຸທັງຫລາຍ ຖ້າກຸລບຸຕຣຜູ້ເຄີຍເປັນອັນຍເດັຽຣະຖີຍ໌ເປືອຍກາຍມາ ຄວນແສວງຫາຈີວອນ ຊຶ່ງມີ
ອຸປັຊຍາຍ໌ເປັນເຈົ້າຂອງ ຖ້າຍັງບໍ່ປົງຜົມມາ ສົງຂ໌ຄວນອປໂລກນ໌ເພື່ອປົງຜົມ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໘. ປັຍຈາພາຫວັຕຖຸ

ເຣື່ອງຊດິລບູຊາໄຟ

ພິກສຸທັງຫລາຍ ພວກຊດິລບູຊາໄຟມາແລ້ວ ຄວນໃຫ້ອຸປສົມບົທ ບໍ່ຕ້ອງໃຫ້ປຣິວາສແກ່ພວກທ່ານ
ຂໍ້ນັ້ນເພາະເຫຕຸໃດ ເພາະຊດິລເຫລົ່ານັ້ນເປັນກັມວາທີ ເປັນກີຣິຍວາທີ໑

ເຣື່ອງອັນຍເດັຽຣະຖີຍ໌ສາກຍະ

ພິກສຸທັງຫລາຍ ຖ້າສາກຍະໂດຍກໍາເນີດເຄີຍເປັນອັນຍເດັຽຣະຖີຍ໌ມາ ສາກຍະນັ້ນມາແລ້ວ ຄວນໃຫ້
ອຸປສົມບົທ ບໍ່ຕ້ອງໃຫ້ປຣິວາສແກ່ສາກຍະນັ້ນ ເຮົາໃຫ້ສິທທິພິເສສສ່ວນນີ້ສະເພາະແກ່ຫມູ່ຍາຕ

ອັນຍຕິຕຖິຍປຸພພກຖາ ຈົບ

ພານວາຣທີ ໆ ຈົບ

໔໖. ປັຍຈາພາຫຼວັຕຖຸ

ວ່າດ້ວຍອາພາຫຼ ໕ ຊນິດ

ເຣື້ອງອັນຕຣາຍິກທັມ

[໓໘] ສມັຍນັ້ນ ໃນແຄວ້ນມຄທເກີດໂຣຄຣະບາດຂຶ້ນ ໕ ຊນິດ ຄື (໑) ໂຣຄເຣື້ອນ (໒) ໂຣຄຝີ (໓) ໂຣຄກາກ (໔) ໂຣຄຄ່໒ (໕) ໂຣຄລົມບ້າຫມູ ພວກມະນຸສຍ໌ຖືກໂຣຄ ໕ ຊນິດບຽດບຽນ ພາກັນໄປຫາຫມໍຊີວກໂກມາຣພັຈ ກ່າວວ່າ "ຂໍໂອກາສ ທ່ານຫມໍຊ່ວຍຮັກສາພວກຂ້າພະເຈົ້າດ້ວຍເຖີດ" ຫມໍຊີວກໂກມາຣພັຈກ່າວວ່າ "ທ່ານທັງຫລາຍ ຂະນ້ອຍມີກິຈມາກ ມີງານຕ້ອງທຳມາກ ພຣະເຈົ້າພິມພິສາຣຈອມທັພມຄທຣັຖ ພຣະສນົມແລະພິກສຸສົງຂ໌ມີພຣະພຸດທະເຈົ້າເປັນປຣະມຸຂ ຂະນ້ອຍກໍຕ້ອງພຍາບາລ ຂະນ້ອຍບໍ່ສາມາດຮັກສາໄດ້" ມະນຸສຍ໌ເຫລົ່ານັ້ນກ່າວວ່າ "ທ່ານຫມໍ ຊັພຍ໌ສິນບັຕຍົກໃຫ້ທ່ານທັງຫມົດ ທັງພວກຂ້າພະເຈົ້າຍອມເປັນທາສຂອງທ່ານ ຂໍໂອກາສ ຂໍຄວາມກຣຸນາຮັກສາພວກຂ້າພະເຈົ້າດ້ວຍເຖີດ"

ໝາຍເຫດ :

໑ ຫມາຍເຖິງຜູ້ມີຄວາມເຫັນຢ່າງນີ້ວ່າ "ກັມມີຢູ່ ຜົລຂອງກັມມີຢູ່ " (ວິ. ອ. ໓/໓໘/໕໕)

໒ ໂຣຄຄ່໌ ຄືໂຣຄຫລອດລົມໂປ່ງພອງ ມີເສັ້ນທະແຫ້ງຢູ່ໃນຊ່ອງຫລອດລົມ ເຮັດໃຫ້ມີອາການໄອເຮື້ອຮັງ ຫ້າມຜູ້ທີ່ເປັນໂຣຄນີ້ບວຊເປັນພິກສຸ(ພົຈນານຸກຣົມຣາຊບັນທິຕຍສຖານ ພ. ສ. ໒໕໒໕)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໖. ປັຍຈາພາຫຼວັຕຖຸ

ຫມໍຊີວກໂກມາຣພັຈຕອບວ່າ "ທ່ານທັງຫລາຍ ຂະນ້ອຍມີກິຈມາກ ມີງານຕ້ອງທຳມາກ ພຣະເຈົ້າ ພິມພິສາຣຈອມທັພມຄທຣັຖ ນາງສນົມແລະພິກສຸສົງຂ໌ມີພຣະພຸດທະເຈົ້າເປັນປຣະມຸຂ ຂະນ້ອຍກໍຕ້ອງພຍາບາລ ຂະນ້ອຍບໍ່ສາມາດຮັກສາ (ພວກທ່ານ) ໄດ້" ຂນະນັ້ນ ມະນຸສຍ໌ເຫລົ່ານັ້ນມີຄວາມຄິດດັ່ງນີ້ວ່າ "ພຣະສະມະນະເຊື້ອສາຍສາກຍບຸຕຣເຫລົ່ານີ້ມີລັກສນະນິສັຍດີ ປະພຶດຮຽບຮ້ອຍ ບໍຣິໂພຄອາຫາຣດີ ນອນໃນຫ້ອງມິດຊິດ ຖ້າຢ່າງນັ້ນພວກເຮົາຄວນບັນພະຊາໃນພວກສະມະນະເຊື້ອສາຍສາກຍບຸຕຣ ໃນທີ່ນັ້ນພິກສຸທັງຫລາຍຈັກພຍາບາລແລະຫມໍຊີວກໂກມາຣພັຈຈັກຮັກສາ" ຕໍ່ມາ ຈຶ່ງເຂົ້າໄປຂໍບັນພະຊາ ພິກສຸທັງຫລາຍ ໄດ້ໃຫ້ບັນພະຊາໃຫ້ອຸປສົມບົທ ພວກພິກສຸກໍຕ້ອງພຍາບາລແລະ ຫມໍຊີວກໂກມາຣພັຈກໍຕ້ອງຮັກສາພວກເຂົາ ຄັນຕໍ່ມາ ພິກສຸທັງຫລາຍພຍາບາລພິກສຸໄຂ້ເປັນອັນມາກ ເປັນຜູ້ມາກດ້ວຍ

ການຂໍມາກ ດ້ວຍການອອກປາກຂໍວ່າ "ຈົ່ງໃຫ້ອາຫານສຳລັບພິກຂຸ ຜູ້ເປັນໄຂ້ ຈົ່ງໃຫ້ອາຫານສຳລັບພິກຂຸພະຍາບາລໄຂ້ ຈົ່ງໃຫ້ຢາສຳລັບພິກຂຸຜູ້ເປັນໄຂ້" ແມ່ນຫມໍຊີວົກໂກມານພັຈນິວຮັກສາພິກຂຸໄຂ້ເປັນອັນມາກ ກໍປະຕິບັດຣາຊການບາງຢ່າງບົກພ່ອງ

[໗໒] ຝ່າຍບຸຣຸສຄົນນຶ່ງຖືກໂຣຄ ໕ ຊນິດບຽດບຽນ ກໍເຂົ້າໄປຫາຫມໍຊີວົກໂກມານພັຈຮຽນວ່າ "ຂໍໂອກາສ ທ່ານໝໍຊ່ວຍຮັກສາຜູ້ຂ້າດ້ວຍເຖີດ" ຫມໍຊີວົກໂກມານພັຈກ່າວວ່າ "ທ່ານເອີຍ ຂະນ້ອຍມີກິຈມາກ ມີງານຕ້ອງທຳມາກ ພຣະເຈົ້າພິມພິສານຈອມທັພມຄທຣັຖ ພຣະສນົມແລະພິກຂຸສົງຂ໌ມີພຣະພຸດທະເຈົ້າເປັນປຣະມຸຂ ຂະນ້ອຍກໍຕ້ອງພຍາບາລ ຂະນ້ອຍບໍ່ສາມາດຮັກສາໄດ້"
"ທ່ານໝໍ ຊັພຍ໌ສົມບັຕທັງສິ້ນຍົກໃຫ້ທ່ານທັງຫມົດ ທັງຜູ້ຂ້າຍອມເປັນທາສຂອງທ່ານ ຂໍໂອກາສ ໄປຣດຮັກສາຜູ້ຂ້າດ້ວຍເຖີດ"
"ທ່ານເອີຍ ຂະນ້ອຍມີກິຈມາກ ມີງານຕ້ອງທຳມາກ ພຣະເຈົ້າພິມພິສານຈອມທັພມຄທຣັຖ ນາງສນົມແລະພິກຂຸສົງຂ໌ມີພຣະພຸດທະເຈົ້າເປັນປຣະມຸຂ ຂະນ້ອຍກໍຕ້ອງພຍາບາລ ຂະນ້ອຍບໍ່ສາມາດຮັກສາໄດ້" ຂນະນັ້ນ ບຸຣຸສນັ້ນມີຄວາມຄິດດັ່ງນີ້ວ່າ "ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ມີລັກສນະນິສັຍດີ ປະພຶດຮຽບຮ້ອຍ ບໍຣິໂພຄອາຫານດີ ນອນໃນຫ້ອງມິດຊິດ ຖ້າຢ່າງນັ້ນ ພວກເຮົາຄວນບັນພະຊາໃນພວກສະມະນະເຊື້ອສາຍສາກຍບຸຕຣ ໃນທີ່ນັ້ນພິກຂຸທັງຫລາຍຈັກພຍາບາລແລະຫມໍຊີວົກໂກມານພັຈຈັກຮັກສາ ເຮົາຫາຍໂຣຄກໍຈະສຶກ" ຈຶ່ງເຂົ້າໄປຂໍການບັນພະຊາ ພິກຂຸທັງຫລາຍໄດ້ໃຫ້ບັນພະຊາໃຫ້ອຸປສົມບົທ ພວກພິກຂຸກໍຕ້ອງພຍາບາລແລະຫມໍຊີວົກໂກມານພັຈກໍຕ້ອງຮັກສາ ເຂົາຫາຍໂຣຄແລ້ວກໍສຶກ ຫມໍຊີວົກໂກມານພັຈເຫັນບຸຣຸສນັ້ນສຶກຈຶ່ງຖາມວ່າ "ທ່ານໄດ້ບັນພະຊາໃນຫມູ່ພິກຂຸບໍ່ແມ່ນບໍ" ບຸຣຸສນັ້ນຕອບວ່າ "ແມ່ນແລ້ວ ຂະນ້ອຍ"
"ທ່ານໄດ້ທຳເຊັ່ນນັ້ນເພື່ອຫຍັງ"
ບຸຣຸສນັ້ນໄດ້ບອກເຣື່ອງນັ້ນໃຫ້ຫມໍຊີວົກໂກມານພັຈຊາບ ຫມໍຊີວົກໂກມານພັຈຈຶ່ງຕຳໜິ ປະນາມໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍ ຈຶ່ງໃຫ້ກຸລບຸຕຣຜູ້ຖືກໂຣຄ ໕ ຊນິດບຽດບຽນບັນພະຊາ ລະ" ແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະພາກ ເຖິງທີ່ປະທັບ ຄັນເຖິງແລ້ວ ໄດ້ຖວາຍບັງຄົມພຣະຜູ້ມີພຣະພາກແລ້ວນັ່ງ ນະທີ່ສົມຄວນ ຂາບທູລວ່າ "ຂໍປະທານພຣະໂອກາສ ຂໍພຣະຜູ້ເປັນເຈົ້າທັງຫລາຍບໍ່ຄວນໃຫ້ກຸລບຸຕຣຜູ້ຖືກໂຣຄ ໕ ຊນິດບຽດບຽນບັນພະຊາ ພຣະພຸດທະເຈົ້າຂ້າ"
ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງຊີ້ແຈງໃຫ້ຫມໍຊີວົກໂກມານພັຈເຫັນແຈ້ງ ຊວນໃຫ້ຢາກຮັບໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທຣຣມີກຖາແລ້ວ

ລຳດັບນັ້ນ ຫມໍຊີວົກໂກມາຣພັຈຊຶ່ງພຣະຜູ້ມີພຣະພາກຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາແລ້ວຈຶ່ງລຸກຈາກທີ່ນັ່ງຖວາຍບັງຄົມພຣະຜູ້ມີພຣະພາກ ທຳປຣະທັກສີນ(ວຽນໄປທາງຂວາ)ຈາກໄປ

ຊົງຫ້າມຄົນເປັນໂຣຄຕິດຕໍ່ບັນພະຊາ

ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ກຸລບຸຕຣຜູ້ຖືກໂຣຄ ໕ ຊນິດບຽດບຽນ ບໍ່ຄວນໃຫ້ບັນພະຊາ ຮູບໃດໃຫ້ບັນພະຊາ ຕ້ອງອາບັຕິທຸກກະຕະ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໗. ຣາຊພັຕວັຕຖຸ

໔໗. ຣາຊພັຕວັຕຖຸ

ວ່າດ້ວຍຣາຊພັຕບັນພະຊາ໑

ພຣະເຈົ້າພິມພິສາຣທູລຂໍອນຸຍາຕ

[໙໐] ສມັຍນັ້ນ ເຂຕຊາຍແດນຂອງພຣະເຈົ້າພິມພິສາຣຈອມທັພມຄທຣັຖເກີດຄວາມວຸ່ນວາຍຂຶ້ນທ້າວທ່ານຊົງຮັບສັ່ງເຫລົ່າມຫາອມາຕຍ໌ຜູ້ເປັນແມ່ທັພນາຍກອງວ່າ "ທ່ານທັງຫລາຍຈົ່ງໄປປຣາບເຂຕຊາຍແດນໃຫ້ສງົບ" ເຫລົ່າມຫາອມາຕຍ໌ ຜູ້ເປັນແມ່ທັພນາຍກອງ ທູລຮັບສນອງພຣະກະແສຮັບສັ່ງຂອງພຣະເຈົ້າພິມພິສາຣຈອມທັພມຄທຣັຖ ຂນະນັ້ນ ພວກທຫາຣທີ່ມີຊື່ສຽງຕ່າງມີຄວາມປຣິວິຕົກວ່າພວກເຮົາຍິນດີໃນການຣົບ ຈະໄປທຳບາບກັມ ແລະຈະປະສົບສິ່ງບໍ່ແມ່ນບຸນເປັນອັນມາກ ດ້ວຍອຸບາຍຢ່າງໃດຫນໍ ພວກເຮົາຈະຄວນເວັ້ນຈາກກັມຊົ່ວ ແລະທຳກັມດີໄດ້ລະ ທຫາຣເຫລົ່ານັ້ນກໍມີຄວາມຄິດວ່າ "ພຣະສມະນະເຊື້ອສາຍສາກຍບຸຕຣເຫລົ່ານີ້ປະພຶດທັມ ປະພຶດສງົບ ປະພຶດພຣົມຈັນຍ໌ ກ່າວອາຈາສັຕຍ໌ມີສີລ ມີກັລຍານທັມ ຖ້າພວກເຮົາຈະຄວນບັນພະຊາໃນພວກສມະນະເຊື້ອສາຍພຣະສາກຍບຸຕຣແລ້ວນີ້ດ້ວຍອຸບາຍຢ່າງນີ້ ພວກເຮົາຈະຄວນເວັ້ນຈາກກັມຊົ່ວແລະທຳກັມດີໄດ້" ຈຶ່ງພາກັນເຂົ້າໄປຂໍການບັນພະຊາ ພິກສຸທັງຫລາຍ ໄດ້ໃຫ້ບັນພະຊາໃຫ້ອຸປສົມບົທ ເຫລົ່າມຫາອມາຕຍ໌ຜູ້ເປັນແມ່ທັພນາຍກອງຖາມພວກຣາຊພັຕວ່າ "ທຫາຣຜູ້ມີຊື່ນີ້ແລະມີຊື່ນີ້ຫາຍໄປໃສ"

ພວກຣາຊພັຕຮຽນວ່າ "ທຫາຣຜູ້ມີຊື່ນີ້ແລະມີຊື່ນີ້ໄປບັນພະຊາໃນຫມູ່ພິກສຸແລ້ວ ຂະນ້ອຍ"

ເຫລົ່າມຫາອມາຕຍ໌ຜູ້ເປັນແມ່ທັພນາຍກອງ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດ

ພຣະສົມະນະບຸຊະເຊື້ອສາຍສາກຍບຸຕຣທັງຫລາຍຈຶ່ງໄດ້ໃຫ້ຣາຊພັຕບັນພະຊາລະ” ແລ້ວນຳເຣື້ອງນີ້ໄປ ຂາບທູລພຣະເຈົ້າພິມພິສາຣຈອມທັພມຄທຣັຖໃຫ້ຊົງຊາບ

ໝາຍເຫດ :

໑ ຣາຊພັຕ ຫມາຍເຖິງອມາຕຍ໌ ມຫາອມາຕຍ໌ ຫລືຄົນຮັບໃຊ້ໄດ້ຮັບຖານັນດຣບາງຢ່າງແລ້ວຫລື ຍັງບໍ່ໄດ້ຮັບ ເປັນຜູ້ທີ່ພຣະຣາຊາຊົງລ້ຽງດູດ້ວຍເຂົ້າແລະເງິນເດືອນ (ວິ. ອ. ໓/໙໐/໕໗-໕໘)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໗. ຣາຊພຕວັຕຖຸ

ເຣື້ອງພຣະເຈົ້າພິມພິສາຣທູລຂໍຫ້າມໃຫ້ຣາຊພັຕບັນພະຊາ

ລຳດັບນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖໄດ້ຕຣັສຖາມຄນະມຫາອມາຕຍ໌ຜູ້ພິພາກສາວ່າ “ທ່ານ ພິກສຸຮູບໃດ ໃຫ້ຜູ້ທີ່ເປັນຣາຊພັຕບັນພະຊາ ພິກສຸຮູບນັ້ນຕ້ອງໂທສສະຖານໃດ” ຄນະມຫາອມາຕຍ໌ຜູ້ ພິພາກສາຂາບບັງຄົມທູລວ່າ “ຂໍເດຊະ ພຣະອຸປັຊຢາຍ໌ຕ້ອງຖືກຕັດສີສະ ພຣະອນຸສາວນາຈາຣຍ໌ຕ້ອງຖື ກດຶງລີ້ນ ພຣະຄນປູຣກະ໑ຕ້ອງຖືກຫັກກະດູກຂ້າງໄປແຖບນຶ່ງ ຂະນ້ອຍ”

ຕໍ່ມາ ພຣະເຈົ້າພິມພິສາຣຈອມທັພມຄທຣັຖ ໄດ້ສເດັຈໄປເຝົ້າພຣະຜູ້ມີພຣະພາກເຖິງທີ່ປະທັບ ຄັນເຖິງ ແລ້ວ ໄດ້ຖວາຍບັງຄົມພຣະຜູ້ມີພຣະພາກແລ້ວປະທັບນັ່ງ ນະທີ່ສົມຄວຣ ພຣະເຈົ້າພິມພິສາຣຈອມທັພ ມຄທຣັຖ ຜູ້ປະທັບນັ່ງ ນະທີ່ສົມຄວຣແລ້ວ ໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ “ພຣະຣາຊາທັງ ຫລາຍຜູ້ບໍ່ຊົງສັດທາ ບໍ່ເຫລື້ອມໃສມີຢູ່ ພຣະຣາຊາເຫລົ່ານັ້ນ ຈະຄວນຣົບກວນເຫລົ່າພິກສຸດ້ວຍເຫຕຸ ພຽງເລັກນ້ອຍໄດ້ ຂໍປະທານພຣະວໂອກາສ ຂໍພຣະຜູ້ເປັນເຈົ້າທັງຫລາຍ ບໍ່ຄວນໃຫ້ຣາຊພັຕບັນພະຊາ ພຣະພຸດທະເຈົ້າຂ້າ” ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊີ້ແຈງໃຫ້ພຣະເຈົ້າພິມພິສາຣຈອມທັພມຄທ ຣັຖເຫັນແຈ້ງ ຊວນໃຫ້ຢາກຮັບໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດ ຊື່ນເບີກບານດ້ວຍທັມມີກຖາ ຄັນພຣະເຈົ້າພິມພິສາຣຈອມທັພມຄທຣັຖ ຜູ້ຊຶ່ງພຣະຜູ້ມີພຣະພາກຊົງ ຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈ ໃຫ້ສົດຊື່ນເບີກບານດ້ວຍທັມມີກຖາແລ້ວ ຖວາຍອະພິວາທພຣະຜູ້ມີພຣະພາກແລ້ວກະທຳປຣະທັກສິນ (ວຽນໄປທາງຂວາ)ສເດັຈຈາກໄປ ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເຣື້ອງນີ້ ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ຜູ້ເປັນຣາຊພັຕພິກສຸບໍ່ຄວນໃຫ້ ບັນພະຊາ ຮູບໃດໃຫ້ບັນພະຊາ ຕ້ອງອາບັຕິທຸກກະຕະ”

ໝາຍເຫດ :
໑ ຄນຸປູຣກະ ຄື ພິກສຸທີ່ເຮັດໃຫ້ອົງຄ໌ປະຊຸມຄົບຈຳນວນ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນຫຼກະ] ໔໙. ກາຣເພຼຫກໂຈຣວັຕຖຸ

໔໗. ອັງຄຸລິມາລໂຈຣວັຕຖຸ
ວ່າດ້ວຍໂຈຣອົງຄຸລິມາລບັນພະຊາ

[໙໑] ສຸມັຍນັ້ນ ໂຈຣອົງຄຸລິມາລໄດ້ບັນພະຊາໃນຫມູ່ພິກສຸ ຊາວບ້ານເຫັນເຂົ້າຕ່າງຫວາດຢ້ານແດ່ ຕົກໃຈແດ່ ຫນີໄປແດ່ ໄປເສັ້ງທາງອື່ນແດ່ ຫລົບຫນ້າໄປແດ່ ປິດປະຕູແດ່ ຄົນທັງຫລາຍ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສຸະມະນະເຊື້ອສາຍສາກຍບຸຕຣທັງຫລາຍຈຶ່ງໃຫ້ໂຈຣທີ່ມີຊື່ໂດ່ງດັ່ງບັນພະຊາລະ"

ເຣື້ອງຫ້າມໂຈຣມີຊື່ສຽງບັນພະຊາ
ພິກສຸທັງຫລາຍໄດ້ຍິນຄົນເຫລົ່ານັ້ນຕຳຫນິ ປະນາມ ໂພນທະນາ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ໂຈຣທີ່ມີຊື່ອໂດ່ງດັ່ງ ບໍ່ຄວນໃຫ້ບັນພະຊາຣູບໃດໃຫ້ບັນພະຊາ ຕ້ອງອາບັຕິທຸກກະຕະ"

໔໙. ກາຣເພຼຫກໂຈຣວັຕຖຸ
ວ່າດ້ວຍໂຈຣແຫກເຮືອນຈຳບັນພະຊາ

[໙໔] ສຸມັຍນັ້ນ ພຣະເຈົ້າພິມພິສາຣຈອມທັພມຄຫຼຣັຖຊົງມີພຣະບໍຣົມຣາຊານຸຍາຕໄວ້ວ່າ "ກຸລບຸຕຣເຫລົ່າໃດໄດ້ບັນພະຊາໃນພວກພຣະສຸະມະນະເຊື້ອສາຍພຣະສາກຍບຸຕຣ ກຸລບຸຕຣເຫລົ່ານັ້ນໃຜໆຈະເຮັດຫຍັງບໍ່ໄດ້ ພຣະທັມອັນພຣະຜູ້ມີພຣະພາກຕຣັສໄວ້ດີແລ້ວ ຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ" ຄັ້ງນັ້ນ ບຸຣຸສຄົນນຶ່ງທຳໂຈຣກັມແລ້ວຖືກເຈົ້າຫນ້າທີ່ຈອງຈຳໄວ້ໃນເຮືອນຈຳ ເຂົາແຫກເຮືອນຈຳຫນີໄປບັນພະຊາໃນຫມູ່ພິກສຸ ມະນຸສຍ໌ທັງຫລາຍພົບເຂົ້າແລ້ວຈຶ່ງກ່າວ ຢ່າງນີ້ວ່າ "ພິກສຸຣູບນີ້ຄືໂຈຣແຫກເຮືອນຈຳຄົນນັ້ນ ເອົາເຖາະ ພວກເຮົາຈະຈັບພິກສຸນັ້ນໄປ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທຸກະ] ໔໐. ລິຂິຕກໂຈກວັຕຖຸ

ມະນຸສຍ໌ບາງພວກກ່າວຢ່າງນີ້ວ່າ "ທ່ານທັງຫລາຍຢ່າໄດ້ກ່າວຢ່າງນີ້ ພຣະເຈົ້າພິມພິສາຣຈອມທັພມຄທຣັຖໄດ້ຊົງມີພຣະບໍຣົມຣາຊານຸຍາຕໄວ້ວ່າ ກຸລບຸຕຣເຫລົ່າໃດໄດ້ບັນພະຊາໃນພວກສະມະນະເຊື້ອສາຍສາກຍບຸຕຣ ກຸລບຸຕຣເຫລົ່ານັ້ນໃຜໆຈະເຮັດຫຍັງບໍ່ໄດ້ ພຣະທັມອັນພຣະຜູ້ມີພຣະພາກຕຣັສໄວ້ດີແລ້ວ ຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ"
ມະນຸສຍ໌ທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະສະມະນະເຊື້ອສາຍສາກຍບຸຕຣເຫລົ່ານີ້ບໍ່ແມ່ນຜູ້ຫລົບຫນີພັຍ ໃຜໆຈະເຮັດຫຍັງບໍ່ໄດ້ ຈັ່ງໃດພຣະສະມະນະເຊື້ອສາຍສາກຍບຸຕຣທັງຫລາຍຈຶ່ງໃຫ້ໂຈຣແຫກເຮືອນຈຳບັນພະຊາລະ" ພິກສຸທັງຫລາຍຈຶ່ງນຳເອົາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ໂຈຣຜູ້ແຫກເຮືອນຈຳບໍ່ຄວນໃຫ້ບັນພະຊາຮູບໃດໃຫ້ບັນພະຊາ ຕ້ອງອາບັຕິທຸກກະຕະ"

໔໐. ລິຂິຕກໂຈຣວັຕຖຸ

ວ່າດ້ວຍໂຈຣຖືກອອກຫມາຍຈັບບັນພະຊາ

[໙໔] ສະມັຍນັ້ນ ບຸຣຸສຄົນນຶ່ງທຳໂຈຣກັມແລ້ວໄດ້ຫນີໄປບັນພະຊາໃນຫມູ່ພິກສຸ ແລະເຂົາຖືກເຈົ້າຫນ້າທີ່ອອກຫມາຍຈັບທີ່ວຣາຊອານາຈັກວ່າ "ພົບເຂົ້າໃນທີ່ໃດ ຄວນຂ້າເສັຽໃນທີ່ນັ້ນ" ມະນຸສຍ໌ທັງຫລາຍພົບເຂົ້າຈຶ່ງກ່າວຢ່າງນີ້ວ່າ "ພິກສຸຮູບນີ້ຄືໂຈຣຜູ້ຖືກອອກຫມາຍຈັບຄົນນັ້ນ ເອົາເຖາະ ພວກເຮົາຈະຂ້າພິກສຸນັ້ນເສັຽ" ມະນຸສຍ໌ບາງພວກກ່າວຢ່າງນີ້ວ່າ "ທ່ານທັງຫລາຍຢ່າໄດ້ກ່າວຢ່າງນີ້ ພຣະເຈົ້າພິມພິສາຣຈອມທັພມຄທຣັຖໄດ້ຊົງມີພຣະບໍຣົມຣາຊານຸຍາຕໄວ້ວ່າ 'ກຸລບຸຕຣເຫລົ່າໃດໄດ້ ບັນພະຊາໃນພວກສະມະນະເຊື້ອສາຍສາກຍບຸຕຣ ກຸລບຸຕຣເຫລົ່ານັ້ນໃຜໆຈະເຮັດຫຍັງບໍ່ໄດ້ ພຣະທັມອັນພຣະຜູ້ມີພຣະພາກຕຣັສໄວ້ດີແລ້ວ ຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທຸກະ] ໔໔. ລັກຂນາຫຕວັຕຖຸ

ມະນຸສຍ໌ທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ປອດພັຍ ໃຜໆຈະເຮັດຫຍັງບໍ່ໄດ້ ຈັ່ງໃດພຣະສະມະນະເຊື້ອສາຍພຣະສາກຍບຸຕຣຈຶ່ງໃຫ້ໂຈຣຜູ້ຖືກອອກຫມາຍຈັບບັນພະຊາລະ" ພິກສຸທັງຫລາຍຈຶ່ງນຳເອົາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົ

ໃຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ໂຈຣຜູ້ຖືກອອກໝາຍຈັບບໍ່ຄວນໃຫ້ບັນພະຊາ ຮູບໃດໃຫ້ບັນພະຊາ ຕ້ອງອາບັດທຸກກະຕະ”

໓໑. ກສາຫຕວັຕຖຸ

ວ່າດ້ວຍບຸຣຸສຜູ້ຖືກຂ້ຽນດ້ວຍຫວາຍບັນພະຊາ

[໙໔] ສະໄໝນັ້ນ ບຸຣຸສຄົນນຶ່ງຖືກລງອາຍາຂ້ຽນດ້ວຍຫວາຍ ໄດ້ບັນພະຊາໃນໝູ່ພິກສຸ ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພຣະສະມະນະເຊື້ອສາຍພຣະສາກຍບຸຕຣທັງຫລາຍຈຶ່ງໃຫ້ບຸຣຸສຜູ້ຖືກລົງອາຍາຂ້ຽນດ້ວຍຫວາຍບັນພະຊາລະ” ພິກສຸທັງຫລາຍຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ບຸຣຸສຜູ້ຖືກລງອາຍາຂ້ຽນດ້ວຍຫວາຍ ບໍ່ຄວນໃຫ້ບັນພະຊາ ຮູບໃດໃຫ້ບັນພະຊາ ຕ້ອງອາບັດທຸກກະຕະ”

໓໔. ລັກຂນາຫຕວັຕຖຸ

ວ່າດ້ວຍບຸຣຸສຖືກສັກໝາຍໂທສບັນພະຊາ

[໙໕] ສະໄໝນັ້ນ ບຸຣຸສຄົນນຶ່ງຖືກລງອາຍາສັກໝາຍໂທສໄດ້ບັນພະຊາໃນໝູ່ພິກສຸ ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພຣະສະມະນະເຊື້ອສາຍພຣະສາກຍບຸຕຣທັງຫລາຍຈຶ່ງໃຫ້ບຸຣຸສຜູ້ຖືກລງອາຍາສັກໝາຍໂທສບັນພະຊາລະ” ພິກສຸທັງຫລາຍຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໓໓. ອິນາຍິກວັຕຖຸ

ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ບຸຣຸສຜູ້ຖືກລງອາຍາສັກໝາຍໂທສບໍ່ຄວນໃຫ້ບັນພະຊາ ຮູບໃດໃຫ້ບັນພະຊາ ຕ້ອງອາບັດທຸກກະຕະ”

໓໓. ອິນາຍິກວັຕຖຸ

ວ່າດ້ວຍລູກໜີ້ບັນພະຊາ

[໙໖] ສະໄໝນັ້ນ ຊາຍຜູ້ເປັນລູກໜີ້ຄົນນຶ່ງໄດ້ໜີໄປບັນພະຊາໃນໝູ່ພິກສຸ ພວກເຈົ້າຊັພຍ໌ພົບເຂົ້າຈຶ່ງກ່າວຢ່າງນີ້ວ່າ “ພິກສຸຮູບນີ້ຄືລູກໜີ້ຂອງພວກເຮົາຄົນນັ້ນ ເອົາເຖາະ ພວກເຮົາຈັ່ງຈັບພິກສຸນັ້ນໄວ້”

ມະນຸສ຺ຍ໌ບາງພວກກ່າວຢ໋າງນີ້ວ່າ "ທ່ານທັງຫລາຍຢ່າໄດ້ກ່າວຢ່າງນີ້ ພຣະເຈົ້າພິມພິສາຣຈອມທັພມຄຫຼຣັຖໄດ້ຊົງມີພຣະບໍຣົມຣາຊານຸຍາຕໄວ້ວ່າ 'ກຸລບຸຕຣເຫລົ່າໃດໄດ້ບັນພະຊາໃນພວກພຣະສະມະນະເຊື້ອສາຍພຣະສາກຍບຸຕຣ ກຸລບຸຕຣເຫລົ່ານັ້ນໃຜໆຈະເຮັດຫຍັງບໍ່ໄດ້ ພຣະທັມອັນພຣະຜູ້ມີພຣະພາກຕຣັສໄວ້ດີແລ້ວ ຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດ ທຸກຂ໌ໂດຍຊອບເຖີດ" ມະນຸສ຺ຍ໌ທັງຫລາຍພາກັນຕຳໜິປະນາມ ໂພນທະນາວ່າ "ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ປອດພັຍ ໃຜໆຈະເຮັດຫຍັງບໍ່ໄດ້ ຈັ່ງໃດພຣະສະມະນະເຊື້ອສາຍພຣະສາກຍບຸຕຣທັງຫລາຍຈຶ່ງໃຫ້ຄົນມີໜີ້ບັນພະຊາລະ" ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ຄົນມີໜີ້ບໍ່ຄວນໃຫ້ບັນພະຊາ ຮູບໃດໃຫ້ບັນພະຊາ ຕ້ອງອາບັຕິທຸກກະຕະ"

ໝາຍເຫດ :

໑ ໜີ້ ໃນທີ່ນີ້ໝາຍເອົາທັງໜີ້ທີ່ບຸຄຄົລນັ້ນໆຍືມມາເອງແລະໜີ້ທີ່ບິດາແລະປູ່ຂອງບຸຄຄົລນັ້ນຍືມໄວ້ກ່ອນແລ້ວ ຈະໃຫ້ບຸຄຄົລຜູ້ມີໜີ້ເຊັ່ນນີ້ບັນພະຊາບໍ່ຄວຣ ແຕ່ຖ້າມີຍາຕແລະຄົນມີສາຍສັມພັນທ໌ຮັບພາຣະໜີ້ແທນ ຈະໃຫ້ບຸຄຄົລເຊັ່ນນີ້ບັນພະຊາ ຄວຣຢູ່ (ວິ. ອ. ໓/໙໗/໗໑)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໓໕. ກັມມາຣພັນທວັຕຖຸ

໓໔. ທາສວັຕຖຸ

ວ່າດ້ວຍທາສບັນພະຊາ

[໙໗] ສມັຍນັ້ນ ທາສຄົນນຶ່ງໄດ້ໜີໄປບັນພະຊາໃນໝູ່ພິກສຸ ພວກເຈົ້ານາຍພົບເຂົ້າຈຶ່ງກ່າວຢ່າງນີ້ວ່າ "ພິກສຸຮູບນີ້ຄືທາສຂອງພວກເຮົາຄົນນັ້ນ ເອົາເຖາະ ພວກເຮົາຈົ່ງຈັບພິກສຸນັ້ນໄວ້" ມະນຸສ຺ຍ໌ບາງພວກກ່າວຢ່າງນີ້ວ່າ "ທ່ານທັງຫລາຍຢ່າໄດ້ກ່າວຢ່າງນີ້ ເພາະພຣະເຈົ້າພິມພິສາຣຈອມທັພມຄທຣັຖໄດ້ຊົງມີພຣະບໍຣົມຣາຊານຸຍາຕໄວ້ວ່າ 'ກຸລບຸຕຣເຫລົ່າໃດໄດ້ບັນພະຊາໃນພວກສະມະນະເຊື້ອສາຍພຣະສາກຍບຸຕຣ ກຸລບຸຕຣເຫລົ່ານັ້ນໃຜໆຈະເຮັດຫຍັງບໍ່ໄດ້ ພຣະທັມອັນພຣະຜູ້ມີພຣະພາກຕຣັສໄວ້ດີແລ້ວ ຈົ່ງປະພຶດພຣົມຈັນຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ" ມະນຸສ຺ຍ໌ທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ "ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ປອດພັຍ ໃຜໆຈະເຮັດຫຍັງ ບໍ່ໄດ້ ຈັ່ງໃດພຣະສະມະນະເຊື້ອສາຍພຣະສາກຍບຸຕຣທັງຫລາຍຈຶ່ງໃຫ້ທາສບັນພະຊາລະ" ພິກສຸທັງ ຫລາຍ

ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ຄົນເປັນທາສບໍ່ຄວນໃຫ້ບັນພະຊາ ຮູບໃດໃຫ້ບັນພະຊາ ຕ້ອງອາບັຕິທຸກກະຕະ"

໓໕. ກັມມາຣພັນທວັຕຖຸ

ວ່າດ້ວຍບຸຕຣຊ່າງທອງຜົມຈຸກຫ້າແຫຍມບັນພະຊາ

[໙໗] ສະໄໝນັ້ນ ບຸຕຣຊ່າງທອງສີສະໂລ້ນຄົນນຶ່ງຜິດຖຽງກັບມາຣດາບິດາ ໄດ້ໄປຍັງອາຮາມບັນພະຊາ ໃນໝູ່ພິກສຸ ຕໍ່ມາ ມາຣດາບິດາໄດ້ອອກຕາມຫາບຸຕຣ ໄປເຖິງອາຮາມຖາມພິກສຸທັງຫລາຍວ່າ "ທ່ານ ໄດ້ພົບເດັກຊາຍມີຮູບຮ່າງເຊັ່ນນີ້ແດ່ບໍ່ ຂະນ້ອຍ" ພວກພິກສຸທີ່ບໍ່ຮູ້ເລີຍກໍກ່າວວ່າ "ພວກອາຕມາບໍ່ຮູ້" ພວກພິກສຸທີ່ບໍ່ເຫັນເລີຍກໍກ່າວວ່າ "ພວກອາຕມາບໍ່ເຫັນ" ຂະນະມາຣດາບິດາຕາມຫາໄດ້ພົບບຸຕຣບັນພະ ຊາໃນໝູ່ພິກສຸຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ "ພຣະສະມະນະເຊື້ອສາຍພຣະສາກຍບຸຕຣ ເຫລົ່ານີ້ບໍ່ມີຄວາມລະອາຍ ທຸສີລຊອບເວົ້າເທັຈ ຮູ້ຢູ່ແທ້ໆກໍກ່າວວ່າ ພວກອາຕມາບໍ່ຮູ້ ເຫັນຢູ່ຊັດໆ ກໍກ່າວວ່າພວກອາຕມາບໍ່ເຫັນ ເດັກນີ້ໄດ້ບັນພະຊາໃນໝູ່ພິກສຸເສັຽແລ້ວ" ພິກສຸທັງຫລາຍໄດ້ຍິນ ມາຣດາບິດາຂອງບຸຕຣຊ່າງທອງຜົມຈຸກຕຳໜິ ປະນາມໂພນທະນາ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີ ພຣະພາກໃຫ້ຊົງຊາບພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ອປໂລກນ໌ ໑ຕໍ່ສົງຂ໌ເພື່ອກາຣປົງຜົມ"

໓໖. ອຸປາລິທາຣົກວັຕຖຸ໔

ວ່າດ້ວຍເດັກຊາຍອຸບາລີບັນພະຊາ

[໙໙] ສະໄໝນັ້ນ ໃນກຸງຣາຊຄຶຫ໌ມີເດັກຊາຍຜູ້ເປັນເພື່ອນກັນ ໑໗ ຄົນ ເດັກຊາຍອຸບາລີເປັນ ຫົວໜ້າຂອງເດັກເຫລົ່ານັ້ນ ຄັ້ງນັ້ນ ມາຣດາບິດາຂອງເດັກຊາຍອຸບາລີໄດ້ປຶກສາກັນດັ່ງນີ້ວ່າ "ເມື່ອ ພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍ ແລະບໍ່ລຳບາກດ້ວຍວິທີໃດໜໍ່" ລຳດັບນັ້ນມາຣດາ ບິດາຂອງເດັກຊາຍອຸບາລີໄດ້ປຶກສາກັນອີກວ່າ "ຖ້າເຈົ້າອຸບາລີຮຽນຂຽນໜັງສື ດ້ວຍວິທີຢ່າງນີ້ ເມື່ອ ພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍ ແລະບໍ່ລຳບາກ" ແຕ່ກໍວິຕົກໄປວ່າ "ຖ້າເຈົ້າອຸ ບາລີຮຽນຂຽນໜັງສື ນິ້ວມືຈະຊ້ຳ ຖ້າເຈົ້າອຸບາລີຮຽນວິຊາຄຳນວນ ດ້ວຍວິທີຢ່າງນີ້ ເມື່ອພວກເຮົາ ລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍ ແລະບໍ່ລຳບາກ" ແລະວິຕົກອີກວ່າ "ຖ້າເຈົ້າອຸບາລີຈັກຮຽນ ວິຊາຄຳນວນກໍຈະແໜ້ນໜ້າເອິກ ຖ້າເຈົ້າອຸບາລີຮຽນວິຊາກ່ຽວກັບກາຣເງິນ ດ້ວຍວິທີຢ່າງນີ້ ເມື່ອ ພວກເຮົາລ່ວງລັບໄປ ເຈົ້າອຸບາລີ ຈະຢູ່ສຸຂສະບາຍ ແລະບໍ່ລຳບາກ" ແລ້ວກໍວິຕົກ

ໝາຍເຫດ :

໑ ອປໂລກນ໌ ຫມາຍເຖິງການບອກກ່າວແກ່ທີ່ປະຊຸມເພື່ອໃຫ້ຮັບຊາບຮ່ວມກັນ ຫລືການສອບ ຖາມຂໍ ຄວາມເຫັນຊອບຮ່ວມກັນໃນກິຈຂອງສົງຂ໌ເຊັ່ນສອບຖາມການປົງຜົມ ການອຸປສົມບົທ ການບັນພະຊາ (ວິ. ອ. ໓/ລ໗-ລ/ຝ໕)

໔ ວິ. ມຫາ. (ແປ) ໔/໔໐໔/໕໑໓

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໓ຝ. ອຸປາລິທາຣົກວັຕຖຸ

ອີກວ່າ "ຖ້າເຈົ້າອຸບາລິຮຽນວິຊາກ່ຽວກັບການເງິນ ນັຍນ໌ຕາເຂົາຈະປວດ ພຣະສະມະນະເຊື້ອສາຍພຣະ ສາກຍບຸຕຣເຫລົ່ານີ້ມີລັກສນະນິສັຍດີ ປະພຶດຮຽບຮ້ອຍ ບໍຣິໂພຄອາຫານດີ ນອນໃນຫ້ອງມິດຊິດ ຖ້າ ເຈົ້າອຸບາລິໄດ້ບວຊໃນສຳນັກພຣະສະມະນະເຊື້ອສາຍພຣະສາກຍບຸຕຣດ້ວຍວິທີຢ່າງນີ້ ເມື່ອພວກເຮົາ ລ່ວງລັບໄປ ເຈົ້າອຸບາລິຈະຢູ່ສຸຂສະບາຍ ແລະບໍ່ລຳບາກ"

ເດັກຊາຍອຸບາລິອອກບວຊ

ເດັກຊາຍອຸບາລິໄດ້ຍິນຄຳສົນທນາຂອງມາຣດາບິດາ ຄັນແລ້ວເດັກຊາຍອຸບາລິຈຶ່ງໄດ້ໄປຫາພວກເດັກໆ ເຖິງທີ່ພັກ ຄັນເຖິງແລ້ວ ໄດ້ກ່າວກັບພວກເດັກໆເຫລົ່ານັ້ນ ດັ່ງນີ້ວ່າ "ເພື່ອນທັງຫລາຍ ມາເຖີດ ພວກເຮົາຈະໄປບວຊໃນສຳນັກພຣະສະມະນະເຊື້ອສາຍສາກຍບຸຕຣ" ເດັກເຫລົ່ານັ້ນກ່າວວ່າ "ເພື່ອນເອີຍ ຖ້າເຈົ້າບວຊ ພວກເຮົາກໍຈະບວຊເຊັ່ນກັນ" ຄັນແລ້ວເດັກໆເຫລົ່ານັ້ນ ຕ່າງຄົນຕ່າງກໍເຂົ້າ ໄປຫາມາຣດາບິດາຂອງຕົນ ແລ້ວໄດ້ກ່າວຂໍອນຸຍາຕດັ່ງນີ້ວ່າ "ພໍ່ແມ່ໂປຣດອນຸຍາຕໃຫ້ພວກລູກໆອອກ ຈາກເຮືອນໄປບວຊເປັນບັພຊິຕເຖີດ" ມາຣດາບິດາຂອງເດັກເຫລົ່ານັ້ນອນຸຍາຕດ້ວຍຄິດວ່າ "ເດັກພວກ ນີ້ຕ່າງພ້ອມໃຈມີຄວາມປຣາຖນາສິ່ງທີ່ດີງາມທຸກຄົນ" ພວກເດັກເຫລົ່ານັ້ນຈຶ່ງເຂົ້າໄປຫາພິກສຸທັງ ຫລາຍຂໍບັນພະຊາ ພິກສຸທັງຫລາຍໃຫ້ເດັກເຫລົ່ານັ້ນບັນພະຊາອຸປສົມບົທແລ້ວ

ຄັນເວລາໃກ້ຮຸ່ງແຫ່ງຣາຕຣີ ພິກສຸໃຫມ່ເຫລົ່ານັ້ນລຸກຂຶ້ນຮ້ອງໄຫ້ວ່າ "ທ່ານທັງຫລາຍ ໂປຣດໃຫ້ ເຂົ້າປຽກ ໂປຣດໃຫ້ເຂົ້າສວຍ ໂປຣດໃຫ້ຂອງຄ້ຽວ" ພິກສຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ຖ້າໃຫ້ສວ່າງເສັຽກ່ອນ ຖ້າມີເຂົ້າປຽກພວກທ່ານຈະໄດ້ສັນ ຖ້າມີເຂົ້າສວຍ ພວກທ່ານຈະໄດ້ສັນ ຖ້າມີ ຂອງຄ້ຽວ ພວກທ່ານຈະໄດ້ຄ້ຽວ ແຕ່ຖ້າເຂົ້າປຽກເຂົ້າສວຍຫລືຂອງຄ້ຽວບໍ່ມີ ພວກທ່ານຕ້ອງທຽວ ບິນທບາຕມາສັນ" ພິກສຸໃຫມ່ເຫລົ່ານັ້ນອັນພິກສຸທັງຫລາຍກ່າວຢູ່ຢ່າງນີ້ ກໍຍັງພາກັນຮ້ອງໄຫ້ວ່າ

"ທ່ານທັງຫລາຍໂປຣດໃຫ້ເຂົ້າປຽກ ໂປຣດໃຫ້ເຂົ້າສວຍ ໂປຣດໃຫ້ຂອງຄ້ຽວເຖີດ" ພາກັນຖ່າຍອຸຈຈາຣະແດ່ ຖ່າຍປັສສາວະແດ່ ຣົດເສນາສນະ ພຣະຜູ້ມີພຣະພາກຊົງຕື່ນບັນທົມເວລາໃກ້ຮຸ່ງແຫ່ງຣາຕຣີ ໄດ້ຊົງສດັບສຽງເດັກ ຄັນໄດ້ຊົງສດັບແລ້ວຈຶ່ງຕຣັສກັບທ່ານພຣະອານົນທ໌ວ່າ "ອານົນທ໌ ສຽງເດັກຮ້ອງໄຫ້ເພາະເຫຕຸໃດຫລື" ເທື່ອນັ້ນ ທ່ານພຣະອານົນທ໌ໄດ້ຂາບທູລເຣື້ອງນັ້ນໃຫ້ພຣະຜູ້ມີພຣະພາກຊົງຊາບ

ເຣື້ອງຊົງຫ້າມກຸລບຸຕຣອາຍຸຫນ້ອຍກວ່າ ໒໐ ປີອຸປສົມບົທ

ລຳດັບນັ້ນ ພຣະຜູ້ມີພຣະພາກຣັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກພິກສຸຮູ້ຢູ່ ກໍຍັງໃຫ້ບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີອຸປສົມບົທແມ່ນແທ້ບໍ່" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກພຸດທະເຈົ້າຊົງຕຳຫນິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຮູ້ຢູ່ແຕ່ກໍຍັງໃຫ້ບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີອຸປສົມບົທລະ ພິກສຸທັງຫລາຍ ບຸຄຄົລຜູ້ມີອາຍຸຫນ້ອຍກວ່າ ໒໐ ປີຍັງບໍ່ອົດທົນ ບໍ່ອົດກັ້ນຕໍ່ຄວາມເຢັນ ຄວາມຮ້ອນ ຄວາມຫິວ ສັມຜັສຈາກເຫລືອບ ຍຸງ ລົມ ແດດ ສັຕວ໌ເລືອຄານ ຄຳກ່າວຮ້າຍ ຄຳທີ່ຟັງແລ້ວບໍ່ດີ ຄວາມຮູ້ສຶກທາງກາຍທີ່ເກີດຂຶ້ນເປັນທຸກຂ໌ແສນສາຫັສ ຣຸນແຮງ ເຜັດຮ້ອນ ບໍ່ນ່າຍິນດີ ບໍ່ຫນ້າພໍໃຈ ເກືອບຈະສ່ຽງຊີວິຕ ພິກສຸທັງຫລາຍ ບຸຄຄົລຜູ້ມີອາຍຸຄົບ ໒໐ ປີ ຈຶ່ງຈະອົດທົນ ອົດກັ້ນຕໍ່ຄວາມເຢັນ ຄວາມຮ້ອນ ຄວາມຫິວ ຄວາມຫິວ ສັມຜັສຈາກເຫລືອບ ຍຸງ ລົມ ແດດ ສັຕວ໌ເລືອຄານ ຄຳກ່າວຮ້າຍ ຄຳທີ່ຟັງແລ້ວບໍ່ດີ ຄວາມຮູ້ສຶກທາງກາຍທີ່ເກີດຂຶ້ນເປັນທຸກຂ໌ແສນສາຫັສ ຣຸນແຮງ ເຜັດຮ້ອນ ບໍ່ນ່າຍິນດີ ບໍ່ຫນ້າພໍໃຈ ແທບຈະສ່ຽງຊີວິຕ ພິກສຸທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນແລ້ວໄດ້ຊົງສະແດງທັມມີກຖາແລ້ວຣັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ພິກສຸຮູ້ຢູ່ບໍ່ຄວນໃຫ້ບຸຄຄົລຜູ້ມີອາຍຸຫນ້ອຍກວ່າ ໒໐ ປີ ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຄວນປັບອາບັຕິຕາມທັມ໑"

ໝາຍເຫດ :

໑ ຕາມທັມ ຄື ຕາມຄວາມຜິດ,ຕາມໂທສານຸໂທສ ໃນທີ່ນີ້ ປັບອາບັຕິປາຈິຕຕີຍ໌ຕາມຄວາມແຫ່ງສິກຂາບົດທີ ໕ ແຫ່ງສັປປານກວັຄ (ວິ. ມຫາ. (ແປ) ໒/໔໐໖/໕໑໕)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທະກະ] ໓໗. ອຫິວາຕກໂຣຄວັຕຖຸ

໓໗. ອຫິວາຕກໂຣຄວັຕຖຸ

ວ່າດ້ວຍອຫິວາຕກໂຣຄ

ກຳໜົດອາຍຸຜູ້ບັນພະຊາເປັນສາມເນນ

[໑໐໐] ສະໄໝນັ້ນ ຄອບຄົວໜຶ່ງໄດ້ເຖິງແກ່ກັມດ້ວຍອຫິວາຕກໂຣຄ ເຫລືອພຽງບິດາກັບບຸຕຣ ຄົນທັງ ໒ ໄດ້ບັນພະຊາໃນໝູ່ພິກສຸແລ້ວທຽວບິນທບາຕດ້ວຍກັນ ຄັ້ງນັ້ນ ເມື່ອເຂົາຖວາຍພິກສາແກ່ພິກສຸຜູ້ບິດາ ສາມເນນນ້ອຍກໍແລ່ນໄປຫາແລ້ວໄດ້ກ່າວກັບພິກສຸຜູ້ເປັນບິດານັ້ນວ່າ "ພໍ່ຂະນ້ອຍ ໃຫ້ຂະນ້ອຍແດ່ ພໍ່ຂະນ້ອຍ ໃຫ້ຂະນ້ອຍແດ່" ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມ ໂພນທະ ນາ ວ່າ "ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ບໍ່ແມ່ນຜູ້ປະພຶດພຣົມຈັນຍ໌ ສາມເນນນ້ອຍແມ່ນຮູບນີ້ຄົງຈະເກີດຈາກພິກສຸນີ" ພິກສຸທັງຫລາຍໄດ້ຍິນມະນຸສຍ໌ເຫລົ່ານັ້ນຕຳໜິ ປະນາມ ໂພນທະນາ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເດັກຊາຍມີອາຍຸໜ້ອຍກວ່າ ໑໕ ປີ ບໍ່ຄວນໃຫ້ບັນພະຊາ ຮູບໃດໃຫ້ບັນພະຊາ ຕ້ອງອາບັຕິທຸກກະຕະ"

ເຣື່ອງບັນພະຊາໃຫ້ເດັກອາຍຸໜ້ອຍກວ່າ ໑໕ ປີຂອງຕະກູນມີສັດທາ

ສະໄໝນັ້ນ ຕະກູນອຸປັຕຖາກຂອງທ່ານພຣະອານົນທ໌ມີສັດທາເຫລື້ອມໃສ ໄດ້ເຖິງແກ່ກັມດ້ວຍອຫິວາຕກໂຣຄ ເຫລືອພຽງເດັກຊາຍ ໒ ຄົນ ເດັກຊາຍທັງ ໒ ເຫັນພິກສຸທັງຫລາຍແລ້ວກໍແລ່ນເຂົ້າໄປຫາດ້ວຍກິຣິຍາທີ່ຄຸ້ນເຄີຍກັນມາແຕ່ກ່ອນ ພິກສຸທັງຫລາຍໄດ້ໄລ່ໄປເສັຽ ເດັກທັງ ໒ ເມື່ອຖືກພິກສຸໄລ່ກໍຮ້ອງໄຫ້ ຂະນະນັ້ນ ທ່ານພຣະອານົນທ໌ໄດ້ມີຄວາມຄິດດັ່ງນີ້ວ່າ "ພຣະຜູ້ມີພຣະພາຄຊົງບັນຍັດໄວ້ວ່າ ເດັກຊາຍມີອາຍຸໜ້ອຍກວ່າ ໑໕ ປີ ບໍ່ຄວນໃຫ້ບັນພະຊາ ກໍເດັກທັງ ໒ ຄົນນີ້ມີອາຍຸໜ້ອຍກວ່າ ໑໕ ປີ ດ້ວຍອຸບາຍຢ່າງໃດໜໍ ເດັກທັງ ໒ ນີ້ຈຶ່ງຈະບໍ່ເສັຽໂອກາສ" ເທື່ອນັ້ນທ່ານພຣະອານົນທ໌ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຕຣັສຖາມວ່າ "ອານົນທ໌ ກໍເດັກທັງ ໒ ນັ້ນສາມາດໄລ່ກາໄດ້ບໍ່" ທ່ານພຣະອານົນທ໌ຂາບທູລວ່າ "ໄດ້ ພຣະພຸດທະເຈົ້າຂ້າ" ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸໃຫ້ເດັກຊາຍມີອາຍຸໜ້ອຍກວ່າ ໑໕ ປີ ຊຶ່ງສາມາດໄລ່ກາໄດ້ບັນພະຊາ"

໓໗. ກັນຸຕກວັຕຖຸ

ວ່າດ້ວຍສຸານເບຣກັນຸຕກະ

[໑໐໑] ສຸມັຍນັ້ນ ທ່ານພຣະອຸປນັນທສາກຍບຸຕຣມີສຸານເບຣຢູ່ ໔ ຮູບ ຄື ສຸານເບຣກັນຸຕກະແລະສຸານເບຣມຫກະ ທ່ານທັງ ໔ ຊອບຮັງແກກັນແລະກັນ ພິກສຸທັງຫລາຍຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດສຸານເບຣທັງສອງຈຶ່ງໄດ້ປະພຶດບໍ່ສົມຄວຣເຊັ່ນນີ້ລະ" ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸຮູບດຽວບໍ່ຄວຣມີສຸານເບຣຮັບໃຊ້ ໔ ຮູບ ຮູບໃດໃຫ້ຮັບໃຊ້ ຕ້ອງອາບັຕິທຸກກະຕະ"

໓໘. ອາຫຸນທຣິກວັຕຖຸ

ວ່າດ້ວຍທິສຄັບແຄບ

[໑໐໔] ສຸມັຍນັ້ນ ພຣະຜູ້ມີພຣະພາກປະທັບຢູ່ ນະ ກຸງຣາຊຄືຫ໌ພຽງແຫ່ງດຽວທັງຣະດູຝົນ ຣະດູໜາວແລະຣະດູຮ້ອນ ມະນຸສຸຍ໌ທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ "ທິສທັງຫລາຍຄັບແຄບມືດມນສຳລັບພວກພຣະສຸະມະນະເຊື້ອສາຍພຣະສາກຍບຸຕຣພຣະສຸະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ ຈຶ່ງເບິ່ງບໍ່ເຫັນທິສທາງ" ພິກສຸທັງຫລາຍໄດ້ຍິນຄົນເຫລົ່ານັ້ນຕຳໜິ ປະນາມ ໂພນທະນາຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາກຈຶ່ງຮັບສັ່ງກັບພຣະອານົນທ໌ວ່າ "ອານົນທ໌ ທ່ານຈົ່ງໄປຖອດດາລແຈ້ງພິກສຸທັງຫລາຍໃນບໍຣິເວນວິຫາຣວ່າ "ອາວຸໂສທັງຫລາຍ ພຣະຜູ້ມີພຣະພາກຊົງປະສົງຄ໌ຈະສຸເດັຈຈາຣິກໄປຍັງທັກຂິນາຄີຣີຊົນບົທ ທ່ານຜູ້ໃດມີຄວາມປະສົງຄ໌ ທ່ານຜູ້ນັ້ນຈົ່ງມາ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ]

໔໐. ນິສຸສັຍມຸຈຈນກກຖາ

ທ່ານພຣະອານົນທ໌ທູລຮັບສຸນອງພຣະພຸທທບັນຊາແລ້ວ ຈຶ່ງຖອດດາລແຈ້ງພິກສຸທັງຫລາຍໃນບໍຣິເວນວິຫາຣວ່າ "ອາວຸໂສທັງຫລາຍ ພຣະຜູ້ມີພຣະພາກຊົງປະສົງຄ໌ຈະສຸເດັຈຈາຣິກໄປຍັງທັກຂິນາ ຄີຣີຊົນບົທ ທ່ານຜູ້ໃດມີຄວາມປະສົງຄ໌ ທ່ານຜູ້ນັ້ນຈົ່ງມາ" ພິກສຸທັງຫລາຍຮຽນຊີ້ແຈງວ່າ "ທ່ານພຣະອານົນທ໌ ພຣະຜູ້ມີພຣະພາກຊົງບັນຍັດໃຫ້ພິກສຸຖືນິສຸສັຍຢູ່ ໑໐ ພັນສຸາ ແລະໃຫ້ພິກສຸມີພັນສຸາຄົບ ໑໐ ໃຫ້ນິສຸສັຍໄດ້ ພວກເຮົາຈະຕ້ອງໄປໃນທັກຂິນາຄີຣີຊົນບົທນັ້ນ ກໍຕ້ອງຖືນິສຸສັຍ ພັກຢູ່ພຽງ

ເລັກນ້ອຍ ກໍຕ້ອງກັບມາອີກ ແລະຕ້ອງຖືນິສ໌ສັຍອີກດ້ວຍ ຖ້າພຣະອຸປັຊຊາຍ໌ແລະພຣະອາຈາຣຍ໌ຂອງພວກເຮົາໄປ ພວກເຮົາກໍຈະໄປດ້ວຍ ຖ້າພຣະອຸປັຊຊາຍ໌ແລະພຣະອາຈາຣຍ໌ຂອງພວກເຮົາບໍ່ໄປ ພວກເຮົາກໍຈະບໍ່ໄປ ທ່ານພຣະອານົນທ໌ ຄວາມທີ່ພວກເຮົາມີຈິຕໃຈໂລເລຈັກປາກົດ" ຄັ້ງນັ້ນ ພຣະຜູ້ມີພຣະພາກໄດ້ສເດັຈຈາຣິກໄປຍັງທັກຂິນາຄີຣີຊົນບົທພ້ອມດ້ວຍພິກສຸສົງຂ໌ຈຳນວນນ້ອຍ

໔໐. ນິສ໌ສັຍມຸຈຈນກກຖາ

ວ່າດ້ວຍການຖືນິສ໌ສັຍແລະການພົ້ນນິສ໌ສັຍ

[໑໐໓] ຄັນພຣະຜູ້ມີພຣະພາກປະທັບຢູ່ທີ່ທັກຂິນາຄີຣີຊົນບົທຕາມພຣະອັທຍາສັຍແລ້ວກໍສເດັຈກັບມາຍັງກຸງຣາຊຄືຫ໌ຕາມເດີມອີກ ໄດ້ຕຣັສຮຽກທ່ານພຣະອານົນທ໌ມາສອບຖາມວ່າ "ອານົນທ໌ ຕຖາຄົຕໄດ້ຈາຣິກໄປຍັງທັກຂິນາຄີຣີຊົນບົທພ້ອມດ້ວຍພິກສຸສົງຂ໌ຈຳນວນນ້ອຍເພາະເຫຕຸໃດ"
ທ່ານພຣະອານົນທ໌ຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ

ຊົງອນຸຍາຕໃຫ້ຖືນິສ໌ສັຍ

ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຣັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ສລາດສາມາດຖືນິສ໌ສັຍຢູ່ ໕ ພັນສາ ໃຫ້ພິກສຸຜູ້ບໍ່ສລາດຖືນິສ໌ສັຍຢູ່ຈົນຕລອດຊີວິຕ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໐. ນິສ໌ສັຍມຸຈຈນກກຖາ

ອົງຄ໌ ໕ ບ່ອນພິກສຸຜູ້ຕ້ອງຖືນິສ໌ສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສ໌ສັຍບໍ່ໄດ້ ຄື
໑. ບໍ່ປະກອບດ້ວຍສີລຂັນທ໌ອັນເປັນອເສຂະ
໒. ບໍ່ປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ
໓. ບໍ່ປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ
໔. ບໍ່ປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ
໕. ບໍ່ປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ
ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສ໌ສັຍບໍ່ໄດ້ (໑)

ອົງຄ໌ ໕ ບ່ອນພິກຂຸຜູ້ບໍ່ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ ຄື

໑. ປະກອບດ້ວຍສີລຂັນທ໌ອັນເປັນອເສຂະ

໒. ປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ

໓. ປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ

໔. ປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ

໕. ປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ (໑)

ອົງຄ໌ ໕ ບ່ອນພິກສຸຜູ້ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ ຄື ໑. ເປັນຜູ້ບໍ່ມີສັດທາ ໒. ເປັນຜູ້ບໍ່ມີຫິຣິ ໓. ເປັນຜູ້ບໍ່ມີໂອຕຕັປປະ ໔. ເປັນຜູ້ກຽດຄ້ານ ໕. ເປັນຜູ້ມີສຕິຟັ່ນເຟືອນ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໐. ນິສສັຍມຸຈຈນກາກຖາ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ (໓)

ອົງຄ໌ ໕ ບ່ອນພິກສຸຜູ້ບໍ່ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ ຄື

໑. ເປັນຜູ້ມີສັດທາ ໒. ເປັນຜູ້ມີຫິຣິ

໓. ເປັນຜູ້ມີໂອຕຕັປປະ ໔. ເປັນຜູ້ປາຣົພຄວາມພຽນ

໕. ເປັນຜູ້ມີສຕິຕັ້ງໝັ້ນ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ (໔)

ອົງຄ໌ ໕ ບ່ອນພິກສຸຜູ້ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ ຄື ໑. ເປັນຜູ້ມີສີລວິບັຕິໃນອທິສີລ ໒. ເປັນຜູ້ມີອາຈາຣວິບັຕິໃນອັຊຍາຈາຣ ໓. ເປັນຜູ້ມີທິຕຖິ ວິບັຕິໃນ

ອຕິທິຏຖິ ໔. ເປັນຜູ້ໄດ້ຍິນໄດ້ຟັງນ້ອຍ ໕. ເປັນຜູ້ມີປັນຍາຊາມ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ (໕)

ອົງຄ໌ ໕ ບ່ອນພິກສຸຜູ້ບໍ່ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ ຄື

໑. ເປັນຜູ້ບໍ່ມີສີລວິບັຕິໃນອທິສີລ ໒. ເປັນຜູ້ບໍ່ມີອາຈາຣວິບັຕິໃນອັຊຍາຈາຣ

໓. ເປັນຜູ້ບໍ່ມີທິຏຖິວິບັຕິໃນອຕິທິຏຖິ ໔. ເປັນຜູ້ໄດ້ຍິນໄດ້ຟັງມາກ ໕. ເປັນຜູ້ມີປັນຍາ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ (໖)

ອົງຄ໌ ໕ ບ່ອນພິກສຸຜູ້ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ ຄື

໑. ບໍ່ຮູ້ຈັກອາບັຕິ ໒. ບໍ່ຮູ້ຈັກອນາບັຕິ

໓. ບໍ່ຮູ້ຈັກອາບັຕິເບົາ ໔. ບໍ່ຮູ້ຈັກອາບັຕິຫນັກ

໕. ຈຳປາຕິໂມກຂ໌ທັງສອງໂດຍພິສດາຣບໍ່ໄດ້ດີ ຈຳແນກບໍ່ໄດ້ດີ ບໍ່ຄ່ອງແຄ້ວດີ ວິນິຈສັຍໂດຍສຸຕຕະໂດຍອນຸພຍັນຊນະບໍ່ໄດ້ດີ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ (໗)

ອົງຄ໌ ໕ ບ່ອນພິກສຸຜູ້ບໍ່ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ ຄື

໑. ຮູ້ຈັກອາບັຕິ ໒. ຮູ້ຈັກອນາບັຕິ ໓. ຮູ້ຈັກອາບັຕິເບົາ ໔. ຮູ້ຈັກອາບັຕິຫນັກ

໕. ຈຳປາຕິໂມກຂ໌ທັງສອງໂດຍພິສດາຣໄດ້ດີ ຈຳແນກໄດ້ດີ ຄ່ອງແຄ້ວດີ ວິນິຈສັຍໂດຍສຸຕຕະໂດຍອນຸພຍັນຊນະໄດ້ດີ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ (໘)

ອົງຄ໌ ໕ ບ່ອນພິກສຸຜູ້ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ ຄື

໑. ບໍ່ຮູ້ຈັກອາບັຕິ ໒. ບໍ່ຮູ້ຈັກອນາບັຕິ ໓. ບໍ່ຮູ້ຈັກອາບັຕິເບົາ ໔. ບໍ່ຮູ້ຈັກອາບັຕິຫນັກ

໕. ມີພັນສາຫລຸດຢ່ອນ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ (໙)

ອົງຄ໌ ໕ ບ່ອນພິກສຸຜູ້ບໍ່ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ ຄື

໑. ຮູ້ຈັກອາບັຕິ ໒. ຮູ້ຈັກອນາບັຕິ ໓. ຮູ້ຈັກອາບັຕິເບົາ ໔. ຮູ້ຈັກອາບັຕິຫນັກ

໕. ມີພັນສາຄົບ ໕ ຫລືມີພັນສາເກີນ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ (໑໐)

ປັຍຈກຫສູອາຣ ຈົບ

ອົງຄ໌ ໖ ບ່ອນພິກສຸຜູ້ຕ້ອງຖືນິສສັຍ

[໑໐໔] ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ ຄື

໑. ບໍ່ປະກອບດ້ວຍສີລຂັນທ໌ອັນເປັນອເສຂະ

໒. ບໍ່ປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ

໓. ບໍ່ປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ

໔. ບໍ່ປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ

໕. ບໍ່ປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ

໖. ມີພັນສາຢ່ອນ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ (໑)

ອົງຄ໌ ໖ ບ່ອນພິກສຸຜູ້ບໍ່ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ ຄື

໑. ປະກອບດ້ວຍສີລຂັນທ໌ອັນເປັນອເສຂະ

໒. ປະກອບດ້ວຍສມາທິຂັນທ໌ອັນເປັນອເສຂະ

໓. ປະກອບດ້ວຍປັນຍາຂັນທ໌ອັນເປັນອເສຂະ

໔. ປະກອບດ້ວຍວິມຸຕຕິຂັນທ໌ອັນເປັນອເສຂະ

໕. ປະກອບດ້ວຍວິມຸຕຕິຍານທັສສນຂັນທ໌ອັນເປັນອເສຂະ

໕. ມີພັນສາຄົບ ໕ ຫລືມີພັນສາເກີນ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ (໔)

ອົງຄ໌ ໕ ບ່ອນພິກສຸຜູ້ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ ຄື

໑. ເປັນຜູ້ບໍ່ມີສັດທາ ໒. ເປັນຜູ້ບໍ່ມີຫິຣິ

໓. ເປັນຜູ້ບໍ່ມີໂອຕັປປະ ໔. ເປັນຜູ້ກຽດຄ້ານ

໕. ເປັນຜູ້ມີສຕິຟັ່ນເຟືອນ ໖. ມີພັນສາຢ່ອນ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ (໓)

ອົງຄ໌ ໕ ບ່ອນພິກສຸຜູ້ບໍ່ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ ຄື

໑. ເປັນຜູ້ມີສັດທາ ໒. ເປັນຜູ້ມີຫິຣິ

໓. ເປັນຜູ້ມີໂອຕັປປະ ໔. ເປັນຜູ້ປາຣົພຄວາມພຽນ

໕. ເປັນຜູ້ມີສຕິຕັ້ງໝັ້ນ ໖. ມີພັນສາຄົບ ໕ ຫລືມີພັນສາເກີນ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ (໔)

ອົງຄ໌ ໕ ບ່ອນພິກສຸຜູ້ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ແມ່ນອື່ນອີກ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ ຄື

໑. ເປັນຜູ້ມີສີລວິບັຕິໃນອຫິສີລ ໒. ເປັນຜູ້ມີອາຈາຣວິບັຕິໃນອັຊຍາຈາຣ

໓. ເປັນຜູ້ມີທິຕຖິວິບັຕິໃນອຕິທິຕຖິ ໔. ເປັນຜູ້ໄດ້ຍິນໄດ້ຟັງນ້ອຍ

໕. ເປັນຜູ້ມີປັນຍາຊາມ ໖. ມີພັນສາຢ່ອນ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້ແລ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ (໕)

ອົງຄ໌ ໕ ບ່ອນພິກສຸຜູ້ບໍ່ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໕ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ ຄື

໑. ເປັນຜູ້ບໍ່ມີສີລວິບັຕິໃນອຫິສີລ

໒. ເປັນຜູ້ບໍ່ມີອາຈາຣວິບັຕິໃນອັຊຍາຈາຣ

໓. ເປັນຜູ້ບໍ່ມີທິຕຖິວິບັຕິໃນອຕິທິຕຖິ

໔. ເປັນຜູ້ໄດ້ຍິນໄດ້ຟັງມາກ

໕. ເປັນຜູ້ມີປັນຍາ

໖. ມີພັນສາຄົບ ໕ ຫລືມີພັນສາເກີນ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ (໖)

ອົງຄ໌ ໖ ບ່ອນພິກສຸຜູ້ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ແມ່ນອື່ນອີກ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ ຄື

໑. ບໍ່ຮູ້ຈັກອາບັດ

໒. ບໍ່ຮູ້ຈັກອນາບັດ

໓. ບໍ່ຮູ້ຈັກອາບັດເບົາ

໔. ບໍ່ຮູ້ຈັກອາບັດຫນັກ

໕. ຈຳປາຕິໂມກຂ໌ທັງສອງໂດຍພິສດານບໍ່ໄດ້ດີ ຈຳແນກບໍ່ໄດ້ດີ ບໍ່ຄ່ອງແຄ້ວດີ ວິນິຈສັຍໂດຍສຸດຕະໂດຍອນຸພຍັນຊນະບໍ່ໄດ້ດີ

໖. ມີພັນສາຫລຸດຢ່ອນ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້ (໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໑. ອາຫຸລວັຕຖຸ

ອົງຄ໌ ໖ ບ່ອນພິກສຸຜູ້ບໍ່ຕ້ອງຖືນິສສັຍ

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ ຄື

໑. ຮູ້ຈັກອາບັດ

໒. ຮູ້ຈັກອນາບັດ

໓. ຮູ້ຈັກອາບັດເບົາ

໔. ຮູ້ຈັກອາບັດຫນັກ

໕. ຈຳປາຕິໂມກຂ໌ທັງສອງໂດຍພິສດານໄດ້ດີ ຈຳແນກໄດ້ດີ ຄ່ອງແຄ້ວດີ ວິນິຈສັຍໂດຍສຸດຕະໂດຍອນຸພຍັນຊນະໄດ້ດີ

໖. ມີພັນສາຄົບ ໕ ຫລືມີພັນສາເກີນ ໕

ພິກສຸທັງຫລາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ເຫລົ່ານີ້ແລ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ (໘)

ນິສ໌ສັຍມຸຈຈນກກຖາ ຈົບ

ອພຍູວຣພານວາຣທີ ໗ ຈົບ

໔໑. ຣາຫຸລວັຕຖຸ

ວ່າດ້ວຍພຣະຣາຫຸລກຸມາຣບັນພະຊາ

ພຣະຣາຫຸລກຸມາຣຊົງຜນວຊເປັນສາມເນຣ

[໑໐໕] ຄັ້ງນັ້ນ ພຣະຜູ້ມີພຣະພາກປະທັບຢູ່ ນະ ກຸງຣາຊຄຶຫ໌ຕາມພຣະອັທຍາສັຍແລ້ວໄດ້ສເດັຈຈາຣິກໄປທາງກຸງກບິລພັສດຸ໌ ສເດັຈຈາຣິກໄປໂດຍລຳດັບຈົນເຖິງກຸງກບິລພັສດຸ໌ ຊາບວ່າພຣະອົງຄ໌ປະທັບຢູ່ ນະ ນິໂຄຣທາຣາມ ກຸງກບິລພັສດຸ໌ ແຄວ້ນສັກກະ ຄັນເວລາເຊົ້າ ຊົງອັນຕຣວາສົກແລ້ວຖືບາຕຣແລະຈີວອນສເດັຈໄປຍັງພຣະນິເວສນ໌ພຣະເຈົ້າສຸທໂທທນສາກຍະ ປະທັບນັ່ງ ນະພຸທທອາສນ໌ ທີ່ໄດ້ປູລາດໄວ້ ຂນະນັ້ນ ພຣະເທວີມາຣດາພຣະຣາຫຸລກຸມາຣໄດ້ຊົງມີພຣະເສົາວນີຍ໌ວ່າ “ແນ່ະຣາຫຸລສະມະນະນັ້ນເປັນບິດາຂອງເຈົ້າ ເຈົ້າຈົ່ງໄປທູລຂວຊັພຍ໌ມໍຣດົກເຖີດ” ພຣະຣາຫຸລກຸມາຣຈຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາກ ປະທັບຢືນ ນະ ເບື້ອງພຣະພັກຕຣ໌ພ້ອມທັງຊາບທູລວ່າ “ຂ້າແຕ່ພຣະສະມະນະ ພຣະສາຍາຂອງພຣະອົງຄ໌ເປັນສຸຂ” ພຣະຜູ້ມີພຣະພາກໄດ້ສເດັຈລຸກຈາກອາສນະແລ້ວສເດັຈກັບໄປ ພຣະກຸມາຣກໍສເດັຈຕິດຕາມໄປເບື້ອງພຣະປຣິສດາງຄ໌ ພ້ອມທັງຊາບທູລຂວ່າ “ພຣະສະມະນະໄດ້ໂປຣດປະທານຊັພຍ໌ມໍຣດົກແກ່ຂະນ້ອຍ ພຣະສະມະນະໄດ້ໂປຣດປະທານຊັພຍ໌ມໍຣດົກແກ່ຂະນ້ອຍ” ລຳດັບນັ້ນ ພຣະຜູ້ມີພຣະພາກໄດ້ຕຣັສຮຽກທ່ານພຣະສາຣີບຸຕຣມາຮັບສັ່ງວ່າ “ສາຣີບຸຕຣ ຖ້າຢ່າງນັ້ນທ່ານຈົ່ງໃຫ້ຣາຫຸລກຸມາຣບັນພະຊາເຖີດ” ທ່ານພຣະສາຣີບຸຕຣທູລຖາມວ່າ “ຂ້າພຣະອົງຄ໌ຈະໃຫ້ຣາຫຸລກຸມາຣບັນພະຊາຢ່າງໃດພຣະພຸດທະເຈົ້າຂ້າ” ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອນຸຍາຕການບັນພະຊາເປັນສາມເນຣດ້ວຍໄຕຣສຣນຄົມນ໌ ”໑

ວິທີໃຫ້ບັນພະຊາ

ພິກສຸທັງຫລາຍ ກໍແລພິກສຸຄວນໃຫ້ກຸລບຸຕຣບັນພະຊາ ຢ່າງນີ້ ໃນເບື້ອງຕົ້ນ ຄວນໃຫ້ກຸລບຸຕຣ ຜູ້ມຸ່ງບັນພະຊາປົງຜົມແລະຫນວດ ໃຫ້ຄອງຜ້າກາສາຍະ ໃຫ້ຫົ່ມຜ້າບ່ຽງບ່າຂ້າງນຶ່ງ ໃຫ້ຊາບຕີນພິກສຸທັງຫລາຍ ໃຫ້ນັ່ງຄຸເຂົ່າ ໃຫ້ປະນົມມືແລ້ວສັ່ງວ່າ “ທ່ານຈົ່ງກ່າວຢ່າງນີ້” ແລ້ວໃຫ້ວ່າສຣນຄມນ໌ ດັ່ງນີ້

ໝາຍເຫດ :

໑ ເດີມທີ ພຣະຜູ້ມີພຣະພາກຊົງອນຸຍາຕການບັນພະຊາແລະອຸປສົມບົທດ້ວຍໄຕຣສຣນຄົມນ໌ ຕໍ່ມາຊົງຫ້າມອຸປສົມບົທດ້ວຍໄຕຣສຣນຄົມນ໌ ຊົງອນຸຍາຕວິທີອຸປສົມບົທດ້ວຍຍັຕຕິຈຕຸຕຖກັມ ແຕ່ບໍ່ໄດ້ຊົງຫ້າມການບັນພະຊາ ທັງບໍ່ໄດ້ຊົງອນຸຍາຕໃຫ້ພິກສຸສົງຊ໌ໃຊ້ວິທີນີ້ຕໍ່ໄປອີກ ແຕ່ມີພຣະປະສົງຄ໌ທີ່ຈະອນຸຍາຕໃຫ້ບັນພະຊາສາມເນຣດ້ວຍໄຕຣສຣນຄົມນ໌ ພຣະສາຣີບຸຕຣຊາບພຸທທອັທຍາສັຍ ຈຶ່ງຂາບທູລໃຫ້ຊົງອນຸຍາຕການບັນພະຊາອີກ ແລະໃຊ້ວິທີການບັນພະຊາດ້ວຍໄຕຣສຣນຄົມນ໌ ບອຊຣາຫຸລກຸມານເປັນສາມເນຣຮູບແຣກ (ວິ. ອ. ໓/໑໐໕/໗໔)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໑. ຣາຫຸລວັຕຖຸ

ໄຕຣສຣນຄົມນ໌

ວ່າດ້ວຍການເຖິງພຣະຣັຕນຕຣັຍເປັນສະຣະນະ
ຂ້າພະເຈົ້າ ຂໍເຖິງພຣະພຸດທະເຈົ້າເປັນສະຣະນະ
ຂ້າພະເຈົ້າ ຂໍເຖິງພຣະທັມເປັນສະຣະນະ
ຂ້າພະເຈົ້າ ຂໍເຖິງພຣະສົງຊ໌ເປັນສະຣະນະ
ຂ້າພະເຈົ້າ ຂໍເຖິງພຣະພຸດທະເຈົ້າເປັນສະຣະນະ ແມ່ນຄັ້ງທີ ໔
ຂ້າພະເຈົ້າ ຂໍເຖິງພຣະທັມເປັນສະຣະນະ ແມ່ນຄັ້ງທີ ໔
ຂ້າພະເຈົ້າ ຂໍເຖິງພຣະສົງຊ໌ເປັນສະຣະນະ ແມ່ນຄັ້ງທີ ໔
ຂ້າພະເຈົ້າ ຂໍເຖິງພຣະພຸດທະເຈົ້າເປັນສະຣະນະ ແມ່ນຄັ້ງທີ ໓
ຂ້າພະເຈົ້າ ຂໍເຖິງພຣະທັມເປັນສະຣະນະ ແມ່ນຄັ້ງທີ ໓
ຂ້າພະເຈົ້າ ຂໍເຖິງພຣະສົງຊ໌ເປັນສະຣະນະ ແມ່ນຄັ້ງທີ ໓
ພິກສຸທັງຫລາຍ ເຮົາອນຸຍາຕການບັນພະຊາເປັນສາມເນຣດ້ວຍໄຕຣສຣນຄົມນ໌ ເຫລົ່ານີ້"
ລໍາດັບນັ້ນ ທ່ານພຣະສາຣີບຸຕຣໄດ້ໃຫ້ພຣະຣາຫຸລບັນພະຊາແລ້ວ

ເຣື້ອງພຣະເຈົ້າສຸທໂທທນະທູລຂໍພອຣ໑

ຄັ້ງນັ້ນ ພຣະເຈົ້າສຸທໂທທນສາກຍະໄດ້ສເດັຈໄປເຝົ້າພຣະຜູ້ພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້

ຖວາຍບັງຄົມພຣະຜູ້ມີພຣະພາກແລ້ວປະທັບນັ່ງ ນະທີ່ສົມຄວຣ ໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ພຣະຂະນ້ອຍ ຂະນ້ອຍທູລຂໍພອນພຣະຜູ້ມີພຣະພາກຢ່າງນຶ່ງ"

ໝາຍເຫດ :

໑ ໃນວັນທີ ໔ ຫລັງຈາກທີ່ສເດັຈເຖິງກຸງກບິລພັສດຸ໌ແລ້ວ ພຣະພຸດທະເຈົ້າສເດັຈເຂົ້າໄປບິນທບາຕໃນກຸງກບິລພັສດຸ໌ໃນເວລາເຊົ້າ ພຣະເຈົ້າສຸທໂທທນະຊົງຊາບຂ່າວ ຈຶ່ງສເດັຈໄປຫາ ຕຣັສວ່າ ກາຣທີ່ພຣະພຸທທອົງຄ໌ສເດັຈທຽວບິນທບາຕນີ້ ເຮັດໃຫ້ຂ້າພຣະອົງຄ໌ລະອາຍຍິ່ງນັກ ພຣະພຸດທະເຈົ້າຕຣັສຕອບວ່າ ກາຣທຽວບິນທບາຕນີ້ເປັນວົງສ໌ຂອງພຣະພຸດທະເຈົ້າທັງຫລາຍ ແລ້ວຕຣັສພຣະຄາຖາວ່າ ບໍ່ຄວຣປມາດໃນບິນທບາຕທີ່ຄວນລຸກຮັບ ຄວນປະພຶດທັມໃຫ້ສຸຈຣິຕ ຜູ້ປະພຶດທັມ ຍ່ອມຢູ່ເປັນສຸຂທັງໃນໂລກນີ້ແລະໂລກໜ້າ ເມື່ອຕຣັສພຣະຄາຖານີ້ຈົບ ພຣະເຈົ້າສຸທໂທທນະບັນລຸໂສດາປັຕຕິຜົລ ຄັນແລ້ວພຣະຜູ້ມີພຣະພາກໄດ້ສເດັຈເຂົ້າພຣະນິເວສນ໌ຕຣັສພຣະຄາຖາວ່າ

ຄວນປະພຶດທັມໃຫ້ສຸຈຣິຕ ບໍ່ຄວນປະພຶດທັມໃຫ້ທຸຈຣິຕ

ຜູ້ປະພຶດທັມ ຍ່ອມຢູ່ເປັນສຸຂທັງໃນໂລກນີ້ແລະໂລກໜ້າ

ພຣະເຈົ້າສຸທໂທທນະຊົງບັນລຸສກທາຄາມິຜົລ ວັນຕໍ່ມາໄດ້ຊົງສດັບທັມປາລຊາດົກ ຊົງບັນລຸອນາຄາມິຜົລ ກ່ອນທີ່ຈະສວັຄຕປະທັບເທິງແທ່ນບັນທົມພາຍໃຕ້ເສວຕສັຕຣ ຊົງບັນລຸອຣຫັຕຕຜົລ (ວິ. ອ. ໓/໑໐໕/໗໑-໗໔, ສາຣຕ຺ຖ. ຕີກາ ໓/໑໐໕/໓໐໑)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໑. ຣາຫຸລວັຕຖຸ

ພຣະຜູ້ມີພຣະພາກຖວາຍພຣະພອນວ່າ "ມຫາບພິຕຣຜູ້ໂຄດົມ ຕຖາຄົຕທັງຫລາຍເລີກພອນເສັ້ງແລ້ວ" ພຣະເຈົ້າສຸທໂທທນສາກຍະທູລວ່າ "ຂະນ້ອຍທູລຂໍພອນທີ່ສົມຄວຣແລະບໍ່ມີໂທສ ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກຕຣັສວ່າ "ໂປຣດຕຣັສບອກພອນນັ້ນເຖີດ ມຫາບພິຕຣຜູ້ໂຄດົມ" ພຣະເຈົ້າສຸທໂທທນສາກຍະທູລວ່າ "ເມື່ອພຣະອົງຄ໌ຊົງຜນວຊ ຂະນ້ອຍມີທຸກຂ໌ບໍ່ໜ້ອຍ ເມື່ອນັນທະຜນວຊກໍເຊັ່ນດຽວກັນ ຄັນຣາຫຸລບັນພະຊາ ຍິ່ງເກີດທຸກຂ໌ເຫລືອປະມານ ພຣະພຸດທະເຈົ້າຂ້າ ຄວາມຮັກໃນພຣະໂອຣົສຍ່ອມຕັດຜິວ ຕັດຜິວແລ້ວກໍຕັດໜັງ ຕັດໜັງແລ້ວກໍຕັດຊີ້ນ ຕັດຊີ້ນແລ້ວກໍຕັດເອັນ ຕັດເອັນແລ້ວກໍຕັດກະດູກ ຕັດກະດູກແລ້ວກໍຈດເຍື່ອໃນກະດູກ ຂໍປະທານພຣະອໂຣກາສ ຂໍພຣະຜູ້ເປັນເຈົ້າທັງ

ຫລາຍບໍ່ຄວນໃຫ້ບຸຕຣທີ່ມາຣດາບິດາຍັງບໍ່ອະນຸຍາຕບັນພະຊາ ພຣະພຸດທະເຈົ້າຂ້າ”
ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊີ້ແຈງໃຫ້ພຣະເຈົ້າສຸທໂທທນສາກຍະຊົງເຫັນແຈ້ງ ຊວນໃຫ້ຢາກ ຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ຄັນພຣະເຈົ້າສຸທໂທທນສາກຍະຜູ້ຊຶ່ງພຣະຜູ້ມີພຣະພາກຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ ຢາກຮັບໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍ ທັມມີກຖາແລ້ວ ກໍສເດັຈລຸກຂຶ້ນຈາກທີ່ປະທັບ ຖວາຍອະພິວາທພຣະຜູ້ມີພຣະພາກ ຊົງທຳປຣະທັກສິນ (ວຽນໄປທາງຂວາ)ສເດັຈກັບ ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ບຸຕຣທີ່ມາຣດາບິດາບໍ່ອະນຸຍາຕບໍ່ຄວນໃຫ້ບັນພະ ຊາ ຮູບໃດໃຫ້ບັນພະຊາ ຕ້ອງອາບັຕິທຸກກະຕະ”

ຄັນພຣະຜູ້ມີພຣະພາກປະທັບຢູ່ ນະ ກຸງກະບິລພັສດຸ໌ຕາມພຣະອັທຍາສັຍແລ້ວ ໄດ້ສເດັຈຈາຣິກໄປທາງ ກຸງສາວັຕຖີ ສເດັຈຈາຣິກໄປໂດຍລຳດັບ ຈົນເຖິງກຸງສາວັຕຖີ ຊາບວ່າພຣະອົງຄ໌ປະທັບຢູ່ ນະ ພຣະເຊ ຕວັນອາຣາມຂອງອະນາຖບິນທິກຄຫບໍດີເຂຕກຸງສາວັຕຖີນັ້ນ ຊົງອະນຸຍາຕໃຫ້ພິກສຸຜູ້ສລາດມີສາມເນຣ ຫລາຍຮູບໄວ້ອຸປັຕຖາກ ສມັຍນັ້ນ ຕະກູນອຸປັຕຖາກຂອງທ່ານພຣະສາຣີບຸຕຣສົ່ງເດັກຊາຍໄປຍັງສຳນັກ ຂອງທ່ານດ້ວຍມອບຫມາຍວ່າ “ຂໍພຣະເຖຣະໂປຣດໃຫ້ເດັກຄົນນີ້ບັນພະຊາ” ຂນະນັ້ນ ທ່ານພິຈາຣນາ ເຫັນວ່າ “ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ພິກສຸຮູບດຽວບໍ່ຄວນໃຊ້ສາມເນຣ ໒ ຮູບໃຫ້ອຸປັຕຖາກ ກໍເຮົາມີສາມເນຣຣາຫຸລນີ້ຢູ່ແລ້ວ ຈະຄວນປະຕິບັດຢ່າງໃດຫນໍ” ຈຶ່ງຂາບທູລເຣື່ອງນີ້ໃຫ້ພຣະຜູ້ມີພຣະ ພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອະນຸຍາຕໃຫ້ ພິກສຸຮູບດຽວຊຶ່ງເປັນຜູ້ສລາດສາມາດ ໃຊ້ສາມເນຣ ໒ ຮູບໃຫ້ອຸປັຕຖາກໄດ້ ຫລືອະນຸຍາຕໃຫ້ໃຊ້ ສາມເນຣເທົ່າທີ່ສາມາດຈະຕັກເຕືອນພ່ຳສອນໃຫ້ອຸປັຕຖາກໄດ້”

໔໘. ສິກຂາປທກຖາ

ວ່າດ້ວຍສິກຂາບົທຂອງສາມເນຣ

[໑໐໖] ຄັ້ງນັ້ນ ສາມເນຣທັງຫລາຍໄດ້ມີຄວາມຄິດຄຳນຶງວ່າ “ສິກຂາບົທຂອງພວກເຮົາມີເທົ່າໃດຫນໍ ແລະເຮົາຈະຕ້ອງສຶກສາໃນສິກຂາບົທໃດ” ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກ ໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ເຮົາອະນຸຍາຕສິກຂາບົທ ໑໐ ແກ່ສາມເນຣ ແລະໃຫ້ສາມເນຣສຶກສາໃນສິກຂາບົທ ໑໐ ນັ້ນ ຄື

໑. ເຈຕນາງົດເວັ້ນຈາກການຂ້າສັດ
໒. ເຈຕນາງົດເວັ້ນຈາກການຖືເອົາຂອງທີ່ເຈົ້າຂອງບໍ່ໄດ້ໃຫ້
໓. ເຈຕນາງົດເວັ້ນຈາກພຶດຕິກັມອັນບໍ່ແມ່ນພຣົມຈັນ
໔. ເຈຕນາງົດເວັ້ນຈາກການເວົ້າເທັຈ
໕. ເຈຕນາງົດເວັ້ນຈາກນ້ຳເມົາຄືສຸຣາແລະເມຣັຍອັນເປັນທີ່ຕັ້ງແຫ່ງຄວາມປມາດ
໖. ເຈຕນາງົດເວັ້ນຈາກການບໍຣິໂພຄອາຫານໃນເວລາວິການ
໗. ເຈຕນາງົດເວັ້ນຈາກການຟ້ອນລຳ ຂັບຮ້ອງ ບຣຣເລງດົນຕຣີແລະດູການລະຫລິ້ນ ອັນເປັນຂ້າສຶກຕໍ່ພຣົມຈັນ
໘. ເຈຕນາງົດເວັ້ນຈາກການທັດຊົງດອກໄມ້ຂອງຫອມແລະເຄື່ອງລູບໄລ້ຊຶ່ງໃຊ້ເປັນເຄື່ອງປະດັບຕົກແຕ່ງ
໙. ເຈຕນາງົດເວັ້ນຈາກທີ່ນອນສູງແລະທີ່ນອນໃຫຍ່
໑໐. ເຈຕນາງົດເວັ້ນຈາກການຮັບທອງແລະເງິນ

ພິກສຸທັງຫລາຍ ເຮົາອນຸຍາຕສິກຂາບົທ ໑໐ ເຫລົ່ານີ້ແກ່ສາມເນນ ແລະໃຫ້ສາມເນນສຶກສາໃນສິກຂາບົທ ໑໐ ເຫລົ່ານີ້”

໔໓. ທັນຖກັມມວັຕຖຸ

ວ່າດ້ວຍການລົງທັນຖກັມສາມເນນ

[໑໐໗] ສມັຍນັ້ນ ສາມເນນທັງຫລາຍບໍ່ມີຄວາມເຄົາຣົພ ບໍ່ມີຄວາມຢຳເກງ ມີຄວາມປະພຶດບໍ່ເຂົ້າກັນກັບພິກສຸທັງຫລາຍ ພິກສຸທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພວກສາມເນນຈຶ່ງໄດ້ບໍ່ມີຄວາມເຄົາຣົພ ບໍ່ມີຄວາມຢຳເກງ ມີຄວາມປະພຶດບໍ່ເຂົ້າກັນກັບພິກສຸທັງຫລາຍລະ” ຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ລົງທັນຖກັມແກ່ສາມເນນຜູ້ປະກອບດ້ວຍອົງຄ໌ ໕ ຄື
໑. ພຍາຍາມເພື່ອຄວາມເສື່ອມລາພແກ່ພິກສຸທັງຫລາຍ
໒. ພຍາຍາມເພື່ອຄວາມພິນາສແກ່ພິກສຸທັງຫລາຍ
໓. ພຍາຍາມເພື່ອຄວາມຢູ່ບໍ່ໄດ້ແກ່ພິກສຸທັງຫລາຍ
໔. ດ່າ ບໍຣິພາສພິກສຸທັງຫລາຍ
໕. ຍຸຍົງພິກສຸກັບພິກສຸໃຫ້ແຕກກັນ

ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ລົງທັນທກັມແກ່ສາມເນນຜູ້ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້”

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໖. ທັນທກັມມວັຕຖຸ

ຄັ້ງນັ້ນ ພິກສຸທັງຫລາຍໄດ້ມີຄວາມສົງສັຍວ່າ “ຈະຄວນລົງທັນທກັມຢ່າງໃດຫນໍ” ຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ລົງທັນທກັມຄືກາຣຫ້າມ”

ເຣື້ອງວິທີລົງທັນທກັມ

ສມັຍນັ້ນ ພິກສຸທັງຫລາຍໄດ້ລົງທັນທກັມຄືຫ້າມສາມເນນເຂົ້າສັງຂາຣາມທຸກແຫ່ງພວກສາມເນນເຂົ້າອາຣາມບໍ່ໄດ້ ຈຶ່ງຫລີກໄປແດ່ ສຶກເສັຽແດ່ ໄປເຂົ້າຮີດເດັຽຣະຖີຍ໌ແດ່ ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ບໍ່ຄວນລົງທັນທກັມຄືຫ້າມສັງຂາຣາມທຸກແຫ່ງ ຮູບໃດລົງ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ລົງທັນທກັມ ຄື ຫ້າມສະເພາະທີ່ຢູ່ຂອງຕົນຫລືທີ່ທີ່ຕົນຈະເຂົ້າໄປ”

ເຣື້ອງຫ້າມສັນທາງປາກ

ສມັຍນັ້ນ ພິກສຸທັງຫລາຍໄດ້ລົງທັນທກັມ ຄືຫ້າມສັນອາຫາຣທາງປາກ໑ ມະນຸສຍ໌ທັງຫລາຍຕົ້ມນ້ຳຍາຄູແດ່ ທຳສັງຂພັຕແດ່ ນິມົນຕ໌ພວກສາມເນນວ່າ “ຈົ່ງມາດື່ມຢາຄູເຖີດຂະນ້ອຍ ຈົ່ງມາສັນພັຕຕາຫາຣເຖີດ ຂະນ້ອຍ” ພວກສາມເນນກ່າວວ່າ “ພວກອາຕມາເຮັດຢ່າງນັ້ນບໍ່ໄດ້ດອກໂຍມ ເພາະພິກສຸທັງຫລາຍໄດ້ລົງທັນທກັມຫ້າມໄວ້” ມະນຸສຍ໌ທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພຣະຄຸນເຈົ້າທັງຫລາຍຈຶ່ງໄດ້ລົງທັນທກຣຣມ ຫ້າມສັນອາຫາຣທາງປາກລະ” ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ບໍ່ຄວນລົງທັນທກັມຫ້າມສັນອາຫາຣທາງປາກ ຮູບໃດລົງ ຕ້ອງອາບັຕິທຸກກະຕະ”

ທັນທກັມມວັຕຖຸ ຈົບ.

ໝາຍເຫດ :

๑ ຫ້າມສັ້ນອາຫາຣທາງປາກ ຫມາຍເຖິງຫ້າມຢ່າງນີ້ວ່າ "ວັນນີ້ ທ່ານຢ່າຄ້ຽວ ຢ່າສັ້ນ" (ວິ. ອ. ໓/ ໑໐໗/໗໘)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໕. ອປລາຣູນວັຕຖຸ

໔໔. ອນາປຸຈສາວຣນວັຕຖຸ

ວ່າດ້ວຍການກັກກັນສາມເນຣໂດຍບໍ່ບອກອຸປັຊຍາຍ໌

[໑໐໘] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ບໍ່ຖາມພຣະອຸປັຊຍາຍ໌ກ່ອນ ໄດ້ກັກກັນພວກສາມເນຣໄວ້ ພຣະອຸປັຊຍາຍ໌ຕາມຫາດ້ວຍນຶກສົງສັຍວ່າ "ເປັນຫຍັງຫນໍ ພວກສາມເນຣຂອງເຮົາຈຶ່ງຫາຍໄປ" ພິກສຸທັງຫລາຍໄດ້ຮຽນວ່າ "ພວກພິກສຸສັພພັຄຄີຍ໌ໄດ້ກັກກັນໄວ້ ຂະນ້ອຍ" ພຣະອຸປັຊຍາຍ໌ທັງຫລາຍ ພາກັນ ຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງບໍ່ຖາມພວກເຮົາກ່ອນກັກກັນ ສາມເນຣທັງຫລາຍຂອງພວກເຮົາໄວ້ລະ" ຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸຍັງບໍ່ຂໍອນຸຍາຕອຸປັຊຍາຍ໌ກ່ອນ ບໍ່ຄວນທຳການກັກກັນ ສາມເນຣໄວ້ ຮູບໃດທຳ ຕ້ອງອາບັຕິທຸກກະຕະ"

໔໕. ອປລາຣູນວັຕຖຸ

ວ່າດ້ວຍການເກັ້ຽກ່ອມສາມເນຣ

ຊົງຫ້າມເກັ້ຽກ່ອມສາມເນຣ

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ພາກັນເກັ້ຽກ່ອມພວກສາມເນຣຂອງພິກສຸຜູ້ເປັນເຖຣະທັງຫລາຍ ພຣະ ເຖຣະທັງຫລາຍຕ້ອງຫຍິບໄມ້ຊຳຣະແຂ້ວແດ່ ຕັກນ້ຳລ້າງຫນ້າແດ່ດ້ວຍຕົນເອງ ຍ່ອມລຳບາກ ຈຶ່ງຂາບ ທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນເກັ້ຽ ກ່ອມບໍຣິສັດຂອງພິກສຸອື່ນຮູບໃດເກັ້ຽກ່ອມ ຕ້ອງອາບັຕິທຸກກະຕະ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໖. ກັນຕກສາມເນຣວັຕຖຸ

໔໖. ກັນຕະກສາມເນຣວັຕຖຸ

ວ່າດ້ວຍການາສນະ໑ສາມເນຣກັນຕະກະ

ອົງຄ໌ ໑໐ ສຳລັບນາສນະສາມເນຣ

ສມັຍນັ້ນ ສາມເນຣຂອງທ່ານພຣະອຸປນັນທສາກຍບຸດຣຊື່ກັນຕະກະ ໄດ້ປະທຸສຮ້າຍພິກສຸນີຊື່ກັນຕະກີ ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດສາມເນຣ ຈຶ່ງໄດ້ປະພຶດບໍ່ສົມຄວນເຊັ່ນນີ້ລະ" ຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ນາສນະສາມເນຣຜູ້ປະກອບດ້ວຍອົງຄ໌ ໑໐ ຄື

໑. ຂ້າສັຕວ໌
໒. ຖືເອົາຂອງທີ່ເຈົ້າຂອງບໍ່ໄດ້ໃຫ້
໓. ປະພຶດກັມອັນບໍ່ແມ່ນພຣົມຈັນຍ໌
໔. ເວົ້າເທັຈ
໕. ດື່ມນ້ຳເມົາ
໖. ກ່າວຕິຕຽນພຣະພຸດທະເຈົ້າ
໗. ກ່າວຕິຕຽນພຣະທັມ
໘. ກ່າວຕິຕຽນພຣະສົງຂ໌
໙. ມີຄວາມເຫັນຜິດ
໑໐. ປະທຸສຮ້າຍພິກສຸນີ

ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ນາສນະສາມເນຣຜູ້ປະກອບດ້ວຍອົງຄ໌ ໑໐ ເຫລົ່ານີ້"

ໝາຍເຫດ :

໑ ນາສນະ ມີ ໓ ຢ່າງ ຄື (໑) ສັງວາສນາສນະ ໄລ່ອອກຈາກການຮ່ວມກິຈກັມ (໒) ລິງຄນາສນະ ໄລ່ສຶກ (໓) ທັນທກັມ ລົງໂທສໄລ່ໃຫ້ພົ້ນຈາກສັງກັດ ໃນທີ່ນີ້ ຫມາຍເອົາລິງຄນາສນະ ຄືໄລ່ສຶກ (ວິ. ອ. ໒/໔໒໘/໔໔໐ ວິ. ອ. ໓/໑໐໘/໗໙)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໗. ປັນທກວັຕຖຸ

໔໗. ປັນທກວັຕຖຸ

ວ່າດ້ວຍກະເທີຍບັນພະຊາ

ຫ້າມກະເທີຍ໑ອຸປສົມບົທ

[໑໐໙] ສະໄໝນັ້ນ ກະເທີຍຄົນນຶ່ງໄດ້ບັນພະຊາໃນຫມູ່ພິກສຸ ເຂົາເຂົ້າໄປຫາພິກສຸຫນຸ່ມໆເວົ້າຊວນວ່າ "ນີ້ພວກທ່ານຈົ່ງມາປະທຸສຮ້າຍຂະນ້ອຍເຖີດ໒ ຂະນ້ອຍ" ພວກພຣະຫນຸ່ມເວົ້າໄລ່ວ່າ "ເຈົ້າກະເທີຍຈົ່ງຈິບຫາຍ ເຈົ້າກະເທີຍຈົ່ງພິນາສ ເຈົ້າຈະມີປໂຍດຫຍັງ" ເຂົາຖືກພວກພິກສຸໄລ່ ຈຶ່ງເຂົ້າໄປຫາພວກສາມເນຣໂຄ່ງຮ່າງໃຫຍ່ ກ້າມໃຫຍ່ ເວົ້າຊວນວ່າ "ພວກທ່ານຈົ່ງມາປະທຸສຮ້າຍຂະນ້ອຍເຖີດ ຂະນ້ອຍ" ພວກສາມເນຣກໍເວົ້າຮຸກຮານວ່າ "ເຈົ້າກະເທີຍຈົ່ງຈິບຫາຍ ເຈົ້າກະເທີຍຈົ່ງພິນາສ ເຈົ້າຈະມີປໂຍດຫຍັງ" ເຂົາຖືກພວກສາມເນຣເວົ້າຮຸກຮານ ຈຶ່ງເຂົ້າໄປຫາພວກຄົນລ້ຽງຊ້າງ ພວກຄົນລ້ຽງມ້າ ເວົ້າຊວນວ່າ "ພວກທ່ານຈົ່ງມາປະທຸສຮ້າຍເຮົາເຖີດ" ພວກຄົນລ້ຽງຊ້າງ ພວກຄົນ ລ້ຽງມ້າຂົ່ມຂືນແລ້ວ ກໍພາກັນຕຳຫນິ ປະນາມໂພນທະນາວ່າ "ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ເປັນກະເທີຍ ບັນດາສະມະນະ

ໝາຍເຫດ :

໑ ກະເທີຍມີ ໕ ປະເພດ ຄື

໑. ຄົນທີ່ດັບຄວາມໃຄ່ຮ້ອນແຮງ (ເພາະກາມ) ຂອງຕົນໂດຍການໃຊ້ປາກອົມອົງຄຊາຕຂອງຜູ້ອື່ນແລ້ວໃຫ້ນ້ຳອສຸຈິຣົດຣາດຕົວເອງ ຊື່ວ່າ ອາສິຕຕກະເທີຍ

໒. ຄົນທີ່ເມື່ອເຫັນຜູ້ອື່ນປະພຶດລ່ວງເກີນທາງເພສກັນ ເກີດຄວາມຣິສຍາຂຶ້ນ ຄວາມຮ້ອນແຮງຈຶ່ງຣະງັບໄປ ຊື່ວ່າ ອຸສູຍກະເທີຍ

໓. ຄົນທີ່ຖືກຕັດອົງຄຊາຕ ຊື່ວ່າ ໂອປັກກມິກກະເທີຍ

໔. ຄົນທີ່ເປັນກະເທີຍໃນເວລາຂ້າງແຮມດ້ວຍອານຸພາພອກຸສົລວິບາກ ແຕ່ໃນເວລາຂ້າງຂຶ້ນ ຄວາມຮ້ອນແຮງຍ່ອມຣະງັບໄປ ຊື່ວ່າ ປັກຂກະເທີຍ

໕. ຄົນທີ່ເປັນກະເທີຍໂດຍກຳເນີດ ຊື່ວ່າ ນປຸງສກກະເທີຍ

ໃນກະເທີຍ ໕ ປະເພດນີ້ ອາສິຕຕກະເທີຍ ແລະອຸສູຍກະເທີຍ ບໍ່ຫ້າມບັນພະຊາ ສ່ວນກະເທີຍອີກ ໓ ປະເພດທີ່ເຫລືອ ຫ້າມບັນພະຊາ ອີກຢ່າງນຶ່ງໃນກຸຣຸນທີກ່າວວ່າ ປັກຂກະເທີຍ ຫ້າມບັນພະຊາສະເພາະໃນປັກສ໌ທີ່ເປັນກະເທີຍ (ຂ້າງແຮມ) (ວິ. ອ. ໓/໑໐໙/໗໑-໗໒)

໔ ປະທຸສຮ້າຍ ໃນທີ່ນີ້ ຫມາຍເຖິງ ຮ່ວມເພສ ເສພສັງວາສກັນ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໗. ເຖຍຍສັງວາສວັຕຖຸ

ເຫລົ່ານີ້ ແມ່ນທີ່ບໍ່ແມ່ນກະເທີຍກໍຂົ່ມຂືນກະເທີຍເຫລົ່ານີ້ ເມື່ອເປັນເຊັ່ນນີ້ ສະມະນະເຫລົ່ານີ້ ຈຶ່ງລ້ວນແຕ່ບໍ່ແມ່ນຜູ້ປະພຶດພຣົມຈັນຍ໌" ພິກສຸທັງຫລາຍໄດ້ຍິນຄົນລ້ຽງຊ້າງ ຄົນລ້ຽງມ້າເຫລົ່ານັ້ນ ຕຳຫນິ ປະນາມ ໂພນທະນາ ຈຶ່ງຂາບທູລເຣື່ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ອນຸປສັມບັນຜູ້ເປັນກະເທີຍ ບໍ່ຄວນໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຄວນໃຫ້ສຶກເສັຽ" (໑)

໔໗. ເຖຍຍສັງວາສວັຕຖຸ

ວ່າດ້ວຍຄົນລັກເພສ໑ແລະຄົນເຂົ້າຮີດເດັຽຣະຖີຍ໌ບັນພະຊາ

ຫ້າມຄົນລັກເພສແລະຄົນເຂົ້າຮີດອຸປສົມບົທ

[໑໑໐] ສມັຍນັ້ນ ບຸຕຣຂອງຕະກູນເກົ່າແກ່ຄົນນຶ່ງ ເປັນຄົນບອບບາງ ມີຫມູ່ຍາຕໃນຕະກູນສິ້ນໄປ ເຂົາມີຄວາມຄິດວ່າ "ເຮົາເປັນຄົນບອບບາງ ບໍ່ສາມາດຈະຫາໂພຄຊັພຍ໌ທີ່ຍັງບໍ່ມີ ຫລືຈະເຮັດໂພຄຊັພຍ໌ທີ່ມີຢູ່ໃຫ້ເພີ້ມພູນຂຶ້ນໄດ້ ດ້ວຍວິທີໃດຫນໍ ເຮົາຈະຢູ່ສຸຂສະບາຍແລະບໍ່ລຳບາກ" ຄິດໄດ້ວ່າ "ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ ມີລັກສນະນິສັຍດີ ປະພຶດຮຽບຮ້ອຍ ບໍຣິໂພຄອາຫາຣດີໆນອນໃນຫ້ອງອັນມິດຊິດ ຖ້າຢ່າງນັ້ນເຮົາຄວນຕຽມ

ໝາຍເຫດ :

໑ ຄົນລັກເພສ ແປມາຈາກຄຳວ່າ "ເຖຍຍສັງວາສກະ" ຄົນລັກເພສມີ ໓ ຈຳພວກ ຄື (໑) ຄົນລັກເພສ

(໒) ຄົນລັກສັງວາສ (໓) ຄົນລັກທັງເພສແລະສັງວາສ

ຄົນທີ່ບວຊເອງແລ້ວໄປວັດ ບໍ່ຄຳນຶງພັນສາຂອງພິກສຸ ບໍ່ຍິນດີກາຣໄຫວ້ຕາມລຳດັບພັນສາ ບໍ່ຫ້າມອາສນະ ບໍ່ເຂົ້າຮ່ວມໃນອຸໂບສົຖແລະປວາຣນາເປັນຕົ້ນ ນີ້ຊື່ວ່າຄົນລັກເພສ

ຄົນທີ່ພິກສຸທັງຫລາຍບວຊໃຫ້ ຂນະຍັງເປັນສາມເນຣ ໄປຕ່າງຖິ່ນ ເວົ້າເທັຈວ່າ "ຂະນ້ອຍບວຊມາແລ້ວ ໑໐ ພັນສາ ຫລື ໔໐ ພັນສາ" ຄຳນຶງພັນສາຂອງພິກສຸ ຍິນດີກາຣໄຫວ້ຕາມລຳດັບພັນສາ

ຫ້າມອາສົນະ ເຂົ້າຮ່ວມໃນອຸໂປສົຖແລະປວາຣນາເປັນຕົ້ນ ເພາະເຫດພຽງລັກສັງວາສເທົ່ານັ້ນ ນີ້ຊື່ວ່າ ຄົນລັກສັງວາສ ກໍກິຣິຍາທຸກປະເພດມີການນັບພັນສາຂອງພິກສຸເປັນຕົ້ນຄວນຊາບວ່າ "ສັງວາສ" ຄົນທີ່ບວຊເອງແລ້ວໄປວັດ ຄຳນຶງເຖິງການນັບພັນສາຂອງພິກສຸ ຍິນດີການໄຫວ້ຕາມລຳດັບພັນສາ ຫ້າມອາສົນະ ເຂົ້າຮ່ວມໃນອຸໂປສົຖແລະປວາຣນາເປັນຕົ້ນ ເພາະລັກເພສແລະສັງວາສ ນີ້ຊື່ວ່າ ຄົນລັກ ທັງເພສແລະສັງວາສ (ວິ. ອ. ๓/໑໑໐/໗໔-໗໕)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໙. ຕິຣັຈສານຄຕວັຕຖຸ

ບາຕຣແລະຈີວອນ ປົງຜົມແລະຫນວດ ນຸ່ງຫົ່ມຜ້າກາສາຍະເສັ້ງເອງ ແລ້ວໄປຍັງອາຣາມຢູ່ຮ່ວມ ກັບພິກສຸທັງຫລາຍ" ຕໍ່ມາ ເຂົາໄດ້ຕຽມບາຕຣແລະຈີວອນ ປົງຜົມແລະຫນວດ ນຸ່ງຫົ່ມຜ້າກາສາຍະ ເອງ ໄປຍັງອາຣາມໄຫວ້ພິກສຸທັງຫລາຍ ພິກສຸທັງຫລາຍຖາມວ່າ "ທ່ານມີພັນສາໄດ້ເທົ່າໃດລ່ະ" ເຂົາຍ້ອນຖາມວ່າ "ທີ່ຊື່ວ່າມີພັນສາເທົ່າໃດ ນັ້ນຄືຫຍັງ ຂະນ້ອຍ" "ທ່ານ ກໍໃຜເປັນພຣະອຸປັຊຢາຍ໌ ຂອງທ່ານລ່ະ" "ທີ່ຊື່ວ່າພຣະອຸປັຊຢາຍ໌ ນັ້ນຄືໃຜ ຂະນ້ອຍ" ພິກສຸທັງຫລາຍໄດ້ບອກເຣື່ອງນີ້ແກ່ທ່ານ ພຣະອຸບາລີວ່າ "ທ່ານອຸບາລີ ຂໍນິມົນຕ໌ທ່ານສອບສວນບັພຊິຕຮູບນີ້ດູເຖີດ" ຄັນເຂົາຖືກທ່ານພຣະອຸບາລີ ສອບສວນຈຶ່ງຍອມບອກເຣື່ອງນັ້ນ ທ່ານພຣະອຸບາລີໄດ້ບອກພິກສຸທັງຫລາຍ ພິກສຸທັງຫລາຍຈຶ່ງຂາບ ທູລເຣື່ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ອນຸປສັມບັນ ຜູ້ເປັນຄົນລັກເພສ ບໍ່ຄວນໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວ ຄວນໃຫ້ສຶກເສັ້ງ ພິກສຸທັງຫລາຍ ອນຸປສັມບັນຜູ້ໄປເຂົ້າຣີດເດັຽຣະຖີຍ໌ ບໍ່ຄວນໃຫ້ອຸປສົມບົທ໑ ທີ່ອຸປສົມບົທແລ້ວ ຄວນໃຫ້ສຶກເສັ້ງ" (໔-໕)

໔໙. ຕິຣັຈສານຄຕວັຕຖຸ

ວ່າດ້ວຍສັຕວ໌ເດັຽຣະສານບັນພະຊາ

ນາຄແປງກາຍເປັນມະນຸສຍ໌ມາຂອບັນພະຊາ

[໑໑໑] ສມັຍນັ້ນ ນາຄຕົວນຶ່ງອຶດອັດ ຣະອາ ກຽດຊັງກຳເນີດນາຄ ຕໍ່ມານາຄນັ້ນມີຄວາມດຳຣິວ່າ "ດ້ວຍອຸບາຍຢ່າງໃດຫນໍ ເຮົາຈະຄວນພົ້ນຈາກກຳເນີດນາຄ

ໝາຍເຫດ :

໑ ອນຸປສັມບັນທີ່ໄປເຂົ້າຣິດເດັຽຣະຖີຍ໌ນັ້ນ ບໍ່ພຽງແຕ່ບໍ່ຄວນໃຫ້ອຸປສົມບົທເທົ່ານັ້ນ ຍັງເປັນຜູ້ທີ່ບໍ່ຄວນບັນພະຊາໃຫ້ອີກດ້ວຍ (ວິ. ອ. ໓/໑໑໐/໗໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໔໙. ຕິຣັຈສານຄຕວັຕຖຸ

ແລະຄວນໄດ້ອັຕພາພມະນຸສຍ໌ທັນທີ" ຄິດໄດ້ວ່າ ພຣະສະມະນະເຊື້ອສາຍສາກຍບຸຕຣເຫລົ່ານີ້ເປັນ ຜູ້ປະພຶດທັມ ປະພຶດສງົບ ປະພຶດພຣົມຈັນຍ໌ ກ່າວວາຈາສັຕຍ໌ ມີສີລ ມີກັລຍານທັມ ຖ້າເຮົາຈະຄວນບັນພະຊາໃນພວກພຣະສະມະນະເຊື້ອສາຍພຣະສາກຍບຸຕຣແລ້ວນີ້ ດ້ວຍອຸບາຍຢ່າງນີ້ ເຮົາກໍຈະຄວນພົ້ນຈາກກຳເນີດນາຄ ແລະໄດ້ອັຕພາພມະນຸສຍ໌ໃນທັນທີ ຈຶ່ງແປງກາຍເປັນຊາຍຫນຸ່ມເຂົ້າໄປຫາພິກສຸທັງຫລາຍຂໍບັນພະຊາ ພິກສຸທັງຫລາຍ ໄດ້ໃຫ້ບັນພະຊາໃຫ້ອຸປສົມບົທ ຕໍ່ມາ ພຣະນາຄອາສັຍຢູ່ໃນວິຫາຣ ຫລັງສຸດທ້າຍກັບພິກສຸຣູບນຶ່ງ ຄັນຣາຕຣີຍ່ຳຣຸ່ງ ພິກສຸຣູບນັ້ນຕື່ນຂຶ້ນໄປຍ່າງຈົງກົມ ຢູ່ໃນທີ່ແຈ້ງ ເມື່ອທ່ານອອກໄປແລ້ວ ພຣະນາຄກໍວາງໃຈກ້າວລົງສູ່ຄວາມຫລັບ ວິຫາຣທັງຫລັງເຕັມດ້ວຍງູ ຂົດຍື່ນອອກທາງປ່ອງຢ້ຽມ ຄັນພິກສຸນັ້ນຍູ້ບານປະຕູຈະເຂົ້າວິຫາຣ ໄດ້ເຫັນວິຫາຣທັງຫລັງເຕັມດ້ວຍງູ ຂົດຍື່ນອອກທາງປ່ອງຢ້ຽມ ກໍຕົກຕະລຶງຮ້ອງສຽງດັ່ງ ພິກສຸທັງຫລາຍແລ່ນເຂົ້າໄປຫາຖາມພິກສຸນັ້ນວ່າ "ອາວຸໂສ ທ່ານຮ້ອງສຽງດັ່ງເປັນຫຍັງ" ພິກສຸນັ້ນບອກວ່າ "ທ່ານທັງຫລາຍ ວິຫາຣທັງຫລັງເຕັມດ້ວຍງູ ຂົດຍື່ນອອກທາງປ່ອງຢ້ຽມ" ທັນໃດນັ້ນ ພຣະນາຄໄດ້ຕື່ນຂຶ້ນເພາະສຽງນັ້ນ ຮີບນັ່ງເທິງອາສນະຂອງຕົນ ພິກສຸທັງຫລາຍຖາມວ່າ "ອາວຸໂສ ທ່ານເປັນໃຜ" ພຣະນາຄຕອບວ່າ "ຂະນ້ອຍເປັນນາຄ ຂະນ້ອຍ" ພິກສຸທັງຫລາຍຖາມວ່າ "ອາວຸໂສ ທ່ານໄດ້ທຳເຊັ່ນນີ້ເພື່ອຫຍັງ" ພຣະນາຄໄດ້ບອກເຣື່ອງນັ້ນ ພິກສຸທັງຫລາຍຈຶ່ງຂາບທູລໃຫ້ພຣະຜູ້ມີພຣະພາກຊົງຊາບ ຄັ້ງນັ້ນ ພຣະຜູ້ມີພຣະພາກຮັບສັ່ງໃຫ້ປະຊຸມພິກສຸສົງຂ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ໄດ້ຕຣັສກັບພຣະນາຄນັ້ນວ່າ "ພວກເຈົ້າເປັນນາຄ ບໍ່ມີຄວາມງອກງາມໃນພຣະທັມວິນັຍນີ້ ໄປເຖີດ ນາຄ ເຈົ້າຈົ່ງເຂົ້າຈຳອຸໂບສົຖໃນດິຖີທີ ໑໔ ດິຖີທີ ໑໕ ແລະດິຖີທີ ໗ ບ່ອນປັກສ໌ນັ້ນແຫລະ ດ້ວຍອຸບາຍຢ່າງນີ້ ເຈົ້າຈັກພົ້ນຈາກກຳເນີດນາຄ ແລະໄດ້ອັຕພາພມະນຸສຍ໌ທັນທີ" ນາຄຄັນໄດ້ຊາບວ່າຕົນບໍ່ມີຄວາມງອກງາມໃນພຣະທັມວິນັຍນີ້ແນ່ນອນ ກໍມີທຸກຂ໌ເສັຽໃຈ ຫລັ່ງນ້ຳຕາສົ່ງສຽງດັ່ງຫລີກໄປ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທຸກະ] ໕໐. ມາຕຸຂາຕກວັຕຖຸ

ລຳດັບນັ້ນ ພຣະຜູ້ມີພຣະພາກຣັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຫຕຸທີ່ເຮັດໃຫ້ນາຄປາກົດຮ່າງເປັນນາຄ ມີ ໒ ປະການເຫລົ່ານີ້ ຄື (໑) ເວລາທີ່ເສພເມຖຸນທັມກັບນາງນາຄມີຊາຕິສະເມີກັນ (໒) ເວລາທີ່ວາງໃຈກ້າວລົງສູ່ຄວາມຫລັບ ພິກສຸທັງຫລາຍ ເຫຕຸທີ່ເຮັດໃຫ້ນາຄປາກົດຮ່າງເປັນນາຄມີ ໒ ປະການເຫລົ່ານີ້ ພິກສຸທັງຫລາຍ ອນຸປສັມບັນຜູ້ເປັນສັຕວ໌ເດັຽຣະສານ ບໍ່ຄວນໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຄວນໃຫ້ສຶກເສັຽ" (໔)

໕໐. ມາຕຸຂາຕກວັຕຖຸ

ວ່າດ້ວຍຄົນຂ້າມາຣດາຂໍບັນພະຊາ

ຫ້າມຄົນຂ້າມາຣດາອຸປສົມບົທ

[໑໑໒] ສມັຍນັ້ນ ມານົພຜູ້ນຶ່ງໄດ້ປົງຊີວິຕມາຣດາ ເຂົາອຶດອັດ ຣະອາ ກຽດຊັງບາປກັມນັ້ນ ຕໍ່ມາ ເຂົາມີຄວາມດຳຣິວ່າ "ດ້ວຍອຸບາຍຢ່າງໃດຫນໍ ເຮົາຈະຄວນທຳການສະສາງບາປກັມນີ້ໄດ້" ຄິດໄດ້ວ່າ "ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ເປັນຜູ້ປະພຶດທັມ ປະພຶດສງົບ ປະພຶດພຣົມຈັນຍ໌ ກ່າວວາຈາສັຕຍ໌ ມີສີລ ມີກັລຍານທັມ ຖ້າເຮົາຈະຄວນບັນພະຊາໃນພວກພຣະສະມະນະເຊື້ອສາຍພຣະສາກຍບຸຕຣ ດ້ວຍອຸບາຍຢ່າງນີ້ ເຮົາກໍຈະຄວນທຳການສະສາງບາປກັມນີ້ໄດ້" ຈຶ່ງເຂົ້າໄປຫາພິກສຸທັງຫລາຍຂໍບັນພະຊາ ພິກສຸທັງຫລາຍໄດ້ບອກເຣື້ອງນີ້ແກ່ທ່ານພຣະອຸບາລີວ່າ "ທ່ານອຸບາລີ ເມື່ອກ່ອນນາຄໄດ້ແປງກາຍເປັນຊາຍຫນຸ່ມເຂົ້າມາບັນພະຊາໃນຫມູ່ພິກສຸ ຂໍນິມົນຕ໌ທ່ານຈົ່ງສອບສວນມານົພຜູ້ນີ້ດູເຖີດ" ຄັນມານົພນັ້ນຖືກທ່ານພຣະອຸບາລີສອບສວນຈຶ່ງບອກເຣື້ອງນັ້ນໃຫ້ຊາບ ທ່ານພຣະອຸບາລີໄດ້ບອກເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ພວກພິກສຸຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ອນຸປສັມບັນຜູ້ຂ້າມາຣດາ ບໍ່ຄວນໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວ ຄວນໃຫ້ສຶກເສັຽ" (໕)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທຸກະ] ໕໒. ອະຣະຫັນຕະຂາຕກວັຕຖຸ

໕໑. ປິຕຸຂາຕກວັຕຖຸ

ວ່າດ້ວຍຄົນຂ້າບິດາຂໍບັນພະຊາ

ຫ້າມຄົນຂ້າບິດາອຸປສົມບົທ

[໑໑໖] ສະໄໝນັ້ນ ມານົບຜູ້ນຶ່ງໄດ້ປົງຊີວິຕບິດາ ເຂົາອຶດອັດ ຣະອາ ກຽດຊັງ ບາປກັມນັ້ນ ຕໍ່ມາ ເຂົາມີຄວາມດຳຣິວ່າ "ດ້ວຍອຸບາຍຢ່າງໃດຫນໍ ເຮົາຈະຄວນທຳການສະສາງບາປກັມໄດ້" ຄິດໄດ້ວ່າ "ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ເປັນຜູ້ປະພຶດທັມ ປະພຶດສງົບ ປະພຶດພຣົມຈັນຍ໌ ກ່າວວາຈາສັຕຍ໌ ມີສີລມີກັລຍານທັມ ຖ້າເຮົາຈະຄວນບັນພະຊາໃນພວກພຣະສະມະນະເຊື້ອສາຍພຣະສາກຍບຸຕຣ ດ້ວຍອຸບາຍຢ່າງນີ້ ເຮົາກໍຈະຄວນທຳການສະສາງບາປກັມນີ້ໄດ້" ຈຶ່ງເຂົ້າໄປຫາພິກສຸທັງຫລາຍຂໍບັນພະຊາ ພິກສຸທັງຫລາຍໄດ້ບອກເຣື້ອງນີ້ແກ່ທ່ານພຣະອຸບາລີວ່າ "ທ່ານອຸບາລີ ເມື່ອກ່ອນນາຄໄດ້ແປງກາຍເປັນຊາຍຫນຸ່ມເຂົ້າມາບັນພະຊາໃນຫມູ່ພິກສຸ ຂໍນິມົນຕ໌ທ່ານສອບສວນມານົບຜູ້ນີ້ດູເຖີດ" ຄັນມານົບນັ້ນຖືກທ່ານພຣະອຸບາລີສອບສວນຈຶ່ງບອກເຣື້ອງນັ້ນໃຫ້ຊາບ ທ່ານພຣະອຸບາລີໄດ້ບອກເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ພວກພິກສຸຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ອນຸປສົມບັນຜູ້ຂ້າບິດາ ບໍ່ຄວນໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວ ຄວນໃຫ້ສຶກເສັຽ" (໖)

໕໔. ອະຣະຫັນຕະຂາຕກວັຕຖຸ

ວ່າດ້ວຍຄົນຂ້າພຣະອຣຫັນຕ໌ບັນພະຊາ

ຫ້າມຄົນຂ້າພຣະອຣຫັນຕ໌ອຸປສົມບົທ

[໑໑໔] ສະໄໝນັ້ນ ພິກສຸຈຳນວນຫລາຍຮູບໄດ້ຍ່າງທາງໄກຈາກເມືອງສາເກຕໄປກຸງສາວັຕຖີ ຣະຫວ່າງທາງ ໂຈຣຍົກພວກອອກມາປຸ້ນພິກສຸບາງພວກ ຂ້າພິກສຸບາງພວກເຈົ້າຫນ້າທີ່ຍົກກຳລັງຈາກກຸງສາວັຕຖີໄປຈັບໂຈຣບາງພວກໄດ້ ບາງພວກຫລົບຫນີໄປ ພວກທີ່ຫນີໄປໄດ້ບັນພະຊາໃນຫມູ່ພິກສຸ ພວກທີ່ຖືກຈັບກຳລັງຖືກເຈົ້າຫນ້າທີ່ນຳໄປຂ້າ ພວກໂຈຣທີ່ຫນີໄປບັນພະຊາ ໄດ້ເຫັນໂຈຣເຫລົ່ານັ້ນກຳລັງຖືກນຳໄປຂ້າ ກໍກ່າວຂຶ້ນວ່າ "ດີແລ້ວທີ່ພວກເຮົາຫນີຣອດມາໄດ້ ຖ້າມື້ນັ້ນຖືກຈັບກໍຈະຕ້ອງຖືກຂ້າເຊັ່ນນັ້ນດ້ວຍ" ພິກສຸທັງຫລາຍຖາມວ່າ "ທ່ານທັງຫລາຍ ກໍພວກທ່ານໄດ້ເຮັດຫຍັງ" ພິກສຸເຫລົ່ານັ້ນໄດ້ບອກເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ ພວກພິກສຸຈຶ່ງຂາບທູລໃຫ້ພຣະຜູ້ມີພຣະພາກຊົງຊາບພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸພວກນັ້ນທີ່ຖືກຂ້າເປັນພຣະອຣຫັນຕ໌ພິກສຸທັງຫລາຍ ອນຸປສົມບັນຜູ້ຂ້າພຣະອຣຫັນຕ໌ ບໍ່ຄວນໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຄວນໃຫ້ສຶກເສັຽ" (໗)

໕໖. ພິກຂຸນີທູສກວັຕຖຸ

ວ່າດ້ວຍຄົນປະທຸສຮ້າຍພິກສຸນີເປັນຕົ້ນບັນພະຊາ

ຫ້າມຄົນປະທຸສຮ້າຍພິກສຸນີເປັນຕົ້ນອຸປສົມບົທ

[໑໑໕] ສມັຍນັ້ນ ພິກສຸນີຫລາຍຮູບໄດ້ຍ່າງທາງໄກຈາກເມືອງສາເກຕໄປກຸງສາວັຕຖີຣະຫວ່າງທາງໂຈຣຍົກພວກອອກມາປຸ້ນພິກສຸນີບາງພວກ ທຳຮ້າຍພິກສຸນີບາງພວກເຈົ້າຫນ້າທີ່ຍົກກຳລັງອອກຈາກກຸງສາວັຕຖີໄປຈັບໂຈຣບາງພວກໄດ້ ບາງພວກຫລົບຫນີໄປພວກທີ່ຫນີໄປໄດ້ບັນພະຊາໃນຫມູ່ພິກສຸພວກທີ່ຖືກຈັບກຳລັງຖືກເຈົ້າຫນ້າທີ່ນຳໄປຂ້າ ພວກໂຈຣທີ່ຫນີໄປບັນພະຊາໄດ້ເຫັນໂຈຣເຫລົ່ານັ້ນກຳລັງຖືກນຳໄປຂ້າ ກໍກ່າວຂຶ້ນວ່າ "ດີແລ້ວທີ່ພວກເຮົາຫນີຣອດມາໄດ້ ຖ້າມື້ນັ້ນຖືກຈັບ ກໍຈະຕ້ອງຖືກຂ້າເຊັ່ນນັ້ນດ້ວຍ" ພິກສຸທັງຫລາຍຖາມວ່າ "ທ່ານທັງຫລາຍ ກໍພວກທ່ານໄດ້ເຮັດຫຍັງ" ພິກສຸເຫລົ່ານັ້ນໄດ້ບອກເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ ພວກພິກສຸຈຶ່ງຂາບທູລໃຫ້
ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ອນຸປສັມບັນຜູ້ປະທຸສຮ້າຍພິກສຸນີບໍ່ຄວນໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວ ຄວນໃຫ້ສຶກເສັຽ" (໗)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໕໕. ອນຸປັຊຊາຍກາທິວັຕຖຸ

ເຣື້ອງຄົນທຳລາຍສົງຂ໌

ພິກສຸທັງຫລາຍ ອນຸປສັມບັນຜູ້ທຳລາຍສົງຂ໌ ບໍ່ຄວນໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຄວນໃຫ້ສຶກເສັຽ (໘)

ເຣື້ອງຄົນທຳຮ້າຍພຣະພຸດທະເຈົ້າຈົນຫໍ້ພຣະໂລຫິຕ

ພິກສຸທັງຫລາຍ ອນຸປສັມບັນຜູ້ທຳຮ້າຍພຣະພຸດທະເຈົ້າຈົນຫໍ້ພຣະໂລຫິຕ ບໍ່ຄວນໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວ ຄວນໃຫ້ສຶກເສັຽ (໑໐)

໕໔. ອຸພໂຕພຍັຊຊນກ

ວ່າດ້ວຍອຸພໂຕພຍັຊຊນກບັນພະຊາ

ຫ້າມອຸພະໂຕພຍັຍຊນກອຸປສົມບົທ

[໑໑໖] ສມັຍນັ້ນ ອຸພະໂຕພຍັຍຊນກ໑ບາງຄົນໄດ້ບັນພະຊາໃນຫມູ່ພິກສຸ ທ່ານເສພເມຖຸນທັມໃນສະຕຣີທັງຫລາຍດ້ວຍປຸຣິສນິມິຕຂອງຕົນແດ່ ໃຫ້ບຸຣຸສອື່ນເສພເມຖຸນທັມໃນອິຕຖີນິມິຕຂອງຕົນແດ່ ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ອນຸປສັມບັນຜູ້ເປັນອຸພະໂຕພຍັຍຊນກ ບໍ່ຄວນໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຄວນໃຫ້ສຶກເສັຽ" (໑໑)

໕໕. ອນຸປັຊຍາຍກາທິວັຕຖຸ

ວ່າດ້ວຍຄົນບໍ່ມີອຸປັຊຍາຍ໌ອຸປສົມບົທເປັນຕົ້ນ

[໑໑໗] ສມັຍນັ້ນ ພວກພິກສຸໃຫ້ກຸລບຸຕຣຜູ້ບໍ່ມີອຸປັຊຍາຍ໌ອຸປສົມບົທ ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ

ໝາຍເຫດ :

໑ ອຸພະໂຕພຍັຍຊນກ ຫມາຍເຖິງຄົນມີ ໔ ເພສ ຄືສັນຍາລັກສນ໌ເພສຍິງ ແລະສັນຍາລັກສນ໌ເພສຊາຍເພາະຜົລກັມທີ່ທຳໄວ້ (ວິ. ອ. ໓/໑໑໖/໙໔)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໕໕. ອນຸປັຊຍາຍກາທິວັຕຖຸ

ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ກຸລບຸຕຣຜູ້ບໍ່ມີອຸປັຊຍາຍ໌ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ" (໑໔)

ເຣື້ອງຄົນມີສົງຄ໌ເປັນອຸປັຊຍາຍ໌

ສມັຍນັ້ນ ພວກພິກສຸໃຫ້ກຸລບຸຕຣມີສົງຄ໌ເປັນອຸປັຊຍາຍ໌ອຸປສົມບົທ ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ກຸລບຸຕຣມີສົງຄ໌ເປັນອຸປັຊຍາຍ໌ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ" (໑໓)

ເຣື້ອງຄົນມີຄນະເປັນອຸປັຊຍາຍ໌

ສມັຍນັ້ນ ພວກພິກສຸໃຫ້ກຸລບຸຕຣມີຄນະເປັນອຸປັຊຍາຍ໌ອຸປສົມບົທ ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງ

ນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ກຸລບຸຕຣມີຄບະເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ" (໑໔)

ເຣື່ອງຄົນມີກະເທີຍເປັນອຸປັຊຢາຍ໌ເປັນຕົ້ນ

ສະໄໝຕໍ່ມາ ພວກພິກສຸໃຫ້ກຸລບຸຕຣມີກະເທີຍເປັນອຸປັຊຢາຍ໌ອຸປສົມບົທ. . .

. . . ໃຫ້ກຸລບຸຕຣມີຄົນລັກເພສເປັນອຸປັຊຢາຍ໌ອຸປສົມບົທ. . .

. . . ໃຫ້ກຸລບຸຕຣມີພິກສຸໄປເຂົ້າຣີດເດັຽຣະຖີຍ໌ເປັນອຸປັຊຢາຍ໌ອຸປສົມບົທ. . .

. . . ໃຫ້ກຸລບຸຕຣມີສັຕວ໌ເດັຽຣະສານເປັນອຸປັຊຢາຍ໌ອຸປສົມບົທ. . .

. . . ໃຫ້ກຸລບຸຕຣມີຄົນຂ້າມາຣດາເປັນອຸປັຊຢາຍ໌ອຸປສົມບົທ. . .

. . . ໃຫ້ກຸລບຸຕຣມີຄົນຂ້າບິດາເປັນອຸປັຊຢາຍ໌ອຸປສົມບົທ. . .

. . . ໃຫ້ກຸລບຸຕຣມີຄົນຂ້າພຣະອຣຫັນຕ໌ເປັນອຸປັຊຢາຍ໌ອຸປສົມບົທ. . .

. . . ໃຫ້ກຸລບຸຕຣມີຄົນປະທຸສຮ້າຍພິກສຸນີເປັນອຸປັຊຢາຍ໌ອຸປສົມບົທ. . .

. . . ໃຫ້ກຸລບຸຕຣມີຄົນທຳລາຍສົງຄ໌ເປັນອຸປັຊຢາຍ໌ອຸປສົມບົທ. . .

. . . ໃຫ້ກຸລບຸຕຣມີຄົນທຳຮ້າຍພຣະພຸດທະເຈົ້າຈົນຫໍ້ພຣະໂລຫິຕເປັນອຸປັຊຢາຍ໌ອຸປສົມບົທ. . .

. . . ໃຫ້ກຸລບຸຕຣມີອຸພໂຕພຍັຊນກເປັນອຸປັຊຢາຍ໌ອຸປສົມບົທ

ພິກສຸທັງຫລາຍຈຶ່ງຂາບທູລເຣື່ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ກຸລບຸຕຣມີກະເທີຍເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ"

. . . ກຸລບຸຕຣມີຄົນລັກເພສເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ. . .

. . . ກຸລບຸຕຣມີພິກສຸໄປເຂົ້າຣີດເດັຽຣະຖີຍ໌ເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ. . .

. . . ກຸລບຸຕຣມີສັຕວ໌ເດຣັຈສານເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ. . .

. . . ກຸລບຸຕຣມີຄົນຂ້າມາຣດາເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ. . .

. . . ກຸລບຸຕຣມີຄົນຂ້າບິດາເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ. . .

. . . ກຸລບຸຕຣມີຄົນຂ້າພຣະອຣຫັນຕ໌ເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ. . .

. . . ກຸລບຸຕຣມີຄົນປະທຸສຮ້າຍພິກສຸນີເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ. . .

. . . ກຸລບຸຕຣມີຄົນທຳລາຍສົງຄ໌ເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ. . .

. . . ກຸລບຸຕຣມີຄົນທຳຮ້າຍພຣະພຸດທະເຈົ້າຈົນຫໍ້ພຣະໂລຫິຕເປັນອຸປັຊຢາຍ໌ ບໍ່ຄວນໃຫ້ອຸປສົມບົທ. .

. . ກຸລບຸຕຣມີອຸພຸໂຕພຍັຍ່ຊນກເປັນອຸປັຊຍ່າຍ໌ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ (໑໕)

໕໖. ອປັຕຕກາທິວັຕຖຸ

ວ່າດ້ວຍຄົນບໍ່ມີບາຕຣອຸປສົມບົທເປັນຕົ້ນ

ຫ້າມຄົນບໍ່ມີບາຕຣອຸປສົມບົທ

[໑໑໘] ສົມັຍນັ້ນ ພວກພິກສຸໃຫ້ກຸລບຸຕຣຜູ້ບໍ່ມີບາຕຣອຸປສົມບົທ ພວກທ່ານອຸປສົມບົທແລ້ວກໍ ທ່ຽວບິນທບາຕດ້ວຍມື ມະນຸສຍ໌ທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ທ່ຽວບິນທບາຕເຫມືອນພວກເດັຽຣະຖີຍ໌" ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກຸລບຸຕຣຜູ້ບໍ່ມີບາຕຣ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ" (໑໖)

ເຣື້ອງຄົນບໍ່ມີຈີວອນ

ສົມັຍນັ້ນ ພວກພິກສຸໃຫ້ກຸລບຸຕຣຜູ້ບໍ່ມີຈີວອນອຸປສົມບົທ ພວກທ່ານອຸປສົມບົທແລ້ວກໍເປືອຍກາຍທ່ຽວບິນທບາຕ ມະນຸສຍ໌ທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາ ວ່າ "ທ່ຽວບິນທບາຕເຫມືອນພວກເດັຽຣະຖີຍ໌" ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກຸລບຸຕຣຜູ້ບໍ່ມີຈີວອນ ບໍ່ຄວນໃຫ້ອຸປສົມບົທຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ" (໑໗)

ເຣື້ອງຄົນບໍ່ມີທັງບາຕຣແລະຈີວອນ

ສົມັຍນັ້ນ ພວກພິກສຸໃຫ້ກຸລບຸຕຣຜູ້ບໍ່ມີທັງບາຕຣແລະຈີວອນອຸປສົມບົທ ພວກທ່ານອຸປສົມບົທແລ້ວກໍເປືອຍກາຍທ່ຽວບິນທບາຕດ້ວຍມື ມະນຸສຍ໌ທັງຫລາຍພາກັນຕຳຫນິປະນາມ ໂພນທະນາວ່າ "ທ່ຽວບິນທບາຕເຫມືອນພວກເດັຽຣະຖີຍ໌" ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກຸລບຸຕຣຜູ້ບໍ່ມີທັງບາຕຣແລະຈີວອນ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ" (໑໘)

ເຣື້ອງຄົນຢືມບາຕຣ

ສົມັຍນັ້ນ ພວກພິກສຸໃຫ້ກຸລບຸຕຣຜູ້ຢືມບາຕຣເຂົ້າມາອຸປສົມບົທ ເມື່ອອຸປສົມບົທແລ້ວເຈົ້າຂອງກໍຂໍເອົາ

ບາຕຣຄືນ ພວກທ່ານຫຽວບິນຫບາຕດ້ວຍມື ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມ ໂພນ ທະນາວ່າ "ຫຽວບິນຫບາຕເໝືອນພວກເດັຽຣະຖີຍ໌" ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍກຸລບຸຕຣຜູ້ຍືມບາຕຣເຂົ້າມາ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ" (໑໙)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໕໗. ປັພພາເຊຕັພພທວັຕຖຸສູຕຣ

ເຣື້ອງຄົນຍືມຈີວອນ

ສມັຍນັ້ນ ພວກພິກສຸໃຫ້ກຸລບຸຕຣຜູ້ຍືມຈີວອນເຂົ້າມາອຸປສົມບົທ ເມື່ອອຸປສົມບົທແລ້ວເຈົ້າຂອງກໍຂໍເອົາຈີວອນຄືນ ພວກທ່ານເປືອຍກາຍຫຽວບິນຫບາຕດ້ວຍມື ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ "ຫຽວບິນຫບາຕເໝືອນພວກເດັຽຣະຖີຍ໌" ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກຸລບຸຕຣຜູ້ຍືມຈີວອນເຂົ້າມາບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ" (໔໐)

ເຣື້ອງຄົນຍືມບາຕຣແລະຈີວອນ

ສມັຍນັ້ນ ພວກພິກສຸໃຫ້ກຸລບຸຕຣຜູ້ຍືມບາຕຣແລະຈີວອນເຂົ້າມາອຸປສົມບົທ ເມື່ອອຸປສົມບົທ ແລ້ວເຈົ້າຂອງກໍຂໍເອົາບາຕຣແລະຈີວອນຄືນ ພວກທ່ານເປືອຍກາຍຫຽວບິນຫບາຕດ້ວຍມື ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມ ໂພນທະນານວ່າ "ຫຽວບິນຫບາຕເໝືອນພວກເດັຽຣະຖີຍ໌" ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກຸລບຸຕຣຜູ້ຍືມບາຕຣແລະຈີວອນເຂົ້າມາ ບໍ່ຄວນໃຫ້ອຸປສົມບົທ ຮູບໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກະຕະ" (໔໑)

ນອຸປສັມປາເທຕັພພກວີສຕິວາຣ ຈົບ

໕໗. ປັພພາເຊຕັພພທວັຕຖຸສູຕຣ

ວ່າດ້ວຍບຸຄຄົລບໍ່ຄວຣໃຫ້ບັນພະຊາ ໓໔ ຈຳພວກ

[໑໑໙] ສມັຍນັ້ນ ພວກພິກສຸໃຫ້ຄົນມືກຸດບັນພະຊາ . . .

. . . ໃຫ້ຄົນຕີນກຸດບັນພະຊາ . . .

. . . ໃຫ້ຄົນທັງມືອທັງຕີນກຸ້ນບັນພະຊາ . . .

. . . ໃຫ້ຄົນຫູວິ່ນບັນພະຊາ . . .

. . . ໃຫ້ຄົນດັງແຫວ່ງບັນພະຊາ . . .

. . . ໃຫ້ຄົນທັງຫູວິ່ນທັງດັງແຫວ່ງບັນພະຊາ . . .

. . . ໃຫ້ຄົນນິ້ວມືນິ້ວຕີນຂາດບັນພະຊາ . . .

. . . ໃຫ້ຄົນງ່າມມືງ່າມຕີນຂາດບັນພະຊາ . . .

. . . ໃຫ້ຄົນເອັນຂາດບັນພະຊາ . . .

. . . ໃຫ້ຄົນມືອເປັນແຜ່ນບັນພະຊາ . . .

. . . ໃຫ້ຄົນຄ່ອມບັນພະຊາ . . .

. . . ໃຫ້ຄົນເຕັ້ງບັນພະຊາ . . .

. . . ໃຫ້ຄົນຄໍພອກບັນພະຊາ . . .

. . . ໃຫ້ຄົນຖືກສູັກຫມາຍໂທສູບັນພະຊາ . . .

. . . ໃຫ້ຄົນມີຮອຍຂ້ຽນດ້ວຍຫວາຍບັນພະຊາ . . .

. . . ໃຫ້ຄົນມີຫມາຍຈັບບັນພະຊາ . . .

. . . ໃຫ້ຄົນຕີນປຸກບັນພະຊາ . . .

. . . ໃຫ້ຄົນມີໂຣຄເຮື້ອຮັງບັນພະຊາ . . .

. . . ໃຫ້ຄົນມີຮູບຮ່າງບໍ່ສູມປະກອບບັນພະຊາ໑ . . .

. . . ໃຫ້ຄົນຕາບອດຂ້າງດຽວບັນພະຊາ . . .

. . . ໃຫ້ຄົນງ່ອຍບັນພະຊາ . . .

. . . ໃຫ້ຄົນກຣະຈອກບັນພະຊາ . . .

. . . ໃຫ້ຄົນເປັນໂຣຄອັມພາຕບັນພະຊາ . . .

. . . ໃຫ້ຄົນເຄື່ອນໄຫວເອງບໍ່ໄດ້ບັນພະຊາ . . .

. . . ໃຫ້ຄົນຊຣາຫຸພພລພູາພບັນພະຊາ . . .

. . . ໃຫ້ຄົນຕາບອດສູອງຂ້າງບັນພະຊາ . . .

. . . ໃຫ້ຄົນໃບ້ບັນພະຊາ . . .

. . . ໃຫ້ຄົນຫູຫນວກບັນພະຊາ . . .

ໝາຍເຫດ :

໑ ຄົນມີຮູບຮ່າງບໍ່ສົມປະກອບ ຮຽກວ່າ "ຄົນປະທຸສຮ້າຍບໍຣິສັດ" ຄື ຄົນມີຮູບຮ່າງຜິດປົກກະຕິ ເຊັ່ນ ສູງເກີນໄປ ເຕັ້ຍເກີນໄປ ດຳເກີນໄປ ຂາວເກີນໄປ ດັງໃຫຍ່ເກີນໄປ ດັງເລັກເກີນໄປ (ວິ. ອ. ໓/ ໑໑໙/໙໕-໙໙)

. . . ໃຫ້ຄົນທັງບອດທັງໃບ້ບັນພະຊາ . . .

. . . ໃຫ້ຄົນທັງບອດທັງຫນວກບັນພະຊາ . . .

. . . ໃຫ້ຄົນທັງໃບ້ທັງຫນວກບັນພະຊາ . . .

. . . ໃຫ້ຄົນທັງບອດທັງໃບ້ທັງຫນວກບັນພະຊາ . . .

ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ

ເຣື້ອງຊົງຫ້າມໃຫ້ຄົນມືກຸ້ນເປັນຕົ້ນບັນພະຊາ

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນໃຫ້ຄົນມືກຸ້ນບັນພະຊາ . . .

. . . ບໍ່ຄວນໃຫ້ຄົນຕີນກຸ້ນບັນພະຊາ . . .

. . . ບໍ່ຄວນໃຫ້ຄົນທັງມືທັງຕີນກຸ້ນບັນພະຊາ . . .

. . . ບໍ່ຄວນໃຫ້ຄົນຫູວິ່ນບັນພະຊາ . . .

. . . ບໍ່ຄວນໃຫ້ຄົນດັງແຫວ່ງບັນພະຊາ . . .

. . . ບໍ່ຄວນໃຫ້ຄົນທັງຫູວິ່ນທັງດັງແຫວ່ງບັນພະຊາ . . .

. . . ບໍ່ຄວນໃຫ້ຄົນນິ້ວມືນິ້ວຕີນຂາດບັນພະຊາ . . .

. . . ບໍ່ຄວນໃຫ້ຄົນງ່າມມືງ່າມຕີນຂາດບັນພະຊາ . . .

. . . ບໍ່ຄວນໃຫ້ຄົນເອັນຂາດບັນພະຊາ . . .

. . . ບໍ່ຄວນໃຫ້ຄົນມືເປັນແຜ່ນບັນພະຊາ . . .

. . . ບໍ່ຄວນໃຫ້ຄົນຄ່ອມບັນພະຊາ . . .

. . . ບໍ່ຄວນໃຫ້ຄົນເຕັ້ຍບັນພະຊາ . . .

. . . ບໍ່ຄວນໃຫ້ຄົນຄໍພອກບັນພະຊາ . . .

. . . ບໍ່ຄວນໃຫ້ຄົນຖືກສັກຫມາຍໂທສບັນພະຊາ . . .

. . . ບໍ່ຄວນໃຫ້ຄົນມີຮອຍຂ້ຽນດ້ວຍຫວາຍບັນພະຊາ . . .

. . . ບໍ່ຄວນໃຫ້ຄົນມີຫມາຍຈັບບັນພະຊາ . . .

. . . ບໍ່ຄວນໃຫ້ຄົນຕີນປຸກບັນພະຊາ . . .

. . . ບໍ່ຄວນໃຫ້ຄົນມີໂຣຄເຮື້ອຮັງບັນພະຊາ . . .

. . . ບໍ່ຄວນໃຫ້ຄົນມີຮູບຮ່າງບໍ່ສົມປະກອບບັນພະຊາ . . .

. . . ບໍ່ຄວນໃຫ້ຄົນຕາບອດຂ້າງດຽວບັນພະຊາ . . .

. . . ບໍ່ຄວນໃຫ້ຄົນງ່ອຍບັນພະຊາ . . .

. . . ບໍ່ຄວນໃຫ້ຄົນກຣະຈອກບັນພະຊາ . . .

. . . ບໍ່ຄວນໃຫ້ຄົນເປັນໂຣຄອັມພາຕບັນພະຊາ . . .

. . . ບໍ່ຄວນໃຫ້ຄົນເຄື່ອນໄຫວເອງບໍ່ໄດ້ບັນພະຊາ . . .

. . . ບໍ່ຄວນໃຫ້ຄົນຊຣາທຸພພລພາພບັນພະຊາ . . .

. . . ບໍ່ຄວນໃຫ້ຄົນຕາບອດສອງຂ້າງບັນພະຊາ . . .

. . . ບໍ່ຄວນໃຫ້ຄົນໃບ້ບັນພະຊາ . . .

. . . ບໍ່ຄວນໃຫ້ຄົນຫູຫນວກບັນພະຊາ . . .

. . . ບໍ່ຄວນໃຫ້ຄົນທັງບອດທັງໃບ້ບັນພະຊາ . . .

. . . ບໍ່ຄວນໃຫ້ຄົນທັງບອດທັງຫນວກບັນພະຊາ . . .

. . . ບໍ່ຄວນໃຫ້ຄົນທັງໃບ້ທັງຫນວກບັນພະຊາ . . .

. . . ບໍ່ຄວນໃຫ້ຄົນທັງບອດທັງໃບ້ທັງຫນວກບັນພະຊາ ຮູບໃດໃຫ້ບັນພະຊາ ຕ້ອງອາບັຕິທຸກກະຕະ"

ນປັພພາເຊຕັພພທວັຕຕິງສວາຣ ຈົບ

ທາຍັຊຊພານວາຣທີ ໔ ຈົບ

໕໗. ອລັຊຊີນິສສັຍວັຕຖຸ

ວ່າດ້ວຍການໃຫ້ນິສສັຍແກ່ພິກສຸອລັຊຊີ

ເຣື້ອງຊົງຫ້າມການໃຫ້ນິສສັຍແກ່ພິກສຸອລັຊຊີ

[໑໔໐] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ໃຫ້ນິສສັຍແກ່ພວກພິກສຸອລັຊຊີ ພິກສຸທັງຫລາຍຈຶ່ງຂາບທູລ

ເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນໃຫ້ນິສສັຍແກ່ພວກພິກສຸອລັຊຊີຮູບໃດໃຫ້ ຕ້ອງອາບັຕິທຸກກະຕະ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໕໙. ຄມິກາທິນິສສຍວັຕຖຸ

ເຣື້ອງຊົງຫ້າມກາຣຖືນິສສັຍພິກສຸອລັຊຊີ

ສມັຍນັ້ນ ພວກພິກສຸຢູ່ອາສັຍພວກພິກສຸອລັຊຊີ ບໍ່ດົນນັກແມ່ນພິກສຸພວກນັ້ນກໍກາຍເປັນພິກສຸອລັຊຊີ ເປັນພິກສຸຊົ່ວຊາມ ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນຢູ່ອາສັຍພວກພິກສຸອລັຊຊີຮູບໃດຢູ່ ຕ້ອງອາບັຕິທຸກກະຕະ"

ສມັຍນັ້ນ ພິກສຸທັງຫລາຍມີຄວາມດໍາຣິວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ 'ບໍ່ຄວນໃຫ້ນິສສັຍແກ່ພວກພິກສຸອລັຊຊີ ບໍ່ຄວນຢູ່ອາສັຍພວກພິກສຸອລັຊຊີ' ເຮັດຢ່າງໃດນໍ ພວກເຮົາຈຶ່ງຈະຮູ້ວ່າພິກສຸເປັນລັຊຊີຫລືອລັຊຊີ" ຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຣໍ 4-5 ວັນ ພໍຈະຮູ້ວ່າພິກສຸຜູ້ໃຫ້ນິສສັຍເປັນສພາຄກັນ"

໕໙. ຄມິກາທິນິສສຍວັຕຖຸ

ວ່າດ້ວຍກາຣຖືນິສສັຍຂອງພິກສຸຜູ້ຍ່າງທາງເປັນຕົ້ນ

ເຣື້ອງພິກສຸຜູ້ຍ່າງທາງໄກບໍ່ຕ້ອງຖືນິສສັຍ

[໑໔໑] ສມັຍນັ້ນ ພິກສຸຮູບນຶ່ງຍ່າງທາງໄກໄປໃນແຄວ້ນໂກສົລ ທ່ານມີຄວາມດໍາຣິວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ພິກສຸຈະຢູ່ໂດຍບໍ່ຖືນິສສັຍບໍ່ໄດ້ ກໍເຮົາຈໍາຕ້ອງຖືນິສສັຍ ແຕ່ຕ້ອງຍ່າງທາງໄກ ເຮົາຈະຄວນປະຕິບັດຢ່າງໃດຫນໍ" ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ຍ່າງທາງໄກ ເມື່ອບໍ່ໄດ້ຜູ້ໃຫ້ນິສສັຍ ໃຫ້ຢູ່ໂດຍບໍ່ຕ້ອງຖືນິສສັຍ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໕໙. ຄມິກາທິນິສສຍວັຕຖຸ

ເຣື້ອງພິກສຸໄຂ້ບໍ່ຕ້ອງຖືນິສັຍ

ສະໄມຍນັ້ນ ພິກສຸ ໔ ຮູບ ຍ່າງທາງໄກໄປໃນແຄວ້ນໂກສົລ ທ່ານທັງ ໔ ເຂົ້າພັກ ນະ ອາວາສແຫ່ງນຶ່ງ ໃນພິກສຸ ໔ ຮູບນັ້ນ ຮູບນຶ່ງເປັນໄຂ້ ທ່ານມີຄວາມດໍາຣິວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ 'ພິກສຸຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້' ກໍເຮົາຈໍາຕ້ອງຖືນິສສັຍ ແຕ່ກໍາລັງເປັນໄຂ້ ເຮົາຈະຄວນປະຕິບັດຢ່າງໃດຫນໍ" ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ

ພຣະຜູ້ມີພຣະພາກຕຣັສອນຸຍາຕວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ເປັນໄຂ້ເມື່ອບໍ່ໄດ້ຜູ້ໃຫ້ນິສສັຍ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ" ຕໍ່ມາ ພິກສຸຜູ້ພຍາບາລພິກສຸໄຂ້ມີຄວາມດໍາຣິວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ 'ພິກສຸຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້' ກໍເຮົາຈໍາຕ້ອງຖືນິສສັຍ ແຕ່ພິກສຸນີ້ກໍາລັງເປັນໄຂ້ ເຮົາຈະຄວນປະຕິບັດຢ່າງໃດຫນໍ"

ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ

ເຣື້ອງພິກສຸຜູ້ພຍາບາລໄຂ້ບໍ່ຕ້ອງຖືນິສສັຍ

ພຣະຜູ້ມີພຣະພາກຕຣັສອນຸຍາຕວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ພຍາບາລພິກສຸໄຂ້ ເມື່ອບໍ່ໄດ້ຜູ້ໃຫ້ນິສສັຍ ທັງຖືກພິກສຸຜູ້ເປັນໄຂ້ຂໍຮ້ອງ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍ" ສະໄມຍນັ້ນ ພິກສຸຮູບນຶ່ງຢູ່ໃນປ່າ ແລະທ່ານມີຄວາມຜາສຸກໃນເສນາສນະນັ້ນ ຕໍ່ມາທ່ານມີຄວາມດໍາຣິວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ 'ພິກສຸຈະຄວນຢູ່ໂດຍບໍ່ຕ້ອງຖືນິສສັຍບໍ່ໄດ້' ກໍເຮົາຈໍາຕ້ອງຖືນິສສັຍ ແຕ່ຍັງຢູ່ໃນປ່າແລະມີຄວາມຜາສຸກໃນເສນາສນະນີ້ເຮົາຈະຄວນປະຕິບັດຢ່າງໃດຫນໍ"

ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ

ເຣື້ອງບໍ່ຕ້ອງຖືນິສສັຍເພາະຫາຜູ້ໃຫ້ນິສສັຍບໍ່ໄດ້

ພຣະຜູ້ມີພຣະພາກຕຣັສອນຸຍາຕວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ຢູ່ປ່າ ເປັນວັຕຣກໍາຫນົດເອົາຄວາມຜາສຸກ ເມື່ອບໍ່ໄດ້ຜູ້ໃຫ້ນິສສັຍ ຄວນຢູ່ໂດຍບໍ່ຕ້ອງຖືນິສສັຍດ້ວຍຜູກໃຈວ່າ ເຮົາຈັກຖືນິສສັຍຢູ່ໃນເມື່ອພິກສຸຜູ້ໃຫ້ນິສສັຍຜູ້ສົມຄວຣມາເຖິງ"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ຝ໑. ເທົາອຸປສົມປທາເປກຂາທີວັຕຖຸ

ຝ໐. ໂຄຕເຕນອນຸສສາວນານຸຊານນາ

ວ່າດ້ວຍຊົງອນຸຍາຕອຸປສົມບົທກັມໂດຍສວດຣະບຸໂຄຕຣຂອງອຸປັຊຢາຍ໌

ເລື້ອງພຣະມຫາກັສສະປະນິມົນຕ໌ພຣະອານົນທ໌ມາສວດນາຄ

[໑໔໔] ສມັຍນັ້ນ ທ່ານພຣະມຫາກັສສະປະມີອຸປສັມປທາເປກຂະ ທ່ານຈຶ່ງສົ່ງທູຕໄປໃນສຳນັກພຣະອານົນທ໌ໃຫ້ນິມົນຕ໌ວ່າ "ທ່ານອານົນທ໌ຈົ່ງມາສວດອຸປສັມປທາເປກຂະ໑ນີ້" ພຣະອານົນທ໌ຕອບໄປວ່າ "ຜູ້ຂ້າບໍ່ສາມາດຈະຣະບຸນາມຂອງພຣະເຖຣະ໔ໄດ້ ເພາະພຣະເຖຣະເປັນທີ່ເຄົາຣົພຂອງຜູ້ຂ້າ" ພິກສຸທັງຫລາຍຈຶ່ງຂາບທູລເລື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ເຣົາອນຸຍາຕໃຫ້ສວດຣະບຸໂຄຕຣໄດ້"

ຝ໑. ເຫົວອຸປສັມປທາເປກຂາທິວັຕຖຸ

ວ່າດ້ວຍອຸປສົມບົທອຸປສັມປທາເປກຂະ ໔ ຄົນເປັນຕົ້ນ

ເລື້ອງແຍ່ງກັນອຸປສົມບົທກ່ອນ

[໑໔໕] ສມັຍນັ້ນ ທ່ານພຣະມຫາກັສສະປະມີອຸປສັມປທາເປກຂະ ໔ ຄົນ ອຸປສັມປທາເປກຂະທັງ ໔ ຖຽງກັນວ່າ "ຂະນ້ອຍຈັກອຸປສົມບົທກ່ອນ ຂະນ້ອຍຈັກອຸປສົມບົທກ່ອນ" ພິກສຸທັງຫລາຍຈຶ່ງຂາບທູລເລື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ເຣົາອນຸຍາຕໃຫ້ສວດອຸປສັມປທາເປກຂະ ໔ ຄົນ ໃນອນຸສາວນາດຽວກັນໄດ້"

ໝາຍເຫດ :

໑ ອຸປສັມປທາເປກຂະ ຄື ຜູ້ມຸ່ງຈະບວຊເປັນພິກສຸ ຜູ້ປະສົງຄ໌ຈະບວຊ

໔ ຫມາຍເຖິງບໍ່ສາມາດຣະບຸຊື່ຂອງພຣະມຫາກັສສະປະ ທີ່ຈະປາກົດຢູ່ໃນຄຳສວດວ່າ "ອາຍສົມໂຕ ປິປຜລິສົສ

ອຸປສັມປທາເປກົໂຂ (ອຸປສັມປທາເປກຂະຂອງທ່ານປິປຜລິ) (ສາຣຕຖ. ຕີກາ ໓/໑໔໔/໓໔໕) ເພາະການຣະບຸຊື່ແລະໂຄຕຣຖືເປັນການສະແດງຄວາມບໍ່ເຄົາຣົພ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ຝ໔. ຄັພພວີສູປສັມປທານຸຊານນາ

ເລື້ອງອຸປສົມບົທຄັ້ງລະ ໓ ຄົນ ມີອຸປັຊຊາຍ໌ຮູບດຽວ

ສມັຍຕໍ່ມາ ພຣະເຖຣະຫລາຍຮູບຕ່າງກໍມີອຸປສັມປທາເປກຂະຫລາຍຄົນ ອຸປສັມປທາເປກຂະ ເຫລົ່ານັ້ນ

ຕ່າງຖຽງກັນວ່າ "ຂະນ້ອຍຈັກອຸປສົມບົທກ່ອນ ຂະນ້ອຍຈັກອຸປສົມບົທກ່ອນ" ພຣະເຖຣະທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສວດອຸປສົມປທາເປກຂະ ໃນອນຸສາວນາດຽວກັນຄັ້ງລະ ໒ ຄົນ ໓ ຄົນໄດ້ ແຕ່ການສວດນັ້ນເຮົາອນຸຍາຕໃຫ້ມີອຸປັຊຊາຍ໌ຮູບດຽວກັນ ບໍ່ອນຸຍາຕໃຫ້ມີອຸປັຊຊາຍ໌ຕ່າງຮູບກັນ"

໓໔. ຄັພພວີສູປສັມປທານຸຊານນາ

ວ່າດ້ວຍຊົງອນຸຍາຕ

ອຸປສົມບົທໃຫ້ກຸລບຸຕຣໂດຍນັບອາຍຸ ໒໐ ປີທັງຢູ່ໃນຄັນພ໌

ເຣື້ອງພຣະກຸມາຣກັສສປະ

[໑໒໔] ສມັຍນັ້ນ ທ່ານພຣະກຸມາຣກັສສປະມີອາຍຸຄົບ ໒໐ ປີນັບທັງຢູ່ໃນຄັນພ໌ໄດ້ອຸປສົມບົທແລ້ວ ຕໍ່ມາ ທ່ານມີຄວາມດຳຣິວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ 'ບຸຄຄົລມີອາຍຸຫນ້ອຍກວ່າ ໒໐ ປີສົງຄ໌ບໍ່ຄວນໃຫ້ອຸປສົມບົທ' ແຕ່ເຮົາມີອາຍຸຄົບ ໒໐ ປີ ນັບທັງຢູ່ໃນຄັນພ໌ອຸປສົມບົທແລ້ວ ຈະເປັນອັນໄດ້ອຸປສົມບົທຫລືບໍ່ຫນໍ" ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ສັຕວ໌ເກີດນັບຕັ້ງແຕ່ຈິຕດວງແຣກ ວິນຍານດວງແຣກເກີດປາກົດຂຶ້ນໃນຄັນພ໌ຂອງມາຣດາ ພິກສຸທັງຫລາຍ ເຮົາອນຸຍາຕອຸປສົມບົທໃຫ້ກຸລບຸຕຣມີອາຍຸຄົບ ໒໐ ນັບທັງຢູ່ໃນຄັນພ໌ໄດ້"

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໓໕. ອຸປສັມປທາວິທີ

໓໕. ອຸປສັມປທາວິທີ

ວ່າດ້ວຍອຸປສົມບົທວິທີ

ເຣື້ອງອຸປສັມບັນຖືກໂຣຄບຽດບຽນ

[໑໒໕] ສມັຍນັ້ນ ກຸລບຸຕຣທັງຫລາຍທີ່ອຸປສົມບົທແລ້ວ ປາກົດເປັນໂຣຄເຣື້ອນກໍມີໂຣຄຝີກໍມີ ໂຣຄກາກກໍມີ ໂຣຄຄໍ່ກໍມີ ໂຣຄລົມບ້າຫມູກໍມີ ພິກສຸທັງຫລາຍຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສົງຄ໌ຜູ້ຈະໃຫ້ອຸປສົມບົທຖາມອັນຕຣາຍິກທັມ ໑໓ ຂໍ້ໄດ້"

ເລື່ອງຖາມອັນຕຣາຍິກທັມກັບອຸປສັມປທາເປກຂະ

ພິກສຸທັງຫລາຍ ກໍແລຄວນຖາມອຸປສັມປທາເປກຂະຢ່າງນີ້ ອາພາທເຊັ່ນນີ້ຂອງເຈົ້າມີຢູ່ຫລື ຄື ໂຣຄເຮື້ອນ ໂຣຄຝີ ໂຣຄກາກ ໂຣຄຄໍ່ ໂຣຄລົມບ້າໝູ ເຈົ້າເປັນມະນຸສຍ໌ຫລື ເຈົ້າເປັນຊາຍຫລື ເຈົ້າເປັນໄທຫລື ເຈົ້າບໍ່ມີຫນີ້ຫລືເຈົ້າບໍ່ແມ່ນຣາຊພັຕຫລື ມາຣດາບິດາອນຸຍາຕເຈົ້າແລ້ວຫລື ເຈົ້າມີອາຍຸຄົບ ໒໐ ປີຫລື ບາຕຣແລະຈີວອນຂອງເຈົ້າມີຄົບແລ້ວຫລື ເຈົ້າຊື່ວ່າຫຍັງ ອຸປັຊຢາຍ໌ຂອງເຈົ້າຊື່ຫຍັງ

ເລື່ອງສອນຊ້ອມກ່ອນຖາມອັນຕຣາຍິກທັມ

ສມັຍນັ້ນ ພວກພິກສຸຖາມອັນຕຣາຍິກທັມກັບພວກອຸປສັມປທາເປກຂະຜູ້ຍັງບໍ່ໄດ້ສອນຊ້ອມ ພວກອຸປສັມປທາເປກຂະຍ່ອມສະທກສະທ້ານ ເກີ້ເຂີນ ບໍ່ອາຈຕອບໄດ້ ພິກສຸທັງຫລາຍຈຶ່ງຂາບທູລເລື່ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສອນຊ້ອມຈຶ່ງຖາມອັນຕຣາຍິກທັມພາຍຫລັງ" ພວກພິກສຸ ກໍສອນຊ້ອມໃນທ່າມກາງສົງຄ໌ນັ້ນແຫລະ ພວກອຸປສັມປທາເປກຂະກໍສະທົກສະທ້ານ ເກີ້ເຂີນ ບໍ່ອາຈຕອບເຊັ່ນເດີມ ພິກສຸທັງຫລາຍຈຶ່ງຂາບທູລເລື່ອງນີ້ໃຫ້ພຣະຜູ້ມີພຣະພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສອນຊ້ອມ ນະທີ່ສົມຄວຣ ຈຶ່ງຖາມອັນຕຣາຍິກທັມໃນທ່າມກາງສົງຄ໌" ພິກສຸທັງຫລາຍ ກໍແລຄວນສອນຊ້ອມອຸປສັມປທາເປກຂະຢ່າງນີ້

ຄຳບອກບາຕຣແລະຈີວອນ

[໑໔໘] ໃນເບື້ອງຕົ້ນ ຄວນໃຫ້ອຸປສັມປທາເປກຂະຖືອຸປັຊຢາຍ໌ ຄັນໃຫ້ຖືອຸປັຊຢາຍ໌ແລ້ວຄວນບອກບາຕຣແລະຈີວອນວ່າ "ນີ້ບາຕຣ ນີ້ສັງຂາຕິ ນີ້ອຸຕຕຣາສົງຄ໌ ນີ້ອັນຕຣວາສົກຂອງເຈົ້າ ເຈົ້າຈົ່ງ ອອກໄປຢືນທີ່ພຸ້ນ"

ເລື່ອງພິກສຸໂງ່ງ່າວສອນຊ້ອມ

ພວກພິກສຸຜູ້ໂງ່ງ່າວບໍ່ສລາດ ສອນຊ້ອມ ພວກອຸປສັມປທາເປກຂະຖືກສອນຊ້ອມບໍ່ດີ ກໍສະທົກສະທ້ານ ເກີ້ເຂີນ ບໍ່ສາມາດຕອບໄດ້ ພິກສຸທັງຫລາຍຈຶ່ງຂາບທູລເລື່ອງນີ້ໃຫ້ພຣະຜູ້ມີພຣະພາກຊົງ ຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸຜູ້ໂງ່ງ່າວບໍ່ສລາດ ບໍ່ຄວນສອນຊ້ອມ ຮູບໃດສອນຊ້ອມ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ສລາດສາມາດສອນຊ້ອມ"

ເລື່ອງພິກສຸຍັງບໍ່ໄດ້ຮັບແຕ່ງຕັ້ງສອນຊ້ອມ

ພວກພິກສຸຜູ້ຍັງບໍ່ໄດ້ຮັບແຕ່ງຕັ້ງສອນຊ້ອມ ພິກສຸທັງຫລາຍຈຶ່ງຂາບທູລເລື່ອງນີ້ໃຫ້ພຣະຜູ້ມີພຣະ

ພາກຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸຍັງບໍ່ໄດ້ຮັບແຕ່ງຕັ້ງບໍ່ຄວນສອນຊ້ອມ ຮູບໃດສອນຊ້ອມ ຕ້ອງອາບັດທຸກກະຕະ ພິກສຸທັງຫລາຍ ເຮົາອະນຸຍາດໃຫ້ພິກສຸຜູ້ໄດ້ຮັບແຕ່ງຕັ້ງສອນຊ້ອມ" ພິກສຸທັງຫລາຍ ຄວນແຕ່ງຕັ້ງຢ່າງນີ້ ຕົນເອງແຕ່ງຕັ້ງຕົນເອງກໍໄດ້ ພິກສຸຮູບນຶ່ງແຕ່ງຕັ້ງພິກສຸອີກຮູບນຶ່ງກໍໄດ້

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໗໖. ອຸປສັມປທາວິທີ

ວິທີແຕ່ງຕັ້ງຕົນແລະກັມວາຈາ

ຢ່າງໃດລະ ຊື່ວ່າຕົນເອງແຕ່ງຕັ້ງຕົນເອງ ຄື ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຊາບດ້ວຍຍັດຕິກັມວາຈາວ່າທ່ານຜູ້ຈະເຣີນ ຂໍສົງຈົ່ງຟັງຂ້າພະເຈົ້າ ຜູ້ມີຊື່ນີ້ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ຖ້າສົງພ້ອມກັນແລ້ວ ຂ້າພະເຈົ້າຊື່ນີ້ ຈະສອນຊ້ອມຜູ້ມີຊື່ນີ້ຢ່າງນີ້ ຊື່ວ່າຕົນເອງແຕ່ງຕັ້ງຕົນເອງ

ວິທີແຕ່ງຕັ້ງຜູ້ອື່ນແລະກັມວາຈາ

ຢ່າງໃດລະ ຊື່ວ່າພິກສຸຮູບນຶ່ງແຕ່ງຕັ້ງພິກສຸອີກຮູບນຶ່ງ ຄື ພິກສຸຜູ້ສລາດສາມາດຄວນປະກາດໃຫ້ ສົງຊາບດ້ວຍຍັດຕິກັມວາຈາວ່າ ທ່ານຜູ້ຈະເຣີນ ຂໍສົງຈົ່ງຟັງຂ້າພະເຈົ້າ ຜູ້ມີຊື່ນີ້ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ຖ້າສົງພ້ອມກັນແລ້ວ ທ່ານຜູ້ມີຊື່ນີ້ຄວນສອນຊ້ອມຜູ້ມີຊື່ນີ້ ຢ່າງນີ້ ຊື່ວ່າພິກສຸຮູບນຶ່ງແຕ່ງຕັ້ງພິກສຸອີກຮູບນຶ່ງພິກສຸຜູ້ໄດ້ຮັບແຕ່ງຕັ້ງນັ້ນ ຄວນເຂົ້າໄປຫາ ອຸປສັມປທາເປກຂະກ່າວແລ້ວຢ່າງນີ້ວ່າແນ່ະຜູ້ມີຊື່ນີ້ ເຈົ້າຟັງນະ ນີ້ເປັນກາລສັຕຍ໌ ກາລຈິງຂອງເຈົ້າ ເມື່ອພິກສຸຜູ້ສອນຊ້ອມ ຖາມໃນທ່າມກາງສົງເຖິງສິ່ງທີ່ເກີດ ສິ່ງທີ່ມີ ຄວນບອກວ່າ "ມີ" ບໍ່ມີກໍຄວນບອກວ່າ "ບໍ່ມີ" ເຈົ້າຢ່າສະທກສະທ້ານ ຢ່າເກີ້ເຂີນ ພິກສຸຜູ້ສອນຊ້ອມຈັກຖາມເຈົ້າຢ່າງນີ້ວ່າ 'ອາພາທເຊັ່ນນີ້ຂອງເຈົ້າມີຢູ່ຫລື ຄື ໂຣຄເຮື້ອນ ໂຣຄຝີ ໂຣຄກາກ ໂຣຄຄໍ່ ໂຣຄລົມບ້າຫມູ ເຈົ້າເປັນມະນຸສຍ໌ຫລື ເຈົ້າເປັນຊາຍຫລື ເຈົ້າເປັນໄທຫລື ເຈົ້າບໍ່ມີຫນີ້ຫລື ເຈົ້າບໍ່ແມ່ນຣາຊພັຕຫລື ມາຣດາບິດາອະນຸຍາຕເຈົ້າແລ້ວຫລື ເຈົ້າມີອາຍຸຄົບ ໒໐ ປີແລ້ວຫລືເຈົ້າມີບາຕຣແລະຈີວອນຄົບແລ້ວຫລື ເຈົ້າຊື່ຫຍັງ ອຸປັຊຍາຍ໌ຂອງເຈົ້າຊື່ຫຍັງ'

ເຣື້ອງຫ້າມຜູ້ສອນຊ້ອມກັບອຸປສັມປທາເປກຂະຍ່າງມາພ້ອມກັນ

ພິກສຸຜູ້ສອນຊ້ອມກັບອຸປສັມປທາເປກຂະຍ່າງມາພ້ອມກັນ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸຜູ້ສອນຊ້ອມກັບອຸປສັມປທາເປກຂະ ບໍ່ຄວນຍ່າງມາພ້ອມກັນ ພິກສຸຜູ້ສອນຊ້ອມຄວນຍ່າງມາກ່ອນ ແລ້ວປະກາດໃຫ້ສົງຊາບດ້ວຍຍັດຕິກັມວາຈາວ່າ ທ່ານຜູ້ຈະເຣີນ ຂໍສົງຈົ່ງຟັງຂ້າພະເຈົ້າ ຜູ້

ມີຊື່ນີ້ເປັນອຸປສົມປທາເປກຂະຂອງທ່ານຜູ້ມີຊື່ນີ້ ຂ້າພະເຈົ້າສອນຊ້ອມເຂົາແລ້ວ ຖ້າສົງຊ໌ພ້ອມກັນແລ້ວ ຜູ້ມີຊື່ນີ້ຄວນມາໄດ້ຄວນຮຽກອຸປສົມປທາເປກຂະວ່າ "ເຈົ້າຈົ່ງເຂົ້າມາເຖີດ"

ຄຳຂໍອຸປສົມບົທ

ຄວນໃຫ້ອຸປສົມປທາເປກຂະຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸທັງຫລາຍ ນັ່ງຄຸເຂົ່າ ປະນົມມື ຂໍອຸປສົມບົທວ່າ

ທ່ານຜູ້ຈະເຣີນ ຂ້າພະເຈົ້າຂໍອຸປສົມບົທຕໍ່ສົງຊ໌ ສົງຊ໌ໂປຣດຊ່ວຍອນຸເຄາະຍົກຂ້າພະເຈົ້າຂຶ້ນເຖີດ

ທ່ານຜູ້ຈະເຣີນ ຂ້າພະເຈົ້າຂໍອຸປສົມບົທຕໍ່ສົງຊ໌ ເປັນຄັ້ງທີ ໒ ສົງຊ໌ໂປຣດຊ່ວຍອນຸເຄາະຍົກຂ້າພະເຈົ້າ ຂຶ້ນເຖີດ

ທ່ານຜູ້ຈະເຣີນ ຂ້າພະເຈົ້າຂໍອຸປສົມບົທຕໍ່ສົງຊ໌ ເປັນຄັ້ງທີ ໓ ສົງຊ໌ໂປຣດຊ່ວຍອນຸເຄາະຍົກຂ້າພະເຈົ້າ ຂຶ້ນເຖີດ

ຄຳແຕ່ງຕັ້ງຕົນເພື່ອຖາມອັນຕຣາຍິກທັມ

ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຊ໌ຊາບດ້ວຍຍັຕຕິກັມວາຈາວ່າ

ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ຜູ້ມີຊື່ນີ້ເປັນອຸປສົມປທາເປກຂະຂອງທ່ານຜູ້ມີຊື່ນີ້ ຖ້າສົງຊ໌ ພ້ອມກັນແລ້ວ ຂ້າພະເຈົ້າຄວນຖາມອັນຕຣາຍິກທັມກັບຜູ້ມີຊື່ນີ້ ດັ່ງນີ້ ແນ່ະຜູ້ມີຊື່ນີ້ ເຈົ້າຟັງນະ ນີ້ເປັນ ກາລສັຕຍ໌ ກາລຈິງຂອງເຈົ້າ ເຮົາຈະຖາມສິ່ງທີ່ເກີດ ສິ່ງທີ່ມີ ຄວນບອກວ່າ "ມີ" ບໍ່ມີກໍຄວນບອກວ່າ "ບໍ່ມີ" ອາພາທເຊັ່ນນີ້ຂອງເຈົ້າມີຢູ່ຫລື ຄື ໂຣຄເຮື້ອນ ໂຣຄຝີ ໂຣຄກາກ ໂຣຄຄໍ່ ໂຣຄລົມບ້າໝູ ເຈົ້າເປັນມະນຸສຍ໌ຫລືເຈົ້າເປັນຊາຍຫລື ເຈົ້າເປັນໄທຫລື ເຈົ້າບໍ່ມີໜີ້ຫລື ເຈົ້າບໍ່ແມ່ນຣາຊພັຕຫລື ມາຣດາບິດາອນຸຍາຕເຈົ້າແລ້ວຫລື ເຈົ້າມີອາຍຸຄົບ ໒໐ ປີຫລື ບາຕຣແລະຈີວອນຂອງເຈົ້າມີຄົບ ແລ້ວຫລື ເຈົ້າຊື່ຫຍັງ ອຸປັຊຊາຍ໌ຂອງເຈົ້າຊື່ຫຍັງ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໒໓. ອຸປສົມປທາວິທີ

ຍັຕຕິຈຕຸຕຖກັມອຸປສົມປທາ

ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຊ໌ຊາບດ້ວຍຍັຕຕິຈຕຸຕຖກັມວາຈາວ່າ

[໑໒໗] ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ຜູ້ມີຊື່ນີ້ເປັນອຸປສົມປທາເປກຂະຂອງທ່ານຜູ້ມີຊື່ນີ້ ບໍຣິ ສຸດທິ໌ຈາກອັນຕຣາຍິກທັມທັງຫລາຍ ເຂົາມີບາຕຣແລະຈີວອນຄົບແລ້ວ ຜູ້ມີຊື່ນີ້ຂໍອຸປສົມບົທ ຕໍ່ສົງຊ໌

ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ຖ້າສົງຄ໌ພ້ອມກັນແລ້ວ ສົງຄ໌ຄວນໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຜູ້ມີຊື່ນີ້ເປັນອຸປສົມປທາເປກຂະຂອງທ່ານຜູ້ມີຊື່ນີ້ ບໍຣິສຸດທິ໌ຈາກອັນຕຣາຍິກທັມທັງຫລາຍ ເຂົາມີບາຕຣແລະຈີວອນຄົບແລ້ວ ຜູ້ມີຊື່ນີ້ຂໍອຸປສົມບົທຕໍ່ສົງຄ໌ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ສົງຄ໌ໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ທ່ານຮູບໃດເຫັນດ້ວຍກັບການໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງ

ແມ່ນຄັ້ງທີ ໔ ຂ້າພະເຈົ້າກ່າວຄວາມນີ້ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຜູ້ມີຊື່ນີ້ເປັນອຸປສົມປທາເປກຂະຂອງທ່ານຜູ້ມີຊື່ນີ້ ບໍຣິສຸດທິ໌ຈາກອັນຕຣາຍິກທັມທັງຫລາຍ ເຂົາມີບາຕຣແລະຈີວອນຄົບແລ້ວ ຜູ້ມີຊື່ນີ້ຂອອຸປສົມບົທຕໍ່ສົງຄ໌ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ສົງຄ໌ໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ທ່ານຮູບໃດເຫັນດ້ວຍກັບການໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍທ່ານຮູບນັ້ນຄວນທັກທ້ວງ

ແມ່ນຄັ້ງທີ ໕ ຂ້າພະເຈົ້າກ່າວຄວາມນີ້ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຜູ້ມີຊື່ນີ້ເປັນອຸປສົມປທາເປກຂະຂອງທ່ານຜູ້ມີຊື່ນີ້ ບໍຣິສຸດທິ໌ຈາກອັນຕຣາຍິກທັມທັງຫລາຍ ເຂົາມີບາຕຣແລະຈີວອນຄົບແລ້ວ ຜູ້ມີຊື່ນີ້ຂອອຸປສົມບົທຕໍ່ສົງຄ໌ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ສົງຄ໌ໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ທ່ານຮູບໃດເຫັນດ້ວຍກັບການໃຫ້ຜູ້ມີຊື່ນີ້ອຸປສົມບົທ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງ

ທ່ານຜູ້ມີຊື່ນີ້ ສົງຄ໌ໃຫ້ອຸປສົມບົທແລ້ວ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍ໌ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນ ເປັນມະຕິຢ່າງນີ້

ອຸປສົມປທາວິທີ ຈົບ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ໗໕. ຈັຕຕາຣິອກໍຣນີຍະ

໗໔. ຈັຕຕາຣິນິສສັຍະ

ວ່າດ້ວຍນິສສັຍ ໔

ເລື່ອງຊົງອະນຸຍາດໃຫ້ບອກນິສໄສ ໔

[໑໔໗] ຂະນະນັ້ນແຫລະ ຄວນວັດເງົາແດດ ບອກປະມານແຫ່ງລະດູ ບອກສ່ວນແຫ່ງວັນບອກສັງຄີຕິ໑ ບອກນິສໄສ ໔ ວ່າ

໑. ບັນພະຊາອາໄສໂພຊະນະຄືຄຳເຂົ້າທີ່ຄວນໄດ້ດ້ວຍປລີແຄ່ງ ທ່ານຄວນທຳອຸດສາຫະໃນໂພຊະນະຄືຄຳເຂົ້າທີ່ຄວນໄດ້ດ້ວຍປລີແຄ່ງຈົນຕລອດຊີວິດ ອະຕິເຣກລາພ ຄື໔ ສັງຂພັດ ອຸທເທສພັດ ນິມັນຕນພັດ ສລາກພັດ ປັກຂິກພັດ ອຸໂປສຖິກພັດ ປາຕິປທິກພັດ

໔. ບັນພະຊາອາໄສຜ້າບັງສຸກຸລ ທ່ານຄວນທຳອຸດສາຫະໃນຜ້າບັງສຸກຸລນັ້ນຈົນຕລອດຊີວິດ ອະຕິເຣກລາພ ຄື ຜ້າເປືອກໄມ້ ຜ້າຝ້າຍ ຜ້າໄໝ ຜ້າຂົນສັດ ຜ້າປ່ານ ຜ້າເຈືອກັນ

໓. ບັນພະຊາອາໄສເສນາສນະຄືຄອງໄມ້ ທ່ານຄວນທຳອຸດສາຫະໃນເສນາສນະຄືຄອງໄມ້ນັ້ນຈົນຕລອດຊີວິດ ອະຕິເຣກລາພ ຄື ວິຫານ ເຮືອນມຸງແຖບດຽວ ປຣາສາທ ເຮືອນໂລ້ນ ຖ້ຳ

໔. ບັນພະຊາອາໄສຍາຄືນ້ຳມູດເນົ່າ ທ່ານຄວນທຳອຸດສາຫະໃນຍາຄືນ້ຳມູດເໜົ່ານັ້ນ ຈົນຕລອດຊີວິດ ອະຕິເຣກລາພ ຄື ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜິ້ງ ນ້ຳອ້ອຍ

ຈັຕຕາຣິນິສສຍະ ຈົບ

໓໕. ຈັຕຕາຣິອກໍຣນີຍະ

ວ່າດ້ວຍອກໍຣນີຍກິຈ ໔

ເລື່ອງຖິ້ມພິກສຸບວຊໃໝ່ໄວ້ຕາມລຳພັງ

[໑໔໘] ສມັຍນັ້ນ ພິກສຸທັງຫລາຍໄດ້ໃຫ້ພິກສຸຮູບນຶ່ງອຸປສົມບົທແລ້ວ ຖິ້ມໄວ້ຕາມລຳພັງຫລີກໄປ ພິກສຸຮູບນັ້ນຍ່າງມາທີຫລັງພຽງຮູບດຽວ ໄດ້ພົບພັຣຍາເກົ່າຣະຫວ່າງທາງ

ໝາຍເຫດ :

໑ ວັດເງົາ ຄືວັດເງົາຄົນວ່າ ໑ ຊົ່ວຄົນ ຫລື ໔ ຊົ່ວຄົນ ບອກປະມານແຫ່ງຣະດູ ຄືບອກວ່າເປັນຣະດູຝົນ ເປັນຣະດູຫນາວ ເປັນຣະດູຮ້ອນ ບອກສ່ວນແຫ່ງວັນ ຄືບອກວ່າເປັນເວລາເຊົ້າ ຫລືເປັນເວລາແລງ ບອກສັງຄີຕິ ຄື ບອກທັງຫມົດພ້ອມກັນວ່າຖ້າທ່ານຖືກຖາມວ່າໄດ້ຣະດູຫຍັງ ໄດ້ສາຍາຫຍັງ ໄດ້ເວລາໃນຊ່ວງໃດຂອງວັນ ຄວນບອກວ່າ ໄດ້ຣະດູນີ້ ສາຍານີ້ ເວລາໃນຊ່ວງນີ້ຂອງວັນ (ວິ. ອ. ໓/໑໔໗/໑໐໔)

໔ ເບິ່ງຂໍ້ ກຸລ ໜ້າ ໑໐໑ ໃນເຫລັ້ມນີ້(ໝາຍເຫດ)

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ຝ໕. ຈັຕຕາຣິອກໍຣນີຍະ

ນາງໄດ້ຖາມວ່າ "ເວລານີ້ທ່ານບັນພະຊາແລ້ວຫລື" ພິກສຸຮູບນັ້ນຕອບວ່າ "ແມ່ນແລ້ວ ຂ້ອຍບັນພະຊາແລ້ວ" ນາງຈຶ່ງເວົ້າຊວນວ່າ "ເມຖຸນທັມສຳລັບພວກບັພຊິຕຫາໄດ້ຍາກ ຂໍທ່ານມາເສພເມຖຸນທັມກັນເຖີດ" ພິກສຸຮູບນັ້ນໄດ້ເສພເມຖຸນທັມກັບພັຣຍາເກົ່າແລ້ວ ຈຶ່ງມາເຖິງລ່າຊ້າ ພິກສຸທັງຫລາຍຖາມວ່າ "ທ່ານ ເປັນຫຍັງທ່ານຈຶ່ງມາເຖິງຊ້າເຊັ່ນນີ້" ພິກສຸຮູບນັ້ນໄດ້ບອກເຣື້ອງນັ້ນ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ຊົງອນຸຍາຕໃຫ້ບອກອກໍຣນີຍກິຈ ໔

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ອຸປສົມບົທແລ້ວໃຫ້ມີພິກສຸເປັນເພື່ອນ ແລະໃຫ້ບອກກໍຣະນີຍກິຈ ໔ ດັ່ງນີ້

໑. ພິກສຸຜູ້ອຸປສົມບົທແລ້ວ ບໍ່ຄວນເສພເມຖຸນທັມໂດຍທີ່ສຸດແມ່ນກັບສັຕວ໌ເດັຽຣະສານໂຕແມ່ ພິກສຸໃດເສພເມຖຸນທັມ ຍ່ອມບໍ່ເປັນສະມະນະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ພິກສຸເສພເມຖຸນທັມແລ້ວ ຍ່ອມບໍ່ເປັນສະມະນະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ປຽບເຫມືອນຄົນຖືກຕັດສີສະ ບໍ່ອາຈມີຊີວິຕຢູ່ໄດ້ ໂດຍກາຣຕໍ່ສີສະເຂົ້າກັບຮ່າງກາຍນັ້ນ ກາຣເສພເມຖຸນທັມນັ້ນ ອັນທ່ານບໍ່ຄວນກະທຳຈົນຕລອດຊີວິຕ

໒. ພິກສຸຜູ້ອຸປສົມບົທແລ້ວ ບໍ່ຄວນຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ ໂດຍສ່ວນແຫ່ງຈິຕຄິດຈະລັກ ໂດຍທີ່ສຸດຈົນເມື່ອຫຍ້າເສັ້ນດຽວ ພິກສຸໃດຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ ໂດຍສ່ວນແຫ່ງຈິຕຄິດຈະລັກ ໑ ບາທແດ່ ຄວຣແກ່ ໑ ບາທແດ່ ເກີນກວ່າ ໑ ບາທແດ່ ຍ່ອມບໍ່ເປັນສະມະນະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ພິກສຸຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ ໂດຍສ່ວນແຫ່ງຈິຕຄິດຈະລັກ ໑ ບາທແດ່ ຄວຣແກ່ ໑ ບາທແດ່ ເກີນກວ່າ ໑ ບາທແດ່ ຍ່ອມບໍ່ເປັນສະມະນະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ປຽບເຫມືອນ ໃບໄມ້ແຫ້ວເຫລືອງຫລຸດຈາກຂົ້ວແລ້ວ ບໍ່ອາຈເປັນຂອງຂຽວສົດຕໍ່ໄປໄດ້ ກາຣຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ນັ້ນ ອັນທ່ານບໍ່ຄວນກະທຳຈົນຕລອດຊີວິຕ

໓. ພິກຂຸຜູ້ອຸປສົມບົທແລ້ວ ບໍ່ຄວນຈົງໃຈພາກສັດຕ໌ເສັຽຈາກຊີວິດໂດຍທີ່ສຸດຈົນເມື່ອມົດດໍາ ມົດແດງ ພິກຂຸໃດຈົງໃຈພາກກາຍມະນຸສຍ໌ຈາກຊີວິດໂດຍທີ່ສຸດຈົນເມື່ອຍັງຄັນພ໌ໃຫ້ຕກໄປ ຍ່ອມບໍ່ເປັນສະມະນະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ພິກຂຸຈົງໃຈພາກກາຍມະນຸສຍ໌ເສັຽຈາກຊີວິດ ຍ່ອມບໍ່ເປັນສະມະນະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ປຽບເຫມືອນແຜ່ນສີລາຫນາແຕກອອກເປັນ ໒ ປ່ຽງ ຈະປະສານໃຫ້ສນິທເປັນແຜ່ນດຽວກັນອີກບໍ່ໄດ້ ກາຣຈົງໃຈພາກກາຍມະນຸສຍ໌ເສັຽຈາກຊີວິດນັ້ນ ອັນທ່ານບໍ່ຄວນກະທໍາຈົນຕລອດຊີວິດ

໔. ພິກຂຸຜູ້ອຸປສົມບົທແລ້ວ ບໍ່ຄວນກ່າວອວດອຸຕຕຣິມນຸສສທັມໂດຍທີ່ສຸດເວົ້າວ່າ ຂ້າພະເຈົ້າຍິນດີໃນເຮືອນວ່າງ ພິກຂຸໃດມີຄວາມປຣາຖນາຊົ່ວ ຖືກຄວາມຢາກຄອບງໍາ ກ່າວອວດອຸຕຕຣິມນຸສສທັມທີ່ບໍ່ມີຢູ່ ບໍ່ເປັນແມ່ນແທ້ຄື ຢານກໍດີ ວິໂມກຂ໌ກໍດີ ສມາທິກໍດີ ສມາບັຕິກໍດີ ມັຄກໍດີ ຜລກໍດີ ຍ່ອມບໍ່ເປັນສະມະນະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ພິກຂຸມີຄວາມປຣາຖນາຊົ່ວ ຖືກຄວາມຢາກຄອບງໍາ ກ່າວອວດອຸຕຕຣິມນຸສສທັມທີ່ບໍ່ມີຢູ່ ບໍ່ເປັນແມ່ນແທ້ຍ່ອມບໍ່ເປັນສະມະນະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ປຽບເຫມືອນຕົ້ນຕາລຍອດກຸ້ນທີ່ບໍ່ອາຈງອກໄດ້ຕໍ່ໄປ ກາຣກ່າວອວດອຸຕຕຣິມນຸສສທັມນັ້ນ ອັນທ່ານບໍ່ຄວນກະທໍາຈົນຕລອດຊີວິດ”

ຈັຕຕາຣິອກໍຣນີຍະ ຈົບ

໖໖. ອາປັຕຕິອທັສສນອຸກຂິຕຕວັຕຖຸ

ວ່າດ້ວຍພິກຂຸຖືກສົງຄ໌ລົງອຸກເຂປນີຍກັມເພາະບໍ່ເຫັນອາບັຕິ

[໑໖໐] ສມັຍນັ້ນ ພິກຂຸຮູບນຶ່ງຖືກສົງຄ໌ລົງອຸກເຂປນີຍກັມເພາະບໍ່ເຫັນອາບັຕິໄດ້ສຶກໄປ ເຂົາກັບມາຂໍອຸປສົມບົທກັບພິກຂຸທັງຫລາຍອີກ ພິກຂຸທັງຫລາຍຈຶ່ງນໍາເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຊົງສະແດງວິທີປະຕິບັດດັ່ງນີ້

“ພິກຂຸທັງຫລາຍ ກໍ ໃນກໍຣະນີນີ້ ພິກຂຸຖືກສົງຄ໌ລົງອຸກເຂປນີຍກັມເພາະບໍ່ເຫັນອາບັຕິ ໄດ້ສຶກໄປ ເຂົາກັບມາຂໍອຸປສົມບົທກັບພິກຂຸທັງຫລາຍອີກ ຄວນຖາມເຂົາວ່າ ‘ເຈົ້າເຫັນອາບັຕິ ນັ້ນຫລື’ ຖ້າເຂົາຕອບວ່າ ‘ຜູ້ຂ້າເຫັນ ຂະນ້ອຍ’ ຄວນໃຫ້ບັນພະຊາ ຖ້າເຂົາຕອບວ່າ ‘ຜູ້ຂ້າບໍ່ເຫັນ ຂະນ້ອຍ’ ບໍ່ຄວນໃຫ້ບັນພະຊາ ຄັນໃຫ້ບັນພະຊາແລ້ວຄວນຖາມວ່າ ‘ເຈົ້າເຫັນອາບັຕິນັ້ນຫລື’ ຖ້າເຂົາຕອບວ່າ ‘ຜູ້ຂ້າເຫັນ ຂະນ້ອຍ’ ຄວນໃຫ້ອຸປສົມບົທ ຖ້າເຂົາຕອບວ່າ ‘ຜູ້ຂ້າບໍ່ເຫັນຂະນ້ອຍ’ ບໍ່ຄວນໃຫ້ອຸປສົມບົທ ຄັນໃຫ້ອຸປສົມບົທແລ້ວຄວນຖາມວ່າ ‘ທ່ານເຫັນອາບັຕິນັ້ນຫລື’ ຖ້າເຂົາຕອບວ່າ ‘ຜູ້ຂ້າເຫັນ ຂະນ້ອຍ’

ຄວນຮຽກເຂົ້າຫມູ່ ຖ້າເຂົາຕອບວ່າ 'ຜູ້ຂ້າບໍ່ເຫັນຂະນ້ອຍ' ບໍ່ຄວນຮຽກເຂົ້າຫມູ່ ຄັນຮຽກເຂົ້າຫມູ່ແລ້ວຄວນຖາມວ່າ 'ທ່ານເຫັນອາບັດນັ້ນຫລື' ຖ້າເຂົາເຫັນເອງນັ້ນເປັນກາຣດີ ຖ້າບໍ່ເຫັນເມື່ອ ໄດ້ສາມັຄຄີ ຄວນລົງອຸກເຂປນີຍກັມອີກເມື່ອບໍ່ໄດ້ສາມັຄຄີ ບໍ່ຕ້ອງອາບັດເພາະກິນຮ່ວມແລະຢູ່ຮ່ວມ

ເຣື້ອງພິກສຸຖືກລົງອຸກເຂປນີຍກັມເພາະບໍ່ທຳຄືນອາບັດ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ທຳຄືນອາບັດ ໄດ້ສຶກໄປ ເຂົາກັບມາຂໍອຸປສົມບົທກັບພິກສຸທັງຫລາຍອີກ ຄວນຖາມເຂົາວ່າ 'ເຈົ້າຈະເຮັດຄືນອາບັດນັ້ນຫລື' ຖ້າເຂົາຕອບວ່າ 'ຜູ້ຂ້າຈະເຮັດຄືນ ຂະນ້ອຍ' ຄວນໃຫ້ບັນພະຊາ ຖ້າເຂົາຕອບວ່າ 'ຜູ້ຂ້າຈັກບໍ່ທຳຄືນ ຂະນ້ອຍ' ບໍ່ຄວນໃຫ້ບັນພະຊາ ຄັນໃຫ້ບັນພະຊາແລ້ວ ຄວນຖາມວ່າ 'ເຈົ້າຈະເຮັດຄືນອາບັດນັ້ນຫລື' ຖ້າເຂົາຕອບວ່າ 'ຜູ້ຂ້າຈະເຮັດຄືນ ຂະນ້ອຍ' ຄວນໃຫ້ອຸປສົມບົທ ຖ້າເຂົາຕອບວ່າ 'ຜູ້ຂ້າຈະບໍ່ກະທຳຄືນ' ບໍ່ຄວນໃຫ້ອຸປສົມບົທ ຄັນໃຫ້ອຸປສົມບົທແລ້ວຄວນຖາມວ່າ 'ທ່ານຈະເຮັດຄືນອາບັດນັ້ນຫລື' ຖ້າເຂົາຕອບວ່າ 'ຜູ້ຂ້າຈະເຮັດຄືນ ຂະນ້ອຍ' ຄວນຮຽກເຂົ້າຫມູ່ ຖ້າເຂົາຕອບວ່າ 'ຜູ້ຂ້າຈະບໍ່ກະທຳຄືນ' ບໍ່ຄວນຮຽກເຂົ້າຫມູ່ ຄັນຮຽກເຂົ້າຫມູ່ແລ້ວຄວນກ່າວວ່າ 'ຈົ່ງທຳຄືນອາບັດນັ້ນ ເສັຽ' ຖ້າເຂົາທຳຄືນ ນັ້ນເປັນກາຣດີ ຖ້າບໍ່ທຳຄືນ ເມື່ອໄດ້ສາມັຄຄີ ຄວນລົງອຸກເຂປນີຍກັມອີກ ເມື່ອບໍ່ໄດ້ສາມັຄຄີ ບໍ່ຕ້ອງອາບັດເພາະກິນຮ່ວມແລະຢູ່ຮ່ວມ

ເຣື້ອງພິກສຸຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ສລະທິຕຖິບາປ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ສລະທິຕຖິບາປສຶກໄປ ເຂົາກັບມາຂໍອຸປສົມບົທກັບພິກສຸທັງຫລາຍອີກ ຄວນຖາມເຂົາວ່າ 'ເຈົ້າຈັກສລະທິຕຖິບາປນັ້ນຫລື' ຖ້າເຂົາຕອບວ່າ 'ຜູ້ຂ້າຈັກສລະ ຂະນ້ອຍ' ຄວນໃຫ້ບັນພະຊາ ຖ້າເຂົາຕອບວ່າ 'ຜູ້ຂ້າຈັກບໍ່ສລະ ຂະນ້ອຍ' ບໍ່ຄວນໃຫ້ບັນພະຊາ ຄັນໃຫ້ບັນພະຊາແລ້ວຄວນຖາມວ່າ 'ເຈົ້າຈັກສລະທິຕຖິບາປນັ້ນຫລື' ຖ້າເຂົາຕອບວ່າ 'ຜູ້ຂ້າຈັກສລະ ຂະນ້ອຍ' ຄວນໃຫ້ອຸປສົມບົທ ຖ້າເຂົາຕອບວ່າ 'ຜູ້ຂ້າຈັກບໍ່ສລະ' ບໍ່ຄວນໃຫ້ອຸປສົມບົທ ຄັນໃຫ້ອຸປສົມບົທແລ້ວຄວນຖາມວ່າ 'ທ່ານຈັກສລະທິຕຖິບາປ ນັ້ນຫລື' ຖ້າເຂົາຕອບວ່າ 'ຜູ້ຂ້າຈັກສລະຂະນ້ອຍ' ຄວນຮຽກເຂົ້າຫມູ່ ຖ້າເຂົາຕອບວ່າ 'ຜູ້ຂ້າຈັກບໍ່ສລະ' ບໍ່ຄວນຮຽກເຂົ້າຫມູ່ ຄັນຮຽກເຂົ້າຫມູ່ແລ້ວຄວນກ່າວວ່າ 'ຈົ່ງສລະທິຕຖິບາປນັ້ນເສັຽ' ຖ້າເຂົາສລະ ນັ້ນເປັນກາຣດີ ຖ້າບໍ່ສລະ ເມື່ອໄດ້ສາມັຄຄີ ຄວນລົງອຸກເຂປນີຍກັມອີກ ເມື່ອບໍ່ໄດ້ສາມັຄຄີ ບໍ່ຕ້ອງອາບັດເພາະກິນຮ່ວມແລະຢູ່ຮ່ວມ"

ເຣື້ອງພິກສຸຖືກສົງຂໍລົງອຸກເຂປນີຍກັມເພາະບໍ່ເຫັນອາບັຕິ ຈົບ
ມຫາຂັນທກະທີ ໑ ຈົບ

ຝ໗. ຣວມເຣື້ອງທີ່ມີໃນມຫາຂັນທກະ

[໑໓໑] ເພາະພິກສຸຜູ້ສລາດໃນພຣະວິນັຍ ອັນມີປໂຍດມາກ ອັນນຳຄວາມສຸຂມາໃຫ້ພິກສຸຜູ້ມີສີລດີງາມ ໃນການຂົ່ມພິກສຸຜູ້ປຣາຖນາຕ່ຳຊາມ ໃນການຍົກຍ້ອງພິກສຸຜູ້ມີຄວາມລະອາຍໃນມຫາວັຄຂັນທກະແລະຈູຣວັຄຂັນທກະ ໃນພິກຂຸວິພັງຄ໌ແລະພິກຂຸນີວິພັງຄ໌ໃນຄັມພີຣ໌ບໍຣິວາຣ ໃນພິກຂຸປາຕິໂມກຂ໌ແລະພິກຂຸນີປາຕິໂມກຂ໌ ອັນຊົງໄວ້ຊຶ່ງພຣະສາສນາອັນເປັນພຸທທວິສັຍແຫ່ງພຣະສັພພັຍຍູ ບໍ່ແມ່ນວິສັຍຂອງບຸຄຄົລທົ່ວໄປ ອັນຂໍ້ທີ່ຊົງບັນຍັດໄວ້ແລ້ວ ແລະປາສຈາກຂໍ້ສົງສັຍ ຍ່ອມປະຕິບັດໂດຍເລີກຊຶ້ງ ນັບວ່າເປັນຜູ້ກະທຳປໂຍດ ຜູ້ໃດບໍ່ຮູ້ຈັກໂຄ ຜູ້ນັ້ນຍ່ອມຮັກສາຝູງໂຄໄວ້ບໍ່ໄດ້ ແນວໃດພິກສຸກໍແນວນັ້ນ ເມື່ອບໍ່ຮູ້ຈັກສີລ ຈັ່ງໃດຈະຄວນຮັກສາສັງວອຣໄດ້ລະ

ພຣະວິນັຍປິດົກ ມຫາວັຄ [໑. ມຫາຂັນທກະ] ຝ໗. ຣວມເຣື້ອງທີ່ມີໃນມຫາຂັນທກະ

ເມື່ອພຣະສູຕຣແລະພຣະອພິທັມເລອະເລືອນໄປແລ້ວ ພຣະວິນັຍຍັງບໍ່ເສື່ອມສູນ ພຣະສາສນາຍ່ອມດຳຣົງຢູ່ໄດ້ ເພາະສະນັ້ນ ຂ້າພະເຈົ້າຈັກກ່າວຫົວຂໍ້ເຫຕຸແຫ່ງການສັງຄາຍນາ ຕາມຄວາມຮູ້ໂດຍລຳດັບ ຂໍທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າກ່າວ ການທີ່ຈະສະແດງ ວັຕຖຸ ນິທານ ອາບັຕິນັຍ ແລະເປຍຍາລໃຫ້ສິ້ນເຊີງນັ້ນ ເຮັດໄດ້ຍາກ ທ່ານທັງຫລາຍຈົ່ງຊາບຂໍ້ນັ້ນໂດຍນັຍເຖີດ

ໃນຂັນທກະມີ ໑໗໔ ເຣື້ອງຄື

ເຣື້ອງເຫຕຸການບໍ່ແຣກຕຣັສຮູ້ ນະ ຄວງຕົ້ນໂພທິພຣຶກສ໌
ເຣື້ອງເຫຕຸການບໍ່ຂນະປະທັບຢູ່ ນະ ຄວງຕົ້ນອຊປາລນິໂຄຣທ
ເຣື້ອງເຫຕຸການບໍ່ຂນະປະທັບຢູ່ ນະ ຄວງຕົ້ນມຸຈລິນທ໌
ເຣື້ອງເຫຕຸການບໍ່ຂນະປະທັບຢູ່ ນະ ຄວງຕົ້ນຣາຊາຍຕນະ
ເຣື້ອງທ້າວສຫັມບດີພຣົມອາຣາທນາໃຫ້ຊົງສະແດງທັມ
ເຣື້ອງອາຣາຣດາບົສ ກາລາມໂຄຕຣ
ເຣື້ອງອຸທທກດາບົສ ຣາມບຸຕຣ ເຣື້ອງອຸປກາຊີວກ
ເຣື້ອງຊົງສະແດງທັມແກ່ພຣະປັຍຈວັຄຄີຍ໌ ຄື
ໂກນທັຍຍະ ວັປປະ ພັທທິຍະ ມຫານາມະ ອັສສຊິ

ເຣື້ອງຍສກຸລບຸຕຣ ເຣື້ອງສະຫາຍ ໔ ຄົນຂອງພຣະຍສະ
ເຣື້ອງສະຫາຍ ໕໐ ຄົນຂອງພຣະຍສະ
ເຣື້ອງສົ່ງພຣະອຣຫັນຕ໌ ໖໐ ຮູບໄປທຸກທິສ
ເຣື້ອງມາຣ ເຣື້ອງຊົງສະແດງທັມໂປຣດພັທທວັຄຄີຍ໌ ໓໐ ຄົນ
ເຣື້ອງປາຕິຫາຣິຍ໌ທີ່ຕາແສງອຸຣຸເວລາ ເຣື້ອງຊດິລ ໓ ພີ່ນ້ອງ
ເຣື້ອງໄຮງບູຊາໄຟ ເຣື້ອງທ້າວມຫາຣາຊທັງ ໔ ເຣື້ອງທ້າວສັກກະ
ເຣື້ອງທ້າວສຫັມບດີພຣົມ ເຣື້ອງຊາວອັງຄະແລະມຄທ
ເຣື້ອງຜ້າບັງສຸກຸລ ເຣື້ອງສຣະໂບກຂຣນີ ເຣື້ອງຄັ້ນຜ້າບັງສຸກຸລບນສິລາ
ເຣື້ອງພາດຜ້າບັງສຸກຸລບນຕົ້ນກຸ່ມ ເຣື້ອງຜຶ່ງຜ້າບັງສຸກຸລເທິງແຜ່ນສິລາ
ເຣື້ອງຕົ້ນຫວ້າ ເຣື້ອງຕົ້ນໝາກມ່ວງ ເຣື້ອງຕົ້ນໝາກຂາມປ້ອມ
ເຣື້ອງດອກປາຣິສັຕຣ
ເຣື້ອງພວກຊດິລຜ່າຟືນ ເຣື້ອງພວກຊດິລກໍ່ໄຟ
ເຣື້ອງພວກຊດິລດັບໄຟ ເຣື້ອງພວກຊດິລດຳນ້ຳ ເຣື້ອງພາຊນະໃສ່ໄຟ
ເຣື້ອງຝົນຕົກນ້ຳທ້ວມ ເຣື້ອງຊົງສະແດງອາທິຕຕປຣິຍາຍສູຕຣໃກ້ແມ່ນ້ຳຄຍາ
ເຣື້ອງປະທັບ ນະ ສວນຕາລຫນຸ່ມ ເຣື້ອງພຣະເຈົ້າພິມພິສາຣຈອມທັພມຄທຣັຖ
ເຣື້ອງສາຣີບຸຕຣແລະໂມຄຄັລລານະບັນພະຊາ
ເຣື້ອງກຸລບຸຕຣມີຊື່ສຽງບັນພະຊາ
ເຣື້ອງພິກສຸນຸ່ງຫົ່ມບໍ່ຮຽບຮ້ອຍ ເຣື້ອງກາຣປະນາມ
ເຣື້ອງພຣາມນ໌ຈ່ອຍຜອມເພາະບໍ່ໄດ້ບວຊ
ເຣື້ອງພິກສຸປະພຶດບໍ່ສົມຄວຣ
ເຣື້ອງພຣາມນ໌ບວຊເພາະເຫັນແກ່ທ້ອງ
ເຣື້ອງກາຣບອກນິສສັຍແກ່ນາຄພກ່ອນບວຊ ເຣື້ອງໃຫ້ອຸປສົມບົທດ້ວຍຄນະ
ເຣື້ອງອຸປັຊຍາຍ໌ມີພັນສາດຽວໃຫ້ກຸລບຸຕຣອຸປສົມບົທ
ເຣື້ອງອຸປັຊຍາຍ໌ໂງ່ງ່າວ ເຣື້ອງອຸປັຊຍາຍ໌ຫລີກໄປ
ເຣື້ອງຖືນິສສັຍຢູ່ ໑໐ ພັນສາ
ເຣື້ອງອັນເຕວາສິກບໍ່ປະພຶດຊອບ
ເຣື້ອງຊົງອນຸຍາຕໃຫ້ປະນາມ ເຣື້ອງອາຈາຣຍ໌ໂງ່ງ່າວ

ເຣື້ອງນິສ໌ສັຍຣະງັບຈາກອຸປັຊຊາຍ໌ແລະອາຈາຣຍ໌

ເຣື້ອງພິກສຸປະກອບດ້ວຍອົງຄ໌ ໕ ເຣື້ອງພິກສຸປະກອບດ້ວຍອົງຄ໌ ໖

ເຣື້ອງໃຫ້ຜູ້ເຄີຍເປັນອັຊເດັຽຣະຖີຍ໌ອຸປສົມບົທ

ເຣື້ອງຜູ້ເຄີຍເປັນອັຊເດັຽຣະຖີຍ໌ເປືອຍກາຍ

ເຣື້ອງຜູ້ເຄີຍເປັນເດັຽຣະຖີຍ໌ເປືອຍກາຍບໍ່ປົງຜົມ

ເຣື້ອງໃຫ້ຊດິລບູຊາໄຟອຸປສົມບົທ ເຣື້ອງອັຊເດັຽຣະຖີຍ໌ສາກຍະ

ເຣື້ອງອາພາທ ໕ ທີ່ກຸງຣາຊຄຶຫ໌ ເຣື້ອງຣາຊພັຕບັນພະຊາ

ເຣື້ອງໂຈຣອົງຄຸລິມາລບັນພະຊາ ເຣື້ອງພຣະເຈົ້າພິມພິສາຣຊົງອນຸຍາຕ

ເຣື້ອງໂຈຣແຫກເຮືອນຈຳບັນພະຊາ ເຣື້ອງໂຈຣຖືກອອກໜາມາຍຈັບບັນພະຊາ

ເຣື້ອງບຸຣຸສຖືກຂ້ຽນດ້ວຍຫວາຍບັນພະຊາ

ເຣື້ອງບຸຣຸສຖືກສັກໝາມາຍໂທສບັນພະຊາ ເຣື້ອງລູກໜີ້ບັນພະຊາ

ເຣື້ອງທາສບັນພະຊາ ເຣື້ອງບຸຕຣຊ່າງທອງຜມຈຸກ ໕ ແຫຍມບັນພະຊາ

ເຣື້ອງເດັກຊາຍອຸບາລີບັນພະຊາ

ເຣື້ອງໃຫ້ເດັກອາຍຸໜ້ອຍກວ່າ ໑໕ ປີຂອງຕະກູນມີສັດທາບັນພະຊາ

ເຣື້ອງສາມເນຣກັນຕກະ ເຣື້ອງທິສທັງຫລາຍຄັບແຄບ

ເຣື້ອງການຢູ່ຖືນິສສັຍ ເຣື້ອງຣາຫຸລກຸມາຣ

ເຣື້ອງສິກຂາບົທຂອງສາມເນຣ ເຣື້ອງສາມເນຣຢູ່ຢ່າງບໍ່ເຄົາຣົພ

ເຣື້ອງການລົງທັນທກັມສາມເນຣ

ເຣື້ອງລົງທັນທກັມຫ້າມສາມເນຣເຂົ້າສັງຂາຣາມທຸກແຫ່ງ

ເຣື້ອງລົງທັນທກັມຫ້າມສັນທາງປາກ

ເຣື້ອງການກັກກັນສາມເນຣໂດຍບໍ່ບອກພຣະອຸປັຊຊາຍ໌

ເຣື້ອງການເກັ້ຽກ່ອມສາມເນຣ ເຣື້ອງນາສນະສາມເນຣກັນຕກະ

ເຣື້ອງກະເທີຍບັນພະຊາ ເຣື້ອງຄົນລັກເພສບັນພະຊາ

ເຣື້ອງຄົນເຂົ້າຮີດເດັຽຣະຖີຍ໌ບັນພະຊາ ເຣື້ອງນາຄແປງກາຍມາບວຊ

ເຣື້ອງຄົນຂ້າມາຣດາມາຂໍບວຊ ເຣື້ອງຄົນຂ້າບິດາມາຂໍບວຊ

ເຣື້ອງຄົນຂ້າພຣະອຣຫັນຕ໌ມາຂໍບວຊ

ເຣື້ອງຄົນປະທຸສຮ້າຍພິກສຸນີມາຂໍບວຊ

ເຣື່ອງຄົນທຳລາຍສິ່ງຂອງມາຂອບວຊ

ເຣື່ອງຄົນທຳຮ້າຍພຣະພຸດທະເຈົ້າຈົນຫໍ້ພຣະໂລຫິຕມາຂອບວຊ

ເຣື່ອງອຸພະໂຕພຍັນຊະນກບັນພະຊາ

ເຣື່ອງຄົນບໍ່ມີອຸປັຊຊາຍ໌ບັນພະຊາ

ເຣື່ອງໃຫ້ຄົນມີສິ່ງຂອງເປັນອຸປັຊຊາຍ໌ອຸປສົມບົທ

ເຣື່ອງໃຫ້ຄົນມີຄນະເປັນອຸປັຊຊາຍ໌ອຸປສົມບົທ

ເຣື່ອງໃຫ້ຄົນມີກະເທີຍເປັນອຸປັຊຊາຍ໌ເປັນຕົ້ນອຸປສົມບົທ

ເຣື່ອງໃຫ້ຄົນບໍ່ມີບາຕຣອຸປສົມບົທ ເຣື່ອງໃຫ້ຄົນບໍ່ມີຈີວອນອຸປສົມບົທ

ເຣື່ອງໃຫ້ຄົນບໍ່ມີທັງບາຕຣແລະຈີວອນອຸປສົມບົທ

ເຣື່ອງໃຫ້ຄົນຍືມບາຕຣເຂົາມາອຸປສົມບົທ

ເຣື່ອງໃຫ້ຄົນຍືມຈີວອນເຂົາມາອຸປສົມບົທ

ເຣື່ອງໃຫ້ຄົນຍືມບາຕຣແລະຈີວອນເຂົາມາອຸປສົມບົທ

ເຣື່ອງໃຫ້ຄົນມືກຸ້ນບັນພະຊາ ເຣື່ອງໃຫ້ຄົນຕີນກຸ້ນບັນພະຊາ

ເຣື່ອງໃຫ້ຄົນມືອແລະຕີນກຸ້ນບັນພະຊາ ເຣື່ອງໃຫ້ຄົນຫູອິ່ນບັນພະຊາ

ເຣື່ອງໃຫ້ຄົນດັງແຫວ່ງບັນພະຊາ ເຣື່ອງໃຫ້ຄົນຫູອິ່ນແລະດັງແຫວ່ງບັນພະຊາ

ເຣື່ອງໃຫ້ຄົນນີ້ວມືນິ້ວຕີນຂາດບັນພະຊາ

ເຣື່ອງໃຫ້ຄົນງ່າມມືງ່າມຕີນຂາດບັນພະຊາ ເຣື່ອງໃຫ້ຄົນເອັນຂາດບັນພະຊາ

ເຣື່ອງໃຫ້ຄົນມີມືອເປັນແຜ່ນບັນພະຊາ ເຣື່ອງໃຫ້ຄົນຄ່ອມບັນພະຊາ

ເຣື່ອງໃຫ້ຄົນເຕັ້ງບັນພະຊາ

ເຣື່ອງໃຫ້ຄົນຄໍພອກບັນພະຊາ ເຣື່ອງໃຫ້ຄົນຖືກສັກຫມາຍໂທສບັນພະຊາ

ເຣື່ອງໃຫ້ຄົນມີຮອຍຂ້ຽນດ້ວຍຫວາຍບັນພະຊາ

ເຣື່ອງໃຫ້ຄົນມີຫມາຍຈັບບັນພະຊາ ເຣື່ອງໃຫ້ຄົນຕີນປຸກບັນພະຊາ

ເຣື່ອງໃຫ້ຄົນມີໂຣຄເຮື້ອຮັງບັນພະຊາ

ເຣື່ອງໃຫ້ຄົນມີຮູບຮ່າງບໍ່ສົມປະກອບບັນພະຊາ

ເຣື່ອງໃຫ້ຄົນຕາບອດຂ້າງດຽວບັນພະຊາ

ເຣື່ອງໃຫ້ຄົນງ່ອຍບັນພະຊາ ເຣື່ອງໃຫ້ຄົນກຣະຈອກບັນພະຊາ

ເຣື່ອງໃຫ້ຄົນເປັນໂຣຄອັມພາຕບັນພະຊາ

ເລື້ອງໃຫ້ຄົນເຄື່ອນໄຫວບໍ່ໄດ້ບັນພະຊາ

ເລື້ອງໃຫ້ຄົນຊຣາທຸພພລພາພບັນພະຊາ

ເລື້ອງໃຫ້ຄົນຕາບອດ ໔ ຂ້າງບັນພະຊາ ເລື້ອງໃຫ້ຄົນໃບ້ບັນພະຊາ

ເລື້ອງໃຫ້ຄົນຫູໜວກບັນພະຊາ ເລື້ອງໃຫ້ຄົນທັງບອດທັງໃບ້ບັນພະຊາ

ເລື້ອງໃຫ້ຄົນທັງບອດທັງໜວກບັນພະຊາ

ເລື້ອງໃຫ້ຄົນທັງໃບ້ທັງໜວກບັນພະຊາ

ເລື້ອງໃຫ້ຄົນທັງບອດທັງໃບທັງໜວກບັນພະຊາ

ເລື້ອງໃຫ້ນິສສັຍແກ່ອລັຊຊີ ເລື້ອງຖືນິສສັຍອລັຊຊີ

ເລື້ອງພິກສຸຜູ້ຍ່າງທາງໄກບໍ່ຕ້ອງຖືນິສສັຍ

ເລື້ອງພິກສຸໄຂ້ບໍ່ຕ້ອງຖືນິສສັຍ

ເລື້ອງພິກສຸຢູ່ປ່າບໍ່ຕ້ອງຖືນິສສັຍຈົນກວ່າອາຈາຣຍ໌ຜູ້ໃຫ້ນິສສັຍຈະມາ

ເລື້ອງພຣະມຫາກັສສປະນິມົນຕ໌ພຣະອານົນທ໌ມາສວດອນຸສາວນາ

ເລື້ອງແຍ່ງກັນອຸປສົມບົທກ່ອນ

ເລື້ອງອຸປສົມບົທຄັ້ງລະ ໓ ຄົນໂດຍມີອຸປັຊຊາຍ໌ຮູບດຽວ

ເລື້ອງພຣະກຸມາຣກັສສປະອາຍຸບໍ່ຄົບ ໒໐ ປີອຸປສົມບົທ

ເລື້ອງຜູ້ຖືກໂຣຄບຽດບຽນອຸປສົມບົທ

ເລື້ອງຖາມອັນຕຣາຍິກທັມກັບອຸປສັມປທາເປກຂະ

ເລື້ອງສອນຊ້ອມກ່ອນຖາມອັນຕຣາຍິກທັມ

ເລື້ອງສອນຊ້ອມໃນທ່າມກາງສົງຂ໌ ເລື້ອງພິກສຸໂງ່ງ່າວສອນຊ້ອມ

ເລື້ອງພິກສຸຍັງບໍ່ໄດ້ຮັບສົມມຸດສອນຊ້ອມ

ເລື້ອງວິທີສົມມຸດພິກສຸເປັນຜູ້ສອນຊ້ອມ

ເລື້ອງຫ້າມຜູ້ສອນຊ້ອມກັບອຸປສັມປທາເປກຂະຍ່າງມາພ້ອມກັນ

ເລື້ອງຄຳຂອອຸປສົມບົທເພື່ອຍົກຂຶ້ນເປັນພິກສຸ

ເລື້ອງຍັຕຕິຈຕຸຕຖກັມອຸປສັມປທາ ເລື້ອງຊີງອນຸຍາຕໃຫ້ບອກນິສສັຍ ໔

ເລື້ອງຖິ້ມອຸປສັມບັນໄວ້ຕາມລຳພັງ

ເລື້ອງພິກສຸຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ເຫັນອາບັຕິ

ເລື່ອງພິກສຸຖືກສົງຂ໌ລົງອຸກເຂປນິຍກັມເພາະບໍ່ທຳຄືນອາບັຕິ
ເລື່ອງພິກສຸຖືກສົງຂ໌ລົງອຸກເຂປນິຍກັມເພາະບໍ່ສລະທິຕຖິບາປ໑

ມຫາຂັນທກະ ຈົບ

ໝາຍເຫດ :
໑ ຊື່ເລື່ອງເຫລົ່ານີ້ ພຣະສັງຄີຕິກາຈາຣຍ໌ໄດ້ເກັບຂໍ້ຄວາມມາກ່າວເປັນຄາຖາຣວມ ໑໗໔ ເລື່ອງ ແຕ່ໃນຂໍ້ຄວາມນັ້ນໆ ໃນແປແລະຮຽບຮຽງຈາກ ສະບັບພາສາບາລີແລະແປແລະຮຽບຮຽງຈາກ ສະບັບພາສາລາວນີ້ ບໍ່ໄດ້ຕັ້ງຂໍ້ໄວ້ທັງ ໑໗໔ ເລື່ອງ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໑໗. ສັນນິປາຕານຸຊານນາ
໔. ອຸໂປສຖຂັນທກະ

໑໗. ສັນນິປາຕານຸຊານນາ
ວ່າດ້ວຍຊົງອນຸຍາຕໃຫ້ສົງຂ໌ປະຊຸມກັນ

ເລື່ອງປຣິພາຊກອັຍຍເດັຽຣະຖີຍ໌
[໑໓໔] ສມັຍນັ້ນ ພຣະຜູ້ມີພຣະພາກພຸດທະເຈົ້າປະທັບຢູ່ ນະ ພູເຂົາຄິຊຍກູຕ ເຂຕກຸງຣາຊຄືຫ໌ ຄັ້ງນັ້ນພວກປຣິພາຊກອັຍຍເດັຽຣະຖີຍ໌໑ ປະຊຸມກັນກ່າວທັມ ປະຊາຊົນພາກັນເຂົ້າໄປຫາເພື່ອຟັງທັມ ປະຊາຊົນເຫລົ່ານັ້ນໄດ້ຄວາມຮັກຄວາມເຫລື້ອມໃສໃນພວກປຣິພາຊກອັຍຍເດັຽຣະຖີຍ໌ ພວກປຣິພາຊກອັຍຍເດັຽຣະຖີຍ໌ກໍໄດ້ພັກພວກ

ເລື່ອງພຣະເຈົ້າພິມພິສາຣຈອມທັພມຄທຣັຖ
ສມັຍນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖສເດັຈຫລີກຫລີບຢູ່ໃນທີ່ສງັດ ຊົງເກີດຄວາມຄິດຄຳນຶງຂຶ້ນໃນພຣະທັຍຢ່າງນີ້ວ່າ "ດຽວນີ້ ພວກປຣິພາຊກອັຍຍເດັຽຣະຖີຍ໌ ປະຊຸມກັນກ່າວທັມໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໗ ຄ່ຳ ບ່ອນປັກສ໌ ມະນຸສຍ໌ທັງຫລາຍພາກັນເຂົ້າໄປຫາເພື່ອຟັງທັມ ຄົນເຫລົ່ານັ້ນໄດ້ຄວາມຮັກຄວາມເຫລື້ອມໃສໃນພວກປຣິພາຊກອັຍຍເດັຽຣະຖີຍ໌ ພວກປຣິພາຊກອັຍຍເດັຽຣະຖີຍ໌ກໍໄດ້ພັກພວກ ຈັ່ງໃດນໍແມ່ນພຣະຄຸນເຈົ້າທັງຫລາຍຈະຄວນປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ

ກ ຄ່ຳ ບ່ອນປັກສ໌ແດ່" ຈຶ່ງສເດັຈໄປເຝົ້າພຣະຜູ້ມີພຣະພາກ ນະທີ່ປະທັບ ຄັນເຖິງແລ້ວ ໄດ້ຖວາຍອະພິວາທພຣະຜູ້ມີພຣະພາກແລ້ວປະທັບນັ່ງ ນະທີ່ສົມຄວຣ ພຣະເຈົ້າພິມພິສາຣຈອມທັພມຄທຣັຖຜູ້ປະທັບນັ່ງ ນະທີ່ສົມຄວຣໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ພຣະອົງຄ໌ຜູ້ຈະເຣີນ ຂະນ້ອຍຫລີກຫລີບຢູ່ໃນທີ່ສງັດ ເກີດຄວາມຄິດຄຳນຶງຂຶ້ນໃນໃຈຢ່າງນີ້ວ່າ 'ດຽວນີ້ພວກປຣິພາຊກອັຍເດັຽຣະຖີຍ໌ ປະຊຸມກັນກ່າວທັມ ໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ກ ຄ່ຳ ບ່ອນປັກສ໌

ໝາຍເຫດ :

໑ ອັຍເດັຽຣະຖີຍ໌ ຫມາຍເຖິງຜູ້ເປັນເຈົ້າລັທທິອື່ນນອກຈາກພຣະພຸທທສາສນາ (ວິ. ອ. ໓/໑໑໔/໑໐໕)

ພຣະວິນັຍປີດົກ ມຫາວັຄ [໔. ອຸໂປສຖຂັນທກະ] ຝຖ. ສັນນິປາຕານຸຊານນາ

ປະຊາຊົນພາກັນເຂົ້າໄປຫາເພື່ອຟັງທັມ ປະຊາຊົນເຫລົ່ານັ້ນໄດ້ຄວາມຮັກຄວາມເຫລື້ອມໃສໃນພວກປຣິພາຊກອັຍເດັຽຣະຖີຍ໌ ພວກປຣິພາຊກອັຍເດັຽຣະຖີຍ໌ກໍໄດ້ພັກພວກ ຈັ່ງໃດນໍ ພຣະຄຸນເຈົ້າທັງຫລາຍຈະຄວນປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ກ ຄ່ຳ ບ່ອນປັກສ໌ແດ່' ຂະນ້ອຍຂໍປະທານພຣະວໂຣກາສ ຂໍໃຫ້ພຣະຄຸນເຈົ້າທັງຫລາຍຄວນປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ກ ຄ່ຳ ບ່ອນປັກສ໌ດ້ວຍເຖີດ ພຣະພຸດທະເຈົ້າຂ້າ"

ຊົງສະແດງທັມມີກຖາ

ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊີ້ແຈງໃຫ້ພຣະເຈົ້າພິມພິສາຣຈອມທັພມຄທຣັຖເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ເຮົ້າພຣະທັຍໃຫ້ອາຈຫານເກັ່ງກ້າ ປອບປະໂລມພຣະທັຍໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ຄັນທ້າວທ່ານຜູ້ຊຶ່ງພຣະຜູ້ມີພຣະພາກຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ເຮົ້າພຣະທັຍໃຫ້ອາຈຫານເກັ່ງກ້າ ປອບປະໂລມພຣະທັຍໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ກໍສເດັຈລຸກຈາກອາສນະຖວາຍບັງຄົມ ຊົງທຳປຣະທັກສິນ(ວຽນໄປທາງຂວາ)ສເດັຈຫລີກໄປ

ຊົງອນຸຍາຕວັນປະຊຸມ

ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງ

ຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໗ ຄ່ຳ ບ່ອນປັກສ໌"

ເຣື້ອງພິກສຸປະຊຸມນັ່ງນິ່ງ

ສະໄໝນັ້ນ ພິກສຸທັງຫລາຍຄິດກັນວ່າ "ພຣະຜູ້ມີພຣະພາກຊົງອນຸຍາຕໃຫ້ປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໗ ຄ່ຳ ບ່ອນປັກສ໌" ຈຶ່ງປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໗ ຄ່ຳ ບ່ອນປັກສ໌ ແລ້ວນັ່ງນິ່ງ ປະຊາຊົນເຂົ້າໄປຫາພິກສຸເຫລົ່ານັ້ນເພື່ອຟັງທັມ ປະຊາຊົນເຫລົ່ານັ້ນພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສະມະນະເຊື້ອສາຍພຣະສາກບຸດທັງຫລາຍປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໗ ຄ່ຳ ບ່ອນປັກສ໌ແລ້ວ ຈຶ່ງນັ່ງນິ່ງເໝືອນໝູໃບ້ລະ[1] ທັມດາວ່າຜູ້ປະຊຸມກັນກໍຄວຣກ່າວທັມບໍ່ແມ່ນບໍ"

ໝາຍເຫດ :

໑ ເໝືອນໝູອ້ວນ (ວິ. ອ. ໓/໑໓໔/໑໐໕)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໖໙. ປາຕິໂມກຂຸທເທສານຸຊານນາ

ພິກສຸທັງຫລາຍໄດ້ຍິນປະຊາຊົນເຫລົ່ານັ້ນຕຳໜິ ປະນາມ ໂພນທະນາຢູ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ເຣື້ອງຊົງອນຸຍາຕໃຫ້ກ່າວທັມໃນວັນປະຊຸມ

ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫດ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ປະຊຸມກັນກ່າວທັມໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໗ ຄ່ຳ ບ່ອນປັກສ໌"

໖໙. ປາຕິໂມກຂຸທເທສານຸຊານນາ

ວ່າດ້ວຍການຊົງອນຸຍາຕປາຕິໂມກຂຸທເທສ

ເຣື້ອງພຣະຜູ້ມີພຣະພາກຊົງຫລີກຫລີບຢູ່ໃນທີ່ສງັດ

[໑໓໓] ສະໄໝນັ້ນ ພຣະຜູ້ມີພຣະພາກສເດັຈຫລີກຫລີບຢູ່ໃນທີ່ສງັດ ໄດ້ຊົງເກີດຄວາມດຳຣິຂຶ້ນໃນ

ພຣະທັຍຢ່າງນີ້ວ່າ "ຖ້າຢ່າງນັ້ນ ເຮົາຄວນອນຸຍາຕສິກຂາບົດທີ່ໄດ້ບັນຍັດໄວ້ແກ່ພິກຂຸທັງຫລາຍໃຫ້ເປັນປາຕິໂມກຂຸທເທສຂອງພວກທ່ານ ປາຕິໂມກຂຸທເທສນັ້ນກໍຈັກເປັນອຸໂບສົຖກັມຂອງພວກທ່ານ" ຄັ້ນເວລາແລງ ພຣະອົງຄ໌ສະເດັດອອກຈາກທີ່ຫລີກ ຊົງສະແດງທັມມີກະຖາເພາະເລື້ອງນີ້ເປັນ ຕົ້ນເຫຕຸ ແລ້ວຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ເຮົາຫລີກຫລີບຢູ່ໃນທີ່ສງັດ ນະທີ່ນີ້ໄດ້ເກີດຄວາມຄິດຂຶ້ນໃນໃຈຢ່າງນີ້ວ່າ 'ຖ້າຢ່າງນັ້ນ ເຮົາຄວນອນຸຍາຕສິກຂາບົດທີ່ໄດ້ບັນຍັດໄວ້ແກ່ພິກຂຸທັງຫລາຍໃຫ້ເປັນປາຕິໂມກຂຸທເທສຂອງພວກທ່ານ ປາຕິໂມກຂຸທເທສນັ້ນກໍຈັກ ເປັນອຸໂບສົຖກັມຂອງພວກທ່ານ' ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຍົກປາຕິໂມກຂ໌ຂຶ້ນສະແດງ" ພິກຂຸທັງຫລາຍ ກໍແລພວກທ່ານຄວນຍົກຂຶ້ນສະແດງຢ່າງນີ້ ພິກຂຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິກັມອາຈາວ່າ

[໑໓໔] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນທຳອຸໂບສົຖຄວນຍົກປາຕິໂມກຂ໌ຂຶ້ນສະແດງ ແມ່ນຫຍັງເປັນບຸພພກິຈຂອງສົງຂ໌ ທ່ານທັງຫລາຍຄວນບອກປາຣິສຸທຫຼີ ຂ້າພະເຈົ້າຈັກຍົກປາຕິໂມກຂ໌ຂຶ້ນສະແດງ ພວກເຮົາບັນດາທີ່ມີຢູ່ທັງໝົດຈົ່ງຟັງໃຫ້ດີຈົ່ງໃສ່ໃຈປາຕິໂມກຂ໌ນັ້ນ ທ່ານຮູບໃດມີອາບັຕິ ທ່ານຮູບນັ້ນຄວນເປີດເຜີຍ ເມື່ອບໍ່ມີອາບັຕິຄວນນິ່ງດ້ວຍຄວາມເປັນຜູ້ນິ່ງ ຂ້າພະເຈົ້າຈັກຊາບວ່າທ່ານທັງຫລາຍເປັນຜູ້ບໍຣິສຸດທິ໌ ກໍການສວດປະກາດເຖິງ ໓ ຄັ້ງ ໃນບໍຣິສັດເຊັ່ນນີ້ເປັນເຫມືອນການເປີດເຜີຍອາບັຕິຂອງພິກຂຸແຕ່ລະຮູບທີ່ຖືກຖາມ ກໍເມື່ອກຳລັງສວດປະກາດເຖິງຄັ້ງທີ ໓ ພິກຂຸໃດຣະນຶກໄດ້ ຍັງບໍ່ຍອມເປີດເຜີຍອາບັຕິທີ່ມີຢູ່ ສັມປຊານມຸສາວາທຍ່ອມມີແກ່ພິກຂຸຮູບນັ້ນ ທ່ານທັງຫລາຍ ກໍສັມປຊານມຸສາວາທ໑ ພຣະຜູ້ມີພຣະພາກຕຣັສວ່າເປັນທັມທີ່ທຳອັນຕຣາຍ ເພາະສະນັ້ນ ພິກຂຸຕ້ອງອາບັຕິແລ້ວຣະນຶກໄດ້ ຫວັງຄວາມບໍຣິສຸດທິ໌ ກໍຄວນເປີດເຜີຍອາບັຕິທີ່ມີຢູ່ ເພາະເປີດເຜີຍອາບັຕິແລ້ວ ຄວາມຜາສຸກຍ່ອມມີແກ່ພິກຂຸຮູບນັ້ນ

ນິທານຸທເທສວິພັງຄ໌

[໑໓໕] ຄຳວ່າ ປາຕິໂມກຂ໌ ນີ້ເປັນເບື້ອງຕົ້ນ ນີ້ເປັນປະທານ ນີ້ເປັນປຣະມຸຂແຫ່ງກຸສົລທັມທັງຫລາຍ ເພາະເຫຕຸນັ້ນ ພຣະຜູ້ມີພຣະພາກຈຶ່ງຕຣັສຮຽກວ່າ ປາຕິໂມກຂ໌

ຄຳວ່າ ທ່ານທັງຫລາຍ ນີ້ເປັນຄຳກ່າວດ້ວຍຄວາມຮັກ ນີ້ເປັນຄຳກ່າວດ້ວຍຄວາມເຄົາຣົພ ນີ້ເປັນຄຳຮຽກບຸຄຄົລຜູ້ມີຄວາມເຄົາຣົພແລະມີຄວາມຢຳເກງ ເພາະເຫຕຸນັ້ນພຣະຜູ້ມີພຣະພາກຈຶ່ງຕຣັສວ່າ ທ່ານທັງຫລາຍ

ຄຳວ່າ ຈັກຍົກຂຶ້ນສະແດງ ຄື ຈັກບອກ ຈັກສະແດງ ຈັກບັນຍັດ ຈັກເລີ້ມຕັ້ງ ຈັກເປີດເຜີຍ ຈັກ ຈຳແນກ ຈັກເຮັດໃຫ້ກຣະຈ່າງແຈ້ງ ຈັກປະກາດ

ຄຳວ່າ ນັ້ນ ຕຣັສຫມາຍເຖິງປາຕິໂມກຂ໌

ຄຳວ່າ ບັນດາທີ່ມີຢູ່ທັງຫມົດ ຄວາມວ່າ ພິກສຸໃນບໍຣິສັດນັ້ນເປັນເຖຣະກໍຕາມ ເປັນນວກະກໍຕາມ ເປັນມັຊຍີມະກໍຕາມ ມີຈຳນວນເທົ່າໃດ ພິກສຸເຫລົ່ານັ້ນ ພຣະຜູ້ມີພຣະພາກຕຣັສຫມາຍເຖິງພິກສຸທີ່ມີຢູ່ທັງຫມົດ

ຄຳວ່າ ຈົ່ງຟັງໃຫ້ດີ ຄວາມວ່າ ຈົ່ງເຮັດໃຫ້ເປັນປໂຍດ ທຳໄວ້ໃນໃຈ ຣວບຣວມເຣື້ອງທັງຫມົດ ດ້ວຍໃຈ

ຄຳວ່າ ຈົ່ງໃສ່ໃຈ ຄວາມວ່າ ຈົ່ງມີຈິຕແນ່ວແນ່ ມີຈິຕບໍ່ປັ່ນປ່ວງ ມີຈິຕບໍ່ຊຸດສ່າຍ ຕັ້ງໃຈຟັງ

ຫມາຍເຫດ :

໑ ສັມປຊານມຸສາວາທ ຄື ກ່າວເທັຈທັງທີ່ຮູ້ (ດູ ວິ. ມຫາ. (ແປ) ໔/໔-໖/໑໗໘-໑໗໗)

ຄຳວ່າ ທ່ານຮູບໃດມີອາບັຕິ ຄວາມວ່າ ພິກສຸຜູ້ເປັນເຖຣະກໍຕາມ ເປັນນວກະກໍຕາມ ເປັນມັຊຍີມະກໍຕາມ ມີອາບັຕິຕົວໃດຕົວນຶ່ງ ບັນດາອາບັຕິ ໕ ກອງ ຫລື ມີອາບັຕິຕົວໃດຕົວນຶ່ງ ບັນດາອາບັຕິ ໗ ກອງ

ຄຳວ່າ ທ່ານຮູບນັ້ນຄວນເປີດເຜີຍ ຄວາມວ່າ ພິກສຸຮູບນັ້ນຄວນສະແດງ ພິກສຸຮູບນັ້ນຄວນເປີດເຜີຍ ພິກສຸຮູບນັ້ນຄວນເຮັດໃຫ້ກຣະຈ່າງ ພິກສຸຮູບນັ້ນຄວນປະກາດໃນທ່າມກາງສົງຂ໌ໃນທ່າມກາງຄນະ ຫລື ໃນບຸຄຄົລຜູ້ນຶ່ງ

ອາບັຕິທີ່ຊື່ວ່າບໍ່ມີ ໄດ້ແກ່ ອາບັຕິທີ່ພິກສຸບໍ່ໄດ້ລ່ວງລະເມີດ ຫລືວ່າຕ້ອງແຕ່ອອກແລ້ວ

ຄຳວ່າ ຄວນນິ່ງ ຄື ຄວນຢູ່ເສີຍ ບໍ່ຄວນກ່າວ

ຄຳວ່າ ຂ້າພະເຈົ້າຈັກຊາບວ່າ. . . . ເປັນຜູ້ບໍຣິສຸດທິ໌ ຄື ຈັກຮູ້ ຈັກຈຳໄວ້

ຄຳວ່າ ເປັນເຫມືອນກາຣເປີດເຜີຍອາບັຕິຂອງພິກສຸແຕ່ລະຮູບທີ່ຖືກຖາມ ຄວາມວ່າບໍຣິສັດນັ້ນຄວນຮູ້ວ່າ ຈະຖາມເຮົາ ດັ່ງນີ້ ເຫມືອນພິກສຸຮູບນຶ່ງໄດ້ຖືກພິກສຸອີກຮູບນຶ່ງຖາມ ກໍຄວນຕອບ

ບໍຣິສັດເຊັ່ນນີ້ ຕຣັສຫມາຍເຖິງພິກສຸບໍຣິສັດ

ຄຳວ່າ ກາຣສວດປະກາດເຖິງ ໓ ຄັ້ງ ຄວາມວ່າ ສວດປະກາດແມ່ນຄັ້ງທີ ໑ ສວດ ປະກາດແມ່ນຄັ້ງທີ ໔ ສວດປະກາດແມ່ນຄັ້ງທີ ໓

ຄໍາວ່າ ຣະນຶກໄດ້ ຄື ຮູ້ຢູ່ ຈໍາໄດ້ຢູ່
ອາບັຕິທີ່ຊື່ວ່າມີຢູ່ ໄດ້ແກ່ ອາບັຕິທີ່ພິກສຸລ່ວງລະເມີດແລ້ວ ຫລືທີ່ຕ້ອງແລ້ວ ຍັງບໍ່ໄດ້ອອກ
ຄໍາວ່າ ຍັງບໍ່ຍອມເປີດເຜີຍ ຄວາມວ່າ ບໍ່ຍອມສະແດງ ບໍ່ຍອມເປີດເຜີຍ ບໍ່ຍອມທໍາໃຫ້ຕື້ນ ບໍ່ຍອມປະກາດໃນທ່າມກາງສົງຊ໌ ໃນທ່າມກາງຄນະ ຫລືໃນບຸຄຄົລຜູ້ນຶ່ງ
ຄໍາວ່າ ສັມປຊານມຸສາວາທຍ່ອມມີແກ່ພິກສຸຮູບນັ້ນ ຄື ເປັນອາບັຕິຫຍັງເພາະສັມປຊານມຸສາວາທ ເປັນອາບັຕິທຸກກະຕະ
ຄໍາວ່າ ພຣະຜູ້ມີພຣະພາກຕຣັສວ່າ ເປັນທັມທີ່ທໍາອັນຕຣາຍ ຄວາມວ່າ ເປັນທັມທີ່ທໍາອັນຕຣາຍຕໍ່ຫຍັງ ເປັນທັມທີ່ທໍາອັນຕຣາຍຕໍ່ການບັນລຸປຖົມຢານ ເປັນທັມທີ່ທໍາອັນຕຣາຍຕໍ່ການບັນລຸທຸຕິຍຢານ ເປັນທັມທີ່ທໍາອັນຕຣາຍຕໍ່ການບັນລຸຕຕິຍຢານ ເປັນທັມທີ່ທໍາອັນຕຣາຍຕໍ່ການບັນລຸຈຕຸຕຖຢານ ເປັນທັມທີ່ທໍາອັນຕຣາຍຕໍ່ການບັນລຸຢານ ວິໂມກຂ໌ ສມາທິ ສມາບັຕິ ເນກຂັມມະ ນິສສຣນະ ປວິເວກ ກຸສົລທັມ
ຄໍາວ່າ ເພາະສະນັ້ນ ຄື ເພາະເຫຕຸນັ້ນ
ຄໍາວ່າ ຣະນຶກໄດ້ ຄື ຮູ້ຢູ່ ຈໍາໄດ້ຢູ່
ຄໍາວ່າ ຫວັງຄວາມບໍຣິສຸດທິ໌ ຄື ປະສົງຄ໌ອອກຈາກອາບັຕິ ຕ້ອງການຄວາມຫມົດຈົດ
ອາບັຕິທີ່ຊື່ວ່າມີຢູ່ ໄດ້ແກ່ ອາບັຕິທີ່ພິກສຸລ່ວງລະເມີດ ຫລືທີ່ຕ້ອງແລ້ວຍັງບໍ່ໄດ້ອອກ
ຄໍາວ່າ ຄວນເປີດເຜີຍ ຄວາມວ່າ ຄວນເຮັດໃຫ້ແຈ້ງໃນທ່າມກາງສົງຊ໌ ໃນທ່າມກາງຄນະ ຫລືໃນບຸຄຄົລຜູ້ນຶ່ງ
ຄໍາວ່າ ເພາະເປີດເຜີຍອາບັຕິແລ້ວ ຄວາມຜາສຸກຍ່ອມມີແກ່ພິກສຸຮູບນັ້ນ ຄວາມວ່າຄວາມຜາສຸກຍ່ອມມີເພື່ອຫຍັງ ຄວາມຜາສຸກຍ່ອມມີເພື່ອບັນລຸປຖົມຢານ ຄວາມຜາສຸກຍ່ອມມີ ເພື່ອບັນລຸທຸຕິຍຢານ ຄວາມຜາສຸກຍ່ອມມີເພື່ອບັນລຸຕຕິຍຢານ ຄວາມຜາສຸກຍ່ອມມີເພື່ອບັນລຸຈຕຸຕຖຢານ ຄວາມຜາສຸກຍ່ອມມີເພື່ອບັນລຸຢານ ວິໂມກຂ໌ ສມາທິ ສມາບັຕິ ເນກຂັມມະນິສສຣນະ ປວິເວກ ກຸສົລທັມ

ເຣື້ອງພິກສຸຍົກປາຕິໂມກຂ໌ຂຶ້ນສະແດງທຸກວັນ

[໑໓໗] ສມັຍນັ້ນ ພິກສຸທັງຫລາຍຊາບວ່າ ພຣະຜູ້ມີພຣະພາກຊົງອນຸຍາຕການຍົກປາຕິໂມກຂ໌ຂຶ້ນສະແດງໃນວັນອຸໂບສົຖແລ້ວ ຈຶ່ງຍົກປາຕິໂມກຂ໌ຂຶ້ນສະແດງທຸກວັນ ພິກສຸທັງຫລາຍຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງທຸກວັນ ຮູບໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຍົກປາຕິໂມກຂ໌ຂຶ້ນສະແດງໃນວັນອຸໂບສົຖ" ຕໍ່ມາ ພິກສຸທັງຫລາຍຊາບວ່າ ພຣະຜູ້ມີພຣະ

ພຣະຜູ້ມີພຣະພາກຊົງອະນຸຍາຕການຍົກປາຕິໂມກຂ໌ຂຶ້ນສະແດງໃນວັນອຸໂບສົຖແລ້ວ ຈຶ່ງຍົກປາຕິໂມກຂ໌ຂຶ້ນສະແດງປັກສ໌ລະ ໓ ຄັ້ງ ຄື ໃນວັນ ໑໔ ຄ່ຳ ວັນ ໑໕ ຄ່ຳ ແລະວັນ ໘ ຄ່ຳ ພິກສຸທັງຫລາຍຈຶ່ງນຳເລື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສົຖຂັນທກະ] ໗໙. ປາຕິໂມກຂຸທເທສານຸຊານນາ

ເລື່ອງຊົງອະນຸຍາຕໃຫ້ຍົກປາຕິໂມກຂ໌ຂຶ້ນສະແດງປັກສ໌ລະຄັ້ງ
ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງປັກສ໌ລະ ໓ ຄັ້ງ ຮູບໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອະນຸຍາຕໃຫ້ຍົກປາຕິໂມກຂ໌ຂຶ້ນສະແດງປັກສ໌ລະ ໑ ຄັ້ງ ຄື ໃນວັນ ໑໔ ຄ່ຳ ຫລືວັນ ໑໕ ຄ່ຳ"໑

ເລື່ອງພຣະສັພພັຄຄີຍ໌ຍົກປາຕິໂມກຂ໌ຂຶ້ນສະແດງແກ່ບໍຣິສັດເທົ່າທີ່ມີ
ສະໄໝນັ້ນ ພວກພິກສຸສັພພັຄຄີຍ໌ຍົກປາຕິໂມກຂ໌ຂຶ້ນສະແດງແກ່ບໍຣິສັດເທົ່າທີ່ມີ ຄືສະເພາະບໍຣິສັດຂອງຕົນໆ ພິກສຸທັງຫລາຍຈຶ່ງນຳເລື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ເລື່ອງຊົງອະນຸຍາຕໃຫ້ຍົກປາຕິໂມກຂ໌ຂຶ້ນສະແດງແກ່ພິກສຸຜູ້ພ້ອມພຽງ
ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງແກ່ບໍຣິສັດ ເທົ່າທີ່ມີຄືສະເພາະບໍຣິສັດຂອງຕົນໆຮູບໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອະນຸຍາຕໃຫ້ຍົກປາຕິໂມກຂ໌ຂຶ້ນສະແດງແກ່ພິກສຸບໍຣິສັດທັງຫລາຍຜູ້ພ້ອມພຽງກັນ"

ເລື່ອງຊົງອະນຸຍາຕຄວາມພ້ອມພຽງກຳຫນົດອາວາສດຽວ
ຕໍ່ມາ ພິກສຸທັງຫລາຍມີຄວາມຄິດຄຳນຶງວ່າ "ພຣະຜູ້ມີພຣະພາກຊົງບັນຍັດອຸໂບສົຖກັມແກ່ພິກສຸທັງຫລາຍຜູ້ພ້ອມພຽງກັນ" ແລ້ວດຳຣິວ່າ "ຄວາມພ້ອມພຽງກັນມີກຳຫນົດພຽງໃດຫນໍ ມີພຽງອາວາສນຶ່ງຫລືມີທັງແຜ່ນດິນ" ຈຶ່ງນຳເລື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກ ຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອະນຸຍາຕຄວາມພ້ອມພຽງມີກຳຫນົດເຂດພຽງອາວາສດຽວເທົ່ານັ້ນ"

ໝາຍເຫດ :
໑ ປັກສ໌ນຶ່ງມີ ໑໔ ວັນແດ່ ໑໕ ວັນແດ່ : ໑ ປີມີ ໓ ຣະດູຄື

໑) ຣະດູຮ້ອນ ຕັ້ງແຕ່ແຮມ ໑ ຄ່ຳເດືອນ ໔ ເຖິງຂຶ້ນ ໑໕ ຄ່ຳເດືອນ ໗
໒) ຣະດູຝົນ ຕັ້ງແຕ່ແຮມ ໑ ຄ່ຳເດືອນ ໗ ເຖິງຂຶ້ນ ໑໕ ຄ່ຳເດືອນ ໑໒
(໓) ຣະດູຫນາວ ຕັ້ງແຕ່ແຮມ ໑ ຄ່ຳເດືອນ ໑໒ ເຖິງຂຶ້ນ ໑໕ ຄ່ຳເດືອນ ໔
໑ ຣະດູມີ ໗ ປັກສ໌ ປັກສ໌ ໑໔ ວັນ ມີ ໒ ຄັ້ງ ຄືປັກສ໌ທີ ໓ ແລະປັກສ໌ທີ ໗ ປັກສ໌ ໑໕ ວັນ ມີ ໖ ຄັ້ງ (ວິ. ອ. ໓/໓໖/໑໐໖)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໐. ມຫາກັປປິນວັຕຖຸ

໗໐. ມຫາກັປປິນວັຕຖຸ

ວ່າດ້ວຍພຣະມຫາກັປປິນເຖຣະ

ເຣື້ອງມັທທກຸຈສີມຣືຄທາຍວັນ

[໑໓໗] ສມັຍນັ້ນ ທ່ານພຣະມຫາກັປປິນະຢູ່ ນະ ມັທທກຸຈສີມຣືຄທາຍວັນ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານຫລີກຫລີບຢູ່ໃນທີ່ສງັດ ໄດ້ເກີດຄວາມຄິດຄຳນຶງຂຶ້ນໃນໃຈຢ່າງນີ້ວ່າ "ເຮົາຄວຣໄປທຳອຸໂປສົຖຫລືບໍ່ ຄວຣໄປທຳສັງຂກັມຫລືບໍ່ ທີ່ຈິງເຮົາເປັນຜູ້ບໍຣິສຸດທ໌ດ້ວຍຄວາມບໍຣິສຸດທ໌ຢ່າງຍິ່ງ"
ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊາບຄວາມຄິດຄຳນຶງໃນໃຈຂອງທ່ານພຣະມຫາກັປປິນະດ້ວຍພຣະທັຍຂອງພຣະອົງຄ໌ ຊົງຫາຍໄປ ນະ ພູເຂົາຄິຊຸຢກູຕມາປາກົດຕຣົງຫນ້າ ທ່ານພຣະມຫາກັປປິນະທີ່ມັທທກຸຈສີມຣືຄທາຍວັນ ປຽບເຫມືອນບຸຣຸສມີກຳລັງຢຽດແຂນອອກຫລືຄູ້ແຂນເຂົ້າສະນັ້ນ ປະທັບນັ່ງເທິງອາສນະທີ່ໄດ້ປູລາດໄວ້ ຝ່າຍທ່ານພຣະມຫາກັປປິນະຖວາຍອະພິວາທພຣະຜູ້ມີພຣະພາກແລ້ວນັ່ງ ນະ ທີ່ສົມຄວຣ ພຣະຜູ້ມີພຣະພາກໄດ້ຕຣັສກັບທ່ານພຣະມຫາກັປປິນະຜູ້ນັ່ງ ນະທີ່ສົມ ຄວຣວ່າ "ກັປປິນະ ທ່ານຫລີກຫລີບຢູ່ໃນທີ່ສງັດ ໄດ້ເກີດຄວາມຄິດຄຳນຶງຂຶ້ນໃນໃຈຢ່າງນີ້ວ່າ ເຮົາຄວຣໄປທຳອຸໂປສົຖຫລືບໍ່ ຄວຣໄປທຳສັງຂກັມຫລືບໍ່ ທີ່ຈິງເຮົາເປັນຜູ້ບໍຣິສຸດທ໌ດ້ວຍຄວາມບໍຣິສຸດທ໌ຢ່າງຍິ່ງຢ່າງນີ້ບໍ່ແມ່ນບໍ" ທ່ານພຣະມຫາກັປປິນະທູລຮັບວ່າ "ແມ່ນແລ້ວ ພຣະພຸດທະເຈົ້າຂ້າ"
ພຣະຜູ້ມີພຣະພາກຕຣັສວ່າ "ພຣາມນ໌ທັງຫລາຍ໑ ພວກທ່ານບໍ່ສັກກາຣະ ບໍ່ເຄົາຣົພ ບໍ່ນັບຖື ບໍ່ບູຊາຊຶ່ງອຸໂປສົຖ ເມື່ອເປັນເຊັ່ນນີ້ ໃຜລະຈັກສັກກາຣະ ເຄົາຣົພ ນັບຖື ບູຊາຊຶ່ງອຸໂປສົຖ ພຣາມນ໌ ທ່ານຈົ່ງໄປທຳອຸໂປສົຖ ຈະບໍ່ໄປບໍ່ໄດ້ ທ່ານຈົ່ງໄປທຳສັງຂກັມ ຈະບໍ່ໄປບໍ່ໄດ້"
ທ່ານພຣະມຫາກັປປິນະທູລຮັບພຣະດຳຣັສພຣະຜູ້ມີພຣະພາກວ່າ "ໄປ ພຣະພຸດທະເຈົ້າຂ້າ"

ໝາຍເຫດ :

໑ ພຣາມນ໌ທັງຫລາຍ ໃນທີ່ນີ້ໝາຍເຖິງພິກສຸຊີນາສູພ (ດູ ວິ. ອ. ໓/໑/໕)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໑. ສີມານຸຊານນາ

ລຳດັບນັ້ນ ພຣະຜູ້ມີພຣະພາກຊົງຊີ້ແຈງໃຫ້ທ່ານພຣະມຫາກັປປິນະເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສືດຊື່ນເບີກບານດ້ວຍທັມມີກຖາ ແລ້ວຊົງຫາຍໄປຕຣົງໜ້າທ່ານພຣະມຫາກັປປິນະ ນະ ມັທທກຸຈສີນຣຶຄຫາຍວັນ ມາປາກົດທີ່ພູເຂົາຄິຊຢກູຕ ປຽບເໝືອນບຸຣຸສມີກຳລັງຢຽດແຂນອອກຫລືຄູ້ແຂນເຂົ້າ ສະນັ້ນ

໗໑. ສີມານຸຊານນາ

ວ່າດ້ວຍຊົງອນຸຍາຕສີມາ

ສົມມຸດສີມາແລະນິມິຕແຫ່ງສີມາ

[໑໓໗] ຄັ້ງນັ້ນ ພິກສຸທັງຫລາຍໄດ້ມີຄວາມຄິດດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ຄວາມພ້ອມພຽງມີກຳໜົດເຂຕພຽງອາວາສດຽວເທົ່ານັ້ນ" ແລ້ວດຳຣິວ່າ "ອາວາສນຶ່ງມີກາຣກຳໜົດເຂຕເທົ່າໃດ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຣົາອນຸຍາຕໃຫ້ສົມມຸດສີມາ ພິກສຸທັງຫລາຍ ຄວນສົມມຸດສີມາຢ່າງນີ້

ວິທີສົມມຸດສີມາ

ໃນເບື້ອງຕົ້ນຄວນທັກນິມິຕ ຄື

ປັພພຕນິມິຕ (ນິມິຕຄືພູເຂົາ) ປາສານນິມິຕ (ນິມິຕຄືແຜ່ນຫີນ)

ວນນິມິຕ (ນິມິຕຄືປ່າ) ຣຸກຂນິມິຕ (ນິມິຕຄືຕົ້ນໄມ້)

ມັຄຄນິມິຕ (ນິມິຕຄືຫົນທາງ) ວັມມິກນິມິຕ (ນິມິຕຄືຈອມປວກ)

ນທີນິມິຕ (ນິມິຕຄືແມ່ນ້ຳ) ອຸທກນິມິຕ (ນິມິຕຄືນ້ຳ)

ຄັນທັກນິມິຕແລ້ວ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິ ທຸຕິຍກັມວາຈາວ່າ

ກັມວາຈາສົມມຸດສີມາ

[໑໓໙] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ນິມິຕໄດ້ຣະບຸໄວ້ໂດຍຮອບພຽງໃດ ຖ້າສົງຄ໌ພ້ອມກັນແລ້ວ ຄວນສົມມຸດສມານສັງວາສສີມາ ມີອຸໂບສົຖຸດຽວກັນ໑ ດ້ວຍນິມິຕເຫລົ່ານັ້ນ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ນິມິຕໄດ້ຣະບຸໄວ້ໂດຍຮອບພຽງໃດ ສົງຄ໌ສົມມຸດສມານສັງວາສສີມາ ມີອຸໂບສົຖຸດຽວກັນ ດ້ວຍນິມິຕເຫລົ່ານັ້ນ ທ່ານຮູບໃດເຫັນດ້ວຍກັບການສົມມຸດສມານສັງວາສສີມາ ມີອຸໂບສົຖຸດຽວກັນ ດ້ວຍນິມິຕເຫລົ່ານັ້ນ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງ ສມານສັງວາສສີມາ ມີອຸໂບສົຖຸດຽວກັນ ສົງຄ໌ສົມມຸດແລ້ວ ດ້ວຍນິມິຕເຫລົ່ານັ້ນ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້

ເຣື້ອງສົມມຸດສີມາໃຫຍ່ເກີນຂນາດ

[໑໔໐] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ຄິດວ່າ “ພຣະຜູ້ມີພຣະພາກຊົງອນຸຍາຕການສົມມຸດສີມາແລ້ວ” ຈຶ່ງສົມມຸດສີມາໃຫຍ່ເກີນໄປ ໔ ໂຍຊນ໌ແດ່ ໕ ໂຍຊນ໌ແດ່ ໖ ໂຍຊນ໌ແດ່ ພິກສຸທັງຫລາຍມາທຳອຸໂບສົຖ ມາເຖິງເມື່ອກຳລັງຍົກປາຕິໂມກຂ໌ຂຶ້ນສະແດງກໍມີ ມາເຖິງເມື່ອຍົກຂຶ້ນສະແດງຈົບແລ້ວກໍມີ ຮອນແຮມຢູ່ຣະຫວ່າງທາງກໍມີ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ບໍ່ຄວນສົມມຸດສີມາໃຫຍ່ເກີນໄປ ໔ ໂຍຊນ໌ແດ່ ໕ ໂຍຊນ໌ແດ່ ໖ ໂຍຊນ໌ແດ່ ຮູບໃດສົມມຸດ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສົມມຸດສີມາປະມານ ໓ ໂຍຊນ໌ເປັນຢ່າງຍິ່ງ”

ເຣື້ອງສົມມຸດນທີປາຣສີມາ (ສີມາຄຣ່ອມແມ່ນ້ຳ)

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ສົມມຸດນທີປາຣສີມາ ພິກສຸທັງຫລາຍມາທຳອຸໂບສົຖ ຖືກນ້ຳພັດໄປກໍມີ ບາຕຣຖືກນ້ຳພັດໄປກໍມີ ຈີວອນຖືກນ້ຳພັດໄປກໍມີ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ໝາຍເຫດ :

໑ ສມານສັງວາສ ຫມາຍເຖິງເຂຕແດນທີ່ສົງຄ໌ສົມມຸດເພື່ອເຂົ້າຮ່ວມອຸໂບສົຖປວາຣນາແລະສັງຄກັມອື່ນດ້ວຍກັນ (ດູ ວິ. ອ. ໑/໕໕/໔ກຎ, ກງຂາ. ຕີກາ ໑໕໔,໑໕໕)

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນສົມມຸດນທີປາຣສີມາ ຮູບໃດສົມມຸດ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສົມມຸດນທີປາຣສີມາທີ່ມີເຮືອຈອດປະຈຳຫລືມີຂົວຖາວອນ"

໗໔. ອຸໂປສຖາຄາຣກຖາ

ວ່າດ້ວຍໂຮງອຸໂບສົຖ

ເຣື້ອງຍົກປາຕິໂມກຂ໌ຂຶ້ນສະແດງຕາມບໍຣິເວນວິຫາຣ

[໑໔໑] ສມັຍນັ້ນ ພິກສຸທັງຫລາຍຍົກປາຕິໂມກຂ໌ຂຶ້ນສະແດງຕາມບໍຣິເວນວິຫາຣໂດຍບໍ່ກຳໜົດທີ່ ພຣະອາຄັນຕຸກະທັງຫລາຍບໍ່ຮູ້ວ່າ "ວັນນີ້ສົງຊ໌ຈະເຮັດອຸໂບສົຖ ນະທີ່ໃດ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງຕາມບໍຣິເວນວິຫາຣໂດຍບໍ່ກຳໜົດທີ່ ຮູບໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສົມມຸດວິຫາຣ ເຮືອນມຸງແຖບດຽວ ປຣາສາທ ເຮືອນໂລ້ນ ຫລືຖ້ຳ ທີ່ສົງຊ໌ຕ້ອງການໃຫ້ເປັນໂຮງອຸໂບສົຖແລ້ວຈຶ່ງທຳອຸໂບສົຖ"

ພິກສຸທັງຫລາຍ ກໍແລຄວນສົມມຸດໂຮງອຸໂບສົຖຢ່າງນີ້ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຊ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

ວິທີສົມມຸດໂຮງອຸໂບສົຖແລະກັມວາຈາສົມມຸດໂຮງອຸໂບສົຖ

ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຊ໌ພ້ອມກັນແລ້ວ ສົງຊ໌ສົມມຸດວິຫາຣມີຊື່ນີ້ ໃຫ້ເປັນໂຮງອຸໂບສົຖ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ສົງຊ໌ສົມມຸດວິຫາຣມີຊື່ນີ້ໃຫ້ເປັນໂຮງອຸໂບສົຖ ທ່ານຮູບໃດເຫັນດ້ວຍກັບການສົມມຸດວິຫາຣມີຊື່ນີ້ໃຫ້ເປັນໂຮງອຸໂບສົຖ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງ ວິຫາຣມີຊື່ນີ້ສົງຊ໌ສົມມຸດໃຫ້ເປັນໂຮງອຸໂບສົຖແລ້ວ ສົງຊ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້

ເຣື້ອງສົມມຸດໂຮງອຸໂບສົຖ ໒ ບ່ອນໃນອາວາສດຽວກັນ

ສມັຍນັ້ນ ໃນອາວາສແຫ່ງນຶ່ງ ສົງຊ໌ສົມມຸດໂຮງອຸໂບສົຖ ໒ ບ່ອນ ພິກສຸທັງຫລາຍປະຊຸມກັນໃນໂຮງອຸໂບສົຖທັງ ໒ ບ່ອນດ້ວຍຕັ້ງໃຈວ່າ "ສົງຊ໌ຈະເຮັດອຸໂບສົຖ ນະທີ່ນີ້ ສົງຊ໌ຈັກທຳອຸໂບສົຖ ນະທີ່ນີ້" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ໃນອາວາສແຫ່ງນຶ່ງ ສົງຊ໌ບໍ່ຄວນສົມມຸດໂຮງອຸໂບສົຖ ໒ ບ່ອນ ພິກສຸສົງຊ໌ຫມູ່

ໃດສົມມຸດ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍເຮົາອະນຸຍາຕໃຫ້ຖອນໂຮງອຸໂບສົຖແຫ່ງນຶ່ງແລ້ວ ຈຶ່ງທຳອຸໂບສົຖໃນໂຮງອຸໂບສົຖອີກແຫ່ງນຶ່ງ”

ວິທີຖອນໂຮງອຸໂບສົຖແລະກັມວາຈາຖອນໂຮງອຸໂບສົຖ

ພິກສຸທັງຫລາຍ ຄວນຖອນໂຮງອຸໂບສົຖຢ່າງນີ້

ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຊ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງ ຟັງຂ້າພະເຈົ້າ ຖ້າສົງຊ໌ພ້ອມກັນແລ້ວ ສົງຊ໌ຄວນຖອນໂຮງອຸໂບສົຖມີຊື່ນີ້ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ສົງຊ໌ຖອນໂຮງອຸໂບສົຖມີຊື່ນີ້ ທ່ານຮູບໃດເຫັນດ້ວຍ ກັບການຖອນໂຮງອຸໂບສົຖມີຊື່ນີ້ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນ ຄວນທັກທ້ວງ ໂຮງອຸໂບສົຖມີຊື່ນີ້ສົງຊ໌ຖອນແລ້ວ ສົງຊ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖື ຄວາມນິ່ງນັ້ນເປັນມະຕິຢ່າງນີ້

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໆໝ. ອຸໂປສຖປມຸຂານຸຊານນາ

ໆໝ. ອຸໂປສຖປມຸຂານຸຊານນາ

ວ່າດ້ວຍຊົງອະນຸຍາຕພື້ນທີ່ດ້ານໜ້າໂຮງອຸໂບສົຖ

ເຣື່ອງສົມມຸດໂຮງອຸໂບສົຖເລັກເກີນໄປ

[໑໔໔] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ສົງຊ໌ສົມມຸດໂຮງອຸໂບສົຖເລັກເກີນໄປ ເຖິງວັນອຸໂບສົຖ ພິກສຸສົງຊ໌ລົງປະຊຸມກັນມາກ ພິກສຸທັງຫລາຍຕ້ອງນັ່ງຟັງປາຕິໂມກຂ໌ ນະ ພື້ນທີ່ ທີ່ບໍ່ໄດ້ສົມມຸດ ພິກສຸທັງຫລາຍຈຶ່ງໄດ້ປຶກສາກັນດັ່ງນີ້ວ່າ “ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ‘ຄວນສົມມຸດໂຮງ ອຸ ໂບສົຖແລ້ວຈຶ່ງທຳອຸໂບສົຖ’ ກໍພວກເຮົານັ່ງຟັງປາຕິໂມກຂ໌ ນະ ພື້ນທີ່ທີ່ບໍ່ໄດ້ສົມມຸດອຸໂບສົຖເປັນອັນ ພວກເຮົາທຳແລ້ວຫລືບໍ່ຫນໍ” ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ເພາະເຫຕຸທີ່ພິກສຸນັ່ງໃນພື້ນທີ່ທີ່ສົມ ມຸດແລ້ວກໍຕາມ ຍັງບໍ່ໄດ້ສົມມຸດແລ້ວກໍຕາມຟັງປາຕິໂມກຂ໌ຢູ່ ອຸໂບສົຖຍ່ອມເປັນອັນທ່ານໄດ້ທຳແລ້ວທີດຽວ ພິກສຸທັງ ຫລາຍ ຖ້າເຊັ່ນນັ້ນ ສົງຊ໌ຈົ່ງສົມມຸດພື້ນທີ່ດ້ານໜ້າໂຮງອຸໂບສົຖໃຫ້ໃຫຍ່ ເທົ່າທີ່ຈຳນົງເຖີດ”

ວິທີສົມມຸດແລະກັມວາຈາສົມມຸດພື້ນທີ່ດ້ານໜ້າໃນໂຮງອຸໂປສົຖ

ພິກສຸທັງຫລາຍ ຄວນສົມມຸດພື້ນທີ່ດ້ານໜ້າໂຮງອຸໂປສົຖຢ່າງນີ້
ໃນເບື້ອງຕົ້ນຄວນທັກນິມິຕ ຄັນທັກນິມິຕແລ້ວ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຊ໌ຊາບ ດ້ວຍຍັຕຕິທຸຕິຍກັມວາຈາວ່າ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ນິມິຕຣະບຸໄວ້ໂດຍຮອບພຽງໃດ ຖ້າສົງຊ໌ພ້ອມກັນແລ້ວ ສົງຊ໌ຄວນສົມມຸດພື້ນທີ່ດ້ານໜ້າໂຮງອຸໂປສົຖດ້ວຍນິມິຕເຫລົ່ານັ້ນ ນີ້ ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ນິມິຕຣະບຸໄວ້ໂດຍຮອບພຽງໃດ ສົງຊ໌ສົມມຸດ ພື້ນທີ່ດ້ານໜ້າໂຮງອຸໂປສົຖດ້ວຍນິມິຕເຫລົ່ານັ້ນ ທ່ານຮູບໃດເຫັນດ້ວຍກັບການສົມມຸດພື້ນທີ່ດ້ານ ໜ້າໂຮງອຸໂປສົຖດ້ວຍນິມິຕເຫລົ່ານັ້ນ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບ ນັ້ນຄວນທັກທ້ວງ ພື້ນທີ່ດ້ານໜ້າໂຮງອຸໂປສົຖສົງຊ໌ໄດ້ສົມມຸດດ້ວຍນິມິຕເຫລົ່ານັ້ນແລ້ວ ສົງຊ໌ເຫັນ ດ້ວຍເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້

ເຣື່ອງພິກສຸນວກະລົງປະຊຸມກ່ອນ

ສມັຍນັ້ນ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂປສົຖ ພິກສຸຜູ້ນວກະທັງຫລາຍລົງປະຊຸມກັນກ່ອນແລ້ວ ຫລີກໄປດ້ວຍຄິດວ່າ "ພິກສຸຜູ້ເປັນເຖຣະທັງຫລາຍຍັງບໍ່ມາເລີຍ" ອຸໂປສົຖມີໃນເວລາວິກາລ ພິກສຸ ທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸ ທັງຫລາຍ ໃນວັນອຸໂປສົຖ ເຮົາອນຸຍາຕໃຫ້ພິກສຸຜູ້ເຖຣະທັງຫລາຍລົງປະຊຸມກ່ອນ"

ຊົງອນຸຍາຕໃຫ້ພິກສຸຫລາຍວັດທຳອຸໂປສົຖຮ່ວມກັນ

ສມັຍນັ້ນ ໃນກຸງຣາຊຄຶຫ໌ ອາວາສຫລາຍແຫ່ງມີສີມາຮ່ວມກັນ ພິກສຸທັງຫລາຍ ໃນອາວາສເຫລົ່ານັ້ນ ກ່າວແຍ້ງກັນວ່າ "ຂໍສົງຊ໌ຈົ່ງທຳອຸໂປສົຖໃນອາວາສຂອງພວກເຮົາ ຂໍສົງຊ໌ຈົ່ງທຳອຸໂປສົຖໃນອາວາສ ຂອງພວກເຮົາ" ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ໃນກຸງຣາຊຄຶຫ໌ນີ້ ອາວາສຫລາຍແຫ່ງມີສີມາຮ່ວມກັນ ພິກສຸທັງຫລາຍໃນອາວາສເຫລົ່ານັ້ນ ກ່າວແຍ້ງກັນວ່າ 'ຂໍສົງຊ໌ຈົ່ງທຳອຸໂປສົຖໃນອາວາສຂອງພວກ ເຮົາ ຂໍສົງຊ໌ຈົ່ງທຳອຸໂປສົຖໃນອາວາສຂອງພວກເຮົາ' ພິກສຸທັງຫລາຍ ພິກສຸເຫລົ່ານັ້ນທຸກຮູປຕ້ອງປະ ຊຸມທຳອຸໂປສົຖໃນທີ່ແຫ່ງດຽວເທົ່ານັ້ນ ຫລືພິກສຸຜູ້ເຖຣະຢູ່ໃນອາວາສໃດກໍຕ້ອງປະຊຸມທຳອຸໂປສົຖໃນ ອາວາສນັ້ນ ສົງຊ໌ບໍ່ຄວນແບ່ງພວກກັນທຳອຸໂປສົຖ ພິກສຸສົງຊ໌ໝູ່ໃດຄວນທຳ ຕ້ອງອາບັຕິທຸກກະຕະ"

໗໔. ອວິປປວາສສີມານຸຊານນາ
ວ່າດ້ວຍຊົງອນຸຍາຕແດນບໍ່ຢູ່ປາສຈາກໄຕຣຈີວອນ

ເຣື້ອງກຸງຣາຊຄຶຫ໌
[໑໔໓] ສມັຍນັ້ນ ທ່ານພຣະມຫາກັສສປະຍ່າງທາງຈາກອັນທກວິນທວິຫາຣມາຍັງກຸງຣາຊຄຶຫ໌ເພື່ອທຳອຸໂບສົຖ ຣະຫວ່າງທາງຂບະຂ້າມແມ່ນ້ຳ ຖືກນ້ຳພັດໄປໜ້ອຍນຶ່ງຈີວອນຂອງທ່ານປຽກ ພິກສຸທັງຫລາຍໄດ້ກ່າວກັບທ່ານພຣະມຫາກັສສປະດັ່ງນີ້ວ່າ "ອາວຸໂສເປັນຫຍັງ ຈີວອນຂອງທ່ານຈຶ່ງ ປຽກລະ" ທ່ານພຣະມຫາກັສສປະກ່າວຕອບວ່າ "ທ່ານທັງຫລາຍ ຂະນ້ອຍຍ່າງທາງຈາກອັນທກວິນທວິຫາຣມາຍັງກຸງຣາຊຄຶຫ໌ເພື່ອທຳອຸໂບສົຖ ນະທີ່ນີ້ ຣະຫວ່າງທາງຂບະຂ້າມແມ່ນ້ຳ ຖືກນ້ຳພັດໄປໜ້ອຍນຶ່ງ ເພາະສະນັ້ນ ຈີວອນຂອງຂະນ້ອຍຈຶ່ງປຽກ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ສມານສັງວາສສີມາ໑ ມີອຸໂບສົຖດຽວກັນແຫ່ງໃດທີ່ສົງຂ໌ສົມມຸດແລ້ວ ສົງຂ໌ກໍຈົ່ງສົມມຸດສີມານັ້ນໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວອນ"໔

ວິທີສົມມຸດແລະກັມວາຈາສົມມຸດແດນບໍ່ຢູ່ປາສຈາກໄຕຣຈີວອນ
ພິກສຸທັງຫລາຍ ຄວນສົມມຸດແດນບໍ່ຢູ່ປາສຈາກໄຕຣຈີວອນຢ່າງນີ້ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສມານສັງວາສສີມາມີອຸໂບສົຖດຽວກັນແຫ່ງໃດສົງຂ໌ສົມມຸດແລ້ວ ສົງຂ໌ຄວນສົມມຸດສມານສັງວາສສີມາມີອຸໂບສົຖດຽວກັນນັ້ນໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວອນ ນີ້ເປັນຍັຕຕິ

ໝາຍເຫດ :

໑ ສມານສັງວາສສີມາ ດູ ຂໍ້ ໑໓໒ ຫນ້າ ໔໑໕ (ໝາຍເຫດ)

໔ ແດນບໍ່ຢູ່ປາສຈາກໄຕຣຈີວອນ ແປມາຈາກພາສາບາລີວ່າ "ຕິຈີວຣາວິປປວາສ" ຫມາຍເຖິງສະຖານທີ່ທີ່ສົງຂ໌ກຳຫນົດເປັນເຂຕຢູ່ປາສຈາກໄຕຣຈີວອນໂດຍບໍ່ຕ້ອງອາບັຕິ (ດູ ວິ. ມຫາ. (ແປ) ໔/໔໗໓-໔໗/໑໐-໑໑)

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສມານສັງວາສສີມາ ມີອຸໂບສົຖດຽວກັນແຫ່ງໃດ ທີ່ສົງຄ໌ສົມມຸດແລ້ວ ສົງຄ໌ຄວນສົມມຸດສມານສັງວາສສີມາມີອຸໂບສົຖດຽວກັນນັ້ນໃຫ້ເປັນແດນ ບໍ່ຢູ່ປາສຈາກໄຕຣຈີວອນ ທ່ານຮູບໃດເຫັນດ້ວຍກັບການສົມມຸດສມານສັງວາສສີມາມີອຸໂບສົຖດຽວກັນນັ້ນໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວອນ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງ ສມານສັງວາສສີມາມີອຸໂບສົຖດຽວກັນນັ້ນສົງຄ໌ໄດ້ສົມມຸດໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວອນແລ້ວ ສົງຄ໌ເຫັນດ້ວຍ ເພາະສະນັ້ນ ຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້ ສມັຍນັ້ນ ພິກສຸທັງຫລາຍຊາບວ່າ ພຣະຜູ້ມີພຣະພາກຊົງອນຸຍາຕການສົມມຸດແດນບໍ່ຢູ່ປາສຈາກໄຕຣຈີວອນແລ້ວ ຈຶ່ງເກັບຈີວອນທັງຫລາຍໄວ້ໃນບໍຣິເວນຫມູ່ບ້ານ ຈີວອນເຫລົ່ານັ້ນສູນຫາຍແດ່ ຖືກໄຟໄຫມ້ແດ່ ຖືກຫນູກັດແດ່ ພິກສຸທັງຫລາຍຈຶ່ງມີຜ້າທີ່ບໍ່ດີ ມີແຕ່ຈີວອນເກົ່າໆພິກສຸທັງຫລາຍ ກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ເຫຕຸໃດ ພວກທ່ານຈຶ່ງມີແຕ່ຜ້າບໍ່ດີ ມີແຕ່ຈີວອນເກົ່າໆ" ພິກສຸທັງຫລາຍຈຶ່ງຕອບວ່າ "ທ່ານທັງຫລາຍ ພວກເຮົາຊາບວ່າ 'ພຣະຜູ້ມີພຣະພາກຊົງອນຸຍາຕການສົມມຸດແດນບໍ່ຢູ່ປາສຈາກໄຕຣຈີວອນແລ້ວ' ຈຶ່ງເກັບຈີວອນທັງຫລາຍໄວ້ໃນບໍຣິເວນຫມູ່ບ້ານຢ່າງນີ້ ຈີວອນເຫລົ່ານັ້ນເສັຽຫາຍແດ່ ຖືກໄຟໄຫມ້ແດ່ ຖືກຫນູກັດແດ່ ເພາະເຫຕຸນັ້ນ ພວກເຮົາຈຶ່ງມີຜ້າບໍ່ດີ ມີແຕ່ຈີວອນເກົ່າໆ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກ ໃຫ້ຊົງຊາບ

ເຣື້ອງສົມມຸດແດນບໍ່ຢູ່ປາສຈາກໄຕຣຈີວອນ

(ຕິຈີວຣາວິປປວາສ)

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ສມານສັງວາສສີມາມີອຸໂບສົຖດຽວກັນແຫ່ງໃດທີ່ສົງຄ໌ສົມມຸດແລ້ວ ສົງຄ໌ຈົ່ງສົມມຸດສີມານັ້ນໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວອນ ເວັ້ນຫມູ່ບ້ານແລະອຸປຈາຣແຫ່ງຫມູ່ບ້ານ"

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໆ໕. ສີມາສມູຫນນາ

ວິທີສົມມຸດແລະກັມວາຈາສົມມຸດ

ຕິຈີວຣາວິປປວາສສີມາເວັ້ນບ້ານແລະອຸປຈາຣບ້ານ ພິກສຸທັງຫລາຍ ຄວນສົມມຸດແດນບໍ່ຢູ່ປາສຈາກໄຕຣຈີວອນ ເວັ້ນຫມູ່ບ້ານແລະອຸປຈາຣຫມູ່ບ້ານຢ່າງນີ້ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຄ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໑໔໔] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສະມານສັງວາສສີມາມີອຸໂບສົຖດຽວກັນແຫ່ງໃດທີ່ສົງຄ໌ສົມມຸດແລ້ວ ຖ້າສົງຄ໌ພ້ອມກັນແລ້ວ ຄວນສົມມຸດສີມານັ້ນໃຫ້ເປັນແດນບໍ່ຢູ່ ປາສຈາກໄຕຣຈີວອນ ເວັ້ນຫມູ່ບ້ານແລະອຸປຈາຣຫມູ່ບ້ານ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສະມານສັງວາສສີມາມີອຸໂບສົຖດຽວກັນແຫ່ງໃດທີ່ສົງຄ໌ສົມມຸດແລ້ວ ສົງຄ໌ສົມມຸດສີມານັ້ນໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວອນ ເວັ້ນຫມູ່ບ້ານແລະອຸປຈາຣຫມູ່ບ້ານ ທ່ານຮູບໃດເຫັນດ້ວຍກັບການສົມມຸດສີມານັ້ນໃຫ້ເປັນແດນບໍ່ຢູ່ປຣາສຈາກໄຕຣຈີວອນ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງ ສີມານັ້ນສົງຄ໌ໄດ້ສົມມຸດໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວອນ ເວັ້ນຫມູ່ບ້ານແລະອຸປຈາຣຫມູ່ບ້ານແລ້ວ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້

໗໕. ສີມາສະມູຫນນາ

ວ່າດ້ວຍການຖອນສີມາ

ເຣື້ອງສົມມຸດສະມານສັງວາສສີມາກ່ອນ

ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ພິກສຸເມື່ອຈະສົມມຸດສີມາ ຄວນສົມມຸດ ສະມານສັງວາສສີມາກ່ອນ ຄວນສົມມຸດແດນບໍ່ຢູ່ປາສຈາກໄຕຣຈີວອນໃນພາຍຫລັງ ພິກສຸທັງຫລາຍ ເມື່ອຈະຖອນສີມາ ຄວນຖອນແດນບໍ່ຢູ່ປາສຈາກໄຕຣຈີວອນກ່ອນ ຄວນຖອນສະມານສັງວາສສີມາໃນພາຍຫລັງ”

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສົຖຂັນທກະ] ໗໕. ສີມາສະມູຫນນາ

ວິທີຖອນແລະກັມວາຈາຖອນແດນບໍ່ຢູ່ປາສຈາກໄຕຣຈີວອນ

ພິກສຸທັງຫລາຍຄວນຖອນແດນບໍ່ຢູ່ປາສຈາກໄຕຣຈີວອນຢ່າງນີ້ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຄ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໑໔໕] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ແດນບໍ່ຢູ່ປາສຈາກໄຕຣຈີວອນແຫ່ງໃດທີ່ສົງຄ໌ສົມມຸດໄວ້ແລ້ວ ຖ້າສົງຄ໌ພ້ອມກັນແລ້ວ ສົງຄ໌ຄວນຖອນແດນບໍ່ຢູ່ປາສຈາກໄຕຣຈີວອນນັ້ນ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ແດນບໍ່ຢູ່ປາສຈາກໄຕຣຈີວອນແຫ່ງໃດທີ່ສົງຄ໌ສົມມຸດໄວ້ແລ້ວ ສົງຄ໌ຖອນແດນບໍ່ຢູ່ປາສຈາກໄຕຣຈີວອນແຫ່ງນັ້ນ ທ່ານຮູບໃດເຫັນດ້ວຍກັບການຖອນແດນບໍ່ຢູ່ປາສ

ຈາກໄຕຣຈີວອນນັ້ນ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງ ແດນບໍ່ຢູ່ປາສຈາກໄຕຣຈີວອນແຫ່ງນັ້ນສົງຂ໌ຖອນແລ້ວ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້

ເຣື້ອງຖອນສະມານສັງວາສສີມາພາຍຫລັງ

ວິທີຖອນແລະກັມວາຈາຖອນສະມານສັງວາສສີມາ

ພິກສຸທັງຫລາຍຄວນຖອນສະມານສັງວາສສີມາຢ່າງນີ້ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໑໔໕] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສະມານສັງວາສສີມາມີອຸໂປສົຖດຽວກັນແຫ່ງໃດທີ່ສົງຂ໌ສົມມຸດແລ້ວ ຖ້າສົງຂ໌ພ້ອມກັນແລ້ວ ຄວນຖອນສະມານສັງວາສສີມາມີອຸໂປສົຖດຽວກັນນັ້ນ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສະມານສັງວາສສີມາມີອຸໂປສົຖດຽວກັນແຫ່ງໃດທີ່ສົງຂ໌ສົມມຸດແລ້ວ ສົງຂ໌ຖອນສະມານສັງວາສສີມາມີອຸໂປສົຖດຽວກັນນັ້ນ ທ່ານຮູບໃດເຫັນດ້ວຍກັບການຖອນສະມານສັງວາສສີມາມີອຸໂປສົຖດຽວກັນນັ້ນ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໕. ຄາມສີມາທິ

ສະມານສັງວາສສີມາມີອຸໂປສົຖດຽວກັນນັ້ນ ສົງຂ໌ຖອນແລ້ວ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້

໗໕. ຄາມສີມາທິ

ວ່າດ້ວຍຄາມສີມາເປັນຕົ້ນ

ອພັທທສີມາ

[໑໔໗] ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເມື່ອສີມາທີ່ສົງຂ໌ຍັງບໍ່ໄດ້ສົມມຸດ ຍັງບໍ່ໄດ້ກຳຫນົດສີມາ ພິກສຸສົງຂ໌ຢູ່ອາສັຍຫມູ່ບ້ານຫລືນິຄົມໃດ ເຂຕຂອງຫມູ່ບ້ານນັ້ນເປັນຄາມສີມາແດ່ ເຂຕຂອງນິຄົມນັ້ນເປັນນິຄົມສີມາແດ່ ສີມານີ້ໃນຫມູ່ບ້ານຫລືນິຄົມທັງສອງນັ້ນເປັນສະມານສັງວາສ ມີອຸໂປສົ

ຖດຽວກັນ ພິກສຸທັງຫລາຍ ຖ້າໃນປ່າບໍ່ມີຫມູ່ບ້ານຊື່ວ ໆ ອັພພັນດຣໂດຍຮອບ ສີມານີ້ໃນປ່ານັ້ນເປັນສມານສັງວາສ ມີອຸໂບສົຖດຽວກັນ

ເຣື້ອງອຸທກຸກເຂປສີມາໃນແມ່ນ້ຳເປັນຕົ້ນ

ພິກສຸທັງຫລາຍ ແມ່ນ້ຳທັງຫມົດບໍ່ຈັດເປັນສີມາ ສມຸທຣທັງຫມົດບໍ່ຈັດເປັນສີມາຊາຕສຣະ໑ທັງຫມົດບໍ່ຈັດເປັນສີມາ ພິກສຸທັງຫລາຍ ໃນແມ່ນ້ຳ ໃນສມຸທຣ ຫລືໃນຊາຕສຣະ ຊື່ວຣະຍະຊາຍມີສັນຖານປານກາງ ວັກນ້ຳສາດໄປໂດຍຮອບເປັນອຸທກຸກເຂປສີມາ ສີມານີ້ໃນນ່ານນ້ຳເຫລົ່ານັ້ນ ເປັນສມານສັງວາສມີອຸໂບສົຖດຽວກັນ

ເຣື້ອງສີມາຄາບກ່ຽວ

[໑໔໗] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ສົມມຸດສີມາຄາບກ່ຽວສີມາ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ໝາຍເຫດ :

໑ ຊາຕສຣະ ຫມາຍເຖິງສຣະທີ່ເກີດເອງ ບໍ່ມີໃຜຂຸດໄວ້ ນ້ຳໄຫລມາຈາກຮອບຂ້າງຂັງຢູ່ຈົນເຕັມ (ວິ. ອ. ໓/໑໔໗/໑໒໕)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໗. ອຸໂປສຖາເພທາທິ

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ສີມາທີ່ພິກສຸເຫລົ່າໃດສົມມຸດໄວ້ກ່ອນແລ້ວກັມນັ້ນຂອງພິກສຸເຫລົ່ານັ້ນເປັນກັມທີ່ຖືກຕ້ອງ ບໍ່ກຳເຣີບ ຄວຣແກ່ຖານະ ສີມາທີ່ພິກສຸ ເຫລົ່າໃດສົມມຸດໃນພາຍຫລັງ ກັມນັ້ນຂອງພິກສຸເຫລົ່ານັ້ນບໍ່ຖືກຕ້ອງ ກຳເຣີບໄດ້ ບໍ່ຄວຣແກ່ຖານະ ພິກສຸທັງຫລາຍ ບໍ່ຄວນສົມມຸດສີມາຄາບກ່ຽວສີມາ ພິກສຸສົງຂ໌ຫມູ່ໃດສົມມຸດຄາບກ່ຽວກັນ ຕ້ອງອາບັຕິທຸກກະຕະ"

ສົມມຸດສີມາທັບສີມາ

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ສົມມຸດສີມາທັບສີມາ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ສີມາທີ່ພິກສຸເຫລົ່າໃດສົມມຸດໄວ້ກ່ອນແລ້ວກັມນັ້ນຂອງພິກສຸເຫລົ່ານັ້ນເປັນກັມທີ່ຖືກຕ້ອງ ບໍ່ກຳເຣີບ ຄວຣແກ່ຖານະ ສີມາທີ່ພິກສຸ

ເຫລົ່າໃດສົມມຸດໃນພາຍຫລັງ ກັມມັ້ນຂອງພິກສຸເຫລົ່ານັ້ນບໍ່ຖືກຕ້ອງ ກຳເຣີບໄດ້ ບໍ່ຄວຣແກ່ຖານະ ພິກສຸທັງຫລາຍ ບໍ່ຄວນສົມມຸດສີມາທັບສີມາ ພິກສຸສົງຂ໌ຫມູ່ໃດສົມມຸດທັບ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸສົງຂ໌ຈະສົມມຸດສີມາ ເວັ້ນຊ່ອງວ່າງໃນຣະຫວ່າງສີມາແລ້ວຈຶ່ງສົມມຸດສີມາ”

໗໗. ອຸໂປສຖເພທາທິ

ວ່າດ້ວຍປະເພດແຫ່ງວັນອຸໂບສົຖເປັນຕົ້ນ

ເຣື້ອງປະເພດແຫ່ງວັນອຸໂບສົຖ

[໑໔໗] ຄັ້ງນັ້ນ ພິກສຸທັງຫລາຍໄດ້ມີການສົນທນາກັນດັ່ງນີ້ວ່າ “ວັນອຸໂບສົຖມີເທົ່າໃດ” ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ວັນອຸໂບສົຖນີ້ມີ ໒ ວັນ ຄື ວັນ ໑໔ ຄ່ຳ ແລະວັນ ໑໕ ຄ່ຳ ພິກສຸທັງຫລາຍ ວັນອຸໂບສົຖມີ ໒ ວັນເຫລົ່ານີ້ແລ”

ພຣະວິນັຍປິດົກ ມຫາວັຄ [໒. ອຸໂປສຖຂັນທກະ] ໗໗. ອຸໂປສຖາເພທາທິ

ເຣື້ອງອາການທີ່ທຳອຸໂບສົຖ

ຄັ້ງນັ້ນ ພິກສຸທັງຫລາຍໄດ້ມີການສົນທນາກັນດັ່ງນີ້ວ່າ “ການທຳອຸໂບສົຖມີເທົ່າໃດຫນໍ” ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ການທຳອຸໂບສົຖນີ້ມີ ໔ ຢ່າງ໑ ຄື

໑. ການທຳອຸໂບສົຖແບ່ງພວກໂດຍບໍ່ຊອບທັມ

໒. ການທຳອຸໂບສົຖພ້ອມພຽງກັນໂດຍບໍ່ຊອບທັມ

໓. ການທຳອຸໂບສົຖແບ່ງພວກໂດຍຊອບທັມ

໔. ການທຳອຸໂບສົຖພ້ອມພຽງກັນໂດຍຊອບທັມ

ພິກສຸທັງຫລາຍ ໃນການທຳອຸໂບສົຖ ໔ ຢ່າງນັ້ນ ການທຳອຸໂບສົຖໃດແບ່ງພວກໂດຍ ບໍ່ຊອບທັມ ການທຳອຸໂບສົຖເຊັ່ນນັ້ນ ບໍ່ຄວນທຳແລະເຮົາບໍ່ອນຸຍາຕການທຳອຸໂບສົຖເຊັ່ນນັ້ນ ການທຳອຸໂບສົຖໃດພ້ອມພຽງກັນໂດຍບໍ່ຊອບທັມ ການທຳອຸໂບສົຖເຊັ່ນນັ້ນ ບໍ່ຄວນທຳແລະເຮົາບໍ່ອນຸຍາຕການທຳອຸໂບສົຖເຊັ່ນນັ້ນ ການທຳອຸໂບສົຖໃດແບ່ງພວກໂດຍຊອບທັມ ການທຳອຸໂບສົຖເຊັ່ນນັ້ນ ບໍ່ຄວນທຳແລະເຮົາບໍ່

ອະນຸຍາຕການທຳອຸໂປສົຖເຊັ່ນນັ້ນ ການທຳອຸໂປສົຖໃດພ້ອມພຽງກັນ ໂດຍຊອບທັມ ການທຳອຸໂປສົຖ ເຊັ່ນນັ້ນ ຄວນທຳແລະເຮົາອະນຸຍາຕການທຳອຸໂປສົຖເຊັ່ນນັ້ນ

ໝາຍເຫດ :

໑ ເຊັ່ນ ຖ້າໃນວັດນຶ່ງ ມີພິກສຸ ໔ ຮູບ ພິກສຸ ໓ ຮູບນຳສັນທະແລະປາຣິສຸທທິຂອງພິກສຸຮູບນຶ່ງມາທຳປາຣິສຸທທິອຸໂປສົຖຫລືມີພິກສຸຢູ່ ໓ ຮູບ ພິກສຸ ໒ ຮູບນຳສັນທະແລະປາຣິສຸທທິຂອງພິກສຸຮູບ ນຶ່ງມາຍົກປາຕິໂມກຂ໌ຂຶ້ນສະແດງ ນີ້ຊື່ວ່າ ການທຳອຸໂປສົຖແບ່ງພວກໂດຍບໍ່ຊອບທັມ

ພິກສຸ ໔ ຮູບ ປະຊຸມກັນທຳປາຣິສຸທທິອຸໂປສົຖ ພິກສຸ ໓ ຫລື ໒ ຮູບ ຍົກປາຕິໂມກຂ໌ຂຶ້ນສະແດງ ນີ້ຊື່ວ່າການທຳອຸໂປສົຖພ້ອມພຽງກັນໂດຍບໍ່ຊອບທັມ

ມີພິກສຸ ໔ ຮູບ ພິກສຸ ໓ ຮູບນຳປາຣິສຸທທິຂອງພິກສຸຮູບນຶ່ງມາຍົກປາຕິໂມກຂ໌ຂຶ້ນສະແດງ ຫລືມີພິກສຸ ໓ ຮູບ ພິກສຸ ໒ ຮູບນຳປາຣິສຸທທິຂອງພິກສຸຮູບນຶ່ງມາ ທຳປາຣິສຸທທິອຸໂປສົຖ ນີ້ຊື່ວ່າ ການທຳອຸໂປສົຖແບ່ງພວກໂດຍຊອບທັມ

ພິກສຸ ໔ ຮູບ ຢູ່ໃນວັດນຶ່ງ ທັງຫມົດປະຊຸມກັນຍົກປາຕິໂມກຂ໌ຂຶ້ນສະແດງ ພິກສຸ ໓ ຮູບທຳປາຣິສຸທທິອຸໂປສົຖ ພິກສຸ ໒ ຮູບທຳປາຣິສຸທທິອຸໂປສົຖຕໍ່ກັນແລະກັນ ນີ້ຊື່ວ່າ ການທຳອຸໂປສົຖພ້ອມພຽງກັນໂດຍຊອບທັມ (ວິ. ອ. ໓/໑໔໗/໑໓໐-໑໓໑)

ພຣະວິນັຍປິດົກ ມຫາວັຄ [໒. ອຸໂປສຖຂັນທກະ] ໗໗. ສັງຂິຕຕປາຕິໂມກຂຸທເທສາທິ

ພິກສຸທັງຫລາຍ ເພາະເຫຕຸນັ້ນແລ ພວກທ່ານຄວນສຳນຶກໄວ້ວ່າ ຈະເຮັດອຸໂປສົຖກັມຊນິດທີ່ພ້ອມພຽງກັນໂດຍຊອບທັມ ດັ່ງນີ້ ພວກທ່ານຄວນສຳນຶກໄວ້ຢ່າງນີ້ແລ

໗໗. ສັງຂິຕຕປາຕິໂມກຂຸທເທສາທິ

ວ່າດ້ວຍການຍົກປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້ເປັນຕົ້ນ

ເຣື້ອງປະເພດແຫ່ງປາຕິໂມກຂຸທເທສ

[໑໕໐] ຄັ້ງນັ້ນ ພິກສຸທັງຫລາຍໄດ້ມີຄວາມສົງສັຍວ່າ “ການຍົກປາຕິໂມກຂ໌ຂຶ້ນສະແດງ ມີເທົ່າໃດຫນໍ” ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ “ພິກສຸທັງຫລາຍ ການຍົກປາຕິໂມກຂ໌ຂຶ້ນສະແດງນີ້ມີ ໕ ແບບ ຄື

໑. ພິກສຸຍົກນິທານຂຶ້ນສະແດງຈົບແລ້ວ ຄວນສູດອຸທເທສທີ່ເຫລືອດ້ວຍສຸຕບົທ໑ນີ້ເປັນການຍົກປາຕິໂມກຂ໌ແບບທີ ໑

໔. ຍົກນິທານຂຶ້ນສະແດງ ຍົກປາຣາຊິກ ໔ ຂຶ້ນສະແດງຈົບແລ້ວ ຄວນສູດອຸທເທສ ທີ່ເຫລືອດ້ວຍສຸຕບົທ ນີ້ເປັນການຍົກປາຕິໂມກຂ໌ແບບທີ ໔

໓. ຍົກນິທານຂຶ້ນສະແດງ ຍົກປາຣາຊິກ ໔ ຂຶ້ນສະແດງ ຍົກສັງຂາທິເສສ ໑໓ ຂຶ້ນ ສະແດງຈົບແລ້ວ ຄວນສູດອຸທເທສທີ່ເຫລືອດ້ວຍສຸຕບົທ ນີ້ເປັນການຍົກ ປາຕິໂມກຂ໌ແບບທີ ໓

ໝາຍເຫດ :

໑ ການປະກາດ ສຸຕບົທ ຄື ການຍົກນິທານຂຶ້ນສະແດງສອບຖາມຍ້ຳເຖິງຄວາມບໍຣິສຸດທິ໌ຂອງແຕ່ລະທ່ານ ໃນຫົວມເຫລົ່ານັ້ນໆແລ້ວປະກາດອຸທເທສທີ່ເຫລືອໂດຍສຸຕບົທຢ່າງນັ້ນວ່າ "ຫົວມ ຄື ປາຣາຊິກ ໔ ຫົວມຄືສັງຂາທິເສສ ໑໓ ຫົວມຄືນິຍຕ ໔ ຫົວມຄືນິສສັຄຄິຍປາຈິຕຕີຍ໌ ໓໐ ຫົວມຄືປາຈິຕຕີຍ໌ ໙໔ ຫົວມຄືປາຕິເທສນີຍະ ໔ ຫົວມຄືເສຂິຍະ ໗໕ ຫົວມຄືອທິກຣນສົມຖະ ໗ ທ່ານທັງຫລາຍໄດ້ຟັງແລ້ວ ສິກຂາບົທຂອງພຣະຜູ້ມີພຣະພາກນັ້ນມີເທົ່ານີ້ ມາໃນສູຕຣ ນັບເນື່ອງໃນສູຕຣ ມາສູ່ອາຣະທີ່ຈະຍົກຂຶ້ນສະແດງເປັນຂໍ້ໆຕາມລຳດັບທຸກເຄິ່ງເດືອນ ພວກເຮົາທັງໝົດ ຄວນພ້ອມພຽງກັນ ຮ່ວມໃຈກັນ ບໍ່ວິວາທກັນ ສຶກສາໃນພຣະສູຕຣນັ້ນເທອຍ" (ວິ. ອ. ໓/໑໕໐/໑໓໑)

ສຸຕບົທໃນອີກ ໔ ວິທີທີ່ເຫລືອ ມີນັຍເໝືອນກັບວິທີທີ ໑ ພຽງແຕ່ຍົກຂຶ້ນສະແດງຈບຕອນໃດແລ້ວກໍບໍ່ຕ້ອງປະກາດຕອນນັ້ນໄວ້ໃນສຸຕບົທອີກ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໗. ສັງຂິຕຕປາຕິໂມກຂຸທເທສາທິ

໔. ຍົກນິທານຂຶ້ນສະແດງ ຍົກປາຣາຊິກ ໔ ຂຶ້ນສະແດງ ຍົກສັງຂາທິເສສ ໑໓ ຂຶ້ນສະແດງ ຍົກອນິຍຕ ໒ ຂຶ້ນສະແດງຈົບແລ້ວ ຄວນສູດອຸທເທສທີ່ເຫລືອດ້ວຍສຸຕບົທ ນີ້ເປັນການຍົກປາຕິໂມກຂ໌ແບບທີ ໔

໕. ຍົກຂຶ້ນສະແດງໂດຍພິສດານທັງໝົດ ນີ້ເປັນການຍົກປາຕິໂມກຂ໌ຂຶ້ນສະແດງແບບທີ ໕

ພິກສຸທັງຫລາຍ ການຍົກປາຕິໂມກຂ໌ຂຶ້ນສະແດງມີ ໕ ແບບເຫລົ່ານີ້ແລ"໑

ຊົງຫ້າມຍົກປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້

ສະໄໝນັ້ນ ພິກສຸທັງຫລາຍຊາບວ່າ "ພຣະຜູ້ມີພຣະພາກຊົງອະນຸຍາດການຍົກປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້" ຈຶ່ງຍົກປາຕິໂມກຂ໌ຂຶ້ນສະແດງໂດຍຍໍ້ທຸກຄັ້ງ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້ ພິກສຸສົງຂ໌ຫມູ່ໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ"

ເຣື້ອງຊົງອະນຸຍາດໃຫ້ຍົກປົກຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້ ເມື່ອຊາວປ່າມາອິນອາຍ ສະໄໝນັ້ນ ນະອາວາສແຫ່ງນຶ່ງໃນແຄວັ້ນໂກສົລ ໃນວັນອຸໂບສົຖນັ້ນ ມີຊາວປ່າມາອິນອາຍ ພິກສຸທັງຫລາຍບໍ່ອາຈຍົກປາຕິໂມກຂ໌ຂຶ້ນສະແດງໂດຍພິສດານ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ ຊົງຊາບ

ໝາຍເຫດ :

໑ ການຍົກປາຕິໂມກຂ໌ຂຶ້ນສະແດງທັງ ໕ ແບບນີ້ ສຣຸປຮຽກຊື່ເປັນພາສາສະເພາະວ່າ

໑. ແບບທີ ໑ ຮຽກວ່າ ນິທານຸທເທສ

໒. ແບບທີ ໒ ຮຽກວ່າ ປາຣາຊິກຸທເທສ

໓. ແບບທີ ໓ ຮຽກວ່າ ສັງຂາທິເສສຸທເທສ

໔. ແບບທີ ໔ ຮຽກວ່າ ອນິຍຕຸທເທສ

໕. ແບບທີ ໕ ຮຽກວ່າ ວິຕຖາຣຸທເທສ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໆໆ. ສັງຂິຕຕປາຕິໂມກຂຸທເທສາທີ

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອະນຸຍາດໃຫ້ຍົກປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້ເມື່ອມີອັນຕຣາຍ"

ເຣື້ອງອັນຕຣາຍ ໑໐ ປະການ

ສະໄໝນັ້ນ ພວກພິກສຸສັພພັຄຄີຍ໌ຍົກປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້ເມື່ອບໍ່ມີອັນຕຣາຍ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເມື່ອບໍ່ມີອັນຕຣາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້ ພິກສຸສົງຂ໌ຫມູ່ໃດຍົກຂຶ້ນສະ

ແດງ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເມື່ອມີອັນຕຣາຍ ເຮົາອນຸຍາຕໃຫ້ຍົກປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້"

ໃນເຣື້ອງຍົກປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້ນັ້ນ ອັນຕຣາຍທັງຫລາຍ ມີດັ່ງຕໍ່ໄປນີ້

໑. ພຣະຣາຊາສະເດັຈມາ ໒. ໂຈຣມາປຸ້ນ

໓. ໄຟໄໝ້ ໔. ນ້ຳຫລາກມາ

໕. ຄົນມາມາກ ໖. ຜີເຂົ້າສິງພິກສຸ

໗. ສັດຕ໌ຮ້າຍເຂົ້າມາ ໘. ງູເລືອເຂົ້າມາ

໙. ພິກສຸຈະເຖິງແກ່ຊີວິຕ໑ ໑໐. ມີອັນຕຣາຍແກ່ພຣົມຈັນຍ໌໔

ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຍົກປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້ໃນເມື່ອມີອັນຕຣາຍຢ່າງນີ້ ເມື່ອບໍ່ມີອັນຕຣາຍ ໃຫ້ຍົກຂຶ້ນສະແດງໂດຍພິສດາຣ"

ເຣື້ອງຊົງອນຸຍາຕພິກສຸເຖຣະສະແດງທັມໂດຍບໍ່ຕ້ອງໄດ້ຮັບອາຣາທນາ

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ບໍ່ໄດ້ຮັບອາຣາທນາກໍສະແດງທັມໃນທ່າມກາງສົງຂ໌ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ໄດ້ຮັບອາຣາທນາບໍ່ຄວນສະແດງທັມໃນທ່າມກາງສົງຂ໌ ຣູບໃດສະແດງ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ເຖຣະສະແດງທັມເອງຫລືໃຫ້ອາຣາທນາພິກສຸອື່ນສະແດງ"

ໝາຍເຫດ :

໑ ພິກສຸເປັນໄຂ້ ຫລື ຈະມໍຣະນະພາພ ຫລືຄົນມີເວຣກັນ ປະສົງຄ໌ຈະຂ້າ ຈຶ່ງຈັບພິກສຸນັ້ນ (ວິ. ອ. ໓/໑໕໐/໑໓໑)

໔ ມະນຸສຍ໌ທັງຫລາຍ ປະສົງຄ໌ຈະໃຫ້ພິກສຸຣູບດຽວ ຫລືຫລາຍຣູບ ເຄື່ອນຈາກພຣົມຈັນຍ໌ (ຈະໃຫ້ສຶກ) ຈຶ່ງຈັບພິກສຸເຫລົ່ານັ້ນໄວ້ (ວິ. ອ. ໓/໑໕໐/໑໓໑)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໙. ວິນຍປຸຈສນກຖາ

໗໙. ວິນຍປຸຈສນກຖາ

ວ່າດ້ວຍການຖາມພຣະວິນັຍ

ເຣື້ອງຖາມພຣະວິນັຍທ່າມກາງສົງຂ໌ຕ້ອງໄດ້ຮັບແຕ່ງຕັ້ງກ່ອນ

[໑໕໑] ສະໄໝນັ້ນ ພວກພິກສຸສັພພັຄຄີຍ໌ຍັງບໍ່ໄດ້ຮັບແຕ່ງຕັ້ງກໍຖາມພຣະວິນັຍໃນທ່າມກາງສົງຂ໌ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸຍັງບໍ່ໄດ້ຮັບແຕ່ງຕັ້ງບໍ່ຄວນຖາມວິນັຍໃນທ່າມກາງສົງຂ໌ ຮູບໃດຖາມ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ໄດ້ຮັບແຕ່ງຕັ້ງຖາມວິນັຍໃນທ່າມກາງສົງຂ໌ໄດ້"

ວິທີແຕ່ງຕັ້ງເປັນຜູ້ຖາມ

ພິກສຸທັງຫລາຍ ຄວນແຕ່ງຕັ້ງຢ່າງນີ້

ຕົນເອງແຕ່ງຕັ້ງຕົນເອງກໍໄດ້ ພິກສຸຮູບນຶ່ງແຕ່ງຕັ້ງພິກສຸອີກຮູບນຶ່ງກໍໄດ້

ຢ່າງໃດລະ ຊື່ວ່າຕົນເອງແຕ່ງຕັ້ງຕົນເອງ

ຄື ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິກັມວາຈາວ່າ

ກັມວາຈາແຕ່ງຕັ້ງຕົນເອງ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຂ໌ພ້ອມກັນແລ້ວ ຂ້າພະເຈົ້າຂໍຖາມພຣະວິນັຍກັບທ່ານຜູ້ມີຊື່ນີ້ ຢ່າງນີ້ຊື່ວ່າຕົນເອງແຕ່ງຕັ້ງຕົນເອງຢ່າງໃດລະ ຊື່ວ່າພິກສຸຮູບນຶ່ງແຕ່ງຕັ້ງພິກສຸອີກຮູບນຶ່ງ

ຄື ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິກັມວາຈາວ່າ

ກັມວາຈາແຕ່ງຕັ້ງຜູ້ອື່ນ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຂ໌ພ້ອມກັນແລ້ວ ຂໍຜູ້ມີຊື່ນີ້ຖາມພຣະວິນັຍກັບທ່ານຜູ້ມີຊື່ນີ້ ຢ່າງນີ້ຊື່ວ່າພິກສຸຮູບນຶ່ງແຕ່ງຕັ້ງພິກສຸອີກຮູບນຶ່ງ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໐. ວິນຍວິສັຊຊນກຖາ

ເຣື້ອງຄຸກຄາມຈະຂ້າ

ສະໄໝນັ້ນ ພວກພິກສຸຜູ້ມີສີລດີງາມ ໄດ້ຮັບແຕ່ງຕັ້ງແລ້ວ ຈຶ່ງຖາມພຣະວິນັຍໃນທ່າມກາງສົງຂ໌ ພວກພິກສຸສັພພັຄຄີຍ໌ໄດ້ອາຂາຕ ແຄ້ນເຄືອງ ຄຸກຄາມຈະຂ້າ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸ

ແມ່ນໄດ້ຮັບແຕ່ງຕັ້ງແລ້ວ ກວດເບິ່ງບໍຣິສັດ ພິຈາຣນາບຸຄຄົລແລ້ວຈຶ່ງຖາມພຣະວິນັຍໃນທ່າມກາງສົງຂ໌"

໗໐. ວິນຍວິສັຊຊນກຖາ

ວ່າດ້ວຍການວິສັຊຊນາພຣະວິນັຍ

ເຣື້ອງພວກພິກສຸສັພພັຄຄີຍ໌ວິສັຊຊນາພຣະວິນັຍ

[໑໕໔] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ຍັງບໍ່ໄດ້ຮັບແຕ່ງຕັ້ງ ກໍວິສັຊຊນາພຣະວິນັຍໃນທ່າມກາງສົງຂ໌ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸຜູ້ບໍ່ໄດ້ຮັບແຕ່ງຕັ້ງ ບໍ່ຄວນວິສັຊຊນາພຣະວິນັຍໃນທ່າມກາງສົງຂ໌ ຮູບໃດວິສັຊຊນາ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ໄດ້ຮັບແຕ່ງຕັ້ງ ວິສັຊຊນາພຣະວິນັຍໃນທ່າມກາງສົງຂ໌ໄດ້"

ວິທີແຕ່ງຕັ້ງເປັນຜູ້ວິສັຊຊນາ

ພິກສຸທັງຫລາຍ ຄວນແຕ່ງຕັ້ງຢ່າງນີ້

ຕົນເອງແຕ່ງຕັ້ງຕົນເອງກໍໄດ້ ພິກສຸຮູບນຶ່ງແຕ່ງຕັ້ງພິກສຸອີກຮູບນຶ່ງກໍໄດ້

ຢ່າງໃດລະ ຊື່ວ່າຕົນເອງແຕ່ງຕັ້ງຕົນເອງຄື ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິກັມວາຈາວ່າ

ກັມວາຈາແຕ່ງຕັ້ງຕນ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຂ໌ພ້ອມກັນແລ້ວ ຂ້າພະເຈົ້າອັນຜູ້ມີຊື່ນີ້ ຖາມພຣະວິນັຍແລ້ວຂອວິສັຊຊນາ ຢ່າງນີ້ຊື່ວ່າຕົນເອງແຕ່ງຕັ້ງຕົນເອງ

ຢ່າງໃດລະ ຊື່ວ່າພິກສຸຮູບນຶ່ງແຕ່ງຕັ້ງພິກສຸອີກຮູບນຶ່ງຄື ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິກັມວາຈາວ່າ

ກັມວາຈາແຕ່ງຕັ້ງຜູ້ອື່ນ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຂ໌ພ້ອມກັນແລ້ວ ຜູ້ມີຊື່ນີ້ອັນຜູ້ມີຊື່ນີ້ ຖາມພຣະວິນັຍຄວນວິສັຊຊນາ ຢ່າງນີ້ຊື່ວ່າພິກສຸຮູບນຶ່ງແຕ່ງຕັ້ງພິກສຸອີກຮູບນຶ່ງ

ເລື້ອງຄຸກຄາມຈະລ້າເລື້ອງທີ ໔

ສູມັຍນັ້ນ ພວກພິກສຸຜູ້ມີສີລດີງາມໄດ້ຮັບແຕ່ງຕັ້ງແລ້ວ ວິສັຊນາພຣະວິນັຍໃນທ່າມກາງສົງຂ໌ ພວກພິກສຸສັພພັຄຄີຍ໌ໄດ້ອາຂາຕ ແຄ້ນເຄືອງ ຄຸກຄາມຈະລ້າ ພິກສຸທັງຫລາຍຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸແມ່ນໄດ້ຮັບແຕ່ງຕັ້ງແລ້ວກອດເບິ່ງບໍຣິສັດ ພິຈາຣນາບຸຄຄົລແລ້ວຈຶ່ງວິສັຊນາພຣະວິນັຍໃນທ່າມກາງສົງຂ໌"

ໆ໑. ໂຈທນາກຖາ

ວ່າດ້ວຍການຟ້ອງຮ້ອງ

ເລື້ອງໂຈທດ້ວຍອາບັຕິ

[໑໕໓] ສູມັຍນັ້ນ ພວກພິກສຸສັພພັຄຄີຍ໌ໂຈທພິກສຸຜູ້ຍັງບໍ່ໃຫ້ໂອກາສດ້ວຍອາບັຕິ ພິກສຸທັງຫລາຍຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍບໍ່ຄວນໂຈທພິກສຸຜູ້ຍັງບໍ່ໄດ້ໃຫ້ໂອກາສດ້ວຍອາບັຕິ ຮູບໃດໂຈທ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ໂຈທກໍຂໍໂອກາສດ້ວຍຄຳວ່າ ຂໍທ່ານຈົ່ງໃຫ້ໂອກາສ ຂະນ້ອຍໃຄ່ຈະເວົ້າກັບທ່ານ ດັ່ງນີ້ແລ້ວຈຶ່ງໂຈທດ້ວຍອາບັຕິ"

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໆ໔. ອທັມມກັມມປຕິກໂກສນາທີ

ເລື້ອງຂໍໂອກາສກ່ອນໂຈທ

ສູມັຍນັ້ນ ພິກສຸທັງຫລາຍຜູ້ມີສີລດີງາມ ໄດ້ຂໍໃຫ້ພວກພິກສຸສັພພັຄຄີຍ໌ໃຫ້ໂອກາສແລ້ວໂຈທດ້ວຍອາບັຕິ ພວກພິກສຸສັພພັຄຄີຍ໌ໄດ້ອາຂາຕ ແຄ້ນເຄືອງ ຄຸກຄາມຈະລ້າ ພິກສຸທັງຫລາຍຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ໂຈທກໍແມ່ນເມື່ອຂໍໂອກາສແລ້ວ ພິຈາຣນາດູບຸຄຄົລກ່ອນ ຈຶ່ງໂຈທດ້ວຍອາບັຕິ"

ກ່ອນຂໍໂອກາສຕ້ອງພິຈາຣນາດູບຸຄຄົລ

ສູມັຍນັ້ນ ພວກພິກສຸສັພພັຄຄີຍ໌ຄິດວ່າ "ພິກສຸທັງຫລາຍຜູ້ມີສີລດີງາມ ຂໍໃຫ້ພວກເຮົາໃຫ້ໂອກາສກ່ອນ" ແລ້ວຮີບຂໍໂອກາສໃນເລື້ອງທີ່ບໍ່ເປັນເລື້ອງ ບໍ່ມີເຫຕຸອັນຄວຣ ຕໍ່ພິກສຸທັງຫລາຍຜູ້ບໍຣິສຸດທ໌

ບໍ່ມີອາບັຕິ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນຂໍໂອກາສໃນເຣື້ອງທີ່ບໍ່ເປັນເຣື້ອງ ບໍ່ມີເຫຕຸອັນຄວຣ ຕໍ່ພິກສຸທັງຫລາຍຜູ້ບໍຣິສຸດຫຼໍບໍ່ມີອາບັຕິ ຮູບໃດຂໍ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິຈາຣນາດູບຸຄຄົລກ່ອນຈຶ່ງຂໍໂອກາສ"

໗໔. ອຫັມມກັມມປຕິກໂກສນາທິ

ວ່າດ້ວຍການຄັດຄ້ານທຳກັມທີ່ບໍ່ຊອບດ້ວຍທັມເປັນຕົ້ນ

ເຣື້ອງຊົງອນຸຍາຕຄັດຄ້ານກັມທີ່ບໍ່ຊອບດ້ວຍທັມ

[໑໕໔] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ທຳສັງຂກັມທີ່ບໍ່ຊອບດ້ວຍທັມໃນທ່າມກາງສົງຂ໌ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນທຳກັມທີ່ບໍ່ຊອບດ້ວຍທັມໃນທ່າມກາງສົງຂ໌ ຮູບໃດທຳ ຕ້ອງອາບັຕິທຸກກະຕະ"

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໔. ທັມມກັມມປຕິກໂກສນາທິ

ພວກພິກສຸສັພພັຄຄີຍ໌ຍັງທຳກັມທີ່ບໍ່ຊອບດ້ວຍທັມຢູ່ເຊັ່ນເດີມ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຄັດຄ້ານໃນເມື່ອພິກສຸທຳກັມທີ່ບໍ່ຊອບດ້ວຍທັມ"

ສມັຍຕໍ່ມາ ພິກສຸທັງຫລາຍຜູ້ມີສີລດີງາມ ພາກັນຄັດຄ້ານໃນເມື່ອພວກພິກສຸສັພພັຄຄີຍ໌ທຳກັມທີ່ບໍ່ຊອບດ້ວຍທັມ ພວກພິກສຸສັພພັຄຄີຍ໌ໄດ້ອາຂາຕ ແຄ້ນເຄືອງ ຄຸກຄາມຈະຂ້າພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ເຣື້ອງພິກສຸ ໔-໕ ຮູບສະແດງຄວາມເຫັນ

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສະແດງຄວາມເຫັນໄດ້" ພິກສຸທັງຫລາຍສະແດງຄວາມເຫັນໃນສຳນັກຂອງພວກພິກສຸສັພພັຄຄີຍ໌ເຫລົ່ານັ້ນແຫລະ ພວກພິກສຸສັພພັຄຄີຍ໌ໄດ້ອາຂາຕ ແຄ້ນເຄືອງ ຄຸກຄາມຈະຂ້າ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸ ໔-໕ ຮູບຄັດຄ້ານ ໃຫ້ພິກສຸ ໒-໓ ຮູບສະແດງຄວາມເຫັນ ໃຫ້ພິກສຸຮູບດຽວອທິສຖານໃຈເສັຽວ່າເຮົາບໍ່ເຫັນດ້ວຍກັບກັມນັ້ນ"

ເຣື່ອງຈົງໃຈຍົກປາຕິໂມກຂ໌ຂຶ້ນສະແດງບໍ່ໃຫ້ໄດ້ຍິນ

ສະໄມນັ້ນ ພວກພິກສຸສັພພັຄຄີຍ໌ເມື່ອຍົກປາຕິໂມກຂ໌ຂຶ້ນສະແດງຈົງໃຈບໍ່ສວດໃຫ້ໄດ້ຍິນໃນທ່າມກາງສົງຂ໌ ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸຜູ້ເມື່ອຈະຍົກປາຕິໂມກຂ໌ຂຶ້ນສະແດງ ບໍ່ຄວນຈົງໃຈສວດບໍ່ໃຫ້ໄດ້ຍິນ ຮູບໃດສວດບໍ່ໃຫ້ໄດ້ຍິນ ຕ້ອງອາບັຕິທຸກກະຕະ" ສະໄມຕໍ່ມາ ທ່ານພຣະອຸທາຍີເປັນຜູ້ຍົກປາຕິໂມກຂ໌ຂຶ້ນສະແດງໃນທ່າມກາງສົງຂ໌ ມີສຽງເຄືອດຸຈສຽງກາ ຈຶ່ງມີຄວາມຄິດດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ພິກສຸຜູ້ຍົກ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໔. ອທັມມກັມມປຕິກໂກສນາທິ

ປາຕິໂມກຂ໌ຂຶ້ນສະແດງຕ້ອງສວດໃຫ້ໄດ້ຍິນທົ່ວກັນ ສ່ວນເຮົາມີສຽງເຄືອດຸຈສຽງກາ ເຮົາຈະຄວນປະຕິບັດຢ່າງໃດຫນໍ" ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ເຣື່ອງພຍາຍາມຍົກປາຕິໂມກຂ໌ຂຶ້ນສະແດງ

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ຍົກປາຕິໂມກຂ໌ຂຶ້ນສະແດງພຍາຍາມດ້ວຍຕັ້ງໃຈວ່າ 'ຈະສວດໃຫ້ໄດ້ຍິນຊັດຖ້ອຍຊັດຄຳ' ເມື່ອພຍາຍາມ ບໍ່ຕ້ອງອາບັຕິ"

ເຣື່ອງຍົກປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດທີ່ມີຄຣຶຫັສຖ໌

ສະໄມນັ້ນ ພຣະເທວທັຕຍົກປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດທີ່ມີຄຣຶຫັສຖ໌ຢູ່ດ້ວຍ ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດທີ່ມີຄຣຶຫັສຖ໌ຢູ່ດ້ວຍ ຮູບໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ"

ເຣື່ອງຍົກປາຕິໂມກຂ໌ຂຶ້ນສະແດງໂດຍບໍ່ໄດ້ຮັບອາຣາທນາ

ສະໄມນັ້ນ ພວກພິກສຸສັພພັຄຄີຍ໌ບໍ່ໄດ້ຮັບອາຣາທນາ ກໍຍົກປາຕິໂມກຂ໌ຂຶ້ນສະແດງໃນທ່າມກາງສົງຂ໌ ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ໄດ້ຮັບອາຣາທນາ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງໃນທ່າມກາງ ສົງຂ໌ ຮູບໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕປາຕິໂມກຂ໌ໃຫ້ເປັນຫນ້າທີ່

ຂອງພຣະເຖຣະ"

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນຫກະ] ໗໘. ປາຕິໂມກຂຸທເທສກອັຊເຢສນາທິ

໗໘. ປາຕິໂມກຂຸທເທສກອັຊເຢສນາທິ

ວ່າດ້ວຍການອາຣາທນາຜູ້ຍົກປາຕິໂມກຂ໌ຂຶ້ນສະແດງເປັນຕົ້ນ

ເຣື້ອງພິກສຸຊາວເມືອງໂຈທນາວັຕຖຸບໍ່ຮູ້ຈັກອຸໂບສົຖ

[໑໕໕] ຄັ້ງນັ້ນ ພຣະຜູ້ມີພຣະພາກປະທັບຢູ່ ນະ ກຸງຣາຊຄຶຫ໌ຕາມພຣະປະສົງຄ໌ແລ້ວໄດ້ສເດັຈຈາຣິກໄປທາງເມືອງໂຈທນາວັຕຖຸ ສເດັຈຈາຣິກໄປໂດຍລຳດັບຈົນເຖິງເມືອງໂຈທນາວັຕຖຸ ສມັຍນັ້ນ ໃນອາວາສແຫ່ງນຶ່ງ ມີພິກສຸຢູ່ຫລາຍຮູບ ບັນດາພິກສຸເຫລົ່ານັ້ນ ພິກສຸຜູ້ເຖຣະເປັນຜູ້ໂງ່ງ່າວ ບໍ່ສລາດ ບໍ່ຮູ້ຈັກອຸໂບສົຖ ຫລືວິທີທຳອຸໂບສົຖ ຫລືປາຕິໂມກຂ໌ ຫລືວິທີການຍົກປາຕິໂມກຂ໌ຂຶ້ນສະແດງ ສມັຍນັ້ນ ພິກສຸເຫລົ່ານັ້ນ ມີຄວາມຄິດດັ່ງນີ້ວ່າ "ພຣະຜູ້ມີພຣະພາກ ຊົງບັນຍັດໄວ້ວ່າ'ປາຕິໂມກຂ໌ເປັນຫນ້າທີ່ຂອງພຣະເຖຣະ' ກໍພຣະເຖຣະຂອງພວກເຮົາຮູບນີ້ເປັນຜູ້ໂງ່ງ່າວ ບໍ່ສລາດ ບໍ່ຮູ້ຈັກອຸໂບສົຖ ຫລືວິທີທຳອຸໂບສົຖ ຫລືປາຕິໂມກຂ໌ ຫລືວິທີຍົກປາຕິໂມກຂ໌ຂຶ້ນສະແດງ ພວກເຮົາຈະຄວນປະຕິບັດຢ່າງໃດຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບັນດາພິກສຸເຫລົ່ານັ້ນ ພິກສຸຮູບໃດເປັນຜູ້ສລາດສາມາດ ເຮົາອນຸຍາຕປາຕິໂມກຂ໌ໃຫ້ເປັນຫນ້າທີ່ຂອງພິກສຸຮູບນັ້ນ"

ເຣື້ອງພິກສຸມາກຮູບບໍ່ຮູ້ຈັກອຸໂບສົຖ

ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸຢູ່ດ້ວຍກັນຫລາຍຮູບລ້ວນເປັນຜູ້ໂງ່ງ່າວ ບໍ່ສລາດ ພິກສຸເຫລົ່ານັ້ນບໍ່ຮູ້ຈັກອຸໂບສົຖ ຫລືວິທີທຳອຸໂບສົຖ ຫລືປາຕິໂມກຂ໌ ຫລືວິທີຍົກປາຕິ ໂມກຂ໌ຂຶ້ນສະແດງ ຈຶ່ງອາຣາທນາພຣະເຖຣະວ່າ "ນິມົນຕ໌ພຣະເຖຣະຍົກປາຕິໂມກຂ໌ຂຶ້ນສະແດງເຖີດ ຂະນ້ອຍ" ພຣະເຖຣະນັ້ນກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ເຮົາຍົກປາຕິໂມກຂ໌ຂຶ້ນສະແດງບໍ່ໄດ້" ພິກ ສຸເຫລົ່ານັ້ນຈຶ່ງອາຣາທນາພຣະເຖຣະຮູບທີ ໒ ວ່າ "ນິມົນຕ໌ພຣະເຖຣະຍົກປາຕິໂມກຂ໌ຂຶ້ນສະແດງເຖີດຂະນ້ອຍ" ແມ່ນທ່ານກໍຕອບຢ່າງນີ້ວ່າ "ທ່ານທັງຫລາຍ ເຮົາຍົກປາຕິໂມກຂ໌ຂຶ້ນສະແດງບໍ່ໄດ້"

ພິກຂຸເຫລົ່ານັ້ນຈຶ່ງອາຣາທະນາພຣະເຖຣະຮູບທີ ໑ ວ່າ "ນິມົນຕ໌ທ່ານຍົກປາຕິໂມກຂ໌ຂຶ້ນສະແດງເຖີດ ຂະນ້ອຍ" ແມ່ນທ່ານກໍຕອບຢ່າງນີ້ວ່າ "ທ່ານທັງຫລາຍ ເຮົາຍົກປາຕິໂມກຂ໌ຂຶ້ນສະແດງບໍ່ໄດ້" ພິກຂຸເຫລົ່ານັ້ນໄດ້ອາຣາທະນາຈົນເຖິງພຣະຜູ້ເປັນນວກະໃນສົງຂ໌ໂດຍອຸບາຍນັ້ນແຫລະວ່າ "ທ່ານຈົ່ງຍົກປາຕິໂມກຂ໌ຂຶ້ນສະແດງເຖີດ" ແມ່ນພຣະນວກະນັ້ນກໍຕອບຢ່າງນີ້ວ່າ "ຜູ້ຂ້າຍົກປາຕິໂມກຂ໌ຂຶ້ນສະແດງບໍ່ໄດ້ ຂະນ້ອຍ" ພິກຂຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກຂຸທັງຫລາຍ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກຂຸຢູ່ດ້ວຍກັນຫລາຍຮູບ ລ້ວນເປັນຜູ້ໂງ່ງ່າວ ບໍ່ສລາດ ພິກຂຸເຫລົ່ານັ້ນບໍ່ຮູ້ຈັກອຸໂບສົຖ ຫລືວິທີທຳອຸໂບສົຖ ຫລືປາຕິໂມກຂ໌ ຫລືວິທີຍົກປາຕິໂມກຂ໌ຂຶ້ນສະແດງຈຶ່ງອາຣາທະນາພຣະເຖຣະວ່າ ນິມົນຕ໌ພຣະເຖຣະຍົກປາຕິໂມກຂ໌ຂຶ້ນສະແດງເຖີດ ຂະນ້ອຍ ພຣະເຖຣະນັ້ນກ່າວຢ່າງນີ້ວ່າ ທ່ານທັງຫລາຍ ເຮົາຍົກປາຕິໂມກຂ໌ຂຶ້ນສະແດງບໍ່ໄດ້ ພິກຂຸເຫລົ່ານັ້ນຈຶ່ງອາຣາທະນາພຣະເຖຣະຮູບທີ ໔ ວ່າ ນິມົນຕ໌ພຣະເຖຣະຍົກປາຕິໂມກຂ໌ຂຶ້ນສະແດງເຖີດ ຂະນ້ອຍ ແມ່ນພຣະເຖຣະຮູບທີ ໔ ນັ້ນກໍກ່າວຢ່າງນີ້ວ່າ ທ່ານທັງຫລາຍ ເຮົາຍົກປາຕິໂມກຂ໌ຂຶ້ນສະແດງບໍ່ໄດ້ ພິກຂຸເຫລົ່ານັ້ນຈຶ່ງອາຣາທະນາພຣະເຖຣະຮູບທີ ໑ ວ່າ ນິມົນຕ໌ພຣະເຖຣະຍົກປາຕິໂມກຂ໌ຂຶ້ນສະແດງເຖີດ ຂະນ້ອຍ ແມ່ນພຣະເຖຣະຮູບທີ ໑ ກໍກ່າວຢ່າງນີ້ວ່າ ທ່ານທັງຫລາຍ ເຮົາຍົກປາຕິໂມກຂ໌ຂຶ້ນສະແດງບໍ່ໄດ້ ພິກຂຸເຫລົ່ານັ້ນໄດ້ອາຣາທະນາຈົນເຖິງພຣະຜູ້ເປັນນວກະໃນສົງຂ໌ໂດຍອຸບາຍນັ້ນແຫລະວ່າ ທ່ານຈົ່ງຍົກປາຕິໂມກຂ໌ຂຶ້ນສະແດງເຖີດ ແມ່ນພຣະນວກະນັ້ນກໍຕອບຢ່າງນີ້ວ່າ ຜູ້ຂ້າຍົກປາຕິໂມກຂ໌ຂຶ້ນສະແດງບໍ່ໄດ້ ຂະນ້ອຍ

ເຣື້ອງສົ່ງພິກຂຸໄປຮຽນປາຕິໂມກຂ໌ພໍຈະກັບມາທັນໃນມື້ນັ້ນ

ພິກຂຸທັງຫລາຍ ພິກຂຸເຫລົ່ານັ້ນຄວນສົ່ງພິກຂຸຮູບນຶ່ງໄປຍັງອາວາສໃກ້ຄຽງ ພໍຈະກັບມາທັນໃນມື້ນັ້ນດ້ວຍສັ່ງວ່າ "ທ່ານ ທ່ານຈົ່ງໄປຮຽນປາຕິໂມກຂ໌ໂດຍຫຍໍ້ຫລືໂດຍພິສດານມາເຖີດ" ຕໍ່ມາ ພິກຂຸທັງຫລາຍໄດ້ມີຄວາມຄິດດັ່ງນີ້ວ່າ "ຈະສົ່ງພິກຂຸຮູບໃດໄປຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກຂຸທັງຫລາຍ ເຮົາອະນຸຍາຕໃຫ້ພິກຂຸຜູ້ເຖຣະບັນຊາພິກຂຸຜູ້ນວກະໄປ" ພິກຂຸນວກະທັງຫລາຍຖືກພິກຂຸເຖຣະບັນຊາແລ້ວບໍ່ຍອມໄປ ພິກຂຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກຂຸທັງຫລາຍ ພິກຂຸບໍ່ເປັນໄຂ້ຖືກພຣະເຖຣະບັນຊາແລ້ວຈະບໍ່ໄປບໍ່ໄດ້ ຮູບໃດບໍ່ໄປ ຕ້ອງອາບັຕິທຸກກະຕະ"

໗໔. ປັກຂຄະນະນາທິອຸຄຄະຫະນານຸຊານະນາ

ວ່າດ້ວຍຊົງອະນຸຍາຕໃຫ້ຮຽນວິທີນັບປັກສ໌ເປັນຕົ້ນ

ເຣື້ອງວິທີການນັບປັກສ໌

[໑໕໖] ຄັ້ນພຣະຜູ້ມີພຣະພາກປະທັບຢູ່ ນະ ເມືອງໂຈທນາວັຕຖຸຕາມພຣະອັທຍາສັຍແລ້ວກໍສເດັຈກັບມາຍັງກຸງຣາຊຄຶຫ໌ອີກເຊັ່ນເດີມ ສມັຍນັ້ນ ພວກຊາວບ້ານຖາມພິກສຸທັງຫລາຍທີ່ກຳລັງທ່ຽວບິນທບາຕວ່າ "ພຣະຄຸນເຈົ້າວັນນີ້ກີ່ຄ່ຳ" ພິກສຸທັງຫລາຍຕອບຢ່າງນີ້ວ່າ "ທ່ານທັງຫລາຍ ພວກອາຕມາບໍ່ຮູ້" ພວກຊາວບ້ານພາກັນຕຳໜິ ປະນາມ ໂພນທະນາວ່າ "ແມ່ນພຽງການນັບປັກສ໌ ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ຍັງບໍ່ຮູ້ ຈັ່ງໃດຈະຮູ້ຄວາມດີຫຍັງໆຢ່າງອື່ນລະ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຮຽນວິທີການນັບປັກສ໌" ຕໍ່ມາ ພິກສຸທັງຫລາຍໄດ້ມີຄວາມຄິດດັ່ງນີ້ວ່າ "ພິກສຸຮູບໃດໜໍ ຄວຣຮຽນວິທີການນັບປັກສ໌ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸທຸກໆຮູບ ຮຽນວິທີການນັບປັກສ໌"

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໔. ປັກຂຄນນາທິອຸຄຄຫນານຸຊານນາ

ເຣື້ອງຊົງອນຸຍາຕໃຫ້ນັບພິກສຸໃນວັນອຸໂບສົຖ

[໑໕໗] ສມັຍນັ້ນ ພວກຊາວບ້ານຖາມພິກສຸທັງຫລາຍທີ່ກຳລັງທ່ຽວບິນທບາຕວ່າ "ພິກສຸມີຈຳນວນເທົ່າໃດ ຂະນ້ອຍ" ພິກສຸທັງຫລາຍຕອບຢ່າງນີ້ວ່າ "ທ່ານທັງຫລາຍ ພວກອາຕມາບໍ່ຮູ້" ພວກຊາວບ້ານພາກັນຕຳໜິ ປະນາມ ໂພນທະນາວ່າ "ແມ່ນພວກກັນເອງ ພຣະສະມະນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ຍັງບໍ່ຮູ້ ຈັ່ງໃດຈະຮູ້ຄວາມດີຫຍັງໆຢ່າງອື່ນລະ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ນັບພິກສຸ" ຕໍ່ມາ ພິກສຸທັງຫລາຍໄດ້ມີຄວາມຄິດດັ່ງນີ້ວ່າ "ເມື່ອໃດໜໍ ເຮົາຄວຣນັບພິກສຸ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ໃນວັນອຸໂບສົຖ ເຮົາອນຸຍາຕໃຫ້ນັບພິກສຸດ້ວຍການຮຽກຊື່ຫລືໃຫ້ຈັບສລາກ"

ເຣື້ອງໄປບິນທບາຕຍັງໝູ່ບ້ານໄກ

[໑໕໘] ສມັຍນັ້ນ ພິກສຸທັງຫລາຍບໍ່ຮູ້ວ່າ "ວັນນີ້ເປັນວັນອຸໂບສົຖ" ໄປບິນທບາຕຍັງໝູ່ບ້ານໄກມາເຖິງເມື່ອສົງຂ໌ກຳລັງຍົກປາຕິໂມກຂ໌ຂຶ້ນສະແດງແດ່ ເມື່ອໃກ້ຈະຍົກຂຶ້ນສະແດງຈົບແດ່ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ບອກວ່າ ວັນນີ້ເປັນວັນອຸໂບສົຖ" ຕໍ່ມາ ພິກສຸທັງຫລາຍໄດ້ມີຄວາມຄິດດັ່ງນີ້ວ່າ

“ພິກສຸຮູບໃດຫນໍຄວຣບອກ” ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບພຣະຜູ້ມີພຣະພາກຣັບສັ່ງວ່າ “ພິກສຸທັງຫລາຍ ເຣົາອນຸຍາຕໃຫ້ພິກສຸຜູ້ເຖຣະບອກແຕ່ເຊົ້າຕຣູ່”

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໆ໕. ປຸພພກຣນານຸຊານນາ

ເຣື້ອງນຶກບໍ່ໄດ້

ສມັຍຕໍ່ມາ ພຣະເຖຣະຮູບນຶ່ງ ເວລາເຊົ້າຕຣູ່ ກໍນຶກບໍ່ໄດ້ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ “ພິກສຸທັງຫລາຍ ເຣົາອນຸຍາຕໃຫ້ບອກແມ່ນໃນເວລາພັຕກາລ” ແມ່ນໃນເວລາພັຕກາລ ພຣະເຖຣະກໍນຶກບໍ່ໄດ້ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ “ພິກສຸທັງຫລາຍ ເຣົາອນຸຍາຕໃຫ້ບອກໃນເວລາທີ່ນຶກຂຶ້ນໄດ້”

ໆ໕. ປຸພພກຣນານຸຊານນາ

ວ່າດ້ວຍຊົງອນຸຍາຕບຸພພກຣນ໌

ເຣື້ອງບຸພພກຣນ໌ແລະບຸພພກິຈໃນໂຮງອຸໂບສົຖ໑

[໑໕໙] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນໂຮງອຸໂບສົຖ ພວກພິກສຸອາຄັນຕຸກະພາກັນ ຕຳຫນິ ປະນາມ ໂພນທະນາວ່າ “ເປັນຫຍັງພິກສຸທັງຫລາຍຈຶ່ງບໍ່ກວາດໂຮງອຸໂບສົຖກັນລະ”

ໝາຍເຫດ :

໑ ບຸພພກຣນ໌ ຫມາຍເຖິງການຕຽມການກ່ອນທີ່ຈະມີການປະຊຸມສົງຂ໌ ບຸພພກຣນ໌ຂອງການທຳອຸໂບສົຖ ຄື ໑. ກວາດໂຮງອຸໂບສົຖ ໒. ຈຸດປະທີປຕຽມແສງສວ່າງ ໓. ຈັດຕຽມນ້ຳສັນນ້ຳໃຊ້ໄວ້ ໔. ປູອາສນະ

ບຸພພກິຈ ຫມາຍເຖິງ ກິຈເບື້ອງຕົ້ນ ບຸພພກິຈຂອງການທຳອຸໂບສົຖ ຄື ໑. ນຳສັນທະແລະປາຣິສຸທຫຼືຂອງພິກສຸຜູ້ເປັນໄຂ້ ຄື ຖ້າມີພິກສຸຜູ້ເປັນໄຂ້ຢູ່ໃນສີມາດຽວກັນ ຕ້ອງນຳຄວາມຍິນຍອມແລະຄຳປະຕິຍານວ່າຕົວເອງເປັນຜູ້ບໍຣິສຸດທິ໌ຈາກອາບັຕິຂອງພິກສຸຜູ້ເປັນໄຂ້ນັ້ນມາແຈ້ງໃຫ້ສົງຂ໌ຊາບ ໒. ບອກຣະດູ ໓. ບອກຈຳນວນພິກສຸທີ່ເຂົ້າຮ່ວມປະຊຸມ

໔. ແຈ້ງການໃຫ້ໄອອາຫພິກສຸນີ (ວິ. ອ. ໒/໑໕໗/໑໖໙, ກຽ໌ສາ. ອ. ໑໑໗-໑໔໔)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນຫກະ] ໗໕. ປຸພພກຣນານຸຊານນາ

ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ກວາດໂຮງອຸໂປສົຖ" ຕໍ່ມາ ພິກສຸທັງຫລາຍໄດ້ມີຄວາມຄິດດັ່ງນີ້ວ່າ "ພິກສຸຮູບໃດຫນໍ ຄວຣກວາດໂຮງອຸໂປສົຖ" ຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເຖຣະໃຊ້ພິກສຸນວກະ" ພິກສຸນວກະທັງຫລາຍຖືກພິກສຸເຖຣະໃຊ້ແລ້ວ ກໍບໍ່ຍອມກວາດ ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ເປັນໄຂ້ຖືກພິກສຸເຖຣະໃຊ້ແລ້ວຈະບໍ່ກວາດບໍ່ໄດ້ ຮູບໃດບໍ່ກວາດ ຕ້ອງອາບັຕິທຸກກະຕະ"

ເອື້ອງປູອາສນະແລະຕາມປະທີປເປັນຕົ້ນ

[໑໕໐] ສມັຍນັ້ນ ໃນໂຮງອຸໂປສົຖ ບໍ່ມີໃຜປູອາສນະໄວ້ ພິກສຸທັງຫລາຍພາກັນນັ່ງທີ່ພື້ນ ທັງຕົວທັງຈີວອນເປື້ອນຝຸ່ນ ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ປູອາສນະໃນໂຮງອຸໂປສົຖ" ຕໍ່ມາ ພິກສຸທັງຫລາຍໄດ້ມີຄວາມປຣິວິຕົກວ່າ ພິກສຸຮູບໃດຫນໍ ຄວຣປູອາສນະໃນໂຮງອຸໂປສົຖ ຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເຖຣະໃຊ້ພິກສຸນວກະ" ພິກສຸນວກະທັງຫລາຍຖືກພິກສຸເຖຣະໃຊ້ແລ້ວ ກໍບໍ່ຍອມປູ ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ເປັນໄຂ້ຖືກພິກສຸເຖຣະໃຊ້ແລ້ວຈະບໍ່ປູບໍ່ໄດ້ ຮູບໃດບໍ່ປູ ຕ້ອງອາບັຕິທຸກກະຕະ"

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນຫກະ] ໗໕. ປຸພພກຣນານຸຊານນາ

[໑໕໑] ສມັຍນັ້ນ ໃນໂຮງອຸໂປສົຖ ບໍ່ຕາມປະທີປໄວ້ ພິກສຸທັງຫລາຍຢຽບກາຍກັນແດ່ ຈີວອນແດ່ໃນທີ່ມືດ ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍເຮົາອນຸຍາຕໃຫ້ຕາມປະທີປໃນໂຮງອຸໂປສົຖ" ຕໍ່ມາ ພິກສຸທັງຫລາຍໄດ້ມີ

ຄວາມຄິດດັ່ງນີ້ວ່າ "ພິກສຸຮູບໃດຫນໍ ຄວນຕາມປະທີປໃນໂຮງອຸໂບສົຖ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເຖຣະໃຊ້ພິກສຸນວກະ" ພິກສຸນວກະທັງຫລາຍຖືກພິກສຸເຖຣະໃຊ້ແລ້ວ ກໍບໍ່ຍອມຕາມປະທີປ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ເປັນໄຂ້ຖືກພິກສຸເຖຣະໃຊ້ແລ້ວ ຈະບໍ່ຕາມປະທີປບໍ່ໄດ້ ຮູບໃດບໍ່ຕາມປະທີປ ຕ້ອງອາບັຕິທຸກກະຕະ"

[໑໘໔] ສະໄໝນັ້ນ ໃນອາວາສແຫ່ງນຶ່ງ ພວກພິກສຸທີ່ຢູ່ໃນອາວາສບໍ່ຈັດນ້ຳສັນນ້ຳໃຊ້ໄວ້ ພຣະອາຄັນຕຸກະພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸທີ່ຢູ່ໃນອາວາສຈຶ່ງບໍ່ຈັດນ້ຳສັນນ້ຳໃຊ້ໄວ້ລະ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຈັດນ້ຳສັນນ້ຳໃຊ້ໄວ້" ຕໍ່ມາ ພິກສຸທັງຫລາຍໄດ້ມີຄວາມຄິດດັ່ງນີ້ວ່າ "ພິກສຸຮູບໃດຫນໍ ຄວນຈັດນ້ຳສັນນ້ຳໃຊ້ໄວ້" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເຖຣະໃຊ້ພິກສຸນວກະ" ພິກສຸນວກະທັງຫລາຍຖືກພິກສຸເຖຣະໃຊ້ແລ້ວ ບໍ່ຍອມຈັດນ້ຳສັນນ້ຳໃຊ້ໄວ້ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ເປັນໄຂ້ຖືກພິກສຸເຖຣະໃຊ້ແລ້ວ ຈະບໍ່ຈັດບໍ່ໄດ້ ຮູບໃດບໍ່ຈັດ ຕ້ອງອາບັຕິທຸກກະຕະ"

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໘. ທິສັງຄມິກາທິວັຕຖຸ

໗໘. ທິສັງຄມິກາທິວັຕຖຸ

ວ່າດ້ວຍພິກສຸໄປສູ່ທິສເປັນຕົ້ນ

ເຣື້ອງພິກສຸຈະໄປໃສຕ້ອງບອກລາກ່ອນ

[໑໘໕] ສະໄໝນັ້ນ ພວກພິກສຸຫລາຍຮູບດ້ອຍກັນເປັນຜູ້ໂງ່ງ່າວ ບໍ່ສລາດ ໄປສູ່ທິສ ບອກລາພຣະອຸປັຊຍາຍ໌ອາຈາຣຍ໌ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພິກສຸຫລາຍຮູບເປັນຜູ້ໂງ່ງ່າວ ບໍ່ສລາດ ໄປສູ່ທິສ ຍ່ອມບອກລາອຸປັຊຍາຍ໌ອາຈາຣຍ໌ ພິກສຸທັງຫລາຍ ອຸປັຊຍາຍ໌ອາຈາຣຍ໌

ຄວນຖາມພິກສຸເຫລົ່ານັ້ນວ່າ ພວກທ່ານຈະໄປໃສກັນ ໄປກັບໃຜ” ຖ້າພິກສຸເຫລົ່ານັ້ນເປັນຜູ້ໂງ່ງ່າວ ບໍ່ສລາດ ອ້າງເຖິງພິກສຸເຫລົ່າອື່ນທີ່ໂງ່ງ່າວບໍ່ສລາດເຊັ່ນກັນ ພຣະອຸປັຊຍາຍ໌ອາຈາຣຍ໌ບໍ່ຄວນອນຸຍາຕ ຖ້າອນຸຍາຕ ຕ້ອງອາບັຕິທຸກກະຕະ ອີກຢ່າງນຶ່ງ ຖ້າພວກທ່ານເປັນຜູ້ໂງ່ງ່າວ ບໍ່ສລາດ ພຣະອຸປັຊຍາຍ໌ອາຈາຣຍ໌ຍັງບໍ່ອນຸຍາຕ ຖ້າຍັງຂືນໄປ ຕ້ອງອາບັຕິທຸກກະຕະ

ເຣື້ອງຄວຣສົງເຄາະພິກສຸຜູ້ເປັນພຫູສູຕ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ໃນອາວາສແຫ່ງນຶ່ງ ພິກສຸຫລາຍຮູບເປັນຜູ້ໂງ່ງ່າວ ບໍ່ສລາດ ບໍ່ຮູ້ຈັກອຸໂບສົຖ ຫລືວິທີທຳອຸໂບສົຖ ຫລືປາຕິໂມກຂ໌ຫລືວິທີຍົກປາຕິໂມກຂ໌ຂຶ້ນສະແດງ ພິກສຸຮູບອື່ນເປັນພຫູສູຕ ຊ່ຽວຊານປຣິຍັຕິ(ອາຄຕາຄມ) ຊົງທັມ ຊົງວິນັຍ ຊົງມາຕິກາ ເປັນບັນທິຕ ສລາດ ມີປັນຍາ ມີຄວາມລະອາຍ ມີຄວາມຣະມັດຣະວັງໃຝ່ການສຶກສາ ມາໃນອາວາສນັ້ນ ພິກສຸພຫູສູຕຣນັ້ນອັນພິກສຸເຫລົ່ານັ້ນຄວນສົງເຄາະ ອນຸເຄາະ ໂອພາປາສັຍ ບຳຣຸງດ້ວຍຈຸຣນະ ດິນຫນຽວ ໄມ້ຊຳຣະແຂ້ວ ນ້ຳບ້ວນປາກ ຖ້າບໍ່ສົງເຄາະ ອນຸເຄາະ ໂອພາປາສັຍ ບຳຣຸງດ້ວຍຈຸຣນະ ດິນຫນຽວ ໄມ້ຊຳຣະແຂ້ວ ນ້ຳບ້ວນປາກ ຕ້ອງອາບັຕິທຸກກະຕະ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໆໆ. ປາຣິສຸທທິທານກຖາ

ເຣື້ອງສັ່ງພິກສຸໄປພໍຈະກັບມາທັນໃນມື້ນັ້ນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ພິກສຸຢູ່ດ້ວຍ ກັນຫລາຍຮູບ ເປັນຜູ້ໂງ່ງ່າວ ບໍ່ສລາດ ບໍ່ຮູ້ຈັກອຸໂບສົຖຫລືວິທີທຳອຸໂບສົຖ ຫລືປາຕິໂມກຂ໌ ຫລືວິທີຍົກປາຕິໂມກຂ໌ຂຶ້ນສະແດງ ພິກສຸເຫລົ່ານັ້ນຄວນສັ່ງພິກສຸຮູບນຶ່ງໄປຍັງອາວາສໃກ້ຄຽງ ພໍຈະກັບມາທັນໃນມື້ນັ້ນ ດ້ວຍສັ່ງວ່າ ‘ທ່ານ ທ່ານຈົ່ງໄປຮຽນປາຕິໂມກຂ໌ໂດຍຫຍໍ້ຫລືໂດຍພິສດາຣມາເຖີດ’ ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ພິກສຸເຫລົ່ານັ້ນທຸກຮູບ ຄວນໄປສູ່ອາວາສທີ່ມີພິກສຸ ຮູ້ອຸໂບສົຖຫລືວິທີທຳອຸໂບສົຖ ຫລືປາຕິໂມກຂ໌ຫລືວິທີຂຶ້ນສະແດງປາຕິໂມກຂ໌ ຖ້າບໍ່ໄປ ຕ້ອງອາບັຕິທຸກກະຕະ

ເຣື້ອງຈຳພັນສາໃນອາວາສທີ່ມີຜູ້ຍົກປາຕິໂມກຂ໌ຂຶ້ນສະແດງໄດ້

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ພິກສຸຢູ່ຈຳພັນສາຫລາຍຮູບເປັນຜູ້ໂງ່ງ່າວ ບໍ່ສລາດ ບໍ່ຮູ້ຈັກອຸໂບສົຖຫລືວິທີທຳອຸໂບສົຖ ຫລືປາຕິໂມກຂ໌ຫລືວິທີຍົກປາຕິໂມກຂ໌ຂຶ້ນສະແດງ ພິກສຸເຫລົ່ານັ້ນຄວນສັ່ງພິກສຸຮູບນຶ່ງໄປຍັງອາວາສໃກ້ຄຽງ ພໍຈະກັບມາທັນໃນມື້ນັ້ນ ດ້ວຍສັ່ງວ່າ

"ທ່ານ ທ່ານຈົ່ງໄປຮຽນປາຕິໂມກຂ໌ໂດຍຫຍໍ້ຫລືໂດຍພິສດານ ມາເຖີດ" ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ຄວນສັ່ງພິກຂຸຮູບນຶ່ງໄປຊົ່ວເວລາ ໆ ອັນ ດ້ວຍສັ່ງວ່າ "ທ່ານ ທ່ານຈົ່ງໄປຮຽນປາຕິໂມກຂ໌ໂດຍຫຍໍ້ຫລືໂດຍພິສດານມາເຖີດ" ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ພິກຂຸເຫລົ່ານັ້ນ ບໍ່ຄວນຈຳພັນສາຢູ່ໃນອາວາສນັ້ນ ຖ້າຈຳພັນສາຢູ່ ຕ້ອງອາບັຕິທຸກກະຕະ

໗໗. ປາຣິສຸທທິທານກຖາ

ວ່າດ້ວຍການມອບປາຣິສຸທທິ

ເຣື້ອງພິກຂຸໄຂ້ມອບປາຣິສຸທທິ

[໑໘໔] ຄັ້ງນັ້ນ ພຣະຜູ້ມີພຣະພາກຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ພວກທ່ານຈົ່ງປະຊຸມກັນ ສົງຂ໌ຈະເຮັດອຸໂບສົຖ" ເມື່ອພຣະອົງຄ໌ຕຣັສຢ່າງນີ້ ພິກຂຸຮູບນຶ່ງໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ມີພິກຂຸເປັນໄຂ້ຢູ່ ພຣະພຸດທະເຈົ້າຂ້າ ພິກຂຸໄຂ້ນັ້ນມາບໍ່ໄດ້" ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ພິກຂຸໄຂ້ມອບປາຣິສຸທທິ" ພິກຂຸທັງຫລາຍ ກໍແລ ພິກຂຸໄຂ້ຄວນມອບປາຣິສຸທທິຢ່າງນີ້

ພິກຂຸໄຂ້ນັ້ນຄວນເຂົ້າໄປຫາພິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງກະໂຫຢ່ງປະນົມມືກ່າວຢ່າງນີ້ວ່າ "ຂ້າພະເຈົ້າຂໍມອບປາຣິສຸທທິ ທ່ານຈົ່ງນຳປາຣິສຸທທິຂອງຂ້າພະເຈົ້າໄປ ຈົ່ງບອກປາຣິສຸທທິຂອງຂ້າພະເຈົ້າ" ພິກຂຸຜູ້ມອບປາຣິສຸທທິໃຫ້ພິກຂຸຜູ້ນຳປາຣິສຸທທິຮູ້ດ້ວຍກາຍ ໃຫ້ຮູ້ດ້ວຍວາຈາ ຫລືໃຫ້ຮູ້ດ້ວຍກາຍແລະວາຈາ ປາຣິສຸທທິເປັນອັນມອບໃຫ້ແລ້ວ ພິກຂຸຜູ້ມອບປາຣິສຸທທິບໍ່ໃຫ້ພິກຂຸຜູ້ນຳປາຣິສຸທທິຮູ້ດ້ວຍກາຍ ບໍ່ໃຫ້ຮູ້ດ້ວຍວາຈາ ຫລືບໍ່ໃຫ້ຮູ້ດ້ວຍກາຍແລະວາຈາ ປາຣິສຸທທິເປັນອັນຍັງບໍ່ໄດ້ມອບ ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ພິກຂຸທັງຫລາຍຄວນໃຊ້ຕຽງຫລືຕັ່ງຫາມພິກຂຸໄຂ້ມາໃນທ່າມກາງສົງຂ໌ແລ້ວທຳອຸໂບສົຖ

ພິກຂຸທັງຫລາຍ ຖ້າພວກພິກຂຸຜູ້ພຍາບາລພິກຂຸໄຂ້ໄດ້ປຶກສາກັນ ດັ່ງນີ້ວ່າ ຖ້າພວກເຮົາຈັກຍ້າຍພິກຂຸໄຂ້ ອາການໄຂ້ຈັກກຳເຣີບຫນັກຂຶ້ນຫລືພິກຂຸໄຂ້ຈັກເຖິງແກ່ມໍຣະນະພາພ ບໍ່ຄວນຍ້າຍພິກຂຸໄຂ້ ສົງຂ໌ຄວນໄປທຳອຸໂບສົຖໃນສຳນັກພິກຂຸໄຂ້ນັ້ນ ແຕ່ສົງຂ໌ບໍ່ຄວນແບ່ງພວກກັນທຳອຸໂບສົຖ ຖ້າແບ່ງພວກກັນທຳ ຕ້ອງອາບັຕິທຸກກະຕະ

ພິກຂຸທັງຫລາຍ ເມື່ອພິກຂຸໄຂ້ໄດ້ມອບປາຣິສຸທທິແລ້ວ ຖ້າພິກຂຸຜູ້ນຳປາຣິສຸທທິຫລົບໄປເສັຽຈາກທີ່ນັ້ນ ພິກຂຸໄຂ້ຄວນມອບປາຣິສຸທທິແກ່ພິກຂຸຮູບອື່ນ ພິກຂຸທັງຫລາຍ ເມື່ອພິກຂຸໄຂ້ໄດ້ມອບປາຣິສຸທທິແລ້ວ ຖ້າພິກຂຸຜູ້ນຳປາຣິສຸທທິສຶກເສັຽ ນະທີ່ນັ້ນແຫລະ . . . ມໍຣະນະພາພ . . . ປະຕິຍານເປັນ

ສູ້າມເນນ . . . ປະຕິຍານເປັນຜູ້ບອກຄືນສິກຂາ . . . ປະຕິຍານເປັນຜູ້ຕ້ອງອັນຕິມວັຕຖຸ໑ . . . ປະຕິຍານເປັນຜູ້ວິກົລຈິຕ . . . ປະຕິຍານເປັນຜູ້ມີຈິຕປັ່ນປ່ວນ . . . ປະຕິຍານເປັນຜູ້ກະວົນກະວາຍເພາະເວທນາ . . . ປະຕິຍານເປັນຜູ້ຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ເຫັນວ່າເປັນອາບັຕິ . . . ປະຕິຍານເປັນຜູ້ຖືກສົງຂ໌ລົງ

ໝາຍເຫດ :

໑ ອັນຕິມວັຕຖຸ ໝາຍເຖິງອາບັຕິປາຣາຊິກ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໗. ປາຣິສຸທທິທານກຖາ

ອຸກເຂປນີຍກັມເພາະບໍ່ທຳຄືນອາບັຕິ . . . ປະຕິຍານເປັນຜູ້ຖືກສົງຂ໌ລົງອຸກເຂປນີຍກັມ ເພາະບໍ່ສລະທິຕຖິບາປ . . . ປະຕິຍານເປັນກະເທີຍ . . . ປະຕິຍານເປັນໄຖຍສັງວາສ໑ . . . ປະຕິຍານເປັນຜູ້ເຂົ້າຮີດເດັຽຣະຖີຍ໌ . . . ປະຕິຍານເປັນສັຕວ໌ເດັຽຣະສານ . . . ປະຕິຍານເປັນຜູ້ຂ້າມາຣດາ . . . ປະຕິຍານເປັນຜູ້ຂ້າບິດາ . . . ປະຕິຍານເປັນຜູ້ຂ້າພຣະອຣຫັນຕ໌ . . . ປະຕິຍານເປັນຜູ້ປະທຸສຮ້າຍພິກສຸນີ . . . ປະຕິຍານເປັນຜູ້ທຳລາຍສົງຂ໌ . . . ປະຕິຍານເປັນຜູ້ທຳຮ້າຍພຣະສາສດາຈົນຫໍ້ພຣະໂລຫິຕ . . . ປະຕິຍານເປັນອຸພໂຕພຍັຍຊນກ໔ ພິກສຸໄຂ້ຄວນມອບປາຣິສຸທທິແກ່ພິກສຸຮູບ ອື່ນ ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປາຣິສຸທທິແລ້ວ ຖ້າພິກສຸຜູ້ນຳປາຣິສຸທທິຫລົບໄປເສັຽໃນຣະຫວ່າງທາງ ປາຣິສຸທທິເປັນອັນຍັງບໍ່ໄດ້ນຳມາ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປາຣິສຸທທິແລ້ວ ຖ້າພິກສຸຜູ້ນຳປາຣິສຸທທິສຶກເສັຽໃນຣະຫວ່າງທາງ ฯລฯ ປຕິຍານເປັນອຸພໂຕພຍັຍຊນກ ປາຣິສຸທທິເປັນອັນຍັງບໍ່ໄດ້ນຳມາ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປາຣິສຸທທິແລ້ວ ຖ້າພິກສຸຜູ້ນຳປາຣິສຸທທິເຂົ້າທີ່ປະຊຸມສົງຂ໌ແລ້ວຫລົບໄປ ປາຣິສຸທທິເປັນອັນນຳມາແລ້ວ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປາຣິສຸທທິແລ້ວ ຖ້າພິກສຸຜູ້ນຳປາຣິສຸທທິເຂົ້າທີ່ປະຊຸມສົງຂ໌ແລ້ວສຶກເສັຽ ฯລฯ ປຕິຍານເປັນອຸພໂຕພຍັຍຊນກ ປາຣິສຸທທິເປັນອັນນຳມາແລ້ວ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປາຣິສຸທຫຼິແລ້ວ ຖ້າພິກສຸຜູ້ນໍາປາຣິສຸທຫຼິເຂົ້າທີ່ປະຊຸມສົງຂ໌ແລ້ວຫລັບເສັຽບໍ່ໄດ້ບອກ ເຜລອໄປບໍ່ໄດ້ບອກ ເຂົ້າສະມາບັຕິບໍ່ໄດ້ບອກ

ປາຣິສຸທຫຼິເປັນອັນນໍາມາແລ້ວ ພິກສຸຜູ້ນໍາປາຣິສຸທຫຼິບໍ່ຕ້ອງອາບັຕິ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປາຣິສຸທຫຼິແລ້ວ ຖ້າພິກສຸຜູ້ນໍາປາຣິສຸທຫຼິເຂົ້າທີ່ປະຊຸມສົງຂ໌ແລ້ວ ຈົງໃຈບໍ່ບອກ ປາຣິສຸທຫຼິເປັນອັນນໍາມາແລ້ວ ແຕ່ພິກສຸຜູ້ນໍາປາຣິສຸທຫຼິຕ້ອງອາບັຕິທຸກກະຕະ”

ໝາຍເຫດ :

໑ ໄຖຍສັງວາສ ແປວ່າ ຄົນລັກເພສ ຄື ບໍ່ແມ່ນພິກສຸ ແຕ່ປອມບວຊເປັນພິກສຸ (ວິ. ອ. ๓/໑໑໐/໗໔ ດູຣາຍລະອຽດໃນເຫລັ້ມນີ້ຂໍ້ ໑໑໐ ຫນ້າ ໑໗໔-໑໗໕)

໒ ອຸພໂຕພຍັຍຊົນກ ແປວ່າ ຄົນ ໒ ເພສ ຄື ມີສັນຍາລັກສນ໌ເພສຊາຍ ແລະເພສຍິງ (ວິ. ອ. ໔/໔໗໕/໓໗)

ພຣະວິນັຍປີດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໗. ສັນທຫານກຖາ

໗໗. ສັນທຫານກຖາ

ວ່າດ້ວຍການມອບສັນທະ

ເຣື້ອງທໍາກັມທີ່ຈະຕ້ອງທໍາ

[໑໖໕] ຄັ້ງນັ້ນ ພຣະຜູ້ມີພຣະພາກຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍພວກທ່ານຈົ່ງປະຊຸມກັນ ສົງຂ໌ຈະເຮັດກັມ” ເມື່ອພຣະອົງຄ໌ຕຣັສຢ່າງນີ້ ພິກສຸຮູບນຶ່ງໄດ້ຂາບທູລພຣະຜູ້ມີພຣະພາກ ດັ່ງນີ້ວ່າ “ມີພິກສຸເປັນໄຂ້ຢູ່ ພຣະພຸດທະເຈົ້າຂ້າ ພິກສຸໄຂ້ນັ້ນມາບໍ່ໄດ້”

ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸໄຂ້ມອບສັນທະ

ວິທີມອບສັນທະ

ພິກສຸທັງຫລາຍ ກໍແລພິກສຸໄຂ້ຄວນມອບສັນທະຢ່າງນີ້

ພິກສຸໄຂ້ນັ້ນຄວນເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບັ່ງຽບບ່າຂ້າງນຶ່ງ ນັ່ງກຣະໂຫຍ່ງ ປະນົມມືກ່າວຢ່າງນີ້ວ່າ ຂ້າພະເຈົ້າຂໍມອບສັນທະ ທ່ານຈົ່ງນໍາສັນທະຂອງຂ້າພະເຈົ້າໄປ ຈົ່ງບອກສັນທະຂອງຂ້າ

ພະເຈົ້າ

ພິກສຸຜູ້ມອບສັນທະໃຫ້ພິກສຸຜູ້ນຳສັນທະຮູ້ດ້ວຍກາຍ ໃຫ້ຮູ້ດ້ວຍວາຈາ ຫລືໃຫ້ຮູ້ດ້ວຍກາຍແລະວາຈາ ສັນທະເປັນອັນມອບໃຫ້ແລ້ວ ພິກສຸຜູ້ມອບສັນທະບໍ່ໃຫ້ພິກສຸຜູ້ນຳສັນທະຮູ້ດ້ວຍກາຍ ບໍ່ໃຫ້ຮູ້ດ້ວຍວາຈາ ຫລືບໍ່ໃຫ້ຮູ້ດ້ວຍກາຍແລະວາຈາ ສັນທະເປັນອັນຍັງບໍ່ໄດ້ມອບ ຖ້າໄດ້ຢ່າງນັ້ນ ນັ້ນເປັນກາຣດີ ຖ້າບໍ່ໄດ້ ພິກສຸທັງຫລາຍຄວນໃຊ້ຕຽງຫລືຕັ່ງຫາມພິກສຸໄຂ້ມາໃນທ່າມກາງສົງຂ໌ແລ້ວທຳກັມ ພິກສຸທັງຫລາຍ ຖ້າພວກພິກສຸຜູ້ພຍາບາລພິກສຸໄຂ້ໄດ້ປຶກສາກັນ ດັ່ງນີ້ວ່າ ຖ້າພວກເຮົາຈັກຍ້າຍພິກສຸໄຂ້ ອາກາຣໄຂ້ຈັກກຳເຣີບຫນັກຂຶ້ນຫລືພິກສຸໄຂ້ຈັກເຖິງແກ່ມໍຣະນະພາພ ບໍ່ຄວນຍ້າຍພິກສຸໄຂ້ ສົງຂ໌ຄວນໄປທຳກັມໃນສຳນັກພິກສຸໄຂ້ນັ້ນ ແຕ່ສົງຂ໌ບໍ່ຄວນແບ່ງພວກກັນທຳກັມ ຖ້າແບ່ງພວກກັນທຳ ຕ້ອງອາບັຕິທຸກກະຕະ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບສັນທະແລ້ວ ຖ້າພິກສຸຜູ້ນຳສັນທະຫລີບໄປເສັຽຈາກທີ່ນັ້ນ ພິກສຸໄຂ້ຄວນມອບສັນທະແກ່ພິກສຸຮູບອື່ນ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໗. ສັນທທານກຖາ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບສັນທະແລ້ວ ຖ້າພິກສຸຜູ້ນຳສັນທະສຶກເສັຽ ນ ທີ່ນັ້ນແຫລະ . . . ມໍຣະນະພາພ . . . ປະຕິຍານເປັນສາມເນຣ . . . ປະຕິຍານເປັນຜູ້ບອກລາສິກຂາ. . . ປະຕິຍານເປັນຜູ້ຕ້ອງອັນຕິມວັຕຖຸ . . . ປະຕິຍານເປັນຜູ້ວິກົລຈິຕ . . . ປະຕິຍານເປັນຜູ້ມີຈິຕປັ່ນປ່ວງ . . . ປະຕິຍານເປັນຜູ້ກະວົນກະວາຍເພາະເວທນາ . . . ປະຕິຍານເປັນຜູ້ຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ເຫັນອາບັຕິ . . . ປະຕິຍານເປັນຜູ້ຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ທຳຄືນອາບັຕິ . . . ປະຕິຍານເປັນຜູ້ຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ສລະທິຕຖິບາປ . . . ປະຕິຍານເປັນກະເທີຍ . . . ປະຕິຍານເປັນໄຖຍສັງວາສ . . . ປະຕິຍານເປັນຜູ້ເຂົ້າຮີດເດັຽຣະຖີຍ໌ . . . ປະຕິຍານເປັນສັຕວ໌ເດັຽຣະສານ . . . ປະຕິຍານເປັນຜູ້ຂ້າມາຣດາ . . . ປະຕິຍານເປັນຜູ້ຂ້າບິດາ . . . ປະຕິຍານເປັນຜູ້ຂ້າພຣະອຣຫັນຕ໌ . . . ປະຕິຍານເປັນຜູ້ປຣະທຸສຮ້າຍພິກສຸນີ . . . ປະຕິຍານເປັນຜູ້ທຳລາຍສົງຂ໌ . . . ປະຕິຍານເປັນຜູ້ທຳຮ້າຍພຣະສາສດາຈົນຫໍ້ພຣະໂລຫິຕ . . . ປະຕິຍານເປັນອຸພໂຕພຍັນຊນກ ພິກສຸໄຂ້ຄວນມອບສັນທະແກ່ພິກສຸຮູບອື່ນ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບສັນທະແລ້ວ ຖ້າພິກສຸຜູ້ນຳສັນທະຫລີບໄປເສັຽໃນຣະຫວ່າງທາງ ສັນທະເປັນອັນຍັງບໍ່ໄດ້ນຳມາ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບສັນທະແລ້ວ ຖ້າພິກສຸຜູ້ນຳສັນທະສຶກເສັຽໃນຣະຫວ່າງທາງ ຯລຯ ປຕິຍານເປັນອຸພໂຕພຍັຍຊຸນກ ສັນທະເປັນອັນຍັງບໍ່ໄດ້ນຳມາ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບສັນທະແລ້ວ ຖ້າພິກສຸຜູ້ນຳສັນທະເຂົ້າທີ່ປະຊຸມສົງຂ໌ແລ້ວຫລົບໄປ ສັນທະເປັນອັນນຳມາແລ້ວ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບສັນທະແລ້ວ ຖ້າພິກສຸຜູ້ນຳສັນທະເຂົ້າທີ່ປະຊຸມສົງຂ໌ແລ້ວ ສຶກເສັຽ ຯລຯ ປຕິຍານເປັນອຸພໂຕພຍັຍຊຸນກ ສັນທະເປັນອັນນຳມາແລ້ວ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບສັນທະແລ້ວ ຖ້າພິກສຸຜູ້ນຳສັນທະເຂົ້າທີ່ປະຊຸມສົງຂ໌ແລ້ວ ຫລັບເສັຽບໍ່ໄດ້ບອກ ເຜລອໄປບໍ່ໄດ້ບອກ ເຂົ້າສມາບັຕິບໍ່ໄດ້ບອກ ສັນທະເປັນອັນນຳມາແລ້ວ ພິກສຸຜູ້ນຳສັນທະບໍ່ຕ້ອງອາບັຕິ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບສັນທະແລ້ວ ຖ້າພິກສຸຜູ້ນຳສັນທະເຂົ້າທີ່ປະຊຸມສົງຂ໌ແລ້ວ ຈົງໃຈບໍ່ບອກ ສັນທະເປັນອັນນຳມາແລ້ວ ແຕ່ພິກສຸຜູ້ນຳສັນທະຕ້ອງອາບັຕິທຸກກະຕະ

ພິກສຸທັງຫລາຍ ໃນວັນອຸໂບສົຖ ເຮົາອນຸຍາຕໃຫ້ພິກສຸຜູ້ມອບປາຣິສຸທທິໃຫ້ມອບສັນທະດ້ວຍ ເຣື່ອງເຫລົ່ານີ້ເປັນກິຈທີ່ສົງຂ໌ຕ້ອງທຳ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໙. ຍາຕກາທິຄຫນກຖາ

໗໙. ຍາຕກາທິຄຫນກຖາ

ວ່າດ້ວຍພວກຍາຕເປັນຕົ້ນຈັບພິກສຸ

ເຣື່ອງພິກສຸຖືກພວກຍາຕເປັນຕົ້ນຈັບໄວ້

[໑໖໖] ສມັຍນັ້ນ ໃນວັນອຸໂບສົຖນັ້ນ ຫມູ່ຍາຕໄດ້ຈັບພິກສຸຮູບນຶ່ງໄວ້ ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກໍໃນທໍຣະນີນີ້ ໃນວັນອຸໂບສົຖນັ້ນ ຫມູ່ຍາຕ ໄດ້ຈັບພິກສຸໄວ້ ພິກສຸທັງຫລາຍຄວນກ່າວກັບຫມູ່ຍາຕນັ້ນຢ່າງນີ້ວ່າ 'ທ່ານທັງຫລາຍ ກຣຸນາປ່ອຍພິກສຸນີ້ໄວ້ບຶດນຶ່ງ ຈົນກວ່າພິກສຸນີ້ຈະເຮັດອຸໂບສົຖເສັດເຖິດ' ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ພິກສຸທັງຫລາຍຄວນກ່າວກັບຍາຕເຫລົ່ານັ້ນຢ່າງນີ້ວ່າ 'ທ່ານທັງຫລາຍ

ກຣຸນາຣອ ນະທີ່ສີມຄວຣບິດນຶ່ງຈິນກວ່າພິກສຸນີ້ຈະມອບປາຣິສຸທຫິ ເສັດເຖີດ' ຖ້າໄດ້ຢ່າງນັ້ນ ນັ້ນເປັນກາຣດີ ຖ້າບໍ່ໄດ້ ພິກສຸທັງຫລາຍຄວນກ່າວກັບຍາຕເຫລົ່ານັ້ນຢ່າງນີ້ວ່າ 'ທ່ານທັງຫລາຍ ກຣຸນານຳພິກສຸນີ້ໄປໄວ້ນອກສີມາບິດນຶ່ງຈິນກວ່າສົງຂ໌ຈະເຮັດອຸໂປສົຖເສັດເຖີດ' ຖ້າໄດ້ຢ່າງນັ້ນ ນັ້ນເປັນກາຣດີ ຖ້າບໍ່ໄດ້ຢ່າງນັ້ນ ສົງຂ໌ບໍ່ຄວນແບ່ງພວກກັນທຳອຸໂປສົຖ ຖ້າແບ່ງພວກກັນທຳ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນອຸໂປສົຖນັ້ນ ພຣະຣາຊາທັງຫລາຍຊິງຈັບພິກສຸໄວ້ . . . ພວກໂຈຣຈັບໄວ້ . . . ພວກນັກເລງຈັບໄວ້ . . . ພວກພິກສຸທີ່ເປັນສັຕຣູກັນຈັບໄວ້ ພິກສຸທັງຫລາຍ ຄວນກ່າວກັບພວກພິກສຸທີ່ເປັນສັຕຣູກັນນັ້ນຢ່າງນີ້ວ່າ 'ທ່ານທັງຫລາຍກຣຸນາປ່ອຍພິກສຸນີ້ໄວ້ບຶດນຶ່ງຈິນກວ່າພິກສຸນີ້ຈະເຮັດອຸໂປສົຖເສັດເຖີດ ຖ້າໄດ້ຢ່າງນັ້ນ ນັ້ນເປັນກາຣດີ ຖ້າບໍ່ໄດ້ ພິກສຸທັງຫລາຍຄວນກ່າວກັບພວກພິກສຸທີ່ເປັນສັຕຣູກັນນັ້ນຢ່າງນີ້ວ່າ "ທ່ານທັງຫລາຍ ກຣຸນາຣອ ນະທີ່ສີມຄວຣບິດນຶ່ງຈິນກວ່າພິກສຸນີ້ຈະມອບປາຣິສຸທຫິເສັດເຖີດ' ຖ້າໄດ້ຢ່າງນັ້ນ ນັ້ນເປັນກາຣດີ ຖ້າບໍ່ໄດ້ ພິກສຸທັງຫລາຍຄວນກ່າວກັບພວກພິກສຸທີ່ເປັນສັຕຣູກັນນັ້ນຢ່າງນີ້ວ່າ 'ທ່ານທັງຫລາຍ ກຣຸນານຳພິກສຸນີ້ໄປໄວ້ນອກສີມາບິດນຶ່ງຈິນກວ່າສົງຂ໌ຈະເຮັດອຸໂປສົຖເສັດເຖີດ' ຖ້າໄດ້ຢ່າງນັ້ນ ນັ້ນເປັນກາຣດີ ຖ້າບໍ່ໄດ້ຢ່າງນັ້ນ ສົງຂ໌ບໍ່ຄວນແບ່ງພວກກັນທຳອຸໂປສົຖ ຖ້າແບ່ງພວກກັນທຳ ຕ້ອງອາບັຕິທຸກກະຕະ"

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໐. ອຸມມັຕຕກສົມມຸດ

໗໐. ອຸມມັຕຕກສົມມຸດ

ວ່າດ້ວຍກາຣສົມມຸດພິກສຸວິກົລຈິຕ

[໑໘໗] ຄັ້ງນັ້ນ ພຣະຜູ້ມີພຣະພາກຣັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ພວກທ່ານຈົ່ງປະຊຸມກັນ ສົງຂ໌ມີກິຈຕ້ອງທຳ" ເມື່ອພຣະອົງຄ໌ຕຣັສຢ່າງນີ້ ພິກສຸຣູບນຶ່ງໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ "ມີພິກສຸວິກົລຈິຕຊື່ວ່າຄັຄຄະຢູ່ ພຣະພຸດທະເຈົ້າຂ້າ ພິກສຸຄັຄຄະນັ້ນມາບໍ່ໄດ້" ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ພິກສຸວິກົລຈິຕນັ້ນມີ ໔ ປະເພດ ຄື

໑. ພິກສຸວິກົລຈິຕ ຣະນຶກອຸໂປສົຖໄດ້ແດ່ ຣະນຶກບໍ່ໄດ້ແດ່ ຣະນຶກສັງຂກັມໄດ້ແດ່ ຣະນຶກບໍ່ໄດ້ແດ່ ຣະນຶກບໍ່ໄດ້ເລີຍແດ່

໔. ພິກສຸວິກົລຈິຕມາອຸໂປສົຖແດ່ ບໍ່ມາແດ່ ມາສັງຂກັມແດ່ ບໍ່ມາແດ່ ບໍ່ມາເລີຍແດ່

ພິກສຸທັງຫລາຍ ບັນດາພິກສຸວິກົລຈິຕ ໔ ປະເພດນັ້ນ ຮູບໃດທີ່ຍັງຣະນຶກອຸໂປສົຖໄດ້ແດ່ ຣະນຶກບໍ່ໄດ້

ແດ່ ຣະນຶກສັງຊກັມໄດ້ແດ່ ຣະນຶກບໍ່ໄດ້ແດ່ ມາອຸໂບສົຖແດ່ ບໍ່ມາແດ່ ມາສັງຊກັມແດ່ ບໍ່ມາແດ່ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ອຸມມັຕຕກສົມມຸດແກ່ພິກສຸວິກົລຈິຕເຫັນປານນັ້ນ

ວິທີໃຫ້ອຸມມັຕຕກສົມມຸດແລະກັມວາຈາໃຫ້ອຸມມັຕຕກສົມມຸດ

ພິກສຸທັງຫລາຍ ກໍແລຄວນໃຫ້ອຸມມັຕຕກສົມມຸດຢ່າງນີ້

ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຊ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ພິກສຸຄັຄຄະເປັນຜູ້ວິກົລຈິຕ ຣະນຶກອຸໂບສົຖໄດ້ແດ່ ຣະນຶກບໍ່ໄດ້ແດ່ ຣະນຶກສັງຊກັມໄດ້ແດ່ ຣະນຶກບໍ່ໄດ້ແດ່ ມາອຸໂບສົຖແດ່ ບໍ່ມາແດ່ ມາສັງຊກັມແດ່ ບໍ່ມາແດ່ ຖ້າສົງຊ໌ພ້ອມກັນແລ້ວ ສົງຊ໌ຄວນໃຫ້ອຸມມັຕຕກສົມມຸດແກ່ພິກສຸຄັຄຄະ ຜູ້ວິກົລຈິຕ ຄື ພິກສຸຄັຄຄະຣະນຶກອຸໂບສົຖໄດ້ແດ່ ຣະນຶກບໍ່ໄດ້ແດ່ ຣະນຶກສັງຊກັມໄດ້ແດ່ ຣະນຶກບໍ່ໄດ້ແດ່ ມາອຸໂບສົຖແດ່ ບໍ່ມາແດ່ ມາສັງຊກັມແດ່ ບໍ່ມາແດ່ ສົງຊ໌ພ້ອມພິກສຸຄັຄຄະຫລືເວັ້ນພິກສຸຄັຄຄະ ທຳອຸໂບສົຖກໍໄດ້ ທຳສັງຊກັມກໍໄດ້ ນີ້ເປັນຍັຕຕິ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໑. ສັງຊຸໂປສຖາທິປເພທ

ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ພິກສຸຄັຄຄະເປັນຜູ້ວິກົລຈິຕ ຣະນຶກອຸໂບສົຖໄດ້ແດ່ ຣະນຶກບໍ່ໄດ້ແດ່ ຣະນຶກສັງຊກັມໄດ້ແດ່ ຣະນຶກບໍ່ໄດ້ແດ່ ມາອຸໂບສົຖແດ່ ບໍ່ມາແດ່ ມາສັງຊກັມແດ່ ບໍ່ມາແດ່ ຖ້າສົງຊ໌ພ້ອມກັນແລ້ວ ສົງຊ໌ຄວນໃຫ້ອຸມມັຕຕກສົມມຸດແກ່ພິກສຸຄັຄຄະຜູ້ວິກົລຈິຕ ຄື ພິກສຸຄັຄຄະຣະນຶກອຸໂບສົຖໄດ້ແດ່ ຣະນຶກບໍ່ໄດ້ແດ່ ຣະນຶກສັງຊກັມໄດ້ແດ່ ຣະນຶກບໍ່ໄດ້ແດ່ ມາອຸໂບສົຖແດ່ ບໍ່ມາແດ່ ມາສັງຊກັມແດ່ ບໍ່ມາແດ່ ສົງຊ໌ພ້ອມພິກສຸຄັຄຄະຫລືເວັ້ນພິກສຸຄັຄຄະ ທຳອຸໂບສົຖກໍໄດ້ທຳສັງຊກັມກໍໄດ້ ທ່ານຮູບໃດເຫັນດ້ວຍກັບກາຣໃຫ້ອຸມມັຕຕກສົມມຸດແກ່ພິກສຸຄັຄຄະ

ຜູ້ວິກົລຈິຕ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງອຸມມັຕຕກສົມມຸດສົງຊ໌ໄດ້ໃຫ້ແລ້ວແກ່ພິກສຸຄັຄຄະຜູ້ວິກົລຈິຕ ຄື ພິກສຸຄັຄຄະຣະນຶກອຸໂບສົຖໄດ້ແດ່ ຣະນຶກບໍ່ໄດ້ແດ່ ຣະນຶກສັງຊກັມໄດ້ແດ່ ຣະນຶກບໍ່ໄດ້ແດ່ ມາອຸໂບສົຖແດ່ ບໍ່ມາແດ່ ມາສັງຊກັມແດ່ ບໍ່ມາແດ່ ສົງຊ໌ພ້ອມພິກສຸຄັຄຄະຫລືເວັ້ນພິກສຸຄັຄຄະ ທຳອຸໂບສົຖກໍໄດ້ ທຳສັງຊກັມກໍໄດ້ ສົງຊ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້

໓໑. ສັງຂຸໂປສຖາທີປເພທ

ວ່າດ້ວຍປະເພດແຫ່ງອຸໂປສົຖມີອຸໂປສົຖເປັນກາຣສົງຂ໌ເປັນຕົ້ນ

ເຣື້ອງພິກສຸ ໔ ຮູບ ໓ ຮູບ ໒ ຮູບ ແລະ ໑ ຮູບ
ທຳອຸໂປສົຖ ໓ ຢ່າງ ຕາມລຳດັບ

ເຣື້ອງພິກສຸ ໔ ຮູບ ຍົກປາຕິໂມກຂ໌ຂຶ້ນສະແດງ

[໑໘໗] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນອຸໂປສົຖນັ້ນ ມີພິກສຸຢູ່ດ້ວຍກັນ ໔ ຮູບ ພິກສຸເຫລົ່ານັ້ນໄດ້ມີກາຣສົນທນາກັນດັ່ງນີ້ວ່າ “ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ‘ພິກສຸຄວນທຳອຸໂປສົຖ’ ດັ່ງນີ້ ກໍພວກເຮົາມີພຽງ ໔ ຮູບ ຈະຄວນທຳອຸໂປສົຖຢ່າງໃດຫນໍ” ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸ ໔ ຮູບ ຍົກປາຕິໂມກຂ໌ຂຶ້ນສະແດງ”

ເຣື້ອງພິກສຸ ໓ ຮູບ ທຳປາຣິສຸທທິອຸໂປສົຖ

ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນອຸໂປສົຖນັ້ນ ມີພິກສຸຢູ່ດ້ວຍກັນ ໓ ຮູບ ພິກສຸເຫລົ່ານັ້ນໄດ້ມີກາຣສົນທນາກັນດັ່ງນີ້ວ່າ “ພຣະຜູ້ມີພຣະພາກຊົງອນຸຍາຕໃຫ້ພິກສຸ ໔ ຮູບ ຍົກປາຕິໂມກຂ໌ຂຶ້ນສະແດງ ກໍພວກເຮົາມີພຽງ ໓ ຮູບ ຈະຄວນທຳອຸໂປສົຖຢ່າງໃດຫນໍ” ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸ ໓ ຮູບ ທຳປາຣິສຸທທິອຸໂປສົຖ

ວິທີທຳປາຣິສຸທທິອຸໂປສົຖສຳລັບພິກສຸ ໓ ຮູບແລະກັມວາຈາ

ພິກສຸທັງຫລາຍ ກໍແລຄວນທຳປາຣິສຸທທິອຸໂປສົຖຢ່າງນີ້
ພິກສຸຜູ້ສລາດສາມາດຄວນປະກາດໃຫ້ພິກສຸທັງຫລາຍຊາບວ່າ ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ວັນນີ້ເປັນວັນອຸໂປສົຖ ໑໕ ຄ່ຳ ຖ້າທ່ານທັງຫລາຍພ້ອມກັນແລ້ວ ເຮົາທັງຫລາຍຄວນທຳປາຣິສຸທທິອຸໂປສົຖແກ່ກັນແລະກັນ ພິກສຸຜູ້ເຖຣະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມື ບອກພິກສຸເຫລົ່ານັ້ນຢ່າງນີ້ວ່າ

ຄຳບອກປາຣິສຸທທິສຳລັບພິກສຸມີພັນສາແກ່ກວ່າ

ທ່ານທັງຫລາຍ ຂະນ້ອຍເປັນຜູ້ບໍຣິສຸດທ໌ ຂໍທ່ານທັງຫລາຍຈົ່ງຈຳຂະນ້ອຍວ່າ ເປັນຜູ້ບໍຣິສຸດທ໌

ທ່ານທັງຫລາຍ ຂະນ້ອຍເປັນຜູ້ບໍຣິສຸດທິ໌ ຂໍທ່ານທັງຫລາຍຈົ່ງຈໍາຂະນ້ອຍວ່າ ເປັນຜູ້ບໍຣິສຸດທິ໌
ທ່ານທັງຫລາຍ ຂະນ້ອຍເປັນຜູ້ບໍຣິສຸດທິ໌ ຂໍທ່ານທັງຫລາຍຈົ່ງຈໍາຂະນ້ອຍວ່າ ເປັນຜູ້ບໍຣິສຸດທິ໌
ພິກສຸຜູ້ນວກະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມື ບອກພິກສຸເຫລົ່ານັ້ນຢ່າງນີ້ວ່າ

ຄໍາບອກປາຣິສຸທທິສໍາລັບພິກສຸມີພັນສາອ່ອນກວ່າ

ທ່ານຜູ້ຈະເຣີນທັງຫລາຍ ຂະນ້ອຍເປັນຜູ້ບໍຣິສຸດທິ໌ ຂະນ້ອຍ ຂໍທ່ານທັງຫລາຍຈົ່ງຈໍາຂະນ້ອຍວ່າ
ເປັນຜູ້ບໍຣິສຸດທິ໌
ທ່ານຜູ້ຈະເຣີນທັງຫລາຍ ຂະນ້ອຍເປັນຜູ້ບໍຣິສຸດທິ໌ ຂະນ້ອຍ ຂໍທ່ານທັງຫລາຍຈົ່ງຈໍາຂະນ້ອຍວ່າ
ເປັນຜູ້ບໍຣິສຸດທິ໌
ທ່ານຜູ້ຈະເຣີນທັງຫລາຍ ຂະນ້ອຍເປັນຜູ້ບໍຣິສຸດທິ໌ ຂະນ້ອຍ ຂໍທ່ານທັງຫລາຍຈົ່ງຈໍາຂະນ້ອຍວ່າ
ເປັນຜູ້ບໍຣິສຸດທິ໌"

ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸຢູ່ດ້ວຍກັນ ໔ ຮູບ ພິກສຸເຫລົ່ານັ້ນໄດ້ມີການສົນທນາກັນດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງອນຸຍາຕໃຫ້ພິກສຸ ໔ ຮູບ ຍົກປາຕິໂມກຂ໌ຂຶ້ນສະແດງໃຫ້ພິກສຸ ໓ ຮູບທໍາປາຣິສຸທທິອຸໂບສົຖ ກໍພວກເຮົາມີພຽງ ໔ ຮູບ ຈະຄວນທໍາອຸໂບສົຖ ຢ່າງໃດຫນໍ" ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸ ໔ ຮູບ ທໍາປາຣິສຸທທິອຸໂບສົຖ"

ວິທີທໍາປາຣິສຸທທິອຸໂບສົຖສໍາລັບພິກສຸ ໔ ຮູບ

ພິກສຸທັງຫລາຍ ກໍແລຄວນທໍາປາຣິສຸທທິອຸໂບສົຖຢ່າງນີ້
ພິກສຸຜູ້ເຖຣະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມືບອກພິກສຸຜູ້ນວກະຢ່າງນີ້ວ່າ

ຄໍາບອກປາຣິສຸທທິສໍາລັບພິກສຸມີພັນສາແກ່ກວ່າ

ທ່ານ ຂະນ້ອຍເປັນຜູ້ບໍຣິສຸດທິ໌ ຂໍທ່ານຈົ່ງຈໍາຂະນ້ອຍວ່າ ເປັນຜູ້ບໍຣິສຸດທິ໌
ທ່ານ ຂະນ້ອຍເປັນຜູ້ບໍຣິສຸດທິ໌ ຂໍທ່ານຈົ່ງຈໍາຂະນ້ອຍວ່າ ເປັນຜູ້ບໍຣິສຸດທິ໌
ທ່ານ ຂະນ້ອຍເປັນຜູ້ບໍຣິສຸດທິ໌ ຂໍທ່ານຈົ່ງຈໍາຂະນ້ອຍວ່າ ເປັນຜູ້ບໍຣິສຸດທິ໌
ພິກສຸຜູ້ນວກະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມື ບອກພິກສຸຜູ້ເຖຣະຢ່າງນີ້ວ່າ

ຄຳບອກປາຣິສຸທຫຼີສຳລັບພິກສຸນີພັນສາອ່ອນກວ່າ

ທ່ານຜູ້ຈະເຣີນ ຂະນ້ອຍເປັນຜູ້ບໍຣິສຸດຫຼໍ ຂໍທ່ານຈົ່ງຈຳຂະນ້ອຍວ່າ ເປັນຜູ້ບໍຣິສຸດຫຼໍ

ທ່ານຜູ້ຈະເຣີນ ຂະນ້ອຍເປັນຜູ້ບໍຣິສຸດຫຼໍ ຂໍທ່ານຈົ່ງຈຳຂະນ້ອຍວ່າ ເປັນຜູ້ບໍຣິສຸດຫຼໍ

ທ່ານຜູ້ຈະເຣີນ ຂະນ້ອຍເປັນຜູ້ບໍຣິສຸດຫຼໍ ຂໍທ່ານຈົ່ງຈຳຂະນ້ອຍວ່າ ເປັນຜູ້ບໍຣິສຸດຫຼໍ"

ເຣື້ອງພິກສຸຮູບດຽວອທິສຖານອຸໂບສົຖ

ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸຢູ່ຮູບດຽວ ພິກສຸນັ້ນມີຄວາມຄິດດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງອນຸຍາຕໃຫ້ພິກສຸ ໔ ຮູບ ຍົກປາຕິໂມກຂ໌ຂຶ້ນສະແດງໃຫ້ພິກສຸ ໓ ຮູບທຳປາຣິສຸທຫຼີອຸໂບສົຖ ໃຫ້ພິກສຸ ໒ ຮູບທຳປາຣິສຸທຫຼີອຸໂບສົຖ ກໍເຮົາຢູ່ພຽງຮູບດຽວ ຈະຄວນທຳອຸໂບສົຖຢ່າງໃດຫນໍ" ພິກສຸນັ້ນຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນມີພິກສຸຢູ່ຮູບດຽວ ພິກສຸນັ້ນຄວນກວາດສະຖານທີ່ທີ່ພິກສຸທັງຫລາຍຕ້ອງກັບມາ ຄືໂຮງສັນຫລືມນຸຫຼປ ຫລືເຫງົ້າໄມ້ກໍຕາມ ແລ້ວຕັ້ງນ້ຳສັນນ້ຳໃຊ້ ປູອາສນະ ຕາມປະທີປ ແລ້ວນັ່ງຢູ່ຖ້າມີພິກສຸເຫລົ່າອື່ນມາ ຄວນທຳອຸໂບສົຖ ກັບພິກສຸເຫລົ່ານັ້ນ ຖ້າບໍ່ມີມາ ຄວນອທິສຖານວ່າ ວັນນີ້ເປັນວັນອຸໂບສົຖຂອງເຮົາ ຖ້າບໍ່ອທິສຖານ ຕ້ອງອາບັຕິທຸກກະຕະ

ພິກສຸທັງຫລາຍ ໃນອາວາສທີ່ມີພິກສຸຢູ່ ໔ ຮູບ ບໍ່ຄວນນຳປາຣິສຸທຫຼີຂອງພິກສຸຮູບນຶ່ງມາແລ້ວ ອີກ ໓ ຮູບຍົກປາຕິໂມກຂ໌ຂຶ້ນສະແດງ ຖ້າຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ

ພິກສຸທັງຫລາຍ ໃນອາວາສທີ່ມີພິກສຸຢູ່ ໓ ຮູບ ບໍ່ຄວນນຳປາຣິສຸທຫຼີຂອງພິກສຸຮູບນຶ່ງມາແລ້ວ ອີກ ໒ ຮູບທຳປາຣິສຸທຫຼີອຸໂບສົຖ ຖ້າທຳ ຕ້ອງອາບັຕິທຸກກະຕະ

ພິກສຸທັງຫລາຍ ໃນອາວາສທີ່ມີພິກສຸຢູ່ ໒ ຮູບ ບໍ່ຄວນນຳປາຣິສຸທຫຼີຂອງພິກສຸຮູບນຶ່ງມາແລ້ວ ອີກຮູບນຶ່ງອທິສຖານ ຖ້າອທິສຖານ ຕ້ອງອາບັຕິທຸກກະຕະ"

ພຣະວິນັຍປິດົກ ມຫາວັຄ [໒. ອຸໂປສຖຂັນທກະ] ໒໔. ອາປັຕຕິປຕິກັມມວິທີ

໒໔. ອາປັຕຕິປຕິກັມມວິທີ

ວ່າດ້ວຍວິທີແກ້ໄຂອາບັຕິ

ເລື້ອງພິກສຸຕ້ອງອາບັຕິໃນວັນອຸໂປສົຖ

[໑໓໙] ສົມັຍນັ້ນ ພິກສຸຮູບນຶ່ງຕ້ອງອາບັຕິໃນວັນອຸໂປສົຖນັ້ນ ພິກສຸນັ້ນໄດ້ມີຄວາມຄິດດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ພິກສຸມີອາບັຕິຕິດຕົວບໍ່ຄວນທຳອຸໂປສົຖ ດັ່ງນີ້ ກໍເຮົາຕ້ອງອາບັຕິແລ້ວຈະຄວນປະຕິບັດຢ່າງໃດຫນໍ" ພິກສຸທັງຫລາຍຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນວັນອຸໂປສົຖນັ້ນ ພິກສຸຕ້ອງອາບັຕິ ພິກສຸນັ້ນຄວນເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງກຣະໂຫຍ່ງ ປະນົມມືກ່າວຢ່າງນີ້ວ່າ ຂະນ້ອຍຕ້ອງອາບັຕິຊື່ນີ້ ຂໍສະແດງຄືນອາບັຕິນັ້ນ ຂະນ້ອຍ ພິກສຸຜູ້ຮັບຄວນຖາມວ່າ "ທ່ານເຫັນຫລື" ພິກສຸຜູ້ສະແດງຄວນຕອບວ່າ "ຂະນ້ອຍເຫັນ"

ພິກສຸຜູ້ຮັບຄວນຖາມວ່າ "ທ່ານຄວນສຳຮວມຕໍ່ໄປ" ບໍ່ແນ່ໃຈໃນອາບັຕິ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນອຸໂປສົຖນັ້ນ ພິກສຸມີຄວາມບໍ່ແນ່ໃຈໃນອາບັຕິ ພິກສຸນັ້ນຄວນເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງກຣະໂຫຍ່ງປະນົມມືກ່າວຢ່າງນີ້ວ່າ "ຂະນ້ອຍມີຄວາມບໍ່ແນ່ໃຈໃນອາບັຕິມີຊື່ນີ້ ຂະນ້ອຍ ເມື່ອຂະນ້ອຍຫມົດຄວາມບໍ່ແນ່ໃຈ ຈະເຮັດຄືນອາບັຕິນັ້ນ" ແລ້ວທຳອຸໂປສົຖ ຟັງປາຕິໂມກຂ໌ ແຕ່ຕ້ອງບໍ່ທຳອັນຕຣາຍຕໍ່ອຸໂປສົຖ ເພາະຂໍ້ນັ້ນເປັນປັຈຈັຍ

ເລື້ອງສະແດງສະພາຄາບັຕິ

ສົມັຍນັ້ນ ພວກພິກສຸສັພພັຄຄີຍ໌ສະແດງສະພາຄາບັຕິ໑ ພິກສຸທັງຫລາຍຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ໝາຍເຫດ :

໑ ສະພາຄາບັຕິ ແປວ່າ ອາບັຕິທີ່ມີວັຕຖຸສເມີກັນ ເຊັ່ນພິກສຸ ໔ ຮູບຕ້ອງອາບັຕິປາຈິຕຕີຍ໌ ເພາະສັນໂພຊນາຫາຣໃນເວລາວິກາລເຫມືອນກັນ ອາບັຕິທີ່ພິກສຸຕ້ອງເພາະຄວາມຜິດດຽວກັນຢ່າງນີ້ ຮຽກວ່າ ສະພາຄາບັຕິ (ວິ. ອ. ໓/໑໓໙/໑໔໐)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໑໓. ອາປັຕຕິອາວິກຣນວິທີ

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນສະແດງສັພາຄາບັຕິ ຮູບໃດສະແດງ ຕ້ອງອາບັຕິທຸກກະຕະ" ສະໄໝຕໍ່ມາ ພວກພິກສຸສັພພັຄຄີຍ໌ຮັບການສະແດງສັພາຄາບັຕິ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນຮັບການສະແດງສັພາຄາບັຕິ ຮູບໃດຮັບ ຕ້ອງອາບັຕິທຸກກະຕະ"

ລ໓. ອາປັຕຕິອາວິກຣນວິທີ

ວ່າດ້ວຍວິທີເປີດເຜີຍອາບັຕິ

ເຣື້ອງຣະນຶກອາບັຕິໄດ້ເມື່ອຈະຍົກປາຕິໂມກຂ໌ຂຶ້ນສະແດງ

[໑໗໐] ສະໄໝນັ້ນ ພິກສຸຮູບນຶ່ງຣະນຶກອາບັຕິໄດ້ ເມື່ອກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ພິກສຸນັ້ນມີຄວາມຄິດດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ພິກສຸມີອາບັຕິຕິດຕົວບໍ່ຄວນທຳອຸໂບສົຖ ດັ່ງນີ້ ກໍເຮົາຕ້ອງອາບັຕິແລ້ວ ຈະຄວນປະຕິບັດຢ່າງໃດຫນໍ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ເມື່ອກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ພິກສຸຣະນຶກອາບັຕິໄດ້ ພິກສຸນັ້ນຄວນບອກພິກສຸໃກ້ຄຽງຢ່າງນີ້ວ່າ ຂະນ້ອຍຕ້ອງອາບັຕິຊື່ນີ້ ຂະນ້ອຍ ຂະນ້ອຍລຸກຈາກທີ່ນີ້ແລ້ວຈະເຮັດຄືນອາບັຕິນັ້ນ ແລ້ວທຳອຸໂບສົຖ ຟັງປາຕິໂມກຂ໌ ແຕ່ຕ້ອງບໍ່ທຳອັນຕຣາຍຕໍ່ອຸໂບສົຖ ເພາະຂໍ້ນັ້ນເປັນປັຈຈັຍ

ເມື່ອກຳລັງຍົກປາຕິໂມກຂ໌ຂຶ້ນສະແດງບໍ່ແນ່ໃຈໃນອາບັຕິ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸມີຄວາມບໍ່ແນ່ໃຈໃນອາບັຕິ ເມື່ອກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ພິກສຸນັ້ນຄວນບອກພິກສຸໃກ້ຄຽງ໑ຢ່າງນີ້ວ່າ "ຂະນ້ອຍມີຄວາມບໍ່ແນ່ໃຈໃນອາບັຕິມີຊື່ນີ້ ຂະນ້ອຍ ເມື່ອຂະນ້ອຍຫມົດຄວາມບໍ່ແນ່ໃຈຈະເຮັດຄືນອາບັຕິນັ້ນ" ແລ້ວທຳອຸໂບສົຖ ຟັງປາຕິໂມກຂ໌ ແຕ່ຕ້ອງບໍ່ທຳອັນຕຣາຍຕໍ່ອຸໂບສົຖ ເພາະຂໍ້ນັ້ນເປັນປັຈຈັຍ

ໝາຍເຫດ :

໑ ພິກສຸໃກ້ຄຽງ ຫມາຍເຖິງພິກສຸທີ່ຮັກແພງກັນ (ວິ. ອ. ໓/໑໗໐/໑໔໑)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ລ໔. ສັພາຄາປັຕຕິປຕິກັມມວິທີ

໒໔. ສູພາຄາປັດຕິປຕິກັມມວິທີ

ວ່າດ້ວຍວິທີແກ້ໄຂສູພາຄາບັດ

ເຣື້ອງສົງຊ໌ທັງຫມົດຕ້ອງສູພາຄາບັດ

[໑໗໑] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ສົງຊ໌ທັງຫມົດຕ້ອງສູພາຄາບັດ ພິກສຸເຫລົ່ານັ້ນປຶກສາກັນດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ພິກສຸບໍ່ຄວນສະແດງສູພາຄາບັດ ບໍ່ຄວນຮັບການສະແດງສູພາຄາບັດ ກໍສົງຊ໌ທັງຫມົດນີ້ຕ້ອງສູພາຄາບັດແລ້ວ ພວກເຮົາຈະຄວນປະຕິບັດຢ່າງໃດຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງໃນວັນອຸໂບສົຖນັ້ນ ສົງຊ໌ທັງຫມົດຕ້ອງສູພາຄາບັດ ພິກສຸເຫລົ່ານັ້ນຄວນສົ່ງພິກສຸຮູບນຶ່ງໄປຍັງອາວາສໃກ້ຄຽງພໍຈະກັບມາທັນໃນມື້ນັ້ນ ດ້ວຍສັ່ງວ່າ ທ່ານ ທ່ານຈົ່ງໄປທຳຄືນອາບັດນັ້ນມາເຖີດ ພວກເຮົາຈະເຮັດຄືນອາບັດໃນສຳນັກຂອງທ່ານ" ຖ້າໄດ້ຢ່າງນີ້ ນັ້ນເປັນການດີ ຖ້າບໍ່ໄດ້ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຊ໌ຊາບດ້ວຍຍັຕຕິກັມວາຈາວ່າ

ຍັຕຕິກັມວາຈາ

ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ສົງຊ໌ທັງຫມົດນີ້ຕ້ອງສູພາຄາບັດແລ້ວ ເມື່ອພົບພິກສຸຮູບອື່ນຜູ້ບໍຣິສຸດທິ໌ບໍ່ມີອາບັດ ກໍຈະເຮັດຄືນອາບັດນັ້ນໃນສຳນັກຂອງພິກສຸຮູບນັ້ນດັ່ງນີ້ ແລ້ວທຳອຸໂບສົຖ ຍົກພຣະປາຕິໂມກຂ໌ຂຶ້ນສະແດງ ແຕ່ຕ້ອງບໍ່ທຳອັນຕຣາຍຕໍ່ອຸໂບສົຖ ເພາະຂໍ້ນັ້ນເປັນປັຈຈັຍ

ສົງຊ໌ທັງຫມົດບໍ່ແນ່ໃຈໃນສູພາຄາບັດ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ສົງຊ໌ທັງຫມົດ ບໍ່ແນ່ໃຈໃນສູພາຄາບັດ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຊ໌ຊາບດ້ວຍຍັຕຕິກັມວາຈາວ່າ ຍັຕຕິກັມວາຈາ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ສົງຊ໌ທັງຫມົດນີ້ມີຄວາມບໍ່ແນ່ໃຈໃນສູພາຄາບັດ ເມື່ອຫມົດຄວາມບໍ່ແນ່ໃຈ ກໍຈະເຮັດຄືນອາບັດນັ້ນ ດັ່ງນີ້ ແລ້ວທຳອຸໂບສົຖ ຍົກພຣະປາຕິໂມກຂ໌ຂຶ້ນສະແດງ ແຕ່ຕ້ອງບໍ່ທຳອັນຕຣາຍຕໍ່ອຸໂບສົຖ ເພາະຂໍ້ນັ້ນເປັນປັຈຈັຍ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ສົງຊ໌ເຂົ້າຈຳພັນສາໃນອາວາສແຫ່ງນຶ່ງຕ້ອງສູພາຄາບັດ ພິກສຸເຫລົ່ານັ້ນຄວນສົ່ງພິກສຸຮູບນຶ່ງໄປຍັງອາວາສໃກ້ຄຽງພໍຈະກັບມາທັນໃນມື້ນັ້ນ ດ້ວຍສັ່ງວ່າ ທ່ານ ທ່ານຈົ່ງໄປທຳຄືນອາບັດນັ້ນມາເຖີດ ພວກເຮົາຈະເຮັດຄືນອາບັດ

ນັ້ນໃນສຳນັກຂອງທ່ານ ຖ້າໄດ້ຢ່າງນີ້ ນັ້ນເປັນກາຣດີ ຖ້າບໍ່ໄດ້ ຄວນສົ່ງພິກສຸຮູບນຶ່ງ ໄປຊື່ວເວລາ ໆ ອັນ ດ້ອຍສັ່ງວ່າ ທ່ານ ທ່ານຈົ່ງໄປທຳຄືນອາບັຕິນັ້ນມາເຖີດ ພວກເຮົາ ຈະເຮັດຄືນອາບັຕິນັ້ນໃນສຳນັກຂອງທ່ານ"

ເຣື້ອງບໍ່ຮູ້ຈັກຊື່ອແລະໂຄຕຣອາບັຕິ

ສມັຍນັ້ນ ໃນອາວາສແຫ່ງນຶ່ງ ສົງຄ໌ທັງຫມົດຕ້ອງສພາຄາບັຕິ ສົງຄ໌ຫມູ່ນັ້ນບໍ່ຮູ້ຈັກຊື່ແລະໂຄຕຣ໑ຂອງອາບັຕິນັ້ນ ພິກສຸຮູບອື່ນເປັນພຫູສູຕ ຊຳນານປຣິຍັຕິ ຊົງທັມ ຊົງວິນັຍ ຊົງມາຕິກາ ເປັນບັນທິຕ ສລາດ ມີປັນຍາ ມີຄວາມລະອາຍ ມີຄວາມຣະມັດຣະວັງ ໃຝ່ກາຣສຶກສາ ມາໃນອາວາສນັ້ນ ພິກສຸຮູບນຶ່ງເຂົ້າໄປຫາພິກສຸພຫູສູຕຮູບນັ້ນຮຽນຖາມວ່າ "ພິກສຸຮູບໃດເຮັດຢ່າງນີ້ແລະຢ່າງນີ້ ພິກສຸຮູບນັ້ນຕ້ອງອາບັຕິຊື່ຫຍັງ ຂະນ້ອຍ" ພິກສຸພຫູສູຕຕອບວ່າ "ທ່ານ ພິກສຸຮູບໃດເຮັດຢ່າງນີ້ແລະຢ່າງນີ້ ພິກສຸຮູບນັ້ນຕ້ອງອາບັຕິຊື່ນີ້ ທ່ານຕ້ອງອາບັຕິຊື່ນີ້ແລ້ວ ຈົ່ງທຳຄືນອາບັຕິນັ້ນເສັຽ"

ພິກສຸນັ້ນກ່າວຢ່າງນີ້ວ່າ "ບໍ່ແມ່ນແຕ່ຂະນ້ອຍຮູບດຽວເທົ່ານັ້ນທີ່ຕ້ອງອາບັຕິນີ້ ຂະນ້ອຍ ສົງຄ໌ຫມູ່ນີ້ທັງຫມົດຕ້ອງອາບັຕິນີ້" ພິກສຸພຫູສູຕນັ້ນກ່າວຢ່າງນີ້ວ່າ "ທ່ານ ພິກສຸຮູບອື່ນຕ້ອງອາບັຕິກໍຕາມ ບໍ່ຕ້ອງອາບັຕິກໍຕາມ ຈະຊ່ອຍຫຍັງທ່ານໄດ້ ທ່ານຈົ່ງອອກຈາກອາບັຕິຂອງຕົນເຖີດ"

ໝາຍເຫດ :

໑ ຫມາຍເຖິງກຸ່ມຫລືຫມວດຂອງອາບັຕິ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໔. ສພາຄາປັຕຕິປຕິກັມມວິທີ

ຕໍ່ມາ ພິກສຸນັ້ນກໍໄດ້ທຳຄືນອາບັຕິນັ້ນຕາມຄຳຂອງພິກສຸພຫູສູຕຮູບນັ້ນ ແລ້ວເຂົ້າໄປຫາພິກສຸເຫລົ່ານັ້ນຮຽນຊີ້ແຈງວ່າ "ທ່ານທັງຫລາຍ ຊາບມາວ່າ ພິກສຸຮູບໃດເຮັດຢ່າງນີ້ແລະຢ່າງນີ້ ພິກສຸຮູບນັ້ນຕ້ອງອາບັຕິຊື່ນີ້ ທ່ານທັງຫລາຍຕ້ອງອາບັຕິຊື່ນີ້ແລ້ວ ຂະນ້ອຍ ຈົ່ງທຳຄືນອາບັຕິນັ້ນເສັຽ" ພິກສຸເຫລົ່ານັ້ນບໍ່ປຣາຖນາຈະເຮັດຄືນອາບັຕິນັ້ນຕາມຄຳຂອງພິກສຸຮູບນັ້ນ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ສົງຄ໌ທັງຫມົດຕ້ອງສພາຄາບັຕິ ສົງຄ໌ຫມູ່ນັ້ນບໍ່ຮູ້ຈັກຊື່ແລະໂຄຕຣຂອງອາບັຕິນັ້ນ ພິກສຸຮູບອື່ນເປັນພຫູສູຕ ຊຳນານໃນປຣິຍັຕິ ຊົງທັມ ຊົງວິນັຍ ຊົງມາຕິກາ ເປັນບັນທິຕ ສລາດ ມີປັນຍາ ມີຄວາມລະອາຍ ມີຄວາມຣະມັດຣະວັງ ໃຝ່ກາຣສຶກສາ ມາໃນອາວາສນັ້ນ ພິກສຸຮູບນຶ່ງເຂົ້າໄປຫາພິກສຸ

ພຫູສູຕຮູບນັ້ນຮຽນຖາມວ່າ ພິກສຸຮູບໃດເຮັດຢ່າງນີ້ແລະຢ່າງນີ້ ພິກສຸຮູບນັ້ນຕ້ອງອາບັດຊື່ອຫຍັງ ຂະນ້ອຍ" ພິກສຸພຫູສູຕກ່າວຢ່າງນີ້ວ່າ "ທ່ານ ພິກສຸຮູບໃດເຮັດຢ່າງນີ້ແລະຢ່າງນີ້ ພິກສຸຮູບນັ້ນຕ້ອງອາບັດຊື່ນີ້ ທ່ານຕ້ອງອາບັດຊື່ນີ້ແລ້ວ ຈົ່ງທຳຄືນອາບັດນັ້ນເສັຽ" ພິກສຸນັ້ນກ່າວຢ່າງນີ້ວ່າ "ບໍ່ແມ່ນແຕ່ຂະນ້ອຍຮູບດຽວເທົ່ານັ້ນທີ່ຕ້ອງອາບັດນີ້ ຂະນ້ອຍ ສົງຊ໌ຫມູ່ນີ້ທັງຫມົດຕ້ອງອາບັດນີ້" ພິກສຸພຫູສູຕນັ້ນກ່າວຢ່າງນີ້ວ່າ "ທ່ານ ພິກສຸຮູບອື່ນຕ້ອງອາບັດກໍຕາມ ບໍ່ຕ້ອງ
ອາບັດກໍຕາມ ຈະຊ່ວຍຫຍັງທ່ານໄດ້ ທ່ານຈົ່ງອອກຈາກອາບັດຂອງຕົນເຖີດ" ພິກສຸທັງຫລາຍ ຖ້າພິກສຸຮູບນັ້ນໄດ້ທຳຄືນອາບັດນັ້ນຕາມຄຳຂອງພິກສຸພຫູສູຕຮູບນັ້ນ ແລ້ວເຂົ້າໄປຫາພິກສຸເຫລົ່ານັ້ນຮຽນຊີ້ແຈງວ່າ "ທ່ານທັງຫລາຍ ຊາບມາວ່າ ພິກສຸຮູບໃດເຮັດຢ່າງນີ້ແລະຢ່າງນີ້ ພິກສຸຮູບນັ້ນຕ້ອງອາບັດຊື່ນີ້ ທ່ານທັງຫລາຍຕ້ອງອາບັດຊື່ນີ້ແລ້ວ ຂະນ້ອຍ ຈົ່ງທຳຄືນອາບັດນັ້ນເສັຽ" ພິກສຸທັງຫລາຍ ຖ້າພິກສຸເຫລົ່ານັ້ນຈະຄວນທຳຄືນອາບັດນັ້ນຕາມຄຳຂອງພິກສຸຮູບນັ້ນ ຢ່າງນີ້ ນັ້ນເປັນການດີ ຖ້າບໍ່ທຳຄືນ ພິກສຸຮູບນັ້ນ ບໍ່ຄວນວ່າກ່າວພິກສຸເຫລົ່ານັ້ນຜູ້ບໍ່ປຣາຖນາຈະເຮັດຄືນ

ໂຈທນາວັຕຖຸພານວາຣ ຈົບ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໕. ອນາປັຕຕິປັນນຣສກະ

໗໕. ອນາປັຕຕິປັນນຣສກະ

ວ່າດ້ວຍການທຳອຸໂບສົຖໂດຍບໍ່ຕ້ອງອາບັຕ ໑໕ ກໍຣະນີ

[໑໗໔] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ໄດ້ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຈຶ່ງນຳເອົາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມ

ພຽງ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ບໍ່ຕ້ອງອາບັຕິ (໑) ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ

"ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນຟັງອຸທເທສທີ່ເຫລືອ ພວກພິກສຸຜູ້ຍົກຂຶ້ນສະແດງ ບໍ່ຕ້ອງອາບັຕິ (໒)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສົຖຂັນທກະ] ໗໕. ອນາປັຕຕິປັນນຣສກະ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາ ທີຫລັງຄວນຟັງອຸທເທສທີ່ເຫລືອ ພວກພິກສຸຜູ້ຍົກຂຶ້ນສະແດງ ບໍ່ຕ້ອງອາບັຕິ (໓) ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພໍພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ບໍ່ຕ້ອງອາບັຕິ (໔) ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນ

ອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທຳ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ ຂຶ້ນສະແດງຈົບ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທີໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງບໍ່ຕ້ອງອາບັຕິ (໕)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໕. ອນາປັຕຕິປັນນຣສກະ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນທຳມະນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທຳ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທີໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ບໍ່ຕ້ອງອາບັຕິ (໖)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນທຳມະນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທຳ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ບໍ່ຕ້ອງອາບັຕິ (໗)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນທຳມະນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນ

ອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສໍາຄັນວ່າເປັນຫຼັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສໍາຄັນວ່າເປັນຜູ້ພ້ອມພຽງ ທໍາອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສ ພວກອື່ນມາເຖິງ ມີຈໍານວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທຫຼີໃນສໍານັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງບໍ່ຕ້ອງອາບັຕິ (໘)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໗໕. ອນາປັຕຕິປັນນຣສກະ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສໍາຄັນວ່າເປັນຫຼັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສໍາຄັນວ່າເປັນຜູ້ພ້ອມພຽງ ທໍາອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທຫຼີໃນສໍານັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງບໍ່ຕ້ອງອາບັຕິ (໙)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສໍາຄັນວ່າເປັນຫຼັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສໍາຄັນວ່າເປັນຜູ້ພ້ອມພຽງ ທໍາອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ບໍ່ຕ້ອງອາບັຕິ (໑໐)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສໍາຄັນວ່າເປັນຫຼັມ ເປັນວິນັຍ ຍັງແບ່ງພວກ

ກັນຢູ່ ແຕ່ສໍາຄັນວ່າເປັນຜູ້ພ້ອມພຽງ ທໍາອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນແດ່ບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສ ພວກອື່ນມາເຖິງ ມີຈໍານວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສໍານັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງບໍ່ຕ້ອງອາບັຕິ (໑໑)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໘໕. ອນາປັຕຕິປັນນຣສກະ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສໍາຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສໍາຄັນວ່າເປັນຜູ້ພ້ອມພຽງ ທໍາອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນແດ່ບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສ ພວກອື່ນມາເຖິງ ມີຈໍານວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນ ຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສໍານັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງບໍ່ຕ້ອງອາບັຕິ (໑໔)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສໍາຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສໍາຄັນວ່າເປັນຜູ້ພ້ອມພຽງ ທໍາອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ບໍ່ຕ້ອງອາບັຕິ (໑໓)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສໍາຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສໍາຄັນວ່າເປັນຜູ້ພ້ອມພຽງ ທໍາອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກ

ປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງບໍ່ຕ້ອງອາບັຕິ (໑໔)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ລຝ. ວັຄຄາວັຄຄສັຍຍີປັນນຣສກະ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພໍພິກສຸເຫລົ່ານັ້ນ ຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງບໍ່ຕ້ອງອາບັຕິ (໑໕)

ອນາປັຕຕິປັນນຣສກະ ຈົບ

ລຝ. ວັຄຄາວັຄຄສັຍຍີປັນນຣສກະ

ວ່າດ້ວຍແບ່ງພວກກັນຢູ່ແລະສຳຄັນວ່າແບ່ງພວກກັນ ໑໕ ກໍຣະນີ

[໑໗໙] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ຍັງບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ແບ່ງພວກກັນຢູ່ ແລະສຳຄັນວ່າເປັນຜູ້ແບ່ງພວກກັນ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໑)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ແບ່ງພວກກັນຢູ່ ແລະສຳຄັນວ່າເປັນຜູ້ແບ່ງພວກກັນ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນຟັງອຸທເທສທີ່ເຫລືອ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໒)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ແບ່ງພວກກັນຢູ່ ແລະສຳຄັນວ່າເປັນຜູ້ແບ່ງພວກກັນ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນຟັງອຸທເທສທີ່ເຫລືອ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໓)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ຍັງບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ແບ່ງພວກກັນຢູ່ ແລະສຳຄັນວ່າເປັນຜູ້ແບ່ງພວກກັນ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພໍພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໔)

. . . ພໍພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງຕ້ອງອາບັຕິທຸກກະຕະ (໕)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໘)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ແບ່ງພວກກັນຢູ່ ແລະສຳຄັນວ່າເປັນຜູ້ແບ່ງພວກກັນ ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນ ຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໗)

. . . ພໍພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທີໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໘)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໙)

. . . ພໍພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ . . . (໑໐)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທີໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໑໑)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໒)

. . . ພໍພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໓)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໔)
. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໕)

ວັຄຄາວັຄຄສັ໌ຢຢີປັນນຣສກະ ຈົບ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໑໗. ເວມຕິກປັນນຣສກະ

໑໗. ເວມຕິກປັນນຣສກະ

ວ່າດ້ວຍພິກສຸບໍ່ແນ່ໃຈທຳອຸໂບສົຖ ໑໕ ກໍຣະນີ

[໑໗໔] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ບໍ່ແນ່ໃຈວ່າ "ພວກເຮົາຄວຣທຳອຸໂບສົຖຫລືບໍ່ຄວຣທຳ" ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງຕ້ອງອາບັຕິທຸກກະຕະ (໑)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ບໍ່ແນ່ໃຈວ່າ "ພວກເຮົາຄວຣທຳອຸໂບສົຖຫລືບໍ່ຄວຣທຳ" ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນຟັງອຸທເທສທີ່ເຫລືອ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໔)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ບໍ່ແນ່ໃຈວ່າ "ພວກເຮົາຄວຣທຳອຸໂບສົຖຫລືບໍ່ຄວຣທຳ" ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນຟັງອຸທເທສທີ່ເຫລືອ ພວກ

ພິກຂຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (๓)

ພິກຂຸທັງຫລາຍ ອີກຢ່າງນຶ່ງ ໃນທຳມະນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກຂຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກຂຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກຂຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ບໍ່ແນ່ໃຈວ່າ "ພວກເຮົາຄວຣທຳອຸໂບສົຖຫລືບໍ່ຄວຣທຳ" ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກຂຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກຂຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກຂຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໔)

. . . ພໍພິກຂຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສ ພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກຂຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກຂຸຜູ້ມາທີຫລັງຄວນບອກປາຣິສຸທຫຼືໃນສຳນັກຂອງພິກຂຸເຫລົ່ານັ້ນ ພວກພິກຂຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໕)

. . . ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໖)

ພິກຂຸທັງຫລາຍ ອີກຢ່າງນຶ່ງ ໃນທຳມະນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກຂຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກຂຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກຂຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ບໍ່ແນ່ໃຈວ່າ "ພວກເຮົາຄວຣທຳອຸໂບສົຖຫລືບໍ່ຄວຣທຳ" ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກຂຸເຫລົ່ານັ້ນຍົກປາຕິໂມກຂ໌ ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈຳນວນຫລາຍກວ່າ ພິກຂຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກຂຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໗)

. . . ພອພິກຂຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກຂຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກຂຸຜູ້ມາທີຫລັງຄວນບອກປາຣິສຸທຫຼືໃນສຳນັກຂອງພິກຂຸເຫລົ່ານັ້ນ ພວກພິກຂຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໘)

. . . ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໙)

. . . ພອພິກຂຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໐)

. . . ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໑)

. . . ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໒)

. . . ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໓)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໔)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໕)

ເວມຕິກປັນນຣສກະ ຈົບ

ລ໗. ກຸກກຸຈຈປກຕປັນນຣສກະ

ວ່າດ້ວຍພິກສຸກັງວົລໃຈທຳອຸໂບສົຖ ໑໕ ກໍຣະນີ

[໑໗໕] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ກັງວົລໃຈທຳອຸໂບສົຖຍົກປາຕິໂມກຂ໌ຂຶ້ນສະແດງດ້ວຍຄິດວ່າ "ພວກເຮົາຄວຣທຳອຸໂບສົຖແທ້ ບໍ່ແມ່ນບໍ່ຄວຣທຳ" ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໑)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ກັງວົລໃຈທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງດ້ວຍຄິດວ່າ "ພວກເຮົາຄວຣທຳອຸໂບສົຖແທ້ ບໍ່ແມ່ນບໍ່ຄວຣທຳ" ເມື່ອພິກສຸເຫລົ່ານັ້ນ ກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນຟັງອຸທເທສທີ່ເຫລືອ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໒)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ກັງວົລໃຈທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງດ້ວຍຄິດວ່າ "ພວກເຮົາຄວຣທຳອຸໂບສົຖແທ້ ບໍ່ແມ່ນບໍ່ຄວຣທຳ" ເມື່ອພິກສຸເຫລົ່ານັ້ນ ກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸ

ເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນຟັງອຸທເທສທີ່ເຫລືອ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໓)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ກັງວົລໃຈທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງດ້ວຍຄິດວ່າ "ພວກເຮົາຄວຣທຳອຸໂບສົຖແທ້ ບໍ່ແມ່ນບໍ່ຄວຣທຳ" ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໔)

. . . ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໕)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໖)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ກັງວົລໃຈທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງດ້ວຍຄິດວ່າ "ພວກເຮົາຄວຣທຳອຸໂບສົຖແທ້ ບໍ່ແມ່ນບໍ່ຄວຣທຳ" ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໗)

. . . ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ (໘)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໙)

. . . ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໐)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໑)
. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໒)
. . . ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໓)
. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໔)
. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໕)

ກຸກກຸຈຈປກຕປັນນຣສກະ ຈົບ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ລລ. ເພທປຸເຣກຂາຣປັນນຣສກະ

ລລ. ເພທປຸເຣກຂາຣປັນນຣສກະ
ວ່າດ້ວຍມຸ່ງທຳຄວາມແຕກແຫງທຳອຸໂບສຖ ໑໕ ກໍຣະນີ

[໑໗໘] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສຖນັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ “ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່” ແຕ່ມຸ່ງຄວາມແຕກແຫງວ່າ “ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ” ທຳອຸໂບສຖຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໑)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ “ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່” ແຕ່ມຸ່ງຄວາມແຕກແຫງວ່າ “ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ” ທຳອຸໂບສຖຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນຟັງອຸທເທສທີ່ເຫລືອ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໒)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸ ເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖຍົກປາຕິໂມກຂ໌ຂຶ້ນສະແດງ ເມື່ອພິກສຸເຫລົ່ານັ້ນກຳລັງຍົກປາຕິໂມກຂ໌ຂຶ້ນສະແດງ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນຟັງອຸທເທສທີ່ເຫລືອ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໓)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໔)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທຫຼິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໕)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ

ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໘)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພວພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງຕ້ອງອາບັຕິຖຸລລັຈຈັຍ (໗)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖຍົກປາຕິໂມກຂ໌ຂຶ້ນສະແດງ ພວພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໗)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖຍົກປາຕິໂມກຂ໌ຂຶ້ນສະແດງ ພວພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໙)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນ

ອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖຍົກປາຕິໂມກຂ໌ຂຶ້ນສະແດງ ພໍພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນ ຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໑໐)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖຍົກປາຕິໂມກຂ໌ຂຶ້ນສະແດງ ພໍພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນແດ່ບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທຫີໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໑໑)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖຍົກປາຕິໂມກຂ໌ຂຶ້ນສະແດງ ພໍພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນແດ່ບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທຫີໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິຖຸລລັຈຈັຍ (໑໒)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖຍົກປາຕິໂມກຂ໌ຂຶ້ນສະແດງ ພໍພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີ

ຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນຍົກປາຕິໂມກຂ໌ຂຶ້ນສະແດງໃຫມ່ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸລລັຈຈັຍ (໑໓)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນ ຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງ ຄວນບອກປາຣິສຸທທິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸລລັຈຈັຍ (໑໔)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂບສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໔ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖ ຍົກປາຕິໂມກຂ໌ຂຶ້ນສະແດງ ພອພິກສຸເຫລົ່ານັ້ນຍົກປາຕິໂມກຂ໌ຂຶ້ນສະແດງຈົບ ເມື່ອບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ພິກສຸເຫລົ່ານັ້ນຍົກຂຶ້ນສະແດງແລ້ວ ເປັນອັນຍົກຂຶ້ນສະແດງດີແລ້ວ ພວກພິກສຸຜູ້ມາທີຫລັງຄວນບອກປາຣິສຸທທິໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍົກຂຶ້ນສະແດງ ຕ້ອງອາບັຕິທຸລລັຈຈັຍ (໑໕)

ເພທປຸເຣກຂາຣປັນນຣສກະ ຈົບ
ປັຍຈວິສຕິຕິກະ ຈົບ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສົຖຂັນທກະ] ໑໐໐. ສີໂມກກັນຕິກເປຍຍາລ

໑໐໐. ສີໂມກກັນຕິກເປຍຍາລ

ວ່າດ້ວຍການລະຂໍ້ຄວາມກ່ຽວກັບພິກສຸເຂົ້າສູ່ສີມາ

ເປຍຍາລມຸຂ ໗໐໐ ຕິກະ

[໑໗໗] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນອຸໂປສົຖນັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຣູບ

໑. ປະຊຸມກັນ ໔ ຣູບແດ່ ເກີນກວ່າແດ່

໒. ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ມີພິກສຸທີ່ຢູ່ໃນອາວາສພວກອື່ນກຳລັງເຂົ້າມາພາຍໃນສີມາ . . . "

໓. . . . ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ມີພິກສຸທີ່ຢູ່ໃນອາວາສພວກອື່ນເຂົ້າມາພາຍໃນສີມາແລ້ວ . . . "

໔. . . . ພິກສຸເຫລົ່ານັ້ນບໍ່ເຫັນພິກສຸທີ່ຢູ່ໃນອາວາສພວກອື່ນກຳລັງເຂົ້າມາພາຍໃນສີມາ . . .

໕. . . . ພິກສຸເຫລົ່ານັ້ນບໍ່ເຫັນພິກສຸທີ່ຢູ່ໃນອາວາສພວກອື່ນເຂົ້າມາພາຍໃນສີມາແລ້ວ . . .

໖. . . ພິກສຸເຫລົ່ານັ້ນບໍ່ໄດ້ຍິນວ່າ "ພິກສຸທີ່ຢູ່ໃນອາວາສພວກອື່ນກຳລັງເຂົ້າມາພາຍໃນສີມາ . . "

໗. . . . ພິກສຸເຫລົ່ານັ້ນບໍ່ໄດ້ຍິນວ່າ "ພິກສຸທີ່ຢູ່ໃນອາວາສພວກອື່ນເຂົ້າມາພາຍໃນສີມາແລ້ວ. . "

ໂດຍນັຍ ໑໗໕ ຕິກະ

໑. ພິກສຸທີ່ຢູ່ໃນອາວາສກັບພິກສຸທີ່ຢູ່ໃນອາວາສ

໒. ພິກສຸອາຄັນຕຸກະກັບພິກສຸທີ່ຢູ່ໃນອາວາສ

໓. ພິກສຸທີ່ຢູ່ໃນອາວາສກັບພິກສຸອາຄັນຕຸກະ

໔. ພິກສຸອາຄັນຕຸກະກັບພິກສຸອາຄັນຕຸກະ

ຣວມເປັນ ໗໐໐ ຕິກະ ໂດຍເປຍຍາລມຸຂ໑

ໝາຍເຫດ :

໑ ນຳເລຂ ໗ ຄື ພິກສຸປະຊຸມກັນ ໔ ຣູບແດ່ ເກີນກວ່າແດ່ເປັນຕົ້ນໄປຄູນະ ໒໕ ຕິກະ ໃນຂໍ້ ໑໗໖ ເທົ່າກັບ ໑໗໕ ຕິກະ ແລ້ວນຳເລຂ ໔ ຄື ພິກສຸທີ່ຢູ່ໃນອາວາສກັບພິກສຸທີ່ຢູ່ໃນອາວາສເປັນຕົ້ນໄປ ຄູນະ ໑໗໕ ຕິກະ ເທົ່າກັບ ໗໐໐ ຕິກະ

ພຣະວິນັຍປິດົກ ມຫາວັຄ [໒. ອຸໂປສຖຂັນທກະ] ໑໐໐. ສີໂມກກັນຕິກເປຍຍາລ

[໑໗໘] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ວັນອຸໂປສົຖຂອງພວກພິກສຸທີ່ຢູ່ໃນອາວາສເປັນວັນ ໑໔ ຄ່ຳ ຂອງພວກພິກສຸອາຄັນຕຸກະເປັນວັນ ໑໕ ຄ່ຳ ຖ້າພວກພິກສຸທີ່ຢູ່ໃນອາວາສ ມີຈຳນວນຫລາຍກວ່າ ພວກພິກສຸອາຄັນຕຸກະຄວນອນຸວັຕຕາມພວກພິກສຸທີ່ຢູ່ໃນອາວາສ ຖ້າມີຈຳນວນເທົ່າກັນ ພວກພິກສຸ

ອາຄັນຕຸກະ ຄວນອນຸວັຕຕາມພວກພິກສຸທີ່ຢູ່ໃນອາວາສ ຖ້າພວກພິກສຸອາຄັນຕຸກະມີຈຳນວນຫລາຍກວ່າ ພວກພິກສຸທີ່ຢູ່ໃນອາວາສຄວນອນຸວັຕຕາມພວກພິກສຸອາຄັນຕຸກະ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ວັນອຸໂບສົຖຂອງພວກພິກສຸທີ່ຢູ່ໃນອາວາສເປັນວັນ ໑໕ ຄ່ຳ ຂອງພວກພິກສຸອາຄັນຕຸກະເປັນວັນ ໑໔ ຄ່ຳ ຖ້າພວກພິກສຸທີ່ຢູ່ໃນອາວາສມີຈຳນວນຫລາຍກວ່າ ພວກພິກສຸອາຄັນຕຸກະຄວນອນຸວັຕຕາມພວກພິກສຸທີ່ຢູ່ໃນອາວາສ ຖ້າມີຈຳນວນເທົ່າກັນ ພວກພິກສຸອາຄັນຕຸກະຄວນອນຸວັຕຕາມພວກພິກສຸທີ່ຢູ່ໃນອາວາສ ຖ້າພວກພິກສຸອາຄັນຕຸກະມີຈຳນວນຫລາຍກວ່າ ພວກພິກສຸທີ່ຢູ່ໃນອາວາສຄວນອນຸວັຕຕາມພວກພິກສຸອາຄັນຕຸກະ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ວັນອຸໂບສົຖຂອງພວກພິກສຸທີ່ຢູ່ໃນອາວາສເປັນວັນ ໑ ຄ່ຳ ຂອງພວກພິກສຸອາຄັນຕຸກະເປັນວັນ ໑໕ ຄ່ຳ ຖ້າພວກພິກສຸທີ່ຢູ່ໃນອາວາສມີຈຳນວນຫລາຍກວ່າ ພວກພິກສຸທີ່ຢູ່ໃນອາວາສບໍ່ປຣາຖນາ ກໍບໍ່ຄວນໃຫ້ຄວາມພ້ອມພຽງແກ່ພວກພິກສຸອາຄັນຕຸກະ ພວກພິກສຸອາຄັນຕຸກະຄວນໄປນອກສີມາທຳອຸໂບສົຖເຖີດ ຖ້າມີຈຳນວນເທົ່າກັນ ພວກພິກສຸທີ່ຢູ່ໃນອາວາສບໍ່ປຣາຖນາກໍບໍ່ຄວນໃຫ້ຄວາມພ້ອມພຽງແກ່ພວກພິກສຸອາຄັນຕຸກະ ພວກພິກສຸອາຄັນຕຸກະຄວນໄປນອກສີມາທຳອຸໂບສົຖເຖີດ ຖ້າພວກພິກສຸອາຄັນຕຸກະມີຈຳນວນຫລາຍກວ່າ ພວກພິກສຸທີ່ຢູ່ໃນອາວາສຄວນໃຫ້ຄວາມພ້ອມພຽງແກ່ພວກພິກສຸອາຄັນຕຸກະຫລືໄປນອກສີມາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ວັນອຸໂບສົຖຂອງພວກພິກສຸທີ່ຢູ່ໃນອາວາສເປັນວັນ ໑໕ ຄ່ຳ ຂອງພວກພິກສຸອາຄັນຕຸກະເປັນວັນ ໑ ຄ່ຳ ຖ້າພວກພິກສຸທີ່ຢູ່ໃນອາວາສມີຈຳນວນຫລາຍກວ່າ ພວກພິກສຸອາຄັນຕຸກະ ຄວນໃຫ້ຄວາມພ້ອມພຽງແກ່ພິກສຸທີ່ຢູ່ໃນອາວາສ ຫລືໄປນອກສີມາ ຖ້າມີຈຳນວນເທົ່າກັນ ພວກພິກສຸອາຄັນຕຸກະຄວນໃຫ້ຄວາມພ້ອມພຽງແກ່ພິກສຸທີ່ຢູ່ໃນອາວາສຫລືໄປນອກສີມາ ຖ້າພວກພິກສຸອາຄັນຕຸກະມີຈຳນວນຫລາຍກວ່າ ພວກພິກສຸອາຄັນຕຸກະບໍ່ປຣາຖນາກໍບໍ່ຄວນໃຫ້ຄວາມພ້ອມພຽງແກ່ພວກພິກສຸທີ່ຢູ່ໃນອາວາສ ພວກພິກສຸທີ່ຢູ່ໃນອາວາສຄວນໄປນອກສີມາທຳອຸໂບສົຖເຖີດ

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສົຖຂັນທກະ] ໑໐໑. ລິງຄາທິທັສສນະ

໑໐໑. ລິງຄາທິທັສສນະ

ວ່າດ້ວຍການເຫັນລັກສນະເປັນຕົ້ນ

[໑໗໙] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພວກພິກສຸອາຄັນຕຸກະໄດ້ເຫັນອາການຂອງພິກສຸທີ່ຢູ່ໃນອາວາສ໑ ລັກສນະຂອງພິກສຸທີ່ຢູ່ໃນອາວາສ໒ ເຄື່ອງຫມາຍຂອງພິກສຸທີ່ຢູ່ໃນອາວາສ໓ ສີ່ງສໍ່ສະແດງພິກສຸທີ່ຢູ່ໃນອາວາສ໔ຂອງພວກພິກສຸທີ່ຢູ່ໃນອາວາສ ຕຽງ ຕັ່ງ ເສື່ອ ຫມອນ ນ້ຳສັນ ນ້ຳໃຊ້ ຈັດໄວ້ດີ ບໍຣິເວນກວາດສະອາດ ຄັນແລ້ວ ບໍ່ແນ່ໃຈວ່າ "ມີພວກພິກສຸທີ່ຢູ່ໃນອາວາສຢູ່ຫລືບໍ່ມີຫນໍ" ພິກສຸເຫລົ່ານັ້ນບໍ່ແນ່ໃຈແຕ່ບໍ່ຄົ້ນຫາ ທຳອຸໂບສົຖ ຕ້ອງອາບັຕິທຸກກະຕະ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາ ແຕ່ບໍ່ພົບ ທຳອຸໂບສົຖ ບໍ່ຕ້ອງອາບັຕິ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ທຳອຸໂບສົຖຮ່ວມກັນ ບໍ່ຕ້ອງອາບັຕິ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ແຍກກັນທຳອຸໂບສົຖ ຕ້ອງອາບັຕິທຸກກະຕະ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖ ຕ້ອງອາບັຕິຖຸລລັຈຈັຍ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸອາຄັນຕຸກະໄດ້ຍິນອາການຂອງພິກສຸທີ່ຢູ່ໃນອາວາສ ລັກສນະຂອງພິກສຸທີ່ຢູ່ໃນອາວາສ ເຄື່ອງຫມາຍຂອງພິກສຸທີ່ຢູ່ໃນອາວາສ ສີ່ງສໍ່ສະແດງພິກສຸທີ່ຢູ່ໃນອາວາສຂອງພວກພິກສຸທີ່ຢູ່ໃນອາວາສ ໄດ້ຍິນສຽງຕີນຂອງພວກພິກສຸທີ່ຢູ່ໃນອາວາສກຳລັງຈົງກົມ ສຽງສາທຍາຍ ສຽງໄອ ສຽງຈາມ ຄັນແລ້ວ ບໍ່ແນ່ໃຈວ່າ "ມີພວກພິກສຸທີ່ຢູ່ໃນອາວາສຢູ່ຫລືບໍ່ມີຫນໍ"

ໝາຍເຫດ :

໑ ອາການ ຫມາຍເຖິງອາຈາຣສັນຖານ ຄືມີອາຈາຣະ ຊຶ່ງເຮັດໃຫ້ຮູ້ວ່າມີຂ້ອວັດຣຫມັ້ນຄົງ ເຊັ່ນ ຈັດເຄື່ອງເສນາສນະມີຕຽງຕັ່ງເປັນຕົ້ນໄວ້ຮຽບຮ້ອຍດີ

໒ ລິງຄ໌ ຫມາຍເຖິງເຄື່ອງເສນາສນະມີຕຽງຕັ່ງເປັນຕົ້ນທີ່ຈັດໄວ້ຮຽບຮ້ອຍດີ ຊຶ່ງເຮັດໃຫ້ຮູ້ວ່າ ມີພິກສຸຫລືກຫລິບຢູ່ ແມ່ນຈະບໍ່ປາກົດກາຍໃຫ້ເຫັນກໍຕາມ

໓ ນິມິຕ ຫມາຍເຖິງເຄື່ອງເສນາສນະມີຕຽງຕັ່ງເປັນຕົ້ນທີ່ຈັດໄວ້ຮຽບຮ້ອຍດີ ຊຶ່ງພໍເຫັນແລ້ວເປັນເຫຕຸໃຫ້ກຳຫນົດຮູ້ໄດ້ວ່າ "ມີພິກສຸທັງຫລາຍຢູ່"

໔ ອຸທເທສ ຫມາຍເຖິງເຄື່ອງເສນາສນະມີຕຽງຕັ່ງເປັນຕົ້ນທີ່ຈັດໄວ້ຮຽບຮ້ອຍດີ ຊຶ່ງເປັນເຫຕຸໃຫ້

ອ້າງໄດ້ວ່າ "ພິກສຸເຫລົ່ານັ້ນ ມີບໍຣິຂານຢ່າງນີ້" (ວິ. ອ. ໓/໑໑໙/໑໔໔, ສາຣຕ຺ຖ. ຕີກາ ໓/໑໑໙/ ໓໔໐, ປາຈິຕິຍາທິໂຍຊນາ ໑໑໙/໓໑໓ ມ.)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໑໐໑. ລິງຄາທິທັສສນະ

ພິກສຸເຫລົ່ານັ້ນບໍ່ແນ່ໃຈແຕ່ບໍ່ຄົ້ນຫາ ທຳອຸໂບສົຖ ຕ້ອງອາບັຕິທຸກກະຕະ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາ ແຕ່ບໍ່ພົບ ທຳອຸໂບສົຖ ບໍ່ຕ້ອງອາບັຕິ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ທຳອຸໂບສົຖຮ່ວມກັນ ບໍ່ຕ້ອງອາບັຕິ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ແຍກກັນທຳອຸໂບສົຖ ຕ້ອງອາບັຕິທຸກກະຕະ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖ ຕ້ອງອາບັຕິຖຸລລັຈຈັຍ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸທີ່ຢູ່ໃນອາວາສໄດ້ເຫັນອາກາຣຂອງພວກພິກສຸ ອາຄັນຕຸກະ ລັກສນະຂອງພວກພິກສຸອາຄັນຕຸກະ ເຄື່ອງຫມາຍຂອງພວກພິກສຸ ອາຄັນຕຸກະ ສິ່ງສໍ່ສະ ແດງພວກພິກສຸອາຄັນຕຸກະຂອງພວກພິກສຸອາຄັນຕຸກະ ໄດ້ເຫັນບາຕຣ ຈີວອນ ຜ້ານິສີທນະ ຣອຍນ້ຳ ລ້າງຕີນອັນເປັນຂອງພິກສຸພວກອື່ນ ຄັນແລ້ວ ບໍ່ແນ່ໃຈວ່າ "ມີພວກພິກສຸອາຄັນຕຸກະຢູ່ຫລືບໍ່ມີຫນໍ"
ພິກສຸເຫລົ່ານັ້ນບໍ່ແນ່ໃຈແຕ່ບໍ່ຄົ້ນຫາ ທຳອຸໂບສົຖ ຕ້ອງອາບັຕິທຸກກະຕະ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາ ແຕ່ບໍ່ພົບ ທຳອຸໂບສົຖ ບໍ່ຕ້ອງອາບັຕິ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ທຳອຸໂບສົຖຮ່ວມກັນ ບໍ່ຕ້ອງອາບັຕິ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ແຍກກັນທຳອຸໂບສົຖ ຕ້ອງອາບັຕິທຸກກະຕະ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນ ຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂບສົຖ ຕ້ອງອາບັຕິຖຸລລັຈຈັຍ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸທີ່ຢູ່ໃນອາວາສໄດ້ຍິນອາກາຣຂອງພວກພິກສຸ ອາຄັນຕຸກະ ລັກສນະຂອງພວກພິກສຸອາຄັນຕຸກະ ເຄື່ອງຫມາຍຂອງພວກພິກສຸອາຄັນຕຸກະ ສິ່ງສໍ່ສະ ແດງພວກພິກສຸອາຄັນຕຸກະຂອງພວກພິກສຸອາຄັນຕຸກະ ໄດ້ຍິນສຽງຕີນຂອງພວກພິກສຸອາຄັນຕຸກະ ກຳລັງຍ່າງມາ ສຽງເກີບຕໍາພື້ນ ສຽງໄອ ສຽງຈາມ ຄັນແລ້ວ ບໍ່ແນ່ໃຈວ່າ "ມີພວກພິກສຸອາຄັນຕຸກະ ຢູ່ຫລືບໍ່ມີຫນໍ"

ພິກສຸເຫລົ່ານັ້ນບໍ່ແນ່ໃຈແຕ່ບໍ່ຄົ້ນຫາ ທຳອຸໂປສົຖ ຕ້ອງອາບັຕິທຸກກະຕະ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາ ແຕ່ບໍ່ພົບ ທຳອຸໂປສົຖ ບໍ່ຕ້ອງອາບັຕິ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ທຳອຸໂປສົຖຮ່ວມກັນ ບໍ່ຕ້ອງອາບັຕິ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ແຍກກັນທຳອຸໂປສົຖ ຕ້ອງອາບັຕິທຸກກະຕະ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ທຳອຸໂປສົຖ ຕ້ອງອາບັຕິຖຸລລັຈຈັຍ

໑໐໔. ນານາສັງວາສກາທິອຸໂປສຖກຣນະ

ວ່າດ້ວຍພິກສຸເປັນນານາສັງວາສເປັນຕົ້ນທຳອຸໂປສົຖ

[໑໗໐] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພວກພິກສຸອາຄັນຕຸກະເຫັນພວກພິກສຸທີ່ຢູ່ໃນອາວາສຜູ້ເປັນນານາສັງວາສ[1]ເຂົ້າໃຈວ່າເປັນສະມານສັງວາສ ບໍ່ໄຕ່ຖາມ ທຳອຸໂປສົຖຮ່ວມກັນ ບໍ່ຕ້ອງອາບັຕິ
ພິກສຸອາຄັນຕຸກະເຫລົ່ານັ້ນໄຕ່ຖາມແລ້ວບໍ່ກຽດຊັງ ທຳອຸໂປສົຖຮ່ວມກັນ ຕ້ອງອາບັຕິທຸກກະຕະ
ພິກສຸອາຄັນຕຸກະເຫລົ່ານັ້ນໄຕ່ຖາມແລ້ວບໍ່ກຽດຊັງ ແຍກກັນທຳອຸໂປສົຖ ບໍ່ຕ້ອງອາບັຕິ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸອາຄັນຕຸກະເຫັນພວກພິກສຸທີ່ຢູ່ໃນອາວາສຜູ້ເປັນສະມານສັງວາສ ເຂົ້າໃຈວ່າເປັນນານາສັງວາສ ບໍ່ໄຕ່ຖາມ ທຳອຸໂປສົຖຮ່ວມກັນ ຕ້ອງອາບັຕິທຸກກະຕະ
ພິກສຸອາຄັນຕຸກະເຫລົ່ານັ້ນໄຕ່ຖາມແລ້ວກຽດຊັງ ແຍກກັນທຳອຸໂປສົຖ ຕ້ອງອາບັຕິທຸກກະຕະ
ພິກສຸອາຄັນຕຸກະເຫລົ່ານັ້ນໄຕ່ຖາມແລ້ວກຽດຊັງ ທຳອຸໂປສົຖຮ່ວມກັນ ບໍ່ຕ້ອງອາບັຕິ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸທີ່ຢູ່ໃນອາວາສເຫັນພວກພິກສຸອາຄັນຕຸກະຜູ້ເປັນນານາສັງວາສ ເຂົ້າໃຈວ່າເປັນສະມານສັງວາສ ບໍ່ໄຕ່ຖາມ ທຳອຸໂປສົຖຮ່ວມກັນ ບໍ່ຕ້ອງອາບັຕິ

ໝາຍເຫດ :

໑ ພິກສຸຜູ້ເປັນນານາສັງວາສຄືມີສັງວາສຕ່າງກັນຫລືຕ່າງພວກກັນ ມີ ໔ ກຸ່ມ ຄື ເປັນນານາສັງວາສເພາະລັທທິ ເຊັ່ນປະພຶດຕາມພິກສຸທີ່ຖືກສົງຂ໌ລົງອຸກເຂປນີຍກັມແລະເປັນນານາສັງວາສເພາະກັມເຊັ່ນຖືກລົງອຸກເຂປນີຍກັມເປັນຕົ້ນ (ວິ. ອ. ໓/໔໔໙/໕໑໗, ສາຣຕຖ. ຕີກາ ໓/໓໗໐/໔໑໖)

ພິກສຸທີ່ຢູ່ໃນອາວາສເຫລົ່ານັ້ນໄຕ່ຖາມແລ້ວບໍ່ກຽດຊັງ ທຳອຸໂປສົຖຮ່ວມກັນ ຕ້ອງອາບັຕິທຸກກະຕະ
ພິກສຸທີ່ຢູ່ໃນອາວາສເຫລົ່ານັ້ນໄຕ່ຖາມແລ້ວບໍ່ກຽດຊັງ ແຍກກັນທຳອຸໂປສົຖ ບໍ່ຕ້ອງອາບັຕິ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸທີ່ຢູ່ໃນອາວາສເຫັນພວກພິກສຸ ອາຄັນຕຸກະຜູ້ເປັນສມານສັງວາສ ເຂົ້າໃຈວ່າເປັນນານາສັງວາສບໍ່ໄຕ່ຖາມ ທຳອຸໂປສົຖຮ່ວມກັນ ຕ້ອງອາບັຕິທຸກກະຕະ
ພິກສຸທີ່ຢູ່ໃນອາວາສເຫລົ່ານັ້ນໄຕ່ຖາມແລ້ວກຽດຊັງ ແຍກກັນທຳອຸໂປສົຖ ຕ້ອງອາບັຕິທຸກກະຕະ
ພິກສຸທີ່ຢູ່ໃນອາວາສເຫລົ່ານັ້ນໄຕ່ຖາມແລ້ວກຽດຊັງ ທຳອຸໂປສົຖຮ່ວມກັນ ບໍ່ຕ້ອງອາບັຕິ

໑໐໖. ນຄັນຕັພພວາຣ

ວ່າດ້ວຍສະຖານທີ່ບໍ່ຄວຣໄປໃນວັນອຸໂປສົຖ

[໑໗໑] ພິກສຸທັງຫລາຍ ໃນວັນອຸໂປສົຖນັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸ໑ ໄປສູ່ອາວາສທີ່ບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌໔ ເວັ້ນແຕ່ມີອັນຕຣາຍ ພິກສຸທັງຫລາຍ ໃນວັນອຸໂປສົຖນັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸໄປສູ່ສະຖານທີ່ບໍ່ແມ່ນອາວາສ໖ ຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ ພິກສຸທັງຫລາຍ ໃນວັນອຸໂປສົຖນັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ໝາຍເຫດ :

໑ ອາວາສທີ່ມີພິກສຸ ຫມາຍເຖິງໃນອາວາສໃດ ມີພິກສຸຜູ່ທີ່ຈະເຮັດອຸໂປສົຖຢູ່ ບໍ່ຄວນອອກຈາກອາວາສນັ້ນໄປສູ່ອາວາສທີ່ບໍ່ມີພິກສຸຜູ່ທີ່ຈະເຮັດອຸໂປສົຖ (ວິ. ອ. ໖/໑໗໑/໑໔໖)
໔ ໄປກັບສົງຂ໌ ຫມາຍເຖິງໄປກັບພິກສຸທັງຫລາຍທີ່ມີຈຳນວນຄົບອົງຄ໌ສົງຂ໌ ຄື ໄປກັບພິກສຸອື່ນໆຣວມກັບຕົວພິກສຸນັ້ນເອງເປັນ ໔ ຮູບເປັນຢ່າງຫນ້ອຍ (ວິ. ອ. ໖/໑໗໑/໑໔໖)
໖ ສະຖານທີ່ບໍ່ແມ່ນອາວາສ ຫມາຍເຖິງສະຖານທີ່ບໍ່ມີສິ່ງກໍ່ສ້າງແລະສາລາເປັນຕົ້ນ (ວິ. ອ. ໖/໑໗໑/໑໔໖)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໑໐໖. ນຄັນຕັພພວາຣ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສທີ່ບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສທີ່ບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສ ຊຶ່ງມີພິກສຸໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສ ຊຶ່ງມີພິກສຸໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸໄປສູ່ອາວາສທີ່ມີພິກສຸ ແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສທີ່ມີພິກສຸ ແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນ

ແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສ ຊຶ່ງມີພິກສຸ ໄປສູ່ອາວາສທີ່ມີພິກສຸ ແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສ ຊຶ່ງມີພິກສຸ ໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສ ຊຶ່ງມີພິກສຸ ໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

໑໐໔. ຄັນຕັພພອາຣ

ວ່າດ້ວຍສະຖານທີ່ຄວຣໄປໃນວັນອຸໂບສົຖ

[໑໗໔] ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ຄວນອອກຈາກອາວາສທີ່ມີພິກສຸໄປສູ່ອາວາສທີ່ມີພິກສຸ ຊຶ່ງເປັນທີ່ຢູ່ຂອງພວກພິກສຸຜູ້ເປັນສະມານ ສັງວາສ ຊຶ່ງຕົນເອງຮູ້ວ່າ "ເຮົາສາມາດໄປເຖິງໃນວັນນີ້ແຫລະ"
ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ຄວນອອກຈາກອາວາສທີ່ມີພິກສຸໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ຯລຯ ໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ຊຶ່ງເປັນທີ່ຢູ່ຂອງພວກພິກສຸຜູ້ເປັນສະມານສັງວາສ ຊຶ່ງຕົນເອງຮູ້ວ່າ "ເຮົາສາມາດໄປເຖິງໃນວັນນີ້ແຫລະ"
ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສທີ່ມີພິກສຸ . . .
. . . ໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ . . .
. . . ໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ຊຶ່ງເປັນທີ່ຢູ່ຂອງພວກພິກສຸຜູ້ເປັນສະມານສັງວາສ ຊຶ່ງຕົນເອງຮູ້ວ່າ "ເຮົາສາມາດໄປເຖິງໃນວັນນີ້ແຫລະ"
ພິກສຸທັງຫລາຍ ໃນວັນອຸໂບສົຖນັ້ນ ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສ ຊຶ່ງມີພິກສຸ ໄປສູ່ອາວາສທີ່ມີພິກສຸ . . .
. . . ໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ . . .

. . . ໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ຊຶ່ງເປັນທີ່ຢູ່ຂອງພວກພິກສຸຜູ້ເປັນສມານສັງວາສ ຊຶ່ງຕົນເອງຮູ້ວ່າ "ເຮົາສາມາດໄປເຖິງໃນວັນນີ້ແຫລະ"

໑໐໕. ວັຊຊນີຍປຸຄຄລສັນທັສສນາ

ວ່າດ້ວຍການສະແດງບຸຄຄົລທີ່ຄວຣເວັ້ນໃນອຸໂບສົຖກັມ

[໑໗໓] ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດທີ່ມີພິກສຸນີນັ່ງຢູ່ດ້ວຍ ຮູບໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ
. . . ໃນບໍຣິສັດທີ່ມີສິກຂມານານັ່ງຢູ່ດ້ວຍ . . .
. . . ໃນບໍຣິສັດທີ່ມີສາມເນນນັ່ງຢູ່ດ້ວຍ . . .
. . . ໃນບໍຣິສັດທີ່ມີສາມເນຣີນັ່ງຢູ່ດ້ວຍ . . .
. . . ໃນບໍຣິສັດທີ່ມີພິກສຸຜູ້ບອກຄືນສິກຂານັ່ງຢູ່ດ້ວຍ . . .
ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດທີ່ມີພິກສຸຕ້ອງອັນຕິມວັຕຖຸ໑ ນັ່ງຢູ່ດ້ວຍ ຮູບໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ
ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດທີ່ມີພິກສຸຖືກສົງຂ໌ລົງອຸກເຂປນີຍກັມ ເພາະບໍ່ເຫັນອາບັຕິນັ່ງຢູ່ດ້ວຍ ຮູບໃດຍົກຂຶ້ນສະແດງ ຄວນປັບອາບັຕິຕາມທັມ
. . . ໃນບໍຣິສັດທີ່ມີພິກສຸຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ທຳຄືນອາບັຕິນັ່ງຢູ່ດ້ວຍ . . .
ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດທທີ່ມີພິກສຸຖືກສົງຂ໌ລົງອຸກເຂປນີຍ ກັມ ເພາະບໍ່ສລະທິຕຖິບາປນັ່ງຢູ່ດ້ວຍ ຮູບໃດຍົກຂຶ້ນສະແດງ ຄວນປັບອາບັຕິຕາມທັມ

ໝາຍເຫດ :

໑ ພິກສຸຕ້ອງອັນຕິມວັຕຖຸ ຫມາຍເຖິງພິກສຸຜູ້ຕ້ອງອາບັຕິປາຣາຊິກ
{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໒໗໗ }

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໑໐໕. ວັຊຊນີຍປຸຄຄລສັນທັສສນາ

ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດທີ່ມີກະເທີຍນັ່ງຢູ່ດ້ວຍ ຮູບໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ

. . . ໃນບໍຣິສັດທີ່ມີຄົນລັກເພສນັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີພິກສຸເຂົ້າຮີດເດັຽຣະຖີຍ໌ນັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີສັຕວ໌ເດັຽຣະສານຢູ່ດ້ວຍ໑ . . .

. . . ໃນບໍຣິສັດທີ່ມີຄົນຂ້າມາຣດານັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີຄົນຂ້າບິດານັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີຄົນຂ້າພຣະອຣຫັນຕ໌ນັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີຄົນປະທຸສຮ້າຍພິກສຸນີນັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີພິກສຸຜູ້ທຳລາຍສົງຂ໌ນັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີຄົນທຳຮ້າຍພຣະສາສດາຈົນຫໍ້ພຣະໂລຫິຕນັ່ງຢູ່ດ້ວຍ . . .

ພິກສຸທັງຫລາຍ ບໍ່ຄວນຍົກປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດທີ່ມີອຸພະໂຕພຍັຊຊະນະກນັ່ງຢູ່ດ້ວຍ ຮູບໃດຍົກຂຶ້ນສະແດງ ຕ້ອງອາບັຕິທຸກກະຕະ

ເຣື່ອງປາຣິວາສິກປາຣິສຸທຫິ

ພິກສຸທັງຫລາຍ ບໍ່ຄວນທຳອຸໂບສົຖດ້ວຍກາຣໃຫ້ປາຣິວາສິກປາຣິສຸທຫິ໔ ເວັ້ນແຕ່ບໍຣິສັດຍັງບໍ່ລຸກຂຶ້ນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ບໍ່ຄວນທຳອຸໂບສົຖໃນວັນບໍ່ແມ່ນວັນອຸໂບສົຖ ເວັ້ນແຕ່ວັນທີ່ສົງຂ໌ສາມັຄຄີ

ພານວາຣທີ ໖ ຈົບ

ອຸໂປສຖຂັນທກະ ທີ ໔ ຈົບ

ໃນຂັນທກະນີ້ ມີ ໗໘ ເຣື່ອງ

ໝາຍເຫດ :

໑ ຫມາຍເຖິງສັຕວ໌ເດັຽຣະສານທີ່ພຣະຜູ້ມີພຣະພາກຊົງຫ້າມອຸປສົມບົທ (ວິ. ສຽຄຫ. ໔໔໕, ກຽຂາ. ອ. ໑໑໘)

໔ ປາຣິວາສິກປາຣິສຸທຫິ ໃຫ້ປາຣິສຸທຫິຄ້າງ ຫມາຍເຖິງພິກສຸທັງຫລາຍນັ່ງປະຊຸມກັນດ້ວຍປະສົງຄ໌ຈະເຮັດອຸໂບສົຖ ຂນະນັ້ນເອງ ໄດ້ມີພິກສຸຮູບນຶ່ງກ່າວວ່າ "ວັນນີ້ ບໍ່ຄວຣທຳອຸໂບສົຖ ເພາະອີກສ໌ບໍ່ດີ"

ດັ່ງນີ້ເປັນຕົ້ນ ພິກສຸທັງຫລາຍຈຶ່ງສລະເລີກປາຣິສຸທທິແລ້ວລຸກຂຶ້ນ ມີພິກສຸຮູບນຶ່ງກ່າວວ່າ "ປໂຍດໄດ້ລ່ວງເລີຍບຸຄຄົລຜູ້ມີວແຕ່ຮອຣືກສ໌ ຍາມຢູ່ ພວກທ່ານຈະໄດ້ປໂຍດຫຍັງຈາກດວງດາວ" ພິກສຸທັງຫລາຍຈຶ່ງຕົກລົງ ຈະເຮັດສັງຂະກັມຕໍ່ໄປ ໂດຍບໍ່ຕ້ອງ ນຳປາຣິສຸທທິມາໃຫມ່ ຢ່າງນີ້ ບໍ່ສົມຄວຣ ເພາະປາຣິສຸທທິທີ່ໃຫ້ໄວ້ກ່ອນ ເປັນ "ປາຣິວາສິກປາຣິສຸທທິ" ແປວ່າ ປາຣິສຸທທິຄ້າງ ປາຣິສຸທທິທີ່ໃຫ້ແລ້ວແຕ່ງດໄວ້ກ່ອນ (ດູ ກງ໌ຂາ. ອ. ໔໐໓-໔໐໔)

ພຣະວິນັຍປິດົກ ມຫາວັຄ [໔. ອຸໂປສຖຂັນທກະ] ໑໐໖. ຮວມເຣື້ອງທີ່ມີໃນອຸໂປສຖຂັນທກະ

໑໐໖. ຮວມເຣື້ອງທີ່ມີໃນອຸໂປສຖຂັນທກະ

ເຣື້ອງປຣິພາຊກອັຍຍເດັຍຣະຖີຍ໌ ເຣື້ອງພຣະເຈົ້າພິມພິສາຣຈອມທັພມຄທຣັຖ
ເຣື້ອງພິກສຸປະຊຸມນັ່ງນິ່ງ ເຣື້ອງຊົງອນຸຍາຕໃຫ້ກ່າວທັມໃນວັນປະຊຸມ
ເຣື້ອງພຣະຜູ້ມີພຣະພາກຊົງຫລີກຫລີບຢູ່ໃນທີ່ສງັດ
ເຣື້ອງຍົກພຣະປາຕິໂມກຂ໌ຂຶ້ນສະແດງທຸກວັນ
ເຣື້ອງຊົງອນຸຍາຕໃຫ້ຍົກພຣະປາຕິໂມກຂ໌ຂຶ້ນສະແດງປັກສ໌ລະຄັ້ງ
ເຣື້ອງພຣະສັພພັຄຄີຍ໌ຍົກພຣະປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດເທົ່າທີ່ມີ
ເຣື້ອງຊົງອນຸຍາຕໃຫ້ຍົກພຣະປາຕິໂມກຂ໌ຂຶ້ນສະແດງແກ່ພິກສຸຜູ້ພ້ອມພຽງກັນ
ເຣື້ອງຊົງອນຸຍາຕຄວາມພ້ອມພຽງກຳຫນົດເຂຕອາວາສດຽວ
ເຣື້ອງມັຫາກັປປິນເຖຣະສົງສັຍ ເຣື້ອງຊົງອນຸຍາຕໃຫ້ສົມມຸດສີມາແລະນິມິຕສີມາ
ເຣື້ອງສົມມຸດສີມາໃຫຍ່ເກີນຂນາດ ເຣື້ອງສົມມຸດນທີປາຣສີມາ
ເຣື້ອງຍົກພຣະປາຕິໂມກຂ໌ຂຶ້ນສະແດງຕາມບໍຣິເວນວິຫາຣ
ເຣື້ອງສົມມຸດໂຮງອຸໂບສົຖ ໔ ບ່ອນໃນອາວາສດຽວກັນ
ເຣື້ອງສົມມຸດໂຮງອຸໂບສົຖເລັກເກີນໄປ
ເຣື້ອງພິກສຸຜູ້ນວກະລົງປະຊຸມກ່ອນ ເຣື້ອງກຸງຣາຊຄືຫ໌
ເຣື້ອງສົມມຸດແດນບໍ່ຢູ່ປາສຈາກໄຕຣຈີວອນ
ເຣື້ອງສົມມຸດສມານສັງວາສສີມາກ່ອນ
ເຣື້ອງຖອນສມານສັງວາສສີມາພາຍຫລັງ
ເຣື້ອງຄາມສີມາທີ່ບໍ່ໄດ້ສົມມຸດ ເຣື້ອງອຸທກຸກເຂປສີມາໃນແມ່ນ້ຳ

ເຣື້ອງອຸທກຸກເຂປສີມາໃນສມຸທຣ ເຣື້ອງອຸທກຸກເຂປສີມາໃນຊາຕສຣະ
ເຣື້ອງສີມາສັງກຣະກັນ ເຣື້ອງສີມມຸດສີມາທັບສີມາ
ເຣື້ອງປະເພດແຫ່ງວັນອຸໂບສົຖ ເຣື້ອງປະເພດການທຳອຸໂບສົຖ
ເຣື້ອງປະເພດແຫ່ງປາຕິໂມກຂຸທເທສ
ເຣື້ອງຊົງອນຸຍາດໃຫ້ຍົກພຣະປາຕິໂມກຂ໌ຂຶ້ນສະແດງໂດຍຫຍໍ້ເມື່ອ
ຊາວປ່າມາວິນວາຍ
ເຣື້ອງອັນຕຣາຍ ໑໐ ປະການ
ເຣື້ອງຊົງອນຸຍາດໃຫ້ພິກສຸຜູ້ເຖຣະສະແດງທັມໂດຍບໍ່ຕ້ອງໄດ້ຮັບອາຣາທນາ
ເຣື້ອງຖາມພຣະວິນັຍທ່າມກາງສົງຂ໌ຕ້ອງໄດ້ຮັບສົມມຸດກ່ອນ
ເຣື້ອງຖຸກຄາມຈະຂ້າ ເຣື້ອງພຣະສັພພັດຄີຍ໌ວິສັຊນາພຣະວິນັຍ
ເຣື້ອງໂຈທດ້ວຍອາບັຕິ ເຣື້ອງຂໍໂອກາສກ່ອນໂຈທ
ເຣື້ອງຊົງອນຸຍາດໃຫ້ຄັດຄ້ານກັມທີ່ບໍ່ຊອບທັມ
ເຣື້ອງພິກສຸ ໔-໕ ຮູບສະແດງຄວາມເຫັນແຍ້ງ
ເຣື້ອງແກ້ງຍົກພຣະປາຕິໂມກຂ໌ຂຶ້ນສະແດງບໍ່ໃຫ້ໄດ້ຍິນ
ເຣື້ອງພຍາຍາມຍົກພຣະປາຕິໂມກຂ໌ຂຶ້ນສະແດງ
ເຣື້ອງຍົກພຣະປາຕິໂມກຂ໌ຂຶ້ນສະແດງໃນບໍຣິສັດທີ່ມີຄຣືຫັສຖ໌
ເຣື້ອງຍົກພຣະປາຕິໂມກຂ໌ຂຶ້ນສະແດງໂດຍບໍ່ໄດ້ຮັບອາຣາທນາ
ເຣື້ອງພິກສຸຊາວເມືອງໂຈທນາວັຕຖຸບໍ່ຮູ້ຈັກອຸໂບສົຖ
ເຣື້ອງພິກສຸມາກຮູບບໍ່ຮູ້ຈັກອຸໂບສົຖ ເຣື້ອງສົ່ງພິກສຸໄປຮຽນພຣະປາຕິໂມກຂ໌ຍັງອາວາສໃກ້ຄຽງພໍຈະ
ກັບມາທັນໃນມື້ນັ້ນ
ເຣື້ອງພິກສຸຜູ້ນວກະບໍ່ຍອມໄປຮຽນພຣະປາຕິໂມກຂ໌
ເຣື້ອງວິທີການນັບປັກສ໌ ເຣື້ອງຊົງອນຸຍາດໃຫ້ນັບພິກສຸໃນວັນອຸໂບສົຖ
ເຣື້ອງໄປບິນທບາຕຍັງບ້ານໄກ ເຣື້ອງນຶກບໍ່ໄດ້
ເຣື້ອງບຸພພກຣນ໌ແລະບຸພພກິຈໃນໂຮງອຸໂບສົຖ
ເຣື້ອງປູອາສນະແລະຕາມປະທີປເປັນຕົ້ນ ເຣື້ອງພິກສຸຈະໄປໃສຕ້ອງບອກລາກ່ອນ
ເຣື້ອງຄວຣສົງເຄາະພິກສຸຜູ້ເປັນພຫູສູຕ
ເຣື້ອງສົ່ງພິກສຸໄປຮຽນພຣະປາຕິໂມກຂ໌ຍັງອາວາສໃກ້ຄຽງພໍຈະກັບມາທັນໃນມື້ນັ້ນ ເຣື້ອງເຂົ້າພັນສາ

ໃນອາວາສທີ່ມີພິກສຸພໍຈະຍົກ
ພຣະປາຕິໂມກຂ໌ຂຶ້ນສະແດງໄດ້
ເຣື້ອງການທຳອຸໂບສົຖ
ເຣື້ອງມອບປາຣິສຸທຫິ ເຣື້ອງທຳກັມທີ່ຈະຕ້ອງທຳ ເຣື້ອງພວກຍາຕ
ເຣື້ອງພິກສຸຄັຄຄະ ເຣື້ອງພິກສຸ ໔ ຮູບ ໓ ຮູບ ໒ ຮູບ ແລະ ໑ ຮູບ
ທຳອຸໂບສົຖ ໓ ຢ່າງຕາມລຳດັບ
ເຣື້ອງສະແດງອາບັຕິກ່ອນທຳອຸໂບສົຖ ເຣື້ອງສະແດງສພາຄາບັຕິ
ເຣື້ອງຣະນຶກອາບັຕິໄດ້ເມື່ອຍົກພຣະປາຕິໂມກຂ໌ຂຶ້ນສະແດງ
ເຣື້ອງສົງຂ໌ທັງຫມົດຕ້ອງສພາຄາບັຕິແລະບໍ່ແນ່ໃຈ
ເຣື້ອງບໍ່ຮູ້ຊື່ອແລະໂຄຕຣອາບັຕິ ເຣື້ອງພິກສຸພຫູສູຕ
ເຣື້ອງພິກສຸມາຫລາຍກວ່າ ມາເທົ່າກັນ ແລະມານ້ອຍກວ່າ
ເຣື້ອງບໍຣິສັດຍັງບໍ່ທັນລຸກຂຶ້ນ
ເຣື້ອງບໍຣິສັດລຸກຂຶ້ນບາງສ່ວນ ເຣື້ອງບໍຣິສັດລຸກຂຶ້ນທັງຫມົດ
ເຣື້ອງພິກສຸຮູ້ວ່າຍັງມີພວກພິກສຸທີ່ຢູ່ໃນອາວາສທີ່ຍັງບໍ່ມາ
ເຣື້ອງພິກສຸບໍ່ແນ່ໃຈວ່າຄວຣທຳອຸໂບສົຖຫລືບໍ່
ເຣື້ອງພິກສຸກັງວົລໃຈທຳອຸໂບສົຖ ເຣື້ອງພິກສຸທີ່ຢູ່ໃນອາວາສຮູ້ ເຫັນ
ໄດ້ຍິນວ່າຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນຢູ່
ເຣື້ອງພິກສຸອາຄັນຕຸກະກັບພິກສຸທີ່ຢູ່ໃນອາວາສນັບວັນອຸໂບສົຖຕ່າງກັນ
ເຣື້ອງອາການຂອງພິກສຸທີ່ຢູ່ໃນອາວາສເປັນຕົ້ນ
ເຣື້ອງພິກສຸອາຄັນຕຸກະເຂົ້າໃຈວ່າພິກສຸທີ່ຢູ່ໃນອາວາສມີສັງວາສຕ່າງກັນ
ເຣື້ອງປາຣິວາສິກປາຣິສຸທຫິ ເຣື້ອງທຳອຸໂບສົຖໃນວັນບໍ່ແມ່ນວັນອຸໂບສົຖ ຍົກເວັ້ນແຕ່ເປັນວັນທີ່ສົງຂ໌ສາມັຄຄີ
ຫົວຂໍ້ທີ່ຈຳແນກເຫລົ່ານີ້ເປັນຫົວຂໍ້ທີ່ບອກເຣື້ອງ໑

ອຸໂປສຖຂັນຫກະ ຈົບ

ໝາຍເຫດ :

໑ ຊື່ເຣື້ອງເຫລົ່ານີ້ ໃນເນື້ອເຣື້ອງ ບໍ່ໄດ້ຕັ້ງເປັນຂໍ້ໄວ້ທັງຫມົດ

ພຣະວິນັຍປີດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໐໗. ວັສສູປນາຍິການຸຊານນາ

໓. ວັສສູປນາຍິກຂັນທກະ

໑໐໗. ວັສສູປນາຍິການຸຊານນາ

ວ່າດ້ວຍຊົງອນຸຍາຕກາຣເຂົ້າຈຳພັນສາ

[໑໗໔] ສມັຍນັ້ນ ພຣະຜູ້ມີພຣະພາກພຸດທະເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສະຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ພຣະພຸທທອົງຄ໌ຍັງບໍ່ໄດ້ຊົງບັນຍັດກາຣເຂົ້າຈຳພັນສາແກ່ພິກສຸທັງຫລາຍ ພິກສຸເຫລົ່ານັ້ນທ່ຽວຈາຣິກໄປທັງຣະດູຫນາວ ຣະດູຮ້ອນແລະຣະດູຝົນ ມະນຸສຍ໌ທັງຫລາຍພາກັນຕໍາຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສະມະນະເຊື້ອສາຍສາກຍບຸຕຣຈຶ່ງໄດ້ທ່ຽວຈາຣິກໄປທັງຣະດູຫນາວ ຣະດູຮ້ອນ ແລະຣະດູຝົນ ຍ່ຳຕີນຊາຕິ ອັນຂຽວສົດ ບຽດບຽນສິ່ງມີຊີວິດຊຶ່ງມີອິນທຣິຍ໌ດຽວ ຢຽບສັຕວ໌ນ້ອຍໆຈຳນວນຫລາຍໃຫ້ເຖິງຄວາມວອດວາຍລະ ພວກອັຍຍເດັຽຣະຖີຍ໌ເຫລົ່ານີ້ຜູ້ສອນທັມບໍ່ດີຍັງພັກຢູ່ປະຈຳທີ່ຕລອດຣະດູຝົນ ອີກທັງຝູງນົກເຫລົ່ານີ້ລະກໍຍັງທຳຮວງຮັງເທິງຍອດໄມ້ ພັກຢູ່ປະຈຳທີ່ໃນຣະດູຝົນ ສ່ວນພຣະສະມະນະເຊື້ອສາຍສາກຍບຸຕຣເຫລົ່ານີ້ ທ່ຽວຈາຣິກໄປທັງຣະດູຫນາວ ຣະດູຮ້ອນ ແລະຣະດູຝົນ ຍ່ຳຕີນຊາຕິອັນຂຽວສົດ ບຽດບຽນສິ່ງມີຊີວິດຊຶ່ງມີອິນທຣິຍ໌ດຽວ ຢຽບສັຕວ໌ນ້ອຍໆຈຳນວນຫລາຍໃຫ້ເຖິງຄວາມວອດວາຍໄປ" ພິກສຸທັງຫລາຍໄດ້ຍິນມະນຸສຍ໌ເຫລົ່ານັ້ນຕໍາຫນິ ປະນາມ ໂພນທະນາ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ຄັ້ງນັ້ນພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸທັງຫລາຍເຂົ້າຈຳພັນສາ"

ເຣື້ອງຊົງອນຸຍາຕໃຫ້ພິກສຸເຂົ້າຈຳພັນສາໃນຣະດູຝົນ

ຄັ້ງນັ້ນ ພິກສຸທັງຫລາຍໄດ້ປຶກສາກັນດັ່ງນີ້ວ່າ "ພວກເຮົາຈະຄວນເຂົ້າຈຳພັນສາເມື່ອໃດຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ເຂົ້າຈຳພັນສາໃນຣະດູຝົນ"

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໐໗. ວັສສານຈາຣິກາປຕິກເຂປາທິ

ເຣື້ອງປະເພດແຫ່ງວັນເຂົ້າພັນສາ

ຄັ້ງນັ້ນ ພິກສຸທັງຫລາຍໄດ້ປຶກສາກັນດັ່ງນີ້ວ່າ "ວັນເຂົ້າພັນສາມີເທົ່າໃດຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ວັນເຂົ້າພັນສານີ້ມີ ໔ ວັນ໑ ຄື ວັນເຂົ້າພັນສາຕົ້ນ ໑ ວັນເຂົ້າພັນສາຫລັງ ໑ ເມື່ອພຣະຈັນທຣ໌ເພັຍສເວີຍຣືກສ໌ອາສາຣຫະລ່ວງໄປແລ້ວມື້ນຶ່ງ ຄວນເຂົ້າຈຳພັນສາຕົ້ນ ເມື່ອພຣະຈັນທຣ໌ເພັຍສເວີຍຣືກສ໌ອາສາຣຫະລ່ວງໄປແລ້ວເດືອນນຶ່ງ ຄວນເຂົ້າຈຳພັນສາຫລັງ ພິກສຸທັງຫລາຍ ວັນເຂົ້າພັນສາມີ ໔ ວັນເຫລົ່ານີ້ແລ"

໑໐໗. ວັສສານຈາຣິກາປຕິກເຂປາທິ

ວ່າດ້ວຍຊົງຫ້າມທ່ຽວຈາຣິກຣະຫວ່າງພັນສາເປັນຕົ້ນ

ເຣື້ອງພຣະສັພພັຄຄີຍ໌ທ່ຽວຈາຣິກໃນຣະຫວ່າງພັນສາ

[໑໗໕] ສະໄໝນັ້ນ ພວກພິກສຸສັພພັຄຄີຍ໌ເຂົ້າຈຳພັນສາແລ້ວກໍຍັງທ່ຽວຈາຣິກໄປໃນຣະຫວ່າງພັນສາ ມະນຸສຍ໌ທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດ ພຣະສະມະນະເຊື້ອສາຍສາກຍບຸຕຣຈຶ່ງໄດ້ທ່ຽວຈາຣິກໄປທັງຣະດູຫນາວ ຣະດູຮ້ອນ ແລະຣະດູຝົນ ຢ່ຳຕົບຊາຕິອິນຊຽວສົດ ບຽດ ບຽນສິ່ງມີຊີວິຕຊຶ່ງມີອິນທຣີຍ໌ດຽວ ຢຽບສັຕວ໌ນ້ອຍໆນ້ອຍໆຈຳນວນຫລາຍໃຫ້ເຖິງຄວາມວອດວາຍລະພວກອັຍຍເດັຽຣະຖີຍ໌ເຫລົ່ານີ້ຜູ້ສອນຫຼັມບໍ່ດີຍັງພັກຢູ່ປະຈຳທີ່ຕລອດຣະດູຝົນ ອີກທັງຝູງນກເຫລົ່ານີ້ລະກໍຍັງທຳຮວງຮັງ**ເທິງຍອດ**ໄມ້ພັກຢູ່ປະຈຳທີ່ ໃນຣະດູຝົນ ສ່ວນພຣະສະມະນະເຊື້ອສາຍສາກຍບຸຕຣເຫລົ່ານີ້ທ່ຽວຈາຣິກໄປທັງຣະດູຫນາວ ຣະດູຮ້ອນແລະຣະດູຝົນ ຢ່ຳຕົບຊາຕິອິນຊຽວສົດ ບຽດ ບຽນສິ່ງມີຊີວິຕຊຶ່ງມີອິນທຣີຍ໌ດຽວ ຢຽບສັຕວ໌ນ້ອຍໆນ້ອຍໆຈຳນວນຫລາຍໃຫ້ເຖິງຄວາມວອດວາຍ"

ໝາຍເຫດ :

໑ ອງ. ທຸກ. (ແປ) ໒໐/໑໐/໖໔

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໐໗. ວັສສານຈາຣິກາປຕິກເຂປາທິ

ພິກສຸທັງຫລາຍໄດ້ຍິນມະນຸສຍ໌ເຫລົ່ານັ້ນຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ ເຂົ້າຈຳພັນສາແລ້ວ ຈຶ່ງໄດ້ທ່ຽວຈາຣິກໄປໃນຣະຫວ່າງພັນສາລະ" ແລ້ວນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ພິກສຸເຂົ້າຈຳພັນສາແລ້ວບໍ່ຢູ່ຈຳໃຫ້ຕລອດ ໓ ເດືອນ ພັນສາຕົ້ນ ຫລື ໓ ເດືອນພັນສາຫລັງ ບໍ່ຄວນຫລີກຈາຣິກໄປ ຮູບໃດຫລີກໄປຕ້ອງອາບັຕິທຸກກະຕະ"

ເຣື່ອງປັບອາບັຕິທຸກກະຕະແກ່ພິກສຸຜູ້ບໍ່ເຂົ້າພັນສາ

[໑໘໔] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ບໍ່ຕ້ອງການຈະເຂົ້າຈຳພັນສາ ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸຈະບໍ່ເຂົ້າຈຳພັນສາບໍ່ໄດ້ ຮູບໃດບໍ່ເຂົ້າຈຳພັນສາ ຕ້ອງອາບັຕິທຸກກະຕະ"

ເຣື່ອງຈົງໃຈຍ່າງຜ່ານອາວາສ

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ບໍ່ຕ້ອງການຈະເຂົ້າຈຳພັນສາໃນວັນເຂົ້າພັນສານັ້ນ ຈົງໃຈຍ່າງຜ່ານອາວາສໄປ ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸຜູ້ບໍ່ຕ້ອງການຈະເຂົ້າຈຳພັນສາໃນວັນເຂົ້າພັນສານັ້ນ ບໍ່ຄວນຈົງໃຈຍ່າງຜ່ານອາວາສໄປ ຮູບໃດຍ່າງຜ່ານໄປ ຕ້ອງອາບັຕິທຸກກະຕະ"

ເຣື່ອງການເລື່ອນກາລຝົນ

ສມັຍນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖມີພຣະຣາຊປະສົງຄ໌ຈະຊົງເລື່ອນວັນເຂົ້າພັນສາອອກໄປ ຈຶ່ງຊົງສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຖ້າຢ່າງນັ້ນ ຂໍພຣະຄຸນເຈົ້າທັງຫລາຍຄວນເຂົ້າຈຳພັນສາໃນຊຸນຫປັກສ໌໑ທີ່ຈະມາເຖິງ"

ໝາຍເຫດ :

໑ ຊຸນຫປັກສ໌ ຫມາຍເຖິງເດືອນຕໍ່ໄປ (ວິ. ອ. ໓/໑໘໔/໑໔໔) ໃນທີ່ນີ້ຫມາຍເຖິງຂຶ້ນ ໑ ຄ່ຳຂອງອີກເດືອນນຶ່ງ

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໐໙. ສັຕຕາຫກໍຣະນີຍານຸຊານນາ

ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຄ້ອຍຕາມພຣະຣາຊາ"໑

໑໐໙. ສັຕຕາຫກໍຣະນີຍານຸຊານນາ

ວ່າດ້ວຍຊົງອນຸຍາຕສັຕຕາຫກໍຣະນີຍະເມື່ອເຂົາສ້າງວິຫາຣຖວາຍເປັນຕົ້ນ

ເອື້ອງອຸບາສົກສ້າງວິຫາຣເປັນຕົ້ນຖວາຍ

[໑໗໗] ຄັ້ງນັ້ນ ພຣະຜູ້ມີພຣະພາກປະທັບຢູ່ ນະ ກຸງຣາຊຄຶຫ໌ຕາມພຣະອັທຍາສັຍ ແລ້ວໄດ້ສເດັຈຈາຣິກໄປທາງກຸງສາວັຕຖີ ສເດັຈຈາຣິກໄປໂດຍລຳດັບ ຈົນເຖິງກຸງສາວັຕຖີ ຊາບວ່າພຣະຜູ້ມີພຣະພາກປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກຄຫບໍດີ ໃນກຸງສາວັຕຖີນັ້ນ

ສມັຍນັ້ນ ອຸບາສົກຊື່ອຸເທນໄດ້ສ້າງວິຫາຣຖວາຍອຸທິສສົງຂ໌ ໃນແຄວ້ນໂກສົລແລ້ວສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຂ້າພະເຈົ້າປຣາຖນາຈະຖວາຍທານ ຟັງທັມແລະເຫັນພິກສຸທັງຫລາຍ" ພິກສຸທັງຫລາຍຕອບໄປວ່າ "ຄຸນໂຍມ ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ພິກສຸເຂົ້າຈຳພັນສາແລ້ວບໍ່ຢູ່ໃຫ້ຕລອດ ໓ ເດືອນພັນສາຕົ້ນ ຫລື ໓ ເດືອນພັນສາຫລັງ ບໍ່ຄວນຫລີກຈາຣິກໄປ ຂໍໂຍມອຸເທນຈົງຖ້າຈົນກວ່າພິກສຸຢູ່ຈຳພັນສາຈນອອກພັນສາແລ້ວຈັກມາ ແຕ່ຖ້າໂຍມມີທຸຣະຈຳເປັນຮີບດ່ວນ ກໍຂໍໃຫ້ຖວາຍວິຫາຣໄວ້ໃນສຳນັກພິກສຸທີ່ຢູ່ໃນອາວາສ ໃນແຄວ້ນໂກສົລນັ້ນແຫລະ" ອຸບາສົກອຸເທນຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດເມື່ອເຮົາສົ່ງທູຕໄປແລ້ວ ພຣະຄຸນເຈົ້າທັງຫລາຍຈຶ່ງບໍ່ມາລະ ເຮົາກໍເປັນທາຍົກ ເປັນຜູ້ສ້າງ ເປັນຜູ້ບຳຣຸງພຣະສົງຂ໌"

ໝາຍເຫດ :

໑ ຫມາຍເຖິງໃຫ້ຄ້ອຍຕາມບ້ານເມືອງ ແມ່ນໃນເອື້ອງອື່ນທີ່ຊອບທັມ ກໍຄວນຄ້ອຍຕາມ ແຕ່ບໍ່ຄວນຄ້ອຍຕາມໃຜໆ ໃນເອື້ອງທີ່ບໍ່ຊອບທັມ (ວິ. ອ. ໓/໑໗໕-໖/໑໔໖)

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໐໙. ສັຕຕາຫກໍຣະນີຍານຸຊານນາ

ພິກສຸທັງຫລາຍໄດ້ຍິນອຸບາສົກອຸເທນຕຳຫນິ ປະນາມ ໂພນທະນາ ຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ຄັ້ງນັ້ນ ພຣະຜູ້ມີພຣະພາກຊົງສະແດງທັມມີກຖາເພາະເອື້ອງນີ້ເປັນຕົ້ນເຫຕຸ ຮັບ

ສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເມື່ອບຸຄຄົລ ໗ ຈຳພວກຄື ພິກສຸ ພິກສຸນີ ສິກຂມານາ ສາມເນຣ ສາມເນຣີ ອຸບາສົກ ອຸບາສີກາ ສົ່ງທູຕມາ ເຮົາອນຸຍາຕໃຫ້ໄປດ້ວຍ ສັຕຕາຫກໍຣະນີຍະ໑ໄດ້ ແຕ່ເມື່ອພວກເຂົາບໍ່ສົ່ງທູຕມາ ເຮົາບໍ່ອນຸຍາຕໃຫ້ໄປ ພິກສຸທັງຫລາຍ ເມື່ອບຸຄຄົລ ໗ ຈຳພວກເຫລົ່ານີ້ສົ່ງທູຕມາ ເຮົາອນຸຍາຕໃຫ້ໄປດ້ວຍສັຕຕາຫກໍຣະນີຍະໄດ້ ແຕ່ເມື່ອພວກເຂົາບໍ່ສົ່ງທູຕມາ ເຮົາບໍ່ອນຸຍາຕ (ເມື່ອໄປດ້ວຍສັຕຕາຫກໍຣະນີຍະ) ຄວນກັບໃນ ໗ ວັນ”໔

[໑໘໗] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ອຸບາສົກໄດ້ສ້າງວິຫາຣຖວາຍອຸທິສສົງຄ໌ ຖ້າເຂົາສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ “ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຂ້າພະເຈົ້າປຣາຖນາຈະຖວາຍທານ ຟັງທັມ ແລະເຫັນພິກສຸທັງຫລາຍ” ເມື່ອເຂົາສົ່ງທູຕມາ ຄວນໄປດ້ວຍສັຕຕາຫ ກໍຣະນີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫກໍຣະນີຍະ) ຄວນກັບໃນ ໗ ວັນ ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ອຸບາສົກໄດ້ສ້າງເຮືອນມຸງແຖບດຽວຖວາຍອຸທິສສົງຄ໌

ຯລຯ

. . . ໄດ້ສ້າງປຣາສາທ . . . . . . ໄດ້ສ້າງເຮືອນໂລ້ນ . . .

. . . ໄດ້ສ້າງຖ້ຳ . . . . . . ໄດ້ສ້າງບໍຣິເວນະ . . .

. . . ໄດ້ສ້າງຊຸ້ມ . . . . . . ໄດ້ສ້າງໂຮງສັນ . . .

. . . ໄດ້ສ້າງໂຮງໄຟ . . . . . . ໄດ້ສ້າງກັປປີຍກຸຕິ . . .

. . . ໄດ້ສ້າງວັຈກຸຕິ . . . . . . ໄດ້ສ້າງທີ່ຈົງກົມ . . .

. . . ໄດ້ສ້າງໂຮງຈົງກົມ . . . . . . ໄດ້ສ້າງບ່ອນນ້ຳ . . .

ໝາຍເຫດ :

໑ ສັຕຕາຫກໍຣະນີຍະ ແປວ່າ ທຸຣະທີ່ຈະຄວນເຮັດໃຫ້ເສັດໄດ້ພາຍໃນ ໗ ວັນ ຫມາຍເຖິງທຸຣະເປັນເຫຕຸໃຫ້ພິກສຸອອກຈາກວັດໄປຄ້າງແຮມທີ່ອື່ນໄດ້ໃນຣະຫວ່າງພັນສາ ເປັນເວລາ ໗ ວັນ (ວິ. ອ. ໓/໑໘໗/໑໔໕)

໔ ຄວນກັບໃນ ໗ ວັນ ຄື ຕ້ອງກັບມາຮັບອຣຸນທີ ໗ ໃນວັດທີ່ຕົນເຂົ້າພັນສາ ຈະໄປພັກແຮມຄົບ ໗ ວັນແລ້ວກັບມາຮັບອຣຸນທີ ໘ ບໍ່ໄດ້ (ວິ. ອ. ໓/໑໘໗/໑໔໕)

. . . ໄດ້ສ້າງໂຮງບ່ອນ້ຳ . . . . . . ໄດ້ສ້າງເຮືອນໄຟ . . .

. . . ໄດ້ສ້າງໂຮງເຮືອງໄຟ . . . . . . ໄດ້ສ້າງສູຣະໂບກຂຣນີ . . .

. . . ໄດ້ສ້າງມນູຫຼປ . . . . . . ໄດ້ສ້າງອາຣາມ . . .

. . . ໄດ້ສ້າງອາຣາມວັຕຖຸ໑

ຖ້າເຂົາສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂໍອາຣາທນານາພຣະຄຸນເຈົ້າທັງຫລາຍມາ ຂ້າພະເຈົ້າປຣາຖນາຈະຖວາຍທານ ຟັງທັມ ແລະເຫັນພິກສຸທັງຫລາຍ" ພິກສຸທັງຫລາຍ ເມື່ອເຂົາສົ່ງທູຕມາ ຄວນໄປດ້ວຍສັຕຕາຫກໍຣະນີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງທູຕມາ ບໍ່ຄວນໄປ(ເມື່ອໄປດ້ວຍສັຕຕາຫກໍຣະນີຍະ) ຄວນກັບໃນ ໗ ວັນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ອຸບາສິກາໄດ້ສ້າງວິຫາຣຖວາຍອຸທິສພິກສຸມາກຮູບ ໄດ້ສ້າງວິຫາຣອຸທິສພິກສຸຮູບນຶ່ງ . . .

. . . ໄດ້ສ້າງເຮືອງມຸງແຖບດຽວ . . . . . . ໄດ້ສ້າງປຣາສາທ . . .

. . . ໄດ້ສ້າງເຮືອງໂລ້ນ . . . . . . ໄດ້ສ້າງຖ້ຳ . . .

. . . ໄດ້ສ້າງບໍຣິເວນະ . . . . . . ໄດ້ສ້າງຊຸ້ມ . . .

. . . ໄດ້ສ້າງໂຮງສັນ . . . . . . ໄດ້ສ້າງໂຮງໄຟ . . .

. . . ໄດ້ສ້າງກັປປິຍກຸຕິ . . . . . . ໄດ້ສ້າງວັຈກຸຕິ . . .

. . . ໄດ້ສ້າງທີ່ຈົງກົມ . . . . . . ໄດ້ສ້າງໂຮງຈົງກົມ . . .

. . . ໄດ້ສ້າງບ່ອນ້ຳ . . . . . . ໄດ້ສ້າງໂຮງບ່ອນ້ຳ . . .

. . . ໄດ້ສ້າງເຮືອງໄຟ . . . . . . ໄດ້ສ້າງໂຮງເຮືອນໄຟ . . .

. . . ໄດ້ສ້າງສູຣະໂບກຂຣນີ . . . . . . ໄດ້ສ້າງມນູຫຼປ . . .

. . . ໄດ້ສ້າງອາຣາມ . . . . . . ໄດ້ສ້າງອາຣາມວັຕຖຸ

ຖ້າເຂົາສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂໍອາຣາທນານາພຣະຄຸນເຈົ້າທັງຫລາຍມາ ຂ້າພະເຈົ້າປຣາຖນາຈະຖວາຍທານ ຟັງທັມ ແລະເຫັນພິກສຸທັງຫລາຍ" ພິກສຸທັງຫລາຍ ເມື່ອເຂົາສົ່ງທູຕມາ ຄວນໄປດ້ວຍສັຕຕາຫກໍຣະນີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫກໍຣະນີຍະ) ຄວນກັບໃນ ໗ ວັນ

ໝາຍເຫດ :

໑ ອາຣາມວັຕຖຸ ຫມາຍເຖິງພື້ນທີ່ທີ່ບໍ່ໄດ້ປູກພືຊຫລືໄມ້ກອ ແຕ່ປັບເປັນພື້ນທີ່ໄວ້ ອາຈລ້ອມຮົ້ວ

ໄວ້ຫລືບໍ່ໄດ້ລ້ອມກຳຫນົດໄວ້ເປັນສະຖານທີ່ສອນດອກໄມ້ເປັນຕົ້ນ (ວິ. ອ. ໑/໑໐໕/໓໗໐)
{ທີ່ມາ : ໂປຣແກຣມພຣະໄຕຣປິດົກສະບັບມຫາຈຸລາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໔໙໗ }

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໐໙. ສັຕຕາຫກໍຣນີຍານຸຊານນາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ອຸບາສິກໄດ້ສ້າງວິຫາຣຖວາຍອຸທິສພິກສຸນີສົງຂ໌ ຯລຯ ອຸທິສພິກສຸນີມາກຮູບ ຯລຯ ອຸທິສພິກສຸນີຮູບດຽວ ຯລຯ ອຸທິສສິກຂມານາມາກຮູບ ຯລຯ ອຸທິສສິກຂມານາຮູບດຽວ ຯລຯ ອຸທິສສາມເນຣມາກຮູບ ຯລຯ ອຸທິສສາມເນຣຮູບດຽວ ຯລຯ ອຸທິສສາມເນຣີມາກຮູບ ຯລຯ ອຸທິສສາມເນຣີຮູບດຽວ ຯລຯ

. . . ໄດ້ສ້າງເຮືອງມຸງແຖບດຽວ . . . . . . ໄດ້ສ້າງປຣາສາທ . . .
. . . ໄດ້ສ້າງເຮືອງໂລ້ນ . . . . . . ໄດ້ສ້າງຖ້ຳ . . .
. . . ໄດ້ສ້າງບໍຣິເວນະ . . . . . . ໄດ້ສ້າງຊຸ້ມ . . .
. . . ໄດ້ສ້າງໂຮງສັນ . . . . . . ໄດ້ສ້າງໂຮງໄຟ . . .
. . . ໄດ້ສ້າງກັປປິຍກຸຕິ . . . . . . ໄດ້ສ້າງວັຈກຸຕິ . . .
. . . ໄດ້ສ້າງທີ່ຈົງກົມ . . . . . . ໄດ້ສ້າງໂຮງຈົງກົມ . . .
. . . ໄດ້ສ້າງບ່ອນ້ຳ . . . . . . ໄດ້ສ້າງໂຮງບ່ອນ້ຳ . . .
. . . ໄດ້ສ້າງເຮືອງໄຟ . . . . . . ໄດ້ສ້າງໂຮງເຮືອນໄຟ . . .
. . . ໄດ້ສ້າງສຣະໂບກຂຣນີ . . . . . . ໄດ້ສ້າງມນທປ . . .
. . . ໄດ້ສ້າງອາຣາມ . . . . . . ໄດ້ສ້າງອາຣາມວັຕຖຸ

ຖ້າເຂົາສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຂ້າພະເຈົ້າປຣາຖນາຈະຖວາຍທານ ຟັງທັມ ແລະເຫັນພິກສຸທັງຫລາຍ" ພິກສຸທັງຫລາຍ ເມື່ອເຂົາສົ່ງທູຕມາ ຄວນໄປດ້ວຍສັຕຕາຫກໍຣນີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫກໍຣນີຍະ) ຄວນກັບໃນ ໗ ວັນ

[໑໗໙] ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ອຸບາສິກໄດ້ສ້າງທີ່ຢູ່ອາສັຍເພື່ອປໂຍດແກ່ຕນ. .
. . . ໄດ້ສ້າງເຮືອນນອນ . . . . . . ໄດ້ສ້າງໂຮງເກັບຂອງ . . .
. . . ໄດ້ສ້າງຮ້ານ . . . . . . ໄດ້ສ້າງໂຮງກລມ . . .
. . . ໄດ້ສ້າງຮ້ານຄ້າ . . . . . . ໄດ້ສ້າງໂຮງຮ້ານຄ້າ . . .
. . . ໄດ້ສ້າງປຣາສາທ . . . . . . ໄດ້ສ້າງເຮືອນໂລ້ນ . . .
. . . ໄດ້ສ້າງຖ້ຳ . . . . . . ໄດ້ສ້າງບໍຣິເວນະ . . .
. . . ໄດ້ສ້າງຊຸ້ມ . . . . . . ໄດ້ສ້າງໂຮງສັນ . . .
{ທີ່ມາ : ໂປຣແກຣມພຣະໄຕຣປິດົກສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໔໙໗ }

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທະກະ] ໑໐໙. ສັຕຕາຫກໍຣນີຍານຸຊານນາ

. . . ໄດ້ສ້າງໂຮງໄຟ . . . . . . ໄດ້ສ້າງໂຮງຄົວ . . .
. . . ໄດ້ສ້າງທີ່ຈົງກົມ . . . . . . ໄດ້ສ້າງໂຮງຈົງກົມ . . .
. . . ໄດ້ສ້າງບ່ອນນ້ຳ . . . . . . ໄດ້ສ້າງໂຮງບ່ອນນ້ຳ . . .
. . . ໄດ້ສ້າງເຮືອນໄຟ . . . . . . ໄດ້ສ້າງສຣະໂບກຂຣນີ . . .
. . . ໄດ້ສ້າງມນທບ . . . . . . ໄດ້ສ້າງອາຣາມ . . .
. . . ໄດ້ສ້າງອາຣາມວັຕຖຸ

ເຂົາມີງານມຸງຄຸລສົມຣົສຂອງບຸຕຣຫລືທິດາ ເຂົາເປັນໄຂ້ຫລືຈະກ່າວພຣະສູຕຣຊຶ່ງເປັນທີ່ຮູ້ຈັກກັນໂດຍທົ່ວໄປກໍດີ ຖ້າເຂົາສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຈະໄດ້ຮ່ຳຮຽນພຣະສູຕຣນີ້ກ່ອນທີ່ພຣະສູຕຣຈະເລືອນໄປ" ກໍຫລືວ່າ ເຂົາມີກິຈຫລືທຸຣະຈຳເປັນຢ່າງໃດຢ່າງນຶ່ງ ຖ້າເຂົາສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຂ້າພະເຈົ້າປຣາຖນາຈະຖວາຍທານ ຟັງທັມ ແລະເຫັນພິກສຸທັງຫລາຍ" ພິກສຸທັງຫລາຍ ເມື່ອເຂົາສົ່ງທູຕມາ ຄວນໄປດ້ວຍສັຕຕາຫກໍຣນີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫກໍຣນີຍະ) ຄວນກັບໃນ ໗ ວັນ

[໑໙໐] ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ອຸບາສິກາໄດ້ສ້າງວິຫາຣຖວາຍອຸທິສສົງຂ໌ ຖ້ານາງສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຂະນ້ອຍປຣາຖນາຈະ

ຖວາຍທານ ຟັງທັມ ແລະເຫັນພິກສຸທັງຫລາຍ” ເມື່ອນາງສົ່ງທູຕມາ ຄວນໄປດ້ວຍ ສັຕຕາຫກໍ
ຣນີຍະໄດ້ ແຕ່ເມື່ອນາງບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫກໍຣນີຍະ) ຄວນກັບໃນ ໗ ວັນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ອຸບາສິກາໄດ້ສ້າງເຮືອນມຸງແຖບດຽວຖວາຍອຸທິສສົງຂ໌
ຯລຯ

. . . ໄດ້ສ້າງປຣາສາທ . . . . . . ໄດ້ສ້າງເຮືອນໂລ້ນ . . .

. . . ໄດ້ສ້າງຖ້ຳ . . . . . . ໄດ້ສ້າງບໍຣິເວນະ . . .

. . . ໄດ້ສ້າງຊຸ້ມ . . . . . . ໄດ້ສ້າງໂຮງສັນ . . .

. . . ໄດ້ສ້າງໂຮງໄຟ . . . . . . ໄດ້ສ້າງກັປປິຍກຸຕິ . . .

. . . ໄດ້ສ້າງວັຈກຸຕິ . . . . . . ໄດ້ສ້າງທີ່ຈົງກົມ . . .

. . . ໄດ້ສ້າງໂຮງຈົງກົມ . . . . . . ໄດ້ສ້າງບ່ອນ້ຳ . . .

. . . ໄດ້ສ້າງໂຮງບ່ອນ້ຳ . . . . . . ໄດ້ສ້າງເຮືອນໄຟ . . .

. . . ໄດ້ສ້າງໂຮງເຮືອນໄຟ . . . . . . ໄດ້ສ້າງສຣະໂປກຂຣນີ . . .

. . . ໄດ້ສ້າງມນທປ . . . . . . ໄດ້ສ້າງອາຣາມ . . .

. . . ໄດ້ສ້າງອາຣາມວັຕຖຸ

ຖ້ານາງສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ “ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຂະນ້ອຍ
ປຣາຖນາຈະຖວາຍທານ ຟັງທັມ ແລະເຫັນພິກສຸທັງຫລາຍ” ພິກສຸທັງຫລາຍ ເມື່ອນາງສົ່ງທູຕມາ
ຄວນໄປດ້ວຍສັຕຕາຫກໍຣນີຍະໄດ້ ແຕ່ເມື່ອນາງບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫກໍ
ຣນີຍະ) ຄວນກັບໃນ ໗ ວັນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ອຸບາສິກາໄດ້ສ້າງວິຫາຣຖວາຍອຸທິສພິກສຸມາກຮູບ . . .

. . . ອຸທິສພິກສຸຮູບດຽວ. . . . . . ອຸທິສພິກສຸນີສົງຂ໌ . . .

. . . ອຸທິສພິກສຸນີມາກຮູບ . . . . . . ອຸທິສພິກສຸນີຮູບດຽວ . . .

. . . ອຸທິສສິກຂມານາມາກຮູບ . . . . . . ອຸທິສສິກຂມານາຮູບດຽວ . . .

. . . ອຸທິສສາມເນຣມາກຮູບ . . . . . . ອຸທິສສາມເນຣຮູບດຽວ. . .

. . . ອຸທິສສາມເນຣີມາກຮູບ . . . . . . ອຸທິສສາມເນຣີຮູບດຽວ. . . ຯລຯ

[໑໘໑] ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ອຸບາສີກາໄດ້ສ້າງທີ່ຢູ່ອາສັຍເພື່ອປໂຍດແກ່ຕົນ. . .

. . . ໄດ້ສ້າງເຮືອນນອນ . . . . . . ໄດ້ສ້າງໂຮງເກັບຂອງ . . .

. . . ໄດ້ສ້າງຮ້ານ . . . . . . ໄດ້ສ້າງໂຮງກລມ . . .

. . . ໄດ້ສ້າງຮ້ານຄ້າ . . . . . . ໄດ້ສ້າງໂຮງຮ້ານຄ້າ . . .

. . . ໄດ້ສ້າງປຣາສາທ . . . . . . ໄດ້ສ້າງເຮືອນໂລ້ນ . . .

. . . ໄດ້ສ້າງຖ້ຳ . . . . . . ໄດ້ສ້າງບໍຣິເວນະ . . .

. . . ໄດ້ສ້າງຊຸ້ມ . . . . . . ໄດ້ສ້າງໂຮງສັນ . . .

. . . ໄດ້ສ້າງໂຮງໄຟ . . . . . . ໄດ້ສ້າງໂຮງຄົວ . . .

. . . ໄດ້ສ້າງວັຈກຸຕິ . . . . . . ໄດ້ສ້າງທີ່ຈົງກົມ . . .

. . . ໄດ້ສ້າງໂຮງຈົງກົມ . . . . . . ໄດ້ສ້າງບ່ອນ້ຳ . . .

. . . ໄດ້ສ້າງໂຮງບ່ອນ້ຳ . . . . . . ໄດ້ສ້າງສຣະໂບກຂຣນີ . . .

. . . ໄດ້ສ້າງມນຫປ . . . . . . ໄດ້ສ້າງອາຣາມ . . .

. . . ໄດ້ສ້າງອາຣາມວັຕຖຸ

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໐໘. ສັຕຕາຫກໍຣນີຍານຸຊານນາ

ນາງມີງານມຸງຄຸລສົມຣົສຂອງບຸຕຣຫລືທິດາ ນາງເປັນໄຂ້ຫລືຈະກ່າວພຣະສູຕຣ ຊຶ່ງເປັນທີ່ຮູ້ຈັກກັນໂດຍທົ່ວໄປກໍດີ ຖ້ານາງສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ “ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຈະໄດ້ຮ່ຳຮຽນພຣະສູຕຣນີ້ກ່ອນທີ່ພຣະສູຕຣຈະເລືອນໄປ” ກໍຫລືວ່ານາງມີກິຈຫລືທຸຣະຈຳເປັນຢ່າງໃດຢ່າງນຶ່ງ ຖ້ານາງສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ “ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຂະນ້ອຍປຣາຖນາຈະຖວາຍທານ ຟັງທັມແລະເຫັນພິກສຸທັງຫລາຍ” ພິກສຸທັງຫລາຍ ເມື່ອນາງສົ່ງທູຕມາ ຄວນໄປດ້ວຍສັຕຕາຫກໍຣນີຍະໄດ້ ແຕ່ເມື່ອນາງບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫກໍຣນີຍະ) ຄວນກັບໃນ ໗ ວັນ

[໑໘໔] ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸໃນທັມວິນັຍນີ້ໄດ້ສ້າງວິຫາຣ ຖວາຍອຸທິສສົງຂ໌ ຯລຯ ພິກສຸນີໄດ້ສ້າງວິຫາຣຖວາຍອຸທິສສົງຂ໌ ຯລຯ ສິກຂມານາໄດ້ສ້າງວິຫາຣຖວາຍອຸທິສສົງຂ໌ ຯລຯ ສາມເນຣໄດ້ສ້າງວິຫາຣຖວາຍອຸທິສສົງຂ໌ ຯລຯ ສາມເນຣີ ໄດ້ສ້າງວິຫາຣຖວາຍ

ອຸທິສສົງຂ໌ ຯລຯ

. . . ອຸທິສພິກສຸນາກຮູບ . . . . . . ອຸທິສພິກສຸຣູບດຽວ . . .

. . . ອຸທິສພິກສຸນີສົງຂ໌ . . . . . . ອຸທິສພິກສຸນີນາກຮູບ . . .

. . . ອຸທິສພິກສຸນີຣູບດຽວ. . . . . . ອຸທິສສິກຂມານານາກຮູບ . . .

. . . ອຸທິສສິກຂມານາຮູບດຽວ. . . . . . ອຸທິສສາມເນຣນາກຮູບ . . .

. . . ອຸທິສສາມເນຣຮູບດຽວ . . . . . . ອຸທິສສາມເນຣີນາກຮູບ . . .

. . . ອຸທິສສາມເນຣີຮູບດຽວ . . .

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸ ຯລຯ ສາມເນຣີໄດ້ສ້າງວິຫາຣເພື່ອປໄຍດແກ່ຕົນ . . .

. . . ໄດ້ສ້າງເຮືອນມຸງແຖບດຽວ . . . . . . ໄດ້ສ້າງປຣາສາທ . . .

. . . ໄດ້ສ້າງເຮືອນໂລ້ນ . . . . . . ໄດ້ສ້າງຖ້ຳ . . .

. . . ໄດ້ສ້າງບໍຣິເວນະ . . . . . . ໄດ້ສ້າງຊຸ້ມ . . .

. . . ໄດ້ສ້າງໂຮງສັນ . . . . . . ໄດ້ສ້າງໂຮງໄຟ . . .

. . . ໄດ້ສ້າງກັປປິຍກຸຕິ . . . . . . ໄດ້ສ້າງວັຈກຸຕິ . . .

. . . ໄດ້ສ້າງທີ່ຈົງກົມ . . . . . . ໄດ້ສ້າງໂຮງຈົງກົມ . . .

. . . ໄດ້ສ້າງບ່ອນນ້ຳ . . . . . . ໄດ້ສ້າງໂຮງບ່ອນນ້ຳ . . .

. . . ໄດ້ສ້າງສຣະໂບກຂຣນີ . . . . . . ໄດ້ສ້າງມນທປ . . .

. . . ໄດ້ສ້າງອາຣາມ . . . . . . ໄດ້ສ້າງອາຣາມວັຕຖຸ

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໑໐. ປັຢຈອັປປຫິຕານຸຊານນາ

ຖ້າພິກສຸ ຯລຯ ສາມເນຣີສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຜູ້ຂ້າ ຯລຯ ຂະນ້ອຍປຣາຖນາຈະຖວາຍທານ ຟັງທັມ ແລະເຫັນພິກສຸທັງຫລາຍ" ພິກສຸ ທັງຫລາຍ ເມື່ອພິກສຸ ຯລຯ ສາມເນຣີສົ່ງທູຕມາ ຄວນໄປດ້ວຍສັຕຕາຫກໍຣນີຍະໄດ້ ແຕ່ເມື່ອພິກສຸຯລຯ ສາມເນຣີບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫກໍຣນີຍະ) ຄວນກັບໃນ ໗ ວັນ

໑໑໐. ປັຢຈອັປປຫິຕານຸຊານນາ

ວ່າດ້ວຍຊົງອນຸຍາຕສັຕຕາຫກໍຣນີຍະເມື່ອສຫທັມມິກທັງ ໕ ຈະບໍ່ສົ່ງທູຕມາ

ເຣື້ອງພິກສຸເປັນໄຂ້ເປັນຕົ້ນ

[໑໘໓] ສມັຍນັ້ນ ພິກສຸຮູບນຶ່ງເປັນໄຂ້ ໄດ້ສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຜູ້ຂ້າເປັນໄຂ້ ຂໍອາຣາທນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ແມ່ນສຫທຣຣມິກທັງ ໕ ຄື ພິກສຸ ພິກສຸນີ ສິກຂມານາ ສາມເນຣ ສາມເນຣີ ຈະບໍ່ສົ່ງທູຕມາ ເຮົາອນຸຍາຕໃຫ້ໄປດ້ວຍ ສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສຫທຣຣມິກທັງ ໕ ສົ່ງທູຕມາ ພິກສຸທັງຫລາຍ ເມື່ອສຫທຣຣມິກທັງ ໕ ເຫລົ່ານີ້ ແມ່ນບໍ່ໄດ້ສົ່ງທູຕມາ ເຮົາອນຸຍາຕໃຫ້ໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສຫທຣຣມິກທັງ ໕ ສົ່ງທູຕມາ ແຕ່ຄວນກັບໃນ ໗ ວັນ ສັຕຕາຫກໍຣນີຍະເນື່ອງດ້ວຍພິກສຸ ໑໐ ກໍຣະນີ

໑. ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພິກສຸເປັນໄຂ້ ຖ້າພິກສຸນັ້ນຈະຄວນສົ່ງທູຕໄປໃນສຳນັກ ພິກສຸທັງຫລາຍວ່າ "ຜູ້ຂ້າເປັນໄຂ້ ຂໍອາຣາທນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກແສວງຫາຄິລານພັຕ ຄິລານຸປັຕຖາກພັຕ ຫລືຄິລານເພສັຊ ຈັກຖາມອາກາຣຫລືຈັກພຍາບາລ" ແຕ່ຄວນກັບໃນ ໗ ວັນ

໒. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຄວາມບໍ່ຍິນດີເກີດຂຶ້ນແກ່ພິກສຸ ຖ້າພິກສຸນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຄວາມບໍ່ຍິນດີເກີດຂຶ້ນແກ່ຜູ້ຂ້າແລ້ວ ຂໍອາຣາທນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກຣະງັບຄວາມບໍ່ຍິນດີເອງ ຫລືຈັກໃຊ້ພິກສຸອື່ນໃຫ້ຊ່ວຍຣະງັບ ຫລືຈັກສະແດງທັມກຖາແກ່ພິກສຸນັ້ນ" ແຕ່ຄວນກັບໃນ ໗ ວັນ

໓. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຄວາມຣຳຄານເກີດຂຶ້ນແກ່ພິກສຸ ຖ້າພິກສຸນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຄວາມຣຳຄານເກີດຂຶ້ນແກ່ຜູ້ຂ້າແລ້ວ ຂໍອາຣາທນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກບັນເທົາຄວາມຣຳຄານເອງ ຫລືຈັກໃຊ້ພິກສຸອື່ນໃຫ້ຊ່ວຍບັນເທົາຫລືຈັກສະແດງທັມກຖາແກ່ພິກສຸນັ້ນ" ແຕ່ຄວນກັບໃນ ໗ ວັນ

໔. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຄວາມເຫັນຜິດເກີດຂຶ້ນແກ່ພິກສຸ ຖ້າພິກສຸນັ້ນຈະ

ຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຄວາມເຫັນຜິດເກີດຂຶ້ນແກ່ຜູ້ຂ້າແລ້ວຂໍອາຣາທຸນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັດຕາຫາກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກເປື້ອງຄວາມເຫັນຜິດເອງ ຫລືຈັກໃຊ້ພິກສຸອື່ນໃຫ້ຊ່ວຍເປື້ອງຫລືຈັກສະແດງທັມກຖາແກ່ພິກສຸນັ້ນ" ແຕ່ຄວນກັບໃນ ໗ ວັນ

໕. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເປັນຜູ້ຕ້ອງຄຣຸທັມ໑ ຄວຣຢູ່ປຣິວາສ ຖ້າພິກສຸນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຜູ້ຂ້າຕ້ອງຄຣຸທັມ ຄວຣຢູ່ປຣິວາສ ຂໍອາຣາທຸນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັດຕາຫາກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນັ້ນສົ່ງທູຕມາ

ໝາຍເຫດ :

໑ ຄຣຸທັມ ໃນທີ່ນີ້ຫມາຍເຖິງອາບັຕິສັງຂາທິເສສ (ດູ ອງ໌. ອຕຸກ. ໑. ໖/໕໑/໔໓໖)

ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈະເຮັດຄວາມຂວນຂວາຍໃຫ້ປຣິວາສ ຫລືຈັກຊ່ວຍສູດກັມວາຈາຫລືຈັກເປັນຄນປູຣກະ໑" ແຕ່ຄວນກັບໃນ ໗ ວັນ

໖. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເປັນຜູ້ຄວຣຊັກເຂົ້າຫາອາບັຕິເດີມ ຖ້າພິກສຸນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຜູ້ຂ້າເປັນຜູ້ຄວຣຊັກເຂົ້າຫາອາບັຕິເດີມ ຂໍອາຣາທຸນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັດຕາຫາກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈະເຮັດຄວາມຂວນຂວາຍຊັກເຂົ້າຫາອາບັຕິເດີມ ຫລືຈັກຊ່ວຍສູດກັມວາຈາ ຫລືຈັກເປັນຄນປູຣກະ" ແຕ່ຄວນກັບໃນ ໗ ວັນ

໗. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເປັນຜູ້ຄວຣມານັຕ ຖ້າພິກສຸນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຜູ້ຂ້າເປັນຜູ້ຄວຣມານັຕ ຂໍອາຣາທຸນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັດຕາຫາກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈະເຮັດຄວາມຂວນຂວາຍໃຫ້ມານັຕ ຫລືຈັກຊ່ວຍສູດກັມວາຈາ ຫລືຈັກເປັນຄນປູຣກະ" ແຕ່ຄວນກັບໃນ ໗ ວັນ

໘. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເປັນຜູ້ຄວຣອັພພານ ຖ້າພິກສຸນັ້ນຈະຄວນສົ່ງທູຕ

ໄປໃນສຳນັກພິກສຸທັງຫລາຍວ່າ "ຜູ້ຂ້າເປັນຜູ້ຄວຣອັພພານ ຂໍອາຣາທຫນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈະເຮັດຄວາມຂວນຂວາຍໃຫ້ອັພພານ ຫລືຈັກຊ່ວຍສວດກັມວາຈາ ຫລືຈັກເປັນຄນປູຣກະ" ແຕ່ຄວນກັບໃນ ໗ ວັນ

໙. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ສົງຂ໌ຕ້ອງການຈະເຮັດກັມ ຄື ຕັຊຊນີຍກັມນິຍສກັມປັພພາຊນີຍກັມ ປຕິສາຣນີຍກັມ ຫລືອຸກເຂປນີຍກັມແກ່ພິກສຸ ຖ້າພິກສຸນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ສົງຂ໌ເປັນຜູ້ຕ້ອງການຈະເຮັດກັມແກ່ຜູ້ຂ້າ ຂໍອາຣາທຫນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ

ໝາຍເຫດ :

໑ ເຂົ້າຮ່ວມສັງຂກັມເພື່ອໃຫ້ຄົບອົງຄ໌ສົງຂ໌

ແມ່ນພິກສຸນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນັ້ນ ສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ດ້ວຍອຸບາຍຢ່າງໃດຫນໍ ສົງຂ໌ຈະບໍ່ຄວນທຳກັມ ຫລືຄວນປ່ຽນໄປເປັນໂທສເບົາ" ແຕ່ຄວນກັບໃນ ໗ ວັນ

໑໐. ກໍຫລືວ່າ ພິກສຸນັ້ນຖືກສົງຂ໌ທຳກັມ ຄື ຕັຊຊນີຍກັມ ນິຍສກັມປັພພາຊນີຍກັມ ປຕິສາຣນີຍ ກັມ ຫລືອຸກເຂປນີຍກັມແລ້ວ ຖ້າພິກສຸນັ້ນ ຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ສົງຂ໌ທຳກັມແກ່ຜູ້ຂ້າແລ້ວ ຂໍອາຣາທຫນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນັ້ນຈະບໍ່ສົ່ງທູຕມາກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ດ້ວຍອຸບາຍຢ່າງໃດຫນໍ ພິກສຸນັ້ນຈະຄວນປະພຶດຊອບ ຄວນເຊົາຈອງ ຫອງ ຄວນກັບຕົວໄດ້ ສົງຂ໌ຄວນຣະງັບກັມນັ້ນເສັຽ" ແຕ່ຄວນກັບໃນ ໗ ວັນ

ສັຕຕາຫກໍຣນີຍະເນື່ອງດ້ວຍພິກສຸນີ ໙ ກໍຣະນີ

[໑໙໔] ໑. ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພິກສຸນີເປັນໄຂ້ ຖ້າພິກສຸນີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂະນ້ອຍເປັນໄຂ້ ຂໍອາຣາທຫນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນີນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່

ຈຳຕ້ອງກ່າວເຖິງເມື່ອພິກສຸນີນັ້ນສິ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກແສວງຫາຄິລານພັຕ ຄິລານຸປັຕຖາກພັຕ ຫລືຄິລານເພສັຊ ຈັກຖາມອາການ ຫລືຈັກພຍາບາລ" ແຕ່ຄວນກັບໃນ ໗ ວັນ

໔. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຄວາມບໍ່ຍິນດີເກີດຂຶ້ນແກ່ພິກສຸນີ ຖ້າພິກສຸນີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຄວາມບໍ່ຍິນດີເກີດຂຶ້ນແກ່ຂະນ້ອຍແລ້ວ ຂໍອາຣາທະນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນີນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນີນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກຣະງັບຄວາມບໍ່ຍິນດີເອງ ຫລືຈັກໃຊ້ພິກສຸອື່ນໃຫ້ຊ່ວຍຣະງັບ ຫລືຈັກສະແດງທັມມກຖາແກ່ພິກສຸນີນັ້ນ" ແຕ່ຄວນກັບໃນ ໗ ວັນ

໖. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຄວາມຣຳຄານເກີດຂຶ້ນແກ່ພິກສຸນີ ຖ້າພິກສຸນີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຄວາມຣຳຄານເກີດຂຶ້ນແກ່ຂະນ້ອຍແລ້ວ ຂໍອາຣາທະນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນີນັ້ນ ຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນີນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກບັນເທົາຄວາມຣຳຄານເອງ ຫລືຈັກໃຊ້ພິກສຸອື່ນໃຫ້ຊ່ວຍບັນເທົາ ຫລືຈັກສະແດງທັມມກຖາແກ່ພິກສຸນີນັ້ນ" ແຕ່ຄວນກັບໃນ ໗ ວັນ

໔. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຄວາມເຫັນຜິດເກີດຂຶ້ນແກ່ພິກສຸນີ ຖ້າພິກສຸນີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຄວາມເຫັນຜິດເກີດຂຶ້ນແກ່ຂະນ້ອຍແລ້ວ ຂໍອາຣາທະນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນີນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນີສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກເປື້ອງຄວາມເຫັນຜິດເອງ ຫລືຈັກໃຊ້ພິກສຸອື່ນໃຫ້ຊ່ວຍເປື້ອງ ຫລືຈັກສະແດງທັມມກຖາແກ່ພິກສຸນີນັ້ນ" ແຕ່ຄວນກັບໃນ ໗ ວັນ

໕. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸນີເປັນຜູ້ຕ້ອງຄຣຸທັມ ຄວຣແກ່ມານັຕ ຖ້າພິກ ສຸນີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂະນ້ອຍເອງຕ້ອງຄຣຸທັມ ຄວຣແກ່ມານັຕ ຂໍອາຣາທະນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນພິກສຸນີນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກສຸນີນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈະເຮັດຄວາມຂິນຂວາຍໃຫ້ມານັຕ" ແຕ່ຄວນກັບໃນ ໗ ວັນ

໓. ພິກຂຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກຂຸນີເປັນຜູ້ຄວຣຊັກເຂົ້າຫາອາບັຕິເດີມ ຖ້າພິກຂຸນີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກຂຸທັງຫລາຍວ່າ "ຂະນ້ອຍເປັນຜູ້ຄວຣຊັກເຂົ້າຫາອາບັຕິເດີມ ຂໍອາຣາທນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກຂຸທັງຫລາຍ ແມ່ນພິກຂຸນີນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກຂຸນີນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈະເຮັດຄວາມຂົນຂວາຍຊັກເຂົ້າຫາອາບັຕິເດີມ" ແຕ່ຄວນກັບໃນ ໗ ວັນ

໗. ພິກຂຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກຂຸນີໃນທັມວິນັຍນີ້ເປັນຜູ້ຄວຣອັພພານ ຖ້າພິກຂຸນີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກຂຸທັງຫລາຍວ່າ "ຂະນ້ອຍເປັນຜູ້ຄວຣອັພພານ ຂໍອາຣາທນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກຂຸທັງຫລາຍ ແມ່ນພິກຂຸນີນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກຂຸນີນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈະເຮັດຄວາມຂົນຂວາຍໃຫ້ອັພພານ" ແຕ່ຄວນກັບໃນ ໗ ວັນ

໘. ພິກຂຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ສົງຄ໌ຕ້ອງການຈະເຮັດກັມ ຄື ຕັຊຊນີຍກັມນິຍສກັມ ປັພພາຊນີຍກັມ ປຕິສາຣນີຍກັມ ຫລືອຸກເຂປນີຍກັມແກ່ພິກຂຸນີ ຖ້າພິກຂຸນີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກຂຸທັງຫລາຍວ່າ "ສົງຄ໌ເປັນຜູ້ຕ້ອງການຈະເຮັດກັມແກ່ຂະນ້ອຍ ຂໍອາຣາທນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກຂຸທັງຫລາຍ ແມ່ນພິກຂຸນີນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກຂຸນີນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈ ວ່າ "ດ້ວຍອຸບາຍຢ່າງໃດຫນໍ ສົງຄ໌ຈະບໍ່ຄວນທຳກັມຫລືຄວນປ່ຽນໄປເປັນໂທສເບົາ" ແຕ່ຄວນກັບໃນ ໗ ວັນ

໙. ກໍຫລືວ່າ ພິກຂຸນີນັ້ນຖືກສົງຄ໌ທຳກັມ ຄື ຕັຊຊນີຍກັມ ນິຍສກັມປັພພາຊນີຍກັມ ປຕິສາຣນີຍກັມ ຫລືອຸກເຂປນີຍກັມແລ້ວ ຖ້າພິກຂຸນີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກຂຸທັງຫລາຍວ່າ "ສົງຄ໌ທຳ ກັມແກ່ຂະນ້ອຍແລ້ວ ຂໍອາຣາທນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກຂຸທັງຫລາຍ ແມ່ນພິກຂຸນີນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອພິກຂຸນີນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ດ້ວຍອຸບາຍຢ່າງໃດຫນໍ ພິກຂຸນີນັ້ນຈະຄວນປະພຶດ ຊອບ ຄວນເຊົາຈອງຫອງ ຄວນກັບຕົວໄດ້ ສົງຄ໌ຄວນຣະງັບກັມນັ້ນເສັຽ" ແຕ່ຄວນກັບໃນ ໗ ວັນ

ສັຕຕາຫກໍຣນີຍະເນື່ອງດ້ວຍສິກຂມານາ ໙ ກໍຣະນີ

[໑໘໕] ໑. ພິກຂຸທັງຫລາຍ ກໍໃນກໍຣະນີນີ້ ສິກຂມານາເປັນໄຂ້ ຖ້າສິກຂມານານັ້ນ ຈະຄວນສົ່ງທູຕໄປໃນສຳນັກພິກຂຸທັງຫລາຍວ່າ "ຂະນ້ອຍເປັນໄຂ້ ຂໍອາຣາທນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍ

ປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນສິກຂມານານັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສິກຂມານານັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກແສວງຫາຄິລານພັຕ ຄິລານຸປັຕຖາກພັຕ ຫລືຄິລານເພສັຊ ຈັກຖາມອາການຫລືຈັກພຍາບາລ" ແຕ່ຄວນກັບໃນ ໗ ວັນ

໒. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຄວາມບໍ່ຍິນດີເກີດຂຶ້ນແກ່ສິກຂມານາ. . .

໓. ຄວາມຣຳຄານເກີດຂຶ້ນແກ່ສິກຂມານາ. . .

໔. ຄວາມເຫັນຜິດເກີດຂຶ້ນແກ່ສິກຂມານາ. .

໕. ສິກຂາຂອງສິກຂມານາກຳເຣິບ ຖ້າສິກຂມານານັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸ ທັງຫລາຍວ່າ "ສິກຂາຂອງຂະນ້ອຍກຳເຣິບແລ້ວ ຂໍອາຣາທນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍ ປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນສິກຂມານານັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສິກຂມານານັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈະເຮັດຄວາມຂິນຂວາຍໃຫ້ສມາທານສິກຂາ" ແຕ່ຄວນກັບໃນ ໗ ວັນ

໖. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ສິກຂມານາຕ້ອງການຈະອຸປສົມບົທ ຖ້າສິກຂມານານັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂະນ້ອຍຕ້ອງການຈະອຸປສົມບົທ ຂໍອາຣາທນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນສິກຂມານາ ນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສິກຂມານານັ້ນສົ່ງທູຕມາ ຄວນໄປ ດ້ວຍຕັ້ງໃຈວ່າ "ເຮົາຈະເຮັດຄວາມຂິນຂວາຍໃຫ້ອຸປສົມບົທ ຫລືຈັກຊ່ວຍສວດກັມວາຈາ ຫລືຈັກເປັນຄນປູຣກະ" ແຕ່ຄວນກັບໃນ ໗ ວັນ

ສັຕຕາຫກໍຣນີຍະເນື່ອງດ້ວຍສາມເນຣ ໖ ກໍຣະນີ

[໑໘໖] ໑. ພິກສຸທັງຫລາຍ ກໍໃນກໍຣະນີນີ້ ສາມເນຣເປັນໄຂ້ ຖ້າສາມເນຣນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຜູ້ຂ້າເປັນໄຂ້ ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນສາມເນຣນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສາມເນຣນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກແສວງຫາຄິລານພັຕ ຄິລານຸປັຕຖາກພັຕ ຫລືຄິລານເພສັຊ ຈັກຖາມອາການຫລືຈັກພຍາບາລ" ແຕ່ຄວນກັບໃນ ໗ ວັນ

໒. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຄວາມບໍ່ຍິນດີເກີດຂຶ້ນແກ່ສາມເນຣ. . .

໓. ຄວາມຣຳຄານເກີດຂຶ້ນແກ່ສາມເນຣ. . .

໔. ຄວາມເຫັນຜິດເກີດຂຶ້ນແກ່ສາມເນນ. . .
໕. ສາມເນນຕ້ອງການຈະຖາມປີ ຖ້າສາມເນນນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຜູ້ຂ້າເອງຕ້ອງການຈະຖາມປີ ຂໍອາຣາທນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນສາມເນນນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງ ເມື່ອສາມເນນນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກຖາມຫລືຈັກບອກ" ແຕ່ຄວນກັບໃນ ໗ ວັນ
໖. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ສາມເນນຕ້ອງການຈະອຸປສົມບົທ ຖ້າສາມເນນນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຜູ້ຂ້າເອງຕ້ອງການຈະອຸປສົມບົທ ຂໍອາຣາທນາພິກສຸທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນສາມເນນນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສາມເນນນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈ ວ່າ "ເຮົາຈະເຮັດຄວາມຂັນຂວາຍໃຫ້ອຸປສົມບົທ ຫລືຈັກຊ່ວຍສວດກັມວາຈາ ຫລືຈັກເປັນຄນປູຣກະ" ແຕ່ຄວນກັບໃນ ໗ ວັນ

ສັຕຕາຫກໍຣນີຍະເນື່ອງດ້ວຍສາມເນຣີ ໖ ກໍຣະນີ

[໑໗໗] ໑. ພິກສຸທັງຫລາຍ ກໍໃນກໍຣະນີນີ້ ສາມເນຣີເປັນໄຂ້ ຖ້າສາມເນຣີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂະນ້ອຍເປັນໄຂ້ ຂໍອາຣາທນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນສາມເນຣີນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສາມເນຣີນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກແສວງຫາຄິລານພັຕ ຄິລານຸປັຕຖາກພັຕ ຫລືຄິລານເພສັຊ ຈັກຖາມອາການ ຫລືຈັກພຍາບາລ" ແຕ່ຄວນກັບໃນ ໗ ວັນ
໒. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຄວາມບໍ່ຍິນດີເກີດຂຶ້ນແກ່ສາມເນຣີ . . .
໓. ຄວາມຣຳຄານເກີດຂຶ້ນແກ່ສາມເນຣີ . . .
໔. ຄວາມເຫັນຜິດເກີດຂຶ້ນແກ່ສາມເນຣີ . . .
໕. ສາມເນຣີຕ້ອງການຈະຖາມປີ ຖ້າສາມເນຣີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂະນ້ອຍຕ້ອງການຈະຖາມປີ ຂໍອາຣາທນາພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍ ປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນສາມເນຣີນັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສາມເນຣີນັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກຖາມຫລືຈັກບອກ" ແຕ່ຄວນກັບໃນ ໗ ວັນ
໖. ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ສາມເນຣີຕ້ອງການຈະສມາທານສິກຂາ ຖ້າສາມເນຣີນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຂະນ້ອຍຕ້ອງການຈະສມາທານສິກຂາ ຂໍອາຣາ ທນາ

ພຣະຜູ້ເປັນເຈົ້າທັງຫລາຍມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກຂຸທັງຫລາຍ ແມ່ນສາມເນຣີນັ້ນຈະ ບໍ່ສົ່ງທູຕມາ ກໍໄປດ້ວຍສັດຕາຫະກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສາມເນຣີນັ້ນສົ່ງທູຕມາ ຄວນ ໄປດ້ວຍຕັ້ງໃຈວ່າ "ເຮົາຈະເຮັດຄວາມຂິນຂວາຍໃຫ້ສະມາທານສິກຂາ" ແຕ່ຄວນກັບໃນ ໗ ວັນ

ພຣະວິນັຍປິດົກ ມຫາວັຄ [໑. ວັສສູປນາຍິກຂັນທກະ] ໑໑໑. ສັຕຕາຫັປປຫິຕານຸຊານນາ

໑໑໑. ສັຕຕາຫັປປຫິຕານຸຊານນາ

ວ່າດ້ວຍຊົງອະນຸຍາດສັດຕາຫະກໍຣະນີຍະເມື່ອບຸຄຄົລ ໗ ຈຳພວກຈະບໍ່ສົ່ງທູຕມາ

ເຣື້ອງມາຣດາບິດາເປັນໄຂ້

[໑໙໗] ສະໄມນັ້ນ ມາຣດາຂອງພິກຂຸຮູບນຶ່ງເປັນໄຂ້ ມາຣດານັ້ນສົ່ງທູຕໄປໃນສຳນັກ ພິກຂຸຜູ້ເປັນບຸຕຣວ່າ "ຂະນ້ອຍເປັນໄຂ້ ຂໍບຸຕຣຂອງຂະນ້ອຍຈົ່ງມາ ຂະນ້ອຍປະສົງຄ໌ໃຫ້ມາ" ລຳດັບນັ້ນ ພິກຂຸນັ້ນຄິດວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ເມື່ອບຸຄຄົລ ໗ ຈຳພວກສົ່ງທູຕມາ ໄປດ້ວຍສັດຕາຫະກໍຣະນີຍະໄດ້ ແຕ່ເມື່ອບໍ່ສົ່ງທູຕມາ ຈະໄປບໍ່ໄດ້ ສຳລັບສຫທັຣຣມິກທັງ ໕ ແມ່ນບໍ່ສົ່ງທູຕມາ ກໍໄປດ້ວຍສັດຕາຫະກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອສຫທັຣຣມິກທັງ ໕ ນັ້ນ ສົ່ງທູຕມາ ອີກຢ່າງນຶ່ງມາຣດາຂອງເຮົານີ້ເປັນໄຂ້ ແຕ່ມາຣດານັ້ນບໍ່ໄດ້ເປັນອຸບາສິກາ ເຮົາຈະຄວນປະຕິບັດຢ່າງໃດຫນໍ" ພິກຂຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກຂຸທັງຫລາຍ ແມ່ນເມື່ອບຸຄຄົລ ໗ ຈຳພວກ ຄື ພິກຂຸ ພິກຂຸນີ ສິກຂມານາ ສາມເນຣ ສາມເນຣີ ມາຣດາ ແລະບິດາ ຈະບໍ່ສົ່ງທູຕມາ ເຮົາອະນຸຍາດໃຫ້ໄປດ້ວຍສັດຕາຫະກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອບຸຄຄົລ ໗ ຈຳພວກນັ້ນສົ່ງທູຕມາພິກຂຸທັງຫລາຍ ເມື່ອບຸຄຄົລ ໗ ຈຳພວກເຫລົ່ານີ້ ແມ່ນບໍ່ໄດ້ສົ່ງທູຕມາ ເຮົາອະນຸຍາດໃຫ້ໄປດ້ວຍສັດຕາຫະກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອບຸຄຄົລ ໗ ຈຳພວກນັ້ນ ສົ່ງທູຕມາແຕ່ຄວນກັບໃນ ໗ ວັນ

ພິກຂຸທັງຫລາຍ ກໍໃນກໍຣະນີນີ້ ມາຣດາຂອງພິກຂຸເປັນໄຂ້ ຖ້າມາຣດານັ້ນຈະຄວນສົ່ງທູຕໄປ ໃນສຳນັກຂອງພິກຂຸຜູ້ເປັນບຸຕຣວ່າ "ຂະນ້ອຍເປັນໄຂ້ ຂໍບຸຕຣຂອງຂະນ້ອຍຈົ່ງມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກຂຸທັງຫລາຍ ແມ່ນມາຣດານັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັດຕາຫະກໍຣະນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອມາຣດານັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກແສວງຫາຄິລານພັຕຄິລານຸປັຕຖາກພັຕ ຫລືຄິລານເພສັຊ ຈັກຖາມອາກາຣ ຫລືຈັກພະຍາບາລ" ແຕ່ຄວນກັບໃນ ໗ ວັນ

ພຣະວິນັຍປິດົກ ມຫາວັຄ [໖. ວັສູສູປນາຍິກຂັນຫູກະ] ໑໑໔. ປຫິຕານຸຊານນາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ບິດາຂອງພິກສຸເປັນໄຂ້ ຖ້າບິດານັ້ນຈະຄວນສົ່ງທູຕໄປໃນສຳນັກຂອງພິກສຸຜູ້ເປັນບຸຕຣວ່າ "ຂະນ້ອຍເປັນໄຂ້ ຂໍບຸຕຣຂອງຂະນ້ອຍຈົ່ງມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ແມ່ນບິດານັ້ນຈະບໍ່ສົ່ງທູຕມາ ກໍໄປດ້ວຍສັຕຕາຫາກໍຣນີຍະໄດ້ ບໍ່ຈຳຕ້ອງກ່າວເຖິງເມື່ອບິດານັ້ນສົ່ງທູຕມາ ຄວນໄປດ້ວຍຕັ້ງໃຈວ່າ "ເຮົາຈັກແສວງຫາຄິລານພັຕ ຄິລານຸປັຕຖາກພັຕຫລືຄິລານເພສັຊ ຈັກຖາມອາກາຣ ຫລືຈັກພຍາບາລ" ແຕ່ຄວນກັບໃນ ໗ ວັນ

໑໑໔. ປຫິຕານຸຊານນາ

ວ່າດ້ວຍຊົງອນຸຍາຕສັຕຕາຫາກໍຣນີຍະເມື່ອອ້າຍນ້ອງຊາຍເປັນຕົ້ນສົ່ງທູຕມາ

[໑໘໘] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ອ້າຍນ້ອງຊາຍຂອງພິກສຸເປັນໄຂ້ ຖ້າອ້າຍ ນ້ອງຊາຍນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸຜູ້ເປັນອ້າຍນ້ອງຊາຍວ່າ "ຜູ້ຂ້າເປັນໄຂ້ ຂໍອ້າຍ ນ້ອງຊາຍຂອງຜູ້ຂ້າຈົ່ງມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ເມື່ອອ້າຍ ນ້ອງຊາຍ ນັ້ນສົ່ງທູຕມາ ຄວນໄປດ້ວຍສັຕຕາຫາກໍຣນີຍະໄດ້ ແຕ່ເມື່ອອ້າຍນ້ອງຊາຍນັ້ນບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫາກໍຣນີຍະ) ຄວນກັບໃນ ໗ ວັນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ເອື້ອຍນ້ອງສາວຂອງພິກສຸເປັນໄຂ້ ຖ້າເອື້ອຍ ນ້ອງສາວນັ້ນຈະຄວນສົ່ງທູຕໄປໃນສຳນັກຂອງພິກສຸຜູ້ເປັນອ້າຍນ້ອງຊາຍວ່າ "ຂະນ້ອຍເປັນໄຂ້ ຂໍອ້າຍ ນ້ອງຊາຍ ຂອງຂະນ້ອຍຈົ່ງມາ ຂະນ້ອຍປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ເມື່ອເອື້ອຍ ນ້ອງສາວນັ້ນສົ່ງທູຕມາ ຄວນໄປດ້ວຍສັຕຕາຫາກໍຣນີຍະໄດ້ ແຕ່ເມື່ອເອື້ອຍນ້ອງສາວນັ້ນບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫາກໍຣນີຍະ) ຄວນກັບໃນ ໗ ວັນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຍາຕຂອງພິກສຸເປັນໄຂ້ ຖ້າຍາຕນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸວ່າ "ຜູ້ຂ້າເປັນໄຂ້ ຂໍພຣະຄຸນເຈົ້າຈົ່ງມາ ຜູ້ຂ້າປະສົງຄ໌ໃຫ້ມາ" ພິກສຸທັງຫລາຍ ເມື່ອຍາຕນັ້ນສົ່ງທູຕມາ ຄວນໄປດ້ວຍສັຕຕາຫາກໍຣນີຍະໄດ້ ແຕ່ເມື່ອຍາຕນັ້ນ ບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫາກໍຣນີຍະ) ຄວນກັບໃນ ໗ ວັນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ບຸຣຸສຜູ້ອາສັຍຢູ່ກັບພິກສຸເປັນໄຂ້ ຖ້າບຸຣຸສນັ້ນຈະຄວນສົ່ງທູຕໄປໃນສຳນັກພິກສຸວ່າ "ຜູ້ຂ້າເປັນໄຂ້ ຂໍອາຣາທນາພຣະຄຸນເຈົ້າທັງຫລາຍມາ ຜູ້ຂ້າປະສົງຄ໌ໃຫ້ມາ"

ພິກສຸທັງຫລາຍ ເມື່ອບຸຣຸສນັ້ນສົ່ງທູຕມາ ຄວນໄປດ້ວຍສັຕຕາຫກໍຣນີຍະໄດ້ ແຕ່ເມື່ອບຸຣຸສນັ້ນບໍ່ສົ່ງທູຕມາ ບໍ່ຄວນໄປ (ເມື່ອໄປດ້ວຍສັຕຕາຫກໍຣນີຍະ) ຄວນກັບໃນ ໗ ວັນ

ຊົງອນຸຍາຕສັຕຕາຫກໍຣນີຍະສະເພາະກິຈຂອງສົງຂ໌

ສມັຍນັ້ນ ວິຫາຣຂອງສົງຂ໌ຫັກພັງ ອຸບາສົກຄົນນຶ່ງໄດ້ຕັດເຄື່ອງທັພພສັມພາຣະຖິ້ມໄວ້ໃນປ່າ ອຸບາສົກນັ້ນໄດ້ສົ່ງທູຕໄປໃນສຳນັກພິກສຸທັງຫລາຍວ່າ "ຖ້າພຣະຄຸນເຈົ້າທັງຫລາຍ ຈະຄວນຂນເຄື່ອງທັພພສັມພາຣະນັ້ນມາໄດ້ ຜູ້ຂ້າຂໍຖວາຍເຄື່ອງທັພພສັມພາຣະນັ້ນ" ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ໄປດ້ວຍສັຕຕາຫກໍຣນີຍະໄດ້ແຕ່ຄວນກັບໃນ ໗ ວັນ"

໑໑໓. ອັນຕຣາຍອນາປັຕຕິວັສສສເສທອາຣ

ວ່າດ້ວຍການຂາດພັນສາໂດຍບໍ່ຕ້ອງອາບັຕິໃນເມື່ອມີອັນຕຣາຍ

ເຣື້ອງສັຕວ໌ຮ້າຍບຽດບຽນ

[໔໐໐] ສມັຍນັ້ນ ພິກສຸທັງຫລາຍເຂົ້າຈຳພັນສາ ນະ ອາວາສແຫ່ງນຶ່ງໃນແຄວ້ນໂກສົລ ຖືກສັຕວ໌ຮ້າຍບຽດບຽນ ມັນຈັບເອົາໄວ້ແດ່ ແລ່ນໄລ່ໄປຮອບໆແດ່ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພິກສຸທັງຫລາຍເຂົ້າຈຳພັນສາຖືກສັຕວ໌ຮ້າຍບຽດບຽນ ມັນຈັບເອົາໄວ້ແດ່ ແລ່ນໄລ່ໄປຮອບໆແດ່ ພິກສຸເຫລົ່ານັ້ນ ຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນແລອັນຕຣາຍ" ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໑໓. ອັນຕຣາຍອນາປັຕຕິວັສສສເສທອາຣ

ເຣື້ອງງູບຽດບຽນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸທັງຫລາຍເຂົ້າຈຳພັນສາ ຖືກງູບຽດບຽນ ມັນຂົບກັດເອົາແດ່ ເລືອໄລ່ໄປຮອບໆແດ່ ພິກສຸເຫລົ່ານັ້ນຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນແລອັນຕຣາຍ" ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ເຣື້ອງພວກໂຈຣບຽດບຽນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸທັງຫລາຍເຂົ້າຈຳພັນສາ ຖືກພວກໂຈຣບຽດບຽນ

ມັນປຸ້ນແດ່ ຣຸມຕີແດ່ ພິກຂຸເຫລົ່ານັ້ນຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນແລອັນຕຣາຍ" ບໍ່ຕ້ອງ ອາບັຕິເນື່ອງຈາກຂາດພັນສາ

ເຣື້ອງປີສາຈຣິບກວນ

ພິກຂຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກຂຸທັງຫລາຍເຂົ້າຈຳພັນສາ ຖືກພວກປີສາຈຣິບກວນ ມັນເຂົ້າສິງແດ່ ຂ້າເອົາແດ່ ພິກຂຸເຫລົ່ານັ້ນຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນແລອັນຕຣາຍ" ບໍ່ຕ້ອງ ອາບັຕິເນື່ອງຈາກຂາດພັນສາ

ເຣື້ອງຫມູ່ບ້ານຖືກໄຟໄຫມ້

ພິກຂຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ເມື່ອພິກຂຸທັງຫລາຍເຂົ້າຈຳພັນສາ ຫມູ່ບ້ານຖືກໄຟໄຫມ້ ພິກຂຸທັງຫລາຍລຳບາກດ້ວຍບິນທບາຕ ພິກຂຸເຫລົ່ານັ້ນຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນແລ ອັນຕຣາຍ" ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ເຣື້ອງເສນາສນະຖືກໄຟໄຫມ້

ພິກຂຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ເມື່ອພິກຂຸທັງຫລາຍເຂົ້າຈຳພັນສາ ເສນາສນະຖືກ ໄຟ ໄຫມ້ ພິກຂຸທັງຫລາຍເດືອດຮ້ອນດ້ວຍເສນາສນະ ພິກຂຸເຫລົ່ານັ້ນຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນ ແລອັນຕຣາຍ" ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໑໓. ອັນຕຣາຍອນາປັຕຕິວັສສເສທວາຣ

ເຣື້ອງຫມູ່ບ້ານຖືກນ້ຳທ້ວມ

ພິກຂຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ເມື່ອພິກຂຸທັງຫລາຍເຂົ້າຈຳພັນສາ ຫມູ່ບ້ານຖືກນ້ຳທ້ວມ ພິກຂຸທັງຫລາຍລຳບາກດ້ວຍບິນທບາຕ ພິກຂຸເຫລົ່ານັ້ນຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນແລ ອັນຕຣາຍ" ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ເຣື້ອງເສນາສນະຖືກນ້ຳທ້ວມ

ພິກຂຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ເມື່ອພິກຂຸທັງຫລາຍເຂົ້າຈຳພັນສາ ເສນາສນະຖືກນ້ຳທ້ວມ ພິກຂຸທັງຫລາຍເດືອດຮ້ອນດ້ວຍເສນາສນະ ພິກຂຸເຫລົ່ານັ້ນຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນແລ ອັນຕຣາຍ" ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ເຣື້ອງຊາວບ້ານອົພຍົພໄປເພາະໂຈຣພັຍ

[໔໐໑] ສະໄມຍນັ້ນ ພິກສຸທັງຫລາຍເຂົ້າຈຳພັນສາໃນອາວາສແຫ່ງນຶ່ງ ຊາວບ້ານອົພຍົພໄປເພາະໂຈຣພັຍ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຕາມຊາວບ້ານໄປ"

ເຣື້ອງຊົງອນຸຍາຕໃຫ້ຕາມຫາຍົກມີຈຳນວນຫລາຍກວ່າ

ຊາວບ້ານແຕກແຍກເປັນສອງພວກ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຕາມຊາວບ້ານທີ່ມາກກວ່າໄປ" ຊາວບ້ານທີ່ຫລາຍກວ່າບໍ່ມີສັດທາ ບໍ່ເຫລື້ອມໃສ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຕາມຊາວບ້ານທີ່ມີສັດທາເຫລື້ອມໃສໄປ"

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໑໓. ອັນຕຣາຍອນາປັຕຕິວັສສເສທອາຣ

ເຣື້ອງບໍ່ໄດ້ໂພຊນະຫຼັມດາຫລືປານີຕເປັນຕົ້ນ

ສະໄມຍນັ້ນ ພິກສຸທັງຫລາຍເຂົ້າຈຳພັນສາ ນະ ອາວາສແຫ່ງນຶ່ງໃນແຄວ້ນໂກສົລ ບໍ່ໄດ້ໂພຊນາຫາຣຫຼັມດາຫລືປານີຕບໍຣິບູຣນ໌ຕາມຕ້ອງການ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພິກສຸທັງຫລາຍເຂົ້າຈຳພັນສາ ບໍ່ໄດ້ໂພຊນາຫາຣຫຼັມດາຫລືປານີຕບໍຣິບູຣນ໌ຕາມຕ້ອງການ ພິກສຸເຫລົ່ານັ້ນ ຄວນຫລີກໄປດ້ວຍສຳຄັນ ວ່າ "ນັ້ນແລອັນຕຣາຍ" ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸທັງຫລາຍເຂົ້າຈຳພັນສາ ໄດ້ໂພຊນາຫາຣຫຼັມດາຫລືປານີຕບໍຣິບູຣນ໌ຕາມຕ້ອງການ ແຕ່ບໍ່ໄດ້ໂພຊນາຫາຣທີ່ສະບາຍ ພິກສຸເຫລົ່ານັ້ນຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນແລອັນຕຣາຍ" ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸທັງຫລາຍເຂົ້າຈຳພັນສາ ໄດ້ໂພຊນາຫາຣຫຼັມດາຫລືປານີຕບໍຣິບູຣນ໌ຕາມຕ້ອງການແລະໄດ້ໂພຊນາຫາຣທີ່ສະບາຍ ແຕ່ບໍ່ໄດ້ເພສັຊທີ່ສະບາຍ ພິກສຸເຫລົ່ານັ້ນຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນແລອັນຕຣາຍ" ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸທັງຫລາຍເຂົ້າຈຳພັນສາ ໄດ້ໂພຊນາຫາຣຫຼັມດາຫລືປານີຕບໍຣິບູຣນ໌ຕາມຕ້ອງການ ໄດ້ໂພຊນາຫາຣທີ່ສະບາຍ ໄດ້ເພສັຊທີ່ສະບາຍ ແຕ່ບໍ່ໄດ້ອຸປັຕຖາກ

ຜູ້ສີມຄວຣ ພິກສຸເຫລົ່ານັ້ນຄວນຫລີກໄປດ້ວຍສຳຄັນວ່າ "ນັ້ນແລອັນຕຣາຍ" ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ເຣື້ອງສະຕຣີນິມົນຕ໌

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ສະຕຣີນິມົນຕ໌ພິກສຸຜູ້ເຂົ້າຈຳພັນສາວ່າ "ທ່ານຈົ່ງມາເຖີດ ຂະນ້ອຍຈະຖວາຍເງິນ ທອງ ນາ ສວນ ພໍ່ໂຄ ແມ່ໂຄ ທາສ ທາສີແກ່ທ່ານ ຫລືຈະຍົກ ລູກສາວໃຫ້ເປັນພັຣຍາຂອງທ່ານ ຂະນ້ອຍຈະເປັນພັຣຍາຂອງທ່ານ ຫລືຈະນຳສະຕຣີອື່ນມາໃຫ້ເປັນພັຣຍາຂອງທ່ານ" ໃນເຣື້ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ ພຣະຜູ້ມີພຣະພາກຕຣັສວ່າ ຈິຕກັບກລອກໄວນັກ ສັກໜ້ອຍຈະເປັນອັນຕຣາຍແກ່ພຣົມຈັນຍ໌ຂອງເຮົາກໍໄດ້ຄວນຫລີກໄປເສັຽ ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພຣະວິນັຍປີດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໑໔. ສັງຂເພທອນາປັຕຕິວັສສເສທວາຣ

ເຣື້ອງຍິງແພສຍານິມົນຕ໌

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ຍິງແພສຍານິມົນຕ໌ພິກສຸຜູ້ເຂົ້າຈຳພັນສາ

. . . ຍິງສາວເທື້ອນິມົນຕ໌ . . . . . . ກະເທີຍນິມົນຕ໌. . .

. . . ພວກຍາຕນິມົນຕ໌ . . . . . . ພຣະຣາຊາທັງຫລາຍນິມົນຕ໌. . .

. . . ພວກໂຈຣນິມົນຕ໌ . . .

. . . ພວກນັກເລງນິມົນຕ໌ພິກສຸຜູ້ເຂົ້າຈຳພັນສາວ່າ "ທ່ານຈົ່ງມາເຖີດຂະນ້ອຍ ພວກເຮົາຈະຖວາຍເງິນທອງ ນາ ສວນ ພໍ່ໂຄ ແມ່ໂຄ ທາສ ທາສີແກ່ທ່ານ ຫລືຈະຍົກລູກສາວໃຫ້ເປັນພັຣຍາຂອງທ່ານ ຫລືຈະນຳສະຕຣີອື່ນມາໃຫ້ເປັນພັຣຍາຂອງທ່ານ" ໃນເຣື້ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ ພຣະຜູ້ມີພຣະພາກຕຣັສວ່າ ຈິຕກັບກລອກໄວນັກ ຈັກໜ່ອຍຈະເປັນອັນຕຣາຍແກ່ພຣົມຈັນຍ໌ຂອງເຮົາກໍໄດ້ ຄວນຫລີກໄປເສັຽ ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ເຣື້ອງພບຂຸມຊັພຍ໌

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເຂົ້າຈຳພັນສາ ພົບຂຸມຊັພຍ໌ບໍ່ມີເຈົ້າຂອງ ໃນເຣື້ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ ພຣະຜູ້ມີພຣະພາກຕຣັສວ່າ ຈິຕກັບກລອກໄວນັກ ອີກໜ້ອຍຈະເປັນອັນຕຣາຍແກ່ພຣົມຈັນຍ໌ຂອງເຮົາກໍໄດ້ ຄວນຫລີກໄປເສັຽ ບໍ່ຕ້ອງອາບັຕິ ເນື່ອງຈາກຂາດພັນສາ

໑໑໔. ສັງຂະເພທອນາປັຕຕິວັສສູເສທວາຣ

ວ່າດ້ວຍການຂາດພັນສາໂດຍບໍ່ຕ້ອງອາບັຕິໃນເມື່ອມີຜູ້ພຍາຍາມທຳລາຍສົງຂ໌

ເຣື່ອງທຳລາຍສົງຂ໌ ໆ ກໍຣະນີ

[໔໐໔] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພິກສຸເຂົ້າຈຳພັນສາ ເຫັນພິກສຸມາກຮູບກຳລັງພຽນພຍາຍາມທຳລາຍສົງຂ໌ ໃນເຣື່ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ "ພຣະຜູ້ມີພຣະພາກຕຣັສວ່າ ການທຳລາຍສົງຂ໌ເປັນກັມຫນັກນັກ ເມື່ອເຮົາຍັງຢູ່ພ້ອມຫນ້າ ສົງຂ໌ຢ່າແຕກກັນເລີຍ" ຄວນຫລີກໄປເສັຽ ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໑໔. ສັງຂະເພທອນາປັຕຕິວັສສູເສທວາຣ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸທັງຫລາຍເຂົ້າຈຳພັນສາໄດ້ຍິນຂ່າວວ່າ ພິກສຸມາກຮູບໃນອາວາສພຸ້ນກຳລັງພຽນພຍາຍາມທຳລາຍສົງຂ໌ ໃນເຣື່ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ "ພຣະຜູ້ມີພຣະພາກຕຣັສວ່າ ການທຳລາຍສົງຂ໌ເປັນກັມຫນັກນັກ ເມື່ອເຮົາຍັງຢູ່ພ້ອມຫນ້າ ສົງຂ໌ຢ່າແຕກກັນເລີຍ" ຄວນຫລີກໄປເສັຽ ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເຂົ້າຈຳພັນສາໄດ້ຍິນຂ່າວວ່າ ພິກສຸມາກຮູບໃນອາວາສພຸ້ນກຳລັງພຽນພຍາຍາມທຳລາຍສົງຂ໌ ໃນເຣື່ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ "ພິກສຸເຫລົ່ານັ້ນລ້ວນເປັນມິຕຣຂອງເຮົາ ເຮົາຈັກວ່າກ່າວພິກສຸເຫລົ່ານັ້ນວ່າ ທ່ານທັງຫລາຍ ພຣະຜູ້ມີພຣະພາກຕຣັສວ່າ ການທຳລາຍສົງຂ໌ເປັນກັມຫນັກນັກ ພວກທ່ານຢ່າຊອບໃຈການທຳລາຍສົງຂ໌ເລີຍ ພິກສຸເຫລົ່ານັ້ນຈະເຮັດຕາມຄຳຂອງເຮົາ ຈັກເຊື່ອຟັງ ຈັກງ່ຽງໂສຕ" ຄວນຫລີກໄປເສັຽ ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເຂົ້າຈຳພັນສາໄດ້ຍິນຂ່າວວ່າ ພິກສຸມາກຮູບໃນອາວາສພຸ້ນກຳລັງພຽນພຍາຍາມທຳລາຍສົງຂ໌ ໃນເຣື່ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ "ພິກສຸເຫລົ່ານັ້ນບໍ່ແມ່ນມິຕຣຂອງເຮົາ ແຕ່ພິກສຸທັງຫລາຍທີ່ເປັນມິຕຣກັບພິກສຸເຫລົ່ານັ້ນເປັນມິຕຣຂອງເຮົາ ເຮົາຈັກບອກພິກສຸເຫລົ່ານັ້ນ ພິກສຸເຫລົ່ານັ້ນທີ່ເຮົາບອກ ກໍຈັກວ່າກ່າວພິກສຸເຫລົ່ານັ້ນວ່າ ທ່ານທັງຫລາຍ ພຣະຜູ້ມີພຣະພາກຕຣັສວ່າ ການທຳລາຍສົງຂ໌ເປັນກັມຫນັກນັກ ພວກທ່ານຢ່າຊອບໃຈການທຳລາຍສົງຂ໌ເລີຍ ພິກສຸເຫລົ່ານັ້ນຈະເຮັດຕາມຄຳຂອງພິກສຸເຫລົ່ານັ້ນ ຈັກເຊື່ອຟັງ ຈັກງ່ຽງໂສຕ" ຄວນຫລີກໄປເສັຽ ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເຂົ້າຈຳພັນສາໄດ້ຍິນຂ່າວວ່າ ພິກສຸມາກຮູບໃນອາວາສ

ພຸ້ນຈະເຮັດລາຍສິງຂ໌ ໃນເຣື້ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ "ພິກສຸເຫລົ່ານັ້ນລ້ວນເປັນມິຕຣຂອງເຮົາ ເຮົາຈັກວ່າກ່າວພິກສຸເຫລົ່ານັ້ນວ່າ ທ່ານທັງຫລາຍ ພຣະຜູ້ມີພຣະພາກຕຣັສວ່າ ກາຣທຳລາຍສິງຂ໌ ເປັນກັມໜັກນັກ ພວກທ່ານຢ່າຊອບໃຈກາຣທຳລາຍສິງຂ໌ເລີຍ ພິກສຸເຫລົ່ານັ້ນຈະເຮັດຕາມຄຳຂອງ ເຮົາ ຈັກເຊື່ອຟັງ ຈັກງ່ຽງໂສຕ" ຄວນຫລີກໄປເສັ້ຽ ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເຂົ້າຈຳພັນສາໄດ້ຍິນຂ່າວວ່າ ພິກສຸມາກຣູບໃນອາວາສ ພຸ້ນໄດ້ທຳລາຍສິງຂ໌ແລ້ວ ໃນເຣື້ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ "ພິກສຸເຫລົ່ານັ້ນ ບໍ່ແມ່ນມິຕຣຂອງເຮົາ ເລີຍ ແຕ່ພິກສຸທັງຫລາຍທີ່ເປັນມິຕຣກັບພິກສຸເຫລົ່ານັ້ນເປັນມິຕຣຂອງເຮົາ ເຮົາຈັກບອກພິກສຸເຫລົ່າ ນັ້ນ ພິກສຸເຫລົ່ານັ້ນທີ່ເຮົາບອກ ກໍຈັກວ່າກ່າວພິກສຸເຫລົ່ານັ້ນວ່າ ທ່ານທັງຫລາຍ ພຣະຜູ້ມີພຣະພາກ ຕຣັສວ່າ ກາຣທຳລາຍສິງຂ໌ເປັນກັມໜັກນັກ ພວກທ່ານຢ່າຊອບໃຈກາຣທຳລາຍສິງຂ໌ເລີຍ ພິກສຸ ເຫລົ່ານັ້ນຈະເຮັດຕາມຄຳຂອງພິກສຸເຫລົ່ານັ້ນ ຈັກເຊື່ອຟັງ ຈັກງ່ຽງໂສຕ" ຄວນຫລີກໄປເສັ້ຽ ບໍ່ ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເຂົ້າຈຳພັນສາໄດ້ຍິນຂ່າວວ່າ ພິກສຸນີມາກຣູບໃນ ອາວາສພຸ້ນກຳລັງພຽນພຍາຍາມທຳລາຍສິງຂ໌ ໃນເຣື້ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ "ພິກສຸນີເຫລົ່ານັ້ນ ລ້ວນເປັນມິຕຣຂອງເຮົາ ເຮົາຈັກວ່າກ່າວພິກສຸນີເຫລົ່ານັ້ນວ່າ ນ້ອງຍິງທັງຫລາຍ ພຣະຜູ້ມີພຣະພາກ ຕຣັສວ່າ ກາຣທຳລາຍສິງຂ໌ເປັນກັມໜັກນັກ ພວກນ້ອງຍິງຢ່າຊອບໃຈກາຣທຳລາຍສິງຂ໌ເລີຍ ພິກສຸນີ ເຫລົ່ານັ້ນຈະເຮັດຕາມຄຳຂອງເຮົາ ຈັກເຊື່ອຟັງ ຈັກງ່ຽງໂສຕ" ຄວນຫລີກໄປເສັ້ຽ ບໍ່ຕ້ອງອາບັຕິ ເນື່ອງຈາກຂາດພັນສາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເຂົ້າຈຳພັນສາໄດ້ຍິນຂ່າວວ່າ ພິກສຸນີມາກຣູບໃນ ອາວາສພຸ້ນກຳລັງພຽນພຍາຍາມທຳລາຍສິງຂ໌ ໃນເຣື້ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ "ພິກສຸນີເຫລົ່ານັ້ນບໍ່ ແມ່ນມິຕຣຂອງເຮົາ ແຕ່ພິກສຸນີທັງຫລາຍທີ່ເປັນມິຕຣກັບພິກສຸນີເຫລົ່ານັ້ນ ເປັນມິຕຣຂອງເຮົາ ເຮົາ ຈັກບອກພິກສຸນີເຫລົ່ານັ້ນ ພິກສຸນີເຫລົ່ານັ້ນທີ່ເຮົາບອກ ກໍຈັກວ່າກ່າວພິກສຸນີທີ່ພຽນພຍາຍາມ ທຳລາຍສິງຂ໌ເຫລົ່ານັ້ນວ່າ ນ້ອງຍິງທັງຫລາຍ ພຣະຜູ້ມີພຣະພາກຕຣັສວ່າ ກາຣທຳລາຍ ສິງຂ໌ເປັນກັມ ໜັກນັກ ພວກນ້ອງຍິງຢ່າຊອບໃຈກາຣທຳລາຍສິງຂ໌ເລີຍ ພິກສຸນີເຫລົ່ານັ້ນຈະເຮັດຕາມຄຳຂອງ ພິກສຸນີເຫລົ່ານັ້ນ ຈັກເຊື່ອຟັງ ຈັກງ່ຽງໂສຕ" ຄວນຫລີກໄປເສັ້ຽ ບໍ່ຕ້ອງອາບັຕິເນື່ອງຈາກຂາດ ພັນສາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເຂົ້າຈຳພັນສາໄດ້ຍິນຂ່າວວ່າ ພິກສຸນີມາກຮູບໃນອາວາສພຸ້ນຈະເຮັດລາຍສົງຂ໌ ໃນເຣື້ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ "ພິກສຸນີເຫລົ່ານັ້ນ ລ້ວນເປັນມິດຣຂອງເຮົາ ເຮົາຈັກວ່າກ່າວພິກສຸນີເຫລົ່ານັ້ນວ່າ ນ້ອງຍິງທັງຫລາຍ ພຣະຜູ້ມີພຣະພາກຕຣັສວ່າ ກາຣທຳລາຍສົງຂ໌ເປັນກັມຫນັກນັກ ພວກນ້ອງຍິງຢ່າຊອບໃຈກາຣທຳລາຍສົງຂ໌ເລີຍ ພິກສຸນີເຫລົ່ານັ້ນຈະເຮັດຕາມຄຳຂອງເຮົາ ຈັກເຊື່ອຟັງ ຈັກງ່ຽງໂສຕ" ຄວນຫລີກໄປເສັຽ ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸເຂົ້າຈຳພັນສາໄດ້ຍິນຂ່າວວ່າ ພິກສຸນີມາກຮູບ ໃນອາວາສພຸ້ນໄດ້ທຳລາຍສົງຂ໌ແລ້ວ ໃນເຣື້ອງນັ້ນ ຖ້າພິກສຸຄິດຢ່າງນີ້ວ່າ "ພິກສຸນີເຫລົ່ານັ້ນ ບໍ່ແມ່ນມິດຣຂອງເຮົາ ແຕ່ພິກສຸນີທັງຫລາຍທີ່ເປັນມິດຣກັບພິກສຸນີເຫລົ່ານັ້ນເປັນມິດຣຂອງເຮົາ ເຮົາຈັກບອກພິກສຸນີເຫລົ່ານັ້ນ ພິກສຸນີເຫລົ່ານັ້ນທີ່ເຮົາບອກ ກໍຈັກວ່າກ່າວພິກສຸນີທີ່ທຳລາຍສົງຂ໌ເຫລົ່ານັ້ນວ່າ ນ້ອງຍິງທັງຫລາຍ ພຣະຜູ້ມີພຣະພາກຕຣັສວ່າ ກາຣທຳລາຍສົງຂ໌ເປັນກັມຫນັກນັກ ພວກນ້ອງຍິງຢ່າຊອບໃຈກາຣທຳລາຍສົງຂ໌ເລີຍ ພິກສຸນີເຫລົ່ານັ້ນ ຈະເຮັດຕາມຄຳຂອງພິກສຸນີເຫລົ່ານັ້ນ ຈັກເຊື່ອຟັງຈັກງ່ຽງໂສຕ" ຄວນຫລີກໄປເສັຽ ບໍ່ຕ້ອງອາບັຕິເນື່ອງຈາກຂາດພັນສາ

໑໑໕. ວຊາທິວັສສູປຄມນະ

ວ່າດ້ວຍກາຣເຂົ້າຈຳພັນສາໃນຄອກໂຄເປັນຕົ້ນ

ເຣື້ອງເຂົ້າຈຳພັນສາໃນຄອກໂຄ

[໔໐໖] ສມັຍນັ້ນ ພິກສຸຮູບນຶ່ງຕ້ອງກາຣຈະເຂົ້າຈຳພັນສາໃນຄອກໂຄ໑ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ເຂົ້າຈຳພັນສາໃນຄອກໂຄໄດ້" ຄອກໂຄຍ້າຍໄປ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຍ່າງທາງໄປກັບຄອກໂຄໄດ້"

ເຣື້ອງເຂົ້າຈຳພັນສາໃນຫມູ່ກວຽນ

ສມັຍນັ້ນ ພິກສຸຮູບນຶ່ງເມື່ອໃກ້ວັນເຂົ້າພັນສາຕ້ອງກາຣຈະໄປກັບຫມູ່ກວຽນ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ໝາຍເຫດ :

໑ ຄອກໂຄ ໃນທີ່ນີ້ໝາຍເຖິງສະຖານທີ່ຊຶ່ງຄົນລ້ຽງໂຄພັກອາສັຍ ໃນຂນະທີ່ຕ້ອນໂຄໄປລ້ຽງ ນະທີ່ແຫ່ງໃດແຫ່ງນຶ່ງ ບໍ່ໄດ້ໝາຍເຖິງຄອກໂຄທີ່ປະຈຳຢູ່ຕາມໝູ່ບ້ານ (ວິ. ອ. ໓/໔໐໓/໑໕໐)

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທະກະ] ໑໑໕. ວັສສານຸປຄັນຕັພພັຕຖານ

ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ເຂົ້າຈຳພັນສາໃນໝູ່ກວຽນໄດ້"

ເຣື້ອງເຂົ້າຈຳພັນສາໃນເຮືອ

ສມັຍນັ້ນ ພິກສຸຮູບນຶ່ງເມື່ອໃກ້ວັນເຂົ້າພັນສາຕ້ອງການຈະຍ່າງທາງໄປກັບເຮືອ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ເຂົ້າຈຳພັນສາໃນເຮືອໄດ້"

໑໑໕. ວັສສານຸປຄັນຕັພພັຕຖານ

ວ່າດ້ວຍສະຖານທີ່ບໍ່ຄວຣເຂົ້າຈຳພັນສາ

ເຣື້ອງເຂົ້າຈຳພັນສາໃນໂພນໄມ້

[໔໐໔] ສມັຍນັ້ນ ພິກສຸທັງຫລາຍເຂົ້າຈຳພັນສາໃນໂພນໄມ້ ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມໂພນທະນາວ່າ "ເໝືອນພວກປີສາຈ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ຄວນເຂົ້າຈຳພັນສາໃນໂພນໄມ້ຮູບໃດເຂົ້າຈຳ ຕ້ອງອາບັຕິທຸກກະຕະ"

ເຣື້ອງເຂົ້າຈຳພັນສາບນຄ່າຄົບໄມ້

ສມັຍນັ້ນ ພິກສຸທັງຫລາຍເຂົ້າຈຳພັນສາບນຄ່າຄບໄມ້ ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມໂພນທະນາວ່າ "ເໝືອນພວກພານເນື້ອ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ຄວນເຂົ້າຈຳພັນສາບົນຄ່າຄົບໄມ້ຮູບໃດເຂົ້າຈຳ ຕ້ອງອາບັຕິທຸກກະຕະ"

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໑໘. ວັສສານຸປຄັນຕັພພັຕຖານ

ເຣື້ອງເຂົ້າຈຳພັນສາໃນທີ່ແຈ້ງ

ສມັຍນັ້ນ ພິກສຸທັງຫລາຍເຂົ້າຈຳພັນສາໃນທີ່ແຈ້ງ ເມື່ອຝົນຕົກ ພາກັນແລ່ນເຂົ້າເຫງົ້າໄມ້ແດ່ ຊາຍຄາແດ່ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ຄວນເຂົ້າຈຳພັນສາໃນທີ່ແຈ້ງ ຮູບໃດເຂົ້າຈຳ ຕ້ອງອາບັຕິທຸກກະຕະ"

ເຣື້ອງພິກສຸບໍ່ມີເສນາສນະຈຳພັນສາ

ສມັຍນັ້ນ ພິກສຸທັງຫລາຍບໍ່ມີເສນາສນະເປັນທີ່ເຂົ້າຈຳພັນສາ ເດືອດຮ້ອນເພາະຄວາມໜາວແດ່ຄວາມຮ້ອນແດ່ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ມີເສນາສນະ ບໍ່ຄວນເຂົ້າຈຳພັນສາ ຮູບໃດເຂົ້າຈຳ ຕ້ອງອາບັຕິທຸກກະຕະ"

ເຣື້ອງເຂົ້າຈຳພັນສາໃນກະຕູບຜີ

ສມັຍນັ້ນ ພິກສຸທັງຫລາຍເຂົ້າຈຳພັນສາໃນກະຕູບຜີ໑ ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມໂພນທະນາວ່າ "ເໝືອນພວກສັປເຣີ່" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ຄວນເຂົ້າຈຳພັນສາໃນກະຕູບຜີ ຮູບໃດເຂົ້າຈຳ ຕ້ອງອາບັຕິທຸກກະຕະ"

ໝາຍເຫດ :

໑ ກະຕູບຜີ ຫມາຍເຖິງກະຕູບທີ່ເຂົາສ້າງໄວ້ໃນປ່າຊ້າເປັນທີ່ເກັບສົພ (ປາຈິຕິຍາທິໂຍຊນາ ໓໔໑ ມ.) ຫລືຕຽງຕັ່ງທີ່ເຂົາຕັ້ງໄວ້ໃນປ່າຊ້າແລະເຫວສະຖານ ແລະເຮືອນທີ່ສ້າງກໍ່ແຜ່ນສິລາ ໔ ດ້ານ ແລະວາງແຜ່ນສິລາທັບໄວ້ຂ້າງເທິງ(ໂກດັ່ງເກັບສົພ) ຊົງຫ້າມເຂົ້າຈຳພັນສາໃນສະຖານທີ່ດັ່ງກ່າວນີ້ ແຕ່ຈະສ້າງກຸຕິຫລືກະຕູບອື່ນໃນປ່າຊ້າແລ້ວເຂົ້າຈຳພັນສາໄດ້ ບໍ່ຊົງຫ້າມ (ວິ. ອ. ໓/໔໐໔/໑໕໑-໑໕໔, ສາຣັຕຖ. ຕີກາ ໓/໔໐໔/໓໔໕)

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໑໗. ອທັມມິກກະຕິກາ

ເຣື້ອງເຂົ້າຈຳພັນສາໃນຣົ່ມ

ສະໄໝນັ້ນ ພິກສຸທັງຫລາຍເຂົ້າຈຳພັນສາໃນຣົ່ມ ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມ ໂພນທະນາອ່າ "ເໝືອນພວກຄົນລ້ຽງໂຄ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ຄວນເຂົ້າຈຳພັນສາໃນຣົ່ມ ຮູບໃດເຂົ້າຈຳ ຕ້ອງອາບັຕິທຸກກະຕະ"

ເຣື້ອງເຂົ້າຈຳພັນສາໃນຕຸ່ມ

ສະໄໝນັ້ນ ພິກສຸທັງຫລາຍເຂົ້າຈຳພັນສາໃນຕຸ່ມ ມະນຸສຍ໌ທັງຫລາຍພາກັນຕຳໜິ ປະນາມ ໂພນທະນາອ່າ "ເໝືອນພວກເດັຽຣະຖີຍ໌" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸບໍ່ຄວນເຂົ້າຈຳພັນສາໃນຕຸ່ມ ຮູບໃດເຂົ້າຈຳ ຕ້ອງອາບັຕິທຸກກະຕະ"

໑໑໗. ອທັມມິກກະຕິກາ

ວ່າດ້ວຍການຕັ້ງກະຕິກາບໍ່ຊອບທັມ

ເຣື້ອງຕັ້ງກະຕິກາບໍ່ຊອບທັມ

[໔໐໕] ສະໄໝນັ້ນ ພຣະສົງຂ໌ໃນກຸງສາວັດຖີໄດ້ຕັ້ງກະຕິກາເຊັ່ນນີ້ວ່າ ໃນຣະຫວ່າງພັນສາ ບໍ່ຄວນໃຫ້ບັນພະຊາ ຫລານຊາຍຂອງນາງວິສາຂາມິຄາຣມາຕາເຂົ້າໄປຫາພິກສຸທັງຫລາຍແລ້ວຂໍບັນພະຊາ ພິກສຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານ ພຣະສົງຂ໌ໄດ້ຕັ້ງກະຕິກາເຊັ່ນນີ້ວ່າ ໃນຣະຫວ່າງພັນສາ ບໍ່ຄວນໃຫ້ບັນພະຊາ ຄຸນຈົງຖ້າຈົນກວ່າພິກສຸທັງຫລາຍເຂົ້າຈຳພັນສາ ອອກພັນສາແລ້ວຈຶ່ງບວຊໄດ້"

ພຣະວິນັຍປິດົກ ມຫາວັຄ [໑. ວັສສູປນາຍິກຂັນທກະ] ໑໑໗. ປຕິສສວທຸກກະຕະາປັຕຕິ

ຕໍ່ມາ ພິກສຸເຫລົ່ານັ້ນອອກພັນສາແລ້ວ ໄດ້ກ່າວກັບຫລານຊາຍຂອງນາງວິສາຂາມິຄາຣມາຕາດັ່ງນີ້ວ່າ "ບັດນີ້ ທ່ານຈົ່ງມາບວຊເຖີດ" ຫລານຊາຍຂອງນາງວິສາຂາມິຄາຣມາຕານັ້ນ ກ່າວຢ່າງນີ້ວ່າ "ພຣະຄຸນເຈົ້າທັງຫລາຍ ຖ້າຜູ້ຂ້າຄວນບັນພະຊາແລ້ວນີ້ ກໍຄວນຍິນດີຍິ່ງ ບັດນີ້ຜູ້ຂ້າຈັກບໍ່ບັນພະຊາລະ ຂະນ້ອຍ" ນາງວິສາຂາມິຄາຣມາຕາຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈົ່ງໃດ ພຣະຄຸນເຈົ້າທັງຫລາຍຈຶ່ງໄດ້ຕັ້ງກະຕິກາເຊັ່ນນີ້ວ່າ ໃນຣະຫວ່າງພັນສາ ບໍ່ຄວນໃຫ້ບັນພະຊາ ກາລເຊັ່ນໃດລະ

ບໍ່ຄວນປະພຶດທຳ" ພິກສຸທັງຫລາຍໄດ້ຍິນນາງວິສາຂາມິຄາຣມາຕາຕຳຫນິ ປະນາມ ໂພນທະນາ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍບໍ່ຄວນຕັ້ງກະຕິກາເຊັ່ນນີ້ວ່າ ໃນຣະຫວ່າງພັນສາ ບໍ່ຄວນໃຫ້ບັນພະຊາ ສົງຊ໌ຫມູ່ໃດຕັ້ງ ຕ້ອງອາບັຕິທຸກກະຕະ"

໑໑໗. ປຕິສສວທຸກກະຕະາປັຕຕິ

ວ່າດ້ວຍການຕ້ອງອາບັຕິທຸກກະຕະເພາະຮັບຄຳ

ເຣື້ອງພຣະອຸປນັນທະເຂົ້າຈຳພັນສາໃນອາວາສ ໔ ບ່ອນ

[໔໐໗] ສມັຍນັ້ນ ທ່ານພຣະອຸປນັນທສາກຍບຸຕຣໄດ້ຮັບຄຳກັບພຣະເຈົ້າປເສນທິໂກສົລ ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ທ່ານກຳລັງໄປອາວາສນັ້ນ ຣະຫວ່າງທາງໄດ້ເຫັນອາວາສ ໔ ບ່ອນ ມີຈີວອນມາກ ແລ້ວໄດ້ມີຄວາມຄິດດັ່ງນີ້ວ່າ "ຖ້າຢ່າງນັ້ນ ເຮົາຄວນເຂົ້າຈຳພັນສາໃນອາວາສ ໔ ບ່ອນນີ້ ເມື່ອເປັນເຊັ່ນນີ້ ຈີວອນເປັນອັນມາກຈັກເກີດຂຶ້ນແກ່ເຮົາ" ຈຶ່ງເຂົ້າຈຳພັນສາໃນອາວາສ ໔ ບ່ອນນັ້ນ ພຣະເຈົ້າປເສນທິໂກສົລຊົງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດ ພຣະຄຸນເຈົ້າ ອຸປນັນທສາກຍບຸຕຣໄດ້ຮັບຄຳຕໍ່ເຮົາວ່າຈະເຂົ້າຈຳພັນສາແລ້ວ ຈຶ່ງໄດ້ເຮັດໃຫ້ຄາດຈາກຄຳເວົ້າເສັຽລະ ພຣະຜູ້ມີພຣະພາກຊົງຕຳຫນິການກ່າວເທັຈ ຊົງສັຣເສີນການງົດເວັ້ນຈາກການກ່າວເທັຈ ໂດຍປະການຕ່າງໆບໍ່ແມ່ນບໍ"

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໑໗. ປຕິສສວທຸກກະຕະາປັຕຕິ

ພິກສຸທັງຫລາຍໄດ້ຍິນພຣະເຈົ້າປເສນທິໂກສົລຕຳຫນິ ປະນາມ ໂພນທະນາຢູ່ ບັນດາພິກສຸຜູ້ມັກນ້ອຍຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດ ທ່ານພຣະອຸປນັນທສາກຍບຸຕຣໄດ້ຮັບຄຳກັບພຣະເຈົ້າປເສນທິໂກສົລວ່າຈະເຂົ້າຈຳພັນສາ ແລ້ວຈຶ່ງໄດ້ເຮັດໃຫ້ຄາດຈາກຄຳເວົ້າເສັຽລະ ພຣະຜູ້ມີພຣະພາກຊົງຕຳຫນິການກ່າວເທັຈ ຊົງສັຣເສີນການງົດເວັ້ນຈາກການກ່າວເທັຈ ໂດຍປະການຕ່າງໆບໍ່ແມ່ນບໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ຄັ້ງນັ້ນ ພຣະຜູ້ມີພຣະພາກຮັບສັ່ງໃຫ້ປະຊຸມພິກສຸສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າທ່ານໄດ້ຖວາຍປະຕິຍານຕໍ່ພຣະເຈົ້າປເສນທິໂກສົລວ່າຈະເຂົ້າຈຳພັນສາ ແລ້ວເຮັດໃຫ້ຄາດຈາກຄຳເວົ້າເສັຽ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸດທະເຈົ້າຂ້າ"

ພຣະຜູ້ມີພຣະພາກພຸດທະເຈົ້າຊົງຕຳຫນິວ່າ "ໂມຂບຸຣຸສ ຈັ່ງໃດທ່ານໄດ້ຖວາຍປະຕິຍານຕໍ່ພຣະເຈົ້າປະເສນທິໂກສົລວ່າຈະເຂົ້າຈຳພັນສາ ແລ້ວເຮັດໃຫ້ຄາດຈາກຄຳເວົ້າເສັຽລະ ເຮົາຕຳຫນິການກ່າວເທັຈ ສັຣເສີນການງົດເວັ້ນຈາກການກ່າວເທັຈ ໂດຍປະການຕ່າງໆ ບໍ່ແມ່ນບໍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ຄັນຊົງຕຳຫນິແລ້ວຊົງສະແດງທັມມີກຖາຮັບສັ່ງກັບພິກສຸທັງຫລາຍວ່າ

[໒໐໗] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນກຳລັງໄປອາວາສນັ້ນ ຣະຫວ່າງທາງໄດ້ເຫັນອາວາສ ໔ ບ່ອນ ມີຈີວອນມາກແລ້ວໄດ້ມີຄວາມຄິດດັ່ງນີ້ວ່າ "ຖ້າຢ່າງນັ້ນ ເຮົາຄວນເຂົ້າຈຳພັນສາໃນອາວາສ ໔ ບ່ອນນີ້ ເມື່ອເປັນຊຸ່ນນີ້ ຈີວອນເປັນອັນມາກຈັກເກີດຂຶ້ນແກ່ເຮົາ" ແລ້ວເຂົ້າຈຳພັນສາໃນອາວາສ ໔ ບ່ອນພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນບໍ່ປາກົດ ແລະທ່ານຕ້ອງອາບັຕິທຸກກະຕະເພາະຮັບຄຳ໑
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມພາຍນອກ ເຖິງວັນແຣມ ໑ ຄ່ຳ

ໝາຍເຫດ :
໑ ອາບັຕິທຸກກະຕະທີ່ຕ້ອງເພາະຮັບຄຳ ຮຽກວ່າ ປຕິສສວທຸກກະຕະ

ພຣະວິນັຍປິດົກ ມຫາວັຄ [໓. ວັສສູປນາຍິກຂັນທກະ] ໑໑໗. ປຕິສສວທຸກກະຕະາປັຕຕິ

ຈຶ່ງເຂົ້າວິຫານ ຈັດເສນາສນະ ຕັ້ງນ້ຳສັນນ້ຳໃຊ້ ກວາດບໍຣິເວນະ ບໍ່ມີກິຈຈຳຕ້ອງທຳຫລີກໄປໃນມື້ນັ້ນທີດຽວ ພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນ ຕ້ອງອາບັຕິທຸກກະຕະເພາະຮັບຄຳ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມພາຍນອກ ເຖິງວັນແຣມ ໑ ຄ່ຳ ຈຶ່ງເຂົ້າວິຫານ ຈັດເສນາສນະ ຕັ້ງນ້ຳສັນນ້ຳໃຊ້ ກວາດບໍຣິເວນະ ມີກິຈຈຳຕ້ອງທຳຫລີກໄປໃນມື້ນັ້ນທີດຽວ ພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນຕ້ອງອາບັຕິທຸກກະຕະເພາະຮັບຄຳ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມພາຍນອກ ເຖິງວັນແຣມ ໑ ຄ່ຳ ຈຶ່ງເຂົ້າວິຫານ ຈັດເສນາສນະ

ຕັ້ງນ້ຳສັນນ້ຳໃຊ້ ກວາດບໍຣິເວນະ ພັກຢູ່ ໔-໕ ວັນ ບໍ່ມີກິຈຈຳ ຕ້ອງທຳຫລີກໄປ ພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນ ຕ້ອງອາບັຕິທຸກກະຕະເພາະຮັບຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມພາຍນອກ ເຖິງວັນແຮມ ໑ ຄ່ຳ ຈຶ່ງເຂົ້າວິຫາຣ ຈັດເສນາສນະ ຕັ້ງນ້ຳສັນນ້ຳໃຊ້ ກວາດບໍຣິເວນະ ພັກຢູ່ ໔-໕ ວັນ ມີກິຈຈຳຕ້ອງທຳຫລີກໄປ ພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນ ຕ້ອງອາບັຕິທຸກກະຕະເພາະຮັບຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມພາຍນອກ ເຖິງວັນແຮມ ໑ ຄ່ຳ ຈຶ່ງເຂົ້າວິຫາຣ ຈັດເສນາສນະ ຕັ້ງນ້ຳສັນນ້ຳໃຊ້ ກວາດບໍຣິເວນະ ພັກຢູ່ ໔-໕ ວັນ ຫລີກໄປດ້ວຍສັຕຕາຫກໍຣນີຍະ ຢູ່ພາຍນອກພົ້ນ ໆ ວັນ ພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນຕ້ອງອາບັຕິທຸກກະຕະເພາະຮັບຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມພາຍນອກ ເຖິງວັນແຮມ ໑ ຄ່ຳ ຈຶ່ງເຂົ້າວິຫາຣ ຈັດເສນາສນະ ຕັ້ງນ້ຳສັນນ້ຳໃຊ້ ກວາດບໍຣິເວນະ ພັກຢູ່ ໔-໕ ວັນ ຫລີກໄປດ້ວຍສັຕຕາຫກໍຣນີຍະ ກັບມາພາຍໃນ ໆ ວັນ ພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນປາກົດແລະພິກສຸນັ້ນບໍ່ຕ້ອງອາບັຕິເພາະຮັບຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມພາຍນອກ ເຖິງວັນແຮມ ໑ ຄ່ຳ ຈຶ່ງເຂົ້າວິຫາຣ ຈັດເສນາສນະ ຕັ້ງນ້ຳສັນນ້ຳໃຊ້ ກວາດບໍຣິເວນະ ອີກ ໆ ວັນ ຈະເຖິງວັນປວາຣນາມີກິຈຈຳຕ້ອງທຳຫລີກໄປ ພິກສຸທັງຫລາຍ ພິກສຸນັ້ນ ຈະກັບອາວາສນັ້ນ ຫລືບໍ່ກັບມາກໍຕາມ ພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນປາກົດ ແລະພິກສຸນັ້ນບໍ່ຕ້ອງອາບັຕິເພາະຮັບຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມພາຍນອກ ເຖິງວັນແຮມ ໑ ຄ່ຳ ຈຶ່ງເຂົ້າວິຫາຣ ຈັດເສນາສນະ ຕັ້ງນ້ຳສັນນ້ຳໃຊ້ ກວາດບໍຣິເວນະ ບໍ່ມີກິຈຈຳຕ້ອງທຳຫລີກໄປໃນມື້ນັ້ນທີດຽວ ພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນບໍ່ປາກົດແລະພິກສຸນັ້ນຕ້ອງອາບັຕິທຸກກະຕະເພາະຮັບຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນໄປອາວາສນັ້ນແລ້ວທຳອຸໂບສົຖ ເຖິງວັນແຮມ ໑ ຄ່ຳຈຶ່ງເຂົ້າວິຫາຣຈັດອາສນະ ຕັ້ງນ້ຳສັນນ້ຳໃຊ້ ກວາດບໍຣິເວນະ ມີກິຈຈຳຕ້ອງທຳຫລີກໄປ . . .

. . . ພັກຢູ່ ໔-໕ ວັນ ບໍ່ມີກິຈຈໍາຕ້ອງທໍາ ຫລີກໄປ. . .

. . . ພັກຢູ່ ໔-໕ ວັນ ມີກິຈຈໍາຕ້ອງທໍາຫລີກໄປ . . .

. . . ພັກຢູ່ ໔-໕ ວັນ ຫລີກໄປດ້ວຍສັຕຕາຫກໍຣນີຍະ ຢູ່ພາຍນອກພົ້ນ ໆ ວັນ ພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນຕ້ອງອາບັຕິທຸກກະຕະເພາະຮັບຄໍາ

. . . ພັກຢູ່ ໔-໕ ວັນ ຫລີກໄປດ້ວຍສັຕຕາຫກໍຣນີຍະ ກັບມາໃນ ໆ ວັນ ພິກສຸທັງຫລາຍ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນປາກົດ ແລະພິກສຸນັ້ນບໍ່ຕ້ອງອາບັຕິ ເພາະຮັບຄໍາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄໍາໄວ້ວ່າຈະເຂົ້າຈໍາພັນສາໃນວັນເຂົ້າພັນສາຕົ້ນ ພິກສຸນັ້ນໄປອາວາສນັ້ນທໍາອຸໂບສົຖກັມ ເຖິງວັນແຮມ ໑ ຄໍ່າ ຈຶ່ງເຂົ້າວິຫາຣຈັດເສນາສນະ ຕັ້ງນໍ້າສັນ ນໍ້າໃຊ້ ກວາດບໍຣິເວນະ ອີກ ໆ ວັນ ຈະເປັນວັນປວາຣນາ ມີກິຈຈໍາຕ້ອງທໍາຫລີກໄປ ພິກສຸທັງຫລາຍ ພິກສຸນັ້ນຈະກັບມາອາວາສນັ້ນຫລືບໍ່ກັບມາກໍຕາມ ວັນເຂົ້າພັນສາຕົ້ນຂອງພິກສຸນັ້ນປາກົດ ແລະພິກສຸ ນັ້ນບໍ່ຕ້ອງອາບັຕິເພາະຮັບຄໍາ

ເຣື້ອງຮັບຄໍາທີ່ຈະເຂົ້າຈໍາພັນສາຫລັງ

[໒໐໗] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພິກສຸຮັບຄໍາໄວ້ວ່າຈະເຂົ້າຈໍາພັນສາໃນວັນເຂົ້າພັນສາຫລັງ ພິກສຸນັ້ນໄປອາວາສນັ້ນທໍາອຸໂບສົຖກັມພາຍນອກ ເຖິງວັນແຮມ ໑ ຄໍ່າ ຈຶ່ງເຂົ້າວິຫາຣ ຈັດເສນາສນະ ຕັ້ງນໍ້າສັນນໍ້າໃຊ້ ກວາດບໍຣິເວນະ ບໍ່ມີກິຈຈໍາຕ້ອງທໍາຫລີກໄປໃນວັນນັ້ນທີດຽວ ພິກສຸທັງຫລາຍ ວັນເຂົ້າພັນສາຫລັງຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນ ຕ້ອງອາບັຕິທຸກກະຕະເພາະຮັບຄໍາ ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄໍາໄວ້ວ່າຈະເຂົ້າຈໍາພັນສາໃນວັນເຂົ້າພັນສາຫລັງ ພິກສຸນັ້ນໄປອາວາສນັ້ນທໍາອຸໂບສົຖກັມພາຍນອກ ເຖິງວັນແຮມ ໑ ຄໍ່າ ຈຶ່ງເຂົ້າວິຫາຣ ຈັດເສນາ ສນະ ຕັ້ງນໍ້າສັນນໍ້າໃຊ້ ກວາດບໍຣິເວນະ ມີກິຈຈໍາຕ້ອງທໍາຫລີກໄປໃນມື້ນັ້ນທີດຽວ ພິກສຸທັງຫລາຍ ວັນເຂົ້າພັນສາຫລັງຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນຕ້ອງອາບັຕິທຸກກະຕະເພາະຮັບຄໍາ ພິກສຸທັງ ຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄໍາໄວ້ວ່າຈະເຂົ້າຈໍາພັນສາໃນວັນເຂົ້າພັນສາຫລັງ ພິກສຸນັ້ນ ໄປອາວາສນັ້ນທໍາອຸໂບສົຖກັມພາຍນອກ ເຖິງວັນແຮມ ໑ ຄໍ່າ ຈຶ່ງເຂົ້າວິຫາຣ ຈັດເສນາສນະ ຕັ້ງນໍ້າ ສັນນໍ້າໃຊ້ ກວາດບໍຣິເວນະ ພັກຢູ່ ໔-໕ ວັນ ບໍ່ມີກິຈຈໍາຕ້ອງທໍາຫລີກໄປ ພິກສຸທັງຫລາຍ ວັນເຂົ້າ ພັນສາຫລັງຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນຕ້ອງອາບັຕິເພາະຮັບຄໍາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄໍາໄວ້ວ່າຈະເຂົ້າຈໍາພັນສາໃນວັນເຂົ້າພັນສາຫລັງ . . . ພັກຢູ່ ໔-໕ ວັນ ມີກິຈຈໍາຕ້ອງທໍາຫລີກໄປ . . . ວັນເຂົ້າພັນສາຫລັງຂອງພິກສຸນັ້ນບໍ່ປາກົດ

ແລະພິກສຸນັ້ນຕ້ອງອາບັຕິທຸກກະຕະເພາະຮັບຄຳພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳ ໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຫລັງ . . . ພັກຢູ່ ๔-๖ ວັນ ຫລີກໄປດ້ວຍສັຕຕາຫກໍຣະນີຍະ ຢູ່ພາຍນອກພົ້ນ ໆ ວັນ ພິກສຸທັງຫລາຍ ວັນເຂົ້າພັນສາຫລັງຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນ ຕ້ອງອາບັຕິທຸກກະຕະເພາະຮັບຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຫລັງ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມພາຍນອກ ເຖິງວັນແຮມ ໑ ຄ່ຳ ຈຶ່ງເຂົ້າວິຫາຣ ຈັດເສນາສນະ ຕັ້ງນ້ຳສັນນ້ຳໃຊ້ ກວາດບໍຣິເວນະ ພັກຢູ່ ๔-๖ ວັນ ຫລີກໄປດ້ວຍສັຕຕາຫກໍຣະນີຍະ ກັບມາພາຍໃນ ໆ ວັນ ພິກສຸທັງຫລາຍ ວັນເຂົ້າພັນສາຫລັງຂອງພິກສຸນັ້ນປາກົດ ແລະພິກສຸນັ້ນບໍ່ຕ້ອງອາບັຕິເພາະຮັບ ຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຫລັງ . . . ອີກ ໆ ວັນ ຈະຄົບ ๔ ເດືອນ ອັນເປັນວັນທີ່ດອກໂກມຸທບານມີກິຈຈຳຕ້ອງທຳຫລີກໄປ ພິກສຸ ທັງຫລາຍ ພິກສຸນັ້ນຈະກັບມາອາວາສນັ້ນຫລືບໍ່ກັບມາກໍຕາມ ພິກສຸທັງຫລາຍ ວັນເຂົ້າພັນສາຫລັງ ຂອງພິກສຸນັ້ນປາກົດ ແລະພິກສຸນັ້ນບໍ່ຕ້ອງອາບັຕິເພາະຮັບຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຫລັງ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມ ເຖິງວັນແຮມ ໑ ຄ່ຳ ຈຶ່ງເຂົ້າວິຫາຣຈັດເສນາສນະ ຕັ້ງນ້ຳສັນ ນ້ຳໃຊ້ ກວາດບໍຣິເວນະ ບໍ່ມີກິຈຈຳຕ້ອງທຳຫລີກໄປໃນມື້ນັ້ນທີດຽວ ພິກສຸທັງຫລາຍ ວັນເຂົ້າພັນສາ ຫລັງຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນຕ້ອງອາບັຕິທຸກກະຕະເພາະຮັບຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຫລັງ . . . ມີກິຈຈຳຕ້ອງທຳຫລີກໄປ . . .

. . . ພັກຢູ່ ๔-๖ ວັນ ບໍ່ມີກິຈຈຳຕ້ອງທຳຫລີກໄປ . . .

. . . ພັກຢູ່ ๔-๖ ວັນ ມີກິຈຈຳຕ້ອງທຳຫລີກໄປ . . .

. . . ພັກຢູ່ ๔-๖ ວັນ ຫລີກໄປດ້ວຍສັຕຕາຫກໍຣະນີຍະ ຢູ່ພາຍນອກພົ້ນ ໆ ວັນ ພິກສຸທັງຫລາຍ ວັນເຂົ້າພັນສາຫລັງຂອງພິກສຸນັ້ນບໍ່ປາກົດ ແລະພິກສຸນັ້ນຕ້ອງອາບັຕິເພາະ ຮັບຄຳ

ພຣະວິນັຍປິດົກ ມຫາວັຄ [๖. ວັສສູປນາຍິກຂັນທກະ] ໑໑໙. ຮວມເຣື້ອງທີ່ມີໃນວັສສູປນາຍິກຂັນທ ກະ

. . . ພັກຢູ່ ໔-໕ ວັນ ຫລີກໄປດ້ວຍສັຕຕາຫກໍຣນີຍະ ກັບມາພາຍໃນ ໗ ວັນ ພິກສຸທັງຫລາຍ ວັນເຂົ້າພັນສາຫລັງຂອງພິກສຸນັ້ນປາກົດ ແລະພິກສຸນັ້ນບໍ່ຕ້ອງອາບັຕິເພາະຮັບຄຳ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພິກສຸຮັບຄຳໄວ້ວ່າຈະເຂົ້າຈຳພັນສາໃນວັນເຂົ້າພັນສາຫລັງ ພິກສຸນັ້ນໄປອາວາສນັ້ນທຳອຸໂບສົຖກັມ ເຖິງວັນແຮມ ໑ ຄ່ຳ ຈຶ່ງເຂົ້າວິຫາຣຈັດເສນາສນະ ຕັ້ງນ້ຳສັນ ນ້ຳໃຊ້ ກວາດບໍຣິເວນະ ອີກ ໗ ວັນ ຈະຄົບ ໔ ເດືອນ ອັນເປັນວັນທີ່ດອກໂກມຸທບານ ມີກິຈຈຳຕ້ອງ ທຳຫລີກໄປ ພິກສຸທັງຫລາຍ ພິກສຸນັ້ນຈະກັບມາອາວາສນັ້ນ ຫລືບໍ່ກັບມາກໍຕາມ ວັນເຂົ້າພັນສາຫລັງ ຂອງພິກສຸນັ້ນປາກົດ ແລະພິກສຸນັ້ນບໍ່ຕ້ອງອາບັຕິເພາະຮັບຄຳ

ວັສສູປນາຍິກຂັນທະກະທີ ໓ ຈົບ

໑໑໙. ຮວມເຣື້ອງທີ່ມີໃນວັສສູປນາຍິກຂັນທະກະ

ວັສສູປນາຍິກຂັນທະກະ ມີ ໕໔ ເຣື້ອງ ຄື

ເຣື້ອງຊົງອນຸຍາຕໃຫ້ພິກສຸເຂົ້າຈຳພັນສາ
ເຣື້ອງຊົງອນຸຍາຕໃຫ້ພິກສຸເຂົ້າພັນສາໃນຣະດູຝົນ
ເຣື້ອງປະເພດແຫ່ງວັນເຂົ້າພັນສາ
ເຣື້ອງພຣະສັພພັຄຄີຍ໌ທ່ຽວຈາຣິກໃນຣະຫວ່າງພັນສາ
ເຣື້ອງປັບອາບັຕິທຸກກະຕະແກ່ພິກສຸຜູ້ບໍ່ເຂົ້າພັນສາ
ເຣື້ອງຈົງໃຈຍ່າງຜ່ານອາວາສ ເຣື້ອງກາຣເລື່ອນກາລຝົນ
ເຣື້ອງອຸບາສົກສ້າງວິຫາຣເປັນຕົ້ນຖວາຍ
ເຣື້ອງພິກສຸເປັນໄຂ້ເປັນຕົ້ນ ເຣື້ອງມາຣດາ ບິດາ ອ້າຍ ນ້ອງຊາຍ
ເອື້ອຍນ້ອງສາວ ຍາຕ ແລະບຸຣຸສຜູ້ອາສັຍຢູ່ກັບພິກສຸເປັນໄຂ້
ເຣື້ອງວິຫາຣຊຸດໂຊມ ເຣື້ອງສັຕວ໌ຮ້າຍບຽດບຽນ ເຣື້ອງງູບຽດບຽນ
ເຣື້ອງພວກໂຈຣບຽດບຽນ ເຣື້ອງປີສາຈຣົບກວນ
ເຣື້ອງຫມູ່ບ້ານຖືກໄຟໄຫມ້ ເຣື້ອງເສນາສນະຖືກໄຟໄຫມ້
ເຣື້ອງຫມູ່ບ້ານຖືກນ້ຳຖ້ວມ ເຣື້ອງເສນາສນະຖືກນ້ຳຖ້ວມ
ເຣື້ອງຊາວບ້ານພາກັນອພຍພໄປເພາະໂຈຣພັຍ
ເຣື້ອງຊົງອນຸຍາຕໃຫ້ຕາມທາຍົກມີຈຳນວນຫລາຍກວ່າ

ເຣື້ອງບໍ່ໄດ້ໂພຊນາຫາຣຫັຼມດາຫລືປານີຕເປັນຕົ້ນ
ເຣື້ອງສະຕຣີນິມົນຕ໌ ເຣື້ອງຍິງແພສຍານິມົນຕ໌ ເຣື້ອງສາວເທື້ອນິມົນຕ໌
ເຣື້ອງກະເທີຍນິມົນຕ໌ ເຣື້ອງພວກຍາຕນິມົນຕ໌
ເຣື້ອງພຣະຣາຊານິມົນຕ໌ ເຣື້ອງພວກໂຈຣນິມົນຕ໌
ເຣື້ອງພວກນັກເລງນິມົນຕ໌ ເຣື້ອງພບຊຸມຊັພຍ໌
ເຣື້ອງທຳລາຍສົງຂ໌ ໆ ວິທີ ເຣື້ອງເຂົ້າຈຳພັນສາໃນຄອກໂຄ
ເຣື້ອງເຂົ້າຈຳພັນສາໃນຫມູ່ກວຽນ ເຣື້ອງເຂົ້າຈຳພັນສາໃນເຮືອ
ເຣື້ອງເຂົ້າຈຳພັນສາໃນໂກນໄມ້ ເຣື້ອງເຂົ້າຈຳພັນສາບນຄ່າຄບໄມ້
ເຣື້ອງເຂົ້າຈຳພັນສາໃນທີ່ແຈ້ງ ເຣື້ອງພິກສຸບໍ່ມີເສນາສນະຈຳພັນສາ
ເຣື້ອງເຂົ້າຈຳພັນສາໃນກະຕູບຜີ ເຣື້ອງເຂົ້າຈຳພັນສາໃນຣົ່ມ
ເຣື້ອງເຂົ້າຈຳພັນສາໃນຕຸ່ມນ້ຳ
ເຣື້ອງຕັ້ງກຕິກາບໍ່ເປັນທັຼມ ເຣື້ອງຮັບຄຳຈະຈຳພັນສາ
ເຣື້ອງທຳອຸໂບສົຖນອກວິຫາຣ ເຣື້ອງຮັບຄຳທີ່ຈະເຂົ້າຈຳພັນສາຕົ້ນ
ເຣື້ອງຮັບຄຳທີ່ຈະເຂົ້າຈຳພັນສາຫລັງ
ເຣື້ອງບໍ່ມີກິຈຈຳຕ້ອງທຳຫລີກໄປ ເຣື້ອງມີກິຈຈຳຕ້ອງທຳຫລີກໄປ
ເຣື້ອງພັກຢູ່ ໔ - ໖ ວັນແລ້ວຫລີກໄປດ້ວຍສັຕຕາຫະກໍຣນີຍະ
ເຣື້ອງອີກ ໆ ວັນຈະຄົບ ໔ ເດືອນ ເຣື້ອງພິກສຸກັບມາບໍ່ກັບມາ
ຄວນພິຈາຣນາຕາມແນວທາງຕາມລຳດັບຫົວຂໍ້ເຣື້ອງ

ວັສສູປນາຍິກຂັນທະກະ ຈົບ

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທະກະ] ໑໔໐. ອຜາສຸວິຫາຣ

໔. ປວາຣນາຂັນທະກະ

໑໔໐. ອຜາສຸວິຫາຣ

ວ່າດ້ວຍການຢູ່ຈຳພັນສາບໍ່ຜາສຸກ

ເຣື້ອງພິກສຸຫລາຍຮູບເຂົ້າຈຳພັນສາໃນແຄວ້ນໂກສົລມາເຝົ້າພຣະສາສດາ

[໔໐໙] ສະໄໝນັ້ນ ພຣະຜູ້ມີພຣະພາກພຸດທະເຈົ້າປະທັບຢູ່ ນະ ພຣະເຊຕວັນອາຣາມຂອງອນາຖບິນທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ພິກສຸຫລາຍຮູບຊຶ່ງເຄີຍເຫັນເຄີຍຄົບກັນເຂົ້າຈຳພັນສາຢູ່ໃນອາວາສແຫ່ງນຶ່ງໃນແຄວ້ນໂກສົລ ໄດ້ປຶກສາກັນດັ່ງນີ້ວ່າ “ດ້ວຍອຸບາຍຢ່າງໃດໜໍ ພວກເຮົາຈະຄວນເປັນຜູ້ພ້ອມພຽງ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາຢ່າງຜາສຸກ ແລະບໍ່ລຳບາກດ້ວຍບິນທບາຕ” ແລ້ວປຶກສາກັນຕໍ່ໄປວ່າ “ຖ້າພວກເຮົາຈະບໍ່ທັກທາຍບໍ່ປາສັຍກັນແລະກັນ ຮູບໃດບິນທບາຕກັບຈາກໝູ່ບ້ານກ່ອນ ຮູບນັ້ນຄວນປູອາສນະ ຈັດນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນ ລ້າງຖາດສຳລັບໃສ່ອາຫາຣທີ່ເຫລືອ໑ ຕັ້ງນ້ຳສັນນ້ຳໃຊ້ ຮູບໃດບິນທບາຕກັບຈາກໝູ່ບ້ານທີຫລັງ ຖ້າມີອາຫາຣທີ່ຮູບກ່ອນສັນເຫລືອ ຖ້າຕ້ອງການຄວນສັນ ຖ້າບໍ່ຕ້ອງການ ຄວນເທຖິ້ມຍັງທີ່ອັນປາສຈາກຂອງຂຽວສົດ ຫລືເທລົງນ້ຳທີ່ບໍ່ມີຕົວສັດວ໌ ຮູບນັ້ນຄວນເກັບອາສນະ ນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນ ລ້າງຖາດສຳລັບໃສ່ອາຫາຣທີ່ເຫລືອ ແລ້ວເກັບນ້ຳດື່ມນ້ຳໃຊ້ ກວາດຫໍສັນ ຮູບໃດເຫັນໝໍ້ນ້ຳສັນ ໝໍ້ນ້ຳໃຊ້ ໝໍ້ຊຳຣະວ່າງເປົ່າ ຮູບນັ້ນຄວນຕັກໃສ່ ຖ້າບໍ່ສາມາດ ຄວນກວັກມືຮຽກເພື່ອນມາຊ່ວຍຍົກ ບໍ່ຄວນເອີ່ຍວາຈາເພາະເຫຕຸນັ້ນເລີຍ ດ້ວຍອຸບາຍ
ຢ່າງນີ້ແລ ພວກເຮົາຈະຄວນເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາເປັນຜາສຸກ ແລະບໍ່ລຳບາກດ້ວຍບິນທບາຕ”
ຕໍ່ມາ ພິກສຸເຫລົ່ານັ້ນກໍບໍ່ທັກທາຍບໍ່ປາສັຍກັນແລະກັນ ຮູບໃດບິນທບາຕກັບຈາກໝູ່ບ້ານກ່ອນ ຮູບນັ້ນກໍປູອາສນະ ຈັດນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນ

ໝາຍເຫດ :

໑ ພາຊນະສຳລັບໃສ່ອາຫາຣສ່ວນທີ່ເຫລືອຊຶ່ງນຳອອກຈາກບາຕຣ (ສາຣຕົຖ. ຕີກາ ໓/໔໒໒/໔໓໐)

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໐. ອຜາສຸວິຫາຣ

ລ້າງຖາດສຳລັບໃສ່ອາຫາຣທີ່ເຫລືອ ຕັ້ງນ້ຳສັນນ້ຳໃຊ້ ຮູບໃດບິນທບາຕກັບຈາກໝູ່ບ້ານທີຫລັງ ຖ້າມີອາຫາຣທີ່ຮູບກ່ອນສັນເຫລືອ ຖ້າຕ້ອງການກໍສັນ ຫາກບໍ່ຕ້ອງການ ກໍເທຖິ້ມຍັງທີ່ອັນປາສຈາກຂອງຂຽວສົດ ຫລືເທລົງນ້ຳທີ່ບໍ່ມີຕົວສັດວ໌ ຮູບນັ້ນກໍເກັບອາສນະ ນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນ ລ້າງຖາດສຳລັບໃສ່ອາຫາຣທີ່ເຫລືອ ແລ້ວເກັບນ້ຳດື່ມນ້ຳໃຊ້ກວາດຫໍສັນ ຮູບໃດເຫັນໝໍ້ນ້ຳ

ຂັນ ຫມໍ້ນໍ້າໃຊ້ ຫມໍ້ຊໍາຣະວ່າງເປົ່າ ຮູບນັ້ນກໍຕັກໃສ່ຖ້າບໍ່ສາມາດກໍກວັກມືຮຽກເພື່ອນມາຊ່ວຍຍົກ ຍ່ອມບໍ່ເອີ່ຍວາຈາເພາະເຫຕຸນັ້ນເລີຍ

ພິກສຸມາເຂົ້າເຝົ້າພຣະພຸດທະເຈົ້າ

ມີປະເພນີຢູ່ວ່າ ເມື່ອພິກສຸທັງຫລາຍອອກພັນສາແລ້ວຈະໄປເຂົ້າເຝົ້າພຣະຜູ້ມີພຣະພາກ ຄັນພິກສຸເຫລົ່ານັ້ນຈໍາພັນສາຄົບ ໓ ເດືອນ ແລ້ວຈຶ່ງເກັບເສນາສນະຖືບາຕຣແລະຈີວອນຫລີກໄປທາງກຸງສາວັຕຖີ ຈາຣິກໄປໂດຍລໍາດັບ ເຖິງກຸງສາວັຕຖີ ໄປເຖິງພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ໂດຍລໍາດັບແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະພາກ ຖວາຍອະພິວາທແລ້ວນັ່ງ ນະທີ່ສົມຄວຣ

ພຸທທປະເພນີ

ອັນການທີ່ພຣະຜູ້ມີພຣະພາກພຸດທະເຈົ້າທັງຫລາຍຊົງປາສັຍກັບພຣະອາຄັນຕຸກະທັງຫລາຍນັ້ນເປັນພຸທທປະເພນີ ລໍາດັບນັ້ນ ພຣະຜູ້ມີພຣະພາກໄດ້ຕຣັສຖາມພິກສຸເຫລົ່ານັ້ນວ່າ "ພິກສຸທັງຫລາຍ ທ່ານທັງຫລາຍຍັງສະບາຍດີຢູ່ຫລື ຍັງພໍເປັນຢູ່ໄດ້ຫລື ພວກທ່ານເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈໍາພັນສາເປັນຜາສຸກ ແລະບິນທບາຕບໍ່ລໍາບາກຫລື" ພິກສຸເຫລົ່ານັ້ນຂາບທູລວ່າ "ຍັງສະບາຍດີ ພຣະພຸດທະເຈົ້າຂ້າ ຍັງພໍເປັນຢູ່ໄດ້ພຣະພຸດທະເຈົ້າຂ້າ ອີກຢ່າງນຶ່ງ ພວກຂ້າພຣະພຸດທະເຈົ້າທັງຫລາຍເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນບໍ່ຜິດຖຽງກັນ ຢູ່ຈໍາພັນສາເປັນຜາສຸກ ແລະບິນທບາຕບໍ່ລໍາບາກ ພຣະພຸດທະເຈົ້າຂ້າ" ພຣະຕຖາຄົຕເຈົ້າທັງຫລາຍຊົງຊາບເຣື້ອງຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຊົງຊາບກາລອັນຄວຣຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຕຣັສຖາມເຣື້ອງທີ່ເປັນປໂຍດ ບໍ່ຕຣັສຖາມເຣື້ອງທີ່ບໍ່ເປັນປໂຍດ ເພາະພຣະຕຖາຄົຕເຈົ້າທັງຫລາຍ ຊົງຂຈັດເຣື້ອງທີ່ບໍ່ເປັນປໂຍດ

ເສັ້ງດ້ວຍອຣິຍມັຄແລ້ວ ພຣະຜູ້ມີພຣະພາກພຸດທະເຈົ້າທັງຫລາຍ ຊົງສອບຖາມພິກສຸທັງຫລາຍດ້ວຍເຫຕຸ ໔ ປະການ ຄື ຈະຊົງສະແດງທັມຢ່າງນຶ່ງ ຈະຊົງບັນຍັດສິກຂາບົທແກ່ພຣະສາວົກຢ່າງນຶ່ງ ລໍາດັບນັ້ນ ພຣະຜູ້ມີພຣະພາກຕຣັສຖາມພິກສຸເຫລົ່ານັ້ນວ່າ "ພິກສຸທັງຫລາຍ ທໍາຢ່າງໃດ ພວກທ່ານຈຶ່ງເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈໍາພັນສາເປັນຜາສຸກ ແລະບິນທບາຕບໍ່ລໍາບາກ" ພິກສຸເຫລົ່ານັ້ນໄດ້ຂາບທູລວ່າ "ພຣະອົງຄ໌ຜູ້ຈະເຣີນ ຂ້າພຣະອົງຄ໌ທັງຫລາຍບັນດາທີ່ນັ່ງເຝົ້າຢູ່ ນະທີ່ນີ້ ເປັນພິກສຸທີ່ເຄີຍເຫັນເຄີຍຄົບກັນມາຈໍານວນຫລາຍຮູບ ໄດ້ເຂົ້າຈໍາພັນສາຢູ່ໃນອາວາສແຫ່ງນຶ່ງໃນແຄວ້ນໂກສົລ ໄດ້ປຶກສາກັນວ່າ ດ້ວຍອຸບາຍຢ່າງໃດຫນໍ ພວກເຮົາຈະຄວນເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈໍາພັນສາເປັນຜາສຸກແລະບິນທບາຕບໍ່ລໍາບາກ ແລ້ວປຶກສາກັນຕໍ່ໄປວ່າ ຖ້າພວກເຮົາຈະບໍ່ທັກທາຍບໍ່ປາສັຍກັນແລະກັນ ຮູບໃດບິນທບາຕກັບຈາກຫມູ່ບ້ານກ່ອນ ຮູບນັ້ນຄວນປູ

ອາສະນະ ຈັດນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນ ລ້າງຖາດສຳລັບໃສ່ອາຫານທີ່ເຫລືອ ຕັ້ງນ້ຳສັນ ນ້ຳໃຊ້ ຮູບໃດບິນທະບາດກັບຈາກຫມູ່ບ້ານທີຫລັງ ຖ້າມີອາຫານທີ່ຮູບກ່ອນສັນເຫລືອ ຖ້າຕ້ອງການຄວນສັນ ຖ້າບໍ່ຕ້ອງການ ຄວນເທຖິ້ມຍັງທີ່ອັນປາສຈາກຂອງຂຽວສົດ ຫລືເທລົງນ້ຳທີ່ບໍ່ມີຕົວສັດ ຮູບນັ້ນຄວນເກັບອາສະນະ ນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນ ລ້າງຖາດສຳລັບໃສ່ອາຫານທີ່ເຫລືອ ແລ້ວເກັບນ້ຳດື່ມນ້ຳໃຊ້ ກວາດຫໍສັນ ຮູບໃດເຫັນຫມໍ້ນ້ຳສັນ ຫມໍ້ນ້ຳໃຊ້ຫມໍ້ຊຳຣະວ່າງເປົ່າ ຮູບນັ້ນຄວນຕັກໃສ່ຖ້າບໍ່ສາມາດຄວນກວັກມືຮຽກເພື່ອນມາຊ່ອຍຍົກ ບໍ່ຄວນເອ່ຍວາຈາເພາະເຫຕຸນັ້ນເລີຍ ດ້ວຍອຸບາຍຢ່າງນີ້ແລ ພວກເຮົາຈະຄວນເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາເປັນຜາສຸກ ແລະບິນທະບາດບໍ່ລຳບາກ ພຣະອົງຄ໌ຜູ້ຈະເຣີນ ຕໍ່ມາ ຂ້າພຣະອົງຄ໌ທັງຫລາຍກໍບໍ່ທັກທາຍບໍ່ປາສັຍກັນແລະກັນ ຮູບໃດບິນທະບາດກັບຈາກຫມູ່ບ້ານກ່ອນ ຮູບນັ້ນກໍປູອາສະນະ ຈັດນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນ ລ້າງຖາດສຳລັບໃສ່ອາຫານທີ່ເຫລືອ ຕັ້ງນ້ຳສັນນ້ຳໃຊ້ ຮູບໃດບິນທະບາດກັບຈາກຫມູ່ບ້ານທີຫລັງ ຖ້າມີອາຫານທີ່ຮູບກ່ອນສັນເຫລືອ ຖ້າຕ້ອງການກໍສັນ ຖ້າບໍ່ຕ້ອງການ ກໍເທຖິ້ມຍັງທີ່ອັນປາສຈາກຂອງຂຽວສົດ ຫລືເທລົງນ້ຳທີ່ບໍ່ມີຕົວສັດ ຮູບນັ້ນກໍເກັບອາສະນະ ນ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນ ລ້າງຖາດສຳລັບໃສ່ອາຫານທີ່ເຫລືອ ແລ້ວເກັບນ້ຳດື່ມນ້ຳໃຊ້ ກວາດຫໍສັນ ຮູບໃດເຫັນຫມໍ້ນ້ຳສັນ ຫມໍ້ນ້ຳໃຊ້ ຫມໍ້ຊຳຣະວ່າງເປົ່າ ຮູບນັ້ນກໍຕັກໃສ່ ຖ້າບໍ່ສາມາດກໍກວັກມືຮຽກເພື່ອນມາຊ່ອຍຍົກ ຍ່ອມບໍ່ເອ່ຍວາຈາເພາະເຫຕຸນັ້ນເລີຍ ດ້ວຍອຸບາຍຢ່າງນີ້ແລ ຂ້າພຣະອົງຄ໌ທັງຫລາຍຈຶ່ງເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນບໍ່ຜິດຖຽງກັນ ຢູ່ຈຳພັນສາ ເປັນຜາສຸກ ແລະບິນທະບາດບໍ່ລຳບາກ ພຣະພຸດທະເຈົ້າຂ້າ”

ເຣື້ອງເຂົ້າຈຳພັນສາບໍ່ຜາສຸກດັ່ງປສຸສັຕວ໌ຢູ່ຮ່ວມກັນ

ລຳດັບນັ້ນ ພຣະຜູ້ມີພຣະພາກຣັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ຊາບວ່າໂມຂບຸຣຸສພວກນີ້ເປັນຜູ້ຢູ່ບໍ່ຜາສຸກເລີຍ ຍັງຢືນຢັນວ່າ ຢູ່ເປັນຜາສຸກ ຊາບວ່າ ໂມຂບຸຣຸສພວກນີ້ເປັນຜູ້ຢູ່ຮ່ວມກັນຢ່າງປສຸສັຕວ໌໑ ຍັງຢືນຢັນວ່າ ຢູ່ເປັນຜາສຸກ ຊາບວ່າ ໂມຂບຸຣຸສພວກນີ້ເປັນຜູ້ຢູ່ຮ່ວມກັນຢ່າງແພະ ຍັງຢືນຢັນວ່າ ຢູ່ເປັນຜາສຸກ ຊາບວ່າ ໂມຂບຸຣຸສພວກນີ້ເປັນຜູ້ຢູ່ຮ່ວມກັນຢ່າງສັຕຣູ ຍັງຢືນຢັນວ່າ ຢູ່ເປັນຜາສຸກ”

ຊົງຫ້າມມູຄວັຕຣຕາມແບບຢ່າງເດັຽຣະຖີຍ໌

ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສພວກນີ້ຈຶ່ງໄດ້ສມາທານມູຄວັຕຣທີ່ພວກເດັຽຣະຖີຍ໌ຖືປະຕິບັດກັນ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ ຄັນຊົງຕຳຫນິແລ້ວຊົງສະ

ແດງຫຼັມນີກຖາຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ພິກສຸບໍ່ຄວນສະມາທານມູຄວັຕຣທີ່ພວກເດັຽຣະຖີຍ໌ຖືປະຕິບັດກັນ ຮູບໃດສະມາທານປະຕິບັດ ຕ້ອງອາບັຕິທຸກກະຕະ”

ເຣື້ອງຊົງອນຸຍາຕພິທີປວາຣນາເພື່ອວ່າກ່າວຊຶ່ງກັນແລະກັນ

ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ຈຳພັນສາແລ້ວ ປວາຣນາດ້ວຍເຫຕຸ ໓ ສະຖານ ຄື ດ້ວຍໄດ້ເຫັນ ດ້ວຍໄດ້ຍິນ ດ້ວຍນຶກສົງສັຍ ກາຣປວາຣນານັ້ນ ຈັກເປັນວິທີທີ່ເຫມາະສົມເພື່ອວ່າກ່າວຊຶ່ງກັນແລະກັນ ເປັນວິທີອອກຈາກອາບັຕິ ເປັນວິທີເຄົາຣົພພຣະວິນັຍຂອງພິກສຸເຫລົ່ານັ້ນ

ໝາຍເຫດ :

໑ ຢູ່ຮ່ວມກັນຢ່າງປສຸສັຕວ໌ ຫມາຍເຖິງ ຢູ່ຮ່ວມກັນໂດຍບໍ່ມີກາຣຖາມສຸຂທຸກຂ໌ຂອງກັນແລະກັນ ເພາະປສຸສັຕວ໌ທັງຫລາຍຍ່ອມບໍ່ບອກສຸຂທຸກຂ໌ທີ່ເກີດຂຶ້ນແກ່ຕົນໃຫ້ໃຜຊາບ ແລະບໍ່ທຳປຕິສັນຖາຣຕໍ່ກັນ (ວິ. ອ. ໓/໔໐໙/໑໕໔)
{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໓໔ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໐. ອຜາສຸວິຫາຣ

ວິທີປວາຣນາ

ພິກສຸທັງຫລາຍ ກໍແລພິກສຸເຫລົ່ານັ້ນຄວນປວາຣນາຢ່າງນີ້ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິກັມວາຈາວ່າ

ສັພພສັງຄາຫິກາຍັຕຕິ

[໔໑໐] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ວັນນີ້ເປັນວັນປວາຣນາ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນປວາຣນາ ພິກສຸຜູ້ເຖຣະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມື ກ່າວກັບສົງຂ໌ຢ່າງນີ້ວ່າ

ເຕວາຈິກາປວາຣນາ

ທ່ານທັງຫລາຍ ຜູ້ຂ້າຂໍປວາຣນາຕໍ່ສົງຂ໌ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍ

ທ່ານທັງຫລາຍໄດ້ຊ່ວຍອະນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບຈັກໄດ້ແກ້ໄຂຕໍ່ໄປ ທ່ານທັງຫລາຍ ແມ່ນຄັ້ງທີ ໔ ຜູ້ຂ້າຂໍປະວາຣະນາຕໍ່ສົງຊ໌ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອະນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບຈັກໄດ້ແກ້ໄຂຕໍ່ໄປ ທ່ານທັງຫລາຍ ແມ່ນຄັ້ງທີ ໕ ຜູ້ຂ້າຂໍປະວາຣະນາຕໍ່ສົງຊ໌ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອະນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບຈັກໄດ້ແກ້ໄຂຕໍ່ໄປ ພິກສຸຜູ້ນວກະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມື ກ່າວກັບສົງຊ໌ຢ່າງນີ້ວ່າ ທ່ານຜູ້ຈະເຣີນ ຜູ້ຂ້າຂໍປະວາຣະນາຕໍ່ສົງຊ໌ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອະນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບຈັກໄດ້ແກ້ໄຂຕໍ່ໄປ
{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໓໕ }

ພຣະວິນັຍປິດົກ ມຫາວັຄ [໔. ປະວາຣະນາຂັນທະກະ] ໑໔໐. ອຜາສຸວິຫາຣ

ທ່ານຜູ້ຈະເຣີນ ແມ່ນຄັ້ງທີ ໔ ຜູ້ຂ້າຂໍປະວາຣະນາຕໍ່ສົງຊ໌ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອະນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບຈັກໄດ້ແກ້ໄຂຕໍ່ໄປ ທ່ານຜູ້ຈະເຣີນ ແມ່ນຄັ້ງທີ ໕ ຜູ້ຂ້າຂໍປະວາຣະນາຕໍ່ສົງຊ໌ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອະນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບຈັກໄດ້ແກ້ໄຂຕໍ່ໄປ

ເຣື້ອງພຣະສັພພັຄຄີຍ໌ນັ່ງຣາບເທິງອາສະນະປະວາຣະນາ

ຊົງອະນຸຍາຕໃຫ້ນັ່ງຄຸເຂົ່າປະວາຣະນາ

[໔໑໑] ສມັຍນັ້ນ ເມື່ອພິກສຸຜູ້ເຖຣະທັງຫລາຍນັ່ງຄຸເຂົ່າປະວາຣະນາ ພວກພິກສຸສັພພັຄຄີຍ໌ຢູ່ເທິງອາສະນະ ບັນດາພວກພິກສຸຜູ້ມີຄວາມມັກນ້ອຍ ຯລຯ ພາຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດເມື່ອພິກສຸຜູ້ເຖຣະທັງຫລາຍນັ່ງຄຸເຂົ່າປະວາຣະນາ ພວກພິກສຸ ສັພພັຄຄີຍ໌ຈຶ່ງຢູ່ເທິງອາສະນະລະ" ແລ້ວນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ເມື່ອພິກສຸຜູ້ເຖຣະທັງຫລາຍນັ່ງຄຸເຂົ່າປະວາຣະນາ ພິກສຸສັພພັຄຄີຍ໌ຢູ່ເທິງອາສະນະ ແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸດທະເຈົ້າຂ້າ" ພຣະຜູ້ມີພຣະພາກພຸດທະເຈົ້າຊົງ

ຕໍາໜິວ່າ "ພິກສຸທັງຫລາຍ ຈັ່ງໃດເມື່ອພິກສຸຜູ້ເຖຣະທັງຫລາຍນັ່ງຄຸເຂົ່າປວາຣນາ ໂມຂບຸຣຸສພວກ ນັ້ນຈຶ່ງຢູ່ເທິງອາສນະລະ ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ຄັນຊົງຕໍາໜິແລ້ວຊົງສະແດງທັມມິກຖາຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເມື່ອ ບັນດາພິກສຸຜູ້ເຖຣະທັງຫລາຍ ນັ່ງຄຸເຂົ່າປວາຣນາ ບໍ່ຄວນຢູ່ເທິງອາສນະ ຮູບໃດຢູ່ ຕ້ອງອາບັຕິ ທຸກກະຕະ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸທຸກຮູບນັ່ງຄຸເຂົ່າປວາຣນາ" ສມັຍຕໍ່ມາ ພຣະເຖຣະຮູ ບນຶ່ງຊຣາທຸພພລພາພ ນັ່ງຄຸເຂົ່າຖ້າຈົນກວ່າພິກສຸທຸກຮູບຈະປວາຣນາເສັດ ໄດ້ເປັນລົມລົ້ມລົງ ພິກສຸ ທັງຫລາຍຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸ ທັງຫລາຍ ເຮົາອນຸຍາຕໃຫ້ນັ່ງຄຸເຂົ່າຊົ່ວເວລາປວາຣນາ ແລະອນຸຍາຕໃຫ້ພິກສຸປວາຣນາເສັດແລ້ວ ນັ່ງເທິງອາສນະ"

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໖໕ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໑. ປວາຣນາເພທ

໑໔໑. ປວາຣນາເພທ

ວ່າດ້ວຍປະເພດແຫ່ງວັນປວາຣນາ

ເຣື້ອງວັນປວາຣນາມີ ໒ ວັນ

[໒໑໒] ຄັ້ງນັ້ນ ພິກສຸທັງຫລາຍໄດ້ມີການສົນທນາກັນດັ່ງນີ້ວ່າ "ວັນປວາຣນາມີເທົ່າໃດໜໍ" ຈຶ່ງນໍາ ເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ວັນ ປວາຣນານີ້ມີ ໒ ວັນ ຄື ວັນ ໑໔ ຄໍ່າ ແລະວັນ ໑໕ ຄໍ່າ ພິກສຸທັງຫລາຍ ວັນປວາຣນາມີ ໒ ວັນ ເຫລົ່ານີ້ແລ"

ເຣື້ອງອາການທີ່ທໍາປວາຣນາມີ ໔ ຢ່າງ

ຄັ້ງນັ້ນ ພິກສຸທັງຫລາຍໄດ້ມີການສົນທນາກັນດັ່ງນີ້ວ່າ "ການທໍາປວາຣນາມີເທົ່າໃດໜໍ" ຈຶ່ງນໍາເຣື້ອງ ນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ການທໍາ ປວາຣນາມີ ໔ ຢ່າງເຫລົ່ານີ້໑ ຄື

໑. ການທຳປວາຣນາແບ່ງພວກໂດຍບໍ່ຊອບທັມ

໒. ການທຳປວາຣນາພ້ອມພຽງໂດຍບໍ່ຊອບທັມ

ໝາຍເຫດ :

໑ ການທຳປວາຣນາແຕ່ລະຢ່າງມີຄຳອະທິບາຍເພີ້ມເຕີມດັ່ງນີ້

໑. ຖ້າໃນວັດນຶ່ງ ມີພິກສຸຢູ່ ໕ ຮູບ ພິກສຸ ໔ ຮູບນຳປວາຣນາຂອງຮູບນຶ່ງມາ ຕັ້ງຄນບັຍັດຕິແລ້ວ ປວາຣນາ ຫລືມີພິກສຸຢູ່ ໔ ຮູບ ພິກສຸ ໓ ຮູບ ນຳປວາຣນາຂອງຮູບນຶ່ງມາ ຕັ້ງສັງຂຍັຕຕິແລ້ວ ປວາຣນາ ຫລືມີພິກສຸ ໓ ຮູບ ພິກສຸ ໒ ຮູບ ນຳປວາຣນາຂອງຮູບນຶ່ງມາຕັ້ງສັງຂຍັຕຕິແລ້ວປວາຣນາ ນີ້ຊື່ວ່າການທຳປວາຣນາແບ່ງພວກໂດຍບໍ່ຊອບທັມ

໒. ຖ້າພິກສຸທັງຫມົດ ໕ ຮູບ ປະຊຸມຮ່ວມກັນ ຕັ້ງຄນບັຍັດຕິແລ້ວປວາຣນາ ພິກສຸ ໔ ຮູບ ໓ ຮູບ ຫລື ໒ ຮູບ ຢູ່ປະຊຸມຮ່ວມກັນຕັ້ງສັງຂຍັຕຕິແລ້ວປວາຣນາ ນີ້ຊື່ວ່າການທຳປວາຣນາພ້ອມພຽງໂດຍບໍ່ ຊອບທັມ

໓. ຖ້າມີພິກສຸ ໕ ຮູບ ພິກສຸ ໔ ຮູບ ນຳປວາຣນາຂອງຮູບນຶ່ງມາຕັ້ງສັງຂຍັຕຕິແລ້ວປວາຣນາ ຫລືມີ ພິກສຸຢູ່ ໔ ຮູບ ພິກສຸ ໓ ຮູບ ນຳປວາຣນາຂອງຮູບນຶ່ງມາ ຕັ້ງຄນບັນຍັດແລ້ວປວາຣນາ ຫລືມີພິກສຸຢູ່ ໓ ຮູບ ພິກສຸ ໒ ຮູບ ນຳປວາຣນາຂອງຮູບນຶ່ງມາ ຕັ້ງຄນບັນຍັດແລ້ວປວາຣນາ ນີ້ຊື່ວ່າການທຳປວາຣນາແບ່ງພວກໂດຍຊອບທັມ

໔. ຖ້າພິກສຸທັງຫມົດ ໕ ຮູບ ປະຊຸມຮ່ວມກັນ ຕັ້ງສັງຂຍັຕຕິແລ້ວປວາຣນາ ພິກສຸ ໔ ຮູບ ຫລື ໓ ຮູບ ປະຊຸມຮ່ວມກັນຕັ້ງຄນບັຍັດຕິແລ້ວປວາຣນາ ຫລືພິກສຸ ໒ ຮູບ ປວາຣນາຕໍ່ກັນ ພິກສຸ ໑ ຮູບ ທຳ ອທິສຖານປວາຣນາ ນີ້ຊື່ວ່າ ການທຳປວາຣນາພ້ອມພຽງໂດຍຊອບທັມ (ວິ. ອ. ໓/໒໑໒/໑໕໕)

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຌາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໓໗ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໒໔. ປວາຣນາທານານຸຊານນາ

໓. ການທຳປວາຣນາແບ່ງພວກໂດຍຊອບທັມ

໔. ການທຳປວາຣນາພ້ອມພຽງກັນໂດຍຊອບທັມ

ພິກສຸທັງຫລາຍ ໃນການທຳປວາຣນາ ໔ ຢ່າງນັ້ນ ການທຳປວາຣນາໃດແບ່ງພວກ ໂດຍ ບໍ່ຊອບທັມ

ການທຳປວາຣນາເຊັ່ນນັ້ນ ບໍ່ຄວນທຳ ແລະເຮົາບໍ່ອນຸຍາຕການທຳປວາຣນາເຊັ່ນນັ້ນ ການທຳປວາຣນາໃດພ້ອມພຽງກັນໂດຍບໍ່ຊອບທັມ ການທຳປວາຣນາເຊັ່ນນັ້ນ ບໍ່ຄວນທຳ ແລະເຮົາບໍ່ອນຸຍາຕການທຳປວາຣນາເຊັ່ນນັ້ນ ການທຳປວາຣນາໃດແບ່ງພວກໂດຍຊອບທັມ ການທຳປວາຣນາເຊັ່ນນັ້ນ ບໍ່ຄວນທຳ ແລະເຮົາບໍ່ອນຸຍາຕການທຳປວາຣນາເຊັ່ນນັ້ນ ການທຳປວາຣນາໃດພ້ອມພຽງກັນໂດຍຊອບທັມ ການທຳປວາຣນາເຊັ່ນນັ້ນ ຄວນທຳ ແລະເຮົາອນຸຍາຕການທຳປວາຣນາເຊັ່ນນັ້ນ ພິກສຸທັງຫລາຍ ເພາະເຫຕຸນັ້ນແລ ພວກທ່ານຄວນທຳໃນໃຈວ່າ ຈະເຮັດປວາຣນາຊນິດ ທີ່ພ້ອມພຽງກັນໂດຍຊອບທັມ ດັ່ງນີ້ ພວກທ່ານຄວນສຶກສາຢ່າງນີ້ແລ

໑໖໔. ປວາຣນາທານານຸຊານນາ

ວ່າດ້ວຍຊົງອນຸຍາຕໃຫ້ພິກສຸເປັນໄຂ້ມອບປວາຣນາ

ເຣື້ອງພິກສຸເປັນໄຂ້ມອບປວາຣນາ

[໒໑໓] ຄັ້ງນັ້ນ ພຣະຜູ້ມີພຣະພາກຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ພວກທ່ານຈົ່ງປະຊຸມກັນ ສົງຄ໌ຈັກປວາຣນາ” ເມື່ອພຣະອົງຄ໌ຕຣັສຢ່າງນີ້ ພິກສຸຮູບນຶ່ງໄດ້ຂາບທູລພຣະຜູ້ມີພຣະພາກດັ່ງນີ້ວ່າ “ມີພິກສຸເປັນໄຂ້ຢູ່ ພຣະພຸດທະເຈົ້າຂ້າ ພິກສຸຜູ້ເປັນໄຂ້ນັ້ນມາບໍ່ໄດ້” ພຣະຜູ້ມີພຣະພາກຮັບສັ່ງວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ເປັນໄຂ້ມອບປວາຣນາ” ພິກສຸທັງຫລາຍ ກໍແລ ພິກສຸຜູ້ເປັນໄຂ້ຄວນມອບປວາຣນາຢ່າງນີ້

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໓໗ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໖໔. ປວາຣນາທານານຸຊານນາ

ພິກສຸຜູ້ເປັນໄຂ້ນັ້ນຄວນເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງກະໂຫຍ່ງປະນົມມື ກ່າວຢ່າງນີ້ວ່າ “ຂ້າພະເຈົ້າຂໍມອບປວາຣນາ ທ່ານຈົ່ງນຳປວາຣນາຂອງຂ້າພະເຈົ້າໄປ ຈົ່ງບອກປວາຣນາຂອງຂ້າພະເຈົ້າ ຈົ່ງປວາຣນາແທນຂ້າພະເຈົ້າ” ພິກສຸຜູ້ມອບປວາຣນາ ໃຫ້ພິກສຸຜູ້ຮັບມອບປວາຣນາຮູ້ດ້ວຍກາຍ ໃຫ້ຮູ້ດ້ວຍວາຈາ ຫລືໃຫ້ຮູ້ດ້ວຍກາຍແລະວາຈາ ປວາຣນາເປັນອັນພິກສຸໄຂ້ມອບໃຫ້ແລ້ວ ພິກສຸຜູ້ຮັບມອບ ບໍ່ໃຫ້ພິກສຸຜູ້ຮັບມອບປວາຣນາຮູ້ດ້ວຍກາຍ ຫລືບໍ່ໃຫ້ຮູ້ດ້ວຍວາຈາ

ບໍ່ໃຫ້ຮູ້ດ້ວຍກາຍແລະວາຈາປວາຣນາເປັນອັນພິກສຸໄຂ້ຍັງບໍ່ໄດ້ມອບ ຖ້າໄດ້ຢ່າງນີ້ ນັ້ນເປັນການດີ ຖ້າບໍ່ໄດ້ ພິກສຸທັງຫລາຍ ຄວນໃຊ້ຕຽງຫລືຕັ່ງຫາມພິກສຸໄຂ້ ມາໃນທ່າມກາງສົງຂ໌ແລ້ວປວາຣນາ ພິກສຸທັງຫລາຍ ຖ້າພວກພິກສຸຜູ້ພຍາບາລພິກສຸໄຂ້ໄດ້ປຶກສາກັນດັ່ງນີ້ວ່າ ຖ້າພວກ ເຮົາຈັກຍ້າຍພິກສຸໄຂ້ ອາການໄຂ້ຈັກກຳເຣີບຫນັກຂຶ້ນຫລືພິກສຸໄຂ້ຈັກເຖິງແກ່ມໍຣະນະພາພ ບໍ່ຄວນ ຍ້າຍພິກສຸໄຂ້ ສົງຂ໌ຄວນໄປປວາຣນາໃນສຳນັກພິກສຸໄຂ້ນັ້ນ ແຕ່ສົງຂ໌ບໍ່ຄວນແບ່ງພວກກັນທຳ ປວາຣນາ ຖ້າແບ່ງພວກປວາຣນາ ຕ້ອງອາບັຕິທຸກກະຕະ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປວາຣນາແລ້ວ ຖ້າພິກສຸຜູ້ນຳປວາຣນາຫລີບໄປເສັຽຈາກທີ່ນັ້ນ ພິກສຸໄຂ້ຄວນມອບປວາຣນາແກ່ພິກສຸຮູບອື່ນ ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປວາຣນາແລ້ວ ຖ້າພິກສຸຜູ້ນຳປວາຣນາສຶກເສັຽ ນະທີ່ນັ້ນແຫລະ . . . ມໍຣະນະພາພ . . . ປະຕິຍານເປັນສາມເນຣ . . . ປະຕິຍານ ເປັນຜູ້ບອກຄືນສິກຂາ . . . ປະຕິຍານເປັນຜູ້ຕ້ອງອັນຕິມວັຕຖຸ . . . ປະຕິຍານເປັນຜູ້ ວິກລຈິຕ . . . ປະຕິຍານ ເປັນຜູ້ມີຈິຕຟັ່ນຊ່ານ . . . ປະຕິຍານເປັນຜູ້ກະວົນກະວາຍເພາະເວທນາ . . . ປະຕິຍານເປັນຜູ້ຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ເຫັນອາບັຕິ . . . ປະຕິຍານເປັນຜູ້ຖືກສົງຂ໌ລົງອຸກ ເຂປນີຍກັມເພາະບໍ່ທຳຄືນອາບັຕິ . . . ປະຕິຍານເປັນຜູ້ຖືກສົງຂ໌ລົງອຸກເຂປນີຍກັມ ເພາະບໍ່ສລະທິຕຖິ ບາປ. . . ປະຕິຍານເປັນກະເທີຍ . . . ປະຕິຍານເປັນໄຖຍສັງວາສ. . . ປະຕິຍານເປັນຜູ້ເຂົ້າຮີດເດັຽ ຣະຖີຍ໌ . . . ປະຕິຍານເປັນສັຕວ໌ເດັຽຣະສານ . . . ປະຕິຍານເປັນຜູ້ຂ້າມາຣດາ . . . ປະຕິຍານເປັນຜູ້ ຂ້າບິດາ . . . ປະຕິຍານເປັນຜູ້ຂ້າພຣະອຣຫັນຕ໌ . . . ປະຕິຍານເປັນຜູ້ປະທຸສຮ້າຍພິກສຸນີ . . . ປະຕິຍານເປັນຜູ້ທຳລາຍສົງຂ໌ . . . ປະຕິຍານເປັນຜູ້ທຳຮ້າຍພຣະສາສດາຈົນຫໍ້ພຣະໂລຫິຕ . . . ປະຕິຍານເປັນອຸພໂຕພຍັຍຊນກ ພິກສຸໄຂ້ຄວນມອບປວາຣນາແກ່ພິກສຸຮູບອື່ນ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ๓๓໙ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໔. ປວາຣນາຫານານຸຍານນາ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປວາຣນາແລ້ວ ຖ້າພິກສຸຜູ້ນຳປວາຣນາຫລີບໄປເສັຽໃນ ຣະຫວ່າງທາງ ປວາຣນາເປັນອັນຍັງບໍ່ໄດ້ນຳມາ ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປວາຣນາແລ້ວ ຖ້າພິກສຸຜູ້ນຳປວາຣນາສຶກເສັຽໃນຣະຫວ່າງທາງ ຯລຯ ປະຕິຍານເປັນອຸພໂຕພຍັຍຊນກ ປວາຣນາເປັນ ອັນຍັງບໍ່ໄດ້ນຳມາ

ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປວາຣນາແລ້ວ ຖ້າພິກສຸຜູ້ນຳປວາຣນາເຂົ້າທີ່ປະຊຸມສົງຄ໌ແລ້ວ ຫລົບໄປເສັຽ ປວາຣນາເປັນອັນນຳມາແລ້ວ
ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປວາຣນາແລ້ວ ຖ້າພິກສຸຜູ້ນຳປວາຣນາເຂົ້າທີ່ປະຊຸມສົງຄ໌ແລ້ວ ສຶກເສັຽ ຯລຯ ປະຕິຍານເປັນອຸພະໂຕພະຍັນຊະນະກ ປວາຣນາເປັນອັນນຳມາແລ້ວ
ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປວາຣນາແລ້ວ ຖ້າພິກສຸຜູ້ນຳປວາຣນາເຂົ້າທີ່ປະຊຸມສົງຄ໌ແລ້ວ ຫລັບເສັຽບໍ່ໄດ້ບອກ ປວາຣນາເປັນອັນນຳມາແລ້ວ ພິກສຸຜູ້ນຳປວາຣນາ ບໍ່ຕ້ອງອາບັຕິ
ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປວາຣນາແລ້ວ ຖ້າພິກສຸຜູ້ນຳປວາຣນາເຂົ້າທີ່ປະຊຸມສົງຄ໌ແລ້ວ ເຜີໄປບໍ່ໄດ້ບອກ ປວາຣນາເປັນອັນນຳມາແລ້ວ ພິກສຸຜູ້ນຳປວາຣນາ ບໍ່ຕ້ອງອາບັຕິ
ພິກສຸທັງຫລາຍ ເມື່ອພິກສຸເປັນໄຂ້ໄດ້ມອບປວາຣນາແລ້ວ ຖ້າພິກສຸຜູ້ນຳປວາຣນາເຂົ້າທີ່ປະຊຸມສົງຄ໌ ແລ້ວເຂົ້າສະມາບັຕິບໍ່ໄດ້ບອກ ປວາຣນາເປັນອັນນຳມາແລ້ວ ພິກສຸຜູ້ນຳປວາຣນາ ບໍ່ຕ້ອງອາບັຕິ
ພິກສຸທັງຫລາຍ ເມື່ອພິກສຸໄຂ້ໄດ້ມອບປວາຣນາແລ້ວ ຖ້າພິກສຸຜູ້ນຳປວາຣນາເຂົ້າທີ່ປະຊຸມສົງຄ໌ ແລ້ວຈົງໃຈບໍ່ບອກ ປວາຣນາເປັນອັນນຳມາແລ້ວ ແຕ່ພິກສຸຜູ້ນຳປວາຣນາຕ້ອງອາບັຕິທຸກກະຕະ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ເຮົາອະນຸຍາຕໃຫ້ພິກສຸຜູ້ມອບປວາຣນາມອບສັນທະດ້ວຍ ເມື່ອສົງຄ໌ມີກິຈທູຣະຈຳເປັນ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໔໐ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທະກະ] ໑໔໓. ຢາຕກາທິຄຫນກຖາ

໑໔໓. ຢາຕກາທິຄຫນກຖາ
ວ່າດ້ວຍຫມູ່ຍາຕເປັນຕົ້ນຈັບພິກສຸ

ເຣື້ອງພິກສຸຖືກພວກຍາຕເປັນຕົ້ນຈັບໄວ້

[໔໑໔] ສະມັຍນັ້ນ ໃນວັນປວາຣນານັ້ນ ຫມູ່ຍາຕໄດ້ຈັບພິກສຸຮູບນຶ່ງໄວ້ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນວັນປວາຣນານັ້ນ ຫມູ່ຍາຕຈັບພິກສຸໄວ້ ພິກສຸທັງຫລາຍຄວນກ່າວກັບຫມູ່ຍາຕນັ້ນຢ່າງນີ້ວ່າ

"ທ່ານທັງຫລາຍ ກຣຸນາປ່ອຍພິກສຸນີ້ໄວ້ບຶດນຶ່ງຈົນກວ່າພິກສຸນີ້ຈະມອບປວາຣນາເສັດເຖີດ" ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ພິກສຸທັງຫລາຍຄວນກ່າວກັບຍາຕເຫລົ່ານັ້ນຢ່າງນີ້ວ່າ "ທ່ານທັງຫລາຍກຣຸນາຣອ ນະທີ່ອັນຄວຣບຶດນຶ່ງຈົນກວ່າພິກສຸນີ້ຈະມອບປວາຣນາເສັດເຖີດ" ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ພິກສຸທັງຫລາຍຄວນກ່າວກັບຍາຕເຫລົ່ານັ້ນ
ຢ່າງນີ້ວ່າ "ທ່ານທັງຫລາຍກຣຸນານຳພິກສຸນີ້ໄປໄວ້ນອກສີມາບຶດນຶ່ງຈົນກວ່າສົງຂ໌ຈະປວາຣນາເສັດເຖີດ" ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ສົງຂ໌ບໍ່ຄວນແບ່ງພວກປວາຣນາ ຖ້າແບ່ງພວກປວາຣນາ ຕ້ອງອາບັຕິທຸກກະຕະ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນປວາຣນານັ້ນ ພຣະຣາຊາທັງຫລາຍຊົງຈັບ ພິກສຸໄວ້. . . ພວກໂຈຣຈັບໄວ້. . . ພວກນັກເລງຈັບໄວ້. . . ພວກພິກສຸທີ່ເປັນສັຕຣູກັນຈັບໄວ້ ພິກສຸທັງຫລາຍຄວນກ່າວກັບພວກພິກສຸທີ່ເປັນສັຕຣກັນເຫລົ່ານັ້ນຢ່າງນີ້ວ່າ "ທ່ານທັງຫລາຍ ກຣຸນາປ່ອຍພິກສຸນີ້ໄວ້ບຶດນຶ່ງຈົນກວ່າພິກສຸນີ້ຈະມອບປວາຣນາເສັດເຖີດ" ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ພິກສຸທັງຫລາຍ ຄວນກ່າວກັບພວກພິກສຸຜູ້ເປັນສັຕຣູນັ້ນຢ່າງນີ້ວ່າ "ທ່ານທັງຫລາຍກຣຸນາຣອ ນະທີ່ສີມຄວຣບຶດນຶ່ງຈົນກວ່າພິກສຸນີ້ຈະມອບປວາຣນາເສັດເຖີດ" ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ພິກສຸທັງຫລາຍຄວນກ່າວກັບພວກພິກສຸຜູ້ເປັນສັຕຣູນັ້ນຢ່າງນີ້ວ່າ "ທ່ານທັງຫລາຍ ກຣຸນານຳພິກສຸນີ້ໄປໄວ້ນອກສີມາບຶດນຶ່ງຈົນກວ່າສົງຂ໌ຈະປວາຣນາເສັດເຖີດ" ຖ້າໄດ້ຢ່າງນັ້ນ ນັ້ນເປັນການດີ ຖ້າບໍ່ໄດ້ ສົງຂ໌ບໍ່ຄວນແບ່ງພວກກັນປວາຣນາ ຖ້າແບ່ງພວກກັນປວາຣນາ ຕ້ອງອາບັຕິທຸກກະຕະ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໔໑ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໖໔. ສັງຂປວາຣນາທິປເພທ

໑໖໔. ສັງຂປວາຣນາທິປເພທ

ວ່າດ້ວຍປະເພດປວາຣນາມີປວາຣນາເປັນການສົງຂ໌ເປັນຕົ້ນ

ເຣື້ອງພິກສຸ ໕ ຮູບ ປວາຣນາເປັນການສົງຂ໌

[໒໑໕] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸຢູ່ດ້ວຍກັນ ໕ ຮູບ ພິກສຸເຫລົ່ານັ້ນມີການສົນທນາກັນດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ສົງຂ໌ຄວນປວາຣນາ ກໍພວກເຮົາມີ

໕ ຮູບ ຈະຄວນປວາຣນາຢ່າງໃດຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ເຣົາອນຸຍາຕໃຫ້ພິກສຸ ໕ ຮູບ ປວາຣນາເປັນກາຣສົງຄ໌"

ເຣື້ອງພິກສຸ ໔ ຮູບປວາຣນາເປັນກາຣຄນະ

[໑໑໕] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸຢູ່ດ້ວຍກັນ ໔ ຮູບ ພິກສຸເຫລົ່າ ນັ້ນໄດ້ມີກາຣສົນທນາກັນດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງອນຸຍາຕໃຫ້ພິກສຸ ໕ ຮູບ ປວາຣນາເປັນ ກາຣສົງຄ໌ ກໍພວກເຣົາມີພຽງ ໔ ຮູບ ຈະຄວນປວາຣນາຢ່າງໃດຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ເຣົາອນຸຍາຕໃຫ້ພິກສຸ ໔ ຮູບ ປວາຣນາຕໍ່ກັນ"

ວິທີທຳປວາຣນາເປັນກາຣຄນະ

ພິກສຸທັງຫລາຍ ກໍແລພິກສຸ ໔ ຮູບນັ້ນຄວນປວາຣນາຢ່າງນີ້
ພິກສຸຜູ້ສລາດສາມາດຄວນປະກາດໃຫ້ພິກສຸເຫລົ່ານັ້ນຊາບວ່າ ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ວັນນີ້ ເປັນວັນປວາຣນາ ຖ້າທ່ານທັງຫລາຍພ້ອມກັນແລ້ວ ເຣົາທັງຫລາຍຄວນປວາຣນາຕໍ່ກັນ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໔໔ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໒໔. ສົງຂປວາຣນາທີປເພທ

ພິກສຸຜູ້ເຖຣະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມື ກ່າວຄຳປວາຣນາຕໍ່ພິກສຸ(ຜູ້ ນວກະ)ເຫລົ່ານັ້ນຢ່າງນີ້ວ່າ

ຄຳປວາຣນາສຳລັບພິກສຸມີພຣຣສແກ່ກວ່າ

ທ່ານທັງຫລາຍ ຂະນ້ອຍຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍ ນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຂະນ້ອຍ ເມື່ອຂະນ້ອຍຊາບ ຈັກໄດ້ແກ້ໄຂຕໍ່ໄປ
ທ່ານທັງຫລາຍ ແມ່ນຄັ້ງທີ ໒ ຂະນ້ອຍຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້

ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຂະນ້ອຍ ເມື່ອຂະນ້ອຍຊາບ ຈັກໄດ້ແກ້ໄຂຕໍ່ໄປ

ທ່ານທັງຫລາຍ ແມ່ນຄັ້ງທີ ๓ ຂະນ້ອຍຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຂະນ້ອຍ ເມື່ອຂະນ້ອຍຊາບ ຈັກໄດ້ແກ້ໄຂຕໍ່ໄປ

ຄຳປວາຣນາສຳລັບພິກສຸພັນສາອ່ອນກວ່າ

ພິກສຸຜູ້ນວກະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມື ກ່າວຄຳປວາຣນາຕໍ່ພິກສຸ(ຜູ້ເຖຣະ)ເຫລົ່ານັ້ນຢ່າງນີ້ວ່າ

ທ່ານຜູ້ຈະເຣີນທັງຫລາຍ ຜູ້ຂ້າຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບ ຈັກໄດ້ແກ້ໄຂຕໍ່ໄປ

ທ່ານຜູ້ຈະເຣີນທັງຫລາຍ ແມ່ນຄັ້ງທີ ໒ ຜູ້ຂ້າຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບ ຈັກໄດ້ແກ້ໄຂຕໍ່ໄປ

ທ່ານຜູ້ຈະເຣີນທັງຫລາຍ ແມ່ນຄັ້ງທີ ๓ ຜູ້ຂ້າຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບ ຈັກໄດ້ແກ້ໄຂຕໍ່ໄປ”

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ๓໔๓ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທະກະ] ໑໒໔. ສັງຂປວາຣນາທີປເພທ

ເຣື້ອງພິກສຸ ๓ ຮູບ ປວາຣນາເປັນກາຣຄນະ

ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸຢູ່ດ້ວຍກັນ ๓ ຮູບ

ພິກສຸເຫລົ່ານັ້ນໄດ້ມີກາຣສົນທນາກັນດັ່ງນີ້ວ່າ “ພຣະຜູ້ມີພຣະພາກຊົງອນຸຍາຕໃຫ້ພິກສຸ ໕ ຮູບ ປວາຣນາເປັນກາຣສົງຂ໌ ໃຫ້ພິກສຸ ໔ ຮູບ ປວາຣນາຕໍ່ກັນ ກໍພວກເຮົາມີພຽງ ๓ ຮູບ ຈະຄວນ

ປວາຣນາຢ່າງໃດຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກ ຣັບສັ່ງວ່າ "ພິກສຸທັງຫລາຍ ເຮົາອະນຸຍາຕໃຫ້ພິກສຸ ໓ ຮູບ ປວາຣນາຕໍ່ກັນ"

ວິທີທຳປວາຣນາເປັນກາຣຄະນະ

ພິກສຸທັງຫລາຍ ກໍແລພິກສຸ ໓ ຮູບນັ້ນຄວນປວາຣນາຢ່າງນີ້

ພິກສຸຜູ້ສລາດສາມາດຄວນປະກາດໃຫ້ພິກສຸເຫລົ່ານັ້ນຊາບວ່າ ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ວັນນີ້ ເປັນວັນປວາຣນາ ຖ້າທ່ານທັງຫລາຍພ້ອມກັນແລ້ວ ເຮົາທັງຫລາຍຄວນປວາຣນາຕໍ່ກັນ ພິກສຸຜູ້ ເຖຣະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມື ກ່າວຄຳປວາຣນາຕໍ່ພິກສຸເຫລົ່ານັ້ນຢ່າງ ນີ້ວ່າ

ຄຳປວາຣນາ

ທ່ານທັງຫລາຍ ຂະນ້ອຍຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍ ນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຂະນ້ອຍ ເມື່ອຂະນ້ອຍຊາບ ຈັກໄດ້ ແກ້ໄຂຕໍ່ໄປ

ທ່ານທັງຫລາຍ ແມ່ນຄັ້ງທີ ໒ ຂະນ້ອຍຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍ ດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຂະນ້ອຍ ເມື່ອຂະນ້ອຍຊາບ ຈັກໄດ້ແກ້ໄຂຕໍ່ໄປ

ທ່ານທັງຫລາຍ ແມ່ນຄັ້ງທີ ໓ ຂະນ້ອຍຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີດ້ວຍໄດ້ຍິນກໍ ດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຂະນ້ອຍ ເມື່ອຂະນ້ອຍຊາບ ຈັກໄດ້ແກ້ໄຂຕໍ່ໄປ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໔໔ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໔. ສົງຂປວາຣນາທີປເພທ

ພິກສຸຜູ້ນວກະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມືກ່າວ ຄຳປວາຣນາຕໍ່ພິກສຸເຫລົ່າ ນັ້ນຢ່າງນີ້ວ່າ

ຄໍາປວາຣນາ

ທ່ານຜູ້ຈະເຣີນທັງຫລາຍ ຜູ້ຂ້າຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບ ຈັກໄດ້ແກ້ໄຂຕໍ່ໄປ

ທ່ານຜູ້ຈະເຣີນທັງຫລາຍ ແມ່ນຄັ້ງທີ ໒ ຜູ້ຂ້າຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບ ຈັກໄດ້ແກ້ໄຂຕໍ່ໄປ ທ່ານຜູ້ຈະເຣີນທັງຫລາຍ ແມ່ນຄັ້ງທີ ໓ ຜູ້ຂ້າຂໍປວາຣນາຕໍ່ທ່ານທັງຫລາຍ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານທັງຫລາຍໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບ ຈັກໄດ້ແກ້ໄຂຕໍ່ໄປ

ເຣື່ອງພິກສຸ ໔ ຮູບ ປວາຣນາຕໍ່ກັນ

[໒໑໗] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸຢູ່ດ້ວຍກັນ ໔ ຮູບ ພິກສຸເຫລົ່ານັ້ນໄດ້ມີການສົນທນາກັນດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງອນຸຍາຕໃຫ້ພິກສຸ ໕ ຮູບ ປວາຣນາເປັນການສົງຂ໌ ໃຫ້ພິກສຸ ໔ ຮູບ ປວາຣນາຕໍ່ກັນ ໃຫ້ພິກສຸ ໓ ຮູບ ປວາຣນາ ຕໍ່ກັນ ກໍພວກເຮົາມີພຽງ ໔ ຮູບ ຈະຄວນປວາຣນາຢ່າງໃດຫນໍ" ຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸ ໔ ຮູບ ປວາຣນາຕໍ່ກັນ"

ວິທີທໍາປວາຣນາເປັນການຄນະ

ພິກສຸທັງຫລາຍ ກໍແລພິກສຸ ໔ ຮູບນັ້ນຄວນປວາຣນາຢ່າງນີ້ ພິກສຸຜູ້ເຖຣະ ຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມື ກ່າວກັບພິກສຸນວກະຢ່າງນີ້ວ່າ

{ທີ່ມາ : ໄປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໔໕ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໒໔. ສົງຂປວາຣນາທີປເພຫ

ທ່ານ ຂະນ້ອຍຂໍປວາຣນາຕໍ່ທ່ານ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຂະນ້ອຍ ເມື່ອຂະນ້ອຍຊາບ ຈັກໄດ້ແກ້ໄຂຕໍ່ໄປ ທ່ານ ແມ່ນຄັ້ງທີ ໒ ຂະນ້ອຍຂໍປວາຣນາຕໍ່ທ່ານ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຂະນ້ອຍ ເມື່ອຂະນ້ອຍຊາບຈັກໄດ້ແກ້ໄຂຕໍ່ໄປ ທ່ານ ແມ່ນຄັ້ງທີ ໓ ຂະນ້ອຍຂໍປວາຣນາຕໍ່ທ່ານ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຂະນ້ອຍ ເມື່ອຂະນ້ອຍຊາບຈັກໄດ້ແກ້ໄຂຕໍ່ໄປ

ພິກສຸຜູ້ນວກະຄວນຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມື ກ່າວກັບພິກສຸຜູ້ເຖຣະຢ່າງນີ້ວ່າ ທ່ານຜູ້ຈະເຣີນ ຜູ້ຂ້າຂໍປວາຣນາຕໍ່ທ່ານ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບຈັກໄດ້ແກ້ໄຂຕໍ່ໄປ

ທ່ານຜູ້ຈະເຣີນ ແມ່ນຄັ້ງທີ ໒ ຜູ້ຂ້າຂໍປວາຣນາຕໍ່ທ່ານ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຜູ້ຂ້າ ເມື່ອຜູ້ຂ້າຊາບ ຈັກໄດ້ແກ້ໄຂຕໍ່ໄປ

ທ່ານຜູ້ຈະເຣີນ ແມ່ນຄັ້ງທີ ໓ ຜູ້ຂ້າຂໍປວາຣນາຕໍ່ທ່ານ ດ້ວຍໄດ້ເຫັນກໍດີ ດ້ວຍໄດ້ຍິນກໍດີ ດ້ວຍນຶກສົງສັຍກໍດີ ຂໍທ່ານໄດ້ຊ່ວຍອນຸເຄາະວ່າກ່າວຕັກເຕືອນຜູ້ຂ້າເມື່ອຜູ້ຂ້າຊາບ ຈັກໄດ້ແກ້ໄຂຕໍ່ໄປ

ເຣື່ອງພິກສຸຮູບດຽວທຳອຸໂປສຖານປວາຣນາ

[໒໑໗] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸຢູ່ຮູບດຽວ ພິກສຸນັ້ນໄດ້ມີຄວາມຄິດດັ່ງນີ້ວ່າ “ພຣະຜູ້ມີພຣະພາກຊົງອນຸຍາຕໃຫ້ພິກສຸ ໕ ຮູບ ປວາຣນາເປັນກາຣສົງຄ໌ ໃຫ້ພິກສຸ ໔ ຮູບ ປວາຣນາຕໍ່ກັນ ໃຫ້ພິກສຸ ໓ ຮູບ ປວາຣນາຕໍ່ກັນ ໃຫ້ພິກສຸ ໒ ຮູບ ປວາຣນາຕໍ່ກັນ ກໍເຮົາຢູ່ພຽງຮູບດຽວ ຈະຄວນປວາຣນາຢ່າງໃດຫນໍ” ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໔໕ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໕. ອາປັຕຕິປຕິກັມມວິທີ

ພຣະຜູ້ມີພຣະພາກຣັບສັ່ງວ່າ “ພິກສຸທັງຫລາຍ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸຢູ່ຮູບດຽວ ພິກສຸນັ້ນຄວນກວາດສະຖານທີ່ທີ່ພິກສຸທັງຫລາຍຕ້ອງກັບມາ ຄືໂຮງສັນຫລືມຸນທຸປ ຫລືເຫງົ້າ

ໄມ້ກໍຕາມ ແລ້ວຕັ້ງນ້ຳສັນນ້ຳໃຊ້ ປູອາສນະ ຕາມປະທີປແລ້ວນັ່ງຢູ່
ຖ້າມີພິກສຸເຫລົ່າອື່ນມາ ຄວນປວາຣນາກັບພິກສຸເຫລົ່ານັ້ນ ຖ້າບໍ່ມີມາ ຄວນອທິສຖານວ່າ ວັນນີ້ເປັນວັນປວາຣນາຂອງເຮົາ ຖ້າບໍ່ອທິສຖານ ຕ້ອງອາບັຕິທຸກກະຕະ
ພິກສຸທັງຫລາຍ ໃນອາວາສທີ່ມີພິກສຸຢູ່ ໕ ຮູບ ບໍ່ຄວນນຳປວາຣນາຂອງພິກສຸຮູບນຶ່ງມາແລ້ວ ອີກ ໔ ຮູບປວາຣນາເປັນກາຣສົງຄ໌ ຖ້າປວາຣນາ ຕ້ອງອາບັຕິທຸກກະຕະ
ພິກສຸທັງຫລາຍ ໃນອາວາສທີ່ມີພິກສຸຢູ່ ໔ ຮູບ ບໍ່ຄວນນຳປວາຣນາຂອງພິກສຸຮູບນຶ່ງມາແລ້ວ ອີກ ໓ ຮູບປວາຣນາຕໍ່ກັນ ຖ້າປວາຣນາ ຕ້ອງອາບັຕິທຸກກະຕະ
ພິກສຸທັງຫລາຍ ໃນອາວາສທີ່ມີພິກສຸຢູ່ ໓ ຮູບ ບໍ່ຄວນນຳປວາຣນາຂອງພິກສຸຮູບນຶ່ງມາແລ້ວ ອີກ ໒ ຮູບປວາຣນາຕໍ່ກັນ ຖ້າປວາຣນາ ຕ້ອງອາບັຕິທຸກກະຕະ
ພິກສຸທັງຫລາຍ ໃນອາວາສທີ່ມີພິກສຸຢູ່ ໒ ຮູບ ບໍ່ຄວນນຳປວາຣນາຂອງພິກສຸຮູບນຶ່ງມາແລ້ວ ອີກຮູບນຶ່ງອທິສຖານ ຖ້າອທິສຖານ ຕ້ອງອາບັຕິທຸກກະຕະ"

໑໔໕. ອາປັຕຕິປຕິກັມມວິທີ

ວ່າດ້ວຍວິທີແກ້ໄຂອາບັຕິ

ເຣື້ອງພິກສຸຕ້ອງອາບັຕິໃນວັນປວາຣນາ

[໔໑໙] ສມັຍນັ້ນ ພິກສຸຮູບນຶ່ງຕ້ອງອາບັຕິ ໃນວັນປວາຣນານັ້ນ ພິກສຸນັ້ນໄດ້ມີຄວາມຄິດດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ພິກສຸມີອາບັຕິຕິດຕົວບໍ່ຄວນປວາຣນາດັ່ງນີ້ ກໍເຮົາຕ້ອງອາບັຕິແລ້ວ ຈະຄວນປະຕິບັດຢ່າງໃດຫນໍ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນວັນປວາຣນານັ້ນພິກສຸຕ້ອງອາບັຕິ ພິກສຸນັ້ນຄວນເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າ ປະນົມມືກ່າວຢ່າງນີ້ວ່າ ຂະນ້ອຍຕ້ອງອາບັຕິຊື່ນີ້ ຂໍສະແດງຄືນອາບັຕິນັ້ນ ຂະນ້ອຍ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໔໗ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໕. ອາປັຕຕິອາວິກຣນວິທີ

ພິກສຸຜູ້ຮັບຄວນກ່າວວ່າ “ທ່ານເຫັນຫລື”
ພິກສຸຜູ້ສະແດງຄວນຕອບວ່າ “ໂດຍ ຂະນ້ອຍເຫັນ”
ພິກສຸຜູ້ຮັບຄວນກ່າວວ່າ “ທ່ານຄວນສຳຣວມຕໍ່ໄປ”

ເຣື້ອງພິກສຸບໍ່ແນ່ໃຈໃນອາບັຕິ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸມີຄວາມບໍ່ແນ່ໃຈໃນອາບັຕິ ພິກສຸນັ້ນຄວນເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງກຣະໂຫຍ່ງ ປະນົມມືກ່າວຢ່າງນີ້ວ່າ “ຂະນ້ອຍມີຄວາມບໍ່ແນ່ໃຈໃນອາບັຕິຊື່ນີ້ ຂະນ້ອຍ ເມື່ອຂະນ້ອຍຫມົດຄວາມບໍ່ແນ່ໃຈຈະເຮັດຄືນອາບັຕິນັ້ນ” ແລ້ວປວາຣນາ ແຕ່ຕ້ອງບໍ່ທຳອັນຕຣາຍຕໍ່ປວາຣນາ ເພາະຂໍ້ນັ້ນເປັນປັຈຈັຍ

໑໔ຝ. ອາປັຕຕິອາວິກຣນວິທີ

ວ່າດ້ວຍວິທີເປີດເຜີຍອາບັຕິ

ເຣື້ອງພິກສຸຣະນຶກອາບັຕິໄດ້

[໒໔໐] ສມັຍນັ້ນ ພິກສຸຮູບນຶ່ງກຳລັງປວາຣນາ ຣະນຶກອາບັຕິໄດ້ ພິກສຸນັ້ນໄດ້ມີຄວາມຄິດດັ່ງນີ້ວ່າ “ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ພິກສຸມີອາບັຕິຕິດຕົວບໍ່ຄວນປວາຣນາ ດັ່ງນີ້ ກໍເຮົາຕ້ອງອາບັຕິແລ້ວ ຈະຄວນປະຕິບັດຢ່າງໃດຫນໍ” ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ ພິກສຸທັງຫລາຍ ໃນກໍຣະນີນີ້ ເມື່ອພິກສຸກຳລັງປວາຣນາ ຣະນຶກອາບັຕິໄດ້ ພິກສຸນັ້ນຄວນບອກພິກສຸໃກ້ຄຽງຢ່າງນີ້ວ່າ “ຂະນ້ອຍຕ້ອງອາບັຕິ ຊື່ນີ້ ຂະນ້ອຍ ຂະນ້ອຍລຸກຈາກທີ່ນີ້ແລ້ວຈະເຮັດຄືນອາບັຕິນັ້ນ” ແລ້ວປວາຣນາ ແຕ່ຕ້ອງບໍ່ທຳອັນຕຣາຍຕໍ່ປວາຣນາ ເພາະຂໍ້ນັ້ນເປັນປັຈຈັຍ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໔໗ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔ຖ. ສພາຄາປັຕຕິປຕິກັມມວິທີ

ກຳລັງປວາຣະນາບໍ່ແນ່ໃຈໃນອາບັຕິ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ເມື່ອພິກສຸກຳລັງປວາຣະນາ ມີຄວາມບໍ່ແນ່ໃຈໃນອາບັຕິ ພິກສຸນັ້ນຄວນບອກພິກສຸໃກ້ຄຽງຢ່າງນີ້ວ່າ "ຂະນ້ອຍມີຄວາມບໍ່ແນ່ໃຈໃນອາບັຕິຊື່ນີ້ຂະນ້ອຍ ຂະນ້ອຍເມື່ອຫມົດຄວາມບໍ່ແນ່ໃຈຈະເຮັດຄືນອາບັຕິນັ້ນ" ແລ້ວປວາຣະນາ ແຕ່ຕ້ອງບໍ່ທຳ ອັນຕຣາຍຕໍ່ປວາຣະນາເພາະຂໍ້ນັ້ນເປັນປັຈຈັຍ

໑໔໗. ສພາຄາປັຕຕິປຕິກັມມວິທີ

ວ່າດ້ວຍວິທີແກ້ໄຂສພາຄາບັຕິ

ເຣື້ອງສົງຂ໌ທັງຫມົດຕ້ອງສພາຄາບັຕິ

[໔໔໑] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນປວາຣະນານັ້ນ ສົງຂ໌ທັງຫມົດຕ້ອງສພາຄາບັຕິ໑ ພິກສຸເຫລົ່ານັ້ນໄດ້ປຶກສາກັນດັ່ງນີ້ວ່າ "ພຣະຜູ້ມີພຣະພາກຊົງບັນຍັດໄວ້ວ່າ ພິກສຸບໍ່ຄວນສະແດງສພາຄາບັຕິບໍ່ຄວນຮັບການສະແດງສພາຄາບັຕິ ກໍສົງຂ໌ທັງຫມົດນີ້ຕ້ອງສພາຄາບັຕິແລ້ວ ພວກເຮົາຈະຄວນປະຕິບັດຢ່າງໃດຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣະນານັ້ນ ສົງຂ໌ທັງຫມົດຕ້ອງສພາຄາບັຕິ ພິກສຸເຫລົ່ານັ້ນຄວນສົ່ງພິກສຸຮູບນຶ່ງໄປຍັງອາວາສໃກ້ຄຽງພໍຈະກັບມາທັນໃນມື້ນັ້ນດ້ວຍສັ່ງວ່າ ທ່ານ ທ່ານຈົ່ງໄປທຳຄືນອາບັຕິ ນັ້ນມາເຖີດ ພວກເຮົາຈະເຮັດຄືນອາບັຕິນັ້ນໃນສຳນັກຂອງທ່ານ ຖ້າໄດ້ຢ່າງນີ້ ນັ້ນເປັນການດີ ຖ້າບໍ່ໄດ້ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິກັມວາຈາວ່າ

ໝາຍເຫດ :

໑ ເບິ່ງຂໍ້ ໑໕໓ ຫນ້າ ໔໕໕ (ໝາຍເຫດ)

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໔໙ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣະນາຂັນທກະ] ໑໔໗. ອນາປັຕຕິປັນນຣສກະ

ຍັຕຕິກັມວາຈາ

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສົງຄ໌ທັງໝົດນີ້ຕ້ອງສຸພາຄາບັຕິແລ້ວ ເມື່ອພົບພິກສຸຮູບອື່ນຜູ້ບໍຣິສຸດຫຼືບໍ່ມີອາບັຕິ ກໍຈະເຮັດຄືນອາບັຕິນັ້ນໃນສຳນັກຂອງພິກສຸຮູບນັ້ນ ດັ່ງນີ້ແລ້ວປວາຣນາ ແຕ່ຕ້ອງບໍ່ທຳອັນຕຣາຍຕໍ່ປວາຣນາ ເພາະຂໍ້ນັ້ນເປັນປັຈຈັຍ

ສົງຄ໌ທັງໝົດບໍ່ແນ່ໃຈໃນສຸພາຄາບັຕິ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ສົງຄ໌ທັງໝົດມີຄວາມບໍ່ແນ່ໃຈໃນສຸພາຄາບັຕິ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຄ໌ຊາບດ້ວຍຍັຕຕິກັມວາຈາວ່າ

ຍັຕຕິກັມວາຈາ

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສົງຄ໌ທັງໝົດນີ້ມີຄວາມບໍ່ແນ່ໃຈໃນສຸພາຄາບັຕິ ເມື່ອໝົດຄວາມບໍ່ແນ່ໃຈ ກໍຈະເຮັດຄືນອາບັຕິນັ້ນ ດັ່ງນີ້ ແລ້ວປວາຣນາ ແຕ່ຕ້ອງບໍ່ທຳອັນຕຣາຍຕໍ່ປວາຣນາ ເພາະຂໍ້ນັ້ນເປັນປັຈຈັຍ

ປຖມພານວາຣທີ ໑ ຈົບ

໑໔ໆ. ອນາປັຕຕິປັນນຣສກະ

ວ່າດ້ວຍການປວາຣນາໂດຍບໍ່ຕ້ອງອາບັຕິ ໑໕ ກໍຣະນີ

[໔໔໔] ສມັຍນັ້ນ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໕໐ }

ພິກສຸທັງຫລາຍຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໑)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພິກສຸທີ່ເຫລືອຄວນປວາຣນາ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໒)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພິກສຸທີ່ເຫລືອຄວນປວາຣນາ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໓)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່"

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໕໑ }

ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ພອພິກສຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີ

ຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໔)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ . . . ພອພິກສຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພວກພິກສຸຜູ້ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໕)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ . . . ພໍພິກສຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພວກພິກສຸຜູ້ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໖)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າພິກສຸເຫລົ່ານັ້ນ ຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໗)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ . . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາ ໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໘)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ . . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໕໔ }

ມີຈຳນວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໙)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຣູບ ແຕ່ປະຊຸມກັນ ໕ ຣູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໑໐)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຣູບ . . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໑໑)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຣູບ . . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈຳນວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໑໒)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຣູບ ແຕ່ປະຊຸມກັນ ໕ ຣູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໑໓)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຣູບ . . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໕໓ }

ຈຳນວນເທົ່າກັນ ພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໑໔)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຣູບ . . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈຳນວນນ້ອຍກວ່າ ພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວບໍ່ຕ້ອງອາບັຕິ (໑໕)

ອນາປັຕຕິປັນນຣສກະ ຈົບ

໑໘໙. ວັຄຄາວັຄຄສັຍຍີປັນນຣສກະ

ວ່າດ້ວຍແບ່ງພວກກັນຢູ່ສຳຄັນວ່າພ້ອມພຽງ ໑໕ ກໍຣະນີ

[໒໔໓] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຣູບ ແຕ່ປະຊຸມກັນ ໕ ຣູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ພິກສຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໑)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຣູບ . . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈຳນວນເທົ່າກັນ ພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພິກສຸທີ່ເຫລືອຄວນປວາຣນາ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໒)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຣູບ ຯລຯ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈຳນວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພິກສຸທີ່ເຫລືອ ຄວນປວາຣນາ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໓)

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໕໔ }

ພິກຂຸທັງຫລາຍ ອີກຢ່າງໜຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງໜຶ່ງ ໃນວັນປວາຣນານັ້ນ ມີພິກຂຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກຂຸເຫລົ່ານັ້ນ ຮູ້ຢູ່ວ່າ “ຍັງມີພິກຂຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່” ພິກຂຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ພອພິກຂຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກຂຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກຂຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໔)

. . . ພອພິກຂຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກຂຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພວກພິກຂຸຜູ້ມາທີຫລັງຄວນປວາຣນາໃນສຳນັກຂອງພິກຂຸເຫລົ່ານັ້ນ ພວກພິກຂຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໕)

. . . ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໖)

ພິກຂຸທັງຫລາຍ ອີກຢ່າງໜຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງໜຶ່ງ ໃນວັນປວາຣນານັ້ນ ມີພິກຂຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກຂຸເຫລົ່ານັ້ນຮູ້ຢູ່ວ່າ “ຍັງມີພິກຂຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່” ພິກຂຸເຫລົ່ານັ້ນມີຄວາມສຳຄັນວ່າເປັນທັມ ເປັນວິນັຍ ຍັງແບ່ງພວກກັນຢູ່ ແຕ່ສຳຄັນວ່າເປັນຜູ້ພ້ອມພຽງ ປວາຣນາ ພອພິກຂຸເຫລົ່ານັ້ນປວາຣນາເສັດ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກຂຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກຂຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໗)

. . . ພໍພິກຂຸເຫລົ່ານັ້ນປວາຣນາເສັດ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກຂຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກຂຸເຫລົ່ານັ້ນ ພວກພິກຂຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໘)

. . . ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໙)

. . . ພອພິກຂຸເຫລົ່ານັ້ນ ປວາຣນາເສັດ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໐)

. . . ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໑)

. . . ຂນະນັ້ນ ພິກຂຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໒)

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໕໕ }

. . . ພໍພິກສຸເຫລົ່ານັ້ນ ປວາຣນາເສັດ ບໍ່ທັນລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໓)
. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໔)
. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໕)

ວັຄຄາວັຄຄສັຍຍີປັນນຣສກະ ຈົບ

໑໖໐. ເວມຕິກປັນນຣສກະ

ວ່າດ້ວຍພິກສຸບໍ່ແນ່ໃຈປວາຣນາ ໑໕ ກໍຣະນີ

[໔໔໔] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ບໍ່ແນ່ໃຈວ່າ "ພວກເຮົາ ຄວຣປວາຣນາຫລືບໍ່ຄວຣ" ປວາຣນາ ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໑)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ . . . ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພິກສຸທີ່ເຫລືອຄວນປວາຣນາ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໒)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ . . . ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພິກສຸທີ່ເຫລືອຄວນປວາຣນາ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໓)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ບໍ່ແນ່ໃຈວ່າ "ພວກເຮົາຄວຣປວາຣນາຫລືບໍ່ຄວຣ" ປວາຣນາ ພໍພິກສຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກສຸທີ່

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໕໖ }

ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໔)

. . . ພອພິກສຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໕)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໖)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ບໍ່ແນ່ໃຈວ່າ "ພວກເຮົາຄວຣປວາຣນາຫລືບໍ່ຄວຣ" ປວາຣນາ ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໗)

. . . ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໘)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໙)

. . . ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໐)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໑)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໒)

. . . ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໓)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໔)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໕)

ເວມຕິກປັນນູຣສູກະ ຈົບ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໕໗ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໓໑. ກຸກກຸຈຈປກຕປັນນູຣສູກະ

໑໓໑. ກຸກກຸຈຈປກຕປັນນູຣສູກະ

ວ່າດ້ວຍພິກສຸກັງວົລໃຈທຳປວາຣນາ ໑໕ ກໍຣະນີ

[໔໒໕] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ກັງວົລໃຈປວາຣນາດ້ວຍຄິດວ່າ "ພວກເຮົາ ຄວຣປວາຣນາແທ້ ບໍ່ແມ່ນບໍ່ຄວຣ" ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໑)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ . . . ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພິກສຸທີ່ເຫລືອຄວນປວາຣນາ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໒)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ . . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ພິກສຸທີ່ເຫລືອຄວນປວາຣນາ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໓)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ກັງວົລໃຈປວາຣນາດ້ວຍຄິດວ່າ "ພວກເຮົາຄວຣປວາຣນາແທ້ ບໍ່

ແມ່ນບໍ່ຄວຣ" ພອພິກສຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໔)

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໕໗ }

. . . ພອພິກສຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໕)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໖)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຣູບ ແຕ່ປະຊຸມກັນ ໕ ຣູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ກັງວົລໃຈປວາຣນາດ້ວຍຄິດວ່າ "ພວກເຮົາ ຄວຣປວາຣນາແທ້ ບໍ່ແມ່ນບໍ່ຄວຣ" ພອພິກສຸເຫລົ່ານັ້ນ ປວາຣນາເສັດ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໗)

. . . ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸກກະຕະ (໘)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໙)

. . . ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໐)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໑)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໒)

. . . ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນຫລາຍກວ່າ . . . (໑໓)

. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ . . . (໑໔)
. . . ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ . . . (໑໕)

ກຸກກຸຈຈປກຕປັນນຣສກະ ຈົບ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໕໙ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໓໔. ເພທປຸເຣກຂາຣປັນນຣສກະ

໑໓໔. ເພທປຸເຣກຂາຣປັນນສູຣກະ

ວ່າດ້ວຍມຸ່ງທຳຄວາມແຕກແຫງທຳປວາຣນາ ໑໕ ກໍຣະນີ

[໔໔໓] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈຳນວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (໑)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາເມື່ອພິກສຸເຫລົ່ານັ້ນກຳລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣ ນາດີແລ້ວ ພິກສຸທີ່ເຫລືອຄວນປວາຣນາ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (໔)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ

ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ເມື່ອພິກສຸເຫລົ່ານັ້ນກໍາລັງປວາຣນາ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈໍານວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາ ຣນາດີແລ້ວ ພິກສຸທີ່ເຫລືອຄວນປວາຣນາ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (໓)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຣູບ ແຕ່ປະຊຸມກັນ ໕ ຣູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ

{ທີ່ມາ : ໄປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໖໐ }

"ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ພໍພິກສຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນຫລາຍກວ່າ ພວກພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (໔)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຣູບ ແຕ່ປະຊຸມກັນ ໕ ຣູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ພໍພິກສຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈໍານວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສໍານັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (໕)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຣູບ ແຕ່ປະຊຸມກັນ ໕ ຣູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ"ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ພໍພິກສຸເຫລົ່ານັ້ນປວາຣນາເສັດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງມີຈໍານວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສໍານັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (໖)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນ

ອາວາສຫລາຍຮູບ ແຕ່ປະຊຸມກັນ ៥ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໄຍດຫຍັງ" ປວາຣນາ ພໍພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (ໆ)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ៥ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນ

{ທີ່ມາ : ໄປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ເຫລັ້ມ : ៤ ຫນ້າ : ໓໒໑ }

ຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໄຍດຫຍັງ" ປວາຣນາ ພໍພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສໍານັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (ໆ)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ៥ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໄຍດຫຍັງ" ປວາຣນາ ພໍພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດຍັງບໍ່ທັນລຸກຂຶ້ນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສໍານັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (ຌ)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ៥ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໄຍດຫຍັງ" ປວາຣນາ ພໍພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນ

ປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (໑໐)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໓໔ }

ດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສໍານັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວ ຕ້ອງອາບັຕິຖຸລລັຈຈັຍ (໑໑)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນບາງສ່ວນ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສໍານັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (໑໒)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈໍານວນຫລາຍກວ່າ ພິກສຸເຫລົ່ານັ້ນຄວນປວາຣນາໃຫມ່ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິຖຸລລັຈຈັຍ (໑໓)
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນ

ອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສພວກອື່ນມາເຖິງ ມີຈຳນວນເທົ່າກັນ ພວກພິກສຸທີ່ປວາຣນາແລ້ວເປັນອັນປວາຣນາດີແລ້ວ ທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວ ຕ້ອງອາບັຕິທຸລລັຈຈັຍ (໑໔)

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນມີພິກສຸທີ່ຢູ່ໃນອາວາສຫລາຍຮູບ ແຕ່ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່ ພິກສຸເຫລົ່ານັ້ນ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໓໓ }

ຮູ້ຢູ່ວ່າ "ຍັງມີພິກສຸທີ່ຢູ່ໃນອາວາສພວກອື່ນທີ່ບໍ່ໄດ້ມາຢູ່" ແຕ່ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ພອພິກສຸເຫລົ່ານັ້ນປວາຣນາເສັດ ບໍຣິສັດລຸກຂຶ້ນທັງຫມົດ ຂນະນັ້ນ ພິກສຸທີ່ຢູ່ໃນອາວາສ ພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ພວກພິກສຸທີ່ປວາຣນາແລ້ວ ເປັນອັນປວາຣນາດີແລ້ວທີ່ມາທີຫລັງຄວນປວາຣນາໃນສຳນັກຂອງພິກສຸເຫລົ່ານັ້ນ ພວກພິກສຸທີ່ປວາຣນາແລ້ວຕ້ອງອາບັຕິທຸລລັຈຈັຍ (໑໕)

ເພຫປຸເຣກຂາຣປັນນຣສກະ ຈົບ
ປັຍຈວິສຕິຕິກະ ໑ ຈົບ

໑໓໓. ສີໂມກກັນຕິກເປຍຍາລ
ວ່າດ້ວຍການລະຂໍ້ຄວາມກ່ຽວກັບພິກສຸເຂົ້າສູ່ສີມາ

ເປຍຍາລມຸຂ ໗໐໐ ຕິກະ
[໔໑໗] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ມີພິກສຸທີ່ຢູ່ໃນອາວາສຫລາຍຮູບ
໑. ປະຊຸມກັນ ໕ ຮູບແດ່ ເກີນກວ່າແດ່
໔. ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ມີພິກສຸທີ່ຢູ່ໃນອາວາສພວກອື່ນກຳລັງເຂົ້າມາໃນສີມາ. . . "
໓. . . . ພິກສຸເຫລົ່ານັ້ນບໍ່ຮູ້ວ່າ "ພິກສຸທີ່ຢູ່ໃນອາວາສພວກອື່ນເຂົ້າມາພາຍໃນສີມາແລ້ວ . . . "

໔. . . . ພິກສຸເຫລົ່ານັ້ນບໍ່ເຫັນພິກສຸທີ່ຢູ່ໃນອາວາສພວກອື່ນກຳລັງເຂົ້າມາພາຍໃນສີມາ . . .
໕. . . . ພິກສຸເຫລົ່ານັ້ນບໍ່ເຫັນພິກສຸທີ່ຢູ່ໃນອາວາສພວກອື່ນເຂົ້າມາພາຍໃນສີມາແລ້ວ . . .

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ៣៦໔ }

៦. . . ພິກສຸເຫລົ່ານັ້ນບໍ່ໄດ້ຍິນວ່າ "ພິກສຸທີ່ຢູ່ໃນອາວາສພວກອື່ນກຳລັງເຂົ້າມາພາຍໃນສີມາ. . . "
໗. . . . ພິກສຸເຫລົ່ານັ້ນບໍ່ໄດ້ຍິນວ່າ "ພິກສຸທີ່ຢູ່ໃນອາວາສພວກອື່ນເຂົ້າມາພາຍໃນສີມາແລ້ວ . . .

ໂດຍນັຍ ໑໗໕ ຕິກະ

໑. ພິກສຸທີ່ຢູ່ໃນອາວາສກັບພິກສຸທີ່ຢູ່ໃນອາວາສ
໒. ພິກສຸອາຄັນຕຸກະກັບພິກສຸທີ່ຢູ່ໃນອາວາສ
៣. ພິກສຸທີ່ຢູ່ໃນອາວາສກັບພິກສຸອາຄັນຕຸກະ
໔. ພິກສຸອາຄັນຕຸກະກັບພິກສຸອາຄັນຕຸກະ
ຣວມເປັນ ໗໐໐ ຕິກະ ໂດຍເປຍຍາລມຸຂ໑

໑៣໔. ທິວສນານັຕຕະ

ວ່າດ້ວຍການນັບວັນປວາຣນາຕ່າງກັນ

[໔໑໘] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ວັນປວາຣນາຂອງພິກສຸທີ່ຢູ່ໃນອາວາສ ເປັນວັນ ໑໔ ຄ່ຳ ຂອງພິກສຸອາຄັນຕຸກະເປັນວັນ ໑໕ ຄ່ຳ ຖ້າພວກພິກສຸທີ່ຢູ່ໃນອາວາສມີຈຳນວນຫລາຍກວ່າ ພວກພິກສຸອາຄັນຕຸກະຄວນອນຸວັຕຣຕາມພວກພິກສຸທີ່ຢູ່ໃນອາວາສ ຖ້າມີຈຳນວນເທົ່າກັນ ພວກພິກສຸອາຄັນຕຸກະຄວນອນຸວັຕຣຕາມພວກພິກສຸທີ່ຢູ່ໃນອາວາສ ຖ້າພວກພິກສຸອາຄັນຕຸກະມີຈຳນວນຫລາຍກວ່າ ພວກພິກສຸທີ່ຢູ່ໃນອາວາສຄວນອນຸວັຕຣຕາມພວກພິກສຸອາຄັນຕຸກະ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ວັນປວາຣນາຂອງພິກສຸທີ່ຢູ່ໃນອາວາສ ເປັນວັນ ໑໕ ຄ່ຳ ຂອງພວກພິກສຸອາຄັນຕຸກະເປັນວັນ ໑໔ ຄ່ຳ ຖ້າພວກພິກສຸທີ່ຢູ່ໃນອາວາສມີຈຳນວນຫລາຍກວ່າ ພວກພິກສຸອາຄັນຕຸກະ ຄວນອນຸວັຕຣຕາມພວກພິກສຸທີ່ຢູ່ໃນອາວາສ ຖ້າມີຈຳນວນເທົ່າກັນ ພວກພິກສຸອາຄັນຕຸກະ ຄວນອນຸວັຕຣຕາມພິກສຸທີ່ຢູ່ໃນອາວາສ ຖ້າພວກ

ໝາຍເຫດ :
໑ ເບິ່ງຂໍ້ ໑໗໗ ໜ້າ ໔໗໙ (ໝາຍເຫດ)
{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໕໕ }

ພິກສຸອາຄັນຕຸກະ ມີຈຳນວນຫລາຍກວ່າ ພວກພິກສຸທີ່ຢູ່ໃນອາວາສ ຄວນອນຸວັຕຣຕາມພວກພິກສຸອາຄັນຕຸກະ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ວັນປວາຣນາຂອງພິກສຸທີ່ຢູ່ໃນອາວາສ ເປັນວັນແຣມ ໑ ຄໍ່າ ຂອງພິກສຸອາຄັນຕຸກະເປັນວັນ ໑໕ ຄໍ່າ ຖ້າພວກພິກສຸທີ່ຢູ່ໃນອາວາສ ມີຈຳນວນຫລາຍກວ່າ ພວກພິກສຸທີ່ຢູ່ໃນອາວາສບໍ່ປຣາຖນາ ກໍບໍ່ຄວນໃຫ້ຄວາມພ້ອມພຽງແກ່ພວກພິກສຸອາຄັນຕຸກະ ພວກພິກສຸອາຄັນຕຸກະ ຄວນໄປນອກສີມາປວາຣນາເຖີດ ຖ້າມີຈຳນວນເທົ່າກັນ ພວກພິກສຸທີ່ຢູ່ໃນອາວາສບໍ່ປຣາຖນາ ກໍບໍ່ຄວນໃຫ້ຄວາມພ້ອມພຽງແກ່ພວກພິກສຸອາຄັນຕຸກະ ພວກພິກສຸອາຄັນຕຸກະ ຄວນ ໄປນອກສີມາປວາຣນາເຖີດ ຖ້າພວກພິກສຸອາຄັນຕຸກະ ມີຈຳນວນຫລາຍກວ່າ ພວກພິກສຸທີ່ຢູ່ໃນອາວາສຄວນໃຫ້ຄວາມພ້ອມພຽງແກ່ພວກພິກສຸອາຄັນຕຸກະ ຫລືໄປນອກສີມາ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ວັນປວາຣນາຂອງພວກພິກສຸທີ່ຢູ່ໃນອາວາສ ເປັນວັນ ໑໕ ຄໍ່າ ຂອງພວກພິກສຸອາຄັນຕຸກະເປັນວັນແຣມ ໑ ຄໍ່າ ຖ້າພວກພິກສຸທີ່ຢູ່ໃນອາວາສ ມີຈຳນວນຫລາຍກວ່າ ພວກພິກສຸອາຄັນຕຸກະຄວນໃຫ້ຄວາມພ້ອມພຽງແກ່ພວກພິກສຸທີ່ຢູ່ໃນອາວາສ ຫລືໄປນອກສີມາ ຖ້າມີຈຳນວນເທົ່າກັນ ພວກພິກສຸອາຄັນຕຸກະຄວນໃຫ້ຄວາມພ້ອມພຽງແກ່ພວກພິກສຸທີ່ຢູ່ໃນອາວາສ ຫລືໄປນອກສີມາ ຖ້າພວກພິກສຸອາຄັນຕຸກະ ມີຈຳນວນຫລາຍກວ່າ ພວກພິກສຸອາຄັນຕຸກະບໍ່ປຣາຖນາ ກໍບໍ່ຄວນໃຫ້ຄວາມພ້ອມພຽງແກ່ພວກພິກສຸທີ່ຢູ່ໃນອາວາສ ພວກພິກສຸທີ່ຢູ່ໃນອາວາສຄວນໄປນອກສີມາປວາຣນາເຖີດ

໑໖໕. ລິງຄາທິທັສສນະ
ວ່າດ້ວຍການເຫັນລັກສນະເປັນຕົ້ນ

ເຣື້ອງລັກສນະຂອງພິກສຸທີ່ຢູ່ໃນອາວາສ
[໒໔໙] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພວກພິກສຸອາຄັນຕຸກະໄດ້ເຫັນອາການຂອງພິກສຸທີ່ຢູ່ໃນອາວາສ ລັກສນະຂອງພິກສຸທີ່ຢູ່ໃນອາວາສ ເຄື່ອງໝາຍຂອງພິກສຸທີ່ຢູ່ໃນ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ລຝຝ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທະກະ] ໑ລ໕. ລິງຄາທິທັສສນະ

ອາວາສ ສິ່ງສໍ່ສະແດງພິກສຸທີ່ຢູ່ໃນອາວາສຂອງພວກພິກສຸທີ່ຢູ່ໃນອາວາສ ຕຽງ ຕັ່ງ ເສື່ອ ໝອນ ນ້ຳສັນ ນ້ຳໃຊ້ ຈັດໄວ້ດີ ບໍຣິເວນກວາດສະອາດ ຄັນແລ້ວ ບໍ່ແນ່ໃຈວ່າ “ມີພວກ ພິກສຸທີ່ຢູ່ໃນອາວາສຢູ່ຫລືບໍ່ມີຫນໍ”

ພິກສຸເຫລົ່ານັ້ນບໍ່ແນ່ໃຈແຕ່ບໍ່ຄົ້ນຫາ ປວາຣນາ ຕ້ອງອາບັຕິທຸກກະຕະ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາ ແຕ່ບໍ່ພົບ ປວາຣນາ ບໍ່ຕ້ອງອາບັຕິ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ປວາຣນາຣ່ວມກັນ ບໍ່ຕ້ອງອາບັຕິ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ແຍກກັນປວາຣນາ ຕ້ອງອາບັຕິທຸກກະຕະ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ມຸ່ງຄວາມແຕກແຫງວ່າ “ຂໍພິກສຸເຫລົ່ານັ້ນ ຈົ່ງເສື່ອມ ສູນຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ” ປວາຣນາ ຕ້ອງອາບັຕິຖຸລລັຈຈັຍ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸອາຄັນຕຸກະໄດ້ຍິນອາການຂອງພິກສຸທີ່ຢູ່ໃນາວາສ ລັກສນະຂອງພິກສຸທີ່ຢູ່ໃນອາວາສ ເຄື່ອງໝາຍຂອງພິກສຸທີ່ຢູ່ໃນອາວາສ ສິ່ງສໍ່ສະແດງພິກສຸທີ່ຢູ່ໃນອາວາສຂອງພວກພິກສຸທີ່ຢູ່ໃນອາວາສ ໄດ້ຍິນສຽງຕີນຂອງພວກພິກສຸທີ່ຢູ່ໃນອາວາສ ກຳລັງຈົງກົມ ສຽງສາທຍາຍ ສຽງໄອ ສຽງຈາມ ຄັນແລ້ວ ບໍ່ແນ່ໃຈວ່າ “ມີພວກພິກສຸທີ່ຢູ່ໃນອາວາສຢູ່ຫລືບໍ່ມີຫນໍ”

ພິກສຸເຫລົ່ານັ້ນບໍ່ແນ່ໃຈ ແຕ່ບໍ່ຄົ້ນຫາ ປວາຣນາ ຕ້ອງອາບັຕິທຸກກະຕະ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາ ແຕ່ບໍ່ພົບ ປວາຣນາ ບໍ່ຕ້ອງອາບັຕິ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ປວາຣນາຣ່ວມກັນ ບໍ່ຕ້ອງອາບັຕິ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ແຍກກັນປວາຣນາ ຕ້ອງອາບັຕິທຸກກະຕະ

ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ມຸ່ງຄວາມແຕກແຫງວ່າ “ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ” ປວາຣນາ ຕ້ອງອາບັຕິຖຸລລັຈຈັຍ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸທີ່ຢູ່ໃນອາວາສໄດ້ເຫັນອາການຂອງພວກພິກສຸອາຄັນຕຸກະ ລັກສນະຂອງພວກພິກສຸອາຄັນຕຸກະ ເຄື່ອງໝາຍຂອງພວກພິກສຸ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໒໗ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໓໕. ລິງຄາທິທັສສນະ

ອາຄັນຕຸກະ ສິ່ງສໍ່ສະແດງພວກພິກສຸອາຄັນຕຸກະຂອງພວກພິກສຸອາຄັນຕຸກະ ໄດ້ເຫັນບາຕຣ ຈີວອນ ຜ້ານິສີທນະ ຮອຍນໍ້າລ້າງຕີນ ອັນເປັນຂອງພວກພິກສຸພວກອື່ນ ຄັນແລ້ວ ບໍ່ແນ່ໃຈວ່າ "ມີພວກພິກສຸອາຄັນຕຸກະຢູ່ຫລືບໍ່ມີຫນໍ"
ພິກສຸເຫລົ່ານັ້ນບໍ່ແນ່ໃຈ ແຕ່ບໍ່ຄົ້ນຫາ ປວາຣນາ ຕ້ອງອາບັຕິທຸກກະຕະ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາ ແຕ່ບໍ່ພົບ ປວາຣນາ ບໍ່ຕ້ອງອາບັຕິ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ປວາຣນາຮ່ວມກັນ ບໍ່ຕ້ອງອາບັຕິ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ແຍກກັນປວາຣນາ ຕ້ອງອາບັຕິທຸກກະຕະ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ຕ້ອງອາບັຕິຖຸລລັຈຈັຍ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸທີ່ຢູ່ໃນອາວາສໄດ້ຍິນອາການຂອງອາຄັນຕຸກະ ລັກສນະຂອງພວກພິກສຸອາຄັນຕຸກະ ເຄື່ອງຫມາຍຂອງພວກພິກສຸອາຄັນຕຸກະ ສິ່ງສໍ່ສະແດງພວກພິກສຸອາຄັນຕຸກະຂອງພວກພິກສຸອາຄັນຕຸກະ ໄດ້ຍິນສຽງຕີນຂອງພວກພິກສຸອາຄັນຕຸກະກຳລັງຍ່າງມາ ສຽງເກີບຕຳພື້ນ ສຽງໄອ ສຽງຈາມ ຄັນແລ້ວບໍ່ແນ່ໃຈວ່າ "ມີພວກພິກສຸອາຄັນຕຸກະຢູ່ຫລືບໍ່ມີຫນໍ"
ພິກສຸເຫລົ່ານັ້ນບໍ່ແນ່ໃຈ ແຕ່ບໍ່ຄົ້ນຫາ ປວາຣນາ ຕ້ອງອາບັຕິທຸກກະຕະ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາ ແຕ່ບໍ່ພົບ ປວາຣນາ ບໍ່ຕ້ອງອາບັຕິ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ປວາຣນາຮ່ວມກັນ ບໍ່ຕ້ອງອາບັຕິ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ແຍກກັນປວາຣນາ ຕ້ອງອາບັຕິທຸກກະຕະ
ພິກສຸເຫລົ່ານັ້ນບໍ່ແນ່ໃຈຈຶ່ງຄົ້ນຫາຈົນພົບ ມຸ່ງຄວາມແຕກແຫງວ່າ "ຂໍພິກສຸເຫລົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ພິກສຸເຫລົ່ານັ້ນຈະມີປໂຍດຫຍັງ" ປວາຣນາ ຕ້ອງອາບັຕິຖຸລລັຈຈັຍ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໒໘ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໖໘. ນານາສັງວາສກາທິປວາຣນາ

໑໖໘. ນານາສັງວາສກາທິປວາຣນາ

ວ່າດ້ວຍພິກສຸຜູ້ເປັນນານາສັງວາສເປັນຕົ້ນປວາຣນາ

ເຣື້ອງພິກສຸ ໔ ສັງວາສປວາຣນາ

[໔໖໐] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພວກພິກສຸອາຄັນຕຸກະເຫັນພວກພິກສຸທີ່ຢູ່ໃນອາວາສຜູ້ເປັນນານາສັງວາສ[1]ເຂົ້າໃຈວ່າເປັນສມານສັງວາສ ບໍ່ໄຕ່ຖາມ ປວາຣນາຮ່ວມກັນ ບໍ່ຕ້ອງອາບັຕິ
ພິກສຸອາຄັນຕຸກະເຫລົ່ານັ້ນໄຕ່ຖາມແລ້ວບໍ່ກຽດຊັງ ປວາຣນາຮ່ວມກັນ ຕ້ອງອາບັຕິທຸກກະຕະ
ພິກສຸອາຄັນຕຸກະເຫລົ່ານັ້ນໄຕ່ຖາມແລ້ວບໍ່ກຽດຊັງ ແຍກກັນປວາຣນາ ບໍ່ຕ້ອງອາບັຕິ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸອາຄັນຕຸກະເຫັນພວກພິກສຸທີ່ຢູ່ໃນອາວາສຜູ້ເປັນສມານສັງວາສ ເຂົ້າໃຈວ່າເປັນນານາສັງວາສ ບໍ່ໄຕ່ຖາມ ປວາຣນາຮ່ວມກັນ ຕ້ອງອາບັຕິທຸກກະຕະ
ພິກສຸອາຄັນຕຸກະເຫລົ່ານັ້ນໄຕ່ຖາມແລ້ວກຽດຊັງ ແຍກກັນປວາຣນາ ຕ້ອງອາບັຕິທຸກກະຕະ
ພິກສຸອາຄັນຕຸກະເຫລົ່ານັ້ນໄຕ່ຖາມແລ້ວກຽດຊັງ ປວາຣນາຮ່ວມກັນ ບໍ່ຕ້ອງອາບັຕິ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸທີ່ຢູ່ໃນອາວາສເຫັນພວກພິກສຸອາຄັນຕຸກະຜູ້ເປັນນານາສັງວາສ ເຂົ້າໃຈວ່າເປັນສມານສັງວາສ ບໍ່ໄຕ່ຖາມ ປວາຣນາຮ່ວມກັນ ບໍ່ຕ້ອງອາບັຕິ
ພິກສຸອາຄັນຕຸກະເຫລົ່ານັ້ນໄຕ່ຖາມແລ້ວບໍ່ກຽດຊັງ ປວາຣນາຮ່ວມກັນ ຕ້ອງອາບັຕິທຸກກະຕະ
ພິກສຸອາຄັນຕຸກະເຫລົ່ານັ້ນໄຕ່ຖາມແລ້ວບໍ່ກຽດຊັງ ແຍກກັນປວາຣນາ ບໍ່ຕ້ອງອາບັຕິ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ພວກພິກສຸທີ່ຢູ່ໃນອາວາສເຫັນພວກພິກສຸອາຄັນຕຸກະຜູ້ເປັນສມານສັງວາສ ເຂົ້າໃຈວ່າເປັນນານາສັງວາສ ບໍ່ໄຕ່ຖາມ ປວາຣນາຮ່ວມກັນຕ້ອງອາບັຕິທຸກກະຕະ

ໝາຍເຫດ :

໑ ນານາສັງວາສ ເບິ່ງຂໍ້ ໑໗໐ ໜ້າ ໔໗໖ (ໝາຍເຫດ)

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໖໘໙ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໖໗. ນຄັນຕັພພວາຣ

ພິກສຸທີ່ຢູ່ໃນອາວາສເຫລົ່ານັ້ນໄຕ່ຖາມແລ້ວກຽດຊັງ ແຍກກັນປວາຣນາ ຕ້ອງອາບັຕິທຸກກະຕະ
ພິກສຸທີ່ຢູ່ໃນອາວາສເຫລົ່ານັ້ນໄຕ່ຖາມແລ້ວກຽດຊັງ ປວາຣນາຮ່ວມກັນ ບໍ່ຕ້ອງອາບັຕິ

໑໖໗. ນຄັນຕັພພວາຣ

ວ່າດ້ວຍບໍ່ຄວຣໄປໃສໃນວັນປວາຣນາ

[໔໖໑] ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸ໑ໄປສູ່ອາວາສທີ່ບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸໄປສູ່ສະຖານທີ່ ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສທີ່ບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສທີ່ບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

ໝາຍເຫດ :

໑ ອາວາສທີ່ມີພິກຂຸ ເບິ່ງຂໍ້ ໑໗໑ ຫນ້າ ໔໗໔ (ໝາຍເຫດ)

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໗໐ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໖໗. ນຄັນຕັພພວາຣ

ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງບໍ່ມີພິກສຸ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸໄປສູ່ອາວາສທີ່ມີພິກສຸແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສທີ່ມີພິກສຸໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສທີ່ມີພິກສຸແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສ ຊຶ່ງມີພິກສຸໄປສູ່ອາວາສທີ່ມີພິກສຸແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ
ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ

ໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໑ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໓໗. ຄັນຕັພພວາຣ

ພິກສຸທັງຫລາຍ ໃນວັນປວາຣນານັ້ນ ບໍ່ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸແຕ່ເປັນທີ່ຢູ່ຂອງພວກພິກສຸຜູ້ເປັນນານາສັງວາສ ເວັ້ນໄວ້ແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ

໑໓໗. ຄັນຕັພພວາຣ

ວ່າດ້ວຍສະຖານທີ່ຄວຣໄປໃນວັນປວາຣນາ

[໔໓໔] ພິກສຸທັງຫລາຍ ໃນວັນປວາຣນານັ້ນ ຄວນອອກຈາກອາວາສທີ່ມີພິກສຸໄປສູ່ອາວາສ ທີ່ມີພິກສຸຊຶ່ງເປັນທີ່ຢູ່ຂອງພວກພິກສຸຜູ້ເປັນສມານສັງວາສ ຊຶ່ງຮູ້ວ່າ "ເຮົາສາມາດໄປເຖິງໃນວັນນີ້ແຫລະ"

ພິກສຸທັງຫລາຍ ໃນວັນປວາຣນານັ້ນ ຄວນອອກຈາກອາວາສທີ່ມີພິກສຸໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ຯລຯ ໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸຊຶ່ງເປັນທີ່ຢູ່ຂອງພວກພິກສຸຜູ້ເປັນສມານສັງວາສ ຊຶ່ງຮູ້ວ່າ "ເຮົາສາມາດໄປເຖິງໃນວັນນີ້ແຫລະ"

ພິກສຸທັງຫລາຍ ໃນວັນປວາຣນານັ້ນ ຄວນອອກຈາກສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສທີ່ມີພິກສຸ. . .

. . . ໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ . . .

. . . ໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ຊຶ່ງເປັນທີ່ຢູ່ຂອງພວກພິກສຸຜູ້ເປັນສມານສັງວາສ ຊຶ່ງຮູ້ວ່າ "ເຮົາສາມາດໄປເຖິງໃນວັນນີ້ແຫລະ"

ພິກສຸທັງຫລາຍ ໃນວັນປວາຣນານັ້ນ ຄວນອອກຈາກອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸໄປສູ່ອາວາສທີ່ມີພິກສຸ . . .

. . . ໄປສູ່ສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ . . .

. . . ໄປສູ່ອາວາສຫລືສະຖານທີ່ບໍ່ແມ່ນອາວາສຊຶ່ງມີພິກສຸ ຊຶ່ງເປັນທີ່ຢູ່ຂອງພວກພິກສຸຜູ້ເປັນສມານສັງວາສ ຊຶ່ງຮູ້ວ່າ "ເຮົາສາມາດໄປເຖິງໃນວັນນີ້ແຫລະ"

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ๓๗๘ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑๓໙. ວັຊຊນີຍປຸຄຄລສັນທັສສນາ

໑๓໙. ວັຊຊນີຍປຸຄຄລສັນທັສສນາ

ວ່າດ້ວຍການສະແດງບຸຄຄົລຄວຣເວັ້ນໃນປວາຣນາກັມ

[໒๓໙] ພິກສຸທັງຫລາຍ ພິກສຸບໍ່ຄວນປວາຣນາໃນບໍຣິສັດທີ່ມີພິກສຸນີນັ່ງຢູ່ດ້ວຍ ຮູບໃດປວາຣນາ ຕ້ອງອາບັຕິທຸກກະຕະ

. . . ໃນບໍຣິສັດທີ່ມີສິກຂມານານັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີສາມເນຣນັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີສາມເນຣີນັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີພິກສຸຜູ້ບອກຄືນສິກຂານັ່ງຢູ່ດ້ວຍ . . .

ພິກສຸທັງຫລາຍ ພິກສຸບໍ່ຄວນປວາຣນາໃນບໍຣິສັດທີ່ມີພິກສຸຕ້ອງອັນຕິມວັຕຖຸນັ່ງຢູ່ດ້ວຍຮູບໃດປວາຣນາ ຕ້ອງອາບັຕິທຸກກະຕະ

ພິກສຸທັງຫລາຍ ພິກສຸບໍ່ຄວນປວາຣນາໃນບໍຣິສັດທີ່ມີພິກສຸຖືກສົງຂ໌ລົງອຸກເຂປນີຍກັມ ເພາະບໍ່ເຫັນອາບັຕິນັ່ງຢູ່ດ້ວຍ ຮູບໃດປວາຣນາ ຄວນປັບອາບັຕິຕາມທັມ

. . . ໃນບໍຣິສັດທີ່ມີພິກສຸຖືກສົງຂ໌ລົງອຸກເຂປນີຍກັມເພາະບໍ່ທຳຄືນອາບັຕິນັ່ງຢູ່ດ້ວຍ

ພິກສຸທັງຫລາຍ ພິກສຸບໍ່ຄວນປວາຣນາໃນບໍຣິສັດທີ່ມີພິກສຸຖືກສົງຂ໌ລົງອຸກເຂປນີຍກັມ ເພາະບໍ່ສລະທິຕຖິບາປນັ່ງຢູ່ດ້ວຍ ຮູບໃດປວາຣນາ ຄວນປັບອາບັຕິຕາມທັມ

ພິກສຸທັງຫລາຍ ພິກສຸບໍ່ຄວນປວາຣນາໃນບໍຣິສັດທີ່ມີກະເທີຍນັ່ງຢູ່ດ້ວຍ ຮູບໃດປວາຣນາ ຕ້ອງອາບັຕິທຸກກະຕະ

. . . ໃນບໍຣິສັດທີ່ມີຄົນລັກເພສນັ່ງຢູ່ດ້ວຍ . . .

. . . ໃນບໍຣິສັດທີ່ມີພິກສຸເຂົ້າຮີດເດັຽຣະຖີຍ໌ນັ່ງຢູ່ດ້ວຍ . . .
. . . ໃນບໍຣິສັດທີ່ມີສັດຕວ໌ເດັຽຣະສານຢູ່ດ້ວຍ . . .
. . . ໃນບໍຣິສັດທີ່ມີຄົນຂ້າມາຣດານັ່ງຢູ່ດ້ວຍ . . .
. . . ໃນບໍຣິສັດທີ່ມີຄົນຂ້າບິດານັ່ງຢູ່ດ້ວຍ . . .
. . . ໃນບໍຣິສັດທີ່ມີຄົນຂ້າພຣະອຣຫັນຕ໌ນັ່ງຢູ່ດ້ວຍ . . .

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ๔ ຫນ້າ : ๓໗๓ }

. . . ໃນບໍຣິສັດທີ່ມີຄົນປະທຸສຮ້າຍພິກສຸນີນັ່ງຢູ່ດ້ວຍ . . .
. . . ໃນບໍຣິສັດທີ່ມີພິກສຸຜູ້ທຳລາຍສົງຊ໌ນັ່ງຢູ່ດ້ວຍ . . .
. . . ໃນບໍຣິສັດທີ່ມີຄົນທຳຮ້າຍພຣະສາສດາຈົນຫໍ້ພຣະໂລຫິຕນັ່ງຢູ່ດ້ວຍ . . .
ພິກສຸທັງຫລາຍ ບໍ່ຄວນປວາຣນາໃນບໍຣິສັດທີ່ມີອຸພໂຕພຍັນຊນກນັ່ງຢູ່ດ້ວຍ ຮູບໃດປວາຣນາ ຕ້ອງອາບັຕິທຸກກະຕະ

ເຣື້ອງຫ້າມປວາຣນາໃນວັນບໍ່ແມ່ນວັນປວາຣນາ

ພິກສຸທັງຫລາຍ ບໍ່ຄວນປວາຣນາດ້ວຍກາຣໃຫ້ປາຣິວາສິກປວາຣນາ໑ ເວັ້ນແຕ່ບໍຣິສັດຍັງບໍ່ລຸກຂຶ້ນ
ພິກສຸທັງຫລາຍ ອີກຢ່າງນຶ່ງ ບໍ່ຄວນປວາຣນາໃນວັນບໍ່ແມ່ນວັນປວາຣນາ ເວັ້ນແຕ່ວັນທີ່ສົງຊ໌ສາມັຄຄີ ໔

ພານວາຣທີ ໔ ຈົບ

໑໔໐. ເຫວອາຈິກາທິປວາຣນາ

ວ່າດ້ວຍສົງຊ໌ປວາຣນາ ໔ ຫົນເປັນຕົ້ນ

ເຣື້ອງຊາວປ່າ

[໔๓໔] ສມັຍນັ້ນ ນະ ອາວາສແຫ່ງນຶ່ງ ໃນແຄວ້ນໂກສົລ ໃນວັນປວາຣນານັ້ນ ມີຊາວປ່າມາວົນວາຍ ພິກສຸທັງຫລາຍບໍ່ອາຈປວາຣນາ ๓ ຫົນ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ປວາຣນາ ໔ ຫົນ"

ຊາວປ່າໄດ້ມາວິນວາຍມາກຂຶ້ນ ພິກສຸທັງຫລາຍບໍ່ອາຈປວາຣນາ ໔ ຫົນ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ໝາຍເຫດ :

໑ ເບິ່ງຂໍ້ ໑໗໓ ໜ້າ ໔໗໗ (ໝາຍເຫດ)

໔ ດູນັຍໃນ ວິ. ມ. ໕/໔໑໕/໔໕໒-໔໕໗

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸລາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໑໔ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໐. ເທິວອາຈິກາທີປວາຣນາ

ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ປວາຣນາຫົນດຽວ" ຊາວປ່າໄດ້ມາວິນວາຍມາກຍິ່ງຂຶ້ນ ພິກສຸທັງຫລາຍບໍ່ອາຈປວາຣນາຫົນດຽວ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ປວາຣນາມີພັນສາເທົ່າກັນ"໑

ເຣື້ອງປວາຣນາເມື່ອຣາຕຣີຈວນສວ່າງ

ສມັຍນັ້ນ ນະ ອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ຊາວບ້ານມົວໃຫ້ທານຈົນຣາຕຣີຈວນສວ່າງ ຄັນແລ້ວ ພິກສຸເຫລົ່ານັ້ນໄດ້ປຶກສາກັນດັ່ງນີ້ວ່າ "ຊາວບ້ານມົວໃຫ້ທານ ຈົນຣາຕຣີຈວນສວ່າງ ຖ້າສົງຂ໌ຈັກປວາຣນາ ໓ ຫົນແລ້ວ ສົງຂ໌ຈັກປວາຣນາບໍ່ທັນ ເມື່ອເປັນເຊັ່ນນີ້ ຣາຕຣີກໍຈັກສວ່າງ ພວກເຮົາຈະຄວນປະຕິບັດຢ່າງໃດຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ຊາວບ້ານໃຫ້ທານຈນຣາຕຣີຈວນສວ່າງ ຖ້າພິກສຸທັງຫລາຍໃນອາວາສນັ້ນໄດ້ປຶກສາກັນດັ່ງນີ້ວ່າ " ຊາວບ້ານມົວໃຫ້ທານຈົນຣາຕຣີຈວນສວ່າງ ຖ້າສົງຂ໌ຈັກປວາຣນາ ໓ ຫົນແລ້ວນີ້ ສົງຂ໌ຈັກປວາຣນາບໍ່ທັນ ເມື່ອເປັນເຊັ່ນນີ້ ຣາຕຣີກໍຈັກສວ່າງ" ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິກັມວາຈາວ່າ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຊາວບ້ານໃຫ້ທານຢູ່ຈນຣາຕຣີຈວນສວ່າງ ຖ້າສົງຂ໌ຈັກປວາຣນາ ໓ ຫົນແລ້ວນີ້ ສົງຂ໌ຈັກປວາຣນາບໍ່ທັນ ເມື່ອເປັນເຊັ່ນນີ້ ຣາຕຣີກໍຈັກ

ສູວ່າງ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນປວາຣນາ ໔ ເທື່ອ ປວາຣນາເທື່ອດຽວ ປວາຣນາມີພັນສາເທົ່າກັນ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ພິກສຸທັງຫລາຍກ່າວທັມກັນ ຯລຯ

. . . ພິກສຸຜູ້ຊຳນານພຣະສູດຣກໍສາທຍາຍພຣະສູດຣກັນ. . .

. . . ພຣະວິນັຍທຣກໍວິນິຈສັຍພຣະວິນັຍກັນ. . .

ໝາຍເຫດ :

໑ ຫມາຍເຖິງ ໃຫ້ພິກສຸທີ່ມີພັນສາເທົ່າກັນ ປວາຣນາພ້ອມກັນ (ວິ. ອ. ໓/໔໓໔/໑໕໗)
{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໕ }

. . . ພຣະທັມກຖິກກໍສົນທນາທັມກັນ. . .

. . . ພິກສຸທັງຫລາຍຜິດຖຽງກັນຈນຣາຕຣີຈວນສູວ່າງ ຖ້າພິກສຸທັງຫລາຍໄດ້ປຶກສາກັນ ດັ່ງນີ້ວ່າ ພິກສຸທັງຫລາຍຜິດຖຽງກັນຈນຣາຕຣີຈວນສູວ່າງ ຖ້າສົງຂ໌ຈັກປວາຣນາ ໓ ເທື່ອແລ້ວນີ້ ສົງຂ໌ຈັກປວາຣນາບໍ່ທັນ ເມື່ອເປັນເຊັ່ນນີ້ ຣາຕຣີກໍຈັກສູວ່າງ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບວ່າ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸທັງຫລາຍຜິດຖຽງກັນຈນຣາຕຣີຈວນສູວ່າງ ຖ້າສົງຂ໌ຈັກປວາຣນາ ໓ ເທື່ອແລ້ວນີ້ ສົງຂ໌ຈັກປວາຣນາບໍ່ທັນ ເມື່ອເປັນເຊັ່ນນີ້ ຣາຕຣີກໍຈັກສູວ່າງ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນປວາຣນາ ໔ ເທື່ອ ປວາຣນາເທື່ອດຽວ ປວາຣນາມີພັນສາເທົ່າກັນ”

ເຣື່ອງປວາຣນາຂນະທີ່ຝົນຕັ້ງເຄົ້າ

ສມັຍນັ້ນ ນະ ອາວາສແຫ່ງນຶ່ງໃນແຄວ້ນໂກສົລ ໃນວັນປວາຣນານັ້ນ ພິກສຸສົງຂ໌ມາປະຊຸມກັນມາກ ທີ່ປະຊຸມຈຶ່ງຄັບແຄບ ຄຸ້ມຝົນບໍ່ໄດ້ ແລະຝົນກໍຕັ້ງເຄົ້າໃຫຍ່ ພິກສຸເຫລົ່ານັ້ນໄດ້ປຶກສາກັນດັ່ງນີ້ວ່າ “ພິກສຸສົງຂ໌ມາປະຊຸມກັນມາກ ທີ່ປະຊຸມຈຶ່ງຄັບແຄບ ຄຸ້ມຝົນບໍ່ໄດ້ແລະຝົນກໍຕັ້ງເຄົ້າໃຫຍ່ ຖ້າສົງຂ໌ຈັກປວາຣນາ ໓ ເທື່ອແລ້ວນີ້ ສົງຂ໌ຈັກປວາຣນາບໍ່ທັນ ເມື່ອເປັນເຊັ່ນນີ້ ຝົນກໍຈັກຕກເສັຽກ່ອນ ພວກເຮົາຈະຄວນປະຕິບັດຢ່າງໃດຫນໍ” ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະ

ພາກຮັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ ພິກສຸສົງຂ໌ມາປະຊຸມກັນມາກ ທີ່ປະຊຸມຈຶ່ງຄັບແຄບ ຄຸ້ມຝົນບໍ່ໄດ້ ແລະຝົນກໍຕັ້ງເຄົ້າໃຫຍ່ ຖ້າພິກສຸທັງຫລາຍໄດ້ປຶກສາກັນດັ່ງນີ້ວ່າ ພິກສຸສົງຂ໌ມາປະຊຸມກັນມາກ ທີ່ປະຊຸມຈຶ່ງຄັບແຄບ ຄຸ້ມຝົນບໍ່ໄດ້ ແລະຝົນກໍຕັ້ງເຄົ້າໃຫຍ່ ຖ້າສົງຂ໌ຈັກປວາຣນາ ໓ ຫົນແລ້ວນີ້ ສົງຂ໌ຈັກປວາຣນາບໍ່ທັນ ເມື່ອເປັນເຊັ່ນນີ້ ຝົນກໍຈັກຕກເສັຽກ່ອນພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບວ່າ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸສົງຂ໌ມາປະຊຸມກັນມາກ ທີ່ປະຊຸມກໍຄັບແຄບ ຄຸ້ມຝົນບໍ່ໄດ້ທັງຝົນກໍຕັ້ງເຄົ້າໃຫຍ່ ຖ້າສົງຂ໌ຈັກປວາຣນາ ໓ ຫົນແລ້ວນີ້ ສົງຂ໌ຈັກປວາຣນາບໍ່ທັນ ເມື່ອເປັນເຊັ່ນນີ້ຝົນກໍຈັກຕກເສັຽກ່ອນ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນປວາຣນາ ໒ ຫົນ ປວາຣນາຫົນດຽວ ປວາຣນາມີພັນສາເທົ່າກັນ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໖ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໑. ປວາຣນາຖປນະ

ເຣື້ອງປວາຣນາເມື່ອມີອັນຕຣາຍ ໑໐ ຢ່າງ ຢ່າງໃດຢ່າງນຶ່ງ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນອາວາສແຫ່ງນຶ່ງ ໃນວັນປວາຣນານັ້ນ

໑. ພຣະຣາຊາສເດັຈມາ ໒. ໂຈຣມາປຸ້ນ

໓. ໄຟໄຫມ້ ໔. ນ້ຳຫລາກມາ

໕. ຄົນມາມາກ ໖. ຜີເຂົ້າສົງພິກສຸ

໗. ສັຕວ໌ຮ້າຍເຂົ້າມາ ໘. ງູຮ້າຍເລືອເຂົ້າມາ

໙. ພິກສຸຈະເຖິງແກ່ຊີວິຕ ໑໐. ມີອັນຕຣາຍຕໍ່ພຣົມຈັນຍ໌

ໃນອັນຕຣາຍນັ້ນ ຖ້າພິກສຸທັງຫລາຍໄດ້ປຶກສາກັນດັ່ງນີ້ວ່າ ເຫຕຸນີ້ແຫລະ ຄືອັນຕຣາຍຕໍ່ພຣົມຈັນຍ໌ ຖ້າສົງຂ໌ຈັກປວາຣນາ ໓ ຫົນແລ້ວນີ້ ສົງຂ໌ຈັກປວາຣນາບໍ່ທັນ ເມື່ອເປັນເຊັ່ນນີ້ ອັນຕຣາຍຕໍ່ພຣົມຈັນຍ໌ກໍຈັກເກີດເສັຽກ່ອນ ພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບວ່າ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ເຫຕຸນີ້ແຫລະ ຄືອັນຕຣາຍຕໍ່ພຣົມຈັນຍ໌ ຖ້າສົງຂ໌ຈັກປວາຣນາ ໓ ຫົນແລ້ວນີ້ ສົງຂ໌ຈັກ

ປວາຣະນາບໍ່ທັນ ເມື່ອເປັນເຊັ່ນນີ້ ອັນຕຣາຍຕໍ່ພຣົມຈັນຍ໌ກໍຈັກເກີດເສັຽກ່ອນ ຖ້າສົງຄ໌ພ້ອມກັນແລ້ວ ສົງຄ໌ຄວນປວາຣະນາ ໒ ຫົນ ປວາຣະນາຫົນດຽວ ປວາຣະນາມີພັນສາເທົ່າກັນ

໑໔໑. ປວາຣະນາຖຸປນະ

ວ່າດ້ວຍການງົດປວາຣະນາ

ເຣື້ອງພຣະສັພພັຄຄີຍ໌ມີອາບັຕິຕິດຕົວປວາຣະນາ

[໔໓໕] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ມີອາບັຕິຕິດຕົວປວາຣະນາ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປ ຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ພິກສຸມີອາບັຕິ ຕິດຕົວ ບໍ່ຄວນປວາຣະນາ ຮູບໃດປວາຣະນາ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ພິກສຸໃດມີອາບັຕິ ຕິດຕົວປວາຣະນາ ເຮົາອນຸຍາຕໃຫ້ຂໍໂອກາສແລ້ວໂຈທພິກສຸນັ້ນດ້ວຍອາບັຕິ"

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໗ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣະນາຂັນທກະ] ໑໔໑. ປວາຣະນາຖຸປນະ

ເຣື້ອງບໍ່ຍອມໃຫ້ໂອກາສ

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ຖືກສົງຄ໌ຂໍໂອກາສກໍບໍ່ປຣາຖນາຈະໃຫ້ໂອກາສ ພິກສຸທັງຫລາຍຈຶ່ງນຳ ເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາ ອນຸຍາຕໃຫ້ງົດປວາຣະນາແກ່ພິກສຸຜູ້ບໍ່ຍອມໃຫ້ໂອກາສ"

ວິທີງົດປວາຣະນາ

ພິກສຸທັງຫລາຍ ກໍແລສົງຄ໌ຄວນງົດປວາຣະນາຢ່າງນີ້

ໃນວັນປວາຣະນາ ໑໔ ຄ່ຳ ຫລື ໑໕ ຄ່ຳນັ້ນ ເມື່ອພິກສຸນັ້ນຢູ່ພ້ອມຫນ້າ ພິກສຸຜູ້ສລາດສາມາດຄວນປະ ກາດໃນທ່າມກາງສົງຄ໌ວ່າ ທ່ານຜູ້ຈະເຣີນ ພິກສຸຊື່ນີ້ມີອາບັຕິຕິດຕົວ ຂ້າພະເຈົ້າຂໍງົດປວາຣະນາຂອງ ພິກສຸນັ້ນເສັຽ ເມື່ອພິກສຸນັ້ນຍັງຢູ່ພ້ອມຫນ້າ ສົງຄ໌ບໍ່ຄວນປວາຣະນາ ເທົ່ານີ້ ເປັນອັນໄດ້ງົດປວາຣະນາ ແລ້ວ

ເຣື້ອງພຣະສັພພັຄຄີຍ໌ງົດປວາຣນາຂອງພິກສຸບໍຣິສຸດທ໌

ສະມັຍນັ້ນ ພວກພິກສຸສັພພັຄຄີຍ໌ປຶກສາກັນວ່າ "ພິກສຸທັງຫລາຍຜູ້ມີສີລດີງາມຈະງົດປວາຣນາແກ່ພວກເຮົາກ່ອນ" ຈຶ່ງຊີງງົດປວາຣນາແກ່ພິກສຸທັງຫລາຍຜູ້ບໍຣິສຸດທ໌ບໍ່ມີອາບັຕິເພາະເຣື້ອງອັນບໍ່ຄວຣ ເພາະເຫຕຸອັນບໍ່ຄວຣເສັຽກ່ອນ ທັງງົດປວາຣນາແກ່ພິກສຸທັງຫລາຍທີ່ປວາຣນາເສັດແລ້ວດ້ວຍ

ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຣັບສັ່ງວ່າ "ພິກສຸທັງຫລາຍ ບໍ່ຄວນງົດປວາຣນາແກ່ພິກສຸທັງຫລາຍ ຜູ້ບໍຣິສຸດທ໌ບໍ່ມີອາບັຕິເພາະເຣື້ອງອັນບໍ່ຄວຣ ເພາະເຫຕຸອັນບໍ່ຄວຣ ຮູບໃດງົດ ຕ້ອງອາບັຕິທຸກກະຕະ ພິກສຸທັງຫລາຍ ບໍ່ຄວນງົດປວາຣນາແກ່ພິກສຸທັງຫລາຍທີ່ປວາຣນາເສັດແລ້ວຮູບໃດງົດ ຕ້ອງອາບັຕິທຸກກະຕະ"

ເຣື້ອງລັກສະນະປວາຣນາທີ່ບໍ່ເປັນອັນງົດ

[໔໓໖] ພິກສຸທັງຫລາຍ ປວາຣນາເປັນອັນງດຢ່າງນີ້ ບໍ່ເປັນອັນງດຢ່າງນີ້ ພິກສຸທັງຫລາຍ ປວາຣນາບໍ່ເປັນອັນງດຢ່າງໃດ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ໜ້າ : ໓໗໗ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທະກະ] ໑໔໑. ປວາຣນາຖຸປນະ

ພິກສຸທັງຫລາຍ ໃນກາຣປວາຣນາ ໓ ຫົນ ຖ້າພິກສຸກ່າວເປັ່ງຄຳປວາຣນາອອກມາຈົນຈົບເສັດສິ້ນແລ້ວຈຶ່ງງົດປວາຣນາ ປວາຣນາບໍ່ເປັນອັນງົດ

ພິກສຸທັງຫລາຍ ໃນກາຣປວາຣນາ ໒ ຫົນ ຖ້າພິກສຸກ່າວເປັ່ງຄຳປວາຣນາອອກມາຈົນຈົບເສັດສິ້ນແລ້ວຈຶ່ງງົດປວາຣນາ ປວາຣນາບໍ່ເປັນອັນງົດ

ພິກສຸທັງຫລາຍ ໃນກາຣປວາຣນາຫົນດຽວ ຖ້າພິກສຸກ່າວເປັ່ງຄຳປວາຣນາອອກມາ ແຕ່ຍັງບໍ່ຈົບເສັດສິ້ນແລ້ວ ຈຶ່ງງົດປວາຣນາ ປວາຣນາບໍ່ເປັນອັນງົດ

ພິກສຸທັງຫລາຍ ໃນກາຣປວາຣນາມີພັນສາເທົ່າກັນ ຖ້າພິກສຸກ່າວເປັ່ງຄຳປວາຣນາອອກມາ ຈົນຈົບເສັດສິ້ນແລ້ວ ຈຶ່ງງົດປວາຣນາ ປວາຣນາບໍ່ເປັນອັນງົດ

ພິກສຸທັງຫລາຍ ປວາຣນາບໍ່ເປັນອັນົງດຢ່າງນີ້ແລ

ພິກສຸທັງຫລາຍ ປວາຣນາເປັນອັນງົດຢ່າງໃດ

ພິກສຸທັງຫລາຍ ໃນການປວາຣນາ ໓ ຫົນ ຖ້າພິກສຸກ່າວເປັ່ງຄຳປວາຣນາອອກມາ ແຕ່ຍັງບໍ່ຈົບເສັດ ສິ້ນ ງົດປວາຣນາ ປວາຣນາເປັນອັນງົດ

ພິກສຸທັງຫລາຍ ໃນການປວາຣນາ ໔ ຫົນ ຖ້າພິກສຸກ່າວເປັ່ງຄຳປວາຣນາອອກມາ ແຕ່ຍັງບໍ່ຈົບເສັດ ສິ້ນ ງົດປວາຣນາ ປວາຣນາເປັນອັນງົດ

ພິກສຸທັງຫລາຍ ໃນການປວາຣນາຫົນດຽວ ຖ້າພິກສຸກ່າວເປັ່ງຄຳປວາຣນາອອກມາ ແຕ່ຍັງບໍ່ຈົບເສັດ ສິ້ນ ງົດປວາຣນາ ປວາຣນາເປັນອັນງົດ

ພິກສຸທັງຫລາຍ ໃນການປວາຣນາມີພັນສາເທົ່າກັນ ຖ້າພິກສຸກ່າວເປັ່ງຄຳປວາຣນາອອກມາ ແຕ່ ຍັງບໍ່ຈົບເສັດສິ້ນ ງົດປວາຣນາ ປວາຣນາເປັນອັນງົດ

ພິກສຸທັງຫລາຍ ປວາຣນາເປັນອັນງົດຢ່າງນີ້ແລ

ເຣື້ອງງົດປວາຣນາຂອງພິກສຸ

[໒໓໗] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸງົດປວາຣນາຂອງພິກສຸເສັຽ ຖ້າ ພິກສຸເຫລົ່າອື່ນຮູ້ຈັກພິກສຸນັ້ນວ່າ "ທ່ານຮູບນີ້ມີຄວາມປະພຶດທາງກາຍ ບໍ່ບໍຣິສຸດຫຼ໌ ມີຄວາມປະພຶດທາງ ວາຈາບໍ່ບໍຣິສຸດຫຼ໌ ມີອາຊີວະບໍ່ບໍຣິສຸດຫຼ໌ ເປັນຜູ້ໂງ່ ບໍ່ສລາດ ເມື່ອຖືກຊັກຖາມ ບໍ່ອາຈຕອບຂໍ້ຊັກຖາມ" ສົງຂ໌ຄວນກ່າວຫ້າມວ່າ "ພໍເຖີດພິກສຸ ຢ່າຫຸ່ມຖຽງກັນ ຢ່າຜິດຖຽງກັນ ຢ່າແກ່ງແຍ່ງກັນ ຢ່າວິວາທກັນ ເລີຍ" ແລ້ວຈຶ່ງປວາຣນາ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໘ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໑. ປວາຣນາຖຸປນະ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸງົດປວາຣນາຂອງພິກສຸເສັຽ ຖ້າ ພິກສຸເຫລົ່າອື່ນຮູ້ຈັກພິກສຸນັ້ນວ່າ "ທ່ານຮູບນີ້ມີຄວາມປະພຶດທາງກາຍບໍຣິສຸດຫຼ໌ ມີຄວາມປະພຶດທາງ ວາຈາບໍ່ບໍຣິສຸດຫຼ໌ ມີອາຊີວະບໍ່ບໍຣິສຸດຫຼ໌ ເປັນຜູ້ເຂລາ ບໍ່ສລາດ ເມື່ອຖືກຊັກຖາມ ບໍ່ອາຈຕອບຂໍ້ ຊັກຖາມ" ສົງຂ໌ຄວນກ່າວຫ້າມວ່າ "ພອທີພິກສຸ ຢ່າຫຸ່ມຖຽງກັນ ຢ່າຜິດຖຽງກັນ ຢ່າແກ່ງແຍ່ງກັນ ຢ່າ ວິວາທກັນເລີຍ" ແລ້ວຈຶ່ງປວາຣນາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸງົດປວາຣນາຂອງພິກສຸເສັງ ຖ້າພິກສຸເຫລົ່າອື່ນຮູ້ຈັກພິກສຸນັ້ນວ່າ "ທ່ານຮູບນີ້ມີຄວາມປະພຶດທາງກາຍບໍຣິສຸດຫຼ ມີຄວາມປະພຶດທາງວາຈາບໍຣິສຸດຫຼ ແຕ່ມີອາຊີວະບໍ່ບໍຣິສຸດຫຼ ເປັນຜູ້ເຂລາ ບໍ່ສລາດ ເມື່ອຖືກຊັກຖາມ ບໍ່ອາຈຕອບຂໍ້ຊັກຖາມ" ສົງຂ໌ຄວນກ່າວຫ້າມວ່າ "ພອທີພິກສຸ ຢ່າທຸ່ມຖຽງກັນ ຢ່າຜິດຖຽງກັນ ຢ່າແກ່ງແຍ່ງກັນ ຢ່າວິວາທກັນເລີຍ" ແລ້ວຈຶ່ງປວາຣນາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸງົດປວາຣນາຂອງພິກສຸເສັງ ຖ້າພິກສຸເຫລົ່າອື່ນຮູ້ຈັກພິກສຸນັ້ນວ່າ "ທ່ານຮູບນີ້ມີຄວາມປະພຶດທາງກາຍບໍຣິສຸດຫຼ ມີຄວາມປະພຶດທາງວາຈາບໍຣິສຸດຫຼ ມີອາຊີວະບໍຣິສຸດຫຼ ແຕ່ເປັນຜູ້ເຂລາ ບໍ່ສລາດ ເມື່ອຖືກຊັກຖາມ ບໍ່ອາຈຕອບຂໍ້ຊັກຖາມ" ສົງຂ໌ຄວນກ່າວຫ້າມວ່າ "ພອທີພິກສຸ ຢ່າທຸ່ມຖຽງກັນ ຢ່າຜິດຖຽງກັນ ຢ່າແກ່ງແຍ່ງກັນ ຢ່າວິວາທກັນເລີຍ" ແລ້ວຈຶ່ງປວາຣນາ

ເຣື້ອງເຫຕຸຜົລໃນການງົດປວາຣນາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸງົດປວາຣນາຂອງພິກສຸເສັງ ຖ້າພິກສຸເຫລົ່າອື່ນຮູ້ຈັກພິກສຸນັ້ນວ່າ "ທ່ານຮູບນີ້ມີຄວາມປະພຶດທາງກາຍບໍຣິສຸດຫຼ ມີຄວາມປະພຶດທາງວາຈາບໍຣິສຸດຫຼ ມີອາຊີວະບໍຣິສຸດຫຼ ເປັນບັນທິຕ ເປັນຜູ້ສລາດ ເມື່ອຖືກຊັກຖາມ ສາມາດຕອບຂໍ້ຊັກຖາມໄດ້" ສົງຂ໌ຄວນຖາມພິກສຸນັ້ນວ່າ "ທ່ານ ທ່ານງົດປວາຣນາຂອງພິກສຸນີ້ເປັນຫຍັງ ງົດເພາະເຣື້ອງຫຍັງ ງົດເພາະສີລວິບັຕິ ຫລືງົດເພາະອາຈາຣວິບັຕິ ຫລືງົດເພາະທິຕຖິວິບັຕິ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ຂະນ້ອຍງົດເພາະສີລວິບັຕິແດ່ ງົດເພາະອາຈາຣວິບັຕິແດ່ ງົດເພາະທິຕຖິວິບັຕິແດ່"

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໐ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໑. ປວາຣນາຖປນະ

ສົງຂ໌ຄວນຖາມພິກສຸນັ້ນຢ່າງນີ້ວ່າ "ຄຸນຮູ້ສີລວິບັຕິຫລື ຮູ້ອາຈາຣວິບັຕິຫລື ຮູ້ທິຕຖິວິບັຕິຫລື" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ຂະນ້ອຍຮູ້ສີລວິບັຕິ ຮູ້ອາຈາຣວິບັຕິ ຮູ້ທິຕຖິວິບັຕິ" ສົງຂ໌ຄວນຖາມພິກສຸນັ້ນຢ່າງນີ້ວ່າ "ທ່ານ ກໍສີລວິບັຕິເປັນຢ່າງໃດ ອາຈາຣວິບັຕິເປັນຢ່າງໃດ ທິຕຖິວິບັຕິເປັນຢ່າງໃດ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ປາຣາຊິກ ໔ ສັງຄາທິເສສ ໑໓ ນີ້ຊື່ວ່າສີລວິບັຕິຖຸລ

ລັຈຈັຍ ປາຈິຕຕີຍ໌ ປາຕິເທສນີຍະ ທຸກກະຕະ ທຸພພາສິຕ ນີ້ຊື່ວ່າອາຈາຣວິບັຕິ ມິຈສາທິຕຖິ ອັນຕ ຄາຫິກທິຕຖິ ນີ້ຊື່ວ່າທິຕຖິວິບັຕິ" ສົງຄ໌ຄວນຖາມພິກສຸນັ້ນຢ່າງນີ້ວ່າ "ທ່ານ ທ່ານງົດປວາຣນາຂອງພິກສຸນີ້ເປັນຫຍັງ ງົດດ້ວຍໄດ້ເຫັນຫລື ງົດດ້ວຍໄດ້ຍິນຫລື ງົດດ້ວຍນຶກສົງສັຍຫລື"
ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ງົດດ້ວຍໄດ້ເຫັນແດ່ ງົດດ້ວຍໄດ້ຍິນແດ່ ງົດດ້ວຍນຶກສົງສັຍແດ່"
ສົງຄ໌ຄວນຖາມພິກສຸນັ້ນຢ່າງນີ້ວ່າ "ທ່ານ ທ່ານງົດປວາຣນາຂອງພິກສຸນີ້ດ້ວຍໄດ້ເຫັນຢ່າງໃດ ທ່ານເຫັນຫຍັງ ທ່ານເຫັນວ່າຢ່າງໃດ ທ່ານເຫັນເມື່ອໃດ ທ່ານເຫັນທີ່ໃດ
ພິກສຸນີ້ຕ້ອງອາບັຕິປາຣາຊິກ ທ່ານເຫັນຫລື ພິກສຸນີ້ຕ້ອງອາບັຕິສັງຂາທິເສສ ທ່ານເຫັນຫລື
ພິກສຸນີ້ ຕ້ອງອາບັຕິຖຸລລັຈຈັຍ. . . ອາບັຕິປາຈິຕຕີຍ໌. . . ອາບັຕິປາຕິເທສນີຍະ. . . ອາບັຕິທຸກກະຕະ. . .
ອາບັຕິທຸພພາສິຕ ທ່ານເຫັນຫລື ທ່ານຢູ່ທີ່ໃດ ພິກສຸນີ້ຢູ່ທີ່ໃດ ທ່ານເຮັດຫຍັງ ພິກສຸນີ້ເຮັດຫຍັງ"
ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ຂະນ້ອຍບໍ່ໄດ້ງົດປວາຣນາຂອງພິກສຸນີ້ ດ້ວຍໄດ້ເຫັນດອກ ແຕ່ຂະນ້ອຍງົດປວາຣນາດ້ວຍໄດ້ຍິນຕ່າງຫາກ" ສົງຄ໌ຄວນຖາມພິກສຸນັ້ນຢ່າງນີ້ວ່າ "ທ່ານ ທ່ານງົດປວາຣນາຂອງພິກສຸນີ້ດ້ວຍໄດ້ຍິນຢ່າງໃດ ທ່ານໄດ້ຍິນຫຍັງ ທ່ານໄດ້ຍິນວ່າຢ່າງໃດ ທ່ານໄດ້ຍິນເມື່ອໃດ ທ່ານໄດ້ຍິນທີ່ໃດ ທ່ານໄດ້ຍິນວ່າ ພິກສຸນີ້ຕ້ອງອາບັຕິປາຣາຊິກຫລື ໄດ້ຍິນວ່າ ພິກສຸນີ້ຕ້ອງອາບັຕິສັງຂາທິເສສຫລືໄດ້ຍິນວ່າ ພິກສຸນີ້ຕ້ອງອາບັຕິຖຸລລັຈຈັຍ. . . ອາບັຕິປາຈິຕຕີຍ໌. . . ອາບັຕິປາຕິເທສນີຍະ. . . ອາບັຕິທຸກກະຕະ. . . ອາບັຕິທຸພພາສິຕຫລື ໄດ້ຍິນຈາກພິກສຸຫລື ໄດ້ຍິນຈາກພິກສຸນີຫລື

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໑ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທະກະ] ໑໔໑. ປວາຣນາຖຸປນະ

ໄດ້ຍິນຈາກສິກຂມານາຫລື ໄດ້ຍິນຈາກສາມເນຣຫລື ໄດ້ຍິນຈາກສາມເນຣີຫລື ໄດ້ຍິນຈາກອຸບາສົກຫລື ໄດ້ຍິນຈາກອຸບາສິກາຫລື ໄດ້ຍິນຈາກພຣະຣາຊາທັງຫລາຍຫລື ໄດ້ຍິນຈາກຣາຊມຫາອມາຕຍ໌ທັງຫລາຍຫລື ໄດ້ຍິນຈາກພວກເດັຽຣະຖີຍ໌ຫລື ໄດ້ຍິນຈາກພວກສາວົກເດັຽຣະຖີຍ໌ຫລື"
ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ຂະນ້ອຍບໍ່ໄດ້ງົດປວາຣນາຂອງພິກສຸນີ້ ດ້ວຍໄດ້ຍິນດອກ

ແຕ່ຂະນ້ອຍຈົດປວາຣນາດ້ວຍນິກສົງສັຍຕ່າງຫາກ" ສົງຂ໌ຄວນຖາມພິກສຸນັ້ນຢ່າງນີ້ວ່າ "ທ່ານ ທ່ານຈົດປວາຣນາຂອງພິກສຸນີ້ດ້ວຍນິກສົງສັຍຢ່າງໃດ ທ່ານນຶກສົງສັຍຫຍັງ ທ່ານນຶກສົງສັຍວ່າຢ່າງໃດ ທ່ານນຶກສົງສັຍເມື່ອໃດ ທ່ານນຶກສົງສັຍທີ່ໃດ ທ່ານນຶກສົງສັຍວ່າ ພິກສຸນີ້ຕ້ອງອາບັຕິປາຣາຊິກຫລື ນຶກສົງສັຍວ່າ ພິກສຸນີ້ຕ້ອງອາບັຕິສັງຂາທິເສສຫລື ນຶກສົງສັຍວ່າ ພິກສຸນີ້ຕ້ອງອາບັຕິຖຸລລັຈຈັຍ. . . ອາບັຕິປາຈິຕຕີຍ໌. . . ອາບັຕິປາຕິເທສນີຍະ. . . ອາບັຕິທຸກກະຕະ. . . ອາບັຕິທຸພພາສິຕຫລື ທ່ານໄດ້ຍິນຈາກພິກສຸແລ້ວນຶກສົງສັຍຫລື ໄດ້ຍິນຈາກພິກສຸນີແລ້ວນຶກສົງສັຍຫລື ໄດ້ຍິນຈາກສິກຂມານາແລ້ວນຶກສົງສັຍຫລື ໄດ້ຍິນຈາກສາມເນຣແລ້ວນຶກສົງສັຍຫລື ໄດ້ຍິນຈາກສາມເນຣີແລ້ວນຶກສົງສັຍຫລື ໄດ້ຍິນຈາກອຸບາສົກແລ້ວນຶກສົງສັຍຫລື ໄດ້ຍິນຈາກອຸບາສິກາແລ້ວນຶກສົງສັຍຫລື ໄດ້ຍິນຈາກພຣະຣາຊາທັງຫລາຍແລ້ວນຶກສົງສັຍຫລື ໄດ້ຍິນຈາກຣາຊມຫາອຳມາຕຍ໌ທັງຫລາຍແລ້ວນຶກສົງສັຍຫລື ໄດ້ຍິນຈາກພວກເດັຽຣະຖີຍ໌ແລ້ວນຶກສົງສັຍຫລື ໄດ້ຍິນຈາກພວກສາວົກເດັຽຣະຖີຍ໌ແລ້ວນຶກສົງສັຍຫລື" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ຂະນ້ອຍບໍ່ໄດ້ຈົດປວາຣນາຂອງພິກສຸນີ້ດ້ວຍນຶກສົງສັຍ ອີກທັງຂະນ້ອຍກໍບໍ່ຮູ້ວ່າ ຂະນ້ອຍຈົດປວາຣນາຂອງພິກສຸນີ້ດ້ວຍເຫຕຸຫຍັງ"

ຟັງຄຳປະຕິຍານຂອງໂຈທກ໌ແລະຈຳເລີຍ

ພິກສຸທັງຫລາຍ ຖ້າພິກສຸຜູ້ເປັນໂຈທກ໌ນັ້ນຕອບຂໍ້ຊັກຖາມບໍ່ເປັນທີ່ພໍໃຈຂອງເພື່ອນພຣົມຈາຣີຜູ້ຮູ້ທັງຫລາຍ ສົງຂ໌ຄວນບອກວ່າ ທ່ານບໍ່ຄວຣຟ້ອງພິກສຸຈຳເລີຍ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໔ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທະກະ] ໑໔໑. ປວາຣນາຖຸປນະ

ພິກສຸທັງຫລາຍ ຖ້າພິກສຸຜູ້ເປັນໂຈທກ໌ນັ້ນຕອບຂໍ້ຊັກຖາມເປັນທີ່ພໍໃຈຂອງເພື່ອນ ພຣົມຈາຣີຜູ້ຮູ້ທັງຫລາຍ ສົງຂ໌ຄວນບອກວ່າ ທ່ານຄວຣຟ້ອງພິກສຸຈຳເລີຍ

ພິກສຸທັງຫລາຍ ຖ້າພິກສຸຜູ້ເປັນໂຈທກ໌ນັ້ນປະຕິຍານວ່າ ພິກສຸນັ້ນຖືກຕນໃສ່ຄວາມ ດ້ວຍອາບັຕິປາຣາຊິກອັນບໍ່ມີມູລ ສົງຂ໌ຄວນປັບອາບັຕິສັງຂາທິເສສແລ້ວຈຶ່ງປວາຣນາ໑

ພິກສຸທັງຫລາຍ ຖ້າພິກສຸຜູ້ເປັນໂຈທກ໌ນັ້ນປະຕິຍານວ່າ ພິກສຸນັ້ນຖືກຕົນໃສ່ຄວາມ ດ້ວຍອາບັຕິສັງຂາທິເສສອັນບໍ່ມີມູລ ສົງຂ໌ຄວນປັບອາບັຕິຕາມທັມແລ້ວຈຶ່ງປວາຣນາ໔

ພິກສຸທັງຫລາຍ ຖ້າພິກສຸຜູ້ເປັນໂຈທກ໌ນັ້ນປະຕິຍານວ່າ ພິກສຸນັ້ນຖືກຕນໃສ່ຄວາມ ດ້ວຍອາບັຕິຖຸລລັຈຈັຍອັນບໍ່ມີມູລ. . . ດ້ວຍອາບັຕິປາຈິຕຕີຍ໌. . . ດ້ວຍອາບັຕິປາຕິເທສນີຍະ. . . ດ້ວຍອາບັຕິທຸກກະຕະ. . . ດ້ວຍອາບັຕິທຸພພາສິຕອັນບໍ່ມີມູລ ສົງຂ໌ຄວນປັບອາບັຕິຕາມທັມ ແລ້ວຈຶ່ງປວາຣນາ

ພິກສຸທັງຫລາຍ ຖ້າພິກສຸຈຳເລີຍນັ້ນປະຕິຍານວ່າ ຂ້າພະເຈົ້າຕ້ອງອາບັຕິປາຣາຊິກ ສົງຂ໌ຄວນນາສນະເສັຽ໓ ແລ້ວຈຶ່ງປວາຣນາ

ພິກສຸທັງຫລາຍ ຖ້າພິກສຸຈຳເລີຍນັ້ນປະຕິຍານວ່າ ຂ້າພະເຈົ້າຕ້ອງອາບັຕິສັງຄາທິເສສ ສົງຂ໌ຄວນປັບອາບັຕິສັງຄາທິເສສ ແລ້ວຈຶ່ງປວາຣນາ

ພິກສຸທັງຫລາຍ ຖ້າພິກສຸຈຳເລີຍນັ້ນປະຕິຍານວ່າ ຂ້າພະເຈົ້າຕ້ອງອາບັຕິຖຸລລັຈຈັຍ. . . ອາບັຕິປາຈິຕຕີຍ໌. . . ອາບັຕິປາຕິເທສນີຍະ. . . ອາບັຕິທຸກກະຕະ. . . ອາບັຕິທຸພພາສິຕ ສົງຂ໌ຄວນປັບອາບັຕິຕາມທັມ ແລ້ວຈຶ່ງປວາຣນາ

ໝາຍເຫດ :

໑ ຫມາຍເຖິງ ພິກສຸຜູ້ເປັນໂຈທກ໌ນັ້ນຍອມຮັບວ່າ ຕນໃສ່ຄວາມພິກສຸອື່ນດ້ວຍອາບັຕປາຣາຊິກບໍ່ມີມູລ ໃນກໍຣະນີເຊັ່ນນີ້ສົງຂ໌ ປັບພິກສຸຜູ້ເປັນໂຈທກ໌ດ້ວຍສັງຄາທິເສສ (ວິ. ອ. ໓/໔໓໗/໑໕໙)

໔ ຫມາຍເຖິງ ຄວນປັບອາບັຕິປາຈິຕຕີຍ໌ ເພາະໃສ່ຄວາມ (ໂຈທ) ພິກສຸອື່ນດ້ວຍອາບັຕິສັງຄາທິເສສທີ່ບໍ່ມີມູລ ຄວນປັບອາບັຕິທຸກກະຕະ ເພາະໃສ່ຄວາມພິກສຸອື່ນດ້ວຍອາບັຕິຖຸລລັຈຈັຍ ປາຈິຕຕີຍ໌ ປາຕິເທສນີຍະ ທຸກກະຕະ ຫລືທຸພພາສິຕ ທີ່ບໍ່ມີມູລ (ວິ. ອ. ໓/໔໓໗/໑໕໙)

໓ ນາສນະ ໃນທີ່ນີ້ຫມາຍເຖິງ ໃຫ້ສຶກຈາກຄວາມເປັນພິກສຸ (ວິ. ອ. ໓/໔໓໗/໑໕໙)

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸລາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໓ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໔. ຖຸລລັຈຈຍວັຕຖຸກາທີ

໑໔໔. ຖຸລລັຈຈຍວັຕຖຸກາທີ

ວ່າດ້ວຍການຕ້ອງອາບັຕິຖຸລລັຈຈັຍເປັນຕົ້ນ

ເຣື້ອງຕ້ອງອາບັຕິຖຸລລັຈຈັຍເປັນຕົ້ນ

[໔໓໗] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸຕ້ອງອາບັຕິຖຸລລັຈຈັຍ ພິກສຸບາງພວກມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ ບາງພວກມີຄວາມເຫັນວ່າຕ້ອງອາບັຕິສັງຄາ ທິເສສ ພິກສຸທັງຫລາຍ ພວກພິກສຸທີ່ມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ ຄວນນຳພິກສຸນັ້ນໄປ ນະທີ່ອັນຄວຣ ປັບອາບັຕິຕາມທັມ ແລ້ວເຂົ້າໄປຫາສົງຄ໌ກ່າວຢ່າງນີ້ວ່າ ທ່ານທັງຫລາຍ ອາບັຕິທີ່ພິກສຸນັ້ນຕ້ອງ ພິກສຸນັ້ນໄດ້ທຳຄືນຕາມທັມແລ້ວ ຖ້າສົງຄ໌ພ້ອມກັນແລ້ວ ສົງຄ໌ຄວນປວາຣນາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸຕ້ອງອາບັຕິຖຸລລັຈຈັຍ ພິກສຸບາງພວກມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ ບາງພວກມີຄວາມເຫັນວ່າ ຕ້ອງອາບັຕິປາຈິຕຕີຍ໌. . . ບາງພວກມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ ບາງພວກມີຄວາມເຫັນວ່າຕ້ອງອາບັຕິປາຕິເທສນີຍະ. . . ບາງພວກມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ ບາງພວກມີຄວາມເຫັນວ່າ ຕ້ອງອາບັຕິທຸກກະຕະ. . . ບາງພວກມີຄວາມເຫັນວ່າ ຕ້ອງອາບັຕິຖຸລລັຈຈັຍ ບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພພາສິຕ

ພິກສຸທັງຫລາຍ ພວກພິກສຸທີ່ມີຄວາມເຫັນວ່າ ຕ້ອງອາບັຕິຖຸລລັຈຈັຍ ຄວນນຳພິກສຸນັ້ນໄປ ນະທີ່ອັນຄວຣ ປັບອາບັຕິຕາມທັມ ແລ້ວເຂົ້າໄປຫາສົງຄ໌ກ່າວຢ່າງນີ້ວ່າ ທ່ານທັງຫລາຍ ອາບັຕິທີ່ພິກສຸນັ້ນຕ້ອງ ພິກສຸນັ້ນໄດ້ທຳຄືນຕາມທັມແລ້ວ ຖ້າສົງຄ໌ພ້ອມກັນແລ້ວ ສົງຄ໌ຄວນປວາຣນາ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນປວາຣນານັ້ນ ພິກສຸຕ້ອງອາບັຕິປາຈິຕຕີຍ໌. . . ຕ້ອງອາບັຕິປາຕິເທສນີຍະ. . . ຕ້ອງອາບັຕິທຸກກະຕະ. . . ຕ້ອງອາບັຕິທຸພພາສິຕ ພິກສຸບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພພາສິຕ ບາງພວກມີຄວາມເຫັນວ່າຕ້ອງອາບັຕິສັງຄາທິເສສ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໔ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໓. ວັຕຖຸຖປນາທິ

ພິກສຸທັງຫລາຍ ພວກພິກສຸທີ່ມີຄວາມເຫັນວ່າຕ້ອງອາບັຕິທຸພພາສິຕ ຄວນນຳພິກສຸນັ້ນໄປນະທີ່ອັນຄວຣ ປັບອາບັຕິຕາມທັມ ແລ້ວເຂົ້າໄປຫາສົງຄ໌ກ່າວຢ່າງນີ້ວ່າ ທ່ານທັງຫລາຍ ອາບັຕິທີ່ພິກສຸນັ້ນຕ້ອງ ພິກສຸນັ້ນໄດ້ທຳຄືນຕາມທັມແລ້ວ ຖ້າສົງຄ໌ພ້ອມກັນແລ້ວ ສົງຄ໌ຄວນ

ປວາຣນາ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸຕ້ອງອາບັຕິທຸພພາສິຕ ພິກສຸບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພພາສິຕ ບາງພວກມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ...
ບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພພາສິຕ ບາງພວກມີຄວາມເຫັນວ່າຕ້ອງອາບັຕິປາຈິຕຕີຍ໌.. .
ບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພພາສິຕ ບາງພວກມີຄວາມເຫັນວ່າຕ້ອງອາບັຕິປາຕິເທສນີຍະ. . .
ບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພພາສິຕ ບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸກກະຕະ
ພິກສຸທັງຫລາຍ ພວກພິກສຸທີ່ມີຄວາມເຫັນວ່າຕ້ອງອາບັຕິທຸພພາສິຕ
ຄວນນຳພິກສຸນັ້ນໄປນະທີ່ອັນຄວຣ ປັບອາບັຕິຕາມທັມ ແລ້ວເຂົ້າໄປຫາສົງຂ໌ກ່າວຢ່າງນີ້ວ່າ ທ່ານທັງຫລາຍ ອາບັຕິທີ່ພິກສຸນັ້ນຕ້ອງ ພິກສຸນັ້ນໄດ້ທຳຄືນຕາມທັມແລ້ວ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນປວາຣນາ

໑໔໓. ວັຕຖຸຖປນາທິ

ວ່າດ້ວຍການງດວັຕຖຸເປັນຕົ້ນ

ເຣື້ອງວັຕຖຸແລະບຸຄຄົລປາກົດ

[໔໓໙] ພິກສຸທັງຫລາຍ ກໍໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸຈະຄວນປະກາດ ນະ ທ່າມກາງສົງຂ໌ວ່າ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ວັຕຖຸນີ້ປາກົດ ບຸຄຄົລບໍ່ປາກົດ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນງດວັຕຖຸ ແລ້ວປວາຣນາເຖີດ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໕ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໔. ພັນທນການວັຕຖຸ

ສົງຂ໌ຄວນກ່າວກັບພິກສຸນັ້ນວ່າ ທ່ານ ພຣະຜູ້ມີພຣະພາກຊົງບັນຍັດປວາຣນາໄວ້ສຳລັບພິກສຸທັງຫລາຍຜູ້ບໍຣິສຸດທິ໌ ຖ້າວັຕຖຸປາກົດ ບຸຄຄົລບໍ່ປາກົດ ທ່ານ ຈົ່ງຣະບຸບຸຄຄົລນັ້ນດຽວນີ້ເຖີດ
ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ໃນວັນປວາຣນານັ້ນ ພິກສຸຈະຄວນປະກາດ ນະ ທ່າມ

ກາງສົງຂ໌ວ່າ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ບຸຄຄົລນີ້ປາກົດ ວັຕຖຸບໍ່ປາກົດ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນງດບຸຄຄົລ ແລ້ວປວາຣນາເຖີດ ສົງຂ໌ຄວນກ່າວກັບພິກສຸນັ້ນວ່າ ທ່ານ ພຣະຜູ້ມີພຣະພາກຊົງບັນຍັດປວາຣນາໄວ້ ສຳລັບພິກສຸທັງຫລາຍຜູ້ພ້ອມພຽງກັນ ຖ້າບຸຄຄົລປາກົດ ວັຕຖຸບໍ່ປາກົດ ທ່ານຈົ່ງຣະບຸວັຕຖຸນັ້ນດຽວນີ້ເຖີດ

ພິກສຸທັງຫລາຍ ອີກຢ່າງນຶ່ງ ໃນກໍຣະນີນີ້ ໃນວັນປວາຣນານັ້ນ ພິກສຸຈະຄວນປະກາດ ນະ ທ່າມກາງສົງຂ໌ວ່າ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ທັງວັຕຖຸແລະບຸຄຄົລນີ້ປາກົດ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນງດທັງວັຕຖຸແລະບຸຄຄົລ ແລ້ວປວາຣນາເຖີດ ສົງຂ໌ຄວນກ່າວກັບພິກສຸນັ້ນວ່າ ທ່ານ ພຣະຜູ້ມີພຣະພາກຊົງບັນຍັດປວາຣນາໄວ້ ສຳລັບພິກສຸທັງຫລາຍຜູ້ບໍຣິສຸດທິ໌ແລະພ້ອມພຽງກັນ ຖ້າວັຕຖຸແລະບຸຄຄົລປາກົດ ທ່ານຈົ່ງຣະບຸວັຕຖຸແລະບຸຄຄົລນັ້ນດຽວນີ້ເຖີດ ພິກສຸທັງຫລາຍ ຖ້າວັຕຖຸປາກົດກ່ອນປວາຣນາ ບຸຄຄົລປາກົດພາຍຫລັງ ຄວຣກ່າວຂຶ້ນ ຖ້າບຸຄຄົລປຣາຕກົກ່ອນປວາຣນາ ວັຕຖຸປາກົດພາຍຫລັງ ກໍຄວຣກ່າວຂຶ້ນ ຖ້າທັງວັຕຖຸແລະບຸຄຄົລປາກົດກ່ອນປວາຣນາ ຖ້າທຳປວາຣນາເສັດແລ້ວ ຮື້ຟື້ນເຣື້ອງຂຶ້ນ ຕ້ອງອາບັຕິປາຈິຕຕີຍ໌ເພາະຮື້ຟື້ນເຣື້ອງນັ້ນ

໑໔໔. ພັນຫູນກາຣກວັຕຖຸ

ວ່າດ້ວຍກາຣກໍ່ຄວາມບາດຫມາງ

[໒໔໐] ສມັຍນັ້ນ ພິກສຸຫລາຍຮູບເຄີຍເຫັນເຄີຍຄົບກັນມາ ເຂົ້າຈຳພັນສາ ນະອາວາສແຫ່ງນຶ່ງໃນແຄວ້ນໂກສົລ ພິກສຸເຫລົ່າອື່ນຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໘ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໔. ພັນຫູນກາຣກວັຕຖຸ

ກໍ່ຄວາມວິວາທ ທຳຄວາມອືກກະທຶກ ກໍ່ອທິກຣນ໌(ບັນຫາຂອງສົງຂ໌)ໃນສົງຂ໌ ກໍເຂົ້າຈຳພັນນາ ນະທີ່ໃກ້ຄຽງກັບພິກສຸເຫລົ່ານັ້ນດ້ວຍປະສົງຄ໌ວ່າ “ໃນວັນປວາຣນາພວກເຮົາຈັກງົດປວາຣນາຂອງພວກພິກສຸທີ່ເຂົ້າຈຳພັນສາເຫລົ່ານັ້ນເສັຽ” ພິກສຸເຫລົ່ານັ້ນໄດ້ຊາບຂ່າວວ່າ “ພິກສຸເຫລົ່າອື່ນຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ ກໍ່ຄວາມວິວາທ ກໍ່ຄວາມອືກກະທຶກ ກໍ່ອທິກຣນ໌(ບັນຫາຂອງສົງຂ໌)

ໃນສົງຄ໌ ກໍເຂົ້າຈຳພັນສາ ນະທີ່ໃກ້ຄຽງກັບພິກສຸເຫລົ່ານັ້ນດ້ວຍປະສົງຄ໌ວ່າ ໃນວັນປວາຣນາພວກເຮົາ ຈັກງົດປວາຣນາ ຂອງພວກພິກສຸທີ່ເຂົ້າຈຳພັນສາເຫລົ່ານັ້ນເສັຽ ດັ່ງນີ້ ພວກເຮົາຈະຄວນປະຕິບັດຢ່າງໃດຫນໍ" ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ ພຣະຜູ້ມີພຣະພາກຮັບສັ່ງວ່າ "ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພິກສຸຫລາຍຮູບເຄີຍເຫັນ ເຄີຍຄົບກັນມາ ເຂົ້າຈຳພັນສາໃນອາວາສແຫ່ງນຶ່ງ ພິກສຸເຫລົ່າອື່ນຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ ກໍ່ຄວາມວິວາທ ກໍ່ຄວາມອຶກກະທຶກ ກໍ່ອທິກຣນ໌(ບັນຫາຂອງສົງຄ໌)ໃນສົງຄ໌ ກໍເຂົ້າຈຳພັນສານະທີ່ໃກ້ຄຽງກັບພິກສຸເຫລົ່ານັ້ນດ້ວຍປະສົງຄ໌ວ່າ ໃນວັນປວາຣນາພວກເຮົາຈັກງົດປວາຣນາຂອງພວກພິກສຸທີ່ເຂົ້າຈຳພັນສາເຫລົ່ານັ້ນເສັຽ ດັ່ງນີ້ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເຫລົ່ານັ້ນທຳ ໔ (ແລະ) ໓ ອຸໂປສົຖ ໃຫ້ເປັນອຸໂປສົຖວັນ ໑໔ ຄ່ຳ ໑ ດ້ວຍປະສົງຄ໌ວ່າ ຈັ່ງໃດພວກເຮົາຄວນປວາຣນາກ່ອນພິກສຸພວກນັ້ນ ພິກສຸທັງຫລາຍ ຖ້າພິກສຸຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ ກໍ່ຄວາມວິວາທ ກໍ່ຄວາມອຶກກະທຶກ ກໍ່ອທິກຣນ໌(ບັນຫາຂອງສົງຄ໌) ໃນສົງຄ໌ພວກນັ້ນພາກັນມາສູ່ອາວາສນັ້ນ ພິກສຸທີ່ຢູ່ໃນອາວາສ ເຫລົ່ານັ້ນຄວນຮີບປະຊຸມປວາຣນາກັນໂດຍໄວ ຄັນແລ້ວຄວນບອກວ່າ ທ່ານທັງຫລາຍ ພວກເຮົາປວາຣນາເສັດແລ້ວ ທ່ານທັງຫລາຍສຳຄັນຢ່າງໃດ ຈົ່ງເຮັດຢ່າງນັ້ນເຖີດ

ພິກສຸທັງຫລາຍ ຖ້າພິກສຸຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ ກໍ່ຄວາມວິວາທ ກໍ່ຄວາມອຶກກະທຶກ ກໍ່ອທິກຣນ໌(ບັນຫາຂອງສົງຄ໌)ໃນສົງຄ໌ ພວກນັ້ນບໍ່ແຈ້ງໃຫ້ຊາບກ່ອນ ມາສູ່ອາວາສນັ້ນ ພິກສຸທີ່ຢູ່ໃນອາວາສເຫລົ່ານັ້ນຄວນປູອາສນະ ຈັດຫານ້ຳລ້າງຕີນ ຕັ່ງຮອງຕີນ ກະເບື້ອງເຊັດຕີນໄວ້

ໝາຍເຫດ :

໑ ໔ ອຸໂປສົຖ ຄື ອຸໂປສົຖທີ ໓ ແລະທີ ໔

໓ ອຸໂປສົຖ ຄື ອຸໂປສົຖທີ ໓, ທີ ໔ ແລະທີ ໕ (ວິ. ອ. ໓/໔໔໐/໑໘໑)

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໗ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໔. ພັນທນກາຣກວັຕຖຸ

ຄວນລຸກຂຶ້ນຮັບບາຕຣແລະຈີວອນ ຕ້ອນຮັບດ້ວຍນ້ຳດື່ມ ທຳພິກສຸພວກນັ້ນໃຫ້ຕາຍໃຈແລ້ວໄປ ປວາຣນານອກສີມາ ຄັນແລ້ວຄວນບອກວ່າ ທ່ານທັງຫລາຍ ພວກເຮົາປວາຣນາເສັດແລ້ວ ທ່ານທັງຫລາຍສຳຄັນຢ່າງໃດ ຈົ່ງເຮັດຢ່າງນັ້ນເຖີດ ຖ້າໄດ້ຢ່າງນັ້ນ ນັ້ນເປັນກາຣດີ ຖ້າບໍ່ໄດ້ ພິກສຸທີ່ຢູ່ໃນອາວາສຜູ້ສລາດສາມາດຄວນປະກາດໃຫ້ພິກສຸທີ່ຢູ່ໃນອາວາສທັງຫລາຍຊາບວ່າ ຂໍພິກສຸທີ່ຢູ່ໃນອາວາສທັງຫລາຍຈົ່ງຟັງຂ້າພະເຈົ້າ ຖ້າທ່ານທັງຫລາຍພ້ອມກັນແລ້ວ ບັດນີ້ພວກເຮົາຄວນທຳອຸໂບສົຖ ຄວນຍົກປາຕິໂມກຂ໌ຂຶ້ນສະແດງ ຄວນປວາຣນາໃນກາຣປັກສ໌ທີ່ຈະມາເຖິງເຖີດ

ພິກສຸທັງຫລາຍ ຖ້າພິກສຸຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ ກໍ່ຄວາມວິວາທ ກໍ່ຄວາມອຶກກະທຶກ ກໍ່ອທິກຣນ໌(ບັນຫາຂອງສົງຂ໌)ໃນສົງຂ໌ນັ້ນຈະຄວນກ່າວກັບພິກສຸເຫລົ່ານັ້ນວ່າ ດີລະ ທ່ານທັງຫລາຍ ຂໍຈົ່ງປວາຣນາຕໍ່ພວກເຮົາໃນບັດນີ້ເຖີດ ພິກສຸເຫລົ່ານັ້ນຄວນຖືກວ່າກ່າວວ່າ ທ່ານທັງຫລາຍ ພວກທ່ານບໍ່ເປັນໃຫຍ່ ໃນປວາຣນາຂອງພວກເຮົາ ພວກເຮົາຈະຍັງປວາຣນາ ພິກສຸທັງຫລາຍ ຖ້າພິກສຸຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ ກໍ່ຄວາມວິວາທ ກໍ່ຄວາມອຶກກະທຶກ ກໍ່ອທິກຣນ໌(ບັນຫາຂອງສົງຂ໌) ໃນສົງຂ໌ພວກນັ້ນຈະຄວນຢູ່ຈົນເຖິງກາຣປັກສ໌ນັ້ນແລ້ວ ພິກສຸທີ່ຢູ່

ໃນອາວາສຜູ້ສລາດສາມາດຄວນປະກາດໃຫ້ພິກສຸທີ່ຢູ່ໃນອາວາສທັງຫລາຍຊາບວ່າ ຂໍພິກສຸທີ່ຢູ່ໃນອາວາສທັງຫລາຍຈົ່ງຟັງຂ້າພະເຈົ້າ ຖ້າທ່ານທັງຫລາຍພ້ອມກັນແລ້ວ ບັດນີ້ພວກເຮົາຄວນທຳອຸໂບສົຖ ຄວນຍົກປາຕິໂມກຂ໌ຂຶ້ນສະແດງ ຄວນປວາຣນາໃນຊຸນຫປັກສ໌ທີ່ຈະມາເຖິງເຖີດ

ພິກສຸທັງຫລາຍ ຖ້າພິກສຸຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ ກໍ່ຄວາມວິວາທ ກໍ່ຄວາມອຶກກະ ທຶກ ກໍ່ອທິກຣນ໌(ບັນຫາຂອງສົງຂ໌)ໃນສົງຂ໌ນັ້ນ ຈະຄວນກ່າວກັບພິກສຸເຫລົ່ານັ້ນວ່າ ດີລະ ທ່ານທັງຫລາຍ ຂໍຈົ່ງປວາຣນາຕໍ່ພວກເຮົາໃນບັດນີ້ເຖີດ ພິກສຸເຫລົ່ານັ້ນຄວນຖືກວ່າກ່າວວ່າ ທ່ານທັງຫລາຍ ພວກທ່ານບໍ່ເປັນໃຫຍ່ ໃນປວາຣນາຂອງພວກເຮົາ ພວກເຮົາຍັງບໍ່ປວາຣນາກ່ອນ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໗ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໔. ພັນທນກາຣກວັຕຖຸ

ພິກສຸທັງຫລາຍ ຖ້າພິກສຸຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ ກໍ່ຄວາມວິວາທ ກໍ່ຄວາມອຶກກະທຶກ ກໍ່ອທິກຣນ໌(ບັນຫາຂອງສົງຂ໌)ໃນສົງຂ໌ນັ້ນຈະຄວນຢູ່ຈົນເຖິງຊຸນຫປັກສ໌ແມ່ນແລ້ວນັ້ນ ພິກສຸເຫລົ່ານັ້ນ

ທັງຫມົດບໍ່ປະສົງຄ໌ຈະປວາຣນາ ກໍຕ້ອງປວາຣນາໃນວັນເພັງເດືອນ ໑໔ ອັນເປັນວັນທີ່ຄົບ ໔ ເດືອນ ທີ່ຈະມາເຖິງເທົ່ານັ້ນ

ພິກສຸທັງຫລາຍ ຖ້າພິກສຸເຫລົ່ານັ້ນກຳລັງປວາຣນາຢູ່ ພິກສຸໄຂ້ງົດປວາຣນາຂອງພິກສຸຜູ້ບໍ່ເປັນໄຂ້ ພິກສຸນັ້ນຄວນຖືກວ່າກ່າວວ່າ ທ່ານກຳລັງເປັນໄຂ້ ພິກສຸໄຂ້ພຣະຜູ້ມີພຣະພາກຕຣັສວ່າບໍ່ອົດທົນໃນການຊັກຖາມ ທ່ານ ຂໍທ່ານຈົ່ງຖ້າຈົນກວ່າຈະຫາຍເປັນໄຂ້ ທ່ານຫາຍໄຂ້ແລ້ວ ເມື່ອຈຳນົງຈຶ່ງຄ່ອຍໂຈທ ດັ່ງນີ້ ຖ້າພິກສຸນັ້ນຖືກວ່າກ່າວຢ່າງນີ້ ຍັງຂືນໂຈທ ຕ້ອງອາບັຕິປາຈິຕຕີຍ໌ ເພາະບໍ່ເອື້ອເຟື້ອ

ພິກສຸທັງຫລາຍ ຖ້າພິກສຸເຫລົ່ານັ້ນກຳລັງປວາຣນາຢູ່ ພິກສຸຜູ້ບໍ່ເປັນໄຂ້ງົດປວາຣນາຂອງພິກສຸໄຂ້ ພິກສຸນັ້ນຄວນຖືກວ່າກ່າວວ່າ ທ່ານ ພິກສຸນີ້ກຳລັງເປັນໄຂ້ ອັນຜູ້ເປັນໄຂ້ພຣະຜູ້ມີພຣະພາກຕຣັສວ່າບໍ່ອົດທົນໃນການຊັກຖາມ ທ່ານ ຂໍທ່ານຈົ່ງຖ້າຈົນກວ່າພິກສຸນີ້ຈະຫາຍເປັນໄຂ້ ທ່ານຈຳນົງຈຶ່ງຄ່ອຍໂຈທພິກສຸຜູ້ຫາຍໄຂ້ແລ້ວນັ້ນ ດັ່ງນີ້ ຖ້າພິກສຸນັ້ນຖືກວ່າກ່າວຢ່າງນີ້ ຍັງຂືນໂຈທ ຕ້ອງອາບັຕິປາຈິຕຕີຍ໌ ເພາະບໍ່ເອື້ອເຟື້ອ

ພິກສຸທັງຫລາຍ ຖ້າພິກສຸເຫລົ່ານັ້ນກຳລັງປວາຣນາຢູ່ ພິກສຸໄຂ້ງົດປວາຣນາຂອງພິກສຸໄຂ້ ພິກສຸໄຂ້ນັ້ນຖືກວ່າກ່າວວ່າ ພວກທ່ານກຳລັງເປັນໄຂ້ ພິກສຸໄຂ້ພຣະຜູ້ມີພຣະພາກຕຣັສວ່າ ບໍ່ອົດທົນໃນການຊັກຖາມ ທ່ານ ຂໍທ່ານຈົ່ງຖ້າຈົນກວ່າຈະຫາຍເປັນໄຂ້ ທ່ານຫາຍໄຂ້ແລ້ວ ເມື່ອຈຳນົງຈຶ່ງຄ່ອຍໂຈທພິກສຸນັ້ນຜູ້ຫາຍໄຂ້ແລ້ວ ດັ່ງນີ້ ຖ້າພິກສຸໄຂ້ນັ້ນຖືກວ່າກ່າວຢ່າງນີ້ ຍັງຂືນໂຈທ ຕ້ອງອາບັຕິປາຈິຕຕີຍ໌ ເພາະບໍ່ເອື້ອເຟື້ອ

ພິກສຸທັງຫລາຍ ຖ້າພິກສຸເຫລົ່ານັ້ນກຳລັງປວາຣນາຢູ່ ພິກສຸຜູ້ບໍ່ເປັນໄຂ້ງົດປວາຣນາຂອງພິກສຸຜູ້ບໍ່ເປັນໄຂ້ ສົງຂ໌ຄວນສອບສວນສືບສວນທັງ ໔ ຝ່າຍແລ້ວ ປັບອາບັຕິຕາມທັມ ປວາຣນາເຖີດ

{ທີ່ມາ : ໂປຣແກຣມພຣະໄຕຣປິດົກ ສະບັບມຫາຈຸຬາລົງກອນຣາຊວິທຍາລັຍ ເຫລັ້ມ : ໔ ຫນ້າ : ໓໗໘ }

ພຣະວິນັຍປິດົກ ມຫາວັຄ [໔. ປວາຣນາຂັນທກະ] ໑໔໕. ປວາຣນາສັງຄຫະ

໑໔໕. ປວາຣນາສັງຄຫະ

ວ່າດ້ວຍການສົງເຄາະກັນດ້ວຍປວາຣນາ

[໔໔໑] ສະໄໝນັ້ນ ພິກສຸຫລາຍຣູບເຄີຍເຫັນເຄີຍຄົບກັນມາ ເຂົ້າຈຳພັນສາ ນະອາວາສແຫ່ງນຶ່ງໃນແຄວ້ນໂກສົລ ເມື່ອພິກສຸເຫລົ່ານັ້ນພ້ອມພຽງຮ່ອມໃຈກັນບໍ່ຜິດຖຽງກັນຢູ່ ຍ່ອມບັນລຸຜາສຸວິຫາຣຫຼັມຢ່າງໃດຢ່າງນຶ່ງ ຕໍ່ມາ ໄດ້ມີກາຣສົນທນາດັ່ງນີ້ວ່າ ເມື່ອພວກເຮົາພ້ອມພຽງຮ່ອມໃຈກັນ ບໍ່ຜິດຖຽງກັນຢູ່ ໄດ້ບັນລຸຜາສຸວິຫາຣຫຼັມຢ່າງໃດຢ່າງນຶ່ງແລ້ວ ຖ້າພວກເຮົາຈັກປວາຣນາໃນບັດນີ້ ບາງທີພິກສຸທັງຫລາຍປວາຣນາແລ້ວ ຈະຄວນຫລີກໄປສູ່ທີ່ຈາຣິກ ເມື່ອເປັນເຊັ່ນນີ້ ພວກເຮົາກໍຈັກເປັນຜູ້ເຫີນຫ່າງຜາສຸວິຫາຣຫຼັມນີ້ ພວກເຮົາຈະຄວນປະຕິບັດຢ່າງໃດຫນໍຈຶ່ງນຳເຮື່ອງນີ້ໄປຂາບທູລພຣະຜູ້ມີພຣະພາກໃຫ້ຊົງຊາບ

ຊົງອນຸຍາຕໃຫ້ສົງເຄາະກັນດ້ວຍປວາຣນາ

ພຣະຜູ້ມີພຣະພາກຮັບສັ່ງວ່າ ພິກສຸທັງຫລາຍ ກໍໃນກໍຣະນີນີ້ ພິກສຸຫລາຍຣູບເຄີຍເຫັນ ເຄີຍຄົບກັນມາ ເຂົ້າຈຳພັນສາ ນະ ອາວາສແຫ່ງນຶ່ງ ເມື່ອພິກສຸເຫລົ່ານັ້ນພ້ອມພຽງຮ່ອມໃຈກັນບໍ່ຜິດຖຽງກັນຢູ່ ຍ່ອມບັນລຸຜາສຸວິຫາຣຫຼັມຢ່າງໃດຢ່າງນຶ່ງ ຖ້າພິກສຸທັງຫລາຍໃນທີ່ນັ້ນ ສົນທນາກັນວ່າ ເມື່ອພວກເຮົາພ້ອມພຽງຮ່ອມໃຈກັນບໍ່ຜິດຖຽງກັນຢູ່ ໄດ້ບັນລຸຜາສຸວິຫາຣຫຼັມຢ່າງໃດຢ່າງນຶ່ງແລ້ວ ຖ້າພວກເຮົາຈັກປວາຣນາໃນບັດນີ້ ບາງທີພິກສຸທັງຫລາຍປວາຣນາແລ້ວ ຈະຄວນຫລີກໄປສູ່ທີ່ຈາຣິກ ຈະມີແດ່ ເມື່ອເປັນເຊັ່ນນີ້ ພວກເຮົາກໍຈັກເປັນຜູ້ເຫີນຫ່າງຜາສຸວິຫາຣຫຼັມນີ້ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເຫລົ່ານັ້ນທຳກາຣສົງເຄາະກັນດ້ວຍປວາຣນາ

ວິທີສົງເຄາະກັນດ້ວຍປວາຣນາແລະກັມວາຈາສົງເຄາະກັນດ້ວຍປວາຣນາ

ພິກສຸທັງຫລາຍ ກໍແລຄວນທຳກາຣສົງເຄາະກັນປວາຣນາຢ່າງນີ້

ພິກສຸທຸກຣູປຕ້ອງປະຊຸມໃນທີ່ດຽວກັນ ຄັນແລ້ວພິກສຸຜູ້ສລາດສາມາດຄວນປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ເມື່ອພິກສຸເຫລົ່ານັ້ນພ້ອມພຽງຮ່ອມໃຈກັນ ບໍ່ຜິດຖຽງກັນຢູ່ ໄດ້ບັນລຸຜາສຸວິຫາຣຫຼັມຢ່າງໃດຢ່າງນຶ່ງແລ້ວ ຖ້າພວກເຮົາຈັກປວາຣນາໃນບັດນີ້ ບາງທີພິກສຸທັງຫລາຍປວາຣນາແລ້ວ ຈະຄວນຫລີກໄປສູ່ທີ່ຈາຣິກ ຈະມີແດ່ ເມື່ອເປັນເຊັ່ນນີ້ ພວກເຮົາກໍຈັກເປັນຜູ້ເຫີນຫ່າງຜາສຸວິຫາຣຫຼັມນີ້ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນທຳກາຣສົງເຄາະກັນດ້ວຍປວາຣນາ ບັດນີ້ສົງຂ໌ຄວນທຳອຸໂບສົຖ ຄວນຍົກປາຕິໂມກຂ໌ຂຶ້ນ ສະແດງ ຄວນປວາຣນາໃນວັນເພັງເດືອນ ໑໔ ອັນເປັນວັນທີ່ຄົບ ໔ ເດືອນ ທີ່ຈະມາເຖິງເຖີດ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ເມື່ອພິກສຸເຫລົ່ານັ້ນພ້ອມພຽງຮ່ອມໃຈກັນບໍ່ຜິດຖຽງກັນຢູ່ ໄດ້ບັນລຸຜາສຸວິຫາຣຫຼັມຢ່າງໃດຢ່າງນຶ່ງແລ້ວ ຖ້າພວກເຮົາຈັກປວາຣນາໃນບັດນີ້ ບາງ

ທີ່ພິກສຸທັງຫລາຍປວາຣນາແລ້ວ ຈະຄວນຫລີກໄປສູ່ທີ່ຈາຣິກ ຈະມີແດ່ ເມື່ອເປັນເຊັ່ນນີ້ ພວກເຮົາກໍ ຈັກເປັນຜູ້ເຫີນຫ່າງຜາສຸວິຫາຣຫຼັ້ນນີ້ ຖ້າສົງຂ໌ພ້ອມກັນແລ້ວ ສົງຂ໌ຄວນທຳການສົງເຄາະກັນດ້ວຍ ປວາຣນາ ບັດນີ້ສົງຂ໌ຈະເຮັດອຸໂບສົຖ ຈັກຍົກປາຕິໂມກຂ໌ຂຶ້ນສະແດງ ຈັກປວາຣນາໃນວັນເພັງເດືອນ ໑໔ ອັນເປັນວັນທີ່ຄົບ ໔ ເດືອນ ທີ່ຈະມາເຖິງ ທ່ານຮູບໃດເຫັນດ້ວຍກັບການທີ່ທຳການສົງເຄາະກັນ ດ້ວຍປວາຣນາ ບັດນີ້ສົງຂ໌ຈະເຮັດອຸໂບສົຖ ຈັກຍົກປາຕິໂມກຂ໌ຂຶ້ນສະແດງ ຈັກປວາຣນາໃນວັນເພັງ ເດືອນ ໑໔ ອັນເປັນວັນທີ່ຄົບ ໔ ເດືອນ ທີ່ຈະມາເຖິງ ທ່ານຮູບນັ້ນຄວນນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນຄວນທັກທ້ວງການເລື່ອນປວາຣນາສົງຂ໌ໄດ້ທຳແລ້ວ ບັດນີ້ສົງຂ໌ຈະເຮັດອຸໂບສົຖ ຈັກຍົກ ປາຕິໂມກຂ໌ຂຶ້ນສະແດງ ຈັກປວາຣນາໃນວັນເພັງເດືອນ ໑໔ ອັນເປັນວັນທີ່ຄົບ ໔ ເດືອນ ທີ່ຈະມາ ເຖິງສົງຂ໌ເຫັນດ້ວຍ ເຫຕຸນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້

ເຣື້ອງບໍ່ມີໃຜເປັນໃຫຍ່ໃນປວາຣນາ

ພິກສຸທັງຫລາຍ ເມື່ອພິກສຸເຫລົ່ານັ້ນທຳການສົງເຄາະກັນດ້ວຍປວາຣນາແລ້ວ ຖ້າມີພິກສຸສັກຮູບ ນຶ່ງກ່າວວ່າ ທ່ານທັງຫລາຍ ຂະນ້ອຍປຣາຖນາຈະຫລີກຈາຣິກໄປຍັງຊົນບົທ ເພາະຂະນ້ອຍມີທຸຣະໃນຊົ ນບົທ ພິກສຸທັງຫລາຍຄວນກ່າວກັບພິກສຸນັ້ນວ່າ ດີແລ້ວ ທ່ານ ທ່ານຈົ່ງປຣາຖນາແລ້ວໄປເຖີດ

ພິກສຸທັງຫລາຍ ຖ້າພິກສຸນັ້ນປວາຣນາຢູ່ ງົດປວານາຂອງພິກສຸຮູບນຶ່ງເສັຽ ພິກສຸຜູ້ຖືກງົດ ປວາຣນາຄວນກ່າວກັບພິກສຸຜູ້ງົດປວາຣນາວ່າ “ທ່ານ ທ່ານບໍ່ເປັນໃຫຍ່ໃນປວາຣນາຂອງຂະນ້ອຍ ຂະ ນ້ອຍຈະຍັງບໍ່ປວາຣນາກ່ອນ”

ພິກສຸທັງຫລາຍ ຖ້າເມື່ອພິກສຸນັ້ນປວາຣນາຢູ່ ພິກສຸຮູບນຶ່ງງດປວານາຂອງພິກສຸນັ້ນເສັຽ ສົງຂ໌ຄວນ ສອບສວນສືບສວນທັງ ໔ ຝ່າຍແລ້ວ ປັບອາບັຕິຕາມທັມ

ພິກສຸທັງຫລາຍ ຖ້າພິກສຸນັ້ນທຳທຸຣະຈຳເປັນໃນຊົນບົທເສັດແລ້ວ ກັບມາຍັງອາວາສນັ້ນອີກພາຍໃນ ວັນເພັງເດືອນ ໑໔ ອັນເປັນວັນທີ່ຄົບ ໔ ເດືອນ ຖ້າເມື່ອພິກສຸເຫລົ່ານັ້ນປວາຣນາຢູ່ ພິກສຸຮູບ ນຶ່ງງົດປວານາຂອງພິກສຸນັ້ນເສັຽ ພິກສຸຜູ້ຖືກຫ້າມປວາຣນາຄວນກ່າວກັບພິກສຸຜູ້ງົດປວາຣນາວ່າ “ທ່ານ ທ່ານບໍ່ເປັນໃຫຍ່ໃນປວາຣນາຂອງຂະນ້ອຍ ເພາະຂະນ້ອຍປວາຣນາ ເສັດແລ້ວ”

ພິກສຸທັງຫລາຍ ຖ້າເມື່ອພິກສຸເຫລົ່ານັ້ນປວາຣນາຢູ່ ພິກສຸນັ້ນງົດປວາຣນາຂອງພິກສຸຮູບນຶ່ງ ສົງຂ໌ຄວນສອບສວນສືບສວນທັງ ໔ ຝ່າຍແລ້ວ ປັບອາບັຕິຕາມທັມປວາຣນາເຖີດ

ປວາຣນາຂັນທກະທີ ໔ ຈົບ

໑໔໘. ຣວມເຣື້ອງທີ່ມີໃນປວາຣນາຂັນທະກະ

ປວາຣນາຂັນທະກະ ມີ ໔໘ ເຣື້ອງ ຄື

ເຣື້ອງພິກສຸຫລາຍຮູບເຂົ້າຈຳພັນສາໃນແຄວ້ນໂກສົລມາເຝົ້າພຣະສາສດາ
ເຣື້ອງເຂົ້າພັນສາບໍ່ພາສຸກດັ່ງປສຸສັຕວ໌ຢູ່ຮ່ວມກັນ
ເຣື້ອງຊົງອນຸຍາຕພິທີປວາຣນາເພື່ອວ່າກ່າວຊຶ່ງກັນແລະກັນ
ເຣື້ອງພຣະສັພພັຄຄີຍ໌ນັ່ງຮາບເທິງອາສນະປວາຣນາ
ເຣື້ອງວັນປວາຣນາມີ ໒ ວັນ ເຣື້ອງອາການທີ່ທຳປວາຣນາມີ ໔ ຢ່າງ
ເຣື້ອງພິກສຸເປັນໄຂ້ມອບປວາຣນາ ເຣື້ອງພິກສຸຖືກພວກຍາຕຈັບໄວ້
ເຣື້ອງພິກສຸຖືກພຣະຣາຊາ ພວກໂຈຣ ພວກນັກເລງ ພວກພິກສຸຜູ້ເປັນຂ້າສຶກຈັບໄວ້
ເຣື້ອງພິກສຸ ໕ ຮູບ ປວາຣນາເປັນການສົງຊ໌
ເຣື້ອງພິກສຸ ໔ ຮູບ ປວາຣນາເປັນການຄນະ
ເຣື້ອງພິກສຸ ໓ ຮູບ ປວາຣນາເປັນການຄນະ
ເຣື້ອງພິກສຸ ໒ ຮູບ ປວາຣນາຕໍ່ກັນ
ເຣື້ອງພິກສຸຮູບດຽວທຳອທິສຖານປວາຣນາ
ເຣື້ອງພິກສຸຕ້ອງອາບັຕິໃນວັນປວາຣນາ
ເຣື້ອງພິກສຸບໍ່ແນ່ໃຈໃນອາບັຕິ ເຣື້ອງພິກສຸຣະນຶກອາບັຕິໄດ້
ເຣື້ອງສົງຊ໌ທັງຫມົດຕ້ອງສພາຄາບັຕິ
ເຣື້ອງສົງຊ໌ທັງຫມົດບໍ່ແນ່ໃຈສພາຄາບັຕິ
ເຣື້ອງພິກສຸທີ່ຢູ່ໃນອາວາສພວກອື່ນມາຫລາຍກວ່າ ມາເທົ່າກັນ ມານ້ອຍກວ່າ
ເຣື້ອງວັນປວາຣນາຂອງພິກສຸທີ່ຢູ່ໃນອາວາສເປັນ ໑໔ ຄ່ຳ
ເຣື້ອງລັກສນະຂອງພິກສຸທີ່ຢູ່ໃນອາວາສ ເຣື້ອງພິກສຸ ໒ ສັງວາສປວາຣນາ
ເຣື້ອງບໍ່ຄວຣໄປໃສໃນວັນປວາຣນາ
ເຣື້ອງບໍ່ຄວນປວາຣນາໃນບໍຣິສັດທີ່ມີພິກສຸນີນັ່ງຢູ່ດ້ວຍ ເຣື້ອງໃຫ້ສັນທະ
ເຣື້ອງຫ້າມປວາຣນາໃນວັນບໍ່ແມ່ນວັນປວາຣນາ
ເຣື້ອງຊາວປ່າ ເຣື້ອງປວາຣນາເມື່ອຣາຕຣີຈວນສວ່າງ
ເຣື້ອງປວາຣນາຂນະທີ່ຝົນຕັ້ງເຄົ້າ ເຣື້ອງປວາຣນາເມື່ອມີອັນຕຣາຍ ໑໐ ຢ່າງ
ເຣື້ອງພຣະສັພພັຄຄີຍ໌ມີອາບັຕິຕິດຕົວປວາຣນາ

ເຣື່ອງບໍ່ຍອມໃຫ້ໂອກາສ ເຣື່ອງພຣະສັພພັຄຄີຍ໌ງົດປວາຣະນາຂອງພິກສຸຜູ້ບໍຣິສຸດທິ໌ ເຣື່ອງປວາຣະນາທີ່ບໍ່ເປັນອັນງົດ

ເຣື່ອງເຫດຸຜົລໃນກາຣງົດປວາຣະນາ ຄື

(໑) ງົດປວາຣະນາເພາະເຫດຸໃດ (໔) ງົດປວາຣະນາເພາະເຣື່ອງຫຍັງ

(໓) ງົດປວາຣະນາດ້ວຍໄດ້ເຫັນ ດ້ວຍໄດ້ຍິນ ຫລືດ້ວຍນຶກສົງສັຍ

ເຣື່ອງຕ້ອງອາບັຕິຖຸລລັຈຈັຍເປັນຕົ້ນ ເຣື່ອງວັຕຖຸແລະບຸຄຄົລປາກົດ

ເຣື່ອງກາຣກໍ່ຄວາມບາດຫມາງ ເຣື່ອງກາຣສົງເຄາະກັນດ້ວຍປວາຣະນາ

ເຣື່ອງບໍ່ມີໃຜເປັນໃຫຍ່ໃນປວາຣະນາ

ປວາຣະນາຂັນທະກະ ຈົບ

ພຣະໄຕຣປິດົກເຫລັ້ມທີ ໐໔ ວິນັຍປິດົກທີ ໐໔ ມຫາວັຄ ພາຄ ໑ ຈົບ